# ຫຼັກການພື້ນຖານ

ເຫຼັ້ມ 1

# ການນຳໃຊ້ພາສາລາວ

ກະຊວງສຶກສາທິການ ແລະ ກິລາ
2024

# ຫຼັກການພື້ນຖານ
# ການນຳໃຊ້ພາສາລາວ
## (ເຫຼັ້ມ 1)

ໂຄງການຄົ້ນຄວ້າ ແລະ ຮຽບຮຽງຫຼັກການພື້ນຖານການນຳໃຊ້ພາສາລາວ
ພາຍໃຕ້ການຊີ້ນຳຂອງລັດຖະບານ ສປປ ລາວ
ຈັດຕັ້ງປະຕິບັດໂດຍ ຄະນະກຳມະການຄົ້ນຄວ້າພາສາລາວ,
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ,
ກະຊວງສຶກສາທິການ ແລະ ກິລາ
ສະໜັບສະໜູນທຶນໂດຍ ລັດຖະບານອົດສະຕຣາລີ ແລະ ງົບປະມານແຫ່ງລັດ

**ກະຊວງສຶກສາທິການ ແລະ ກິລາ**

**2024**

| | |
|---|---|
| **ຄະນະຮຽບຮຽງ:** | ປອ ອ່ອນແກ້ວ ນວນນະວົງ |
| | ຣສ.ປທ ແສງຟ້າ ໂຫລານຸພາບ |
| | ພິມມາ ຄຳມັງ |
| | ປທ ສິນແສງ ໄຊຍະວົງ |
| | ລັດສະໝີ ໄຊຍະສິດ |
| **ຄະນະກວດແກ້:** | ສຈ.ປອ ບໍ່ແສງຄຳ ວົງດາລາ |
| | ຣສ.ປອ ຄຳຜາຍ ສີສະຫວັນ |
| | ສຈ.ປອ ບົວລີ ປະພາພັນ |
| **ທີ່ປຶກສາ:** | ປອ ພັນຄຳ ວິພາວັນ |
| **ຄະນະຊີ້ນຳ:** | ສຈ.ປອ ກິແກ້ວ ໄຂຄຳພິທູນ |
| | ຣສ.ປອ ພຸດ ສິມມາລາວົງ |
| | ປອ. ນ. ສີສຸກ ວົງວິຈິດ |
| | ຣສ.ປອ ອານຸລົມ ວິໄລພອນ |
| | ປທ ສີທອງ ສີຂາວ |
| **ພິມເຂົ້າໜ້າ:** | ປທ.ນ. ສຸດດາພອນ ແກ້ວບົວສະໄໝ |
| **ຮູບປະກອບ:** | ຈະເລີນສັກ ຄຳສັກປະສິດ |
| | ແກ້ວມະນີ ດວງວິໄລ |
| **ພິສູດອັກສອນ:** | ປອ ອ່ອນແກ້ວ ນວນນະວົງ |
| **ດ້ວຍການຮ່ວມມືຈາກ:** | ປອ.ນ. ແກ້ວມະນີ ທອງປະເສີດ |
| | ປທ ມີໄຊ ສຸກຈະເລີນ |
| | ໂອທອງ ຄຳອິນຊູ |
| | ພະອາຈານ ກິແກ້ວ ຈັນທະນົງສີ |

**ດ້ວຍການກວດຜ່ານ ແລະ ປະກອບຄຳເຫັນຈາກ:**

| | |
|---|---|
| ບຸນພັກ ດາລາງາແກ້ວ, | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ |
| ຄູນທົນ ໄຊທີເລີດ, | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ |
| ປທ ແສງດາວເດດ ກັດຕິຍະສັກ, | ກະຊວງພາຍໃນ |
| ປທ ປັນຍາ ຈັນທະວົງ, | ກະຊວງສຶກສາທິການ ແລະ ກິລາ |
| ຊານໄຊ ສະເດັດຕັນ, | ກະຊວງການຕ່າງປະເທດ |
| ບີ່ຄຳ ວົງພັກດີ, | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| ປອ ຂວັນເທວາ ພົນເສນາ, | ກະຊວງເຕັກໂນໂລຊີ ແລະ ການສື່ສານ |
| ສູນທອງ ພາວັນ, | ກະຊວງອຸດສາຫະກຳ ແລະ ການຄ້າ |
| ປທ ບຸນເຖິງ ແສງມະນີ, | ກະຊວງກະສິກຳ ແລະ ປ່າໄມ້ |
| ສຸກສາຄອນ ວົງໄຊ, | ກະຊວງໂຍທາທິການ ແລະ ຂົນສົ່ງ |
| ສຸພີ ນໍລິນທາ, | ກະຊວງຍຸຕິທຳ |
| ປທ ແກ່ນຈັນ ບຸນເຕີມ, | ກະຊວງການເງິນ |
| ປທ ບຸນເພັງ ສຸພາບ, | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |

**ດ້ວຍການຮັບຮອງຈາກ:**

ສະພາວິທະຍາສາດແຫ່ງຊາດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 333/ນຍ

ນະຄອນຫຼວງວຽງຈັນ, ວັນທີ 19.07.2024

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຫຼັກການພື້ນຖານການນຳໃຊ້ພາສາລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021.
- ອີງຕາມ ໜັງສືສະເໜີ ຂອງສະພາວິທະຍາສາດແຫ່ງຊາດ ສະບັບເລກທີ 003/ສວຊ, ລົງວັນທີ 25 ມິຖຸນາ 2024.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ຫຼັກການພື້ນຖານການນຳໃຊ້ພາສາລາວ ເຫຼັ້ມ 1 ແລະ ເຫຼັ້ມ 2.

ມາດຕາ 2 ມອບໃຫ້ສະພາວິທະຍາສາດແຫ່ງຊາດ ເປັນເຈົ້າການປະສານ ສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຫຼັກການພື້ນຖານໃນການນຳໃຊ້ພາສາລາວດັ່ງກ່າວໃຫ້ປະກົດຜົນເປັນຈິງ.

ມາດຕາ 3 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4 ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**

# ຄຳນຳ

ຫຼັກການພື້ນຖານການນຳໃຊ້ພາສາລາວເຫຼັ້ມ 1 ນີ້ ຮຽບຮຽງຂຶ້ນເພື່ອເປັນຄູ່ມືສຳລັບການນຳໃຊ້ພາສາລາວ ເວົ້າລວມ, ເວົ້າສະເພາະແມ່ນເພື່ອເປັນບ່ອນອີງໃນການຂຽນ, ຮຽບຮຽງ ແລະ ຈັດພິມປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ປຶ້ມວັດຈະນານຸກົມ, ເອກະສານທາງການ, ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກຕ່າງໆ ໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບກັນ; ເປັນບ່ອນອີງໃນການຈັດການຮຽນການສອນພາສາລາວ, ການຄົ້ນຄວ້າ, ພັດທະນາ ແລະ ການນຳໃຊ້ພາສາລາວຢູ່ໃນສັງຄົມ.

ການຄົ້ນຄວ້າຮຽບຮຽງປຶ້ມເຫຼັ້ມນີ້, ຄະນະຮຽບຮຽງໄດ້ຄົ້ນຄວ້າເອກະສານອ້າງອີງຕ່າງໆ ທັງເປັນພາສາລາວ ແລະ ພາສາຕ່າງປະເທດ ກ່ຽວກັບຫຼັກພາສາ (ໄວຍາກອນ), ການນຳໃຊ້ພາສາ, ຫຼັກການຂຽນທັບສັບພາສາ, ວັດຈະນານຸກົມ ແລະ ອື່ນໆ.

ປຶ້ມຫຼັກການພື້ນຖານການນຳໃຊ້ພາສາລາວເຫຼັ້ມ 1 ນີ້ ປະກອບດ້ວຍ 4 ພາກ ທີ່ເປັນຫຼັກການພື້ນຖານ ຄື: (1) ການນຳໃຊ້ຕົວອັກສອນລາວ, (2) ການນຳໃຊ້ຄຳໃນພາສາລາວ, (3) ການນຳໃຊ້ວະລີ ແລະ ປະໂຫຍກໃນພາສາລາວ, (4) ຫຼັກການ ແລະ ວິທີແຕ່ງກາບກອນ.

ຄະນະຮຽບຮຽງຂໍສະແດງຄວາມຂອບໃຈມາຍັງນັກວິຊາການ, ຜູ້ຊ່ຽວຊານ ແລະ ຜູ້ຊົງຄຸນວຸດທິທັງຫຼາຍຈາກກະຊວງ, ກົມກອງ ແລະ ທ້ອງຖິ່ນຕ່າງໆ ທີ່ໄດ້ປະກອບສ່ວນໃນການຄົ້ນຄວ້າ ແລະ ປະກອບຄຳເຫັນ ອັນໄດ້ເຮັດໃຫ້ປຶ້ມເຫຼັ້ມນີ້ມີຄວາມສົມບູນ ແລະ ສາມາດຈັດພິມອອກນຳໃຊ້ໄດ້. ເຖິງຢ່າງໃດກໍຕາມ, ໃນການຈັດພິມຄັ້ງທຳອິດນີ້ ກໍອາດຈະບໍ່ປາສະຈາກຂໍ້ຂາດຕົກບົກພ່ອງບາງປະການ, ຄະນະຮຽບຮຽງຍິນດີຮັບເອົາທຸກຄຳຕຳນິຕິຊົມຈາກທ່ານທັງຫຼາຍເພື່ອນຳໄປປັບປຸງຫຼັກການພື້ນຖານການນຳໃຊ້ພາສາລາວ ໃຫ້ມີຄວາມສົມບູນຍິ່ງໆຂຶ້ນໃນອະນາຄົດ.

ຄະນະກຳມະການຄົ້ນຄວ້າພາສາລາວ
ກະຊວງສຶກສາທິການ ແລະ ກິລາ

# ສາລະບານ

**ພາກ** **ໜ້າ**


**ພາກທີ I ຫຼັກການພື້ນຖານການນຳໃຊ້ຕົວອັກສອນລາວ........................................1**

ສຽງໃນພາສາລາວ...........................................................................................1

ວ່າດ້ວຍພະຍັນຊະນະ ...................................................................................10

ວ່າດ້ວຍສະຫຼະ .............................................................................................20

ວ່າດ້ວຍວັນນະຍຸດ .......................................................................................33

ເຄື່ອງໝາຍວັກຕອນໃນພາສາລາວ ...............................................................40

ຕົວເລກລາວ ແລະ ການນັບ ........................................................................58

ການໃຊ້ອັກສອນຫຍໍ້ ....................................................................................63

ການໃຊ້ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວ ..............................................70

ການໃຊ້ສະຫຼະ ໄx ແລະ ໃx ........................................................................73

ການຍະຫວ່າງ .............................................................................................87

ການໃຊ້ຕົວອັກສອນລາວໃນສື່ສິ່ງພິມ ..........................................................97

ຮູບແບບຕົວອັກສອນລາວໃນປຶ້ມແບບຮຽນຂອງກະຊວງສຶກສາທິການ ແລະ ກິລາ .........102

**ພາກທີ II ຫຼັກການພື້ນຖານການນຳໃຊ້ຄຳໃນພາສາລາວ......................................107**

ພະຍາງ .....................................................................................................107

ຄຳ ..........................................................................................................111

ລັກສະນະຂອງການສ້າງຄຳໃນພາສາລາວ .....................................................113

ປະເພດຄຳໃນພາສາລາວ ...........................................................................124

ຫຼັກການໃຊ້ຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ແລະ ພາສາຕ່າງປະເທດ...........149

ຫຼັກບາງປະການໃນການໃຊ້ຄຳເພື່ອການສື່ສານໃນພາສາລາວ ................................154

**ພາກທີ III ຫຼັກການພື້ນຖານການນຳໃຊ້ວະລີ ແລະ ປະໂຫຍກໃນພາສາລາວ...............175**

ວະລີ ຫຼື ກຸ່ມຄຳ ...........................................................................................175

ປະໂຫຍກ .....................................................................................................181

ຫຼັກບາງປະການກ່ຽວກັບການນຳໃຊ້ປະໂຫຍກເຂົ້າໃນການຂຽນ ...............................192

**ພາກທີ IV ຫຼັກການ ແລະ ວິທີແຕ່ງກາບກອນ.........................................................194**
ວ່າດ້ວຍກາບ ...........................................................................................194
ວ່າດ້ວຍກອນ ...........................................................................................202
ວ່າດ້ວຍໂຄງ ...........................................................................................232
ວ່າດ້ວຍຮ່າຍ...........................................................................................240
ວ່າດ້ວຍສານ ...........................................................................................248
**ເອກະສານອ້າງອີງ** ....................................................................................251

# ພາກທີ I
# ຫຼັກການພື້ນຖານການນຳໃຊ້ຕົວອັກສອນລາວ

## I. ສຽງໃນພາສາລາວ

### 1. ຄວາມໝາຍ

ທຸກໆພາສາທີ່ມີໃຊ້ຢູ່ໃນໂລກຂອງພວກເຮົາໃນປັດຈຸບັນນີ້ ລ້ວນແຕ່ເປັນພາສາທີ່ມີສຽງສະເພາະຂອງໃຜມັນ, ພາສາລາວກໍເຊັ່ນດຽວກັນ ເປັນພາສາທີ່ມີສຽງເປັນເອກະລັກສະເພາະຂອງຕົນເອງ. ເວລາທີ່ສື່ສານກັນ ເພື່ອສະໜອງຄວາມຕ້ອງການຕ່າງໆ ເຊັ່ນ: ຄົນລາວເມື່ອທັກຖາມ ຂໍຄວາມຊ່ວຍເຫຼືອ ຫຼື ສະແດງຄວາມຮູ້ສຶກອອກມາໃຫ້ຜູ້ອື່ນຮູ້, ກໍຈະມີການເປັ່ງສຽງອອກມາເປັນຄຳເວົ້າ ເພື່ອໃຫ້ອີກຝ່າຍໜຶ່ງເຂົ້າໃຈຈຸດປະສົງຂອງຕົນ. ສຽງທີ່ເປັ່ງອອກມາໃນເວລາສື່ສານກັນນັ້ນ ເອີ້ນວ່າ ສຽງໃນພາສາລາວ.

### 2. ຖານທີ່ເກີດຂອງສຽງ

ສຽງໃນພາສາລາວເກີດມາຈາກການໃຊ້ອະໄວຍະວະຕ່າງໆ ຊຶ່ງແຕ່ລະພາກສ່ວນ ສາມາດເຮັດໃຫ້ສຽງເວົ້າແຕກຕ່າງກັນໄປ.

ອະໄວຍະວະທີ່ມີໜ້າທີ່ໂດຍກົງໃນການອອກສຽງເວົ້າໄດ້ແກ່ ຮີມສົບ, ແຂ້ວ, ເຫືອກ, ເພດານແຂງ, ເພດານອ່ອນ, ລີ້ນໄກ່, ຜົ້ງດັງ, ລີ້ນ, ກ່ອງສຽງ, ຜົ້ງຄໍ ແລະ ເສັ້ນສຽງ. ອະໄວຍະວະທີ່ກ່າວມານັ້ນນັບທັງປອດ ແລະ ຫຼອດລົມ ເຮັດວຽກປະສານກັນ ຈຶ່ງພາໃຫ້ເກີດເປັນສຽງຂຶ້ນ ເພື່ອໃຊ້ສື່ຄວາມໝາຍລະຫວ່າງມະນຸດດ້ວຍກັນ.

### 3. ຊະນິດຂອງສຽງໃນພາສາລາວ

ສຽງໃນພາສາລາວແບ່ງອອກເປັນ 3 ຈຳພວກ ຄື: ສຽງສະຫຼະ, ສຽງພະຍັນຊະນະ ແລະ ສຽງວັນນະຍຸດ.

#### 3.1 ສຽງສະຫຼະ

ສຽງສະຫຼະ ແມ່ນສຽງທີ່ຖືກເປັ່ງອອກມາທາງປາກ ໂດຍທີ່ບໍ່ມີອະໄວຍະວະສ່ວນໃດໃນປາກມາອັດຕັນທາງລົມໄວ້, ແຕ່ອະໄວຍະວະໃນປາກອາດຢູ່ໃນລັກສະນະ ແລະ ຕຳແໜ່ງຕ່າງໆທີ່ເຮັດໃຫ້ຜົ້ງປາກມີລັກສະນະຕ່າງກັນໄດ້ຫຼາຍແບບ. ລົມທີ່ຜ່ານອອກມາຈຶ່ງ

ເກີດເປັນສຽງຕ່າງກັນ. ສຽງສະຫຼະໃນພາສາລາວມີ 24 ສຽງ ເປັນສຽງສະຫຼະເດົ່າ 18 ສຽງ ແລະ ສະຫຼະ ປະສົມ 6 ສຽງ.

### 1) ສຽງສະຫຼະເດົ່າ

ສຽງສະຫຼະເດົ່າມີ 18 ສຽງ ດັ່ງນີ້:

| ສະຫຼະສຽງສັ້ນ | | ສະຫຼະສຽງຍາວ | |
|---|---|---|---|
| xະ | /a/ | xາ | /aː/ |
| xິ | /i/ | xີ | /iː/ |
| xຶ | /ɯ/ | xື | /ɯː/ |
| xຸ | /u/ | xູ | /uː/ |
| ເxະ | /e/ | ເx | /eː/ |
| ແxະ | /ɛ/ | ແx | /ɛː/ |
| ເxາະ | /ɔ/ | xໍ | /ɔː/ |
| ໂxະ | /o/ | ໂx | /oː/ |
| ເxິ | /ə/ | ເxີ | /əː/ |

### 2) ສຽງສະຫຼະປະສົມ

ສຽງສະຫຼະປະສົມ ແມ່ນສຽງສະຫຼະເດົ່າ 2 ສຽງທີ່ຕ່າງກັນ ແລ້ວອ່ານອອກສຽງເນື່ອງກັນດ້ວຍຄວາມໄວ ແລະ ນ້ຳໜັກເທົ່າກັນຈຶ່ງເກີດເປັນສຽງໃໝ່ ສຽງສະຫຼະປະສົມໃນພາສາລາວ ມີ 6 ສຽງຄື:

| ສະຫຼະປະສົມສຽງສັ້ນ | | ສະຫຼະປະສົມສຽງຍາວ | |
|---|---|---|---|
| ເxັຍ | /ia/ | ເxຍ | /iːa/ |
| xົວະ | /ua/ | xົວ | /uːa/ |
| ເxຶອ | /ɯa/ | ເxືອ | /ɯːa/ |

ສ່ວນ ໄອ ເອົາ ອຳ ເປັນສຽງສະຫຼະປະສົມກັບສຽງພະຍັນຊະນະທ້າຍພະຍາງ (ຕົວສະກົດ) ດັ່ງນີ້:

| | | | | | |
|---|---|---|---|---|---|
| ໃx ໄx | /aj/ | ເກີດຈາກສຽງສະຫຼະ xະ | /a/ | ປະສົມກັບ | ຍ /j/ |
| ເxົາ | /aw/ | ເກີດຈາກສຽງສະຫຼະ xະ | /a/ | ປະສົມກັບ | ວ /w/ |
| xໍາ | /am/ | ເກີດຈາກສຽງສະຫຼະ xະ | /a/ | ປະສົມກັບ | ມ /m/ |

**ໝາຍເຫດ**: ສຳລັບສະຫຼະ ໃx ໃນພາສາລາວທ້ອງຖິ່ນຫຼວງພະບາງ ຫຼື ເອີ້ນວ່າສຽງຫຼວງພະບາງ (ມີຢູ່ແຂວງຫຼວງພະບາງ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ) ຈະອອກສຽງເປັນອາເອີ /aːə/ ຊຶ່ງເກີດຈາກສຽງສະຫຼະ xາ /aː/ ປະສົມກັບ ເxີ /əː/. ສ່ວນພາສາລາວທ້ອງຖິ່ນຊຽງຂວາງ ແລະ ຫົວພັນຈະອອກສຽງເປັນ ເxີ /əː/.

### 3) ການອ່ານອອກສຽງສະຫຼະໂດຍອາໄສສ່ວນຕ່າງໆຂອງລີ້ນ

ສະຫຼະເຫຼົ່ານີ້ ຖ້າແບ່ງອອກຕາມການອ່ານອອກສຽງໂດຍອາໄສສ່ວນຕ່າງໆຂອງລີ້ນເຮັດ ໜ້າທີ່ປະກອບກັບການອ້າ ແລະ ການຫຸບສົບ ອາດຈຳແນກອອກເປັນ:

- ສະຫຼະໜ້າ ໄດ້ແກ່ສະຫຼະທີ່ໃຊ້ປາຍລີ້ນ ຫຼື ລີ້ນສ່ວນໜ້າເຮັດໜ້າທີ່ ເມື່ອອ່ານອອກສຽງສະຫຼະໜ້າ ຮີມສົບຈະຂະຫຍາຍອອກໄປທາງຂ້າງທັງສອງເບື້ອງ (ສົບບໍ່ມົນ) ໄດ້ແກ່ສຽງ:

| | | | |
|---|---|---|---|
| ອິ | /i/ | ອີ | /iː/ |
| ເອະ | /e/ | ເອ | /eː/ |
| ແອະ | /ɛ/ | ແອ | /ɛː/ |
| ເອັຍ | /ia/ | ເອຍ | /iːa/ |

- ສະຫຼະກາງ ໄດ້ແກ່ສະຫຼະທີ່ເມື່ອອ່ານອອກສຽງ ລີ້ນຈະພຽງຮາບກັບປາກ (ແຕ່ບາງເທື່ອກາງລີ້ນອາດຈະໂຄ້ງຂຶ້ນ ຖ້າກົດລີ້ນເຂົ້າໄປເລັກນ້ອຍ) ເມື່ອອ່ານອອກສຽງສະຫຼະກາງ ຮີມສົບຈະຢູ່ໃນສະພາບປົກກະຕິ (ສົບບໍ່ມົນ) ໄດ້ແກ່ສຽງ:

| | | | |
|---|---|---|---|
| ອະ | /a/ | ອາ | /aː/ |
| ອຶ | /ɯ/ | ອື | /ɯː/ |
| ເອິ | /ə/ | ເອີ | /əː/ |
| ເອຶອ | /ɯa/ | ເອືອ | /ɯːa/ |

- ສະຫຼະຫຼັງ ໄດ້ແກ່ສະຫຼະທີ່ເມື່ອອ່ານອອກສຽງກົກລີ້ນຈະຍົກສູງຂຶ້ນຈົນເກືອບຈຸເພດານອ່ອນ ຮີມສົບຈ້ອມເຂົ້າ (ສົບມົນ) ໄດ້ແກ່ສຽງສະຫຼະ:

| | | | |
|---|---|---|---|
| ອຸ | /u/ | ອູ | /uː/ |
| ໂອະ | /o/ | ໂອ | /oː/ |
| ເອາະ | /ɔ/ | ອໍ | /ɔː/ |
| ອົວະ | /ua/ | ອົວ | /uːa/ |

**ຕາຕະລາງ 1: ລັກສະນະສຽງສະຫຼະໃນພາສາລາວ**

| | ຮິມສົບບໍ່ມົນ | | ຮິມສົບມົນ |
|---|---|---|---|
| ສ່ວນຂອງລີ້ນ / ລະດັບລີ້ນ | ສະຫຼະໜ້າ | ສະຫຼະກາງ | ສະຫຼະຫຼັງ |
| ສູງ | /i/ /iː/<br>/ia/ /iːa/ | /ɯ/ /ɯː/<br>/ɯa/ /ɯːa/ | /u/ /uː/<br>/ua/ /uːa/ |
| ອ່າວສູງ | /e/<br>/eː/ | /ə/<br>/əː/ | /o/<br>/oː/ |
| ອ່າວຕ່ຳ | /ɛ/<br>/ɛː/ | | /ɔ/<br>/ɔː/ |
| ຕ່ຳ | | /a/<br>/aː/ | |

**ແຜນວາດລັກສະນະສຽງສະຫຼະໃນພາສາລາວ**



## 3.2 ສຽງພະຍັນຊະນະ

ສຽງພະຍັນຊະນະແມ່ນສຽງທີ່ເກີດຈາກລົມ ໂດຍຜ່ານເສັ້ນສຽງແລ້ວຖືກດັດແປງດ້ວຍອະໄວຍະວະອອກສຽງສ່ວນຕ່າງໆໃນປາກ. ສຽງພະຍັນຊະນະມີຫຼາຍປະເພດ, ມີລັກສະນະການອອກສຽງແຕກຕ່າງກັນຫຼາຍແບບ. ຄວາມແຕກຕ່າງຂອງສຽງມີຄວາມສຳຄັນໃນການເຮັດໃຫ້ຄວາມໝາຍຂອງຄຳ ຫຼື ພະຍາງໃນພາສາຕ່າງກັນ. ພະຍັນຊະນະໃນພາສາລາວມີ 33 ຕົວ ແຕ່ຖ້າບໍ່ແຍກເປັນສຽງອັກສອນສູງອັກສອນຕ່ຳແລ້ວ ຈະມີພຽງ 20 ສຽງເທົ່ານັ້ນ.

### 1) ສຽງພະຍັນຊະນະໃນພາສາລາວ

1. ສຽງ ກ ໄດ້ແກ່ສຽງ /k/
2. ສຽງ ຂ ຄ ໄດ້ແກ່ສຽງ /kh/
3. ສຽງ ຫງ ງ ໄດ້ແກ່ສຽງ /ŋ/
4. ສຽງ ຈ ໄດ້ແກ່ສຽງ /c/
5. ສຽງ ສ ຊ ໄດ້ແກ່ສຽງ /s/
6. ສຽງ ຫຍ ຍ ໄດ້ແກ່ສຽງ /ɲ/
7. ສຽງ ດ ໄດ້ແກ່ສຽງ /d/
8. ສຽງ ຕ ໄດ້ແກ່ສຽງ /t/
9. ສຽງ ຖ ທ ໄດ້ແກ່ສຽງ /th/
10. ສຽງ ໜ ນ ໄດ້ແກ່ສຽງ /n/
11. ສຽງ ບ ໄດ້ແກ່ສຽງ /b/
12. ສຽງ ປ ໄດ້ແກ່ສຽງ /p/
13. ສຽງ ຜ ພ ໄດ້ແກ່ສຽງ /ph/
14. ສຽງ ຝ ຟ ໄດ້ແກ່ສຽງ /f/
15. ສຽງ ໝ ມ ໄດ້ແກ່ສຽງ /m/
16. ສຽງ ຢ ໄດ້ແກ່ສຽງ /j/
17. ສຽງ ຫຼ ລ ຣ ໄດ້ແກ່ສຽງ /l/
18. ສຽງ ຫວ ວ ໄດ້ແກ່ສຽງ /w/
19. ສຽງ ອ ໄດ້ແກ່ສຽງ /ʔ/
20. ສຽງ ຫ ຮ ໄດ້ແກ່ສຽງ /h/

## 2) ລັກສະນະຂອງສຽງພະຍັນຊະນະໃນພາສາລາວ

ພະຍັນຊະນະໃນພາສາລາວມີລັກສະນະສຽງແຕກຕ່າງກັນເປັນຫຼາຍຊະນິດດັ່ງນີ້:

### (1) ພະຍັນຊະນະສຽງອັດ

ພະຍັນຊະນະສຽງອັດ ແມ່ນສຽງພະຍັນຊະນະ ເກີດຈາກລົມທີ່ເປົ່າອອກມາ ແລະ ຖືກອັດໄວ້ບ່ອນໃດບ່ອນໜຶ່ງໃນຊ່ອງປາກ ແລ້ວເປີດຊ່ອງທີ່ອັດໄວ້ນັ້ນໃຫ້ລົມພຸ່ງອອກມາຢ່າງແຮງ. ບ່ອນທີ່ລົມຖືກອັດໄວ້ນັ້ນມີຫຼາຍບ່ອນ ເຊັ່ນ: ຢູ່ຮີມສົບ, ຢູ່ແຂ້ວ, ຢູ່ເພດານແຂງ, ຢູ່ເພດານອ່ອນ... ສຽງອັດນີ້ຖ້າມີລົມຫັນໃຈເພີ່ມຂຶ້ນມາອີກ ກໍຈະເອີ້ນວ່າ ສຽງອັດພື່ວ, ສ່ວນສຽງອັດທໍາມະດາ ຊຶ່ງບໍ່ມີລົມຫັນໃຈເພີ່ມມາອີກນັ້ນ ເອີ້ນວ່າ ສຽງອັດບໍ່ພື່ວ (ສຽງອັດແຈບ). ພະຍັນຊະນະສຽງອັດໃນພາສາລາວມີດັ່ງນີ້:

| | |
|---|---|
| ປ /p/ | ສຽງພະຍັນຊະນະອັດ ບໍ່ກ້ອງ ບໍ່ພື່ວ ເກີດຢູ່ຮີມສົບ. |
| ຕ /t/ | ສຽງພະຍັນຊະນະອັດ ບໍ່ກ້ອງ ບໍ່ພື່ວ ເກີດຢູ່ບໍລິເວນເຫືອກ ຫຼື ແຂ້ວ. |
| ຈ /c/ | ສຽງພະຍັນຊະນະອັດ ບໍ່ກ້ອງ ບໍ່ພື່ວ ເກີດຢູ່ເພດານແຂງ. |
| ກ /k/ | ສຽງພະຍັນຊະນະອັດ ບໍ່ກ້ອງ ບໍ່ພື່ວ ເກີດຢູ່ເພດານອ່ອນ. |
| ອ /ʔ/ | ສຽງພະຍັນຊະນະອັດ ບໍ່ກ້ອງ ບໍ່ພື່ວ ເກີດຢູ່ຊ່ອງລະຫວ່າງເສັ້ນສຽງ. |
| ຜ ພ /ph/ | ສຽງພະຍັນຊະນະອັດ ບໍ່ກ້ອງ ພື່ວ ເກີດຢູ່ຮີມສົບ. |
| ຖ ທ /th/ | ສຽງພະຍັນຊະນະອັດ ບໍ່ກ້ອງ ພື່ວ ເກີດຢູ່ແຂ້ວ. |
| ຂ ຄ /kh/ | ສຽງພະຍັນຊະນະອັດ ບໍ່ກ້ອງ ພື່ວ ເກີດຢູ່ເພດານອ່ອນ. |
| ບ /b/ | ສຽງພະຍັນຊະນະອັດ ກ້ອງ ບໍ່ພື່ວ ເກີດຢູ່ຮີມສົບ. |
| ດ /d/ | ສຽງພະຍັນຊະນະອັດ ກ້ອງ ບໍ່ພື່ວ ເກີດຢູ່ເຫືອກ. |

### (2) ພະຍັນຊະນະດັງ

ພະຍັນຊະນະດັງ ແມ່ນພະຍັນຊະນະທີ່ມີສຽງອອກທາງດັງເກີດຈາກລົມທີ່ເປົ່າອອກມາຖືກອັດໄວ້ຢູ່ບ່ອນໃດບ່ອນໜຶ່ງໃນຊ່ອງປາກ ແລ້ວຢ່ອນລີ້ນໄກ່ລິ້ງ, ເປີດຊ່ອງດັງໃຫ້ລົມອອກໄປທາງຜື່ງດັງ. ລົມຖືກອັດໃນຊ່ອງປາກຢູ່ບ່ອນໃດ ບ່ອນນັ້ນກໍຈະເປັນບ່ອນເກີດຂອງພະຍັນຊະນະດັ່ງກ່າວ. ພະຍັນຊະນະດັງໃນພາສາລາວມີ 4 ສຽງ ຄື:

| | |
|---|---|
| ງ /ŋ/ | ສຽງພະຍັນຊະນະດັງ ສຽງກ້ອງ ເກີດຢູ່ເພດານອ່ອນ. |
| ຍ /ɲ/ | ສຽງພະຍັນຊະນະດັງ ສຽງກ້ອງ ເກີດຢູ່ເພດານແຂງ. |
| ນ /n/ | ສຽງພະຍັນຊະນະດັງ ສຽງກ້ອງ ເກີດຢູ່ແຂ້ວ. |
| ມ /m/ | ສຽງພະຍັນຊະນະດັງ ສຽງກ້ອງ ເກີດຢູ່ຮີມສົບ. |

### (3) ພະຍັນຊະນະຂ້າງ

ພະຍັນຊະນະຂ້າງ ແມ່ນພະຍັນຊະນະທີ່ມີສຽງກ້ອງ ຊຶ່ງເປັ່ງສຽງໂດຍໃຊ້ລີ້ນອັດບໍລິເວນເຫືອກ ແລະ ເພດານສ່ວນກາງໄວ້, ປ່ອຍໃຫ້ລົມອອກມາທາງຂ້າງລີ້ນ. ພະຍັນຊະນະຂ້າງໃນພາສາລາວມີພຽງສຽງດຽວ ຄື:

ລ /l/ ສຽງພະຍັນຊະນະຂ້າງ ກ້ອງ ເກີດຢູ່ເຫືອກ.

### (4) ພະຍັນຊະນະຖູ

ພະຍັນຊະນະຖູ ແມ່ນພະຍັນຊະນະທີ່ເກີດຂຶ້ນເມື່ອລົມທີ່ເປັ່ງອອກມາຖືກບີບຕົວຜ່ານຊ່ອງແຄບບ່ອນໃດບ່ອນໜຶ່ງໃນຊ່ອງປາກ ແລະ ເຮັດໃຫ້ເກີດສຽງສຽດຖູຂຶ້ນ. ອະໄວຍະວະສ່ວນທີ່ເຮັດໃຫ້ເກີດຊ່ອງແຄບນັ້ນ ໄດ້ແກ່ ຮີມສົບເທິງກັບລຸ່ມ, ແຂ້ວເທິງກັບຮີມສົບລຸ່ມ, ລີ້ນກັບສ່ວນຕ່າງໆຂອງເພດານປາກ ແລະ ຢູ່ຊ່ອງລະຫວ່າງເສັ້ນສຽງ. ສຽງພະຍັນ ຊະນະຖູມີ 3 ສຽງ ຄື:

ຜ ຟ /f/ ສຽງພະຍັນຊະນະຖູ ບໍ່ກ້ອງ ເກີດຢູ່ແຂ້ວກັບຮີມສົບລຸ່ມ.

ສ ຊ /s/ ສຽງພະຍັນຊະນະຖູ ບໍ່ກ້ອງ ເກີດຢູ່ເຫືອກ.

ຫ ຮ /h/ ສຽງພະຍັນຊະນະຖູ ບໍ່ກ້ອງ ເກີດຢູ່ບ້ອງຄໍ ຫຼື ເສັ້ນສຽງ.

### (5) ພະຍັນຊະນະເຄິ່ງສະຫຼະ

ພະຍັນຊະນະເຄິ່ງສະຫຼະ ແມ່ນພະຍັນຊະນະທີ່ເປັນສຽງເລື່ອນ ຊຶ່ງເກີດຂຶ້ນລະຫວ່າງ ສະຫຼະ ແລະ ສະຫຼະ. ໃນການເປັ່ງສຽງພະຍັນຊະນະເຄິ່ງສະຫຼະ ອະໄວຍະວະທີ່ໃຊ້ໃນການອອກສຽງຢູ່ບ່ອນຂອງສະຫຼະໃດສະຫຼະໜຶ່ງກ່ອນ ແລ້ວເປັ່ງສຽງອອກມາໃນຂະນະທີ່ປ່ຽນອະໄວຍະວະນັ້ນໆໄປສູ່ບ່ອນຂອງສະຫຼະອີກບ່ອນໜຶ່ງ. ສຽງພະຍັນຊະນະເຄິ່ງສະ ຫຼະໃນພາສາລາວມີ 2 ສຽງ ຄື:

ຍ /j/[1] ສຽງພະຍັນຊະນະເຄິ່ງສະຫຼະ ກ້ອງ ເກີດຢູ່ເພດານແຂງ

ວ /w/ ສຽງພະຍັນຊະນະເຄິ່ງສະຫຼະ ກ້ອງ ເກີດຢູ່ຮີມສົບ

---

[1] ສຽງພະຍັນຊະນະເຄິ່ງສະຫຼະ /j/ ຖ້າເປັນພະຍັນຊະນະແທນໃຊ້ ຍ ເວລາເປັນຕົວສະກົດຕ້ອງປ່ຽນເປັນ ຍ.

### ຕາຕະລາງ 2: ເຄື່ອງໝາຍຈິດສຽງພະຍັນຊະນະລາວ

| ຖານທີ່ເກີດ / ລັກສະນະສຽງ | | ຮີມສົບ | ຮີມສົບ-ແຂ້ວ | ເຫືອກ | ເພດານແຂງ | ເພດານອ່ອນ | ບ້ອງຄໍ (ເສັ້ນສຽງ) |
|---|---|---|---|---|---|---|---|
| ອັດ | ບໍ່ກ້ອງ-ບໍ່ຜື່ວ | p | | t | c | k | ʔ |
| | ບໍ່ກ້ອງ-ຜື່ວ | ph | | th | | kh | |
| | ກ້ອງ | b | | d | | | |
| ສຽງອອກດັງ-ກ້ອງ | | m | | n | ɲ | ŋ | |
| ຖູ-ບໍ່ກ້ອງ | | | f | s | | | h |
| ຂ້າງລີ້ນ-ກ້ອງ | | | | l | | | |
| ເຄິ່ງສະຫຼະ | | w | | | j | | |

## 3.3 ສຽງວັນນະຍຸດ

ສຽງວັນນະຍຸດແມ່ນສຽງທີ່ເປັ່ງອອກມາແລ້ວມີລະດັບສູງຕ່ຳ ຊຶ່ງໃນພາສາລາວທ້ອງຖິ່ນນະຄອນຫຼວງວຽງຈັນ ມີ 6 ສຽງ[2] ແລະ ແບ່ງອອກເປັນ 2 ໝວດ:

### 1) ໝວດສຽງວັນນະຍຸດລະດັບສະເໝີ

ວັນນະຍຸດສຽງລະດັບສະເໝີ ແມ່ນສຽງທີ່ມີລະດັບຄວາມຖີ່ອ່າວຄີງທີ່ຕະຫຼອດພະຍາງ ຊຶ່ງມີ 3 ສຽງດັ່ງນີ້:

#### (1) ສຽງວັນນະຍຸດຕ່ຳສະເໝີ

ສຽງວັນນະຍຸດຕ່ຳສະເໝີ ແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນກາງປະກອບກັບສະ ຫຼະສຽງຍາວ ບໍ່ມີໄມ້ຫຍັງ ເຊັ່ນ: ກາ, ປີ, ດູ…

#### (2) ສຽງວັນນະຍຸດລະດັບກາງ

ສຽງວັນນະຍຸດລະດັບກາງແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນທຸກຕົວປະກອບກັບສະຫຼະສຽງຍາວ ມີໄມ້ເອກ ເຊັ່ນ: ກ່າ ພໍ່ ແມ່ ສູ່…

---

[2] ພາສາລາວທ້ອງຖິ່ນຕ່າງໆ ມີສຽງວັນນະຍຸດແຕກຕ່າງກັນໄປຕາມແຕ່ລະເຂດ ໃນທີ່ນີ້ສະເໜີສະເພາະສຽງວັນນະຍຸດທ້ອງຖິ່ນວຽງຈັນ

### (3) ສຽງວັນນະຍຸດສູງສະເໝີ

ສຽງວັນນະຍຸດລະດັບສູງ ແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນຕ່ຳປະກອບກັບສະຫຼະສຽງຍາວ ບໍ່ມີໄມ້ຫຍັງ ເຊັ່ນ: ຄື, ຊໍ, ເລົາ...

## 2) ໝວດສຽງວັນນະຍຸດປ່ຽນລະດັບ

ສຽງວັນນະຍຸດປ່ຽນລະດັບ ແມ່ນສຽງວັນນະຍຸດທີ່ມີລະດັບຄວາມຖີ່ຂອງການອອກສຽງປ່ຽນແປງຫຼາຍໃນພະຍາງໜຶ່ງໆ ເຊັ່ນ: ຕົ້ນພະຍາງອອກສຽງໃນລະດັບສູງແລ້ວປ່ຽນລົງສູ່ລະດັບຕ່ຳຢູ່ທ້າຍພະຍາງ ຫຼື ປ່ຽນຈາກຕ່ຳເລື່ອນໄປສູງ. ໃນພາສາລາວ ສຽງວັນນະຍຸດປ່ຽນລະດັບມີ 3 ສຽງ ດັ່ງນີ້:

### (1) ສຽງວັນນະຍຸດປ່ຽນຕ່ຳຂຶ້ນສູງ

ສຽງວັນນະຍຸດຕ່ຳເລື່ອນຂຶ້ນສູງ ແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນສູງປະກອບກັບສະຫຼະສຽງຍາວ ບໍ່ມີໄມ້ຫຍັງ. ຕົວຢ່າງ: ເສືອ, ຂາວ, ຖູ, ຫຼີ...

### (2) ສຽງວັນນະຍຸດປ່ຽນສູງລົງຕ່ຳ

ສຽງວັນນະຍຸດປ່ຽນສູງລົງຕ່ຳ ແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນກາງ ຫຼື ອັກ ສອນຕ່ຳປະກອບກັບສະຫຼະສຽງຍາວ ມີໄມ້ໂທ. ຕົວຢ່າງ: ປີ້, ດົ້, ຄ້າ, ຊູ້...

### (3) ສຽງວັນນະຍຸດປ່ຽນກາງລົງຕ່ຳ

ສຽງວັນນະຍຸດປ່ຽນກາງລົງຕ່ຳ ແມ່ນສຽງວັນນະຍຸດທີ່ເກີດຈາກອັກສອນສູງປະກອບກັບສະຫຼະສຽງຍາວມີໄມ້ໂທ. ຕົວຢ່າງ: ຫຍ້າ, ແຂ້, ໜີ້, ຫວ້າ...

**ແຜນວາດຮູບສຽງວັນນະຍຸດໃນພາສາລາວທ້ອງຖິ່ນວຽງຈັນ**



## II. ວ່າດ້ວຍພະຍັນຊະນະ

### 1. ຄວາມໝາຍຂອງພະຍັນຊະນະ

ພະຍັນຊະນະແມ່ນຕົວອັກສອນໝວດໜຶ່ງທີ່ເປັນພື້ນສຽງຂອງຄຳເວົ້າ. ພະຍັນຊະນະໃຊ້ສຳລັບປະກອບກັບສະຫຼະ ແລະ ບາງພະຍາງ ຫຼື ຄຳກໍຕ້ອງປະກອບກັບວັນນະຍຸດຕື່ມອີກ ເພື່ອໃຫ້ອ່ານອອກສຽງໄດ້ຕາມຄວາມຕ້ອງການ. ພະຍັນຊະນະໃນພາສາລາວມີທັງໝົດ 33 ຕົວ ແລະ ແບ່ງອອກເປັນ 3 ຊະນິດ ຄື: ພະຍັນຊະນະເຄົ້າ, ພະຍັນຊະນະປະສົມ ແລະ ພະຍັນຊະນະຄວບ. ພະຍັນຊະນະມີໜ້າທີ່ເປັນພະຍັນຊະນະຕົ້ນພະຍາງ (ຕົວແກນ) ແລະ ເປັນພະຍັນຊະນະທ້າຍພະຍາງ (ຕົວສະກົດ).

### 2. ຮູບຂອງພະຍັນຊະນະ, ການອ່ານ ແລະ ການຂຽນພະຍັນຊະນະ

#### 2.1 ຮູບຂອງພະຍັນຊະນະ

ພະຍັນຊະນະ 33 ຕົວໃນພາສາລາວມີຮູບດັ່ງນີ້:

**ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ ຫງ ຫຍ ໜ ໝ ຫຼ ຫວ**

#### 2.2 ການອ່ານພະຍັນຊະນະ

ໂດຍລຳພັງພະຍັນຊະນະໃນພາສາລາວຈະບໍ່ສາມາດອ່ານອອກສຽງໄດ້. ສະນັ້ນ, ເພິ່ນຈຶ່ງສົມມຸດໃຫ້ພະຍັນຊະນະລາວທຸກຕົວມີສຽງສະຫຼະ ໍx ຢູ່ນຳ ເຊັ່ນ:

| | | |
|---|---|---|
| **ກ** | ອ່ານອອກສຽງວ່າ | **ກໍ** |
| **ຂ** | ອ່ານອອກສຽງວ່າ | **ຂໍ** |
| **ຄ** | ອ່ານອອກສຽງວ່າ | **ຄໍ** |
| **ງ** | ອ່ານອອກສຽງວ່າ | **ງໍ** |
| **ຈ** | ອ່ານອອກສຽງວ່າ | **ຈໍ** |
| **ສ** | ອ່ານອອກສຽງວ່າ | **ສໍ** |
| **ຊ** | ອ່ານອອກສຽງວ່າ | **ຊໍ** |
| **ຍ** | ອ່ານອອກສຽງວ່າ | **ຍໍ** |
| **ດ** | ອ່ານອອກສຽງວ່າ | **ດໍ** |
| **ຕ** | ອ່ານອອກສຽງວ່າ | **ຕໍ** |
| **ຖ** | ອ່ານອອກສຽງວ່າ | **ຖໍ** |

| | | |
|---|---|---|
| ທ | ອ່ານອອກສຽງວ່າ | ທໍ |
| ນ | ອ່ານອອກສຽງວ່າ | ນໍ |
| ບ | ອ່ານອອກສຽງວ່າ | ບໍ |
| ປ | ອ່ານອອກສຽງວ່າ | ປໍ |
| ຜ | ອ່ານອອກສຽງວ່າ | ຜໍ |
| ຝ | ອ່ານອອກສຽງວ່າ | ຝໍ |
| ພ | ອ່ານອອກສຽງວ່າ | ພໍ |
| ຟ | ອ່ານອອກສຽງວ່າ | ຟໍ |
| ມ | ອ່ານອອກສຽງວ່າ | ມໍ |
| ຢ | ອ່ານອອກສຽງວ່າ | ຢໍ |
| ຣ | ອ່ານອອກສຽງວ່າ | ຣໍ |
| ລ | ອ່ານອອກສຽງວ່າ | ລໍ |
| ວ | ອ່ານອອກສຽງວ່າ | ວໍ |
| ຫ | ອ່ານອອກສຽງວ່າ | ຫໍ |
| ອ | ອ່ານອອກສຽງວ່າ | ອໍ |
| ຮ | ອ່ານອອກສຽງວ່າ | ຮໍ |
| ຫງ | ອ່ານອອກສຽງວ່າ | ຫງໍ |
| ຫຍ | ອ່ານອອກສຽງວ່າ | ຫຍໍ |
| ໜ | ອ່ານອອກສຽງວ່າ | ໜໍ |
| ໝ | ອ່ານອອກສຽງວ່າ | ໝໍ |
| ຫຼ | ອ່ານອອກສຽງວ່າ | ຫຼໍ |
| ຫວ | ອ່ານອອກສຽງວ່າ | ຫວໍ |

**ຊື່ຂອງພະຍັນຊະນະ**: ເວລາເອີ້ນຊື່ພະຍັນຊະນະ ກໍໃຫ້ປະກອບສຽງສະຫຼະ x ໍ ໃສ່ທຸກຕົວ ເຊັ່ນ: ກໍ ຂໍ ຄໍ ງໍ ຈໍ ສໍ ຊໍ ຍໍ ດໍ ຕໍ ຖໍ ທໍ ນໍ ບໍ ປໍ ຜໍ ຝໍ ພໍ ຟໍ ມໍ ຢໍ ຣໍ ລໍ ວໍ ຫໍ ອໍ ຮໍ ຫງໍ ຫຍໍ ໜໍ ໝໍ ຫຼໍ ຫວໍ.

ນອກຈາກນັ້ນ, ເພື່ອສະດວກໃນການຈື່, ເພິ່ນຈຶ່ງໃສ່ຊື່ພະຍັນຊະນະທຽບໃສ່ສິ່ງຂອງຕື່ມ ເຊັ່ນ: ກ ໄກ່, ຂ ໄຂ່, ຄ ຄວາຍ, ງ ງົວ, ຈ ຈອກ, ສ ເສືອ, ຊ ຊ້າງ, ຍ ຍຸງ, ດ ເດັກ,

ຕ ຕາ, ຖ ຖົງ, ທ ທຸງ, ນ ນົກ, ບ ແບ້, ປ ປາ, ຜ ເຜິ້ງ, ຝ ຝົນ, ພ ພູ, ຟ ໄຟ, ມ ແມວ, ຢ ຢາ, ຣ ຣາດາ, ລ ລີງ, ວ ວີ, ຫ ຫ່ານ, ອ ໂອ, ຮ ເຮືອນ.

ຫງ ເຫງັນ, ຫຍ ຫຍ້າ, ໜ ໜູ, ໝ ໝີ, ຫຼ ຫຼາ, ຫວ ແຫວນ.

**ການອ່ານພ້ອງສຽງ** ເວລາອ່ານພ້ອງສຽງ ໃຫ້ອອກສຽງພະຍັນຊະນະກ່ອນ ເຖິງວ່າສະຫຼະຈະຢູ່ໜ້າ, ເທິງ ຫຼື ລຸ່ມພະຍັນຊະນະກໍຕາມ. ຕົວຢ່າງ:

ປາ ອ່ານພ້ອງສຽງວ່າ ປໍ-ອາ-ປາ (ປ-xາ-ປາ)

ໄປ ອ່ານພ້ອງສຽງວ່າ ປໍ-ໄອ-ໄປ (ປ-ໄx-ໄປ)

ປູ່ ອ່ານພ້ອງສຽງວ່າ ປໍ-ອູ-ປູ-ເອກ-ປູ່ (ປ-xູ-ປູ-x່-ປູ່)

ເປັດ ອ່ານພ້ອງສຽງວ່າ ປໍ-ເອະ-ດໍ- ເປັດ (ປ-ເxະ-ດ-ເປັດ)

ກວາງ ອ່ານພ້ອງສຽງວ່າ ກໍວໍ-ອາ-ງໍ-ກວາງ (ກວ-xາ-ງ-ກວາງ)

## 2.3 ການຂຽນພະຍັນຊະນະ

ພະຍັນຊະນະລາວທຸກຕົວມີຫົວ, ຕົວ ແລະ ຫາງ. ດັ່ງນັ້ນ, ວິທີຂຽນຕ້ອງຕັ້ງຕົ້ນຫົວກ່ອນ ແລ້ວໄປສຸດທີ່ຫາງ. ບາງຕົວຫົວຢູ່ເທິງ ເຊັ່ນ: **ຂ ງ ຊ ຍ ທ ນ ບ ປ ຜ ຝ ພ ຟ ຢ ຫ;** ບາງຕົວຫົວຢູ່ກາງ ເຊັ່ນ: **ຈ** ແລະ ບາງຕົວຫົວຢູ່ລຸ່ມ ເຊັ່ນ: **ກ ຄ ສ ດ ຕ ຖ ມ ຣ ລ ວ ອ ຮ.** ບາງຕົວຫົວ ສະເໝີກັບຫາງ ເຊັ່ນ: **ກ ຄ ຍ ດ ຕ ນ ບ ຜ ພ ມ** ບາງຕົວຫາງຍາວຂຶ້ນເທິງ ເຊັ່ນ: **ປ ຝ ຟ ຢ**; ບາງຕົວຫາງຍາວລົງລຸ່ມ ເຊັ່ນ: **ງ ຊ ຖ.** ຄວາມຍາວຂອງຫາງພະຍັນຊະນະຂຶ້ນເທິງ ຫຼື ລົງລຸ່ມ: (1) ເວລາຂຽນ (ໂດຍສະເພາະແມ່ນຫັດຂຽນງາມທີ່ເປັນຕົວນ້ອຍ) ໃຫ້ຫາງຍາວລື່ນອອກໄປຂຶ້ນເທິງ ຫຼື ລົງລຸ່ມເທົ່າກັບຕົວຂອງພະຍັນຊະນະ; (2) ເວລາໃຊ້ຕົວພິມໃຫ້ຫາງຍາວຂຶ້ນເທິງ ຫຼື ລົງລຸ່ມເທົ່າກັບເຄິ່ງໜຶ່ງຂອງຕົວ. ສ່ວນເສັ້ນກາງຂອງຕົວ **ພ** ແລະ ຕົວ **ຟ** ແມ່ນໃຫ້ເທົ່າກັບຫົວ.

ພະຍັນຊະນະບາງຕົວມີຫົວຢູ່ເທິງຂອດຫົວທາງນອກ ຄື: **ຂ ງ ຊ ທ ນ ບ ປ ພ ຟ ຫ;** ບາງຕົວຫົວຢູ່ເທິງຂອດຫົວທາງໃນ ຄື:**ຍ ຜ ຝ ຢ;** ບາງຕົວຫົວຢູ່ກາງ ຄື: **ຈ** ແລະ ບາງຕົວຫົວຢູ່ລຸ່ມຂອດຫົວທາງນອກ ຄື: **ກ ມ ຣ ວ ອ ຮ;** ບາງຕົວຫົວຢູ່ລຸ່ມຂອດຫົວທາງໃນ ຄື: **ຄ ສ ດ ຕ ຖ ລ.**

ຮູບລັກສະນະຂອງຕົວພະຍັນຊະນະລາວປັດຈຸບັນມີລັກສະນະເປັນລ່ຽມດ້ານຂ້າງ, ແຕ່ໂຄ້ງມົນດ້ານເທິງ ແລະ/ຫຼື ດ້ານລຸ່ມ, ບາງຕົວກໍໂຄ້ງມົນດ້ານຂ້າງເລັກນ້ອຍ. ບາງຕົວມີຂະໜາດທຳມະດາ ຄື: ກ ຂ ຄ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ;

ບາງຕົວມີຂະໜາດກວ້າງ ຄື: ໝ ໝ; ບາງຕົວມີຂະໜາດແຄບ ຄື: ງ. ຕົວຂະໜາດແຄບມີຄວາມກວ້າງເທົ່າກັບເຄິ່ງໜຶ່ງຂອງຕົວທຳມະດາ.

## 3. ຊະນິດພະຍັນຊະນະ

### 3.1 ພະຍັນຊະນະເຄົ້າ

ພະຍັນຊະນະເຄົ້າແມ່ນພະຍັນຊະນະຕົວເດີມ ຫຼື ພະຍັນຊະນະດ່ຽວທີ່ຍັງບໍ່ທັນໄດ້ປະສົມກັບຕົວອື່ນ.

1) **ພະຍັນຊະນະເຄົ້າມີທັງໝົດ 27 ຕົວ** ຄື:

ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ.

2) **ພະຍັນຊະນະເຄົ້າແບ່ງອອກເປັນ 3 ໝູ່** ຄື:

- ອັກສອນສູງ ມີ 6 ຕົວ: **ຂ ສ ຖ ຜ ຝ ຫ**
- ອັກສອນກາງມີ 8 ຕົວ: **ກ ຈ ດ ຕ ບ ປ ຢ ອ**
- ອັກສອນຕໍ່າມີ 13 ຕົວ: **ຄ ງ ຊ ຍ ທ ນ ພ ຟ ມ ຣ ລ ວ ຮ**

### 3.2 ພະຍັນຊະນະປະສົມ

ພະຍັນຊະນະປະສົມແມ່ນພະຍັນຊະນະເຄົ້າ 2 ຕົວປະສົມກັນໃຫ້ເປັນຕົວດຽວ. ຕົວທີ່ຢູ່ໜ້າແມ່ນຕົວ **ຫ** ຊຶ່ງເປັນອັກສອນສູງ, ຕົວທີ່ຢູ່ຫຼັງແມ່ນ **ງ ຍ ນ ມ ລ ວ** ຊຶ່ງເປັນອັກສອນຕໍ່າ ແລະ ກໍມີແຕ່ອັກສອນຕໍ່າ 6 ຕົວນີ້ເທົ່ານັ້ນທີ່ໃຊ້ປະສົມໄດ້. ເມື່ອປະສົມແລ້ວ, ຕົວ **ຫ** ຈະບໍ່ອອກສຽງ ແຕ່ມັນເຮັດໃຫ້ອັກສອນຕໍ່າເຫຼົ່ານັ້ນຜັນໄປເປັນສຽງອັກສອນສູງດັ່ງນີ້:

- **ຫ** ປະສົມ **ງ** ເປັນ **ຫງ**
- **ຫ** ປະສົມ **ຍ** ເປັນ **ຫຍ**
- **ຫ** ປະສົມ **ນ** ເປັນ **ຫນ** ແລະ ປ່ຽນຮູບເປັນ **ໜ**
- **ຫ** ປະສົມ **ມ** ເປັນ **ຫມ** ແລະ ປ່ຽນຮູບເປັນ **ໝ**
- **ຫ** ປະສົມ **ລ** ເປັນ **ຫລ** ແລະ ປ່ຽນຮູບເປັນ **ຫຼ**
- **ຫ** ປະສົມ **ວ** ເປັນ **ຫວ**

ພະຍັນຊະນະປະສົມ ຫງ ຫຍ ໜ ໝ ຫຼ ຫວ ຈັດຢູ່ໃນໝູ່ອັກສອນສູງ.

### 3.3 ພະຍັນຊະນະຄວບ (ອັກສອນຄວບ)

ພະຍັນຊະນະຄວບແມ່ນພະຍັນຊະນະຕົ້ນພະຍາງ 2 ຕົວອາໄສສະຫຼະດຽວ ແລະ ຕ້ອງອ່ານອອກສຽງພະຍັນຊະນະ 2 ຕົວພ້ອມກັນ (ອ່ານໄວໃຫ້ເປັນສຽງດຽວກັນ). ພະຍັນຊະນະຕົວທີສອງ ຫຼື ພະຍັນຊະນະທີ່ໃຊ້ເປັນຕົວຄວບໄດ້ມີ **ວ ລ ຣ.**

#### 1) ຕົວ ວ ຄວບ

ໃນພາສາລາວ, ຕົວ ວ ສາມາດໃຊ້ຄວບກັບພະຍັນຊະນະເຄົ້າໄດ້ເກືອບທຸກຕົວດັ່ງຕົວຢ່າງ ລຸ່ມນີ້:

**ກ** ກັບ **ວ** ຄວບກັນເປັນ **ກວ** ເຊັ່ນ: ກວ່າ, ແກວ່ງ, ໄກວ, ກວາງ, ກວາດ...

**ຂ** ກັບ **ວ** ຄວບກັນເປັນ **ຂວ** ເຊັ່ນ: ຂວາ, ແຂວງ, ແຂວນ, ໄຂວ່...

**ຄ** ກັບ **ວ** ຄວບກັນເປັນ **ຄວ** ເຊັ່ນ: ຄວາຍ, ຄົ້ນຄວ້າ, ແຄວ້ນ, ຄວາມ...

**ງ** ກັບ **ວ** ຄວບກັນເປັນ **ງວ** ເຊັ່ນ: ງວາກ, ງຶມງວາຍ...

**ຈ** ກັບ **ວ** ຄວບກັນເປັນ **ຈວ** ເຊັ່ນ: ຈວາດ, ຈວ້າຍກວ້າຍ...

**ສ** ກັບ **ວ** ຄວບກັນເປັນ **ສວ** ເຊັ່ນ: ສວາຍ, ສວ່າງ...

**ຊ** ກັບ **ວ** ຄວບກັນເປັນ **ຊວ** ເຊັ່ນ: ຊວ້ານ, ຊວາດຮູ້ເມື່ອ...

**ຍ** ກັບ **ວ** ຄວບກັນເປັນ **ຍວ** ເຊັ່ນ: ແຕກຍວ່າໆ, ຍວ່າຍໆ...

**ດ** ກັບ **ວ** ຄວບກັນເປັນ **ດວ** ເຊັ່ນ: ຝົດດວ່າງໆ...

**ຕ** ກັບ **ວ** ຄວບກັນເປັນ **ຕວ** ເຊັ່ນ: ຊົ້ນຕວ່າ, ກະຕວ້າຍໆ...

**ຖ** ກັບ **ວ** ຄວບກັນເປັນ **ຖວ** ເຊັ່ນ: ຖວາຍ...

**ທ** ກັບ **ວ** ຄວບກັນເປັນ **ທວ** ເຊັ່ນ: ທວາຍ, ທວານ...

**ຢ** ກັບ **ວ** ຄວບກັນເປັນ **ຢວ** ເຊັ່ນ: ຢວ່າງຂ້າມ...

**ລ** ກັບ **ວ** ຄວບກັນເປັນ **ລວ** ເຊັ່ນ: ລວາດ...

**ອ** ກັບ **ວ** ຄວບກັນເປັນ **ອວ** ເຊັ່ນ: ອວ່າຍໜ້າ...

**ຮ** ກັບ **ວ** ຄວບກັນເປັນ **ຮວ** ເຊັ່ນ: ເຮ່ຍຮວາຍ, ຮວານໆ, ຮວາ, ຮວາຍໄຂ່...

**ຫ** ກັບ **ວ** ຄວບກັນເປັນ **ຫວ** ເຊັ່ນ: ຫີນຫວາຍ, ເມືອງເຫວ້...

**ຫງ** ກັບ **ວ** ຄວບກັນເປັນ **ຫງວ** ເຊັ່ນ: ຫງວຽນ...

#### 2) ຕົວ ລ ຄວບ

ພະຍັນຊະນະທີ່ຄວບກັບຕົວ ລ ມີບາງຕົວເທົ່ານັ້ນ ແລະ ຄຳທີ່ມີ ລ ຄວບສ່ວນຫຼາຍມີເຄົ້າມາຈາກ ພາສາຕ່າງປະເທດ ຕົວຢ່າງ:

**ຄ** ກັບ **ລ** ຄວບກັນເປັນ **ຄລ** ເຊັ່ນ: ຄລີນິກ, ຄລາຊິກ...

**ປ** ກັບ **ລ** ຄວບກັນເປັນ **ປລ** ເຊັ່ນ: ປລາສະຕິກ...

**ພ** ກັບ **ລ** ຄວບກັນເປັນ **ພລ** ເຊັ່ນ: ພລາຊາ...

ຯລຯ

### 3) ຕົວ ຣ ຄວບ

ພະຍັນຊະນະທີ່ຄວບກັບຕົວ ຣ ມີບາງຕົວເທົ່ານັ້ນ ແລະ ຄຳທີ່ມີ ຣ ຄວບສ່ວນຫຼາຍ ມີເຄົ້າມາຈາກພາສາຕ່າງປະເທດ (ຄຳທັບສັບພາສາ) ແລະ ຊື່ເອີ້ນຂອງຊົນເຜົ່າຈຳນວນໜຶ່ງ. ຕົວຢ່າງ:

**ກ** ກັບ **ຣ** ຄວບກັນເປັນ **ກຣ** ເຊັ່ນ: ກຣາມ, ກຣີ (ຊົນເຜົ່າກຣີ)...

**ຕ** ກັບ **ຣ** ຄວບກັນເປັນ **ຕຣ** ເຊັ່ນ: ເອເລັກໂຕຣນິກ, ຕຣີ (ຊົນເຜົ່າຕຣີ)...

**ຝ** ກັບ **ຣ** ຄວບກັນເປັນ **ຝຣ** ເຊັ່ນ: ຝຣັ່ງ...

**ໝາຍເຫດ**: ການອ່ານພະຍັນຊະນະຄວບໃຫ້ອ່ານ 2 ຕົວພ້ອມກັນ ເຊັ່ນ: ກໍວໍ, ຄໍວໍ, ຂໍວໍ, ຝໍຣໍ, ພໍລໍ ...

## 4. ໜ້າທີ່ຂອງພະຍັນຊະນະ

### 4.1 ເປັນຕົວແກນ (ພະຍັນຊະນະຕົ້ນພະຍາງ)

ຕົວແກນແມ່ນພະຍັນຊະນະທີ່ສຽງຂອງມັນເປັນແກນຂອງຄຳເວົ້າ. ພະຍັນຊະນະທັງໝົດ 33 ຕົວ (ພະຍັນຊະນະເຄົ້າ ແລະ ພະຍັນຊະນະປະສົມ) ແລະ ພະຍັນຊະນະຄວບລ້ວນແຕ່ສາມາດເຮັດໜ້າທີ່ເປັນຕົວແກນ (ພະຍັນຊະນະຕົ້ນພະຍາງ). ແຕ່ໃນນັ້ນ ສ່ວນຫຼາຍເປັນຕົວແກນລ້ອນຈ້ອນ ແລະ ອີກຈຳນວນໜຶ່ງເປັນທັງ ຕົວແກນ ແລະ ຕົວສະກົດ.

### 4.2 ເປັນຕົວສະກົດ (ພະຍັນຊະນະທ້າຍພະຍາງ)

ຕົວສະກົດແມ່ນພະຍັນຊະນະທີ່ສຽງຂອງມັນໄປຜັນສຽງສະຫຼະໃນຄຳເວົ້າໃຫ້ກາຍເປັນຄຳຕາຍ ຫຼື ຄຳເປັນ ຕາມສຽງຜັນຂອງຕົວສະກົດ. ພະຍັນຊະນະທີ່ໃຊ້ເປັນຕົວສະກົດຕາມແມ່ສະກົດຕ່າງໆມີດັ່ງນີ້:

- ແມ່ອັກ ໃຊ້ **ກ** ເປັນຕົວສະກົດ ເຊັ່ນ: ຜັກ, ໝາກ, ປີກ...
- ແມ່ອັງ ໃຊ້ **ງ** ເປັນຕົວສະກົດ ເຊັ່ນ: ຊ້າງ, ຂີງ, ຕຽງ...
- ແມ່ໄອ ໃຊ້ **ຍ** ເປັນຕົວສະກົດ ເຊັ່ນ: ຂາຍ, ໂດຍ, ສວຍງາມ...
- ແມ່ອັດ ໃຊ້ **ດ** ເປັນຕົວສະກົດ ເຊັ່ນ: ບັດ, ຕະຫຼາດ, ອິນເຕີເນັດ...

- ແມ່ອັນ ໃຊ້ **ນ** ເປັນຕົວສະກົດ ເຊັ່ນ: ບ້ານ, ເງິນ, ເດືອນ...
- ແມ່ອັບ ໃຊ້ **ບ** ເປັນຕົວສະກົດ ເຊັ່ນ: ຫຼັກຊັບ, ຮັບຊາບ, ໂທລະສັບ...
- ແມ່ອົມ ໃຊ້ **ມ** ເປັນຕົວສະກົດ ເຊັ່ນ: ຊຸມຊົນ, ຄອມພິວເຕີ, ກຽມພ້ອມ...
- ແມ່ເອີາ ໃຊ້ **ວ** ເປັນຕົວສະກົດ ເຊັ່ນ: ທິວທັດ, ແນວທາງ, ສີຂຽວ...

ນອກນັ້ນຍັງມີຕົວສະກົດພິເສດ ເພື່ອໃຊ້ສະກົດຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດ ທີ່ຈຳເປັນຈຳນວນໜຶ່ງ ຊຶ່ງເປັນຄຳສັບເຕັກນິກ, ວິຊາສະເພາະ ເຊັ່ນ: **ຈ**, **ສ** ໃຊ້ແທນ **ດ**; **ລ** ໃຊ້ແທນ **ນ**; **ຟ** ໃຊ້ແທນ **ບ** ເປັນຕົ້ນ.

ຕົວຢ່າງ: ເພຈ, ໂພສ, ກຣາຟ...

## 5. ການໃຊ້ພະຍັນຊະນະບາງຕົວ

### 5.1 ການໃຊ້ຕົວ ຣ

1) ໃຊ້ສຳລັບຂຽນທັບສັບຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດ ທີ່ເປັນຊື່ສະເພາະຂອງປະເທດ ຫຼື ເຂດແຄວ້ນ, ວັດຖຸສິ່ງຂອງ, ບຸກຄົນ, ສະຖານທີ່, ຄຳສັບສະເພາະທາງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຕົ້ນ ເຊັ່ນ: ບຣູໄນ, ໂອຕຣິດ, ບາເຣນ, ຣູມານີ, ຣັດເຊຍ, ຝຣັ່ງ, ກຣາມ, ເອເລັກໂຕຣນິກ...

2) ໃຊ້ສຳລັບຂຽນພາສາເຜົ່າທີ່ເປັນຊື່ສະເພາະຂອງຊົນເຜົ່າ, ບຸກຄົນ, ສະຖານທີ່ເປັນຕົ້ນ ເຊັ່ນ: ເຜົ່າກຣຽງ, ກຣີ, ຕຣຽງ, ຕຣີ, ເບຣົາ, ໄປຣ, ຢຣຸ, ຮ່າຣັກ...

3) ໃຊ້ສຳລັບຂຽນຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດທີ່ໃຊ້ໃນເອກະສານຄົ້ນຄວ້າເຄົ້າສັບ ແລະ ເອກະສານທາງພຸດທະສາສະໜາ ເຊັ່ນ: ພຣະ, ສີຣິ, ມໍຣະກົດ...

4) ຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ທີ່ໄດ້ແປງມາເປັນຄຳລາວແລ້ວ ແລະໃຊ້ໃນເອກະສານທາງລັດຖະການໃຫ້ໃຊ້ຕົວ ລ, ຫຼ ແລະ ຣ ແທນ.

ຕົວຢ່າງ 1: ການໃຊ້ຕົວ ລ ແທນ ຣ

| **ຄຳໃຊ້ຕົວ ຣ ໃນພາສາປາລີ ແລະ ສັນສະກິດ** | **ໃຊ້ເປັນຕົວ ລ ໃນພາສາລາວ** | **ຄວາມໝາຍ** |
|---|---|---|
| ຣະດູ | ລະດູ | ຍາມ, ສ່ວນຂອງປີ |
| ສາທາຣະນະຣັຖ | ສາທາລະນະລັດ | ປະເທດທີ່ມີການປົກຄອງ ທີ່ຖືວ່າປະຊາຊົນທຸກຄົນ ມີສິດເທົ່າກັນ, ມີປະທານປະເທດ/ປະທານາທິບໍດີເປັນປະມຸກ |

| | | |
|---|---|---|
| ຣັຖບານ | ລັດຖະບານ | ອົງການປົກຄອງປະເທດ |
| ຣັຖມົນຕີ | ລັດຖະມົນຕີ | ຜູ້ເປັນສະມາຊິກຂອງ ລັດຖະບານ |
| ຣັສມີ | ລັດສະໝີ | ແສງສະຫວ່າງ, ແສງຢາດຍ້ອຍ |
| ຣາສີ | ລາສີ | ລັກສະນະດີງາມ |
| ຣາສດອນ | ລາສະດອນ | ພົນລະເມືອງຂອງປະເທດ |
| ຣາຊະສີ | ລາຊະສີ | ພະຍາສິງ |
| ຣາຕຣີ | ລາຕີ | ເວລາກາງຄືນ |
| ຣາຫູ | ລາຫູ | ຊື່ອະສູນຕົນໜຶ່ງ |
| ຣິຈນາ | ລິດຈະນາ | ຊຽນ, ແຕ່ງ, ປະພັນ |
| ຣິສຍາ | ລິດສະຫຍາ | ຄວາມບໍ່ຢາກໃຫ້ຜູ້ອື່ນໄດ້ດີ |
| ອະນຸຣັກ | ອະນຸລັກ | ຮັກສາ, ປ້ອງກັນ |
| ໂຣຫິດ | ໂລຫິດ | ເລືອດ, ສີແດງ |
| ໂຣຄະ, ໂຣກ | ໂລກ | ພະຍາດ |

ຕົວຢ່າງ 2: ການໃຊ້ ຫຼ ແທນ ຣ

| **ຄຳໃຊ້ຕົວ ຣ ໃນພາສາ ປາລີ ແລະ ສັນສະກິດ** | **ໃຊ້ເປັນຕົວ ຫຼ ໃນພາສາລາວ** | **ຄວາມໝາຍ** |
|---|---|---|
| ອັກຂຣະ | ອັກຂະຫຼະ | ຕົວໜັງສື |
| ອິສຣະ | ອິດສະຫຼະ | ເປັນໃຫຍ່, ບໍ່ຂຶ້ນກັບໃຜ |
| ສຣະ | ສະຫຼະ | ສຽງ, ຕົວອັກສອນທີ່ໃຊ້ເປັນສະ ຫຼະປະກອບກັບພະຍັນຊະນະ |

ຕົວຢ່າງ 3: ການໃຊ້ຕົວ ຣ ແທນ ຣ

| **ຄຳໃຊ້ຕົວ ຣ ໃນພາສາປາລີ ແລະ ສັນສະກິດ** | **ໃຊ້ເປັນຕົວ ຣ ໃນພາສາ ລາວ** | **ຄວາມໝາຍ** |
|---|---|---|
| ຣັກສາ | ຮັກສາ | ລະວັງ, ເບິ່ງແຍງ, ປ້ອງກັນ |
| ຣູປພັນ | ຮູບປະພັນ | ລັກສະນະ, ຮູບຮ່າງ, ສີ |
| ຣູປທັມ | ຮູບປະທຳ | ສິ່ງທີ່ມີຮູບ |

## 5.2 ການໃຊ້ຕົວ ໜ ໝ ຫຼ

ການໃຊ້ຕົວ ໜ ໝ ຫຼ ໃຫ້ໃຊ້ແຕ່ຮູບນີ້ ເທົ່ານັ້ນ, ບໍ່ໃຫ້ໃຊ້ຮູບພະຍັນຊະນະປະສົມ ຫນ ຫມ ຫລ ເພາະຈະອ່ານໄດ້ເປັນສອງແບບ ແລະ ອາດຈະຜິດຄວາມໝາຍໄປໄດ້.

ຕົວຢ່າງ:

**ສະເໜ** ຖ້າຂຽນ **ສະເຫນ** ກໍອາດຈະອ່ານເປັນ ສະ-ເຫນ (ຫ-ເxນ-ເຫນ)

**ສະເໝີ** ຖ້າຂຽນ **ສະເຫມີ** ກໍອາດຈະອ່ານເປັນ ສະ-ເຫ-ມີ

**ສະເຫຼີມ** ຖ້າຂຽນ **ສະເຫລີມ** ກໍອາດຈະອ່ານເປັນ ສະ-ເຫ-ລີມ

## 5.3 ການໃຊ້ ລ ເຟື້ອງ ( ຼ )

ຕົວ ລ ເຟື້ອງ ( ຼ ) ໃຫ້ໃຊ້ປະກອບສະເພາະກັບຕົວ ຫ ເພື່ອເປັນຕົວ ຫຼ ຢ່າງດຽວເທົ່ານັ້ນ, ບໍ່ໃຊ້ແທນຕົວ ລ ຫຼື ຣ ໃນອັກສອນຄວບ.

ຕົວຢ່າງ:

ເກຣັກ [ອ່ານວ່າກະເຣັກ] ບໍ່ຂຽນ ເກຼັກ

ນິວເຄລຍ [ອ່ານວ່ານິວຄະເລຍ] ບໍ່ຂຽນ ນິວເຄຼຍ

ໂປຣແກຣມ ບໍ່ຂຽນ ໂປຼແກຼມ

ກິໂລກຣາມ ບໍ່ຂຽນ ກິໂລກຼາມ

ເອເລັກໂຕຣນິກ ບໍ່ຂຽນ ເອເລັກໂຕຼນິກ

## 5.4 ການໃຊ້ ຍ ເຟື້ອງ ( ຽ )

- ຕົວ ຍ ເຟື້ອງ ( ຽ )ໃຫ້ໃຊ້ຂຽນເປັນສະຫຼະ ເັຍ ເxຍ ປ່ຽນຮູບເມື່ອມີຕົວສະກົດ (ຂຽນຢູ່ກາງພະຍາງ) ເທົ່ານັ້ນ.

ຕົວຢ່າງ:

ເັຍ ປ່ຽນເປັນ xັຽx: ມັຽງ, ອັຽນ, ດັຽມ...

ເxຍ ປ່ຽນເປັນ xຽx: ວຽກ, ຮຽນ, ກຽມ...

- ບໍ່ໃຊ້ຂຽນເປັນສະຫຼະປະສົມ.

ຕົວຢ່າງ:

ເຈຍ ບໍ່ຂຽນ ເຈຽ

ເປັຍໆ ບໍ່ຂຽນ ເປັຽໆ

- ບໍ່ໃຊ້ຊຽນເປັນພະຍັນຊະນະຕົ້ນພະຍາງ (ຕົວແກນ).
ຕົວຢ່າງ:

| | | |
|---|---|---|
| ຫຍ້າ | ບໍ່ຊຽນ | ຫຽ້າ |
| ຫຍັງ | ບໍ່ຊຽນ | ຫຽັງ |
| ປະໂຫຍດ | ບໍ່ຊຽນ | ປະໂຫຽດ |

- ບໍ່ໃຊ້ຊຽນເປັນພະຍັນຊະນະທ້າຍພະຍາງ (ຕົວສະກົດ).
ຕົວຢ່າງ:

| | | |
|---|---|---|
| ອ້າຍ | ບໍ່ຊຽນ | ອ້າຽ |
| ຄວາຍ | ບໍ່ຊຽນ | ຄວາຽ |
| ຂ້ອຍ | ບໍ່ຊຽນ | ຂ້ອຽ ຫຼື ຂ້ຽ |



## III. ວ່າດ້ວຍສະຫຼະ

### 1. ຄວາມໝາຍຂອງສະຫຼະ

ສະຫຼະແມ່ນຕົວອັກສອນໝວດໜຶ່ງທີ່ໃຊ້ເປັນສຽງແກນຂອງພະຍາງ ຫຼື ຄໍາ. ໃນພາສາລາວ, ໂດຍລໍາພັງແຕ່ສະຫຼະຢ່າງດຽວ ໃຊ້ສື່ຄວາມໝາຍບໍ່ໄດ້, ຕ້ອງອາໄສພະຍັນຊະນະ ແລະ ບາງຄໍາກໍຕ້ອງມີວັນນະຍຸດມາປະກອບນໍາຈຶ່ງຈະໃຊ້ສື່ສານໄດ້ແຈ່ມແຈ້ງ ແລະ ເປັນທີ່ເຂົ້າໃຈ.

### 2. ຮູບຂອງສະຫຼະ, ການອ່ານ ແລະ ການຂຽນສະຫຼະ

#### 2.1 ຮູບຂອງສະຫຼະ

1) **ສະຫຼະລາວມີທັງໝົດ 28 ຕົວ** ຄື:

xະ xາ
xິ xີ
xຶ xື
xຸ xູ
ເxະ ເx
ແxະ ແx
ໂxະ ໂx
ເxາະ xໍ
ເxິ ເxີ
ເxັຍ ເxຍ
xົວະ xົວ
ເxຶອ ເxືອ ໄx ໃx ເxົາ xໍາ

**ໝາຍເຫດ**: ເຄື່ອງໝາຍ x ໝາຍເຖິງທີ່ຕັ້ງຂອງພະຍັນຊະນະ
ເຄື່ອງໝາຍ xx (ເຄື່ອງໝາຍ x ຕົວທີສອງ) ໝາຍເຖິງທີ່ຕັ້ງຂອງຕົວສະກົດ

## 2) ເຄື່ອງໝາຍ ແລະ ຊື່ເຄື່ອງໝາຍສະຫຼະມີດັ່ງນີ້:

| ເຄື່ອງໝາຍ | | ຊື່ເຄື່ອງໝາຍ |
|---|---|---|
| 1. | ະ | ເອີ້ນວ່າ **ອະ** |
| 2. | າ | ເອີ້ນວ່າ **ອາ** |
| 3. | ິ | ເອີ້ນວ່າ **ອິ** |
| 4. | ີ | ເອີ້ນວ່າ **ອີ** |
| 5. | • | ເອີ້ນວ່າ **ຈ້ຳ** (ໃຊ້ຂຽນໃນສະຫຼະ ຶ ື ) |
| 6. | ຸ | ເອີ້ນວ່າ **ອຸ** |
| 7. | ູ | ເອີ້ນວ່າ **ອູ** |
| 8. | ເ | ເອີ້ນວ່າ **ເອ** |
| 9. | ໂ | ເອີ້ນວ່າ **ໂອ** |
| 10. | ໍ | ເອີ້ນວ່າ **ອໍ** |
| 11. | ໄ | ເອີ້ນວ່າ **ໄອໄມ້ມາຍ** |
| 12. | ໃ | ເອີ້ນວ່າ **ໄອໄມ້ມ້ວນ** |
| 13. | ັ | ເອີ້ນວ່າ **ໄມ້ກັນ** |
| 14. | ົ | ເອີ້ນວ່າ **ໄມ້ກົງ** |
| 15. | ຍ | ເອີ້ນວ່າ **ຕົວ ຍ** |
| 16. | ຽ | ເອີ້ນວ່າ **ຕົວ ຍ ເຟື້ອງ** (ໃຊ້ໃນກໍລະນີທີ່ມີຕົວສະກົດເທົ່ານັ້ນ ເຊັ່ນ: ປຽກ, ຂຽງ, ຂຽດ, ຮຽນ, ປຽບ, ກຽມ, ຂຽວ) |
| 17. | ວ | ເອີ້ນວ່າ **ຕົວ ວ** |
| 18. | ອ | ເອີ້ນວ່າ **ຕົວ ອ** |

**ໝາຍເຫດ**: ບາງເຄື່ອງໝາຍເປັນຮູບສະຫຼະໄດ້ເລີຍ, ແຕ່ບາງເຄື່ອງໝາຍຕ້ອງອາໄສການປະກອບກັບເຄື່ອງໝາຍອື່ນຕື່ມຈຶ່ງເປັນສະຫຼະໄດ້.

### 3) ເຄື່ອງໝາຍ ແລະ ສຽງສະຫຼະ

ສະຫຼະ 1 ສຽງອາດຈະປະກອບດ້ວຍເຄື່ອງໝາຍໜ້ອຍ ຫຼື ຫຼາຍຮູບແຕກຕ່າງກັນ (ໃນເວລາຂຽນ) ດັ່ງນີ້:

**ເຄື່ອງໝາຍ 1 ຮູບແທນ 1 ສຽງ**

| ເຄື່ອງໝາຍ | ສຽງ |
|---|---|
| າ | ອາ |
| ິ | ອິ |
| ີ | ອີ |
| ຸ | ອຸ |
| ູ | ອູ |
| ເ | ເອ |
| ໂ | ໂອ |
| ໍ | ອໍ |
| ໄ | ໄອ |
| ໃ | ໃອ |

**ເຄື່ອງໝາຍ 2 ຮູບແທນ 1 ສຽງ**

| ເຄື່ອງໝາຍ | ສຽງ |
|---|---|
| ະ | ອະ |
| ຶ | ອຶ |
| ື | ອື |
| ແ | ແອ |
| ເ ິ | ເອິ |
| ເ ີ | ເອີ |
| ເ ຍ | ເອຍ |
| ົວ | ອົວ |
| ໍາ | ອໍາ |

**ເຄື່ອງໝາຍ 3 ຮູບແທນ 1 ສຽງ**

| ເຄື່ອງໝາຍ | ສຽງ |
|---|---|
| ເ ະ | ເອະ |
| ໂ ະ | ໂອະ |
| ເ ັຍ | ເອັຍ |
| ເ ົາ | ເອົາ |

**ເຄື່ອງໝາຍ 4 ຮູບແທນ 1 ສຽງ**

| ເຄື່ອງໝາຍ | ສຽງ |
|---|---|
| ແ ະ | ແອະ |
| ເ າະ | ເອາະ |
| ົວະ | ອົວະ |
| ເ ືອ | ເອືອ |
| ເ ືອ | ເອືອ |

## 4) ສະຫຼະຄົງຮູບ, ປ່ຽນຮູບ ແລະ ຫຼຸດຮູບ ເມື່ອມີຕົວສະກົດ

### ກ. ສະຫຼະຄົງຮູບ

ສະຫຼະຄົງຮູບໝາຍເຖິງສະຫຼະທີ່ປະກອບກັບຄຳທີ່ມີຕົວສະກົດ ແລ້ວຍັງປາກົດຮູບສະຫຼະເດີມໃຫ້ເຫັນຢູ່. ສະຫຼະໃນພາສາລາວ ເມື່ອປະກອບກັບຕົວສະກົດສ່ວນຫຼາຍມັນຍັງຄົງຮູບເດີມໄວ້ດັ່ງລຸ່ມນີ້:

| | | | | | |
|---|---|---|---|---|---|
| 1. | xາ | ເປັນ | xາx : ນາງ | ກາຍ | ຂາວ |
| 2. | xິ | ເປັນ | xິx : ບິກ ຈິດ | ບິນ | |
| 3. | xີ | ເປັນ | xີx : ລີງ | ປີນ | ທີມ |
| 4. | xຶ | ເປັນ | xຶx : ຕຶກ ບຶດ | ອຶບ | |
| 5. | xື | ເປັນ | xືx : ກືກ ມືດ | ຄືນ | |
| 6. | xຸ | ເປັນ | xຸx : ລຸງ | ຊຸດ | ຄຸນ |
| 7. | xູ | ເປັນ | xູx : ສູງ | ສູດ | ສູນ |
| 8. | ເx | ເປັນ | ເxx : ເລກ | ເນນ | ເທບ |
| 9. | ແx | ເປັນ | ແxx : ແສງ | ແສດ | ແສນ |
| 10. | ໂx | ເປັນ | ໂxx : ໂຊກ | ໂຊຍ | ໂຊມ |

| | | | | |
|---|---|---|---|---|
| 11. ເິ | ເປັນ | ເິx : ເຂີງ | ເກີດ | ເງີນ |
| 12. ເີ | ເປັນ | ເີx : ເລີກ | ເລີຍ | ເລີດ |
| 13. ເືອ | ເປັນ | ເືອx : ເອືອງ | ເອືອຍ | ເອືອນ |
| 14. ເືອ | ເປັນ | ເືອx : ເມືອງ | ເດືອນ | ເກືອບ |

**ຂ. ສະຫຼະປ່ຽນຮູບ**

ສະຫຼະປ່ຽນຮູບໝາຍເຖິງສະຫຼະທີ່ປະກອບກັບຄຳທີ່ມີຕົວສະກົດ ແລ້ວປາກົດເປັນຮູບສະຫຼະອື່ນ. ສະຫຼະໃນພາສາລາວບາງຕົວ ເມື່ອປະກອບກັບຕົວສະກົດ ມັນຈະປ່ຽນຈາກຮູບເດີມໄປເປັນຮູບໃໝ່ ດັ່ງລຸ່ມນີ້:

| | | |
|---|---|---|
| 1. xະ | ປ່ຽນເປັນ | x̆x : ມັກ ດັງ ທັນ |
| 2. ເxະ | ປ່ຽນເປັນ | ເx̆x : ເດັກ ເຫັນ ເຄັມ |
| 3. ແxະ | ປ່ຽນເປັນ | ແx̆x : ແມັກ ແມັດ ແຕັມ |
| 4. ໂxະ | ປ່ຽນເປັນ | x̊x : ນົກ ຄົນ (ຍ ວ ສະກົດຈະປ່ຽນເປັນ ໂx̆ຍ, ໂx̆ວ) |
| 5. ເxາະ | ປ່ຽນເປັນ | x̆ອx : ຕ້ອກ ມ້ອງ ກ້ອມ |
| 6. xໍ | ປ່ຽນເປັນ | xອx : ຈອກ ຊອບ ຜອມ |
| 7. ເx̆ຍ | ປ່ຽນເປັນ | x̆ຽx : ມ້ຽງ ອ້ຽນ ດ້ຽມ |
| 8. ເxຍ | ປ່ຽນເປັນ | xຽx : ວຽກ ຮຽນ ກຽມ |
| 9. x̊ວະ | ປ່ຽນເປັນ | x̆ວx : ກ້ວກກ້ວກ ອ້ວບ |
| 10. x̊ວ | ປ່ຽນເປັນ | xວx : ໝວກ ສວຍ ສວນ |

**ຄ. ສະຫຼະຫຼຸດຮູບ**

ສະຫຼະຫຼຸດຮູບໝາຍເຖິງສະຫຼະທີ່ປະກອບກັບຄຳທີ່ມີຕົວສະກົດ ແລ້ວຮູບສະຫຼະບໍ່ປາກົດໃຫ້ເຫັນ. ໃນພາສາລາວຈະບໍ່ມີສະຫຼະຫຼຸດຮູບໂດຍລຳພັງ ແຕ່ຈະມີທັງປ່ຽນຮູບ ແລະ ທັງຫຼຸດ ຮູບໃນບາງຕົວເຊັ່ນ:

| | | |
|---|---|---|
| 1. ເx̆ຍ | ປ່ຽນເປັນ | x̆ຽx (ຮູບສະຫຼະ ເx ຫາຍໄປ, ຍ ປ່ຽນເປັນ ຽ) |
| 2. ເxຍ | ປ່ຽນເປັນ | xຽx (ຮູບສະຫຼະ ເx ຫາຍໄປ, ຍ ປ່ຽນເປັນ ຽ) |
| 3. x̊ວະ | ປ່ຽນເປັນ | x̆ວx (ຮູບໄມ້ x̊ ຫາຍໄປ, ສະຫຼະ xະ ປ່ຽນເປັນ x̆) |
| 4. x̊ວ | ປ່ຽນເປັນ | xວx (ຮູບໄມ້ x̊ ຫາຍໄປ) |

## 2.2 ການອ່ານສະຫຼະ

ໂດຍລຳພັງແຕ່ຮູບສະຫຼະຈະບໍ່ມີສຽງຢູ່ໃນຕົວຕ້ອງອາໄສພະຍັນຊະນະຈຶ່ງອ່ານອອກສຽງໄດ້. ສະນັ້ນ, ເພິ່ນຈຶ່ງສົມມຸດໃຫ້ສະຫຼະລາວທຸກຕົວມີສຽງຕົວ **ອ** ຢູ່ນຳ ຄື:

| | | |
|---|---|---|
| **xະ** | ອ່ານອອກສຽງວ່າ | **ອະ** |
| **xາ** | ອ່ານອອກສຽງວ່າ | **ອາ** |
| **xິ** | ອ່ານອອກສຽງວ່າ | **ອິ** |
| **xີ** | ອ່ານອອກສຽງວ່າ | **ອີ** |
| **xຶ** | ອ່ານອອກສຽງວ່າ | **ອຶ** |
| **xື** | ອ່ານອອກສຽງວ່າ | **ອື** |
| **xຸ** | ອ່ານອອກສຽງວ່າ | **ອຸ** |
| **xູ** | ອ່ານອອກສຽງວ່າ | **ອູ** |
| **ເxະ** | ອ່ານອອກສຽງວ່າ | **ເອະ** |
| **ເx** | ອ່ານອອກສຽງວ່າ | **ເອ** |
| **ແxະ** | ອ່ານອອກສຽງວ່າ | **ແອະ** |
| **ແx** | ອ່ານອອກສຽງວ່າ | **ແອ** |
| **ໂxະ** | ອ່ານອອກສຽງວ່າ | **ໂອະ** |
| **ໂx** | ອ່ານອອກສຽງວ່າ | **ໂອ** |
| **ເxາະ** | ອ່ານອອກສຽງວ່າ | **ເອາະ** |
| **xໍ** | ອ່ານອອກສຽງວ່າ | **ອໍ** |
| **ເxິ** | ອ່ານອອກສຽງວ່າ | **ເອິ** |
| **ເxີ** | ອ່ານອອກສຽງວ່າ | **ເອີ** |
| **ເxັຍ** | ອ່ານອອກສຽງວ່າ | **ເອັຍ** |
| **ເxຍ** | ອ່ານອອກສຽງວ່າ | **ເອຍ** |
| **xົວະ** | ອ່ານອອກສຽງວ່າ | **ອົວະ** |
| **xົວ** | ອ່ານອອກສຽງວ່າ | **ອົວ** |
| **ເxຶອ** | ອ່ານອອກສຽງວ່າ | **ເອຶອ** |
| **ເxືອ** | ອ່ານອອກສຽງວ່າ | **ເອືອ** |
| **ໄx** | ອ່ານອອກສຽງວ່າ | **ໄອ** |
| **ໃx** | ອ່ານອອກສຽງວ່າ | **ໄອ** |

**ເxົາ** ອ່ານອອກສຽງວ່າ **ເອົາ**

**xໍາ** ອ່ານອອກສຽງວ່າ **ອໍາ**

## 2.3 ການຂຽນສະຫຼະ

### 1) ຮູບລັກສະນະຂອງສະຫຼະ

ສະຫຼະ x̀ x̂ x̃ x̄ ມີຮູບຮ່າງມົນ, ຄວາມກວ້າງເທົ່າກັບ 3/4 ຕົວພະຍັນຊະນະ (ຕົວທໍາມະດາ), ຄວາມສູງເທົ່າກັບເຄິ່ງໜຶ່ງຂອງຕົວພະຍັນຊະນະ. ຫາງສະຫຼະ x̂ x̄ ເທົ່າກັບເຄິ່ງຕົວ ແລະ ຕ້ອງເຮັດໃຫ້ເຫັນຢ່າງຈະແຈ້ງເພື່ອສະດວກໃນການອ່ານ.

ສະຫຼະ xະ ມີຄວາມຍາວເທົ່າ 3/4 ຂອງຄວາມກວ້າງຕົວພະຍັນຊະນະ.

ໄມ້ x̆ x̀ ມີຄວາມກວ້າງເທົ່າກັບຕົວພະຍັນຊະນະ.

ສະຫຼະ xາ ເx ມີຄວາມກວ້າງເທົ່າກັບເຄິ່ງໜຶ່ງຂອງຕົວພະຍັນຊະນະ.

ສະຫຼະ xຸ xູ ມີຄວາມສູງເທົ່າກັບເຄິ່ງໜຶ່ງຂອງຕົວພະຍັນຊະນະ ແລະ ຕ້ອງເຮັດໃຫ້ເຫັນຢ່າງຈະແຈ້ງເພື່ອສະດວກໃນການອ່ານ.

ສະຫຼະ xໍ ມີຮູບຮ່າງມົນ, ຕົວພິມໃຫ້ມີຫວ່າງທາງກາງ.

ສະຫຼະ xໍາ ເວລາປະກອບກັບພະຍັນຊະນະໃຫ້ສະຫຼະ xໍ ຢູ່ເທິງສ່ວນທ້າຍ ເຊັ່ນ: ກໍາ ງໍາ ໜໍາ ຮໍາ ລໍາ.

ສະຫຼະ ໂx ໄx ໃx ຕົວພິມໃຫ້ມີຄວາມກວ້າງເທົ່າກັບເຄິ່ງໜຶ່ງຂອງຕົວພະຍັນຊະນະ ແລະ ສ່ວນສູງລື່ນອອກໄປເທົ່າກັບ 3/4 ຕົວພະຍັນຊະນະ (ຕົວທໍາມະດາ).

ຕົວ xຽ ມີຄວາມກວ້າງເທົ່າກັບ 2/3 ຂອງຕົວພະຍັນຊະນະ ແລະ ຍາວລົງລຸ່ມເທົ່າກັບ 3/4 ຕົວພະຍັນຊະນະ (ຕົວທໍາມະດາ).

### 2) ການຂຽນສະຫຼະປະກອບກັບພະຍັນຊະນະ

ໃນສະຫຼະລາວມີເຄື່ອງໝາຍ **x** (ໄຂ່ຕີນກາ) ກໍາກັບໄວ້ ຊຶ່ງໝາຍເຖິງທີ່ຕັ້ງຂອງພະຍັນຊະນະ (ໃນບົດຝຶກຫັດສາມາດໃຊ້ □ ຫຼື .... ຫຼື - ແທນກໍໄດ້). ສະນັ້ນ, ເມື່ອປະກອບກັບພະຍັນຊະນະແລ້ວ ສະຫຼະຈະມີຕໍາແໜ່ງແຕກຕ່າງກັນ ເຊັ່ນ: ຂຽນໄວ້ຢູ່ໜ້າ, ເທິງ, ຫຼັງ, ລຸ່ມ, ໜ້າ-ເທິງ, ໜ້າ-ຫຼັງ, ເທິງ-ຫຼັງ ແລະ ໜ້າ-ເທິງ-ຫຼັງພະຍັນຊະນະ.

#### (1) ຂຽນໄວ້ຢູ່ໜ້າພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ໜ້າພະຍັນຊະນະ ໄດ້ແກ່: ເx ແx ໂx ໄx ໃx. ຕົວຢ່າງ: ເປ, ແພ, ໃບໂພ, ໄກ່ແມ່, ໃສ່ໃຈ...

### (2) ຂຽນໄວ້ຢູ່ເທິງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ເທິງພະຍັນຊະນະ ໄດ້ແກ່: xິ xີ xຶ xື xໍ. ຕົວຢ່າງ: ປິຕິ ຍິນດີ, ໝາກອຶ, ໂທລະສັບມືຖື, ກະຕໍ້... ນອກຈາກນັ້ນ, ຍັງມີສະຫຼະ xະ ແລະ ໂxະ ປ່ຽນຮູບເມື່ອມີຕົວສະກົດ ກໍຂຽນໄວ້ເທິງພະຍັນຊະນະ ເຊັ່ນ: xັx xົx. ຕົວຢ່າງ: ກິນຈັກ, ນົກກົກ...

ສຳລັບພະຍັນຊະນະປະສົມ ແລະ ພະຍັນຊະນະຄວບ, ໃຫ້ຂຽນສະຫຼະເທິງໃສ່ພະ ຍັນ ຊະນະຕົວທີ 2 ຫຼື ສ່ວນທີ 2 ສະເໝີ ເຊັ່ນ:  ຫວີ, ໝີ້, ໝໍ, ຂວັນ, ໜໍ່, ຝຣັ່ງ...

### (3) ຂຽນໄວ້ຢູ່ຫຼັງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ຫຼັງພະຍັນຊະນະ ໄດ້ແກ່: xະ xາ ເຊັ່ນ: ກະບະ, ປາຖະໜາ, ປາຖະກະຖາ... ນອກຈາກນັ້ນ, ຍັງມີສະຫຼະ xໍ ເxຍ ແລະ xົວ ປ່ຽນຮູບເມື່ອມີຕົວສະກົດ ກໍຂຽນໄວ້ຫຼັງພະຍັນຊະນະ ເຊັ່ນ: xອx xຽx xວx. ຕົວຢ່າງ: ຈອກ, ຮຽນ, ໝວກ...

### (4) ຂຽນໄວ້ຢູ່ລຸ່ມພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ລຸ່ມພະຍັນຊະນະ ໄດ້ແກ່: xຸ xູ. ຕົວຢ່າງ: ຄຸ, ປູ, ຫູ...

ສຳລັບພະຍັນຊະນະປະສົມ ແລະ ພະຍັນຊະນະຄວບ, ໃຫ້ຂຽນສະຫຼະລຸ່ມໄວ້ກ້ອງພະ ຍັນຊະນະຕົວທີ 2 ຫຼື ສ່ວນທີ 2 ສະເໝີ ເຊັ່ນ:  ໝູ, ຫຍຸ້ງ, ໜູນ...

### (5) ຂຽນໄວ້ຢູ່ໜ້າ-ເທິງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ໜ້າ-ເທິງພະຍັນຊະນະ ໄດ້ແກ່: ເxິ ເxີ. ຕົວຢ່າງ: ເຊິ, ເປີ, ເບີ ... ນອກຈາກນັ້ນ, ຍັງມີສະຫຼະ ເxະ ແxະ ປ່ຽນຮູບເມື່ອມີຕົວສະກົດກໍຂຽນໄວ້ໜ້າ-ເທິງ ພະຍັນຊະນະ ເຊັ່ນ: ເxັx ແxັx. ຕົວຢ່າງ: ເດັກ, ແມັກ, ແມັດ...

### (6) ຂຽນໄວ້ຢູ່ໜ້າ-ຫຼັງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ໜ້າ-ຫຼັງພະຍັນຊະນະ ໄດ້ແກ່: ເxະ ແxະ ໂxະ ເxາະ ເxຍ. ຕົວຢ່າງ: ເຕະ, ແປະ, ໂຕະ, ເກາະ, ເຈຍ...

### (7) ຂຽນໄວ້ຢູ່ເທິງ-ຫຼັງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ເທິງ-ຫຼັງພະຍັນຊະນະ ໄດ້ແກ່: xົວະ xົວ xໍາ. ຕົວຢ່າງ: ຕົວະ, ປົວະ, ງົວ, ບົວ, ຄຳ, ນ້ຳ... ນອກຈາກນັ້ນ, ຍັງມີສະຫຼະ ເxາະ ເxັຍ xົວະ ປ່ຽນຮູບເມື່ອມີຕົວສະກົດກໍຂຽນໄວ້ເທິງ-ຫຼັງ ພະຍັນຊະນະ ເຊັ່ນ: xັອx xັຽx xັວx. ຕົວຢ່າງ: ຊັອກ, ຈັຽບໆ, ກັວກໆ...

ເວລາຂຽນສະຫຼະເທິງ-ຫຼັງສຳລັບພະຍັນຊະນະປະສົມ ແລະ ພະຍັນຊະນະຄວບ ໃຫ້ຂຽນສະຫຼະເທິງໃສ່ພະຍັນຊະນະຕົວ ທີ 2 ຫຼື ສ່ວນທີ 2 ສະເໝີ ເຊັ່ນ: ຂວ້ຳ, ຫງ່ຳ, ໝ້ຳ...

### (8) ຂຽນໄວ້ຢູ່ໜ້າ-ເທິງ-ຫຼັງພະຍັນຊະນະ

ບັນດາສະຫຼະທີ່ຂຽນໄວ້ຢູ່ໜ້າ-ເທິງ-ຫຼັງພະຍັນຊະນະ ໄດ້ແກ່: ເັຍ ເືອ ເືອ ເົາ. ຕົວຢ່າງ: ເປັຍໆ, ເປືອ, ເກືອ, ເຂືອ, ເສົາ, ເບົາ...

ເວລາຂຽນສະຫຼະໜ້າ-ເທິງ-ຫຼັງສຳລັບພະຍັນຊະນະປະສົມ ແລະ ພະຍັນຊະນະຄວບໃຫ້ຂຽນສະຫຼະເທິງໃສ່ພະຍັນຊະນະຕົວທີ 2 ຫຼື ສ່ວນທີ 2 ສະເໝີ ເຊັ່ນ: ເໜືອ, ເຫງົາ, ເປຣົາ...

## 3. ຊະນິດສະຫຼະ

ສະຫຼະມີ 3 ຊະນິດຄື: ສະຫຼະເຄົ້າ, ສະຫຼະປະສົມ ແລະ ສະຫຼະພິເສດ.

### 3.1 ສະຫຼະເຄົ້າ

ສະຫຼະເຄົ້າ ຫຼື ສະຫຼະດ່ຽວແມ່ນສະຫຼະເດີມທີ່ບໍ່ທັນປະສົມກັບສະຫຼະອື່ນ; ເປັນສະຫຼະທີ່ອ່ານອອກສຽງແລ້ວກະທົບຖານທີ່ເກີດຂອງສຽງພຽງຖານດຽວ. ສະຫຼະເຄົ້າມີທັງໝົດ 18 ຕົວ (ສຽງ) ແລະ ແບ່ງອອກເປັນສະຫຼະສຽງສັ້ນ 9 ຕົວ ແລະ ສະຫຼະສຽງຍາວ 9 ຕົວດັ່ງນີ້:

| **ສະຫຼະສຽງສັ້ນ** | **ສະຫຼະສຽງຍາວ** |
|---|---|
| xະ | xາ |
| xິ | xີ |
| xຶ | xື |
| xຸ | xູ |
| ເxະ | ເx |
| ແxະ | ແx |
| ໂxະ | ໂx |
| ເxາະ | xໍ |
| ເxິ | ເxີ |

### 3.2 ສະຫຼະປະສົມ

ສະຫຼະປະສົມເກີດຈາກສະຫຼະເຄົ້າ 2 ສຽງປະສົມກັນ ແລ້ວກາຍເປັນສຽງໃໝ່ ເຊັ່ນ:

xິ ປະສົມກັບ xະ ເປັນ ເxັຍ

xີ ປະສົມກັບ xາ ເປັນ ເxຍ

xຸ ປະສົມກັບ xະ ເປັນ xົວະ

xູ ປະສົມກັບ xາ ເປັນ xົວ

xຶ ປະສົມກັບ xະ ເປັນ ເxຶອ

xື ປະສົມກັບ xາ ເປັນ ເxືອ

ສະຫຼະປະສົມມີ 6 ຕົວ ແລະ ແບ່ງອອກເປັນສຽງສັ້ນ 3 ຕົວ ແລະ ສຽງຍາວ 3 ຕົວ ຄື:

| ສະຫຼະສຽງສັ້ນ | ສະຫຼະສຽງຍາວ |
|---|---|
| ເxັຍ | ເxຍ |
| xົວະ | xົວ |
| ເxຶອ | ເxືອ |

### 3.3 ສະຫຼະພິເສດ

ສະຫຼະພິເສດແມ່ນສະຫຼະທີ່ມີສຽງພະຍັນຊະນະປະສົມຢູ່ນຳ ຊຶ່ງໄດ້ມາດ້ວຍການເອົາ ສະຫຼະ xະ ປະສົມກັບຕົວ **ຍ ມ ວ** ເຊັ່ນ:

**xະ** ປະສົມກັບ **ຍ** ເປັນ **ໄx**, **ໃx** (ສຳລັບ ໃx ບາງທ້ອງຖິ່ນອອກສຽງບໍ່ມີຕົວສະກົດ)

**xະ** ປະສົມກັບ **ມ** ເປັນ **xຳ**

**xະ** ປະສົມກັບ **ວ** ເປັນ **ເxົາ**

ສະຫຼະພິເສດມີ 4 ຕົວຄື: **ໄx ໃx ເxົາ xຳ**. ສະຫຼະເຫຼົ່ານີ້ບໍ່ສາມາດໃສ່ຕົວສະກົດໄດ້ອີກ ເພາະມີສຽງຕົວສະກົດໃນຕົວແລ້ວ.

## 4. ສະຫຼະໃນແມ່ສະກົດ

ສະຫຼະທຸກຕົວໃນພາສາລາວ (ຍົກເວັ້ນສະຫຼະພິເສດ) ສາມາດຕື່ມຕົວສະກົດໃສ່ທ້າຍພະຍາງໄດ້. ພະຍັນຊະນະທີ່ເປັນຕົວສະກົດທັງ 8 ມີ: **ກ ງ ຍ ດ ນ ບ ມ ວ**. ໃນນີ້ແບ່ງເປັນຕົວສະກົດເປັນ **(ງ ຍ ນ ມ ວ)** ແລະ ຕົວສະກົດຕາຍ **(ກ ດ ບ)**.

ນອກຈາກນັ້ນ ຍັງສາມາດນຳໃຊ້ຕົວສະກົດພິເສດ ເພື່ອຂຽນສະເພາະຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດທີ່ຈຳເປັນຈຳນວນໜຶ່ງ, ສ່ວນຄຳລາວເດີມ ແລະ ຄຳທີ່ມີເຄົ້າມາຈາກພາສາ

ພາສາປາລີ-ສັນສະກິດທີ່ໄດ້ກາຍເປັນຄຳລາວແລ້ວ ໃຫ້ໃຊ້ຕົວສະກົດທັງ 8 ເທົ່ານັ້ນ.

**ໝາຍເຫດ**: ສະຫຼະ Xັມ ແລະ ສະຫຼະ Xັຍ ໃນແມ່ໄອ ແລະ ແມ່ອຳລຸ່ມນີ້ ໃຊ້ສະເພາະເອກະສານທາງພຸດທະສາສະໜາ ແລະ ການຄົ້ນຄວ້າວິໄຈເທົ່ານັ້ນ, ສ່ວນເອກະສານທາງລັດຖະການໃຫ້ໃຊ້ສະຫຼະ Xໍາ ແລະ ໄX.

ຕົວຢ່າງ: ແມ່ສະກົດທັງ 8

**ແມ່ອັກ ກ ສະກົດ**

| | | | |
|---|---|---|---|
| Xັກ | Xາກ | Xົກ | ໂXກ |
| Xິກ | Xີກ | Xັອກ | Xອກ |
| Xຶກ | Xືກ | ເXິກ | ເXີກ |
| Xຸກ | Xູກ | Xັຽກ | Xຽກ |
| ເXັກ | ເXກ | Xັວກ | Xວກ |
| ແXັກ | ແXກ | ເXຶອກ | ເXືອກ |

**ແມ່ອັງ ງ ສະກົດ**

| | | | |
|---|---|---|---|
| Xັງ | Xາງ | Xົງ | ໂXງ |
| Xິງ | Xີງ | Xັອງ | Xອງ |
| Xຶງ | Xືງ | ເXິງ | ເXີງ |
| Xຸງ | Xູງ | Xັຽງ | Xຽງ |
| ເXັງ | ເXງ | Xັວງ | Xວງ |
| ແXັງ | ແXງ | ເXຶອງ | ເXືອງ |

**ແມ່ໄອ ຍ ສະກົດ**

| | | | |
|---|---|---|---|
| (Xັຍ) | Xາຍ | ໂXັຍ | ໂXຍ |
| - | - | Xັອຍ | Xອຍ |
| Xຶຍ | Xືຍ | ເXິຍ | ເXີຍ |
| Xຸຍ | Xູຍ | - | - |
| - | - | Xັວຍ | Xວຍ |
| - | - | ເXຶອຍ | ເXືອຍ |

## ແມ່ອັດ ດ ສະກົດ

| | | | |
|---|---|---|---|
| xັດ | xາດ | xົດ | ໂxດ |
| xິດ | xີດ | xັອດ | xອດ |
| xຶດ | xືດ | ເxິດ | ເxີດ |
| xຸດ | xູດ | xັຽດ | xຽດ |
| ເxັດ | ເxດ | xັວດ | xວດ |
| ແxັດ | ແxດ | ເxຶອດ | ເxືອດ |

## ແມ່ອັນ ນ ສະກົດ

| | | | |
|---|---|---|---|
| xັນ | xານ | xົນ | ໂxນ |
| xິນ | xີນ | xັອນ | xອນ |
| xຶນ | xືນ | ເxິນ | ເxີນ |
| xຸນ | xູນ | xັຽນ | xຽນ |
| ເxັນ | ເxນ | xັວນ | xວນ |
| ແxັນ | ແxນ | ເxຶອນ | ເxືອນ |

## ແມ່ອັບ ບ ສະກົດ

| | | | |
|---|---|---|---|
| xັບ | xາບ | xົບ | ໂxບ |
| xິບ | xີບ | xັອບ | xອບ |
| xຶບ | xືບ | ເxິບ | ເxີບ |
| xຸບ | xູບ | xັຽບ | xຽບ |
| ເxັບ | ເxບ | xັວບ | xວບ |
| ແxັບ | ແxບ | ເxຶອບ | ເxືອບ |

## ແມ່ອຳ ມ ສະກົດ

| | | | |
|---|---|---|---|
| (xັມ) | xາມ | xົມ | ໂxມ |
| xິມ | xີມ | xັອມ | xອມ |
| xຶມ | xືມ | ເxິມ | ເxີມ |
| xຸມ | xູມ | xັຽມ | xຽມ |
| ເxັມ | ເxມ | xັວມ | xວມ |
| ແxັມ | ແxມ | ເxຶອມ | ເxືອມ |

**ແມ່ເອົາ ວ ສະກົດ**

| | | | |
|---|---|---|---|
| (xັວ) | xາວ | ໂxັວ | ໂxວ |
| xິວ | xີວ | - | - |
| xຶວ | xືວ | ເxິວ | ເxີວ |
| - | - | xັຽວ | xຽວ |
| ເxັວ | ເxວ | - | - |
| ແxັວ | ແxວ | - | - |

**ໝາຍເຫດ**: ສະຫຼະ xັວ [ເອົາ] ຮູບນີ້ບໍ່ໃຊ້ໃນພາສາລາວ ຈຶ່ງໃຊ້ສະຫຼະພິເສດ ເxົາ ແທນ



## IV. ວ່າດ້ວຍວັນນະຍຸດ

### 1. ຄວາມໝາຍຂອງວັນນະຍຸດ

ວັນນະຍຸດແມ່ນຕົວບັງຄັບສຽງສໍານຽງຄວາມເວົ້າໃຫ້ປ່ຽນໄປຈາກສຽງເດີມ ແລະ ໃຫ້ໄດ້ຄວາມໝາຍໃໝ່ໃນເວລາສື່ສານ. ເພື່ອຢາກໄດ້ສຽງຂຶ້ນລົງໃຫ້ຄົບຖ້ວນຕາມສໍານຽງຄວາມເວົ້າຂອງພາສາລາວນັ້ນ, ເວລາຂຽນເພິ່ນຈຶ່ງໃຊ້ເຄື່ອງໝາຍບັງຄັບສຽງໃຫ້ເປັນໄປຕາມຄວາມຕ້ອງການທີ່ປະສົງຢາກເວົ້າ ຊຶ່ງເອີ້ນວ່າ ວັນນະຍຸດ ເພາະວ່າພາສາລາວມີສຽງສູງຕໍ່າຂຶ້ນລົງຫຼາຍສຽງດ້ວຍກັນ. ເພື່ອຢາກໃຫ້ມີຄວາມຊັດເຈນ ແລະ ບໍ່ປ່ຽນແປງເປັນຢ່າງອື່ນໄດ້ຈຶ່ງຕ້ອງໃຊ້ເຄື່ອງໝາຍວັນ ນະຍຸດບັງຄັບສຽງໄວ້, ຖ້າບໍ່ດັ່ງນັ້ນອາດກາຍເປັນສຽງອື່ນກໍໄດ້.

ຕົວຢ່າງ:

| ບໍ່ໃສ່ວັນນະຍຸດ | ໃສ່ວັນນະຍຸດ |
|---|---|
| ມາ ກິນ ກາ | ມ້າ ກິນ ກ້າ |

ເວົ້າລວມແລ້ວ ວັນນະຍຸດແມ່ນເຄື່ອງໝາຍບອກລະດັບສຽງ ແລະ ໃຊ້ສໍາລັບຜັນສຽງ ຫຼື ປ່ຽນສຽງຂຶ້ນລົງຕາມສໍານຽງສຽງເວົ້າ ເພື່ອໃຫ້ສຽງຂອງຄໍາເວົ້ານັ້ນ ຕ່າງໄປຈາກລະດັບສຽງຂອງພະຍັນ ຊະນະ ແລະ ສະຫຼະເດີມ.

### 2. ຮູບ ແລະ ຫຼັກການຂຽນວັນນະຍຸດ

ເຄື່ອງໝາຍວັນນະຍຸດທີ່ໃຊ້ຢູ່ໃນອັກສອນລາວ ມີ 4 ຮູບ ແຕກຕ່າງກັນດັ່ງລຸ່ມນີ້:

| | | |
|---|---|---|
| ່ | ເອີ້ນວ່າ | ໄມ້ເອກ |
| ້ | ເອີ້ນວ່າ | ໄມ້ໂທ |
| ໊ | ເອີ້ນວ່າ | ໄມ້ຕີ |
| ໋ | ເອີ້ນວ່າ | ໄມ້ຈັດຕະວາ |

ໄມ້ເອກມີຄວາມຍາວເທົ່າກັບ 1/2 ຂອງຄວາມສູງຕົວ ກ.

ໄມ້ໂທມີຄວາມຍາວເທົ່າກັບຄວາມກວ້າງຂອງຕົວ ກ.

ໄມ້ຕີຂຽນຄ້າຍຄືຕົວ ຕ ສ່ວນເທິງ ແຕ່ໃຫ້ນ້ອຍກວ່າ 1/2.

ໄມ້ຈັດຕະວາຂຽນຄືໝາຍບວກ ແຕ່ໃຫ້ນ້ອຍກວ່າ.

ວັນນະຍຸດທັງ 4 ຮູບ ທີ່ກ່າວມາຂ້າງເທິງນີ້, ຕາມຫຼັກການແລ້ວ ເວລາໃຊ້ຕ້ອງຂຽນໄວ້ຢູ່ຂ້າງເທິງ ສ່ວນທ້າຍຂອງພະຍັນຊະນະຕົ້ນພະຍາງສະເໝີ; ຖ້າມີສະຫຼະຢູ່ເທິງພະຍັນຊະນະ ກໍຂຽນໄວ້ເທິງສະຫຼະນັ້ນອີກ. ຕົວຢ່າງ:

ກ່າ ກ້າ ກ໊າ ກ໋າ ກີ່ ກີ້ ກີ໊ ກີ໋

ໃນກໍລະນີໃຊ້ວັນນະຍຸດກັບພະຍັນຊະນະຄວບ ແລະ ພະຍັນຊະນະປະສົມ, ເຄື່ອງໝາຍວັນນະຍຸດຕ້ອງຂຽນໄວ້ສ່ວນທ້າຍຂອງພະຍັນຊະນະຕົວທີສອງ. ຕົວຢ່າງ:

ກວ້າງ ໄຂວ່ ຄວ້າ ໃຫຍ່ ໜ້ອຍ ຫວັ່ນ

## 3. ສຽງວັນນະຍຸດ

ສຽງວັນນະຍຸດ ແມ່ນຫົວໜ່ວຍອັກຂະຫຼະອັນໜຶ່ງ ຊຶ່ງບໍ່ສາມາດຕັດແຍກອອກຈາກພະຍາງ ຫຼື ຄຳສັບໄດ້. ສຽງວັນນະຍຸດເປັນພາກສ່ວນໜຶ່ງຂອງພະຍາງ ຫຼື ຄຳສັບ ອາດຈະມີຮູບ ຫຼື ບໍ່ມີຮູບກໍໄດ້.

ເມື່ອເວົ້າເຖິງວັນນະຍຸດ ຄວນຈຳແນກລະຫວ່າງເຄື່ອງໝາຍວັນນະຍຸດ ແລະ ສຽງວັນນະຍຸດ. ເຄື່ອງໝາຍວັນນະຍຸດໝາຍເຖິງ ໄມ້ເອກ (x່), ໄມ້ໂທ (x້), ໄມ້ຕີ (x໊) ແລະ ໄມ້ຈັດຕະວາ (x໋). ສ່ວນສຽງວັນນະຍຸດນັ້ນ ໝາຍເຖິງສຽງທຳມະດາ, ສຽງຂຶ້ນລົງ, ສຽງຕ່ຳສູງ ແຕກຕ່າງກັນທາງດ້ານຄວາມໝາຍ ແລະ ສຽງຂອງພະຍາງ ຫຼື ຄຳສັບ. ຕົວຢ່າງ:

ບານ - ບ້ານ

ກິນ - ກິ່ນ - ກິ້ນ

ປອງ - ປ່ອງ - ປ້ອງ - ປ໊ອງ - ປ໋ອງ

ສຽງວັນນະຍຸດຂອງພາສາລາວແຕ່ລະທ້ອງຖິ່ນແຕກຕ່າງກັນ. ສະນັ້ນ, ພາສາລາວໃນແຕ່ລະທ້ອງຖິ່ນຈຶ່ງມີສຳນຽງສຽງເວົ້າບໍ່ຄືກັນ. ການນຳສະເໜີສຽງວັນນະຍຸດຢູ່ໃນຫຼັກພາສາລາວເຫຼັ້ມນີ້ ແມ່ນອີງໃສ່ສຳນຽງສຽງວຽງຈັນ ແລະ ຍຶດເອົາອັກສອນແຕ່ລະໝວດເປັນຫຼັກ.

ຄ່າລະດັບຂອງສຽງວັນນະຍຸດໃນພາສາລາວທີ່ເປັນລະດັບມາດຕະຖານມີດັ່ງນີ້:

- ສຽງສາມັນ ເປັນສຽງສູງສະເໝີ ຫຼື ຕ່ຳສະເໝີ
- ສຽງເອກ ເປັນສຽງກາງສະເໝີ
- ສຽງໂທ ເປັນສຽງສູງຕົກ
- ສຽງຕີ ເປັນສຽງກາງຕົກ
- ສຽງຈັດຕະວາ ເປັນສຽງຕ່ຳຂຶ້ນ

### 3.1 ສຽງວັນນະຍຸດໃນພະຍາງທີ່ມີສະຫຼະສຽງຍາວ

#### 1) ສຽງສາມັນ

ສຽງສາມັນແບ່ງອອກເປັນ 2 ສຽງ ຄື: ສຽງສາມັນສູງ ແລະ ສຽງສາມັນຕ່ຳ:

##### (1) ສຽງສາມັນສູງ (ສຽງສູງສະເໝີ)

ສຽງສາມັນສູງເກີດມາຈາກພະຍັນຊະນະໃນໝວດອັກສອນຕ່ຳ ປະກອບກັບສະຫຼະສຽງຍາວ ທັງໃນພະຍາງໄຂ (ເປີດ) ແລະ ພະຍາງອັດ (ປິດ) ທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ບໍ່ໃສ່ໄມ້ວັນນະຍຸດ.

| ຕົວຢ່າງ: | ຄາ | ຊູ | ທີ | ເມຍ |
|---|---|---|---|---|
| | ທານ | ພັນ | ແມວ | ເຮືອນ |

##### (2) ສຽງສາມັນຕ່ຳ (ສຽງຕ່ຳສະເໝີ)

ສຽງສາມັນຕ່ຳເກີດມາຈາກພະຍັນຊະນະໃນໝວດອັກສອນກາງ ປະກອບກັບສະຫຼະສຽງຍາວ ທັງໃນພະຍາງໄຂ ແລະ ພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ບໍ່ໃສ່ໄມ້ວັນນະຍຸດ.

| ຕົວຢ່າງ: | ກາ | ເຈືອ | ດີ | ຕານ |
|---|---|---|---|---|
| | ບົວ | ປາງ | ຍອມ | ອວນ |

#### 2) ສຽງເອກ[3] (ສຽງກາງສະເໝີ)

ສຽງເອກເກີດມາຈາກພະຍັນຊະນະໃນໝວດອັກສອນສູງ, ໝວດອັກສອນກາງ ແລະ ໝວດອັກສອນຕ່ຳປະກອບສະຫຼະສຽງຍາວ ທັງໃນພະຍາງໄຂ ແລະ ພະຍາງອັດທີ່ມີຕົວສະ ກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x່.

| ຕົວຢ່າງ: | ກ່າ | ຂ່າ | ຄ່າ | ເປ່ | ແຜ່ | ແພ່ |
|---|---|---|---|---|---|---|
| | ຕ່ອນ | ຖ່ານ | ທ່ານ | ຈ່ອງ | ແສ່ວ | ຊື່ນ |

#### 3) ສຽງໂທ (ສຽງສູງຕົກ)

ສຽງໂທ ມີ 2 ກໍລະນີ: ປາກົດຮູບວັນນະຍຸດ ແລະ ບໍ່ປາກົດຮູບວັນນະຍຸດ:

- ພະຍັນຊະນະໃນໝວດອັກສອນຕ່ຳ ແລະ ໝວດອັກສອນກາງ ປະກອບສະຫຼະທັງໃນພະຍາງໄຂ ແລະ ພະຍາງອັດ, ໃສ່ໄມ້ວັນນະຍຸດ x້.

[3] ສຽງລາວພວນຈຳແນກເອກຕ່ຳ ແລະ ເອກສູງໄດ້ໂດຍທຳມະຊາດ ເຊັ່ນ: **ຊ່າ** ຕ່າງ **ສ່າ**. ສ່ວນສຽງລາວວຽງບໍ່ຈຳແນກ, ລາວໃຕ້ລົງໄປ ບາງຄຳສຽງເອກຕ່ຳກາຍເປັນສຽງໂທຕ່ຳ ເຊັ່ນ: **ເລື່ອງ** ເປັນ **ເລື້ອງ**.

ຕົວຢ່າງ: ຟ້າ ຢູ້ ມື້ ແຫ້
ກີ້ ເອ້ ຕູ້ ເບ້ຍ
ຮ້ອງ ລ້ອນ ມ້ານ ນີ້ວ
ຍ້ານ ແຈ້ງ ເອີ້ນ ກ້ອຍ
ຈ້າກ ກີ້ກ ແອ້ບ ຕ້ອດ

- ພະຍັນຊະນະໃນໝວດອັກສອນຕ່ຳ ປະກອບສະຫຼະຍາວໃນພະຍາງອັດທີ່ມີຕົວສະກົດຕາຍ (ກ ດ ບ).

ຕົວຢ່າງ: ຍາກ ທູບ ແຊບ ໂລດ

## 4) ສຽງຕີ (ສຽງກາງຕົກ)

ສຽງຕີ ມີ 3 ກໍລະນີ: ປາກົດຮູບວັນນະຍຸດ x້ ແລະ x໊ ແລະ ບໍ່ປາກົດຮູບວັນນະຍຸດ:

- ພະຍັນຊະນະໃນໝວດອັກສອນສູງ ປະກອບກັບສະຫຼະສຽງຍາວ ທັງໃນພະຍາງໄຂ ແລະ ພະຍາງອັດທີ່ມີຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x້.

ຕົວຢ່າງ: ຜ້າ ສູ້ ແຂ້ ເຫຍື້ອ
ຖ້ານ ຫ້ອງ ໝື້ນ ເຫຼື້ອມ

- ພະຍັນຊະນະໃນໝວດອັກສອນກາງ ປະກອບກັບສະຫຼະສຽງຍາວ ທັງໃນພະຍາງໄຂ ແລະ ພະຍາງອັດທີ່ບໍ່ແມ່ນຕົວສະກົດຕາຍ (ກ ດ ບ), ໃສ່ໄມ້ວັນນະຍຸດ x໊.

ຕົວຢ່າງ: ກ໊າ ຕີ໊ ປ໊ອງ ບູ໊ມ

- ພະຍັນຊະນະໃນໝວດອັກສອນກາງ ແລະ ໝວດອັກສອນສູງ ປະກອບກັບສະຫຼະສຽງຍາວໃນພະຍາງອັດທີ່ມີຕົວສະກົດຕາຍ (ກ ດ ບ), ບໍ່ໃສ່ໄມ້ວັນນະຍຸດ.

ຕົວຢ່າງ: ປີກ ຢາດ ຕູບ ແຈກ
ສາກ ຂູດ ແໜບ ໝວດ

## 5) ສຽງຈັດຕະວາ (ສຽງຕ່ຳຂຶ້ນສູງ)

ສຽງຈັດຕະວາ ມີ 2 ກໍລະນີ: ປາກົດຮູບວັນນະຍຸດ ແລະ ບໍ່ປາກົດຮູບວັນນະຍຸດ.

- ພະຍັນຊະນະໃນໝວດອັກສອນສູງປະກອບກັບສະຫຼະສຽງຍາວ ທັງໃນພະຍາງໄຂ ແລະ ພະຍາງອັດທີ່ບໍ່ມີຕົວສະກົດຕາຍ (ກ ດ ບ), ບໍ່ໃສ່ໄມ້ວັນນະຍຸດ.

ຕົວຢ່າງ: ຂາ ສີ ຫູ ໝໍ
ຖາມ ສອນ ຫຼາຍ ຂຽນ

- ພະຍັນຊະນະໃນໝວດອັກສອນກາງປະກອບກັບສະຫຼະຍາວທັງໃນພະຍາງໄຂ ແລະ ພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x̊.

ຕົວຢ່າງ: ກ໋າ ປ໋າ ບື໋ ຕົ໋ວ

ປ໋ອງ ຈ໋ອມ ຕູ໋ມ ອ໋ອງ

## 3.2 ສຽງວັນນະຍຸດໃນພະຍາງທີ່ມີສະຫຼະສຽງສັ້ນ

### 1) ສຽງສາມັນ

#### (1) ສຽງສາມັນສູງ (ສຽງສູງສະເໝີ)

- ພະຍັນຊະນະໃນໝວດອັກສອນຕ່ຳ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ).

ຕົວຢ່າງ: ຍັງ ຄຸຍ ເລັ່ນ ຊຸມ

- ພະຍັນຊະນະໃນໝວດອັກສອນກາງ ແລະ ໝວດອັກສອນສູງ ປະກອບກັບສະຫຼະສຽງສັ້ນໃນພະຍາງໄຂ ຫຼື ພະຍາງອັດທີ່ມີຕົວສະກົດຕາຍ (ກ ດ ບ), ບໍ່ໃສ່ໄມ້ວັນນະຍຸດ.

ຕົວຢ່າງ: ກະ ເຕະ ຈິ ເປືອ

ຂະ ຜິ ສຸ ຜົວະ

ກັກ ເຕັດ ຈິບ ອຸກ

ສິບ ຖົກ ຜັກ ຫຼຸບ

#### (2) ສຽງສາມັນຕ່ຳ (ສຽງຕ່ຳສະເໝີ)

ພະຍັນຊະນະໃນໝວດອັກສອນກາງ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ).

ຕົວຢ່າງ: ອິນ ຈັງ ປິວ ກຸມ

### 2) ສຽງເອກ (ສຽງກາງສະເໝີ)

- ພະຍັນຊະນະໃນໝວດອັກສອນສູງ, ໝວດອັກສອນກາງ ແລະ ໝວດອັກສອນຕ່ຳ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x່.

ຕົວຢ່າງ: ຊຸ່ຍ ຖິ່ນ ຜິ່ວ ສຸ່ມ

ກຸ່ມ ຕິ່ງ ປັ່ນ ອິ່ມ

ຄັ່ງ ທຸ່ນ ຊຸ່ມ ເພິ່ນ

- ພະຍັນຊະນະໃນໝວດອັກສອນກາງ ປະກອບກັບສະຫຼະສຽງສັ້ນໃນພະຍາງໄຂ ແລະ ພະຍາງອັດທີ່ແມ່ນຕົວສະກົດຕາຍ (ກ ດ ບ), ໃສ່ໄມ້ວັນນະຍຸດ x̊.

  ຕົວຢ່າງ: ກ໊ະ ອຸ໊ ຈິ໊ ບ໊ະ

  ກັ໊ກ ອຸ໊ບ ຈິ໊ດ ບັ໊ກ

- ພະຍັນຊະນະໃນໝວດອັກສອນຕ່ຳ ປະກອບກັບສະຫຼະສຽງສັ້ນໃນພະຍາງໄຂ ແລະ ພະຍາງອັດທີ່ແມ່ນຕົວສະກົດຕາຍ (ກ ດ ບ), ບໍ່ໃສ່ໄມ້ວັນນະຍຸດ.

  ຕົວຢ່າງ: ຄະ ຊຸ ພິ ທຸ

  ຄັກ ຊຸດ ພິບ ທຸກ

### 3) ສຽງໂທ (ສຽງສູງຕົກ)

ພະຍັນຊະນະໃນໝວດອັກສອນກາງ ແລະ ໝວດອັກສອນຕ່ຳ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x້.

ຕົວຢ່າງ: ກົ້ນ ປຸ້ມ ຕັ້ງ ຈິ້ວ

ຊົ້ນ ຍຸ້ມ ທັ້ງ ຄິ້ວ

### 4) ສຽງຕີ (ສຽງກາງຕົກ)

- ພະຍັນຊະນະໃນໝວດອັກສອນກາງ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ແມ່ນຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x໊.

ຕົວຢ່າງ: ກົ໊ນ ປຸ໊ມ ຕັ໊ງ ຈິ໊ວ

- ພະຍັນຊະນະໃນໝວດອັກສອນສູງ ປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ມີຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x້.

ຕົວຢ່າງ: ຂັ້ນ ຫຍຸ້ມ ໝົ້ນ ຝັ້ນ

### 5) ສຽງຈັດຕະວາ (ສຽງຕ່ຳຂຶ້ນສູງ)

- ພະຍັນຊະນະໃນໝວດອັກສອນສູງປະກອບກັບສະຫຼະສຽງສັ້ນ ໃນພະຍາງອັດທີ່ມີຕົວສະກົດເປັນ (ງ ຍ ນ ມ ວ), ບໍ່ໃສ່ໄມ້ວັນນະຍຸດ.

ຕົວຢ່າງ: ຂັງ ສົນ ຜຸຍ ຖົມ

- ພະຍັນຊະນະໃນໝວດອັກສອນກາງປະກອບກັບສະຫຼະສຽງສັ້ນໃນພະຍາງອັດທີ່ມີຕົວສະກົດເປັນ (ງ ຍ ນ ມ ວ), ໃສ່ໄມ້ວັນນະຍຸດ x໋.

ຕົວຢ່າງ: ເກົ໋ງ ຕຶ໋ມ ປ໋ອມ

## ຕາຕະລາງ 3: ສຽງວັນນະຍຸດພາສາລາວ

| ສຽງສາມັນ | | ສຽງ<br>ເອກ | ສຽງ<br>ໂທ | ສຽງ<br>ຕີ | ສຽງ<br>ຈັດຕະວາ |
|---|---|---|---|---|---|
| ສູງສະເໝີ | ຕ່ຳສະເໝີ | ກາງສະເໝີ | ສູງຕົກ | ກາງຕົກ | ຕ່ຳຂຶ້ນສູງ |
|  |  |  |  |  |  |
| ຄາ<br>ຄານ<br><br>ກະ ຂະ<br>ກັກ ຂັດ | ກາ<br>ການ<br><br>ກັນ | ກ່າ ຂ່າ ຄ່າ<br>ກ່ານ ຂ່ານ<br>ຄ່ານ<br>ຄະ<br>ກັ໊ກ ຄັດ | ກ້າ ຄ້າ<br>ກ້ານ ຄ້ານ<br><br>ກ້າດ ຄາດ<br>ກັ້ນ ຄັ້ນ | ກ໊າ ຂ້າ<br>ກ໊ານ ຂ້ານ<br>ຫວ້ານ<br>ຂາດ<br>ກັ໊ນ ຂັ້ນ | ກ໋າ ຂາ<br>ກ໋ານ ຂານ<br><br><br>ກັ໋ນ ຂັນ |



## V. ເຄື່ອງໝາຍວັກຕອນໃນພາສາລາວ

ເຄື່ອງໝາວັກຕອນແມ່ນເຄືອງໝາຍທີ່ໃຊ້ຊຽນກຳກັບຄຳ, ວະລີ, ປະໂຫຍກ ຫຼື ຂໍ້ຄວາມໃຫ້ເດັ່ນຊັດ ເພື່ອໃຫ້ອ່ານໄດ້ຖືກຕ້ອງ ແລະ ຊ່ວຍໃຫ້ຜູ້ອ່ານເຂົ້າໃຈຄວາມໝາຍໄດ້ຊັດເຈນ. ເຄື່ອງໝາຍວັກຕອນໃນພາສາລາວ ມີດັ່ງນີ້:

### 1. ຈ້ຳ (.)

#### 1) ໃຊ້ໝາຍທ້າຍປະໂຫຍກ ເພື່ອສະແດງວ່າໝົດປະໂຫຍກ ຫຼື ໝົດວັກ

ຕົວຢ່າງ:

ປັດຈຸບັນ, ສະພາບຂອງແມ່ນ້ຳລຳເຊໃນລາວຜິດພ້ຽນປ່ຽນແປງໄປຫຼາຍ. ລະດູແລ້ງນ້ຳແຕ່ລະສາຍແຫ້ງຂອດ. ລະດູຝົນ ນ້ຳຊ້ຳພັດລົ້ນຝັ່ງພາໃຫ້ເກີດໄພນ້ຳຖ້ວມ. ສາເຫດຕົ້ນຕໍແມ່ນເນື່ອງມາຈາກການຕັດໄມ້ທຳລາຍປ່າຊະຊາຍຂອງຄົນເຮົາ ທີ່ນັບວັນນັບເພີ່ມທະວີຂຶ້ນເລື້ອຍໆ ແລະ ການປ່ຽນແປງຂອງດິນຟ້າອາກາດນັ້ນເອງ.

#### 2) ໃຊ້ໝາຍໄວ້ຫຼັງຕົວອັກສອນ ຫຼື ຕົວເລກທີ່ບອກລຳດັບຂໍ້

ຕົວຢ່າງ:

ສາມັນສຶກສາປະກອບດ້ວຍ:

1. ຊັ້ນປະຖົມສຶກສາ
2. ຊັ້ນມັດທະຍົມສຶກສາ

ກ. ຊັ້ນມັດທະຍົມສຶກສາຕອນຕົ້ນ

ຂ. ຊັ້ນມັດທະຍົມສຶກສາຕອນປາຍ

#### 3) ໃຊ້ໝາຍໄວ້ຫຼັງຕົວອັກສອນເພື່ອສະແດງວ່າແມ່ນອັກສອນຫຍໍ້

ຕົວຢ່າງ:

- ສ.ປ.ປ ລາວ ຄຳເຕັມແມ່ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
- ປ.1 ຄຳເຕັມແມ່ນ ຊັ້ນປະຖົມສຶກສາປີທີ 1
- ປ.2 ຄຳເຕັມແມ່ນ ຊັ້ນປະຖົມສຶກສາປີທີ 2
- ປ.3 ຄຳເຕັມແມ່ນ ຊັ້ນປະຖົມສຶກສາປີທີ 3
- ມ.1 ຄຳເຕັມແມ່ນ ຊັ້ນມັດທະຍົມສຶກສາປີທີ 1
- ມ.5 ຄຳເຕັມແມ່ນ ຊັ້ນມັດທະຍົມສຶກສາປີທີ 5

4) ໃຊ້ຂັ້ນຈຳນວນເລກນັບຈາກຫຼັກໜ່ວຍໄປເທື່ອລະ 3 ຕົວເລກ *(ຕາມແບບເກົ່າ)*

ຕົວຢ່າງ:

- 1.000 ອ່ານວ່າ ໜຶ່ງພັນ
- 2.000.000 ອ່ານວ່າສອງລ້ານ

5) ໃຊ້ໃນເລກສ່ວນ *(ຕາມແບບໃໝ່)*

ຕົວຢ່າງ:

- 50.20% ອ່ານວ່າ 50 ຈຸດ 20 ສ່ວນຮ້ອຍ
- 10.2 ຕື້ກີບ ອ່ານວ່າ 10 ຈຸດ 2 ຕື້ກີບ (ຫຼື 10 ຕື້ 2 ຮ້ອຍລ້ານກີບ)

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາອ່ານພົບຈ້ຳໃຫ້ຢຸດພັກຫາຍໃຈກ່ອນ ແລ້ວຈຶ່ງອ່ານຕໍ່.
- ເວລາຂຽນຈ້ຳໃຫ້ຂຽນຕິດກັບທ້າຍຄຳ ຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວ ລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.
- ເວລາຂຽນຈ້ຳຢູ່ຫວ່າງກາງຕົວເລກ, ກາງຕົວອັກສອນ ບໍ່ຕ້ອງຍະຫວ່າງ.
- ເວລາຂຽນອັກສອນຫຍໍ້ຢູ່ໃນເລກທີເອກະສານບໍ່ຕ້ອງໃສ່ຈ້ຳຂັ້ນ, ເວັ້ນເສຍແຕ່ໃນເລກທີ ນັ້ນມີສອງພາກສ່ວນຈຶ່ງໃຊ້ຈ້ຳເພື່ອຂັ້ນກາງ.

ຕົວຢ່າງ: ເລກທີ 245/ສອສ

ເລກທີ 601/ສສກ.ສອສ

## 2. ຈຸດ (,)

1) ໃຊ້ຂັ້ນຄຳໃນລາຍການທີ່ຂຽນຕໍ່ໆກັນຕັ້ງແຕ່ສາມລາຍການຂຶ້ນໄປ ໂດຍຂຽນຂັ້ນແຕ່ລະ ລາຍການ. ສ່ວນໜ້າຄຳ "ແລະ" ຫຼື "ຫຼື" ທີ່ຢູ່ໜ້າລາຍການສຸດທ້າຍບໍ່ຈຳເປັນໃສ່ຈຸດ.

ຕົວຢ່າງ:

- ໃນຫ້ອງການມີຄອມພິວເຕີ, ໂຕະ ແລະ ຕັ່ງ.
- ໃຫ້ເລືອກໝາຍວົງອ້ອມເອົາຄຳຕອບທີ່ຖືກຕ້ອງພຽງຂໍ້ດຽວຈາກ ກ, ຂ, ຄ ຫຼື ງ.

2) ໃຊ້ຂັ້ນຂໍ້ຄວາມໃນປະໂຫຍກ ເພື່ອແຍກໃຈຄວາມຍ່ອຍຕ່າງໆ

ຕົວຢ່າງ:

"ມັນເປັນໄປບໍ່ໄດ້ດອກທີ່ເຮົາຈະຫາຫົວໜ້າທີ່ຖືກໃຈໝົດທຸກຄົນ, ມີແຕ່ເຮົາຕ້ອງທຳຕົວໃຫ້ເຂົ້າກັບຫົວໜ້າຈຶ່ງຈະຖືກ, ເມົາແຕ່ເລືອກໄປເລືອກມາເໝືອນກັບເລືອກນາຍ ຢູ່ຫັ້ນແຫຼະ, ຈັກໜ້ອຍກໍຈະຖືກຫົວໜ້າເລືອກ, ແຮ່ງຊິຫຍຸ້ງໄດ໋".

**3) ໃຊ້ແຍກວະລີ ຫຼື ອະນຸປະໂຫຍກເພື່ອປ້ອງກັນຄວາມເຂົ້າໃຈສັບສົນ**

ຕົວຢ່າງ:

- ນາງສາວທີ່ຍ່າງນຳຫົວໜ້າບໍລິສັດ, ເປັນເລຂາ.
- ສອນເຈົ້າ, ຄວາຍລຸງສາເຂົ້າ.
- ວ່າແຕ່ເຫັນ, ຂ້ອຍກໍຮ້ອງໃສ່ລາວໂລດ.

**4) ໃຊ້ຂັ້ນຈຳນວນເລກນັບຈາກຫຼັກໜ່ວຍໄປເທື່ອລະ 3 ຕົວເລກ** *(ຕາມແບບໃໝ່)*

ຕົວຢ່າງ:

- 1,000 ອ່ານວ່າ ໜຶ່ງພັນ
- 2,000,000 ອ່ານວ່າສອງລ້ານ

**5) ໃຊ້ໃນເລກສ່ວນ** *(ຕາມແບບເກົ່າ)*

ຕົວຢ່າງ:

- 50,20% ອ່ານວ່າ 50 ຈຸດ 20 ສ່ວນຮ້ອຍ
- 10,2 ຕື້ກີບ ອ່ານວ່າ 10 ຈຸດ 2 ຕື້ກີບ (ຫຼື 10 ຕື້ 2 ຮ້ອຍລ້ານກີບ)

**6) ໃຊ້ໃນການຂຽນວັດຈະນານຸກົມເພື່ອຂັ້ນຄວາມໝາຍ ຫຼື ຄຳນິຍາມຂອງຄຳ ທີ່ມີຫຼາຍຄວາມໝາຍ**

ຕົວຢ່າງ:

**ຕັນ** ກ. ລັດໄວ້, ອັດໄວ້, ເຮັດບໍ່ໃຫ້ໄປມາໄດ້; ວ. ບໍ່ເປັນໂກນ, ບໍ່ຊອດ.

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາອ່ານພົບຈຸດໃຫ້ຢຸດພັກໜ້ອຍໜຶ່ງ.
- ເວລາຂຽນຈຸດໃຫ້ຂຽນຕິດກັບທ້າຍຄຳ ຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.
- ເວລາຂຽນຈຸດຢູ່ລະຫວ່າງກາງຕົວເລກ (ເລກສ່ວນ) ບໍ່ຕ້ອງຍະຫວ່າງ.
- ບໍ່ນິຍົມໃຊ້ຈຸດຂັ້ນຕົວເລກສຳລັບນັບ (ບໍ່ໃຊ້: 1, 2, 3; ໃຫ້ໃຊ້ 1 2 3).

## 3. ຈ້ຳຈຸດ (;)

**1) ໃຊ້ຂັ້ນປະໂຫຍກ ລະຫວ່າງປະໂຫຍກທີ່ມີຮູບ ແລະ ໃຈຄວາມສົມບູນຢູ່ແລ້ວ ຢູ່**ໃນເນື້ອຄວາມຍາວໆ ເພື່ອສະແດງຄວາມຕໍ່ເນື່ອງໃກ້ຊິດຂອງປະໂຫຍກນັ້ນໆໂຮມເຂົ້າກັນເປັນປະ ໂຫຍກຍາວປະໂຫຍກດຽວ.

ຕົວຢ່າງ:

ມື້ນີ້ອາຈານບໍ່ໄດ້ມາສອນ; ເພິ່ນຄາວຽກ.

**2) ໃຊ້ແບ່ງປະໂຫຍກ, ກຸ່ມຄຳ ຫຼື ກຸ່ມຕົວເລກທີ່ມີເຄື່ອງໝາຍຈຸດຢູ່ແລ້ວ** ອອກເປັນກຸ່ມ, ເປັນສ່ວນ ເພື່ອໃຫ້ເຫັນໄດ້ຊັດເຈນ.

ຕົວຢ່າງ:

- ທ້າວຄຳອາບນ້ຳ, ທວີຜົມ, ນຸ່ງເຄື່ອງ ແລະ ກຽມຈະໄປການ; ບັງເອີນມີແຂກມາ, ຕ້ອງອອກມາຮັບແຂກ; ເມື່ອແຂກໄປແລ້ວ, ຈຶ່ງອອກຈາກເຮືອນ; ພາໃຫ້ໄປຮອດຫ້ອງການສວາຍ ແລະ ຖືກໝູ່ເວົ້າໃຫ້.
- 1,5; 2,2; 6.
- ໃນຫ້ອງສະໝຸດມີປຶ້ມຫຼາຍຊະນິດເຊັ່ນ: ພາສາຈີນມີປຶ້ມປະຫວັດສາດ, ພູມສາດ ແລະ ການເມືອງ; ພາສາຫວຽດນາມມີປຶ້ມຄະນິດສາດ, ພາສາຫວຽດນາມ ແລະ ວິທີສອນ; ພາສາອັງກິດມີປຶ້ມເຕັກໂນໂລຊີ, ພາສາອັງກິດ, ຊີວະວິທະຍາ ແລະ ຟີຊິກສາດ.

**3) ໃຊ້ຂັ້ນຄຳລາຍງານທີ່ມີເນື້ອໃນຫຼາຍລາຍການ ເພື່ອຈຳແນກລາຍການອອກເປັນກຸ່ມ**

ຕົວຢ່າງ:

ປີກາຍນີ້ ປະຊາຊົນບ້ານນາປູກໄມ້ເກດສະໜາໄດ້ໃນເນື້ອທີ່ 20 ເຮັກຕາ; ປູກຢາງພາລາໄດ້ 10 ເຮັກຕາ; ຂາຍງົວ 100 ໂຕ; ຂາຍຄວາຍ 200 ໂຕ; ຂາຍສາລີອອກສູ່ຕະຫຼາດ ຕ່າງປະເທດໄດ້ 100 ໂຕນ.

**4) ໃຊ້ໃນການຂຽນວັດຈະນານຸກົມເພື່ອແຍກຄວາມໝາຍຂອງຄຳ**

ຕົວຢ່າງ:

**ຈອງ** ນ. ພາຊະນະສຳລັບຕັກອາຫານ ລັກສະນະຄືບ່ວງໃຫຍ່; ກ. ຫວງ, ໝາຍເອົາ, ໝາຍໄວ້, ຖືກຳມະສິດ, ສັ່ງລ່ວງໜ້າ.

**ສິ່ງທີ່ຄວນເອົາໃຈໃສ່:**

- ເວລາອ່ານພົບຈ້ຳຈຸດໃຫ້ຢຸດພັກໜ້ອຍໜຶ່ງ.
- ເວລາຂຽນຈ້ຳຈຸດໃຫ້ຂຽນຕິດກັບທ້າຍຄຳ ຫຼັງຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.

## 4. ສອງຈ້ຳ (:)

### 1) ໃຊ້ໝາຍຫຼັງຄຳ ຄື, ດັ່ງ, ເຊັ່ນ, ວ່າ, ດັ່ງນີ້, ລຸ່ມນີ້...

**1) ໃຊ້ໝາຍຫຼັງຄຳ ຄື, ດັ່ງ, ເຊັ່ນ, ວ່າ, ດັ່ງນີ້, ລຸ່ມນີ້...** ເພື່ອໝາຍໃຫ້ຮູ້ວ່າ ຂໍ້ຄວາມຕໍ່ໄປເປັນ ຂໍ້ຄວາມສຳຄັນທີ່ຄວນເອົາໃຈໃສ່ ຫຼື ໃຫ້ລາຍລະອຽດ ເພື່ອຢັ້ງຢືນໃຫ້ຂໍ້ຄວາມທີ່ເວົ້າມາກ່ອນ.

ຕົວຢ່າງ:

- 3 ລັກສະນະ ແລະ 5 ຫຼັກມູນການສຶກສາຂອງລາວມີ ຄື: ລັກສະນະຊາດ, ລັກສະນະວິທະຍາສາດ-ທັນສະໄໝ ແລະ ລັກສະນະມະຫາຊົນ; ສ່ວນ 5 ຫຼັກມູນມີ ຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ.
- ການຫັດກາຍຍະບໍລິຫານຕ້ອງໃຫ້ຄົບທັງ 9 ທ່າ ເຊັ່ນ: ທ່າຫາຍໃຈ, ທ່າແຂນ, ທ່າເອິກ, ທ່າຂາ, ທ່າທ້ອງ, ທ່າບິດຕົງ, ທ່າປະສົມ, ທ່າເຕັ້ນ ແລະ ທ່າດັດແປງ.
- ການແຕ້ມກາຕູນແບ່ງອອກເປັນຫຼາຍປະເພດດັ່ງນີ້: ກາຕູນທີ່ມີຄວາມຕໍ່ເນື່ອງ, ກາຕູນມີຄຳບັນລະຍາຍ, ກາຕູນແບບນິຍາຍ ແລະ ກາຕູນແບບສຽດສີ.

### 2) ໃຊ້ແທນຄຳ ຄື, ດັ່ງ, ເຊັ່ນ

ຕົວຢ່າງ:

ການຊູບານສົ່ງແບ່ງອອກເປັນ 5 ວິທີ: (1) ວິທີຊູບານໄປທາງໜ້າ; (2) ວິທີຊູບານໄປທາງຫຼັງ; (3) ວິທີຊູບານໄປທາງຂ້າງ; (4) ວິທີເຕັ້ນຊູບານ; (5) ວິທີຊູບານມືດຽວ.

### 3) ໃຊ້ຂັ້ນລະຫວ່າງຊົ່ວໂມງກັບນາທີເພື່ອບອກເວລາ

ຕົວຢ່າງ:

- 9:30 ອ່ານວ່າ 9 ໂມງເຄິ່ງ ຫຼື 9 ໂມງ 30 ນາທີ.
- 9:20 ອ່ານວ່າ 9 ໂມງປາຍ 20 ນາທີ ຫຼື 9 ໂມງ 20.

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາອ່ານພົບເຄື່ອງໝາຍສອງຈ້ຳໃຫ້ຢຸດພັກໜ້ອຍໜຶ່ງ; ເວລາອ່ານພົບສອງຈ້ຳທີ່ໃຊ້ແທນ ຄື, ດັ່ງ, ເຊັ່ນ ໃຫ້ອ່ານວ່າ ຄື, ດັ່ງ, ເຊັ່ນ.
- ເວລາຂຽນສອງຈ້ຳໃຫ້ຂຽນຕິດກັບທ້າຍຄຳ ຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.
- ເວລາຂຽນສອງຈ້ຳລະຫວ່າງກາງຕົວເລກບໍ່ຕ້ອງຍະຫວ່າງ.

## 5. ໝາຍຖາມ (?)

1) **ໃຊ້ຂຽນຢູ່ທ້າຍປະໂຫຍກຄຳຖາມ** ແລະ ສ່ວນຫຼາຍຈະມີຄຳແທນນາມ (ສັບພະນາມ) ໃຊ້ເປັນຄຳຖາມຢູ່ໜ້າເຊັ່ນ: ໃຜມາ? ເພິ່ນຢູ່ໃສ? ແມ່ນຫຍັງ? ແນວໃດ?

2) **ໃຊ້ໝາຍຫຼັງຂໍ້ຄວາມ ໂດຍຂຽນໄວ້ໃນວົງເລັບ (?) ທີ່ໝາຍເຖິງຄວາມສົງໄສ** ຫຼື ບໍ່ແນ່ໃຈຕໍ່ຂໍ້ຄວາມນັ້ນໆ (ສ່ວນຫຼາຍຈະນຳໃຊ້ເຂົ້າໃນການກວດບົດ).

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາອ່ານພົບເຄື່ອງໝາຍຖາມ ໃຫ້ເຮັດສຽງສູງຂຶ້ນ ເພື່ອເນັ້ນສະແດງການຖາມ.
- ເວລາຂຽນໝາຍຖາມໃຫ້ຂຽນຕິດກັບທ້າຍຄຳ ຫຼັງຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ. ເມື່ອໃສ່ໝາຍຖາມແລ້ວຈະບໍ່ໃສ່ໝາຍຈ້ຳ ຫຼື ຈຸດອີກ, ແຕ່ຖ້າມີວົງເລັບ ຫຼື ວົງຢືມມາຂັ້ນ ຊຶ່ງເປັນບ່ອນສຸດວັກກໍສາມາດໃສ່ຈ້ຳໄດ້.

**ໝາຍເຫດ**: ການໃຊ້ ບໍ່ ແລະ ບໍ ໃນຄຳຖາມ

- ການໃຊ້ ບໍ່ ໃນຄຳຖາມ

| | |
|---|---|
| ໂຄງສ້າງ: | ................................................ບໍ່? |
| ຕົວຢ່າງ: | ເຈົ້າຊິໄປໂຮງຮຽນ**ບໍ່**? |

- ການໃຊ້ ບໍ ໃນຄຳຖາມ

| | |
|---|---|
| ໂຄງສ້າງ: | ..................... ບໍ່...............ບໍ? |
| ຕົວຢ່າງ: | ເຈົ້າ**ບໍ່**ໄປໂຮງຮຽນ**ບໍ**? |

## 6. ຂີດຕໍ່ (-)

1) **ໃຊ້ຂີດໝາຍຫົວແຖວ**

2) **ໃຊ້ຕໍ່ພະຍາງ, ຕໍ່ຄຳຢູ່ທ້າຍແຖວ** ໃນເມື່ອຂຽນບໍ່ທັນສຸດພະຍາງ ຫຼື ຄຳ ແຕ່ສຸດແຖວກ່ອນ (ປັດຈຸບັນບໍ່ນິຍົມໃຊ້).

3) **ໃຊ້ແທນຄຳ "ແລະ", "ເຖິງ"**

ຕົວຢ່າງ:

- ວັດຈະນານຸກົມລາວ-ອັງກິດ

- ໜັງສືພິມສຶກສາ-ກິລາ (ອ່ານວ່າ ໜັງສືພິມສຶກສາ ແລະ ກິລາ)
- ປ.3-ປ.5 (ອ່ານວ່າ ປ.3 ເຖິງ ປ.5)

4) ໃຊ້ແຍກພະຍາງເພື່ອບອກຄຳອ່ານ

ຕົວຢ່າງ:

- ລາສະດອນ ອ່ານວ່າ ລາດ-ສະ-ດອນ
- ການຜະລິດ ອ່ານວ່າ ການ-ຜະ-ຫຼິດ
- ອຸປະກອນ ອ່ານວ່າ ອຸບ-ປະ-ກອນ

5) ໃຊ້ແຍກພະຍາງ ຫຼື ຄຳເພື່ອຝຶກການຟ້ອງສຽງ, ຜັນສຽງ, ແຍກຄຳ, ປະສົມຄຳ ຫຼື ສະກົດຄຳ

ຕົວຢ່າງ:

- **ປາ**: ປ-xາ-ປາ
- **ປ່າ**: ປ-xາ-ປາ-x່-ປ່າ
- **ກິນ**: ກ-x̊ນ-ກິນ ຫຼື ກ-x̊-ນ-ກິນ

6) ໃຊ້ເປັນເຄື່ອງໝາຍລົບໃນຄະນິດສາດ

ຕົວຢ່າງ: 10 – 5 = 5

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາຂຽນໝາຍຂີດຕໍ່ທີ່ໝາຍທ້າຍແຖວໃຫ້ຂີດຕໍ່ກ່ອນ ແລ້ວຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ຈາກນັ້ນຈຶ່ງຂຽນຄຳໃສ່.
- ເວລາຂຽນໝາຍຂີດຕໍ່ເພື່ອຕໍ່ ຫຼື ແຍກພະຍາງ ແລະ ໃຊ້ແທນຄຳ "ແລະ", "ເຖິງ" ໃຫ້ຂຽນຕິດກັບພະຍາງ, ຄຳ, ຕົວເລກ ທີ່ຢູ່ໜ້າ ແລະ ຫຼັງ (ບໍ່ໃຫ້ຍະຫວ່າງ, ຍົກເວັ້ນໝາຍລົບ).
- ເວລາອ່ານພົບຂີດຕໍ່ໃນຄວາມໝາຍໃຊ້ແທນຄຳ "ແລະ", "ເຖິງ" ໃຫ້ອ່ານວ່າ "ແລະ", "ເຖິງ" ຫຼື "ຫາ" (ຕົວຢ່າງ: ສຶກສາ-ກິລາ ອ່ານວ່າ ສຶກສາ ແລະ ກິລາ; 8:00-10:00 ອ່ານວ່າ 8 ໂມງເຖິງ 10 ໂມງ ຫຼື 8 ໂມງຫາ 10 ໂມງ).

## 7. ຂີດກ້ອງ ( _______________ )

ໃຊ້ໝາຍຄຳ ຫຼື ຂໍ້ຄວາມ ເພື່ອບອກວ່າມີຄວາມສຳຄັນ ແລະ ຕ້ອງການເນັ້ນໜັກ; ໃຊ້ຂີດກ້ອງຫົວຂໍ້ຕ່າງໆເພື່ອໃຫ້ເຫັນຈະແຈ້ງ (ປັດຈຸບັນ, ສ່ວນຫຼາຍນິຍົມໃຊ້ຕົວເຂັ້ມ ຫຼື ຕົວເນີ້ງແທນຂີດກ້ອງ).

ຕົວຢ່າງ:

"ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກຊົນເຜົ່າ, ເຊື້ອຊາດ, ສາສະໜາ, ເພດໄວ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດໄດ້ຮັບການສຶກສາ".

## 8. ສາມຈ້ຳ (...)

**1) ໃຊ້ໝາຍໃຫ້ຮູ້ວ່າຍັງມີຄວາມອື່ນໆອີກທີ່ຕ້ອງການຂຽນໃສ່ບ່ອນນີ້ແຕ່ຫາກບໍ່ຂຽນ** (ສາມຈ້ຳມີຄວາມໝາຍຄືເກາະລະ ຫຼື ແລະອື່ນໆ).

ຕົວຢ່າງ:

- ແຫຼ່ງທ່ອງທ່ຽວໃນລາວທີ່ຄົນຕ່າງປະເທດຮູ້ຈັກມີຫຼາຍແຫ່ງ ເຊັ່ນ: ເມືອງຫຼວງພະບາງ, ເມືອງວັງວຽງ, ທົ່ງໄຫຫີນຊຽງຂວາງ, ວັດພູຈຳປາສັກ...
- ພວກເຂົາໄປຮອດແຄມນ້ຳແລ້ວກໍ...ຈົນຄ່ຳຈຶ່ງກັບມາ.

**2) ໃຊ້ສຳລັບປະ ຫຼື ລະ ຂໍ້ຄວາມທີ່ບໍ່ຈຳເປັນ** ເພື່ອສະແດງວ່າຂໍ້ຄວາມນັ້ນຖືກຕັດບາງສ່ວນ ໃຊ້ໄດ້ທັງຕອນຂຶ້ນຕົ້ນ, ຕອນກາງ ແລະ ຕອນທ້າຍຂໍ້ຄວາມ (ມີຄວາມໝາຍຄືວົງຕັດ ແລະ ເສັ້ນໄຂ່ປາ).

**3) ໃຊ້ສຳລັບຄຳເວົ້າເພື່ອສະແດງໃຫ້ຮູ້ເຖິງການເວົ້າທີ່ບໍ່ລຽນໄຫຼ**

ຕົວຢ່າງ: "ເອີ... ຄືວ່າ... ເລື່ອງມັນເປັນຈັ່ງຊີ້..."

**ສິ່ງທີ່ຄວນເອົາໃຈໃສ່**:

- ຂຽນ ຫຼື ພິມສາມຈ້ຳໃຫ້ຕິດກັບທ້າຍຄຳ ຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງຂຽນ ຫຼື ພິມຄຳອື່ນຕໍ່ໄປ; ບໍ່ຂຽນສາມຈ້ຳເກີນ 3 ເມັດ.
- ເວລາອ່ານພົບສາມຈ້ຳໃນກໍລະນີ "ຍັງມີຄວາມອື່ນໆອີກທີ່ຕ້ອງການຂຽນໃສ່ບ່ອນນີ້ແຕ່ຫາກບໍ່ຂຽນ" ໃຫ້ອ່ານວ່າ "ແລະ ອື່ນໆ" ຫຼື "ເປັນຕົ້ນ".
- ເວລາອ່ານພົບສາມຈ້ຳໃນກໍລະນີ "ເພື່ອສະແດງໃຫ້ຮູ້ເຖິງການເວົ້າທີ່ບໍ່ລຽນໄຫຼ" ໃຫ້ແກ່ສຽງຍາວກະຕຸກກະຕັກໃນພະຍາງ ຕາມອາລົມທີ່ຢາກສະແດງອອກ ໃຫ້ເໝາະສົມກັບສະຖານະການ ຫຼື ຈຸດພິເສດຂອງຕົວລະຄອນ (ເອີ...ຄື...ຄື...ຄື...ວ່າ...).

## 9. ໝາຍຊ້ຳ (ໆ)

ໃຊ້ຂຽນໄວ້ຫຼັງຄຳ, ວະລີ ຫຼື ປະໂຫຍກ ເພື່ອໝາຍໃຫ້ຮູ້ວ່າຄຳເວົ້າກ່ອນນີ້ຕ້ອງເວົ້າ ຫຼື ອ່ານຊ້ຳອີກເທື່ອໜຶ່ງ. ເມື່ອອ່ານພົບເຄື່ອງໝາຍຊ້ຳຢູ່ທ້າຍຄຳໃດຕ້ອງອ່ານຄຳນັ້ນຊ້ຳສອງເທື່ອ.

ຕົວຢ່າງ:

- ຂາວໆ (ອ່ານວ່າ ຂາວຂາວ)
- ຊ້າໆ (ອ່ານວ່າ ຊ້າຊ້າ)
- ບ້ານຕ່າງໆ (ອ່ານວ່າ ບ້ານຕ່າງຕ່າງ)
- ໄປໄວໆ (ອ່ານວ່າ ໄປໄວໄວ)

ບາງກໍລະນີ ທີ່ຊ້ຳວະລີ ຫຼື ປະໂຫຍກ ຕ້ອງອ່ານວະລີ ຫຼື ປະໂຫຍກນັ້ນຊ້ຳຄືນ ຈຶ່ງໄດ້ຄວາມໝາຍ.

ຕົວຢ່າງ:

- ນົກບິນໄປໆ (ອ່ານວ່າ ນົກບິນໄປ ບິນໄປ)
- ແຕ່ລະວັນໆ (ອ່ານວ່າ ແຕ່ລະວັນ ແຕ່ລະວັນ)
- ມີສຽງຮ້ອງບອກວ່າ: "ນ້ຳຖ້ວມໆ" (ອ່ານວ່າ ມີສຽງຮ້ອງບອກວ່າ: "ນ້ຳຖ້ວມນ້ຳຖ້ວມ")

**ສິ່ງທີ່ຄວນເອົາໃຈໃສ່**:

- ເວລາຂຽນເຄື່ອງໝາຍຊ້ຳຕ້ອງຂຽນຕິດກັບຄຳທີ່ຕ້ອງການຊ້ຳນັ້ນ ຈາກນັ້ນຈຶ່ງຍະຫວ່າງ ຫຼື ເຄາະບາດໜຶ່ງໃນເວລາພິມ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.
- ຫ້າມໃຊ້ເຄື່ອງໝາຍຊ້ຳໃນກໍລະນີດັ່ງນີ້:

(1) ເມື່ອເປັນຄຳຄືນລະບົດຄືນລະຄວາມ ເຊັ່ນ: ຂ້ອຍມາແຕ່ສາລະວັນວັນນີ້ (**<u>ບໍ່ຂຽນ</u>** ຂ້ອຍມາແຕ່ສາລະວັນໆນີ້).

(2) ເມື່ອຮູບຄຳເດີມເປັນຄຳ 2 ພະຍາງທີ່ມີສຽງຊ້ຳກັນ ເຊັ່ນ: ນານາພັນ, ນານາຊາດ, ນານາຊະນິດ, ນານາປະການ (**<u>ບໍ່ຂຽນ</u>** ນາໆພັນ, ນາໆຊາດ, ນາໆຊະນິດ, ນາໆປະການ).

(3) ເມື່ອເປັນຄຳຄືນລະຊະນິດ ຫຼື ປະເພດ ເຊັ່ນ: ນັກຮຽນຮຽນໜັງສື, ຄົນຄົນນີ້ເກັ່ງກ້າສາມາດ, ແມ່ຄົວສອງຄົນຄົນໝໍ້ແກງ (**<u>ບໍ່ຂຽນ</u>** ນັກຮຽນໆໜັງສື, ຄົນໆນີ້ເກັ່ງກ້າສາມາດ, ແມ່ຄົວສອງຄົນໆໝໍ້ແກງ).

(4) ເມື່ອເປັນຄຳໃນກາບກອນ.

(5) ບໍ່ໃຊ້ໝາຍຊ້ຳເກີນ 1 ເຄື່ອງໝາຍ ເຊັ່ນ: ມາໄວໆ (**<u>ບໍ່ຂຽນ</u>** ມາໄວໆໆໆໆໆ)

## 10. ເກາະລະ ຫຼື ແລະອື່ນໆ (ຯລຯ)

ໃຊ້ໝາຍຄຳ ຫຼື ຂໍ້ຄວາມປະເພດດຽວກັນ ຊຶ່ງຍັງມີອີກຫຼາຍຢ່າງທີ່ຕ້ອງຂຽນລົງ ບ່ອນນີ້ແຕ່ຫາກບໍ່ຂຽນ. ເກາະລະມີຄວາມໝາຍຄືສາມຈ້ຳ. ເວລາອ່ານພົບເຄື່ອງໝາຍເກາະລະໃຫ້

ອ່ານວ່າ "ແລະອື່ນໆ". ເວລາຂຽນໃຫ້ຍະຫວ່າງທາງໜ້າ ແລະ ໃສ່ຈ້ຳທາງຫຼັງຂອງເຄື່ອງໝາຍເກາະລະ.

ຕົວຢ່າງ:

ຜະລິດຕະພັນສິນຄ້າຂາອອກຂອງລາວໃນປັດຈຸບັນລວມມີໄຟຟ້າ, ຄຳ, ຫີນກາວ, ທອງ; ເຄື່ອງຕັດຫຍິບ ແລະ ເຄື່ອງຫັດຖະກຳ; ໄມ້ ແລະ ຜະລິດຕະພັນໄມ້; ກາເຟ, ສາລີ, ໝາກເດືອຍ ຯລຯ. ສ່ວນສິນຄ້າຂາເຂົ້າລວມມີລົດຍົນ, ນ້ຳມັນເຊື້ອໄຟ, ວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ເຄື່ອງໃຊ້ຫ້ອງການ, ຢາປົວພະຍາດ ຯລຯ.

**ສິ່ງທີ່ຄວນເອົາໃຈໃສ່**:

ໃຫ້ຍະຫວ່າງກ່ອນ ແລ້ວຈຶ່ງຂຽນ ຫຼື ພິມເຄື່ອງໝາຍເກາະລະໃສ່ ຈາກນັ້ນໃສ່ຈ້ຳຍະຫວ່າງ ຫຼື ເຄາະບາດໜຶ່ງ ແລ້ວຈຶ່ງພິມຄຳໃໝ່ຕໍ່ໄປ.

## 11. ໝາຍລົ້ມຄືນ ( „ )

ໃຊ້ຂຽນໄວ້ກ້ອງຄຳ ຫຼື ຂໍ້ຄວາມເພື່ອບໍ່ຕ້ອງຂຽນຄືນອີກ ແຕ່ໃຫ້ອ່ານຄືຄຳຢູ່ເທິງ (ໝາຍລົ້ມຄືນນີ້ ປັດຈຸບັນບໍ່ນິຍົມໃຊ້, ແຕ່ໃຊ້ວິທີຂຽນຄຳນັ້ນຄືນອີກ ໂດຍການກັອບປີ້).

ຕົວຢ່າງ:

ປຶ້ມທີ່ພິມອອກຈຳໜ່າຍໃນເດືອນນີ້ມີ:

| | | | |
|---|---|---|---|
| 1. ປຶ້ມພາສາລາວ | ຈຳນວນ | 10.000 | ຫົວ |
| 2. „ ຄະນິດສາດ | „ | 4.000 | „ |
| 3. „ ປະຫວັດສາດ | „ | 5.000 | „ |

## 12. ໝາຍທ້ວງ ( ! )

1) **ໃຊ້ຂຽນຢູ່ທ້າຍຄຳອຸທານ** ເພື່ອໝາຍບອກຄວາມອັດສະຈັນ, ຄວາມຕື່ນເຕັ້ນ ຫຼື ຄວາມປະຫຼາດໃຈ ເຊັ່ນ: ບ໊ະ! ໂຢ່ວ! ໂອນໍ! ປັດໂທເອີຍ!

2) **ໃຊ້ຂຽນຢູ່ທ້າຍປະໂຫຍກອຸທານ** ເຊັ່ນ: ຈັ່ງແມ່ນງາມແທ້ນໍ! ຄືມາມ່ວນແທ້ເດ່!

3) **ໃຊ້ຂຽນຢູ່ທ້າຍຄຳສອນສຽງທຳມະຊາດ** ເຊັ່ນ: ປັ່ງ! ແອັກ! ແອັດໆ! ຈ້ອກໆ! ຊວ່າງໆ!

ສິ່ງທີ່ຄວນເອົາໃຈໃສ່:

ຂຽນ ຫຼື ພິມໝາຍທ້ວງໃສ່ຕິດກັບຄຳອຸທານ ຫຼື ຄຳສອນສຽງທຳມະຊາດ ຈາກນັ້ນ ຈຶ່ງຍະຫວ່າງ ແລ້ວພິມຄຳໃໝ່ຕໍ່ໄປ.

## 13. ວົງເລັບ ( )

**1) ໃຊ້ໝາຍຂໍ້ຄວາມເພີ່ມຕື່ມ, ຂໍ້ຄວາມທີ່ຂະຫຍາຍ ຫຼື ອະທິບາຍຂໍ້ຄວາມ ຢູ່ນອກວົງເລັບ** ທີ່ຢູ່ທາງໜ້າ. ຂໍ້ຄວາມທີ່ຢູ່ໃນວົງເລັບນັ້ນຈະອ່ານ ຫຼື ຂ້າມໄປກໍໄດ້ ມັນຈະບໍ່ເຮັດໃຫ້ເນື້ອຄວາມທີ່ຢູ່ນອກວົງເລັບເສຍໄປ.

ຕົວຢ່າງ:

ຈຳນວນເຂື່ອນໄຟຟ້ານ້ຳຕົກເພີ່ມຂຶ້ນຈາກ 1 ແຫ່ງໃນປີ 1975 (ເຂື່ອນນ້ຳງື່ມ 1) ມາເປັນ 10 ແຫ່ງໃນປີ 2005 (ເຂື່ອນເຊເສັດ, ເທີນ-ຫີນບູນ, ຫ້ວຍເຫາະ, ນ້ຳເລິກ, ນ້ຳມັງ 3, ເຂື່ອນຫ້ວຍແສ້ ແລະອື່ນໆ) ແລ້ວເພີ່ມຂຶ້ນເປັນ 38 ແຫ່ງໃນປີ 2015 ແລະ 60 ແຫ່ງໃນປີ 2020. ຄາດວ່າແຕ່ປີ 2020 ເປັນຕົ້ນໄປ ລາວເຮົາຈະມີລາຍຮັບຈາກການຈຳໜ່າຍໄຟຟ້າໄປຕ່າງປະເທດ (ໄທ, ຫວຽດນາມ, ກຳປູເຈຍ, ມຽນມາ ແລະ ປະເທດອື່ນໆ) ປະມານ 1 ຕື້ໂດລາສະຫະລັດຕໍ່ປີ.

**2) ໃຊ້ໝາຍຂໍ້ຄວາມຊຶ່ງບອກທີ່ມາຂອງຄຳ ຫຼື ຂໍ້ຄວາມໃນວັດຈະນານຸກົມ**

ຕົວຢ່າງ:

**ຄອມພິວເຕີ** ນ. ເຄື່ອງຄຳນວນອັດຕະໂນມັດ, ສະໝອງກົນ (ອ.Computer).

**3) ໃຊ້ຂຽນກຳກັບຂໍ້ມູນບາງຢ່າງເພື່ອເຕືອນຄວາມຈື່ຈຳ**

ຕົວຢ່າງ:

ການລະດົມທຶນໃນໄລຍະ 5 ປີ (2001-2005) ບັນລຸໄດ້ 27.563 ຕື້ກີບ. ໃນປີ 2005 ເພີ່ມຂຶ້ນ 28,1% ຂອງ GDP (ທຽບໃສ່ປີ 2000 ແມ່ນ 22,4% ຂອງ GDP).

**4) ໃຊ້ໝາຍໄວ້ຫຼັງຕົວເລກ ຫຼື ຕົວອັກສອນທີ່ບອກລຳດັບຂໍ້ (ຫຼຸດຈາກໃສ່ຈ້ຳ)**

ຕົວຢ່າງ:

1. ຊັ້ນອະນຸບານ:
   1) ຊັ້ນອະນຸບານປີທີ 1
   2) ຊັ້ນອະນຸບານປີທີ 2
   3) ຊັ້ນອະນຸບານປີທີ 3

**ສິ່ງທີ່ຄວນເອົາໃຈໃສ່:**

ໃຫ້ຍະຫວ່າງກ່ອນ ແລ້ວເປີດວົງເລັບ ຂຽນ ຫຼື ພິມຂໍ້ຄວາມໃສ່ໃຫ້ຕິດກັບວົງເລັບ ຈາກນັ້ນອັດວົງເລັບ ແລະ ຍະຫວ່າງ ຫຼື ເຄາະບາດໜຶ່ງ ແລ້ວຈຶ່ງຂຽນ ຫຼື ພິມຄຳໃໝ່ຕໍ່ໄປ. ຖ້າກໍລະນີມີເຄື່ອງໝາຍວັກອື່ນທີ່ຈະຂຽນຕໍ່ວົງເລັບໃຫ້ໃສ່ຕິດວົງເລັບ ແລ້ວຈຶ່ງຍະຫວ່າງ.

ບໍ່ຄວນໃຊ້ວົງເລັບຊ້ອນກັນຫຼາຍກວ່າ 1 ວົງໃນປະໂຫຍກໜຶ່ງ ຫຼື ຂໍ້ຄວາມໜຶ່ງ ແລະ ບໍ່ຄວນໃຊ້ວົງເລັບຫຼາຍເກີນໄປໃນການຂຽນບົດໜຶ່ງໆ.

## 14. ວົງຢືມ ຫຼື ວົງຢືມຄູ່ « » " " 〃 〃

**1) ໃຊ້ເພື່ອສະແດງວ່າຄໍາ ຫຼື ຂໍ້ຄວາມນັ້ນເປັນຄໍາເວົ້າ ຫຼື ຄວາມນຶກຄິດ** (ຄໍາເວົ້າຂອງຕົວລະຄອນ)

ຕົວຢ່າງ:

"ອ້າວ! ນ້ອງພວງໄພວັນ, ຄໍ່າປານນີ້ແລ້ວຍັງລໍຖ້າໃຜຢູ່?"

"ນ້ອງລໍຖ້າອ້າຍສີມຫວັງມາຮັບ" ລາວເວົ້າດ້ວຍນໍ້າສຽງແຜ່ວເບົາ.

"ປານໃດຈຶ່ງມາຮັບ, ນີ້ກໍຄໍ່າມືດແລ້ວ" ລາວບໍ່ຕອບ, ແຕ່ເບິ່ງໂມງຢູ່ແຂນ ແລ້ວຖອນໃຈເລິກໆຄ້າຍມີບັນຫາໃນໃຈ.

**2) ໃຊ້ເພື່ອສະແດງວ່າຄໍາ ຫຼື ຂໍ້ຄວາມນັ້ນຄັດມາຈາກເອກະສານຂອງຜູ້ອື່ນ**

ຕົວຢ່າງ:

- "**ຊົນເຜົ່າ** ແມ່ນກຸ່ມຄົນທີ່ມີພາສາປາກເວົ້າ, ກົກເຄົ້າປະຫວັດສາດຄວາມເປັນມາຮ່ວມ ກັນ, ມີພື້ນຖານວັດທະນະທໍາ ແລະ ສືບເຊື້ອສາຍມາຈາກບັນພະບຸລຸດດຽວກັນ" (ສູນກາງແນວລາວສ້າງຊາດ, 2005).
- "ຄັນບໍ່ອອກຈາກບ້ານ ບໍ່ເຫັນດ່ານແດນໄກ<br>ຄັນບໍ່ໄປຫາຮຽນ ບໍ່ຫອນມີຄວາມຮູ້".

**3) ໃຊ້ເມື່ອຕ້ອງການໃຫ້ຜູ້ອ່ານສັງເກດຄໍາໃດຄໍາໜຶ່ງໂດຍສະເພາະ** ຄໍານັ້ນອາດເປັນຄໍາທີ່ສໍາຄັນ, ຄໍາໃຊ້ສະເພາະ ຫຼື ບາງເທື່ອກໍເປັນຄໍາທີ່ນໍາໃຊ້ຊົ່ວຄາວ.

ຕົວຢ່າງ:

"ຄ້າງຄືນໃນປ່າເລິກ" ເປັນບົດເລື່ອງສັ້ນຂອງທ່ານຈັນທີ ເດືອນສະຫວັນ ທີ່ໄດ້ຮັບລາງວັນຊີໄຣ (SEA Write Award) ປະຈໍາປີ 1999 ອັນເປັນວັນນະກໍາສ້າງສັນຍອດຍ້ຽມແຫ່ງອາຊຽນ. "ຄ້າງຄືນໃນປ່າເລິກ" ແມ່ນໜຶ່ງໃນບັນດາເລື່ອງສັ້ນທີ່ພິມຢູ່ໃນປຶ້ມໂຮມເລື່ອງສັ້ນທີ່ຊື່ວ່າ: "ຊາຕາຊີວິດ" ຊຶ່ງສໍານັກພິມຈໍາໜ່າຍປຶ້ມແຫ່ງລັດ ໄດ້ພິມຈໍາໜ່າຍອອກໃນປີ 1995.

**ສິ່ງທີ່ຄວນເອົາໃຈໃສ່:**

ໃຫ້ຍະຫວ່າງກ່ອນ ແລ້ວເປີດວົງຢືມ ຂຽນ ຫຼື ພິມຂໍ້ຄວາມໃສ່ໃຫ້ຕິດກັບວົງຢືມ ຈາກນັ້ນອັດວົງຢືມ ແລະ ຍະຫວ່າງ ຫຼື ເຄາະບາດໜຶ່ງ ແລ້ວຈຶ່ງຂຽນ ຫຼື ພິມຄຳໃໝ່ຕໍ່ໄປ. ຖ້າກໍລະນີມີເຄື່ອງໝາຍວັກອື່ນທີ່ ຈະຂຽນຕໍ່ວົງຢືມໃຫ້ໃສ່ຕິດວົງຢືມແລ້ວຈຶ່ງຍະຫວ່າງ.

## 15. ວົງຢືມດ່ຽວ ‘ ’

### 1) ໃຊ້ຄືກັນກັບວົງຢືມຄູ່, ແຕ່ເປັນວົງຢືມຊ້ອນໃນຂໍ້ຄວາມທີ່ມີວົງຢືມຄູ່ຢູ່ແລ້ວ.

ຕົວຢ່າງ:

ໃນປຶ້ມຄູ່ມືຄູຂຽນໄວ້ວ່າ: “ນັກຮຽນຈະສາມາດນຳໃຊ້ຄຳສັບ ‘ມື້ວານນີ້’ ‘ມື້ນີ້’ ‘ມື້ອື່ນ’ ເຂົ້າໃນການແຕ່ງປະໂຫຍກໄດ້”.

### 2) ໃຊ້ໝາຍຄຳ ຫຼື ວະລີທີ່ຕ້ອງການເນັ້ນໜັກ (ຄືການໃຊ້ວົງຢືມຄູ່ຂໍ້ 3).

ຕົວຢ່າງ:

‘ຊິ’ ເປັນຄຳປະກອບໜ້າຄຳກິລິຍາ ໝາຍເຖິງອະນາຄົດຕະການ ເຊັ່ນ: ຊິນອນ, ຊິໄປ, ຊິກິນ ເປັນຕົ້ນ.

## 16. ວົງຕັດ <...>

ວົງຕັດໃຊ້ເພື່ອໝາຍໃຫ້ຮູ້ວ່າຂໍ້ຄວາມໃນບ່ອນນີ້ຖືກຕັດອອກ ຫຼື ຖືກປະ ເພາະມັນບໍ່ສຳຄັນ. ເຖິງວ່າຖືກຕັດອອກບາງຕອນ, ແຕ່ເນື້ອຄວາມຍັງຕໍ່ເນື່ອງ ແລະ ອ່ານແລ້ວເຂົ້າໃຈເນື້ອໃນສຳຄັນ. ສ່ວນຫຼາຍໃຊ້ໃນການຄັດຕອນບົດວັນນະຄະດີ ຫຼື ເອກະສານ.

ຕົວຢ່າງ:

ໄດ້ຍິນວ່າມື້ນີ້ພໍ່ຈະໄດ້ຮັບເງິນເດືອນ, ພວກລູກຫ້າຄົນພ້ອມທັງຜູ້ເປັນເມຍຕ່າງກໍໜ້າຊື່ນຕາບານໄປຕາມໆກັນ.

“ມື້ນີ້ ພໍ່ຈະໄດ້ຮັບເງິນເດືອນແລ້ວ ພວກລູກຕ້ອງການຢາກກິນຫຍັງ ບອກມາ?”

“ກິນເຝີ”

“ກິນລາບ” <…>

“ໂອ້ຍ! ກິນຫຍັງກໍກິນເທາະທະແນມໄດ້ເງິນມາກ່ອນແມ່ເອງຫາກຊິໄປຕະຫຼາດ” <…>

ພາຍຫຼັງເຊັນຮັບເງິນເດືອນແລ້ວ, ຈານເລີຍກະວ່າຈະກັບບ້ານເຮືອນ ເພື່ອປະຕິບັດຄຳໝັ້ນສັນຍາກັບພວກລູກ ແລະ ພັນລະຍາ. ແຕ່ພໍຖີບລົດຮອດສີ່ແຍກທາດດຳ, ຈານສີ

ເພື່ອນເກົ່າທີ່ໄດ້ຈາກກັນເປັນເວລາສິບກວ່າປີ ກໍພາຈານເລີຍເຂົ້າໄປແວ່ຮ້ານອາຫານແຫ່ງໜຶ່ງທີ່ແຄມຂອງ. ທໍາອິດຈານເລີຍຄິດວ່າກິນດື່ມກັບເພື່ອນເກົ່າພໍເປັນພິທີແລ້ວກໍຈະກັບເຮືອນ, ແຕ່ບໍ່ເປັນດັ່ງຄິດເມື່ອເບຍເຂົ້າປາກ. <...>

1 ໂມງກາງຄືນ, ຫຼັງຈາກພວກລູກພາກັນນອນຫຼັບໝົດແລ້ວ, ກໍມີສຽງລົດຈັກແລ່ນເຂົ້າມາຈອດຢູ່ຕໍ່ໜ້າເຮືອນ. <...>

"ລົດຖີບຂອງອ້າຍເດ?" ເມຍຖາມ.

"ລົດຖີບຫວະ...ອ້າຍຝາກໄວ້ເຮືອນຂອງເພື່ອນ..."

ເພື່ອບໍ່ໃຫ້ເມຍລົບເລົ້າກວນໃຈ, ຈານເລີຍເອົາມືຈົກຖົງໂສ້ງຫຼັງ ເພື່ອຈະເອົາເງິນເດືອນທີ່ບໍ່ທັນໄດ້ຈ່າຍພໍກົບ ອັດປາກເມຍ. ແຕ່ທັນໃດ ລາວຕ້ອງສະດຸ້ງໃຈຫວໍາບັກໃຫຍ່ເພາະເງິນ <...> ບໍ່ຈັກວ່າຫາຍໄປໃສ; ຄວາມມຶນເມົາຂອງຈານເລີຍສວ່າງກັບທີ່, ຈານພະຍາຍາມຈົກຖົງເສື້ອ, ຖົງໂສ້ງທຸກປ່ອງທຸກຫຼືບແຕ່ກໍບໍ່ເຫັນແມ່ນແຕ່ກີບດຽວ. <...>

(ຄັດຈາກເລື່ອງ "ບົດຮຽນຊີວິດ" ຂອງຈັນທີ ເດືອນສະຫວັນ)

**ສິ່ງທີ່ຄວນເອົາໃຈໃສ່**:

ໃຫ້ຍະຫວ່າງກ່ອນ ແລ້ວຈຶ່ງໃສ່ວົງຕັດ ຈາກນັ້ນຍະຫວ່າງອີກ ແລ້ວຈຶ່ງຂຽນ ຫຼື ພິມຄໍາ ຫຼື ຂໍ້ຄວາມອື່ນໃສ່ຕໍ່ໄປ.

## 17. ຈໍ້າໆ ຫຼື ເສັ້ນໄຂ່ປາ (........................................................)

ໃຊ້ໃນແບບຟອມ ຫຼື ສິ່ງພິມທີ່ຈົ່ງຫວ່າງໄວ້ເພື່ອຂຽນຕື່ມໃສ່ ເຊັ່ນ: ໃບຄໍາຮ້ອງ, ແບບສອບຖາມ, ແບບທົດສອບ, ບົດຝຶກຫັດ ແລະ ອື່ນໆ (ສະໄໝກ່ອນ ເພິ່ນໃຊ້ໝາຍຈໍ້າໆນີ້ໃນຄວາມໝາຍຂອງສາມຈໍ້າ ແລະ ວົງຕັດ, ແຕ່ປັດຈຸບັນເຊົາໃຊ້ແລ້ວ). ໃຫ້ຂຽນ ຫຼື ພິມໝາຍ ຈໍ້າໆໃສ່ຕິດກັບຄໍາທີ່ຢູ່ໜ້າ ແລະ ຫຼັງ.

## 18. ໝາຍທັບ ( / )

1) **ໃຊ້ຂີດຂັ້ນຈໍານວນຕົວເລກລະຫວ່າງໃຫຍ່ກັບນ້ອຍ** ຫຼື ອັນລວມກັບອັນສະເພາະ ເຊັ່ນ: ເງິນເດືອນ 5/9 (ຂັ້ນ 5 ຂັ້ນ 9), ປ.5/1 (ປ.5 ຫ້ອງທີ 1), ມ.4/ຂ (ມ.4 ຫ້ອງ ຂ).

2) **ໃຊ້ຂີດຂັ້ນລະຫວ່າງເລກບອກລໍາດັບຄັ້ງກັບປີ** ເຊັ່ນ: ປະຊຸມຄັ້ງທີ 5/2018.

3) **ໃຊ້ຂີດຂັ້ນຕົວເລກສະແດງວັນທີເດືອນປີ** ເຊັ່ນ: ວັນທີ 12/12/2018.

4) **ໃຊ້ຂີດຂັ້ນລະຫວ່າງຄໍາ "ແລະ" ກັບ "ຫຼື"** ເຊັ່ນ: ແລະ/ຫຼື (ໝາຍເຖິງຢ່າງໃດຢ່າງໜຶ່ງ ຫຼື ທັງສອງຢ່າງ).

ຕົວຢ່າງ:

- ຜູ້ຮັບເໝົາໝາຍເຖິງບຸກຄົນ, ນິຕິບຸກຄົນ ທີ່ເຈົ້າຂອງໂຄງການຈ້າງ ຫຼື ມອບເໝົາໃຫ້ປະຕິບັດການກໍ່ສ້າງ **ແລະ/ຫຼື** ການສ້ອມແປງຕາມສັນຍາ.
- ຜູ້ສະໜອງສິນຄ້າ **ແລະ/ຫຼື** ຜູ້ບໍລິການວຽກງານ ໝາຍເຖິງບຸກຄົນ, ນິຕິບຸກຄົນທີ່ຈັດຫາ ຫຼື ສະໜອງສິນຄ້າ ຫຼື ບໍລິການວຽກງານໃຫ້ຜູ້ຈັດຊື້-ຈັດຈ້າງຕາມສັນຍາ.

(ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, 2017)

5) **ໃຊ້ແທນຄຳ "ຫຼື"** ເຊັ່ນ: ຮ່ອມ/ຊອຍ, ງົວ/ຄວາຍ, ແກບ/ຮໍາ, ເມືອງ/ນະຄອນ...

6) **ໃຊ້ຂີດຂັ້ນຄຳ** ຊຶ່ງມີຄວາມໝາຍຄືຄຳວ່າ "ຕໍ່" ເຊັ່ນ: ຮຽນ 2 ຊົ່ວໂມງ/ອາທິດ, ມີລາຍຮັບ 10 ລ້ານ/ເດືອນ.

7) **ໃຊ້ຂີດຂັ້ນຕົວເລກກັບຕົວອັກສອນ**ສຳລັບລະຫັດຕ່າງໆ ເຊັ່ນ: ເລກທີ 232/ສສກ.

ສິ່ງທີ່ຄວນເອົາໃຈໃສ່: ເວລາຂຽນ ຫຼື ພິມບໍ່ຕ້ອງຍະຫວ່າງທາງໜ້າ ແລະ ຫຼັງໝາຍທັບ.

## 19. ໝາຍຖືກ (✓)

ໃຊ້ໝາຍຂໍ້ຄວາມທີ່ຖືກຕ້ອງ ຫຼື ຖືກເລືອກ (ໃຊ້ໝາຍໃນເວລາກວດບົດ, ຕອບແບບສອບຖາມ...).

## 20. ໝາຍໄຂວ່ຕີນກາ (✕)

ໃຊ້ຂີດຂ້າຄຳທີ່ບໍ່ຖືກ ຫຼື ຂໍ້ຄວາມທີ່ບໍ່ຕ້ອງການ. ໃນວິຊາຄະນິດສາດ ເອີ້ນວ່າ ໝາຍຄູນ.

## 21. ວົງປີກກາ { }

1) **ໃຊ້ໝາຍຄຳທີ່ຢູ່ຕ່າງແຖວເຂົ້າກັນ** ເພື່ອໃຫ້ຮູ້ວ່າເປັນກຸ່ມດຽວກັນ ອາດຈະໃຊ້ພຽງຂ້າງໃດຂ້າງໜຶ່ງກໍໄດ້.

2) **ໃຊ້ໃນວິຊາຄະນິດສາດ** ເພື່ອຂັ້ນກຸ່ມຕົວເລກ ຫຼື ກຸ່ມສັນຍະລັກທີ່ມີວົງເລັບ, ວົງຂໍຢູ່ແລ້ວໄວ້ເປັນກຸ່ມດຽວກັນ.

## 22. ວົງຂໍ [ ]

1) **ໃຊ້ໝາຍຄຳ ຫຼື ວະລີ** ທີ່ເປັນການເພີ່ມຂໍ້ມູນໃສ່ ຊຶ່ງບໍ່ແມ່ນພາກສ່ວນຂອງປະໂຫຍກເພື່ອຊີ້ແຈງໃຫ້ປະໂຫຍກ ຫຼື ຂໍ້ຄວາມຈະແຈ້ງຂຶ້ນຕື່ມ (ຄ້າຍຄືກັບການໃຊ້ໝາຍຂໍ້ຄວາມເພີ່ມຕື່ມຂອງວົງເລັບ ຂໍ້ 1).

ຕົວຢ່າງ:

ອີງຕາມຂໍ້ມູນຈາກປຶ້ມນໍາທ່ຽວຂອງເມືອງວັງວຽງ, ລາຄາຫ້ອງພັກຂອງໂຮງແຮມຢູ່ທີ່ນັ້ນປະມານ 300.000 ກີບຕໍ່ຄືນ [ປະມານ 15 ໂດລາສະຫະລັດ].

2) **ໃຊ້ໃນປຶ້ມວັດຈະນານຸກົມ**ສໍາລັບບອກຄໍາອ່ານ.

ຕົວຢ່າງ:

**ຜະລິດ** [ຜະຫຼິດ] ກ. ເຮັດໃຫ້ເກີດມີຂຶ້ນຕາມທີ່ຕ້ອງການ ໂດຍອາໄສແຮງງານ ຫຼື ເຄື່ອງຈັກ.

3) **ໃຊ້ໃນວິຊາຄະນິດສາດ** ເພື່ອຂັ້ນກຸ່ມຕົວເລກ ຫຼື ສັນຍະລັກທີ່ມີວົງເລັບ, ວົງປີກກາຢູ່ແລ້ວ.

4) **ໃຊ້ໃນວິຊາວິທະຍາສາດ** ເພື່ອຂັ້ນກຸ່ມຕົວເລກ ຫຼື ສັນຍະລັກເພື່ອສະແດງຄວາມໝາຍຕ່າງໆ.

## 23. ໝາຍຂີດຂັ້ນ / // ///

1) **ໃຊ້ໃນວິຊາພາສາສາດ** ເຊັ່ນ: ົວະ /ua/, ົວ /u:a/... ປ /p/, ຕ /t/, ຈ /c/, ກ /k/, ອ /ʔ/...

2) **ໃຊ້ຂີດຂັ້ນຂໍ້ຄວາມໃນບົດອ່ານ** ເພື່ອຢຸດພັກປັ່ງສຽງໃຫ້ຖືກຕ້ອງ ເຊັ່ນ: / ໃຊ້ຂັ້ນໃຈຄວາມຍ່ອຍ ຫຼື ໝາຍບ່ອນຍະຫວ່າງ (ຢຸດໜ້ອຍໜຶ່ງ); // ໃຊ້ຂັ້ນໃຈຄວາມທີ່ໃຫຍ່ກວ່າຍະຫວ່າງ ຫຼື ໝາຍບ່ອນໝາຍຈຸດ, ຈ້ຳຈຸດ (ຢຸດພັກປານກາງ); /// ໃຊ້ຂັ້ນບ່ອນສຸດປະໂຫຍກ ຫຼື ໝາຍບ່ອນ ໝາຍຈ້ຳ, ໝາຍຖາມ (ຢຸດພັກທັນໃຈ).

## 24. ໝາຍດອກຈັນ (*)

1) **ໃຊ້ເພື່ອໝາຍເຫດ** ແລະ ມີຄໍາອະທິບາຍ.

2) **ໃຊ້ໝາຍຫົວຂໍ້** ທີ່ນ້ອຍກວ່າຕົວອັກສອນ.

## 25. ໝາຍກາລັນ (x̀)

ໃຊ້ໝາຍຕົວອັກສອນທີ່ບໍ່ຕ້ອງອອກສຽງ ຫຼື ໃຊ້ສໍາລັບຂ້າຕົວອັກສອນທີ່ບໍ່ຕ້ອງການອອກສຽງ ເພື່ອຮັກສາຮູບສັບເດີມໄວ້. ເວລາຂຽນເຄື່ອງໝາຍກາລັນໃສ່ຕົວອັກສອນທີ່ຊ້ອນກັນຫຼາຍຕົວຕ້ອງໃຫ້ເຄື່ອງໝາຍຢູ່ເທິງຕົວສຸດທ້າຍ ຫຼື ກ່ອນຕົວສຸດທ້າຍ.

ເຄື່ອງໝາຍກາລັນນີ້ ໃຊ້ໃນກໍລະນີຂຽນຕາມເຄົ້າສັບ ເພື່ອສຶກສາຄົ້ນຄວ້າເທົ່ານັ້ນ, ສ່ວນການຂຽນທົ່ວໄປນັ້ນ **ໃນປັດຈຸບັນ ບໍ່ຈໍາເປັນໃຊ້ໝາຍກາລັນ** ເພາະພາສາລາວຂຽນຕາມສຽງຢ່າງມີຫຼັກການ.

ຕົວຢ່າງ:

| | | |
|---|---|---|
| ກາຣັນຕ໌ | ອ່ານວ່າ | ກາລັນ |
| ສາສຕຣ໌ | ອ່ານວ່າ | ສາດ |
| ວຽງຈັນທນ໌ | ອ່ານວ່າ | ວຽງຈັນ |
| ຄອນເສີຣ໌ຕ | ອ່ານວ່າ | ຄອນເສີດ |
| ຟີລ໌ມ | ອ່ານວ່າ | ຟີມ |

## 26. ການຫຍໍ້ໜ້າ

ການຫຍໍ້ໜ້າເປັນຮູບແບບການຈັດໜ້າເຈ້ຍ ຫຼື ໜ້າປຶ້ມ. ໃນເວລາຂຽນ ຫຼື ພິມແຖວຕົ້ນຂອງວັກ ໃນເອກະສານພາສາລາວໃຫ້ຫຍັບຫົວແຖວເຂົ້າ ໂດຍສະເພາະແມ່ນການຂຽນໜັງສືທາງການ, ຕຳລາທາງວິຊາການ ແລະ ແບບຮຽນຕ່າງໆ.

1) ຫຍໍ້ໜ້າເມື່ອຂຶ້ນຕົ້ນເລື່ອງ, ຂຶ້ນຕົ້ນຂໍ້ຄວາມໃໝ່ ຫຼື ຫຼັງຈາກມີຫົວຂໍ້ໃຫຍ່. ຖ້າມີຫົວຂໍ້ນ້ອຍກໍໃຫ້ຫຍັບຫົວແຖວເຂົ້າຫຼຸດກັນເປັນຊັ້ນໆລົງໄປ.

2) ຫຍໍ້ໜ້າໃນເມື່ອຂຶ້ນຕົ້ນບົດກາບກອນ ຕາມຮູບແບບຂອງກາບກອນແຕ່ລະປະເພດ (ໂດຍທົ່ວໄປແລ້ວ ວັກຂຶ້ນຕົ້ນຂອງບາດໃຫ້ຫຍັບຫົວແຖວເຂົ້າ).

ຕົວຢ່າງ 1:

***ຄຳຮ້ອຍແກ້ວ***

*ໜັງສືທີ່ແຕ່ງຂຶ້ນ ຂຽນຂຶ້ນ ຕາມຄຳເວົ້າທຳມະດາ ບໍ່ໄດ້ຫາຄຳສຳຜັດໃຫ້ຄ່ອງກັນ ແລະ ບໍ່ມີກຳນົດຄຳເອກຄຳໂທ ຫຼື ວັກຕອນໃຫ້ແນ່ນອນ ຮຽກວ່າຄຳຮ້ອຍແກ້ວ.*

*ມູນເຫດທີ່ຮຽກໜັງສືປະເພດນີ້ວ່າ ຮ້ອຍແກ້ວນັ້ນ ເນື່ອງຈາກ ໜັງສືຂອງລາວເຮົາແຕ່ບູຮານ ສ່ວນຫຼາຍເປັນເລື່ອງກ່ຽວຂ້ອງໃນທາງສາສະໜາ ຊຶ່ງແປມາຈາກປາລີ. ການແປນັ້ນເພິ່ນຍົກຄຳປາລີຂຶ້ນມາແປເທື່ອລະຄຳ ຈຶ່ງມີຄຳປາລີກັບຄຳລາວຂັ້ນສັບຫວ່າງກັນໄປ. ຄຳປາລີກັບຄຳລາວຂັ້ນກັນນີ້ມີລັກສະນະຄືກັນກັບຮອດໝາກປັດ ອັນເປັນເຄື່ອງປະດັບຄໍຂອງຄົນບູຮານ ຄືມີແກ້ວໜ່ວຍນ້ອຍໜ່ວຍໃຫຍ່ ຫຼື ໜ່ວຍມົນໜ່ວຍຍາວຂັ້ນກັນໄປ. ດັ່ງນັ້ນຈຶ່ງຮຽກວ່າ ໜັງສືແປແບບຮ້ອຍແກ້ວ.*

(ຄັດຈາກປຶ້ມ "ປະໂຫຍດຂອງວັນນະຄະດີ" ຂອງມະຫາສິລາ ວີຣະວົງ, ໜ້າ 4)

ໃນກໍລະນີ ການຂຽນໜັງສືທີ່ບໍ່ເປັນທາງການ ຫຼື ເຄິ່ງທາງການ ກໍສາມາດໃຫ້ທິວແຖວຂອງຫຍໍ້ໜ້າພຽງກັນໄດ້ (ບໍ່ຫຍັບເຂົ້າ), ແຕ່ຕ້ອງຈັດໃຫ້ມີໄລຍະຫ່າງລະຫວ່າງແຖວສຸດທ້າຍຂອງຫຍໍ້ໜ້າເທິງ ກັບແຖວເລີ່ມຕົ້ນຂອງຫຍໍ້ໜ້າລຸ່ມ ຫ່າງກັນຫຼາຍກວ່າແຖວປົກກະຕິ (ໂດຍທົ່ວໄປຄອມພິວເຕີຈະຈັດໃຫ້ໂດຍອັດຕະໂນມັດໃນເວລາເຄາະລົງແຖວ).

ຕົວຢ່າງ 2:

***ສວນອຸທິຍານຫີນຕັ້ງ***

*ປ່າຫີນຕັ້ງຢູ່ຫ່າງຈາກເທດສະບານແຂວງຫົວພັນປະມານ 64 ກິໂລແມັດ ແລະ ຈາກເສັ້ນທາງເລກ 6 ເຂົ້າໄປປະມານ 5 ກິໂລແມັດ.*

*ນັບເປັນເວລາຊ້ານານກວ່າ 1.500 ປີຜ່ານມາແລ້ວ, ຢູ່ເທິງສັນພູສູງທີ່ປົກຄຸມໄປດ້ວຍປ່າໄມ້ອັນອຸດົມສົມບູນຂອງແຂວງຫົວພັນນີ້ ຍັງມີມະນຸດກຸ່ມໜຶ່ງ ຊຶ່ງບໍ່ຮູ້ກົກເຄົ້າຕົ້ນກຳເນີດແນ່ຊັດວ່າ ດັ້ງເດີມເປັນຊົນເຜົ່າໃດ ໄດ້ປະຮ່ອງຮອຍຫີນຕັ້ງ ຈຳນວນຫຼາຍຮ້ອຍແທ່ງ ຢັ່ງຢາຍຕາມເສັ້ນທາງທີ່ຍາວຢຽດຕາມໄຫຼ່ພູ ສັນພູ ແລະ ແກ່ວພູ. ຫີນຕັ້ງມີຈຸດສຳຄັນຢູ່ 3 ກຸ່ມໃຫຍ່. ນອກນັ້ນ ຍັງມີກຸ່ມນ້ອຍອີກຈຳນວນໜຶ່ງທີ່ຕັ້ງຢູ່ປຸ່ງວ ແລະ ຢັ່ງຢາຍກະແຈກກະຈາຍເກາະກ່າຍກັນຈາກຈຸດໜຶ່ງຫາອີກຈຸດໜຶ່ງ. ຫີນຕັ້ງແມ່ນສ້າງດ້ວຍຫີນມີກາຊິດ ຕັດແຕ່ງເປັນແຜ່ນບາງໆ ແລະຍາວ, ນຳມາຝັງລຽງລາຍກັນເປັນກຸ່ມ ໂດຍສ່ວນຫຼາຍແລ້ວ ຫີນຕັ້ງທີ່ມີຂະໜາດສູງກວ່າໝູ່ມັກຈະຝັງຢູ່ໃຈກາງຂອງກຸ່ມ, ສ່ວນທິດທາງໃນການຈັດວາງແມ່ນບໍ່ໄດ້ມີຫຼັກການກຳນົດຕາຍຕົວ.*

*ຢູ່ໃຕ້ດິນເລິກລົງໄປ ເພິ່ນເຄີຍຄົ້ນພົບຂຸມອຸໂມງຂະໜາດໃຫຍ່ ແລະ ເລິກ. ຕາມປົກກະຕິຂຸມເຫຼົ່ານີ້ແມ່ນໄດ້ຖືກປົກປິດດ້ວຍແຜ່ນຫີນມົນຂະໜາດໃຫຍ່ ຊຶ່ງບາງແຜ່ນມີເສັ້ນຜ່າສູນກາງເກີນກວ່າສອງແມັດຂຶ້ນໄປ, ມີປ່ອງແປວຂຸດເປັນຮູບທໍ່ລວງດິ່ງ ແລະ ມີປຸ່ງງຫີນນ້ອຍຕິດກັບຝາຜະໜັງ ເພື່ອໃຊ້ເປັນຂັ້ນໄດປີນລົງສູ່ຫ້ອງໃຕ້ດິນ. ຢູ່ຫ້ອງໃຕ້ດິນມີຜີ້ງກວ້າງ ແລະ ມີປຸ່ງງຫີນຂັ້ນແບ່ງເປັນຫ້ອງນ້ອຍໆອີກ. <...>*

(ແຫຼ່ງຂໍ້ມູນຈາກ "ແຫຼ່ງທ່ອງທ່ຽວແຂວງຫົວພັນ": https://hp.mtsvte.com)



## VI. ຕົວເລກລາວ ແລະ ການນັບ

### 1. ຕົວເລກ

ຕົວເລກລາວມີ 10 ຮູບດັ່ງນີ້:

| | | | | | | | | | |
|---|---|---|---|---|---|---|---|---|---|
| ໐ | ໑ | ໒ | ໓ | ໔ | ໕ | ໖ | ໗ | ໘ | ໙ |
| ສູນ | ໜຶ່ງ | ສອງ | ສາມ | ສີ່ | ຫ້າ | ຫົກ | ເຈັດ | ແປດ | ເກົ້າ |

ນອກຈາກໃຊ້ຕົວເລກລາວແລ້ວ ຄົນລາວຍັງໃຊ້ຕົວເລກອາຣັບ ແລະ ໂຣແມັງ.

ຕົວເລກອາຣັບມີ 10 ຮູບດັ່ງນີ້:

| | | | | | | | | | |
|---|---|---|---|---|---|---|---|---|---|
| 0 | 1 | 2 | 3 | 4 | 5 | 6 | 7 | 8 | 9 |
| ສູນ | ໜຶ່ງ | ສອງ | ສາມ | ສີ່ | ຫ້າ | ຫົກ | ເຈັດ | ແປດ | ເກົ້າ |

ຕົວເລກໂຣແມັງນິຍົມໃຊ້ຫຼາຍ ມີ 10 ຮູບດັ່ງນີ້:

| | | | | | | | | | |
|---|---|---|---|---|---|---|---|---|---|
| I | II | III | IV | V | VI | VII | VIII | IX | X |
| ໜຶ່ງ | ສອງ | ສາມ | ສີ່ | ຫ້າ | ຫົກ | ເຈັດ | ແປດ | ເກົ້າ | ສິບ |

### 2. ການນັບ

ການນັບມີ 2 ວິທີ: ນັບເປັນຈຳນວນ ແລະ ນັບເປັນລຳດັບທີ.

**ການນັບເປັນຈຳນວນ** ແມ່ນການນັບທຳມະດາ ເຊັ່ນ: ໜຶ່ງ ສອງ ສາມ ສີ່ ຫ້າ ຫົກ ເຈັດ ແປດ ເກົ້າ...ສິບ...ຮ້ອຍ...ພັນ...ໝື່ນ...ແສນ...ລ້ານ...ຕື້.

**ການນັບເປັນລຳດັບທີ** ແມ່ນການນັບບອກລຳດັບທີ ໂດຍເອົາຄຳວ່າ "ທີ" ມາໃສ່ຢູ່ໜ້າຈຳນວນນັບ ເຊັ່ນ: ທີ ໑ ທີ ໒ ທີ ໓...ວັນທີ ໑ ວັນທີ ໒ ວັນທີ ໓...ຄັ້ງທີ ໑ ຄັ້ງທີ ໒ ຄັ້ງທີ ໓...

**ໝາຍເຫດ**: ຮູບເລກ 8 ລາວມີຫຼາຍຮູບ ເຊັ່ນ: ໘ ໘ ໘ ໘ ໘ ໘ ໘ ໘ ໘ ໘ ໘ ແຕ່ການພິມໃນປຶ້ມແບບຮຽນ ແລະ ສື່ການຮຽນການສອນ ຫຼື ເອກະສານທາງລັດຖະການ ຄວນເລືອກເອົາຮູບທີ່ເໝາະສົມ ເຊັ່ນ: ໘ ໘ ໘ ເປັນຕົ້ນ.

### 3. ການຂຽນຕົວເລກບອກຈຳນວນ

ການຂຽນຕົວເລກບອກຈຳນວນມີ ຫົວໜ່ວຍ, ຫົວສິບ, ຫົວຮ້ອຍ, ຫົວພັນ, ໝື່ນ, ແສນ, ລ້ານ, ຕື້.

**ຫົວໜ່ວຍ**ມີໜຶ່ງຕົວເລກຄື: ໐ ໑ ໒ ໓ ໔ ໕ ໖ ໗ ໘ ໙

**ຫົວສິບ**ມີສອງຕົວເລກ ຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐ | = | ໑໐ (ສິບ) |
| " | ໑ | " | ໑ | = | ໑໑ (ສິບເອັດ) |
| " | ໑ | " | **໕** | = | **໑໕** (ສິບຫ້າ) |
| " | ໒ | " | ໐ | = | ໒໐ (ຊາວ) |
| " | ໙ | " | ໐ | = | ໙໐ (ເກົ້າສິບ) ໆລໆ |

**ຫົວຮ້ອຍ**ມີສາມຕົວເລກ ຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐໐ | = | ໑໐໐ (ຮ້ອຍ) |
| " | ໒ | " | ໒໐໐ | = | ໒໐໐ (ສອງຮ້ອຍ) |
| " | ໙ | " | ໙໙ | = | ໙໙໙ (ເກົ້າຮ້ອຍເກົ້າສິບເກົ້າ) ໆລໆ |

**ຫົວພັນ**ມີສີ່ຕົວເລກ ຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐໐໐ | = | ໑.໐໐໐ (ໜຶ່ງພັນ) |
| " | ໒ | " | ໐໐໐ | = | ໒.໐໐໐ (ສອງພັນ) |
| " | ໙ | " | ໐໐໐ | = | ໙.໐໐໐ (ເກົ້າພັນ) ໆລໆ |

**ໝື່ນ**ມີຫ້າຕົວເລກ ຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐໐໐໐ | = | ໑໐.໐໐໐ (ໜຶ່ງໝື່ນ ຫຼື ສິບພັນ) |
| " | ໒ | " | ໐ ໐໐໐ | = | ໒໐.໐໐໐ (ສອງໝື່ນ ຫຼື ຊາວພັນ) |
| " | ໙ | " | ໐ ໐໐໐ | = | ໙໐.໐໐໐ (ເກົ້າໝື່ນ ຫຼື ເກົ້າສິບພັນ) ໆລໆ |

**ແສນ**ມີຫົກຕົວເລກຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐໐໐໐໐ | = | ໑໐໐.໐໐໐ (ໜຶ່ງແສນ ຫຼື ຮ້ອຍພັນ) |
| " | ໒ | " | ໐໐໐໐໐ | = | ໒໐໐.໐໐໐ (ສອງແສນ ຫຼື ສອງຮ້ອຍພັນ) |
| " | ໙ | " | ໐໐ ໐໐໐ | = | ໙໐໐.໐໐໐ (ເກົ້າແສນ ຫຼື ເກົ້າຮ້ອຍພັນ) ໆລໆ |

**ລ້ານ**ມີເຈັດຕົວເລກ ຕົວຢ່າງ:

| | | | | | |
|---|---|---|---|---|---|
| ເອົາ | ໑ | ຕັ້ງໂຮມກັບ | ໐໐໐ ໐໐໐ | = | ໑.໐໐໐.໐໐໐ (ໜຶ່ງລ້ານ) |
| " | ໒ | " | ໐໐໐ ໐໐໐ | = | ໒.໐໐໐.໐໐໐ (ສອງລ້ານ) |
| " | ໙ | " | ໐໐໐໐໐໐ | = | ໙.໐໐໐.໐໐໐ (ເກົ້າລ້ານ) |
| " | ໑໐ | " | ໐໐໐ ໐໐໐ | = | ໑໐.໐໐໐.໐໐໐ (ສິບລ້ານ) |
| " | ໑໐໐ | " | ໐໐໐ ໐໐໐ | = | ໑໐໐.໐໐໐.໐໐໐ (ຮ້ອຍລ້ານ) ໆລໆ |

**ຕື້**ມີສິບຕົວເລກ ຕົວຢ່າງ:

ເອົາ ໑.໐໐໐ ຕັ້ງໂຮມກັບ ໐໐໐ ໐໐໐ = ໑.໐໐໐.໐໐໐.໐໐໐ (ໜຶ່ງຕື້)
" ໒.໐໐໐ " ໐໐໐ ໐໐໐ = ໒.໐໐໐.໐໐໐.໐໐໐ (ສອງຕື້) ຯລຯ

**ໝາຍເຫດ**: ການນັບຫົວໜ່ວຍແມ່ນນັບແຕ່ຂວາຫາຊ້າຍ, ເວລາອ່ານ ອ່ານແຕ່ຊ້າຍຫາຂວາ

ຕົວຢ່າງ:

ວິທີອ່ານ: **໑.໓໖໘.໔໕໙** (ໜຶ່ງລ້ານສາມແສນຫົກສິບແປດພັນສີ່ຮ້ອຍຫ້າສິບເກົ້າ)

ວິທີນັບ, ຖ້າຈຳນວນນັບຫາກມີຫຼາຍກວ່າເກົ້າແລ້ວໃຫ້ນັບດັ່ງນີ້:

ຕົວຢ່າງ:

| | |
|---|---|
| ໑໐ (10): ສິບ | ໑໖ (16): ສິບຫົກ |
| ໑໑ (11): ສິບເອັດ | ໑໗ (17): ສິບເຈັດ |
| ໑໒ (12): ສິບສອງ | ໑໘ (18): ສິບແປດ |
| ໑໓ (13): ສິບສາມ | ໑໙ (19): ສິບເກົ້າ |
| ໑໔ (14): ສິບສີ່ | ໒໐ (20): ຊາວ |
| ໑໕ (15): ສິບຫ້າ | |

| | |
|---|---|
| ໒໑ (21): ຊາວເອັດ | ໒໖ (26): ຊາວຫົກ |
| ໒໒ (22): ຊາວສອງ | ໒໗ (27): ຊາວເຈັດ |
| ໒໓ (23): ຊາວສາມ | ໒໘ (28): ຊາວແປດ |
| ໒໔ (24): ຊາວສີ່ | ໒໙ (29): ຊາວເກົ້າ |
| ໒໕ (25): ຊາວຫ້າ | ໓໐ (30): ສາມສິບ |
| ໓໑ (31): ສາມສິບເອັດ | ໓໙ (39): ສາມສິບເກົ້າ |
| ໓໒ (32): ສາມສິບສອງ | ໔໐ (40): ສີ່ສິບ |

| | |
|---|---|
| ໔໑ (41): ສີ່ສິບເອັດ | ໔໙ (49): ສີ່ສິບເກົ້າ |
| ໔໒ (42): ສີ່ສິບສອງ | ໕໐ (50): ຫ້າສິບ |

| | |
|---|---|
| ໕໑ (51): ຫ້າສິບເອັດ | ໕໙ (59): ຫ້າສິບເກົ້າ |
| ໕໒ (52): ຫ້າສິບສອງ | ໖໐ (60): ຫົກສິບ |

໖໑ (61): ຫົກສິບເອັດ
໖໒ (62): ຫົກສິບສອງ

໖໙ (69): ຫົກສິບເກົ້າ
໗໐ (70): ເຈັດສິບ

໗໑ (71): ເຈັດສິບ ເອັດ
໗໒ (72): ເຈັດສິບສອງ

໗໙ (79): ເຈັດສິບເກົ້າ
໘໐ (80): ແປດສິບ

໘໑ (81): ແປດສິບເອັດ
໘໒ (82): ແປດສິບສອງ

໘໙ (89): ແປດສິບເກົ້າ
໙໐ (90):ເກົ້າສິບ

໙໑ (91): ເກົ້າສິບເອັດ
໙໒ (92): ເກົ້າສິບສອງ

໙໙ (99): ເກົ້າສິບເກົ້າ
໑໐໐ (100): ໜຶ່ງຮ້ອຍ

໑໐໑ (101): ຮ້ອຍເອັດ
໑໐໒ (102): ຮ້ອຍສອງ
໑໑໑ (111): ຮ້ອຍສິບເອັດ

໑໐໙ (109): ຮ້ອຍເກົ້າ
໑໑໐ (110): ຮ້ອຍສິບ
໑໒໑(121): ຮ້ອຍຊາວເອັດ

໑໓໑ (131): ຮ້ອຍສາມສິບເອັດ ຯລຯ

**ກົລະນີພິເສດໃນການນັບ:**

1) ກໍລະນີເລກໜຶ່ງຢູ່ທ້າຍແຕ່ຫົວສິບຂຶ້ນໄປອ່ານວ່າ: ເອັດ

ຕົວຢ່າງ:

| | | | |
|---|---|---|---|
| ໑໑ | : | ສິບເອັດ | ບໍ່ແມ່ນສິບໜຶ່ງ |
| ໒໑ | : | ຊາວເອັດ | ບໍ່ແມ່ນສອງສິບໜຶ່ງ |
| ໑໑໑ | : | ຮ້ອຍສິບເອັດ | ບໍ່ແມ່ນຮ້ອຍສິບໜຶ່ງ |
| ໑໐໐໑ | : | ໜຶ່ງພັນໜຶ່ງ | ບໍ່ແມ່ນພັນເອັດ |
| ໑໐໐໙ | : | ພັນເກົ້າ | ບໍ່ແມ່ນພັນເກົ້າຮ້ອຍ |
| ໑.໑໐໐ | : | ພັນເອັດ ຫຼື ພັນໜຶ່ງຮ້ອຍ | |
| ໑໑.໐໐໐ | : | ສິບເອັດພັນ | |

2) ກໍລະນີເວົ້າຕັດຈຳນວນຫົວຮ້ອຍທີ່ມີເລກສູນຊຶ່ງຢູ່ຫຼັງຫົວພັນຂຶ້ນໄປນິຍົມເວົ້າດັ່ງນີ້:

| | | |
|---|---|---|
| **໑.໑໐໐** (1.100) | ນິຍົມເວົ້າ: | ພັນເອັດ |
| **໑.໙໐໐** (1.900) | ນິຍົມເວົ້າ: | ພັນເກົ້າ |
| **໑໑.໐໐໐** (11.000) | ນິຍົມເວົ້າ: | ໝື່ນເອັດ |
| **໑໑໐.໐໐໐** (110.000) | ນິຍົມເວົ້າ: | ແສນເອັດ |
| **໑.໑໐໐.໐໐໐** (1.100.000) | ນິຍົມເວົ້າ: | ລ້ານເອັດ |
| **໑.໑໐໐.໐໐໐.໐໐໐** (1.100.000.000) | ນິຍົມເວົ້າ: | ຕື້ເອັດ |



# VII. ການໃຊ້ອັກສອນຫຍໍ້

## 1. ຄວາມໝາຍ ແລະ ຮູບແບບຂອງອັກສອນຫຍໍ້

### 1.1 ຄວາມໝາຍຂອງອັກສອນຫຍໍ້

ອັກສອນຫຍໍ້ແມ່ນຕົວອັກສອນທີ່ໃຊ້ຂຽນຫຍໍ້ຄຳໃຫ້ສັ້ນລົງ ເພື່ອຄວາມສະດວກໃນການຂຽນ ໂດຍຈະໃຊ້ເຄື່ອງໝາຍຈ້ຳໃສ່ໄວ້ທ້າຍຂອງຕົວອັກສອນຫຍໍ້ ຫຼື ບໍ່ໃຊ້ກໍໄດ້ຕາມແຕ່ລະກໍລະນີ.

ຕາມຫຼັກການຂອງພາສາລາວ ທີ່ໃຊ້ກັນມາແຕ່ບູຮານນະການນັ້ນ, ເວລາຂຽນອັກສອນຫຍໍ້ຕ້ອງໃສ່ຈ້ຳ ເພື່ອປ້ອງກັນບໍ່ໃຫ້ກາຍເປັນຄວາມໝາຍອື່ນ ໂດຍສະເພາະແມ່ນອັກສອນຫຍໍ້ທີ່ມີຕົວ ວ ແລະ ຕົວ ອ ຢູ່ກາງ. ປັດຈຸບັນ, ການຂຽນອັກສອນຫຍໍ້ທີ່ມີ 2 ຕົວຂຶ້ນໄປຈະບໍ່ນິຍົມໃສ່ເຄື່ອງໝາຍຈ້ຳ ທັງນີ້ກໍເພື່ອຄວາມວ່ອງໄວ, ປະຢັດເວລາ ແລະ ເນື້ອທີ່. ແຕ່ອັກສອນ ຫຍໍ້ທີ່ມີຕົວດຽວກໍຍັງຮັກສາການໃສ່ເຄື່ອງໝາຍຈ້ຳໃສ່ໄວ້ຢູ່ ເພື່ອບໍ່ໃຫ້ຫຼົງກັບຄຳທີ່ຢູ່ໃກ້ຄຽງ.

### 1.2 ຮູບແບບຂອງອັກສອນຫຍໍ້

ຕົວອັກສອນຫຍໍ້ມີຫຼາຍຮູບແບບ ເພື່ອນຳໃຊ້ໃຫ້ເໝາະສົມຕາມກໍລະນີທີ່ຕ່າງກັນ, ແຕ່ທີ່ນິຍົມໃຊ້ເປັນທາງການມີ 3 ຮູບແບບດັ່ງລຸ່ມນີ້:

**ຮູບແບບທີ 1: ໃສ່ຈ້ຳລະຫວ່າງກາງອັກສອນຫຍໍ້**

ຕົວຢ່າງ:

ຄ.ສ (ຄຣິດຕະສັກກະລາດ)

ພ.ສ (ພຸດທະສັກກະລາດ)

ສ.ປ.ປ ລາວ (ສາທາລະນະລັດປະຊາທິປະໄຕປະຊາຊົນລາວ)

**ຮູບແບບທີ 2: ໃສ່ຈ້ຳທ້າຍອັກສອນຫຍໍ້**

ຕົວຢ່າງ:

ທ. (ທ້າວ)

ນ. (ນາງ)

ບ. (ບ້ານ)

ມ. (ເມືອງ)

ຂ. (ແຂວງ)

ເມື່ອມີອັກສອນຫຍໍ້ຫຼາຍຕົວ (2 ຕົວຂຶ້ນໄປ) ໃຫ້ຈ້ຳທີ່ຕົວສຸດທ້າຍພຽງຈ້ຳດຽວ.

ຕົວຢ່າງ: ສປປ. ລາວ (ສາທາລະນະລັດປະຊາທິປະໄຕປະຊາຊົນລາວ)

ອຈ. (ອາຈານ)

ສຈ. (ສາດສະດາຈານ)

**ຮູບແບບທີ 3: ໃສ່ຈ້ຳທ້າຍເມື່ອອັກສອນຫຍໍ້ມີ 1 ຕົວ, ບໍ່ໃສ່ຈ້ຳເມື່ອອັກສອນຫຍໍ້ມີ 2 ຕົວຂຶ້ນໄປ** (ໃຫ້ຂຽນອັກສອນຫຍໍ້ຕິດກັນ)

ຕົວຢ່າງ: ມ. (ເມືອງ)

ຂ. (ແຂວງ)

ຄສ (ຄຣິດຕະສັກກະລາດ)

ພສ (ພຸດທະສັກກະລາດ)

ສປປ ລາວ (ສາທາລະນະລັດປະຊາທິປະໄຕປະຊາຊົນລາວ)

ເມື່ອມີອັກສອນຫຍໍ້ຫຼາຍກຸ່ມຕ້ອງໃສ່ຈ້ຳຂັ້ນລະຫວ່າງກຸ່ມ.

ຕົວຢ່າງ: ຮສ.ປອ (ຮອງສາດສະດາຈານ ປະລິນຍາເອກ)

ສຈ.ດຣ (ສາດສະດາຈານ ດອກເຕີ)

ອຈ.ປທ (ອາຈານ ປະລິນຍາໂທ)

**ໝາຍເຫດ**: ໃນເອກະສານທາງລັດຖະການໃຫ້ນຳໃຊ້ຮູບແບບທີ 3.

## 2. ວິທີຂຽນອັກສອນຫຍໍ້

### 2.1 ໃຊ້ພະຍັນຊະນະຕົ້ນຂອງພະຍາງທຳອິດຂອງຄຳເປັນຕົວຫຍໍ້

1) ຖ້າເປັນຄຳດຽວໃຫ້ໃຊ້ຕົວຫຍໍ້ຕົວດຽວເຖິງວ່າຄຳນັ້ນຈະມີຫຼາຍພະຍາງກໍຕາມ.

ຕົວຢ່າງ 1: ຄຳທີ່ມີພະຍາງດຽວ

| | | |
|---|---|---|
| ທ້າວ | ຫຍໍ້ເປັນ | ທ. |
| ນາງ | ” | ນ. |
| ບ້ານ | ” | ບ. |
| ເມືອງ | ” | ມ. |
| ແຂວງ | ” | ຂ. |

ຕົວຢ່າງ 2: ຫຍໍ້ຄຳທີ່ມີຫຼາຍພະຍາງ

| | | |
|---|---|---|
| ປະຖົມ | ຫຍໍ້ເປັນ | ປ. |
| ມັດທະຍົມ | ” | ມ. |
| ວິເສດ | ” | ວ. |
| ກີລິຍາ | ” | ກ. |

2) ຖ້າໃຊ້ຕົວຫຍໍ້ພຽງຕົວດຽວແລ້ວເຮັດໃຫ້ເກີດຄວາມສັບສົນ ອາດຈະໃຊ້ພະຍັນຊະນະຕົ້ນຂອງຄຳຖັດໄປເປັນຕົວຫຍໍ້ຕື່ມກໍໄດ້.

ຕົວຢ່າງ:

| | | |
|---|---|---|
| ອາຈານ | ຫຍໍ້ເປັນ | ອຈ |
| ຕຳຫຼວດ | " | ຕຫຼ |
| ທະຫານ | " | ທຫ |

3) ຄຳມີຫຼາຍພະຍາງໃຫ້ຮັກສາພະຍັນຊະນະຕົ້ນຂອງພະຍາງແຮກ ແລະ ພະຍັນຊະນະຕົ້ນຂອງພະຍາງທ້າຍຄຳໄວ້ເປັນຕົວຫຍໍ້.

ຕົວຢ່າງ:

| | | |
|---|---|---|
| ສາດສະດາຈານ | ຫຍໍ້ເປັນ | ສຈ |
| ບັນນາທິການ | " | ບກ |
| ວັດທະນະທຳ | " | ວທ |
| ສະຖານທູດ | " | ສທ |

## 2.2 ການຫຍໍ້ຄຳສະໝາດ ແລະ ຄຳປະສົມ

4) ຖ້າເປັນຄຳສະໝາດໃຫ້ຖືເປັນຄຳດຽວ ແລະ ໃຊ້ພະຍັນຊະນະຕົ້ນຂອງພະຍາງທຳອິດ ພຽງຕົວດຽວ.

ຕົວຢ່າງ:

| | | |
|---|---|---|
| ມະຫາວິທະຍາໄລ | ຫຍໍ້ເປັນ | ມ. |
| ວິທະຍາໄລ | " | ວ. |

5) ຖ້າເປັນຄຳປະສົມ ໃຊ້ພະຍັນຊະນະຕົ້ນຂອງແຕ່ລະຄຳ.

ຕົວຢ່າງ:

| | | |
|---|---|---|
| ໂຮງຮຽນ | ຫຍໍ້ເປັນ | ຮຮ |
| ໂຮງໝໍ | " | ຮໝ |
| ຮ້ອຍເອກ | " | ຮອ |
| ຮ້ອຍໂທ | " | ຮທ |

6) ຖ້າຄຳປະສົມປະກອບດ້ວຍຄຳຫຼາຍຄຳ ອາດຈະເລືອກສະເພາະພະຍັນຊະນະຕົ້ນຂອງ ຄຳທີ່ເປັນໃຈຄວາມສຳຄັນ ແຕ່ບໍ່ຄວນເກີນ 4 ຕົວ

ຕົວຢ່າງ:

| | | |
|---|---|---|
| ມັດທະຍົມສົມບູນ | ຫຍໍ້ເປັນ | ມສ |
| ຊາວໜຸ່ມປະຊາຊົນປະຕິວັດລາວ | ” | ຊປປລ |
| ສະຫະປະຊາຊາດ | ” | ສປຊ |
| ທະນາຄານພັດທະນາລາວ | ” | ທພລ |
| ແຮງງານສະຫວັດດີການສັງຄົມ | ” | ຮສສ |
| ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ | ” | ປທສ |

7) ຫຍໍ້ດ້ວຍການຮັກສາພະຍັນຊະນະຕົ້ນຂອງຄຳຕົ້ນ ແລະ ພະຍາງທ້າຍຂອງຄຳທ້າຍ.

ຕົວຢ່າງ:

| | | |
|---|---|---|
| ມະຫາວິທະຍາໄລສະຫວັນນະເຂດ | ຫຍໍ້ເປັນ | ມຂ |

8) ຖ້າໃຊ້ພະຍັນຊະນະຕົ້ນຂອງແຕ່ລະຄຳແລ້ວເຮັດໃຫ້ເກີດຄວາມສັບສົນ ກໍໃຫ້ໃຊ້ພະຍັນ ຊະນະຕົ້ນຂອງພະຍາງຖັດໄປແທນ.

ຕົວຢ່າງ:

| | | |
|---|---|---|
| ສາທາລະນະສຸກ | ຫຍໍ້ເປັນ | ສທ |
| ສຶກສາທິການ | ” | ສສ |
| ຫ້ອງການ | ” | ຫກ |

## 2.3 ການຫຍໍ້ຄຳທີ່ມີພະຍັນຊະນະປະສົມ

9) ຖ້າພະຍາງມີພະຍັນຊະນະປະສົມກໍຂຽນເປັນພະຍັນຊະນະປະສົມ.

ຕົວຢ່າງ:

| | | |
|---|---|---|
| ຫຼວງພະບາງ | ຫຍໍ້ເປັນ | ຫຼບ |
| ຈົດໝາຍ | ” | ຈໝ (ສະໄໝກ່ອນໃຊ້ ຈມ) |

## 2.4 ການຫຍໍ້ຄຳທີ່ມີອັກສອນຄວບ

10) ຄຳທີ່ມີພະຍັນຊະນະຕົ້ນເປັນອັກສອນຄວບ ໃຫ້ໃຊ້ອັກສອນຕົວໜ້າຕົວດຽວ.

ຕົວຢ່າງ:

| | | |
|---|---|---|
| ກວາງ | ຫຍໍ້ເປັນ | ກ. |
| ຝຣັ່ງ | ຫຍໍ້ເປັນ | ຝ. |

**2.5 ຕົວຫຍໍ້ບໍ່ຄວນໃຊ້ສະຫຼະ** ຍົກເວັ້ນອັກສອນຫຍໍ້ທີ່ເຄີຍໃຊ້ມາກ່ອນຢ່າງເປັນທາງການແລ້ວ.

**2.6 ຕົວຫຍໍ້ທີ່ມີຕົວດຽວ** (ບໍ່ນັບຕົວເລກ) ຕ້ອງມີຈໍ້າກຳກັບສະເໝີ, ສ່ວນຕົວຫຍໍ້ທີ່ມີຕັ້ງແຕ່ 2 ຕົວຂຶ້ນໄປບໍ່ໃຊ້ຈໍ້າກໍໄດ້.

ຕົວຢ່າງ:

| | | |
|---|---|---|
| ປະຖົມສຶກສາປີທີ 1 | ຫຍໍ້ເປັນ | ປ.1 |
| ມັດທະຍົມສຶກສາປີທີ 5 | ຫຍໍ້ເປັນ | ມ.5 |

## 3. ວິທີອ່ານອັກສອນຫຍໍ້

ການອ່ານອັກສອນຫຍໍ້ຕ້ອງອ່ານຕາມຄຳເຕັມ. ຍົກເວັ້ນກໍລະນີຄຳເຕັມນັ້ນຍາວຫຼາຍ ແລະ ອັກສອນຫຍໍ້ ຫຼື ຄຳຫຍໍ້ນັ້ນເປັນທີ່ຍອມຮັບກັນໄປແລ້ວ.

ຕົວຢ່າງ 1:

| | | |
|---|---|---|
| ຮຮ | ອ່ານວ່າ | ໂຮງຮຽນ |
| ທ. | ” | ທ້າວ |
| ນ. | ” | ນາງ |

ຕົວຢ່າງ 2:

| | | |
|---|---|---|
| ພສ | ອ່ານວ່າ | ພໍສໍ |
| ຄສ | ອ່ານວ່າ | ຄໍສໍ |
| ສປປ ລາວ | ອ່ານວ່າ | ສໍປໍປໍ ລາວ ຫຼື ສາທາລະນະລັດປະຊາທິປະໄຕປະຊາຊົນລາວ |
| ສສ ຫວຽດນາມ | ອ່ານວ່າ | ສໍສໍ ຫວຽດນາມ ຫຼື ສາທາລະນະລັດສັງຄົມນິຍົມຫວຽດນາມ |
| ສປ ຈີນ | ອ່ານວ່າ | ສໍປໍ ຈີນ ຫຼື ສາທາລະນະລັດປະຊາຊົນຈີນ |
| ສ. ຣັດເຊຍ | ອ່ານວ່າ | ສະຫະພັນຣັດເຊຍ |
| ສ. ອາເມຣິກາ | ອ່ານວ່າ | ສະຫະລັດອາເມຣິກາ |

ຕົວຢ່າງ 3:

ເລກທີ 15/ນຍ ອ່ານວ່າ ເລກທີ 15 ທັບ ນໍຍໍ

**ໝາຍເຫດ**: ສຳລັບຊື່ສະເພາະຂອງປະເທດ, ຊື່ຂອງບຸກຄົນ, ຊື່ບ້ານ, ຊື່ເມືອງ, ຊື່ແຂວງ ໃຫ້ຮັກສາຄຳຫຼັກໄວ້ເຊັ່ນ: ລາວ, ຫວຽດນາມ, ຈີນ, ຣັດເຊຍ, ອາເມຣິກາ... ສຳລັບຊື່ຂອງບຸກຄົນ

ໃຫ້ຮັກສານາມສະກຸນໄວ້ເຊັ່ນ: ສ. ບຸບຜານຸວົງ, ສ. ເດຊາຄໍາພູ, ພ.ພວງສະບາ... ບ.ຕານມີໄຊ, ມ.ໄຊທານີ, ຂ.ອຸດົມໄຊ, ຂ.ຊຽງຂວາງ...

## 4. ການຢືມຄໍາຫຍໍ້ຈາກພາສາຕ່າງປະເທດ

ຕົວຢ່າງ:

| | |
|---|---|
| ດຣ (Dr): | ດອກເຕີ |
| ທີວີ (TV): | ໂທລະພາບ |
| ຊີດີ (CD): | ແຜ່ນຊີດີ |
| ວີຊີດີ (VCD): | ແຜ່ນວີຊີດີ |

## 5. ວິທີນໍາໃຊ້ອັກສອນຫຍໍ້

1) ໃນກໍລະນີຂຽນອັກສອນຫຍໍ້ ໂດຍສະເພາະຄໍາທີ່ຕ້ອງການຂຽນເປັນອັກສອນຫຍໍ້ໃນບົດນັ້ນ ໃຫ້ຂຽນຄໍາເຕັມກ່ອນ ແລະ ໃສ່ອັກສອນຫຍໍ້ໃນວົງເລັບກໍາກັບໄວ້. ຫຼັງຈາກນັ້ນ ສາມາດໃຊ້ອັກສອນ ຫຍໍ້ໄດ້.

ຕົວຢ່າງ:

*ກະຊວງສຶກສາທິການ ແລະ ກິລາ (ສສກ) ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບວຽກງານການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ວຽກງານກິລາ-ກາຍຍະກໍາໃນຂອບເຂດທົ່ວປະເທດ. ກະຊວງ ສສກ ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ. ກະຊວງ ສສກ ປະກອບດ້ວຍຫ້ອງການ, ກົມ ແລະ ສະຖາບັນ. ນອກຈາກນັ້ນ, ກະຊວງ ສສກ ຍັງມີມະຫາວິທະຍາໄລ, ວິທະຍາໄລ, ຫົວໜ່ວຍການຈັດຕັ້ງວິຊາການ ແລະ ຫົວ ໜ່ວຍວິສາຫະກິດຈໍານວນໜຶ່ງຂຶ້ນກັບ.*

(ແຫຼ່ງຂໍ້ມູນ: ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ສສກ, 2021)

2) ໃນເວລາຂຽນ ຫຼື ພິມອັກສອນຫຍໍ້ ໃຫ້ຍະຫວ່າງທາງໜ້າ ແລະ ທາງຫຼັງ ຕົວຫຍໍ້ທຸກແບບ; ໃຫ້ໃສ່ຈໍ້າຂັ້ນລະຫວ່າງກຸ່ມອັກສອນຫຍໍ້ ເມື່ອໃສ່ຈໍ້າແລ້ວ ບໍ່ຈໍາເປັນຍະຫວ່າງ ໃຫ້ຂຽນອັກ ສອນ ຫຍໍ້ກຸ່ມທີສອງຕໍ່ເລີຍ.

ຕົວຢ່າງ 1:

ເມືອງສັງທອງມີ ຮຣ ປະຖົມສົມບູນ ແລະ ຮຣ ມັດທະຍົມສົມບູນ.

ຕົວຢ່າງ 2:

ອຈ.ປທ ຄຳສີ ສຸພາວະດີ

ສຈ.ດຣ ບຸນມີ ສີສະໝຸດ

3) ໃນກໍລະນີຊຽນອັກສອນຫຍໍ້ ໃຊ້ຢູ່ໃນເລກທີເອກະສານຫຼັງໝາຍທັບ (/) ບໍ່ຍະຫວ່າງ ບໍ່ຕ້ອງໃສ່ຈ້ຳ ເວັ້ນເສຍແຕ່ມີຫຼາຍພາກສ່ວນຈຶ່ງໃສ່ຈ້ຳຂັ້ນໄວ້.

ຕົວຢ່າງ:

ເລກທີ 101/ສສກ

ເລກທີ 01/ສສກ.ຫກ

ເລກທີ 203/ມຊ.ຈຕ

4) ໃນກໍລະນີຊຽນອັກສອນຫຍໍ້ ທີ່ໃຊ້ໃນປ້າຍພາຫະນະ, ເຄື່ອງໝາຍ, ຫົວໜ່ວຍວັດແທກບໍ່ໃສ່ຈ້ຳ ແຕ່ຕ້ອງຍະຫວ່າງໄວ້ຢູ່ລະຫວ່າງອັກສອນຫຍໍ້ກັບຕົວເລກ.

ຕົວຢ່າງ: ໃຊ້ໃນປ້າຍພາຫະນະ

| | | | | |
|---|---|---|---|---|
| ກທ 1263 | ປກສ 2609 | ຂຕ 0086 | ສທ 0123 | ສປຊ 0259 |

ຕົວຢ່າງ: ໃຊ້ໃນຫົວໜ່ວຍວັດແທກ

| | | |
|---|---|---|
| ກິໂລກຣາມ | ຫຍໍ້ເປັນ | ກກ (kg) |
| ກິໂລແມັດ | " | ກມ (km) |
| ແມັດ | " | ມ (m) |
| ຊັງຕີແມັດ | " | ຊມ (cm) |



## VIII. ການໃຊ້ສະຫຼະສຽງສັ້ນ ແລະ ສຽງຍາວ

ສະຫຼະໃນພາສາລາວມີທັງສະຫຼະເດີ່ ແລະ ສະຫຼະປະສົມ ໃນສະຫຼະເຫຼົ່ານັ້ນໄດ້ແບ່ງອອກເປັນສອງຊະນິດຄື: ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວ ໃຊ້ເພື່ອຈຳແນກຄວາມໝາຍຂອງຄຳ.

ສະນັ້ນ, ການໃຊ້ສະຫຼະສຽງສັ້ນ ແລະ ສຽງຍາວຄວນໃຊ້ໃຫ້ຖືກຕ້ອງທັງການເວົ້າ ແລະ ການຂຽນຖ້າໃຊ້ບໍ່ຖືກຈະເຮັດໃຫ້ຄວາມໝາຍປ່ຽນແປງໄປ ໂດຍໃຫ້ສັງເກດດັ່ງນີ້:

### 1. ຄຳທີ່ໃຊ້ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວ ສ່ວນຫຼາຍມີຄວາມໝາຍແຕກຕ່າງກັນຢ່າງຈະແຈ້ງ ກໍລະນີໃຊ້ຜິດສະຫຼະ ຈະເຮັດໃຫ້ເສຍຄວາມໝາຍ.

ຕົວຢ່າງ:

**ຕິ** ກັບ **ຕີ** (ລາວຕິຂ້ອຍ, ລາວຕີຂ້ອຍ)

**ປັດ** ກັບ **ປາດ** (ເອື້ອຍປັດໃບໄມ້, ເອື້ອຍປາດໃບໄມ້)

**ຟັນ** ກັບ **ຟານ** (ລຸງໄດ້ຟັນ, ລຸງໄດ້ຟານ)

### 2. ຄຳຈຳນວນໜຶ່ງ ໃຊ້ສະຫຼະສຽງສັ້ນ ຫຼື ສຽງຍາວ, ແຕ່ກໍມີຄວາມໝາຍຄືກັນ ແລະ ສາມາດໃຊ້ແທນກັນໄດ້ ໝາຍຄວາມວ່າ ສາມາດໃຊ້ໄດ້ທັງສອງຄຳ

(ຄຳມາດຕະຖານໃຫ້ເບິ່ງວັດຈະນານຸກົມພາສາລາວສະບັບສົມບູນ)

ຕົວຢ່າງ:

| ສະຫຼະສຽງສັ້ນ | ສະຫຼະສຽງຍາວ |
|---|---|
| ຂິວ | ຂີວ |
| ຄິ້ວ | ຄີ້ວ |
| ງິ້ວ | ງີ້ວ |
| ດິ້ວ | ດີ້ວ |
| ນິ້ວ | ນີ້ວ |
| ປິວ | ປີວ |
| ຫິວ | ຫີວ |
| ອິ້ວ | ອີ້ວ |
| ຣິມ | ຣີມ |
| ຕຸ້ຍ | ຕູ້ຍ |

| **ສະຫຼະສຽງສັ້ນ** | **ສະຫຼະສຽງຍາວ** |
|---|---|
| ລຸງ | ລູງ |
| ມຸມ | ມູມ |
| ໗ລ໗ | |

**ໝາຍເຫດ**: ການໃຊ້ຄຳບາງຄຳທີ່ໃຊ້ໄດ້ທັງສອງມີຫຼັກການດັ່ງນີ້:

- ໃຫ້ເລືອກໃຊ້ຄຳໃດຄຳໜຶ່ງ (ຮູບຄຳໃດໜຶ່ງ).
- ໃຫ້ໃຊ້ຄຳທີ່ເລືອກ ໃຊ້ຕະຫຼອດເອກະສານສະບັບນັ້ນ ຫຼື ປຶ້ມຫົວນັ້ນ.
- ບໍ່ໃຊ້ຄຳສອງຮູບປົນເປກັນໃນເອກະສານສະບັບນັ້ນ ຫຼື ປຶ້ມຫົວນັ້ນ (ຍົກເວັ້ນໃນບົດຮຽນວິຊາພາສາລາວທີ່ຕ້ອງການໃຫ້ຮູ້ຄຳທີ່ມີຄວາມໝາຍດຽວກັນ ແຕ່ຕ່າງຮູບ), ແຕ່ເວລາເວົ້າຈະເວົ້າແນວໃດກໍໄດ້.

## 3. ຄຳຈຳນວນໜຶ່ງ ໃຊ້ສະຫຼະສຽງສັ້ນ ຫຼື ສຽງຍາວມີຄວາມໝາຍຄືກັນ, ແຕ່ໃຊ້ໃນກໍລະນີຕ່າງກັນ.

ຕົວຢ່າງ:

**ວັດທະນະ** ກັບ **ວັດທະນາ** (ມີວັດທະນະທຳ, ຄວາມວັດທະນາ)

**ເຄຫະ** ກັບ **ເຄຫາ** (ເຄຫະສະຖານ, ເຄຫາຫ້ອງ)

**ມະຫະ** ກັບ **ມະຫາ** (ມະຫະກຳ, ມະຫາວິທະຍາໄລ)

## 4. ຄຳທີ່ໃຊ້ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວທີ່ມັກຂຽນຜິດ.

ຕົວຢ່າງ:

| **ຄຳຖືກ** | **ຄຳຜິດ** |
|---|---|
| ກະວີ | ກາວີ |
| ກະຖິນ | ກາຖິນ |
| ຂຶ້ນ | ຂຶ້ນ |
| ຈະລາຈອນ | ຈາລະຈອນ |
| ເງິນ | ເງີນ |
| ສັກດິນາ | ສັກດີນາ |
| ສິລະປະ | ສີລະປະ, ສິນລະປະ |
| ສິນທຳ | ສີນທຳ |
| ຊະລາ (ເຖົ້າແກ່) | ຊາລາ |

| **ຄຳຖືກ** | **ຄຳຜິດ** |
|---|---|
| ເຊັ່ນ | ເຊ່ນ |
| ເຊິ່ງ, ຊຶ່ງ | ເຊີ່ງ, ຊື່ງ |
| ທະນະບັດ | ທະນາບັດ |
| ທະນາຄານ | ທະນະຄານ |
| ນະວະນິຍາຍ | ນາວະນິຍາຍ |
| ປະລະໄນ | ປາລະໄນ |
| ປຶ້ມຊຽນ | ປື້ມຊຽນ |
| ພະລະສຶກສາ | ພາລະສຶກສາ |
| ພະລາກອນ | ພາລະກອນ |
| ພັດຕາຄານ | ພັດຕະຄານ |
| ພື້ນຖານ | ພຶ້ນຖານ |
| ມະຫະກຳ | ມະຫາກຳ |
| ວັດທະນະທຳ | ວັດທະນາທຳ |
| ໄວຍາກອນ | ໄວຍະກອນ |
| ອະນາໄມ | ອານາໄມ |
| ອະນຸລັກ | ອານຸລັກ |
| ອະດີດ | ອາດີດ |
| ອະນາຄົດ | ອານາຄົດ |
| ອະວະສານ | ອາວະສານ |
| ອະນຸສາວະລີ | ອານຸສາວະລີ |
| ອະນຸວົງ | ອານຸວົງ |
| ອາວຸໂສ | ອະວຸໂສ |
| ອີງຕາມ | ອິງຕາມ |
| ອຸດສາຫະກຳ | ອຸດສະຫະກຳ |
| ຫຼັ້ນ | ຫຼີ້ນ |

໗ລ໗

## IX. ການໃຊ້ສະຫຼະ ໄx ແລະ ໃx

### 1. ຄວາມໝາຍຂອງສະຫຼະ ໄx ແລະ ໃx

ສະຫຼະ ໄx ແລະ ໃx ເປັນສະຫຼະພື້ນຖານໃນພາສາລາວທີ່ສືບທອດມາຈາກພາສາຕະກຸນໄຕເດີມ (Proto Tai) ປັດຈຸບັນຄົນລາວບາງເຂດ ໂດຍສະເພາະໃນແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ຊາວໄຕດຳ, ໄຕລື້ ຍັງອອກສຽງສະຫຼະທັງສອງນີ້ໄດ້ຄວາມແຕກຕ່າງຕາມເດີມຢູ່, ແຕ່ຄົນລາວຫຼາຍເຂດບໍ່ສາມາດອອກສຽງສະຫຼະສອງຕົວນີ້ໃຫ້ຕ່າງກັນໄດ້ ຊຶ່ງມັກອອກເປັນ ໄx /aj/ ໄປໝົດ; ສ່ວນໄຕຂາວ, ໄຕແດງ ເມື່ອອອກສຽງ ໃx ແມ່ນອອກເປັນ ເxີ /ə/ ຊຶ່ງກໍມີບັນຫາໃນການຈຳແນກຄວາມແຕກຕ່າງລະຫວ່າງສະຫຼະ ໃx ແລະ ເxີ ຍ້ອນການປ່ຽນແປງທາງພາສາ. ການໃຊ້ສະຫຼະ ໄx ແລະ ໃx ໃນປັດຈຸບັນບໍ່ຖືກຕາມຄຳເດີມໄດ້ປາກົດຫຼາຍ ເກີດຄວາມຜິດທາງຄວາມໝາຍ ແລະ ເປັນບັນຫາໃນການສະກົດຄຳທີ່ມີສຽງສະຫຼະດັ່ງກ່າວ.

ສະຫຼະໄx ແລະ ໃx ໃນເມື່ອກ່ອນຜູ້ຂຽນປຶ້ມໄວຍາກອນລາວຖືເປັນສະຫຼະພິເສດ ແຕ່ບໍ່ໄດ້ຊີ້ແຈງລາຍລະອຽດໄວ້. ປັດຈຸບັນເມື່ອວິເຄາະຕາມຫຼັກພາສາສາດເຫັນວ່າສະຫຼະ ໄx , ສະຫຼະ ໃx ແມ່ນສະຫຼະປະສົມ ລະຫວ່າງ ອາກັບເອີ (/aː/ ກັບ /əː/ ເປັນ /aːə/); ສ່ວນສະຫຼະ ໄx ແມ່ນສະຫຼະ xະ ກັບຕົວ ຍ ສະກົດ (/aj/).

### 2. ຄຳທີ່ໃຊ້ສະຫຼະ ໄx ແລະ ໃx

ສະຫຼະ ໄx ແລະ ໃx ມີຄວາມແຕກຕ່າງກັນ ເມື່ອໄປປະກອບໃສ່ກັບພະຍັນຊະນະຈະໄດ້ຄວາມໝາຍຕ່າງກັນ. ສະນັ້ນ, ການຂຽນຄວນປະຕິບັດຕາມຫຼັກການສະກົດໃຫ້ຖືກຕາມຄຳ. ຄຳທີ່ໃຊ້ສະຫຼະໄx ກັບຄຳທີ່ໃຊ້ສະຫຼະ ໃx ໄດ້ມີຈຸດພິເສດບາງຢ່າງດັ່ງນີ້:

**ຄຳທີ່ໃຊ້ ໃx**

ແມ່ນຄຳພື້ນຖານຂອງພາສາລາວເທົ່ານັ້ນ, ເປັນຄຳລາວເດີມ ມີຄວາມໝາຍສະເພາະຕົວ ຫຼື ຫາກໃຊ້ວິທີສັງເກດການອອກສຽງ ຄຳໃດທີ່ຊາວຫຼວງພະບາງ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ ອອກສຽງ ໃx /aːə/ ຊຶ່ງເຄີຍເອີ້ນວ່າ ສະຫຼະ ໃx ໄມ້ມ້ວນ ແມ່ນໃຫ້ໃຊ້ສະຫຼະ ໃx. ນອກນີ້ ແມ່ນໃຊ້ວິທີທ່ອງຈຳ ຫຼື ເບິ່ງຄຳນັ້ນໃນວັດຈະນານຸກົມພາສາລາວກໍໄດ້ ເພື່ອໃຫ້ການໃຊ້ສະຫຼະດັ່ງກ່າວຖືກຕ້ອງ.

**ຄຳທີ່ໃຊ້ສະຫຼະ ໃx ມີດັ່ງນີ້:**

1. ໃກ້ (ໃກ້ຄຽງ, ຢູ່ໃກ້)
2. ໃຂ່ (ແຫ້ງ, ບໍ່ອີ່ນ)
3. ໃຂ້ (ມໍ່, ໃກ້)
4. ໃຄ (ຫົວສີໃຄ)
5. ໃຄ່ (ໃຄ່ພອງ)
6. ໃຄ້ (ປີໃຄ້/ປີກຸນ)
7. ໃຈ (ຈິດໃຈ, ໃຈກາງ)
8. ໃຈ້ (ປີໃຈ້/ປີຊວດ)
9. ໃສ (ນ້ຳໃສ, ຢູ່ໃສ, ໄປໃສ)
10. ໃສ່ (ເອົາໃສ່, ໃສ່ໃຈ)
11. ໃສ້ (ປີໃສ້/ປີມະເສງ)
12. ໃຊ່ (ບໍ່ໃຊ່ແມ່ນ, ມິໃຊ່)
13. ໃຊ້ (ຮັບໃຊ້, ນຳໃຊ້, ໃຊ້ສອຍ)
14. ໃຍ (ໃຍແມງມູມ, ສາຍໃຍ, ຫ່ວງໃຍ)
15. ໃດ (ອັນໃດ, ແນວໃດ, ຜູ້ໃດ, ໂຕໃດ)
16. ໃຕ (ຕັບໃຕ)
17. ໃຕ້ (ທິດໃຕ້, ຢູ່ໃຕ້)
18. ໃນ (ໃນເຮືອນ, ທາງໃນ)
19. ໃບ (ໃບໄມ້, ໃບຫູ, ໃບຄຳຮ້ອງ)
20. ໃບ້ (ຄົນໃບ້, ບ້າໃບ້)
21. ໃຜ (ແມ່ນໃຜ, ຂອງໃຜ)
22. ໃຝ່ (ຝັກໃຝ່, ໃຝ່ຝັນ, ໃຝ່ໃຈ)
23. ໃພ້ (ລູກໃພ້)
24. ໃຫ້ (ເອົາໃຫ້, ມອບໃຫ້)
25. ໃຮ່ (ໃຮ່ນາ, ນາໃຮ່ດຽວ)
26. ໃຫງ່ (ຂີ້ໃຫງ່)
27. ໃຫຍ່ (ຍິ່ງໃຫຍ່, ໃຫຍ່ກວ່າ, ຜູ້ໃຫຍ່)
28. ໃໝ (ປັບໃໝ)

29. ໃໝ່ (ປີໃໝ່, ເສື້ອໃໝ່)

30. ໃຫຼ (ນອນໃຫຼ, ຫຼົງໃຫຼ)

**ຄຳທີ່ໃຊ້ສະຫຼະ ໄx**

ຄຳທີ່ໃຊ້ສະຫຼະໄx ຈຳນວນຫຼາຍແມ່ນຄຳພື້ນຖານຂອງພາສາລາວ ແລະ ອີກຈຳນວນໜຶ່ງແມ່ນຮັບຈາກພາສາອື່ນເຂົ້າມາໃຊ້. ສຳລັບຄຳທີ່ຮັບຈາກພາສາອື່ນທີ່ມີສຽງສະຫຼະ ໄx ການສະກົດຄຳແມ່ນໃຊ້ສະຫຼະ ໄx ກັບທຸກຄຳ ເຊັ່ນ: virus ໃຫ້ສະກົດເປັນໄວຣັດ, Brunei ໃຫ້ສະກົດເປັນ ບຣູໄນ, Taiwan ໃຫ້ສະກົດເປັນ ໄຕ້ຫວັນ ແລະ ອີກຫຼາຍຄຳ.

## ປຽບທຽບຄຳທີ່ໃຊ້ສະຫຼະ ໃx ແລະ ໄx

**ໃກ**: (ບໍ່ມີ)

**ໄກ**: *ກໍລະນີຢູ່ໜ້າ:* ໄກປືນ, ໄກຕາ, ໄກຫູ, ໄກອອກ, ໄກບ້ານໄກເມືອງ, ໄກ (ບໍ່ມໍ່)
*ກໍລະນີຢູ່ຫຼັງ:* ພູໄກລາດ, ມອງໄກ, ກິນໄກ, ຍັງໄກ, ຢູ່ໄກ, ຫ່າງໄກ, ຍາວໄກ

**ໃກ່**: (ບໍ່ມີ)

**ໄກ່**: ໄກ່ໂອກ, ໄກ່ແຈ້, ໄກ່ນ້ອຍ, ໄກ່ຕໍ່, ໄກ່ຂວາ, ໄກ່ເກ່ຍ

**ໃກ້**: ມໍ່, ໃກ້ຄຽງ, ໃກ້ເຂົ້າມາ, ນັ່ງໃກ້, ຢູ່ໃກ້, ໃກ້ຈະແລ້ວ

**ໄກ້**: ໂຕໄກ້ (ຟານໄກ້)

**ໃຂ**: (ບໍ່ມີ)

**ໄຂ**: *ກໍລະນີໄຂຢູ່ໜ້າ:* ໄຂປະຕູ, ໄຂຄວາມລັບ, ໄຂກອງປະຊຸມ, ໄຂງິວ, ໄຂຄວາຍ
*ກໍລະນີໄຂຢູ່ຫຼັງ:* ອະສິງໄຂ, ນາງບົວໄຂ, ທຽນໄຂ, ນາງຄຳໄຂ.

**ໃຂ່**: (ແຫ້ງ, ຜິງ) ແຈ່ວໃຂ່, ຜ້າຕາກໃຂ່ແລ້ວ

**ໄຂ່**: ໄຂ່ໄກ່, ໄຂ່ເປັດ, ໄຂແລນ, ໄຂ່ນົກ, ໄຂ່ງູ, ໄຂ່ມົດສົ້ມ, ໄຂ່ເຄັມ, ໄຂ່ກາ, ໄຂ່ປາ, ມອນໄຂ່, ສີໄຂ່

**ໃຂ້**: (ມໍ່, ໃກ້)

**ໄຂ້**: ໄຂ້ຍຸງ, ໄຂ້ຫວັດ

**ໃຄ**: ສີໃຄ

**ໄຄ**: ໄຄແຄວນ, ໄຄກວ່າ, ໄຄແດ່, ໄຄຫີນ, ໄຄແຜ່ນ, ຍັງໄຄ, ສີຂຽວໄຄ, ສີໄຄແຫ້ງ

**ໃຄ່**: ໃຄ່ພອງ, ໃຄ່ບວມ, ຕາໃຄ່

**ໄຄ່**: ຮັກໄຄ່, ໄຄ່ຫາ, ໄຄ່ຄວນ

**ໃຄ້**: ປີໃຄ້ (ປີກຸນ/ປີໝູ)

**ໄຄ້**: ກົກໄຄ້

**ໃງ**: (ບໍ່ມີ)

**ໄງ**: ໄງຫອຍ, ຜາລະໄງ, ໄງຂ້ອງ

**ໃງ່**: (ບໍ່ມີ)

**ໄງ່**: (ບໍ່ມີ)

**ໃງ້**: (ບໍ່ມີ)

**ໄງ້**: ໄງ້ກ້ອນຫີນ, ໄງ້ແປ້ນ

**ໃຈ**: *ກໍລະນີຢູ່ໜ້າ:* ໃຈຄົນ, ໃຈສັດ, ໃຈດີ, ໃຈຮ້າຍ, ໃຈຍາວ, ໃຈສັ້ນ, ໃຈຊື່, ໃຈເຢັນ, ໃຈອິດ, ໃຈແຂງ, ໃຈຄິດ, ໃຈແຄບ, ໃຈກວ້າງ, ໃຈຝືດ, ໃຈໂລ່ງ, ໃຈສູ້, ໃຈເດັດ, ໃຈປີກ, ໃຈປ່ອງ, ໃຈໜັກ, ໃຈມານ, ໃຈເບືອນ, ໃຈຖ່ອຍ, ໃຈໄຟ, ໃຈກາງ, ໃຈບາບ, ໃຈກ້າ, ໃຈດໍາ, ໃຈນ້ອຍ, ໃຈດີ, ໃຈອ່ອນ, ໃຈຄິດ, ໃຈເບົາ, ໃຈເສົ້າ, ໃຈຊື່ນ, ໃຈທ່ອມທໍ່, ໃຈຕອມ

*ກໍລະນີຢູ່ຫຼັງ:* ນ້ອຍໃຈ, ສະບາຍໃຈ, ເບົາໃຈ, ໜັກໃຈ, ໂລ່ງໃຈ, ລືມໃຈ, ທຸກໃຈ, ດີໃຈ, ອ່ອນໃຈ, ໄວ້ໃຈ, ໝັ້ນໃຈ, ແຂງໃຈ, ຈິດໃຈ, ຖອຍໃຈ, ເຢັນໃຈ, ມ່ວນໃຈ, ທໍາໃຈ

**ໄຈ**: ປັດໄຈ, ວິໄຈ

**ໃຈ່**: (ບໍ່ມີ)

**ໄຈ່**: (ບໍ່ມີ)

**ໃຈ້**: ມື້ກາບໃຈ້, ປີໃຈ້,

**ໄຈ້**: ຊອກໄຈ້, ໄຈ້ຜັກ, ໄຈ້ຝ້າຍ, ໄຈ້ແຍກ, ໄຈ້ເຂົ້າ, ໄຈ້ຜົມ, ໄຈ້ຖົງ

**ໃສ**: ໃສສ່ອງ, ໃສເຢັນ, ໃສໆ, ໃສສະອາດ, ສ່ອງໃສ, ຢູ່ໃສ, ຢູ່ໃສໆ

**ໄສ**: ໃຊ້ຕີນໄສ, ໃຊ້ກົບໄສ, ໄສໄຍ, ກ່າວປາໄສ, ນິດໄສ, ກະໄສ, ອາໄສ, ພິໄສ

**ໃສ່**: ໃສ່ໃນ, ໃສ່ໃຈ, ໃສ່ຄວາມ, ໃສ່ຖົງ, ໃສ່ໂທດ, ໃສ່ໄລ

**ໄສ່**: ຜັກໄສ່, ນົກໄສ່

**ໃສ້**: (ບໍ່ມີ)

**ໄສ້**: ໄສ້ຄົນ, ໄສ້ສັດ, ໄສ້ບົກ, ໄສ້ສໍ, ໄສ້ອ່ອນ, ໄສ້ແກ່, ໄສ້ປາ, ໄສ້ໄກ່, ໄສ້ຕັນ, ໄສ້ຂີ້, ໄສ້ກອກ, ໄສ້ເສິກ, ໄສ້ຕິ່ງ, ໄສ້ທຽນ, ໄສ້ເສືອ (ລໍຊໍ), ລໍາໄສ້, ໜອນບອນໄສ້, ສາວໄສ້ໃຫ້ກາກິນ

**ໃຊ**: ໃຊໃດ (ຍາມໃດ, ເວລາໃດ), ບໍ່ແມ່ນໃຊ ບໍ່ຮອດໃຊເທື່ອ (ສັບທ້ອງຖິ່ນ)

**ໄຊ**: ໄຊໜາມ, ໄຊລັ່ນ, ໄຊລອບ, ໄຊຊະນະ, ພະລານໄຊ, ວິລະໄຊ, ດວງໄຊ, ໄຊຍະບູລີ, ໄຊບົວທອງ, ເວັບໄຊ, ໄຊກົບສະກີ, ມາກໄຊ, ມີໄຊ, ສິດທິໄຊ, ພະໄຊ

**ໃຊ່**: ບໍ່ໃຊ່ແມ່ນ, ບໍ່ໃຊ່ວ່າ, ບໍ່ໃຊ່ເປັນ

**ໄຊ່**: (ບໍ່ມີ)

**ໃຊ້**: ນໍາໃຊ້, ໃຊ້ແຮງງານ, ໃຊ້ຜູ້ອື່ນ, ໃຊ້ລົດ, ໃຊ້ທາງ, ໃຊ້ສະໝອງ, ໃຊ້ວິທີ, ໃຊ້ຫົວຄິດ, ໃຊ້ມື, ໃຊ້ເຄື່ອງຈັກ, ໃຊ້ຍົນ, ໃຊ້ພາຫະນະ

**ໄຊ້**: ໄຊ້ໜີ້, ໄຊ້ແທນ, ໄຊ້ເວນ, ໄຊ້ກໍາ, ຊັກໄຊ້

**ໃຍ**: ໃຍແມງມູມ, ໃຍກ້ານບົວ, ສາຍໃຍ, ທາວໃຍ, ສາວໃຍ, ເຍື້ອໃຍ

**ໄຍ**: ລໍາໄຍ, ໄສໄຍ, ຢອກໄຍ

**ໃຍ່**: (ບໍ່ມີ)

**ໄຍ່**: (ບໍ່ມີ)

**ໃຍ້**: (ບໍ່ມີ)

**ໄຍ້**: (ບໍ່ມີ)

**ໃດ**: ອັນໃດ, ຜູ້ໃດ, ແຕ່ໃດ, ຄາວໃດ, ຍາມໃດ, ເມື່ອໃດ

**ໄດ**: ຂັ້ນໄດ, ໄດນາໂມ, ຕົ້ນຈັນໄດ, ແຫ້ໄດ

**ໃດ່**: (ບໍ່ມີ)

**ໄດ່**: (ບໍ່ມີ)

**ໃດ້**: (ບໍ່ມີ)

**ໄດ້**: ໄດ້, ໄດ້ໄປ, ໄດ້ກິນ, ໄດ້ເຮັດ, ໄດ້ເວລາ, ໄດ້ເລື່ອງ, ໄດ້ຮັບ, ໄດ້ຜ່ານ, ໄດ້ລ່ອງ, ໄດ້ຍິນ, ໄດ້ຟັງ

**ໃຕ**: ໃຕໄກ່, ໃຕເປັດ, ໃຕນົກ

**ໄຕ**: ໄຕດຳ, ໄຕແດງ, ໄຕລື້, ໄຕເຂີນ, ໄຕຍວນ, ໄຕເມີ້ຍ, ໄຕຫາງວຽນ, ກະໄຕ, ເຜົ່າໄຕ, ພູອັນໄຕ, ເມືອງຈັນໄຕ, ພະໄຕປີດົກ, ທໍໄຕ

**ໃຕ່**: (ບໍ່ມີ)

**ໄຕ່**: ໄຕ່ເຊືອກ, ໄຕ່ງ່າໄມ້, ໄຕ່ສັນພູ, ໄຕ່ຕາມຖາມເລື່ອງ, ໄຕ່ສວນ, ມົດໄຕ່, ແມວໄຕ່, ໝູໄຕ່

**ໃຕ້**: ຢູ່ໃຕ້, ພາກໃຕ້, ທິດໃຕ້, ບ້ານໃຕ້, ໃຕ້ອຳນາດ

**ໄຕ້**: ໄຕ້ໄຟ, ໄຕ້ທຽນ, ໄຕ້ໄຟສາຍ

**ໃຖ**: (ບໍ່ມີ)

**ໄຖ**: ໄຖນາ, ໝາກສິບໄຖ, ຫົວໄຖ, ດາວໄຖ, ຖູໄຖ

**ໃຖ່**: (ບໍ່ມີ)
**ໄຖ່**: ໄຖ່ເຄື່ອງນຸ່ງ, ເອົາເງິນໄຖ່ຄືນ

**ໃຖ້**: (ບໍ່ມີ)
**ໄຖ້**: (ບໍ່ມີ)

**ໃທ**: (ບໍ່ມີ)
**ໄທ**: ໄທບ້ານ, ໄທເມືອງ, ໄທໃຕ້, ໄທເໜືອ, ໄທວຽງຈັນ, ໄທຊຽງຂວາງ, ໄທເພີ່ນ, ໄທໂຕ, ຜູ້ໄທ, ຄົນໄທ, ອຸໄທ, ເມືອງໄທ, ອໍລະໄທ, ລືໄທ, ສົມພະໄທ

**ໃທ່**: (ບໍ່ມີ)
**ໄທ່**: ຖົງໄທ່, ໄທ່ຈານ, ໄທ່ປ່ານ, ໄທ່ເຂົ້າ, ໄທ່ເງິນ

**ໃທ້**: (ບໍ່ມີ)
**ໄທ້**: ຜີໄທ້

**ໃນ**: ໃນເຮືອນ, ໃນໃຈ, ໃນບ້ານ, ໃນຫ້ອງ,ໃນບົດເລື່ອງ, ໃນສາຍຕາ, ໃນຫ້ອງ, ໃນລົດ, ໃນຂອບເຂດ, ພາຍໃນ
**ໄນ**: ໄນຝ້າຍ, ໄນຕາ, ເຈຍລະໄນ, ເຫຼັກໄນ, ປາໄນ, ບຣູໄນ, ວິໄນ, ໄນຍະ, ໝາໄນ, ຄວາມໝາຍໂດຍໄນ

**ໃນ່**: (ບໍ່ມີ)
**ໄນ່**: ໄນ່ນໍ້າ, ເຂົ້າໝ່າໄນ່ແລ້ວ, ໝູໄນ່

**ໃນ້**: (ບໍ່ມີ)
**ໄນ້**: (ບໍ່ມີ)

**ໃບ**: ໃບໄມ້, ໃບຕອງ, ໃບພັດ, ໃບໜ້າ, ໃບສະເໜີ, ໃບມີດ, ໃບໝອກ, ໃບບິນ, ໃບຢັ້ງຢືນ, ທອງໃບ, ຄຳໃບ, ໃບຄຳຮ້ອງ, ໃບຂັບຂີ່, ໃບຫູ, ໃບດີກາ, ໃບຄົ້

**ໄບ**: ສຳໄບ, ໝາກໄບ, ໜອງໄບການ

**ໃບ່**: (ບໍ່ມີ)

**ໄບ່**: ປາກໄບ່ຢູ່ແບັບໆ, ຄົນຂີ້ໄບ່

**ໃບ້**: ຄົນໃບ້, ຕາໃບ້, ປາກໃບ້

**ໄບ້**: (ບໍ່ມີ)

**ໃປ**: (ບໍ່ມີ)

**ໄປ**: ໄປໃສ, ໄປບ້ານ, ໄປໆມາໆ, ໄປວຽກ, ໄປການ, ໄປໂຮງຮຽນ

**ໃປ່**: (ບໍ່ມີ)

**ໄປ່**: ເອົາມາໄປ່, ຊັ້ນລະໄປ່

**ໃປ້**: (ບໍ່ມີ)

**ໄປ້**: (ບໍ່ມີ)

**ໃຜ**: ແມ່ນໃຜ, ໃຜໆກໍຕາມ

**ໄຜ**: (ບໍ່ມີ)

**ໃຜ່**: (ບໍ່ມີ)

**ໄຜ່**: ໄມ້ໄຜ່, ໄຜ່ໜາມ, ໄຜ່ບ້ານ

**ໃຜ້**: (ບໍ່ມີ)

**ໄຜ້**: (ບໍ່ມີ)

**ໃຜ**: (ບໍ່ມີ)
**ໄຜ**: ໄຜຢູ່ແກ້ມ, ມີໄຜ

**ໃຜ່**: ໃຜ່ຝັນ, ໃຜ່ຫາ, ໃຜ່ຮູ້ໃຜ່ຮຽນ
**ໄຜ່**: ໄຜ່ແຍກອອກ, ໄຜ່ໄປໄຜ່ມາ

**ໃຜ້**: (ບໍ່ມີ)
**ໄຜ້**: (ບໍ່ມີ)

**ໃພ**: (ບໍ່ມີ)
**ໄພ**: ໄພພິບັດ, ໄພຮ້າຍ, ໄພສົງຄາມ, ໄພນໍາ, ໄພລົມ, ໄພສານ, ໄພພະນອມ, ອະໄພ, ໄພອຶດຫິວ, ໄພຫຍ້າ, ພົງໄພ, ໄທໄພ, ນ້ຳໄພ, ພິດໄພ, ໂພຍໄພ, ອຸທົກກະໄພ

**ໃພ່**: (ບໍ່ມີ)
**ໄພ່**: ໄພ່ຟ້າ, ຂ້າໄພ່, ໄພ່ພົນ

**ໃພ້**: ລູກໃພ້, ນອງໃພ້, ເອື້ອຍໃພ້
**ໄພ້**: ໃບໄພ້, ຫຼິ້ນໄພ້

**ໃຟ**: (ບໍ່ມີ)
**ໄຟ**: ໄຟຟ້າ, ໄຟໄໝ້, ໄຟສາຍ, ໄຟແຈ້ງ, ໄຟມອດ, ດັງໄຟ, ດອກໄຟ, ໝາກໄຟ, ລົດໄຟ, ເຮືອໄຟ, ປືນໄຟ, ລູກໄຟ

**ໃຟ່**: (ບໍ່ມີ)
**ໄຟ່**: (ບໍ່ມີ)

**ໃຟ້**: (ບໍ່ມີ)
**ໄຟ້**: (ບໍ່ມີ)

**ໃມ**: (ບໍ່ມີ)

**ໄມ**: ໄມເອົາມາເປັນລູກ, ທ້າວໄມ, ນາງໄມ

**ໃມ່**: (ບໍ່ມີ)

**ໄມ່**: ໄມ່ກ້ຽງ, ອໍລະໄມ່ໜ້າ, ໄມ່ຄໍາດີ (ສັບທ້ອງຖິ່ນ)

**ໃມ້**: (ບໍ່ມີ)

**ໄມ້**: ໄມ້ປ່ອງ, ໄມ້ຈິງ, ໄມ້ຖູ່, ໄມ້ດູ່, ໄມ້ແດງ, ໄມ້ຈິ້ມແຂ້ວ, ໄມ້ທີບ, ໄມ້ແສ້, ໄມ້ສ້າວ, ໄມ້ຄໍ້າ, ໄມ້ຂາງ, ໄມ້ຂື່, ໄມ້ກອນ,ໄມ້ສີຍິວ, ໄມ້ແບບ

**ໃຍ**: ໃຍ! ໂຕຫາກວ່າແນວນັ້ນ, ໃຍ! ຂອງວ່າມີແຕ່ທີ່ນີ້

**ໄຍ**: ໃຊ້ຕີນໄຍ, ແມງໄຍ

**ໃຍ່**: (ບໍ່ມີ)

**ໄຍ່**: (ບໍ່ມີ)

**ໃຍ້**: (ບໍ່ມີ)

**ໄຍ້**: (ບໍ່ມີ)

**ໃລ**: (ບໍ່ມີ)

**ໄລ**: ໄລປະຕູ, ໄລແມງພູ່, ໄລຕໍ່, ໄລກອນ, ໄລນໍ້າ, ລືມໄລ, ບົວໄລ, ລໍາໄລ, ປາຝາໄລ

**ໃລ່**: (ບໍ່ມີ)

**ໄລ່**: ໄລ່ໜີ, ໄລ່ງົວ, ໄລ່ຄວາຍ, ໄລ່ເລກ, ໄລ່ມື້ໄລ່ຍາມ, ຄິດໄລ່, ໜໍ່ໄລ່

**ໃລ້**: (ບໍ່ມີ)

**ໄລ້**: ລູບໄລ້

**ໃວ**: (ບໍ່ມີ)

**ໄວ**: ໄວວາ, ວ່ອງໄວ, ໄວປາກ, ໄວຕາ, ໄວຣົດ, ໄວລຸ້ນ, ໄວໄຟ, ໄວອາຍຸ, ໄວເດັກ, ໄວຊະລາ, ໄວກາງຄືນ, ຍ່າງໄວ, ກິນໄວ

**ໃວ່**: (ບໍ່ມີ)

**ໄວ່**: ບິນໄວ່ໆ

**ໃວ້**: (ບໍ່ມີ)

**ໄວ້**: ໄວ້ໂຕ, ໄວ້ໃຈ, ໄວ້ທຸກ, ໄວ້ອາໄລ, ໄວ້ໜ້າ, ເອົາໄວ້, ໄວ້ໃສ

**ໃຫ**: (ບໍ່ມີ)

**ໄຫ**: ໄຫເງິນ, ໄຫປາແດກ, ໄຫນໍ້າ, ໄຫຫີນ, ຊ່າງໄຫ

**ໃຫ່**: (ບໍ່ມີ)

**ໄຫ່**: (ບໍ່ມີ)

**ໃຫ້**: ໃຫ້ໃຜ, ໃຫ້ໄດ້, ໃຫ້ໄປ, ໃຫ້ມາ, ໃຫ້ເຮັດວຽກ, ໃຫ້ພອນ

**ໄຫ້**: ຮ້ອງໄຫ້, ໄຫ້ນໍາ

**ໃອ**: (ບໍ່ມີ)

**ໄອ**: ໄອໄກ່, ໄອຄອກໆ, ເປັນໄອ, ໄອຍະການ, ລາວໄອເຕັກ

**ໃອ່**: ໃອ່! ແມ່ນແລ້ວ, ໃອ່! ບັດນີ້ລະຊິແລ້ວ (ອຸທານ)

**ໄອ່**: ໄອ່! ສັງມາເປັນແນວນີ້? (ອຸທານ)

**ໃອ້**: (ບໍ່ມີ)

**ໄອ້**: (ບໍ່ມີ)

**ໃຮ**: (ບໍ່ມີ)
**ໄຮ**: ຕົ້ນໄຮ, ໂຕໄຮ, ໄຮ! ກະດຽວວ່າຮູ້ແລ້ວ (ອຸທານ)

**ໃຮ່**: ໃຮ່ນາ
**ໄຮ່**: ໄຮ່ສາລີ, ໄຮ່ເຂົ້າ, ໄຮ່ຝ້າຍ, ຊາວໄຮ່

**ໃຮ້**: (ບໍ່ມີ)
**ໄຮ້**: ທຸກໄຮ້, ໄຮ້ສາລະ, ໄຮ້ປັນຍາ, ຂີ້ໄຮ້, ໄຮ້ຄວາມໝາຍ

**ໃຫງ**: (ບໍ່ມີ)
**ໄຫງ**: (ບໍ່ມີ)

**ໃຫງ່**: ຂີ້ໃຫງ່, ໃຫງ່ກຸ້ມທົບ
**ໄຫງ່**: (ບໍ່ມີ)

**ໃຫງ້**: (ບໍ່ມີ)
**ໄຫງ້**: (ບໍ່ມີ)

**ໃຫຍ**: (ບໍ່ມີ)
**ໄຫຍ**: ເຮັດໄຫຍໃສ່, ຊັກຮັກແຮ້ໄຫຍໃສ່

**ໃຫຍ່**: ໃຫຍ່ໂຕ, ໃຫຍ່ຫຼວງ, ໃຫຍ່ຂຶ້ນ, ເມືອງໃຫຍ່, ຍິ່ງໃຫຍ່, ຜູ້ໃຫຍ່
**ໄຫຍ່**: (ບໍ່ມີ)

**ໃຫຍ້**: (ບໍ່ມີ)
**ໄຫຍ້**: (ບໍ່ມີ)

**ໃໝ**: ປັບໃໝ, ໃໝເອົາເງິນ, ໃໝເອົາຄວາມ, ຖືກໃໝ
**ໄໝ**: ໄໝຄຳ, ໄໝຫຼາບ, ໄໝມ້ອນ, ໄໝບໍ່ລັງ, ຜ້າໄໝ, ສິ້ນໄໝ, ໄໝລາວ, ໄໝຍອດ

**ໃໝ່**: ໃໝ່ອ່ຽມ, ປີໃໝ່, ເສື້ອໃໝ່, ອັນໃໝ່, ໃບໜ້າໃໝ່
**ໄໝ່**: (ບໍ່ມີ)

**ໃໝ້**: (ບໍ່ມີ)
**ໄໝ້**: ໄຟໄໝ້, ຈູດໄໝ້ດີ

**ໃຫຼ**: ນອນໃຫຼ, ຫຼັງໃຫຼ, ໃຫຼປາກເວລານອນ
**ໄຫຼ**: ໄຫຼນໍ້າ, ລ່ຽນໄຫຼ, ນໍ້າໄຫຼ, ນໍ້າຕາໄຫຼ, ເຫຼັກໄຫຼ

**ໃຫຼ່**: (ບໍ່ມີ)
**ໄຫຼ່**: ບ່າໄຫຼ່, ເຄື່ອງອາໄຫຼ່ລົດ

**ໃຫຼ້**: (ບໍ່ມີ)
**ໄຫຼ້**: (ບໍ່ມີ)

**ໃຫວ**: (ບໍ່ມີ)
**ໄຫວ**: ດິນໄຫວ, ຫວັ່ນໄຫວ, ສະຫວ່າງສະໄຫວ, ທອງສະໄຫວ, ນາງຄຳໄຫວ

**ໃຫວ່**: (ບໍ່ມີ)
**ໄຫວ່**: (ບໍ່ມີ)

**ໃຫວ້**: (ບໍ່ມີ)
**ໄຫວ້**: ໄຫວ້ວອນ, ໄຫວ້ພະ, ໄຫວ້ຜີ, ໄຫວ້ທໍ, ໄຫວ້ພະຈັນ, ນົບໄຫວ້, ຂາບໄຫວ້

ນອກນີ້ອາດຍັງມີບາງຄຳທີ່ລາວຮັບຈາກພາສາອື່ນມາໃຊ້ ຊຶ່ງມີສຽງ ໄx /aj/ ທີ່ບໍ່ທັນໄດ້ຮິບໂຮມມາສະເໜີໃນນີ້ການຂຽນສະກົດຄຳເຫຼົ່ານັ້ນ ກໍໃຫ້ປະຕິບັດຕາມຫຼັກການດັ່ງທີ່ກ່າວມາແລ້ວ.

### ສິ່ງທີ່ຄວນຈື່:

- **ການໃຊ້ສະຫຼະ ໃx**: ຄຳທີ່ມາຈາກພາສາຕ່າງປະເທດ ແລະ ພາສາປາລີ-ສັນສະກິດບໍ່ໃຊ້ສະຫຼະ ໃx, ມີແຕ່ຄຳລາວເດີມປະມານ 30 ຄຳເທົ່ານັ້ນທີ່ໃຊ້ ສະຫຼະ ໃx ນອກຈາກນັ້ນແມ່ນໃຊ້ສະຫຼະ ໄx.

- **ການໃຊ້ສະຫຼະໄx**: ຄຳທີ່ມາຈາກພາສາຕ່າງປະເທດ ແລະ ພາສາປາລີ-ສັນສະກິດໃຫ້ໃຊ້ສະຫຼະ ໄx, ຄຳມາຈາກພາສາປາລີ-ສັນສະກິດແຕ່ກ່ອນຂຽນເປັນ ໄຍ ກໍໃຫ້ໃຊ້ສະຫຼະ ໄx.

### ຄຳທີ່ມັກຂຽນຜິດ

**ຄຳທີ່ໃຊ້ສະຫຼະ ໄx ມັກຂຽນຜິດເປັນ ໃx**

| ຄຳຖືກ | | ຄຳຜິດ |
|---|---|---|
| ສິ່ງໄສ | ມັກຂຽນຜິດເປັນ | ສິ່ງໃສ |
| ຊຽງໄຮ້ | ມັກຂຽນຜິດເປັນ | ຊຽງໃຮ້ |
| ໄຕ້ຫວັນ | ມັກຂຽນຜິດເປັນ | ໃຕ້ຫວັນ |
| ທັນສະໄໝ | ມັກຂຽນຜິດເປັນ | ທັນສະໃໝ |
| ນິດໄສ | ມັກຂຽນຜິດເປັນ | ນິດໃສ |
| ບຣູໄນ | ມັກຂຽນຜິດເປັນ | ບຣູໃນ |
| ປາໄສ | ມັກຂຽນຜິດເປັນ | ປາໃສ |
| ປັດໄຈ | ມັກຂຽນຜິດເປັນ | ປັດໃຈ |
| ລຳໄສ້ | ມັກຂຽນຜິດເປັນ | ລຳໃສ້ |
| ວິໄຈ | ມັກຂຽນຜິດເປັນ | ວິໃຈ |
| ວິໄສທັດ | ມັກຂຽນຜິດເປັນ | ວິໃສທັດ |
| ວິໄນ | ມັກຂຽນຜິດເປັນ | ວິໃນ |
| ຜ້າໄໝ | ມັກຂຽນຜິດເປັນ | ຜ້າໃໝ |
| ອາໄສ | ມັກຂຽນຜິດເປັນ | ອາໃສ |

**ຄຳທີ່ໃຊ້ສະຫຼະ ໃx ມັກຂຽນຜິດເປັນ ໄx**

| ຄຳຖືກ | | ຄຳຜິດ |
|---|---|---|
| ໃກ້ຊິດ | ມັກຂຽນຜິດເປັນ | ໄກ້ຊິດ |
| ຂີ້ໃຫ່ງ | ມັກຂຽນຜິດເປັນ | ຂີ້ໄຫ່ງ |
| ໃຍແມງມຸມ | ມັກຂຽນຜິດເປັນ | ໄຍແມງມຸມ |
| ປັບໃໝ | ມັກຂຽນຜິດເປັນ | ປັບໄໝ |
| ໃຝ່ຝັນ | ມັກຂຽນຜິດເປັນ | ໄຝ່ຝັນ |
| ລູກໃພ້ | ມັກຂຽນຜິດເປັນ | ລູກໄພ້ |
| ທິວສີໃຄ | ມັກຂຽນຜິດເປັນ | ທິວສີໄຄ |
| ທ່ອງໃຍ | ມັກຂຽນຜິດເປັນ | ທ່ອງໄຍ |
| ຫຼັບໃຫຼ | ມັກຂຽນຜິດເປັນ | ຫຼັບໄຫຼ |
| ຫຼົງໃຫຼ | ມັກຂຽນຜິດເປັນ | ຫຼົງໄຫຼ |

## X. ການຍະຫວ່າງ (ການເວັ້ນວັກ)

### 1. ຄວາມໝາຍການຍະຫວ່າງ

ການຍະຫວ່າງ ໝາຍເຖິງການເຮັດໃຫ້ມີໄລຍະຫ່າງລະຫວ່າງຄໍາ, ຂໍ້ຄວາມ ຫຼື ປະໂຫຍກ ເພື່ອໃຫ້ຜູ້ອ່ານເຂົ້າໃຈຄວາມໝາຍຢ່າງຖືກຕ້ອງຕາມຄວາມຕ້ອງການຂອງຜູ້ຂຽນ.

ການຂຽນພາສາລາວ ໄດ້ກໍານົດໃຫ້ຂຽນຕົວໜັງສືຕິດຕໍ່ກັນໄປ ຊຶ່ງແຕກຕ່າງຈາກພາສາຕ່າງ ປະເທດທີ່ທຸກໆຄໍາຈະມີການຍະຫວ່າງຢ່າງຊັດເຈນ. ເຖິງຢ່າງໃດກໍຕາມ ການຂຽນພາສາລາວກໍຍັງມີຄວາມຈໍາເປັນໃຫ້ມີການຍະຫວ່າງ ເພື່ອຈະຊ່ວຍໃຫ້ຜູ້ອ່ານສາມາດແຍກຂໍ້ຄວາມໄດ້ຖືກຕ້ອງ, ເຂົ້າໃຈເນື້ອໃນໄດ້ຢ່າງຊັດເຈນ ແລະ ສະດວກໃນການອ່ານອອກສຽງ. ການຍະຫວ່າງ ນອກຈາກໃຊ້ເພື່ອສື່ສານລະຫວ່າງຜູ້ຂຽນ ແລະ ຜູ້ອ່ານແລ້ວ, ຍັງເປັນຫຼັກເກນໃນການຂຽນພາສາລາວອີກດ້ວຍ, ຖ້າຍະຫວ່າງຜິດບ່ອນ ກໍຈະພາໃຫ້ຄວາມໝາຍຜິດໄປດ້ວຍ.

### 2. ຮູບແບບຂອງການຍະຫວ່າງ

ການຍະຫວ່າງມີ 2 ຮູບແບບ (2 ຂະໜາດ) ຄື:

ຮູບແບບທີ 1: ການຍະຫວ່າງນ້ອຍ ເປັນການຈິ່ງໄລຍະຫ່າງໂດຍກໍານົດຄວາມກວ້າງເທົ່າກັບຕົວອັກສອນໜຶ່ງຕົວ ຫຼື ເທົ່າກັບການເຄາະແປ້ນພິມ 1 ເທື່ອ.

ຮູບແບບທີ 2: ການຍະຫວ່າງໃຫຍ່ ເປັນການຈິ່ງໄລຍະຫ່າງໂດຍກໍານົດຄວາມກວ້າງເທົ່າກັບຕົວອັກສອນສອງຕົວ ຫຼື ເທົ່າກັບການເຄາະແປ້ນພິມ 2 ເທື່ອຂຶ້ນໄປຕາມຄວາມເໝາະສົມ.

ການພິຈາລະນາໃນການຍະຫວ່າງນ້ອຍ ຫຼື ໃຫຍ່ແມ່ນໃຫ້ເບິ່ງຄວາມເໝາະສົມຂອງເອກະສານ, ຄວາມສວຍງາມໃນການຈັດຮູບແບບເປັນຫຼັກ ຫຼື ການຕັ້ງ Tab ໃນການພິມ. ແຕ່ສ່ວນຫຼາຍ ໃຫ້ໃຊ້ການຍະຫວ່າງນ້ອຍເປັນຕົ້ນຕໍ.

### 3. ປະເພດຂອງການຍະຫວ່າງ

ການຍະຫວ່າງມີ 3 ປະເພດ (3 ກໍລະນີ) ຄື:

ປະເພດທີ 1: ຕ້ອງຍະຫວ່າງ
ປະເພດທີ 2: ບໍ່ຕ້ອງຍະຫວ່າງ
ປະເພດທີ 3: ຍະຫວ່າງ ຫຼື ບໍ່ຍະຫວ່າງກໍໄດ້

## 3.1 ກົລະນີຕ້ອງຍະຫວ່າງ

ກົລະນີຕ້ອງຍະຫວ່າງ ໝາຍເຖິງລະຫວ່າງ ຄຳ, ຂໍ້ຄວາມ ຫຼື ປະໂຫຍກນັ້ນຕ້ອງຍະຫວ່າງສະເໝີ ຖ້າບໍ່ຍະຫວ່າງຖືວ່າບໍ່ຖືກຕ້ອງ.

ໃນການຂຽນ ຫຼື ພິມໜັງສືໃນພາສາລາວ ມີຫຼັກເກນການຍະຫວ່າງດັ່ງນີ້:

### 1) ການຍະຫວ່າງໃນປະໂຫຍກ ແລະ ຂໍ້ຄວາມ

#### (1) ຍະຫວ່າງເມື່ອຈົບປະໂຫຍກສົມບູນ

ໃນທ້າຍປະໂຫຍກໃຫ້ໃສ່ເຄື່ອງໝາຍຈ້ຳ, ຍະຫວ່າງ ແລ້ວຈຶ່ງຂຽນປະໂຫຍກໃໝ່ຕໍ່ໄປ. ຕົວຢ່າງ:

"ວັນນະຄະດີ ເປັນສິ່ງສະແດງຈິດໃຈ ແລະ ວັດທະນະທຳຂອງຊາດດີກວ່າແນວອື່ນ. ວັນນະຄະດີເປັນພະຍານຫຼັກຖານບອກໃຫ້ຮູ້ຄວາມເປັນຢູ່, ຄວາມຄິດ, ຄວາມເຫັນ, ຮີດຄອງປະເພນີຂອງຊາດໃນສະໄໝຕ່າງໆ ດີກວ່າປະຫວັດສາດ ເພາະປະຫວັດສາດບັນທຶກໄວ້ແຕ່ເຫດການພາຍນອກທີ່ເກີດຂຶ້ນແລ້ວ ສ່ວນວັນນະຄະດີສະແດງເຖິງອຳນາດອັນສຳຄັນ ທີ່ຝັງຢູ່ໃນຈິດໃຈຂອງປະຊາຊາດ ອັນເປັນສະມຸດຖານຂອງເຫດ ການທີ່ຜາກົດອອກມາພາຍນອກ. ດັ່ງນັ້ນ ວັນນະຄະດີ ຈຶ່ງເປັນຮາກຖານຂອງຄວາມເປັນຊາດຢ່າງເລິກເຊິ່ງ ຖ້າຂາດຮາກຖານຄືວັນນະຄະດີນີ້ແລ້ວ ຊາດຂອງເຮົາອາດຖືກລຶບລ້າງສູນຫາຍໄປເທື່ອລະນ້ອຍ ຈົນກັບກາຍເປັນຊາດອື່ນໄປ ເພາະບໍ່ມີຫຼັກໃຫ້ຖືວ່າ ຕົນມີລັກສະນະອັນແທ້ຈິງເປັນຢ່າງໃດ. ປັດຈຸບັນ ຄວາມເປັນຢູ່ພາຍນອກຂອງມະນຸດໃກ້ຄຽງກັນຫຼາຍ ຍ້ອນອຳນາດຂອງວິທະຍາສາດ ແລະ ອິດທິພົນຂອງຊາວຕາເວັນຕົກ".

(ຄັດຈາກປຶ້ມ "ປະໂຫຍດຂອງວັນນະຄະດີ" ຂອງມະຫາສິລາ ວີຣະວົງ. ພິມປີ 1996. ໜ້າ 29)

**ໝາຍເຫດ**: ເຄື່ອງໝາຍຂີດກ້ອງ ...... ໝາຍເຖິງຕົວຢ່າງບ່ອນຍະຫວ່າງ

#### (2) ໃນປະໂຫຍກຍາວໃຫ້ຍະຫວ່າງ ເພື່ອຂັ້ນໃຈຄວາມຍ່ອຍໃນປະໂຫຍກ (ທີ່ນ້ອຍກວ່າຈຸດ) ເພື່ອໃຫ້ຜູ້ອ່ານເຂົ້າໃຈຊັດເຈນ ແລະ ຢຸດພັກໜ້ອຍໜຶ່ງເວລາອ່ານອອກສຽງ

ຕົວຢ່າງ:

"ແຕ່ວ່າ ຫຼັງຈາກເຈລະຈາກັນເກືອບເດືອນໜຶ່ງແລ້ວ ທັງສອງຝ່າຍສາມາດເປັນເອກະສັນກັນ ເຊັ່ນຖະແຫຼງການຮ່ວມສະບັບໜຶ່ງ. ຖະແຫຼງການຮ່ວມສະບັບນັ້ນ ໄດ້ເວົ້າວ່າ ທັງສອງຝ່າຍພ້ອມກັນເຫັນດີວ່າ ຈະຊອກທຸກວິທີທາງໃຫ້ໄປເຖິງບ່ອນຕົກລົງ

ກັນໄດ້ ໃນທຸກບັນຫາຢ່າງພໍໃຈແກ່ສອງຝ່າຍ ເພື່ອພ້ອມກັນສ້າງສາບ້ານເມືອງລາວໃຫ້ມີສັນຕິ ພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ”.

(ຄັດຈາກປຶ້ມ “ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ” ຂອງທ່ານພູມີ ວົງວິຈິດ. ພິມປີ 1987. ໜ້າ 91)

**(3) ໃນປະໂຫຍກປະສົມ ໃຫ້ຍະຫວ່າງທາງໜ້າຄຳຕໍ່ ຫຼື ຄຳສັນທານ (ຍົກເວັ້ນຄຳ “ແລະ” “ຫຼື” ທີ່ຕ້ອງຍະຫວ່າງທາງໜ້າ ແລະ ຫຼັງ)**

ຕົວຢ່າງ: ຂ້ອຍກິນເຂົ້າ ແລ້ວກໍໄປໂຮງຮຽນ.

ລາວກິນເຂົ້າແລ້ວ ຈຶ່ງອ່ານໜັງສື

ຝົນຕົກ ແຕ່ແດດອອກ.

ຂ້ອຍຈະຮຽນການຊ່າງ ຖ້າພໍ່ແມ່ເຫັນດີ.

## 2) ການຍະຫວ່າງລະຫວ່າງຄຳ ແລະ ວະລີ

**(1) ຍະຫວ່າງລະຫວ່າງຄຳກັບຄຳ, ວະລີກັບວະລີ**

ຕົວຢ່າງ: ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**(2) ຍະຫວ່າງລະຫວ່າງຊື່ ກັບນາມສະກຸນ**

ຕົວຢ່າງ: ທ້າວຄຳມີ ສີສະຫງ່າ

ນາງແດງ ແພງພິງພັນ

**(3) ຍະຫວ່າງລະຫວ່າງຊື່ ຫຼື ນາມສະກຸນ ກັບຕຳແໜ່ງ**

ຕົວຢ່າງ: ທ່ານພົມມີ ບັນທະວົງ ຜູ້ອຳນວຍການໂຮງຮຽນມັດທະຍົມສາທິດ

ທ່ານຄຳແພງ ນາຍບ້ານບ້ານດົງໂດກ

**(4) ຍະຫວ່າງລະຫວ່າງຍົດ (ຊັ້ນ) ກັບຊື່**

ຕົວຢ່າງ: ພົນເອກ ຄຳໄຕ ສີພັນດອນ

ພົນເອກ ສີສະຫວາດ ແກ້ວບຸນພັນ

ພົນເອກ ຈັນສະໝອນ ຈັນຍາລາດ

ພົນໂທ ສະໝານ ວິຍະເກດ

**(5) ຍະຫວ່າງລະຫວ່າງພະນາມກັບຖານັນດອນສັກ**

(ໃຊ້ໃນກໍລະນີຂຽນຊື່ບຸກຄົນໃນປະຫວັດສາດ)

**(6) ຍະຫວ່າງລະຫວ່າງຄຳນຳໜ້ານາມແຕ່ລະຊະນິດ**

ຕົວຢ່າງ: ສາດສະດາຈານ ດອກເຕີ ວັນນະເລດ ລາຊະໂພ

**(7) ຍະຫວ່າງລະຫວ່າງຕົວອັກສອນຫຍໍ້ກັບຂໍ້ຄວາມທົ່ວໄປ**

ຕົວຢ່າງ: ລັດຖະທຳມະນູນແຫ່ງ ສປປ ລາວແມ່ນກົດໝາຍພື້ນຖານຂອງ ສປປ ລາວ.

**(8) ຍະຫວ່າງຕົວໜັງສືກັບຕົວເລກ**

ຕົວຢ່າງ:

- ຊັ້ນປະຖົມສຶກສາປີທີ 5
- ລຸງຄຳພັນລ້ຽງງົວ 100 ໂຕ
- ກອງປະຊຸມຈະຈັດຂຶ້ນໃນເວລາ 8:00 ໂມງ ຂອງວັນຈັນ, ວັນທີ 21 ຕຸລາ 2019
- ເດີ່ນເປຕັງກວ້າງ 4 ແມັດ, ຍາວ 15 ແມັດ
- ເຂົ້າສານ 12 ກິໂລ ລາຄາ 110.000 ກີບ

**(9) ຍະຫວ່າງລະຫວ່າງຕົວໜັງສືລາວກັບຕົວໜັງສືພາສາອື່ນ**

ຕົວຢ່າງ:

ເວລາພິມເອກະສານແລ້ວ ໃຫ້ save as ໄວ້ທີ່ My Documents ຫຼື Desktop. ເວລາຈະເອົາ file ເອກະສານອອກຈາກຄອມພິວເຕີກໍ copy ໃສ່ USB.

**(10) ຍະຫວ່າງຢູ່ທາງໜ້າ ແລະ ຫຼັງຄຳ "ແລະ", "ຫຼື"**

ຕົວຢ່າງ:

"ວິທີຂຽນຄຳລາວ ແລະ ຄຳທີ່ເອົາມາຈາກພາສາອື່ນແມ່ນວິທີສະກົດຕາມສຽງທີ່ເຄີຍໃຊ້ກັນຢູ່ປະເທດລາວ".

(ຄັດຈາກ ພະລາຊະໂອງການເລກທີ 10, ລົງວັນທີ 27/1/1949
ກ່ຽວກັບຫຼັກການຂຽນທາງລາຊະການຕາມອັກຂະຫຼະລາວ)

"ພະຍາງແມ່ນສຽງໜຶ່ງໃນຄຳ, ຈະມີຄວາມໝາຍ ຫຼື ບໍ່ມີກໍຕາມ. ຄຳໜຶ່ງອາດມີພະຍາງດຽວ ຫຼື ຫຼາຍພະຍາງ".

(ຄັດຈາກປຶ້ມ "ໄວຍາກອນລາວ ພາກທີໜຶ່ງ ອັກຂະຫຼະວິທີ" ສະບັບລາຊະບັນດິດສະພາລາວ. ໜ້າ 10)

ຕົວຢ່າງ:

ວັນລັດຖະການມີ 5 ວັນຄື: ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ ແລະ ວັນສຸກ. ສ່ວນວັນພັກມີ 2 ວັນຄື: ວັນເສົາ ແລະ ວັນອາທິດ.

**(11) ຍະຫວ່າງລະຫວ່າງຊື່ບໍລິສັດ, ທະນາຄານ...ກັບຄຳ "ຈຳກັດ", "ມະຫາຊົນ" ທີ່ຢູ່ທ້າຍຊື່**

ຕົວຢ່າງ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ

ບໍລິສັດດາວທຽມລາວ ເອເຊຍ-ປາຊີຟິກ ຈຳກັດ

**(12) ຍະຫວ່າງລະຫວ່າງຊື່ສະຖານທີ່ຕ່າງໆ ເຊັ່ນ: ຮ່ອມ, ຖະໜົນ, ຄຸ້ມ, ໜ່ວຍ, ບ້ານ ເມືອງ ແຂວງ**

ຕົວຢ່າງ: ບ້ານແບງຄຳ ເມືອງແບງ ແຂວງອຸດົມໄຊ

ຮ່ອມ 1 ບ້ານຕານມີໄຊ ເມືອງໄຊທານີ ນະຄອນຫຼວງວຽງຈັນ

ບ້ານຜາສຸກ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

**(13) ຍະຫວ່າງຢູ່ໜ້າ ແລະ ຫຼັງເຄື່ອງໝາຍ: ວົງເລັບ, ວົງຢືມ, ວົງຂໍ, ວົງຕັດ, ວົງປີກກາ**

(ເບິ່ງຕົວຢ່າງໃນບົດເຄື່ອງໝາຍວັກຕອນ)

**(14) ຍະຫວ່າງຢູ່ຫຼັງເຄື່ອງໝາຍ: ຈ້ຳ, ຈຸດ, ຈ້ຳຈຸດ, ສອງຈ້ຳ, ສາມຈ້ຳ, ໝາຍຖາມ, ໝາຍ ຊ້ຳ, ເກາະລະ, ໝາຍທ້ວງ**

(ເບິ່ງຕົວຢ່າງໃນບົດເຄື່ອງໝາຍວັກຕອນ)

**(15) ຍະຫວ່າງຢູ່ຫຼັງຂໍ້ຄວາມທີ່ເປັນຫົວຂໍ້**

ຕົວຢ່າງ:

**ຄຳເຄົ້າ** ແມ່ນຄຳເວົ້າຄຳໜຶ່ງ ທີ່ມີຄວາມໝາຍຢ່າງໜຶ່ງມາແຕ່ດັ້ງເດີມ.

**(16) ຍະຫວ່າງທາງໜ້າ ແລະ ຫຼັງຄຳ "ໄດ້ແກ່"**

ຕົວຢ່າງ:

ຜູ້ຊະນະເລີດໃນການແຂ່ງຂັນຊ່ວງເຮືອທີ່ທ່າວັດຈັນປະຈຳປີ 2019 ປະເພດຊາຍ ໄດ້ແກ່ ຣີສອດປາກນ້ຳຄານ ນະຄອນຫຼວງພະບາງ.

**(17) ຍະຫວ່າງທາງໜ້າ ແລະ ຫຼັງຄຳ "ຄື", "ເຊັ່ນ"**

ຕົວຢ່າງ:

ແຫຼ່ງທ່ອງທ່ຽວທີ່ແຂວງອຸດົມໄຊມີຫຼາຍແຫ່ງ ເຊັ່ນ: ຖ້ຳຈອມອອງ ເມືອງໄຊ, ປ່າຫີນ ເມືອງຮຸນ, ນ້ຳກັດຢໍລະປ່າ ເມືອງໄຊ, ວັດພະເຈົ້າສິງຄຳ ເມືອງຫຼາ, ນ້ຳຕົກຕາດຕະແລ ເມືອງຮຸນ, ຖ້ຳກຸດ ເມືອງງາ ແລະ ອື່ນໆ.

### (18) ຍະຫວ່າງທາງໜ້າຄຳ "ເປັນຕົ້ນ" ທີ່ຢູ່ຫຼັງລາຍການ

ຕົວຢ່າງ:

ປີ 2015 ທົ່ວປະເທດມີແຫຼ່ງຜະລິດໄຟຟ້າທີ່ສ້າງສຳເລັດ 38 ແຫ່ງ ທຽບໃສ່ປີ 2010 ເພີ່ມຂຶ້ນ 26 ແຫ່ງ, ມີບັນດາແຫຼ່ງຜະລິດພະລັງງານໄຟຟ້າທີ່ສ້າງຂຶ້ນໃໝ່ ເຊັ່ນ: ນ້ຳງື່ມ 2, ເທີນ-ຫີນບູນພາກຂະຫຍາຍ, ນ້ຳອູ 2, ນ້ຳອູ 5, ນ້ຳອູ 6, ນ້ຳຄານ 2, ນ້ຳງຽບ 2, ໂຮງງານຄວາມຮ້ອນຫົງສາລິກໄນ ເປັນຕົ້ນ ຊຶ່ງສາມາດຜະລິດພະລັງງານໄຟຟ້າໄດ້ 33.315 ລ້ານກິໂລວັດໂມງຕໍ່ປີ.

(ແຫຼ່ງຂໍ້ມູນຈາກ: www.poweringprogress.org. July 10, 2019)

### (19) ຍະຫວ່າງຢູ່ຫຼັງຄຳ "ວ່າ" ໃນກໍລະນີທີ່ຂໍ້ຄວາມຕໍ່ມາມີລາຍລະອຽດ ຫຼື ເປັນປະໂຫຍກ

ຕົວຢ່າງ:

"ຄຸນສົມບັດ ແປວ່າ ສິ່ງທີ່ມີປະຈຳຕົວ ຊຶ່ງເປັນຄວາມດີ ແລະ ສິນທຳປະຕິວັດ ແປວ່າ ຄວາມຍຸຕິທຳ ທີ່ທຸກຄົນຮັບເອົາໄດ້ ແລະ ໄດ້ປ່ຽນແປງອັນເກົ່າ ມາຖືເອົາອັນໃໝ່ແລ້ວ".

"ຄົນເຮົາຖ້າຢາກເປັນຜູ້ດີຕ້ອງຕໍ່ສູ້ກັບແນວຄິດເດີມຂອງຕົນເອງ ເພື່ອປະຕິບັດແຕ່ຄວາມດີ, ລະຖິ້ມຄວາມຊົ່ວດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍບໍ່ຖ້າໃຫ້ຜູ້ໃດມາບັງຄັບ ຈຶ່ງຈະເຮັດໃຫ້ແຕ່ລະຄົນກາຍເປັນຄົນທີ່ດີເລີດທີ່ເພິ່ນເອີ້ນວ່າ ມະນຸດ ຊຶ່ງຈະຢູ່ນຳກັນຫຼາຍປານໃດກໍບໍ່ຜິດຖຽງກັນຈັກເທື່ອ, ອາການເປັນແນວນັ້ນເພິ່ນເອີ້ນວ່າ ຄວາມສາມັກຄີ".

(ຄັດຈາກປຶ້ມ "ຄຸນສົມບັດໃໝ່ ແລະ ສິນທຳປະຕິວັດ" ຂອງທ່ານພູມີ ວົງວິຈິດ. ພິມຄັ້ງທີ 2, ປີ 2013. ໜ້າ 11 ແລະ 13)

ໃນກໍລະນີໃຊ້ຄຳ "ວ່າ" ທີ່ຂໍ້ຄວາມຕໍ່ໄປເປັນຄຳຢືມຄຳເວົ້າຂອງຜູ້ອື່ນ ຫຼື ຂໍ້ຄວາມຄັດຈາກເອກະສານອ້າງອີງອື່ນໃຫ້ໃສ່ສອງຈ້ຳ ແລ້ວຈຶ່ງຍະຫວ່າງ.

ຕົວຢ່າງ:

ຈົ່ງອະທິບາຍຄຳສຸພາສິດທີ່ວ່າ: "ຢູ່ໃຫ້ເຮັດດີ ໜີໃຫ້ເພິ່ນຄິດຮອດ"

ທ່ານໄກສອນ ພົມວິຫານກ່າວວ່າ: "ຕ້ອງນຳເອົາການສຶກສາໄປກ່ອນກ້າວໜຶ່ງ"

### 3.2 ການບໍ່ຍະຫວ່າງ

ກໍລະນີບໍ່ຕ້ອງຍະຫວ່າງ ໝາຍເຖິງລະຫວ່າງ ຄຳ ຫຼື ຂໍ້ຄວາມນັ້ນ ໃຫ້ຂຽນຕິດກັນໄປບໍ່ຕ້ອງຍະຫວ່າງ ຖ້າຍະຫວ່າງຖືວ່າບໍ່ຖືກຕ້ອງ.

**1) ບໍ່ຍະຫວ່າງລະຫວ່າງຄຳນຳໜ້າຊື່ກັບຊື່**

(ບາ, ອີ່, ທ້າວ, ນາງ, ທ່ານ, ທ່ານນາງ, ຍານາງ, ສະຫາຍ, ສະຫາຍນາງ, ພະ)

ຕົວຢ່າງ: ບາຄຳ
ອີ່ຫຼ້າ
ທ້າວບຸນມີ
ນາງແກ້ວມະນີ
ທ່ານພູມີ
ທ່ານນາງຄຳແພງ
ສະຫາຍຄຳພູນ
ສະຫາຍນາງບຸນເພັງ
ພະບຸນລ່ວມ

**2) ບໍ່ຍະຫວ່າງລະຫວ່າງຄຳທີ່ໃຊ້ແທນຄຳນຳໜ້າຊື່ຕ່າງໆກັບຊື່** ທີ່ເອີ້ນຕາມປະເພນີໃນສັງຄົມລາວ ເພື່ອໃຫ້ເໝາະສົມກັບກາລະເທສະ ແລະ ບຸກຄົນ (ພໍ່, ອ້າຍ, ອາວ, ນ້າ, ລຸງ, ພໍ່ຕູ້, ພໍ່ເຖົ້າ, ແມ່, ເອື້ອຍ, ນ້ອງ, ອາ, ປ້າ, ແມ່ເຖົ້າ, ແມ່ຕູ້, ທິດ, ຊຽງ ຯລຯ)

ຕົວຢ່າງ: ພໍ່ຄຳພັນ
ລຸງບຸນທັນ
ອ້າຍບຸນຕາ
ເອື້ອຍນາລີ
ແມ່ຕູ້ສາ

**3) ບໍ່ຍະຫວ່າງລະຫວ່າງບັນດາສັກ, ສະມະນະສັກ, ຖານັນດອນສັກກັບນາມ**

ຕົວຢ່າງ: ພະຍານັນທະເສນ
ເຈົ້າສຸລິຍະວົງສາ
ເຈົ້າສຸວັນນະພູມາ
ສະເດັດເຈົ້າສຸພານຸວົງ

### 4) ບໍ່ຍະຫວ່າງລະຫວ່າງຄຳນຳໜ້າຊື່ທີ່ເປັນຕຳແໜ່ງ ຫຼື ອາຊີບ

ຕົວຢ່າງ: ນາຍຄູຄຳ
ອາຈານພິມມະສອນ
ທ່ານໝໍທອງດີ
ມະຫາສິລາ

### 5) ບໍ່ຍະຫວ່າງລະຫວ່າງຄຳນຳໜ້າຊື່ກັບຊື່ໜ່ວຍງານ

ຕົວຢ່າງ: ກະຊວງສຶກສາທິການ ແລະ ກິລາ
ສະຫະພັນບານເຕະແຫ່ງຊາດລາວ
ໂຮງໝໍມິດຕະພາບ
ໂຮງຮຽນມັດທະຍົມສົມບູນວຽງຈັນ
ກົມອຸຕຸນິຍົມ ແລະ ອຸທົກກະສາດ
ສະມາຄົມເຟີນິເຈີລາວ
ບໍລິສັດລັດວິສາຫະກິດໂຮງພິມສຶກສາ

### 6) ບໍ່ຍະຫວ່າງລະຫວ່າງຄຳນຳໜ້າຊື່ກັບຊື່ສະຖານທີ່

(ໂຮງ ເຮືອນ ຮ້ານ ບ້ານ ເມືອງ ແຂວງ...)

ຕົວຢ່າງ: ໂຮງໝໍມະໂຫສົດ
ເຮືອນພັກແຄມງື່ມ
ຮ້ານຄອມພິວເຕີ
ບ້ານວຽງຈະເລີນ
ເມືອງຍອດອູ
ແຂວງຜົ້ງສາລີ

### 7) ບໍ່ຍະຫວ່າງທາງໜ້າ ແລະ ຫຼັງຄຳ "ເຊັ່ນ" ທີ່ມີຄວາມໝາຍວ່າ "ເໝືອນ", "ຢ່າງ", "ດັ່ງ" ຫຼື ທີ່ມີຄວາມໝາຍວ່າ "ຮຸ່ນຄົນ"

ຕົວຢ່າງ: ໃຈດຳເຊັ່ນກາ
ເປັນເຊັ່ນນີ້
ເຊັ່ນດຽວກັນ
ຫຼາຍເຊັ່ນຄົນ

8) ໃນກໍລະນີໃຊ້ຄໍາ "ວ່າ" ແຕ່ບໍ່ມີລາຍລະອຽດຕໍ່ໄປ ກໍບໍ່ຕ້ອງຍະຫວ່າງ

ຕົວຢ່າງ: ຮັ່ງເພິ່ນຈຶ່ງວ່າດີ ມີເພິ່ນຈຶ່ງວ່າພີ່ນ້ອງ

9) ບໍ່ຍະຫວ່າງທາງໜ້າ ແລະ ທາງຫຼັງເຄື່ອງໝາຍຂີດຕໍ່ທີ່ຢູ່ລະຫວ່າງຄໍາ, ໝາຍທັບ

ຕົວຢ່າງ: ວັດຈະນານຸກົມລາວ-ອັງກິດ

ຂົວມິດຕະພາບລາວ-ໄທ

ກໍ່ສ້າງ ແລະ/ຫຼື ສ້ອມແປງ

ຫ້ອງ ມ.3/1

10) ບໍ່ຍະຫວ່າງກຸ່ມຄໍາທີ່ເປັນວະລີ

ຕົວຢ່າງ: ມະຫາວິທະຍາໄລແຫ່ງຊາດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

### 3.3 ກໍລະນີຍະຫວ່າງກໍໄດ້ ບໍ່ຍະຫວ່າງກໍໄດ້

ການຍະຫວ່າງ ແລະ ບໍ່ຍະຫວ່າງທີ່ກ່າວມານັ້ນເປັນຫຼັກເກນໃນການປະຕິບັດ, ແຕ່ບາງຄັ້ງອາດຈະຍະຫວ່າງ ຫຼື ບໍ່ຍະຫວ່າງກໍໄດ້ ທັງນີ້ຂຶ້ນຢູ່ກັບດຸນພິນິດຂອງຜູ້ຂຽນ ແລະ ເນື້ອໃນຄວາມໝາຍ ນັບທັງອາລົມທີ່ຈະສື່ສານອອກໄປໃນສະຖານະການຕ່າງໆ.

1) ຈະຍະຫວ່າງ ຫຼື ບໍ່ຍະຫວ່າງທາງໜ້າ ແລະ ທາງຫຼັງຄໍາ "ແລະ", "ຫຼື" ກໍໄດ້ ຖ້າວ່າເປັນຄໍາຕໍ່ລະຫວ່າງຄໍາກັບຄໍາ

| | ການຂຽນແບບມີຍະຫວ່າງ | ການຂຽນແບບບໍ່ຍະຫວ່າງ |
|---|---|---|
| ຕົວຢ່າງ: | ພໍ່ ແລະ ແມ່ | ພໍ່ແລະແມ່ |
| | ອ້າຍ ແລະ ນ້ອງ | ອ້າຍແລະນ້ອງ |
| | ເຂົ້າ ແລະ ນໍ້າ | ເຂົ້າແລະນໍ້າ |
| | ຊຶ່ງກັນ ແລະ ກັນ | ຊຶ່ງກັນແລະກັນ |
| | ໃຫ້ກັນ ແລະ ກັນ | ໃຫ້ກັນແລະກັນ |
| | ແລະ ອື່ນໆ | ແລະອື່ນໆ |
| ຕົວຢ່າງ: | ໄປ ຫຼື ບໍ່ | ໄປຫຼືບໍ່ |
| | ຫຼື ໃດ | ຫຼືໃດ |
| | ຫຼື ຍັງ | ຫຼືຍັງ |

2) ຈະຍະຫວ່າງ ຫຼື ບໍ່ຍະຫວ່າງທາງໜ້າ ແລະ ທາງຫຼັງເຄື່ອງໝາຍວົງເລັບ ( ), ວົງຢືມ " " ກໍໄດ້ ໃນກໍລະນີມີເນື້ອທີ່ຈໍາກັດ ແລະ ຕ້ອງການຈັດແຖວໃຫ້ສວຍງາມ

3) ຈະຍະຫວ່າງ ຫຼື ບໍ່ຍະຫວ່າງກໍໄດ້ ຖ້າຄວາມໝາຍຂອງຂໍ້ຄວາມບໍ່ປ່ຽນແປງ ແລະ ເວລາອ່ານບໍ່ໄດ້ຢຸດພັກໃນບ່ອນທີ່ຍະຫວ່າງ

| **ການຂຽນແບບມີຍະຫວ່າງ** | **ການຂຽນແບບບໍ່ຍະຫວ່າງ** |
|---|---|
| ກະລຸນາຮັດສາຍແອວ ໃນຂະນະນັ່ງ<br>ຮ້ານ ວັດສະດຸກໍ່ສ້າງ | ກະລຸນາຮັດສາຍແອວໃນຂະນະນັ່ງ<br>ຮ້ານວັດສະດຸກໍ່ສ້າງ |



## XI. ການໃຊ້ຕົວອັກສອນລາວໃນສື່ສິ່ງພິມ

ການເລືອກໃຊ້ຕົວອັກສອນລາວໃນສິ່ງພິມມີຄວາມສຳພັນ ກັບຫຼັກການອອກແບບ ແລະ ພິມເຂົ້າໜ້າສິ່ງພິມ. ດັ່ງນັ້ນ, ການໃຊ້ຕົວອັກສອນຕ້ອງຄຳນຶງເຖິງປະເພດ ແລະ ລັກສະນະຂອງເນື້ອໃນສິ່ງພິມ, ຈຸດປະສົງໃນການຈັດທຳ, ກຸ່ມເປົ້າໝາຍຜູ້ໃຊ້ສິ່ງພິມ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ. ຜູ້ອອກແບບ ແລະ ພິມເຂົ້າໜ້າສິ່ງພິມຄວນຄຳນຶງເຖິງການໃຊ້ຮູບແບບຕົວອັກສອນ ຫຼື ຟອນ (Font) ທີ່ຊ່ວຍໃຫ້ສິ່ງພິມອ່ານງ່າຍ ແລະ ອ່ານອອກຫຼາຍກວ່າລວດລາຍຄວາມສວຍງາມທາງສິລະປະ.

ການອ່ານງ່າຍໝາຍເຖິງ ຄວາມສະບາຍສາຍຕາຂອງຜູ້ອ່ານໃນການອ່ານຂໍ້ຄວາມແລ້ວເຂົ້າໃຈເນື້ອໃນຂອງຂໍ້ຄວາມນັ້ນໄດ້ໄວ ໂດຍບໍ່ຕ້ອງໃຊ້ຄວາມພະຍາຍາມຈ້ອງເລັ່ງສາຍຕາໃຫ້ອ່ານອອກເພື່ອຕີຄວາມ ຫຼື ເດົາເນື້ອໃນຄວາມໝາຍຂອງສິ່ງທີ່ອ່ານ.

ການອ່ານອອກໝາຍເຖິງຄວາມສາມາດໃນການຮັບຮູ້ວ່າມີຕົວອັກສອນປາກົດພາບເດັ່ນຊັດໃນໜ້າເຈ້ຍ ແລະ ຮູ້ວ່າແມ່ນຕົວອັກສອນໃດ, ປະສົມກັນອ່ານອອກວ່າແນວໃດ.

ດັ່ງນັ້ນ, ການເລືອກໃຊ້ຮູບແບບຕົວອັກສອນທີ່ອ່ານງ່າຍເຂົ້າໃຈໄດ້ກົງກັບຄວາມໝາຍຂອງຂໍ້ຄວາມທີ່ສື່ສານອອກໄປ ຕ້ອງຄຳນຶງເຖິງປັດໄຈທີ່ມີຜົນຕໍ່ຄວາມສະບາຍສາຍຕາໃນການອ່ານ ແລະ ຖືກຕ້ອງຕາມຫຼັກໄວຍາກອນລາວ ໄດ້ແກ່ ຮູບແບບຕົວອັກສອນ, ຂະໜາດຕົວອັກສອນ, ຄວາມຍາວຂອງແຖວ, ໄລຍະຫ່າງຂອງຕົວອັກສອນ, ແບບການຈັດຕົວອັກສອນ, ກຸ່ມຜູ້ອ່ານ, ປະເພດສິ່ງພິມ ແລະ ຂະໜາດຂອງສິ່ງພິມ.

### 1. ຮູບແບບຕົວອັກສອນ

ປັດຈຸບັນ ຮູບແບບຕົວອັກສອນ ຫຼື ຟອນ (Font) ຕົວໜັງສື ສຳລັບພາສາລາວມີຫຼາຍແບບ ມີທັງຕົວພິມ ແລະ ຕົວຂຽນ ສຳລັບໃຊ້ໃນຈຸດປະສົງແຕກຕ່າງກັນ ເຊັ່ນ: ໃຊ້ໃນປຶ້ມແບບຮຽນ, ໃຊ້ໃນເອກະສານທາງການ, ໃຊ້ເປັນຫົວຂໍ້, ໃຊ້ໃນງານສິລະປະ (ຕົວປະດິດລວດລາຍ), ໃຊ້ໃນງານໂຄສະນາ ເປັນຕົ້ນ.

ການເລືອກໃຊ້ຟອນສຳລັບເອກະສານ ແລະ ສື່ແຕ່ລະຊະນິດ ຕ້ອງຄຳນຶງເຖິງຄວາມສົມບູນດ້ານເຕັກນິກ (ໃຊ້ກັບໂປຣແກຣມຕ່າງໆໄດ້, ລະຫວ່າງຕົວໜັງສືບໍ່ຖີ່ ຫຼື ຫ່າງເກີນໄປ, ພິມອອກຈະແຈ້ງຊັດເຈນ) ແລະ ຄວາມສົມບູນດ້ານຮູບຮ່າງ, ຄວາມເປັນເອກະລັກຂອງຕົວໜັງສືລາວ (ຕົວລ່ຽມແຕ່ມົນ, ຮູບຮ່າງສວຍງາມ, ບໍ່ຊື່ຈັດແຂງກະດ້າງ, ບໍ່ຈ່ອຍຮຽວຄືພາສາຕ່າງປະເທດ).

ຟອນສຳລັບໃຊ້ໃນສິ່ງພິມທີ່ເປັນປຶ້ມແບບຮຽນ ແລະ ເອກະສານທາງລັດຖະການຄວນເປັນຟອນທີ່ໃຊ້ມາຍາວນານ ແລະ ມີຄວາມສົມບູນທາງດ້ານຮູບຮ່າງ ແລະ ເຕັກນິກການພິມ.

ບໍ່ຄວນໃຊ້ຟອນທີ່ບໍ່ມີຄວາມສົມບູນດ້ານຮູບຮ່າງ ເຊັ່ນ: ພະຍັນຊະນະບໍ່ມີຫົວ, ພະຍັນຊະນະງໍທາງຜິດທາງ, ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວ (ຶ ື ິ ີ) ໃກ້ຄຽງກັນເກີນໄປ (ທາງສັ້ນ); ຮູບຮ່າງວັນນະຍຸດ (່ ້ ໊ ໋), ສະຫຼະ ຸ ູ ແລະ ເຄື່ອງໝາຍວັກຕອນ ທີ່ມີຂະໜາດນ້ອຍ ແລະ ສັ້ນເກີນໄປ ອ່ານຍາກ, ພິມບໍ່ອອກຊັດເຈນ ເປັນຕົ້ນ.

ຕົວຢ່າງລຸ່ມນີ້ແມ່ນປຽບທຽບຟອນທີ່ໄດ້ນຳໃຊ້ຫຼາຍກວ່າໝູ່ ເຊັ່ນ: ຟອນເພັດຊະລາດ ໂອທີ, ຟອນອາລິດ ແລະ ຟອນໄຊເສດຖາ ຢູນີໂຄດ (ປຽບທຽບເບິ່ງມາດຕະຖານຕົວອັກສອນລາວ, ຄວາມສົມສ່ວນ, ສວຍງາມ, ພິມອອກຈະແຈ້ງຄົມຊັດ ແລະ ອ່ານງ່າຍ ຫຼືບໍ່).

- ຟອນເພັດຊະລາດ ໂອທີ (Phetsarath OT)

| | |
|---|---|
| ນັກປາດມີຄວາມຮູ້ | ຊິຟູໆເວົ້າອວດ ບໍ່ດີດາຍ |
| ຍິ່ງແກ່ກໍຍິ່ງກົ້ມ | ສະເໝີເຂົ້າໃນນາ |
| ອັນລາຄາໂຕນີ້ | ໂຕດີບໍ່ທ່ອນຄ່ອງ |
| ໃຫ້ໝູ່ພົງພີ່ນ້ອງ | ຕີໃຫ້ຈຶ່ງສູງ ແທ້ແລ້ວ |

- ຟອນອາລິດ (Alice 1 MX)

| | |
|---|---|
| ນັກປາດມີຄວາມຮູ້ | ຊິຟູໆເວົ້າອວດ ບໍ່ດີດາຍ |
| ຍິ່ງແກ່ກໍຍິ່ງກົ້ມ | ສະເໝີເຂົ້າໃນນາ |
| ອັນລາຄາໂຕນີ້ | ໂຕດີບໍ່ທ່ອນຄ່ອງ |
| ໃຫ້ໝູ່ພົງພີ່ນ້ອງ | ຕີໃຫ້ຈຶ່ງສູງ ແທ້ແລ້ວ |

- ຟອນໄຊເສດຖາ ຢູນີໂຄດ (Saysettha Unicode)

| | |
|---|---|
| ນັກປາດມີຄວາມຮູ້ | ຊິຟູໆເວົ້າອວດ ບໍ່ດີດາຍ |
| ຍິ່ງແກ່ກໍຍິ່ງກົ້ມ | ສະເໝີເຂົ້າໃນນາ |
| ອັນລາຄາໂຕນີ້ | ໂຕດີບໍ່ທ່ອນຄ່ອງ |
| ໃຫ້ໝູ່ພົງພີ່ນ້ອງ | ຕີໃຫ້ຈຶ່ງສູງ ແທ້ແລ້ວ |

## 2. ຂະໜາດຕົວອັກສອນ

ຕົວອັກສອນແຕ່ລະແບບ, ແຕ່ລະຂະໜາດຍ່ອມມີປະໂຫຍດໃນການນຳໃຊ້ແຕກຕ່າງກັນ. ການໃຊ້ພິມຈຶ່ງຄວນຄຳນຶງເຖິງຄວາມເໝາະສົມຂອງແບບ ແລະ ຂະໜາດຕົວພັງສືກັບສິ່ງພິມນັ້ນໆ.

**ຕົວນ້ອຍ** (ຂະໜາດ 8-10) ໃຊ້ສຳລັບລຽງພິມຄຳອະທິບາຍຮູບ, ແຜ່ນພັບ, ໝາຍເຫດທ້າຍໜັງສື, ໃຊ້ພິມສະຫຼາກຢາ ເປັນຕົ້ນ. ບໍ່ຄວນໃຊ້ຕົວນ້ອຍສຳລັບພິມສິ່ງພິມທີ່ຕ້ອງການເວລາອ່ານຫຼາຍ ແລະ ໜັງສືສຳລັບເດັກນ້ອຍ ເພາະເວລາອ່ານຕ້ອງໃຊ້ສາຍຕາຈິດຈໍ່ ອາດຈະເຮັດໃຫ້ເມື່ອຍສາຍຕາ.

**ຕົວທຳມະດາ** (ຂະໜາດ 11-12) ໃຊ້ສຳລັບພິມເນື້ອໃນເອກະສານ, ເນື້ອໃນປຶ້ມແບບຮຽນ ຫຼື ຕຳລາຮຽນຕ່າງໆ ຕະຫຼອດເຖິງໜັງສືພິມ, ວາລະສານ ແລະ ອື່ນໆ. ຕົວທຳມະດາເປັນຂະໜາດຕົວໜັງສືທີ່ໃຊ້ຫຼາຍກວ່າໝູ່ ໃນສິ່ງພິມທົ່ວໄປ.

**ຕົວຂະໜາດກາງ** (14-18) ໃຊ້ສຳລັບພິມເປັນຫົວຂໍ້ເອກະສານຕ່າງໆ ແລະ ໃຊ້ພິມໜັງສືສຳລັບເດັກນ້ອຍ ຫຼື ຜູ້ເຖົ້າ.

**ຕົວຂະໜາດໃຫຍ່** (20-40) ໃຊ້ສຳລັບພິມຊື່ປຶ້ມ, ຫົວຂໍ້ຂ່າວໃນໜັງສືພິມ, ພິມໃນພາວເວີພອຍ ເປັນຕົ້ນ.

**ຕົວຂະໜາດໃຫຍ່ຫຼາຍ** (48-72) ໃຊ້ສຳລັບພິມຊື່ປຶ້ມທີ່ຕ້ອງການຕົວໃຫຍ່, ຫົວຂໍ້ຂ່າວໃນໜັງສືພິມ, ໂປສະເຕີ, ໃບປິວ ແລະ ປ້າຍໂຄສະນາຕ່າງໆ.

## 3. ຄວາມຍາວຂອງແຖວ

ການກຳນົດຄວາມຍາວຂອງແຖວຄວນຄຳນຶງເຖິງຄວາມເໝາະສົມ ແລະ ຄວາມສວຍງາມ, ບໍ່ຄວນກຳນົດໃຫ້ສັ້ນ ຫຼື ຍາວເກີນໄປ, ຄວນໃຫ້ພໍດີກັບໄລຍະກວດສາຍຕາຂອງຜູ້ອ່ານ. ຖ້າຈັດແຖວຍາວເກີນໄປຈະພາໃຫ້ການອ່ານບໍ່ສະດວກ, ແຕ່ຖ້າແຖວສັ້ນເກີນໄປກໍຈະບໍ່ສວຍງາມ. ດັ່ງນັ້ນ, ບາງສິ່ງພິມ ເພິ່ນຈຶ່ງຈັດໜ້າໃຫ້ເປັນຫຼາຍຄໍລຳ ທັງນີ້ກໍເພື່ອຄວາມສະດວກໃນການອ່ານ ແລະ ຄວາມສວຍງາມຂອງໜ້າເອກະສານ.

## 4. ໄລຍະຫ່າງລະຫວ່າງຕົວອັກສອນ

ການຈັດໄລຍະຫ່າງລະຫວ່າງຕົວອັກສອນເປັນສິ່ງສຳຄັນໃນການອອກແບບ, ຈັດວາງ ແລະ ພິມ ທັງນີ້ກໍເພື່ອໃຫ້ສິ່ງພິມມີຄວາມສວຍງາມ, ອ່ານງ່າຍ, ສະບາຍຕາ ແລະ ຊວນອ່ານ. ການຈັດໄລຍະຫ່າງມີ 3 ປະການ ຄື: ໄລຍະຫ່າງລະຫວ່າງຕົວອັກສອນ, ໄລຍະຫ່າງລະຫວ່າງຄຳ ແລະ ໄລຍະຫ່າງລະຫວ່າງແຖວ.

**ໄລຍະຫ່າງລະຫວ່າງຕົວອັກສອນ** (letter spacing) ເປັນການກຳນົດໄລຍະຫ່າງກັນລະຫວ່າງຕົວອັກສອນແຕ່ລະຕົວ ຊຶ່ງຕ້ອງມີຫວ່າງພໍດີງາມ, ບໍ່ຄວນຕິດກັນເກີນໄປພາໃຫ້ອ່ານຍາກ ຫຼື ຫ່າງກັນເກີນໄປພາໃຫ້ເສຍໜ້າເຈ້ຍ ແລະ ບໍ່ງາມ.

**ໄລຍະຫ່າງລະຫວ່າງຄໍາ** (word spacing) ໂດຍທົ່ວໄປແລ້ວ ການຂຽນໜັງສືລາວຈະບໍ່ມີການຍະຫວ່າງລະຫວ່າງຄໍາ, ແຕ່ກໍມີບາງກໍລະນີທີ່ມີການຈຶ່ງໄລຍະຫ່າງລະຫວ່າງຄໍາ ເຊັ່ນ: ໃນປຶ້ມແບບຮຽນ ແລະ ປຶ້ມອ່ານສໍາລັບຊັ້ນອະນຸບານ ແລະ ຊັ້ນປະຖົມສຶກສາປີທີ 1, ໃນຂໍ້ຄວາມທີ່ຕ້ອງການໃຫ້ນັກຮຽນອ່ານນັ້ນ ກໍສາມາດຍະຫວ່າງລະຫວ່າງຄໍາ ທັງນີ້ກໍເພື່ອຄວາມສະດວກໃນການອ່ານຂອງຜູ້ເລີ່ມຮຽນໜັງສືລາວ ແລະ ກັນບໍ່ໃຫ້ໄປຫຼົງກັບຕົວອັກສອນອື່ນທີ່ຢູ່ອ້ອມຂ້າງ. ນອກຈາກນັ້ນ, ກໍມີການຍະຫວ່າງທາງໜ້າ ຫຼື ຫຼັງຂອງຄໍາສັນທານ ຕາມຄວາມເໝາະສົມ.

**ໄລຍະຫ່າງລະຫວ່າງແຖວ** (line spacing) ການເວັ້ນໄລຍະຫ່າງລະຫວ່າງແຖວ ກໍເພື່ອໃຫ້ອ່ານງ່າຍ ແລະ ເບິ່ງສວຍງາມ. ຖ້າແຖວຖີ່ເກີນໄປກໍຈະເຮັດໃຫ້ຕົວໜັງສືທັບຊ້ອນກັນ ໂດຍສະເພາະແມ່ນວັນນະຍຸດກັບສະຫຼະທີ່ຢູ່ລຸ່ມ ຫຼື ຕົວທີ່ມີຫາງຍາວ; ຖ້າແຖວຫ່າງເກີນໄປກໍເປືອງໜ້າເຈ້ຍ ແລະ ບໍ່ສວຍງາມ.

## 5. ແບບການຈັດຕົວອັກສອນ (type composition)

ແບບການຈັດຕົວອັກສອນ ທີ່ເປັນຫົວຂໍ້ ຫຼື ເນື້ອໃນສິ່ງພິມມີຫຼາຍແບບ ຊຶ່ງປັດຈຸບັນແມ່ນມີຢູ່ໃນຄອມພິວເຕີແລ້ວ ສາມາດເລືອກໃຊ້ຕາມຄວາມເໝາະສົມ ເຊັ່ນ: ແບບຊິດຊ້າຍ (Align Left), ແບບຊິດຂວາ (Align Right), ແບບຊ້າຍຂວາພຽງກັນ (Justify), ແບບຢູ່ກາງ (Center) ເປັນຕົ້ນ.

## 6. ກຸ່ມເປົ້າໝາຍຜູ້ອ່ານ

ການເລືອກໃຊ້ຕົວອັກສອນຂະໜາດຕ່າງໆ ຕ້ອງຄໍານຶງເຖິງຄວາມເໝາະສົມກັບກຸ່ມເປົ້າໝາຍຜູ້ອ່ານ ຊຶ່ງມີຫຼາຍປະເພດຫຼາຍສໍາອາຍຸ ເຊັ່ນ: ເດັກນ້ອຍ, ຜູ້ສູງອາຍຸ, ນັກຮຽນ, ນັກສຶກສາ, ຊາວໜຸ່ມ, ຜູ້ໃຫຍ່ໄວທໍາງານ ເປັນຕົ້ນ. ຖ້າກຸ່ມເປົ້າໝາຍຜູ້ອ່ານເປັນເດັກນ້ອຍ ແລະ ຜູ້ເຖົ້າ, ການໃຊ້ຕົວອັກສອນຂະໜາດນ້ອຍຈະພາໃຫ້ອ່ານຍາກ, ຕ້ອງໃຊ້ຕົວອັກສອນຂະໜາດກາງຫາໃຫຍ່ (ຂະໜາດ 14 ຂຶ້ນໄປ); ຖ້າກຸ່ມເປົ້າໝາຍຜູ້ອ່ານເປັນນັກຮຽນມັດທະຍົມ, ນັກສຶກສາ, ຊາວໜຸ່ມ ແລະ ຜູ້ໃຫຍ່ໄວທໍາງານ ສາມາດເລືອກໃຊ້ຕົວອັກສອນຂະໜາດນ້ອຍຫາທໍາມະດາໄດ້ (ຂະໜາດ 10-12).

## 7. ປະເພດຂອງສິ່ງພິມ

ການເລືອກໃຊ້ຕົວອັກສອນຕ້ອງຄຳນຶງເຖິງປະເພດຂອງສິ່ງພິມດ້ວຍ. ຖ້າເປັນສິ່ງພິມປະເພດປຶ້ມແບບຮຽນ ຫຼື ຕຳລາ ຄວນໃຊ້ຂະໜາດຕົວອັກສອນຕາມແຕ່ລະສົກອາຍຸ ເຊັ່ນ: ຊັ້ນອະນຸບານ ແລະ ຊັ້ນປະຖົມປີທີ 1 ໃຊ້ຂະໜາດໃຫຍ່, ປ.2-ປ.3 ໃຊ້ຂະໜາດກາງ, ປ.4-ປ.5 ໃຊ້ຂະໜາດ 14, ມັດທະຍົມໃຊ້ຂະໜາດ 12 ເປັນຕົ້ນ. ຖ້າເປັນສິ່ງພິມປະເພດໜັງສືພິມ ຊຶ່ງຜູ້ອ່ານໃຊ້ເວລາໃນການອ່ານບໍ່ດົນ ສາມາດໃຊ້ຕົວອັກສອນຂະໜາດນ້ອຍໄດ້ ທັງນີ້ກໍເພື່ອໃຫ້ສາມາດບັນຈຸເນື້ອໃນໄດ້ຫຼາຍ ແລະ ປະຢັດເຈ້ຍທີ່ໃຊ້ພິມດ້ວຍ.

## 8. ຂະໜາດຂອງສິ່ງພິມ

ນອກຈາກປະເພດຂອງສິ່ງພິມແລ້ວ, ການເລືອກໃຊ້ຕົວອັກສອນຕ້ອງຄຳນຶງເຖິງຂະໜາດຂອງສິ່ງພິມດ້ວຍ. ໃນສິ່ງພິມຂະໜາດນ້ອຍ ກໍຄວນໃຊ້ຕົວອັກສອນຂະໜາດທຳມະດາ ຫຼື ຂະໜາດນ້ອຍ, ຖ້າສິ່ງພິມມີຂະໜາດໃຫຍ່ກໍຄວນໃຊ້ຕົວອັກສອນຂະໜາດໃຫຍ່ ເຊັ່ນ: ປ້າຍຄຳຂວັນ, ປ້າຍໂຄສະນາ ເປັນຕົ້ນ.

ໃນສິ່ງພິມທີ່ເປັນປຶ້ມແບບຮຽນນິຍົມໃຊ້ຂະໜາດ 18x25 ຊັງຕີແມັດ ຫຼື B5, ສ່ວນປຶ້ມຄູ່ມືຄູແມ່ນຂະໜາດ 21x29,7 ຊັງຕີແມັດ ຫຼື A4. ທັງສອງຂະໜາດນີ້ໃຊ້ຂະໜາດຕົວໜັງສືແຕກຕ່າງກັນດັ່ງທີ່ກ່າວມາແລ້ວໃນຂໍ້ກຸ່ມເປົ້າໝາຍຜູ້ອ່ານ.

ນອກຈາກນີ້, ຜູ້ອອກແບບ ແລະ ພິມຄວນຄຳນຶງເຖິງຄວາມໜາ (ເຂັ້ມ) ແລະ ບາງຂອງຕົວອັກສອນ ແລະ ຟອນທີ່ໃຊ້ເພື່ອໃຫ້ເໝາະສົມກັບລັກສະນະຂອງຂໍ້ຄວາມໃນສິ່ງພິມ ເຊັ່ນ: ຂໍ້ຄວາມທີ່ເປັນຫົວຂໍ້ ແລະ ຈຸດທີ່ຕ້ອງການເນັ້ນ ກໍພິມເປັນຕົວໜາ ຫຼື ເຂັ້ມ, ສ່ວນເນື້ອໃນທົ່ວໄປກໍພິມເປັນຕົວທຳມະດາ ເປັນຕົ້ນ.



## ຮູບແບບຕົວອັກສອນລາວ ໃນປຶ້ມແບບຮຽນ ຂອງກະຊວງສຶກສາທິການ ແລະ ກິລາ

■ ພະຍັນຊະນະ



ອ ຮ

ຫງ ຫຍ ໜ ໝ ຫຼ ຫວ

■ ສະຫຼະ

Xະ Xາ Xິ Xີ Xຶ Xື

Xຸ Xູ ເXະ ເX

ແXະ ແX ໂXະ ໂX

ເXາະ Xໍ ເXິ ເXີ

ເXັຍ ເXຍ Xົວະ Xົວ

ເXຶອ ເXືອ

ໄX ໃX ເXົາ Xໍາ

■ ສະຫຼະປ່ຽນຮູບ ແລະ ສະຫຼະຫຼຸດຮູບເມື່ອມີຕົວສະກົດ

XັX ເXັX ແXັX XົX

Xັອ X    Xອ X    Xັຽ X

Xຽ X    Xັວ X    Xວ X

■ ວັນນະຍຸດ

X່    X້    X໊    X໋

■ ເລກລາວ

໐    ໑    ໒    ໓    ໔

໕    ໖    ໗    ໘    ໙

## ລະດັບການຈັດລຽງພິມ

**1. ລະດັບທີ 1**: ່ ້ ໊ ໋ ຕົວອັກສອນເຫຼົ່ານີ້ຈະເລື່ອນໄປຢູ່ລະດັບທີສອງ ຖ້າຕຳແໜ່ງນັ້ນບໍ່ມີຕົວອັກສອນອື່ນຢູ່

**2. ລະດັບທີ 2**: ັ ິ ີ ຶ ື ົ ໍ

**3. ລະດັບທີ 3**: ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ ຫງ ຫຍ ໜ ໝ ຫຼ ຫວ ະ າ ເ ແ ໂ ຽ ໄ ໃ

**4. ລະດັບທີ 4**: ຼ

**5. ລະດັບທີ 5**: ຸ ູ ຕົວອັກສອນເຫຼົ່ານີ້ຈະເລື່ອນໄປຢູ່ລະດັບທີສີ່ ຖ້າຕຳແໜ່ງນັ້ນບໍ່ມີຕົວອັກສອນອື່ນຢູ່



# ພາກທີ II
# ຫຼັກການພື້ນຖານການນຳໃຊ້ຄຳໃນພາສາລາວ

## I. ພະຍາງ

### 1. ຄວາມໝາຍຂອງພະຍາງ

ພະຍາງ ແມ່ນສຽງເວົ້າທີ່ເປັ່ງອອກມາເທື່ອໜຶ່ງ ມີ ຫຼື ບໍ່ມີຄວາມໝາຍກໍໄດ້. ສຽງທີ່ເປັ່ງອອກມາເທື່ອໜຶ່ງ ເອີ້ນວ່າ 1 ພະຍາງ, ສຽງເປັ່ງອອກມາສອງເທື່ອ ເອີ້ນວ່າ 2 ພະຍາງ ເຊັ່ນ:

| | |
|---|---|
| ບ້ານ | ມີ 1 ພະຍາງ |
| ນະຄອນ | ມີ 2 ພະຍາງ |
| ສາລິກາ | ມີ 3 ພະຍາງ |
| ວັນນະຄະດີ | ມີ 4 ພະຍາງ |
| ລັດຖະທຳມະນູນ | ມີ 5 ພະຍາງ |

### 2. ການປະສົມອັກສອນເປັນພະຍາງ

ພະຍາງໜຶ່ງແມ່ນໄດ້ມາຈາກການປະສົມອັກສອນ ຊຶ່ງມີ 4 ແບບດ້ວຍກັນ ດັ່ງນີ້:

**2.1 ການປະສົມອັກສອນສອງສ່ວນ** ໄດ້ແກ່ ພະຍັນຊະນະ + ສະຫຼະ ເຊັ່ນ: ປາ, ງູ, ເສືອ ເປັນຕົ້ນ.

**2.2 ການປະສົມອັກສອນສາມສ່ວນ** ໄດ້ແກ່:

- ພະຍັນຊະນະ + ສະຫຼະ + ວັນນະຍຸດ ເຊັ່ນ: ຂ່າ, ຈີ່, ໝູ່ ເປັນຕົ້ນ.
- ພະຍັນຊະນະແກນ (ຕົ້ນພະຍາງ) + ຕົວຄວບ + ສະຫຼະ ເຊັ່ນ: ໄກວ, ຂວາ, ງວຳ ເປັນຕົ້ນ.
- ພະຍັນຊະນະແກນ + ສະຫຼະ + ຕົວສະກົດ ເຊັ່ນ: ຊານ, ບິນ, ແປດ ເປັນຕົ້ນ.

**2.3 ການປະສົມອັກສອນສີ່ສ່ວນ** ໄດ້ແກ່:

- ພະຍັນຊະນະແກນ + ຕົວຄວບ + ສະຫຼະ + ວັນນະຍຸດ ເຊັ່ນ: ໄຂວ່, ຄວ້າ ເປັນຕົ້ນ.
- ພະຍັນຊະນະແກນ + ຕົວຄວບ + ສະຫຼະ + ຕົວສະກົດ ເຊັ່ນ: ຂວາງ, ຄວາຍ, ຈວາດ ເປັນຕົ້ນ.
- ພະຍັນຊະນະແກນ + ສະຫຼະ + ວັນນະຍຸດ + ຕົວສະກົດ ເຊັ່ນ: ຍ່ານ, ດົ້ນ, ພ້ອມ ເປັນຕົ້ນ.

**2.4 ການປະສົມອັກສອນຫ້າສ່ວນ** ໄດ້ແກ່:

- ພະຍັນຊະນະແກນ + ຕົວຄວບ + ສະຫຼະ + ວັນນະຍຸດ + ຕົວສະກົດ ເຊັ່ນ: ກວ້າງ, ສວ່າງ, ຊວ້ານ ເປັນຕົ້ນ.

## 3. ລັກສະນະຂອງພະຍາງ

### 3.1 ພະຍາງໄຂ ແລະ ພະຍາງອັດ

ອີງຕາມຊະນິດຂອງສະຫຼະທີ່ມາປະກອບ ພະຍາງແບ່ງອອກເປັນ 2 ປະເພດ ຄື: ພະຍາງໄຂ ແລະ ພະຍາງອັດ.

1) **ພະຍາງໄຂ** (ພະຍາງເປີດ) ແມ່ນພະຍາງທີ່ປະກອບດ້ວຍ ພະຍັນຊະນະແກນ ສະຫຼະ ແລະ ວັນນະຍຸດ ເຊັ່ນ: ຕາ, ສີ, ແມ່, ຮູ້ ເປັນຕົ້ນ.
2) **ພະຍາງອັດ** (ພະຍາງປິດ) ແມ່ນພະຍາງທີ່ປະກອບດ້ວຍ ພະຍັນຊະນະແກນ, ສະຫຼະ, ວັນນະຍຸດ ແລະ ຕົວສະກົດ ເຊັ່ນ: ກາຍ, ສົມ, ເອັ້ນ, ຈອບ ເປັນຕົ້ນ.

**ໝາຍເຫດ**: ພະຍາງທີ່ມີສະຫຼະ ໃx ໄx ເxົາ xໍາ ຈັດຢູ່ໃນພະຍາງອັດ ເພາະສະຫຼະທັງສີ່ນີ້ ແມ່ນມີສຽງຕົວສະກົດຢູ່ໃນຕົວ.

### 3.2 ພະຍາງເປັນ ແລະ ພະຍາງຕາຍ

ອີງຕາມຄວາມສາມາດໃນການຜັນສຽງ ພະຍາງແບ່ງອອກເປັນ 2 ຊະນິດ ຄື: ພະຍາງເປັນ ແລະ ພະຍາງຕາຍ.

**1) ພະຍາງເປັນ**

ພະຍາງເປັນແມ່ນພະຍາງທີ່ສາມາດຜັນສຽງໄປກັບວັນນະຍຸດໄດ້ ຊຶ່ງປະກອບດ້ວຍ:

- ສະຫຼະສຽງຍາວ ທີ່ບໍ່ມີຕົວສະກົດ ເຊັ່ນ: ກາ, ຄື, ສູ່, ໂປ້...
- ສະຫຼະສຽງຍາວ ແລະ ຕົວສະກົດເປັນ (ງ ຍ ນ ມ ວ) ເຊັ່ນ: ກາງ, ຄືນ, ຈິ້ມ, ຕ່າວ ເປັນຕົ້ນ.
- ສະຫຼະສຽງສັ້ນ ແລະ ຕົວສະກົດເປັນ ເຊັ່ນ: ກັງ, ລຸຍ, ຊິນ, ລິ້ວ ເປັນຕົ້ນ.
- ສະຫຼະພິເສດ ເຊັ່ນ: ໄປ, ໃສ, ເຜົ່າ, ລໍ້າ ເປັນຕົ້ນ.

**ໝາຍເຫດ**: ຖ້າພະຍັນຊະນະແກນເປັນອັກສອນກາງ ສາມາດຜັນສຽງວັນນະຍຸດໄດ້ທຸກໄມ້ ເຊັ່ນ: ກ່າ ກ້າ ກ໊າ ກ໋າ, ບິ່ນ ບິ້ນ ບິ໊ນ ບິ໋ນ; ຖ້າພະຍັນຊະນະແກນເປັນອັກສອນສູງ ຫຼື ອັກສອນຕໍ່າ ສາມາດຜັນສຽງວັນນະຍຸດໄດ້ 2 ໄມ້ ຄື: ໄມ້ເອກ x່ ແລະ ໄມ້ໂທ x້ ເຊັ່ນ: ຂ່າ ຂ້າ ຄ່າ ຄ້າ, ສັ່ນ ສັ້ນ ຊັ່ນ ຊັ້ນ.

**2) ພະຍາງຕາຍ**

ພະຍາງຕາຍ ແມ່ນພະຍາງທີ່ສາມາດຜັນສຽງວັນນະຍຸດໄດ້ໃນວົງຈໍາກັດ ຖ້າທຽບກັບພະຍາງເປັນ ຊຶ່ງປະກອບດ້ວຍ:

- ສະຫຼະສຽງສັ້ນ ບໍ່ມີຕົວສະກົດ ເຊັ່ນ: ກະ ຊິ ຈິ ດຸ... (ຖ້າເປັນອັກສອນກາງສາມາດ

ຜັນສຽງໄມ້ຕີ ໄດ້ ດັ່ງ ຈ໊ະ, ໂປ໊ະ ເປັນຕົ້ນ)

- ສະຫຼະສຽງສັ້ນ ມີຕົວສະກົດຕາຍ ເຊັ່ນ: ກັກ ກັ໊ກ ຈ້ອດ ຈ໊ອດ...

- ສະຫຼະສຽງຍາວ ມີຕົວສະກົດຕາຍ ເຊັ່ນ: ກາບ ກ້າບ ອູດ ອູ້ດ...

**ໝາຍເຫດ**: ຖ້າພະຍັນຊະນະແກນເປັນອັກສອນກາງ ປະກອບສະຫຼະສຽງສັ້ນ ມີ ຫຼື ບໍ່ມີຕົວສະກົດຕາຍ ສາມາດຜັນສຽງວັນນະຍຸດຕີ ໄດ້ ເຊັ່ນ: ກ໊ະ ບຸ໊ ກ໊ອກ ປິ໊ບ; ຖ້າພະຍັນຊະນະແກນເປັນອັກສອນກາງ ປະກອບສະຫຼະສຽງຍາວ ມີຕົວສະກົດຕາຍ ສາມາດຜັນສຽງວັນນະຍຸດໂທ ໄດ້ ເຊັ່ນ: ກ້າບ ປີ້ດ ຈ້າກ...

## 4. ການອ່ານພະຍາງ

### 4.1 ການອ່ານອອກສຽງທຳມະດາ

ການອ່ານອອກສຽງ ແມ່ນການອ່ານໂດຍເປັ່ງສຽງຕາມຕົວອັກສອນ, ພະຍາງ, ຖ້ອຍຄຳ ແລະ ເຄື່ອງໝາຍຕ່າງໆທີ່ກຳນົດໄວ້ໃຫ້ຖືກຕ້ອງ. ການອ່ານອອກສຽງນີ້ ຜູ້ອ່ານຕ້ອງອ່ານໃຫ້ຈະແຈ້ງ, ຖືກຕ້ອງຕາມຫຼັກພາສາ ແລະ ຄວາມນິຍົມ; ຄວນຄຳນຶງເຖິງລະດັບສຽງວັນນະຍຸດ, ການເນັ້ນສຽງເບົາ-ໜັກຂອງພະຍາງ, ການປ່ຽນຄວາມໄວ (ຊ້າ-ໄວ) ໃຫ້ດັງພໍທີ່ຜູ້ຟັງຈະໄດ້ຍິນທົ່ວເຖິງກັນ.

### 4.2 ການອ່ານພະຍາງເບົາ ແລະ ພະຍາງໜັກ

ພະຍາງເບົາ ແມ່ນພະຍາງທີ່ອອກສຽງແບບບໍ່ເນັ້ນສຽງ. ສ່ວນພະຍາງໜັກ ແມ່ນພະຍາງທີ່ອອກສຽງແບບເນັ້ນສຽງໜັກ.

ຫຼັກການສັງເກດວ່າພະຍາງໃດເປັນພະຍາງເບົາ ຫຼື ພະຍາງໜັກ ມີດັ່ງນີ້:

1) ຄຳທີ່ເປັນຄຳເຊື່ອມຕໍ່ ອອກສຽງເປັນພະຍາງເບົາ.

ຕົວຢ່າງ: ເງິນ**ແລະ**ຄຳ

ອ້າຍ**ກັບ**ນ້ອງ

ກິນເຂົ້າແລ້ວ**ຈຶ່ງ**ຮຽນໜັງສື

ໃຫຍ່**ຫຼື**ນ້ອຍ**ກໍ**ເປັນໝູ່ດຽວກັນ

ຄົນ**ຜູ້**ມີຄວາມຮູ້**ກໍ**ມີການງານດີ

**ໝາຍເຫດ**: ຕົວເຂັ້ມໝາຍເຖິງພະຍາງເບົາ, ສ່ວນຕົວບໍ່ເຂັ້ມໝາຍເຖິງພະຍາງໜັກໃນເວລາອ່ານ. ຢ່າງໃດກໍດີ, ຫາກຜູ້ເວົ້າຕ້ອງການເນັ້ນ ກໍອາດອອກສຽງຄຳເຊື່ອມຕໍ່ເປັນພະຍາງໜັກໄດ້.

ຕົວຢ່າງ: ເຈົ້າຊິເອົາເງິນ **ຫຼື** ອຸດົມການ?

ປຶ້ມຫົວນີ້ຢືມໄປອ່ານໄດ້ **ແຕ່**ຫ້າມເອົາໄປເລີຍ.

**ໝາຍເຫດ**: ຕົວເຂັ້ມໝາຍເຖິງພະຍາງໜັກໃນເວລາອ່ານ.

2) ຄຳຊ່ວຍຕ່າງໆ ທີ່ປາກົດຢູ່ໜ້າຄຳກິລິຍາ ອອກສຽງເປັນພະຍາງເບົາ.

ຕົວຢ່າງ: **ຈະ**ເຮັດຫຍັງ ຕ້ອງ**ໃຫ້**ມີສະຕິ.

**ໝາຍເຫດ**: ຕົວເຂັ້ມໝາຍເຖິງພະຍາງເບົາ, ສ່ວນຕົວບໍ່ເຂັ້ມໝາຍເຖິງພະຍາງໜັກໃນເວລາອ່ານ.

3) ຄຳຊ່ວຍຕ່າງໆ ທີ່ປາກົດຢູ່ຫຼັງຄຳກິລິຍາ ອອກສຽງເປັນພະຍາງເບົາ.

ຕົວຢ່າງ: ລາວຍ່າງອອກ**ໄປ**ດົນແລ້ວ

ເອື້ອຍເອົາເຂົ້າໜົມ**ໃຫ້**ນ້ອງ.

4) ຄຳລົງທ້າຍຕ່າງໆ ອອກສຽງເປັນພະຍາງເບົາ.

ຕົວຢ່າງ: ເມື່ອ**ເທາະ** ຝົນຊິຕົກແລ້ວ,

ກິນ**ແມ**, ແຊບ**ໄດ໋**.

ໃນບາງກໍລະນີ, ຫາກຜູ້ເວົ້າຕ້ອງການເນັ້ນ ກໍອາດອອກສຽງຄຳລົງທ້າຍເປັນພະຍາງໜັກໄດ້.

ຕົວຢ່າງ: ຟັງ**ເດີ**!

ມາກິນເຂົ້າ**ທະແມ**!

ບໍ່ແມ່ນ**ຕີ໊**!

5) ຄຳ 2 ພະຍາງ ພະຍາງທຳອິດຊຶ່ງອອກສຽງເປັນສະຫຼະສຽງສັ້ນ ມັກຈະເປັນພະຍາງເບົາ.

ຕົວຢ່າງ: **ສະ**ໜາມ **ວິ**ຊາ **ປະ**ກອບ **ກະ**ປອມ **ຖະ**ໜົດ **ຄະ**ຕິ **ມະ**ນີ...

6) ຄຳ 3 ພະຍາງ ພະຍາງທີ່ອອກສຽງເບົາ ມັກເປັນພະຍາງທີ 1 ຫຼື ພະຍາງທີ 2 ຫຼື ພະຍາງທີ 1 ແລະ 2.

- ພະຍາງທີ 1 ເປັນພະຍາງເບົາ

ຕົວຢ່າງ: **ສະ**ບາຍດີ **ທະ**ນາຄານ **ປະ**ຊາຊົນ **ພະ**ຍາບານ **ອະ**ນາຄົດ

- ພະຍາງທີ 2 ເປັນພະຍາງເບົາ

ຕົວຢ່າງ: ກໍ**ລະ**ນີ ບໍ**ລິ**ຫານ ທຸ**ລະ**ກິດ ມັດ**ທະ**ຍົມ ມິດ**ຕະ**ພາບ ລັດ**ຖະ**ບານ

- ພະຍາງທີ 1 ແລະ 2 ເປັນພະຍາງເບົາ

ຕົວຢ່າງ: **ກິລິ**ຍາ **ສຸລິ**ຍາ **ສະຕະ**ວັດ **ສະມະ**ນະ **ປະຕິ**ວັດ

7) ຄຳ 4 ພະຍາງ: ພະຍາງທີ 1 ແລະ 3 ມັກອອກສຽງເປັນພະຍາງເບົາ.

ຕົວຢ່າງ: **ກະ**ຕຸກ**ກະ**ຕັກ **ກະ**ດັດ**ກະ**ດໍ້ **ຂະ**ມັງ**ຂະ**ມໍ **ສະ**ຖາ**ນະ**ການ **ສະ**ໜິດ**ສະ**ໜົມ

## II. ຄຳ

### 1. ຄວາມໝາຍຂອງຄຳ

ຄຳ ແມ່ນສຽງທີ່ເປັ່ງອອກມາ ຊຶ່ງມີຄວາມໝາຍຢ່າງໃດຢ່າງໜຶ່ງ ເປັນໜ່ວຍຄວາມໝາຍທີ່ນ້ອຍສຸດໃນພາສາ ສາມາດປາກົດຕາມລຳພັງໄດ້ ອາດມີໜຶ່ງພະຍາງ ຫຼື ຫຼາຍພະຍາງ.

ຕົວຢ່າງ:

| | | |
|---|---|---|
| ຄົນ | 1 ຄຳ | 1 ພະຍາງ |
| ສະບາຍ | 1 ຄຳ | 2 ພະຍາງ |
| ກະທັດຮັດ | 1 ຄຳ | 3 ພະຍາງ |
| ວິທະຍາໄລ | 1 ຄຳ | 4 ພະຍາງ |
| ລັດຖະທຳມະນູນ | 1 ຄຳ | 5 ພະຍາງ |

### 2. ອົງປະກອບຂອງຄຳ

ຄຳແຕ່ລະຄຳລ້ວນແຕ່ມີອົງປະກອບ 2 ຢ່າງ ຄື: ສຽງ ແລະ ຄວາມໝາຍ.

#### 2.1 ສຽງ

ຄົນເຮົາເມື່ອຢາກສື່ຄວາມໝາຍໃດໜຶ່ງໃຫ້ຜູ້ອື່ນຮັບຮູ້ ແລະ ເຂົ້າໃຈຈະຕ້ອງອາໄສສຽງ. ຄຳທຸກຄຳທີ່ໃຊ້ຂຽນ, ໃຊ້ຄົ້ນຄິດ ຫຼື ເວົ້າຈາລ້ວນແຕ່ອາໄສສຽງເປັນອົງປະກອບພື້ນຖານ. ຖ້າບໍ່ມີສຽງ ເພິ່ນບໍ່ສາມາດເອີ້ນວ່າ ຄຳ ໄດ້.

ຕົວຢ່າງ: ເຮືອນ, ນົກ, ກິນ... ຄຳເຫຼົ່ານີ້ລ້ວນແຕ່ມີສຽງສະເພາະຂອງແຕ່ລະຄຳແຕກຕ່າງກັນໄປ.

#### 2.2 ຄວາມໝາຍ

ຄວາມໝາຍ ໝາຍເຖິງໃຈຄວາມຂອງແຕ່ລະສຽງທີ່ສະແດງອອກ. ຖ້າມີແຕ່ສຽງແຕ່ບໍ່ໄດ້ສະແດງເຖິງໃຈຄວາມຢ່າງໃດຢ່າງໜຶ່ງເພິ່ນບໍ່ສາມາດເອີ້ນວ່າ ຄຳ ໄດ້.

ຕົວຢ່າງ: ເຮືອນ ໝາຍເຖິງສິ່ງທີ່ປຸກສ້າງສຳລັບພັກພາອາໄສ.

ນົກ ໝາຍເຖິງສັດປີກຊະນິດໜຶ່ງ.

ກິນ ໝາຍເຖິງເອົາອາຫານເຂົ້າປາກ ແລ້ວກໍກືນລົງທ້ອງ.

ຄຳໜຶ່ງຄຳອາດມີຫຼາຍຄວາມໝາຍທັງຄວາມໝາຍກົງ ແລະ ຄວາມໝາຍອ້ອມ. ຄຳທີ່ມີຄວາມໝາຍກົງແມ່ນຄຳທີ່ມີຄວາມໝາຍປະຈຳຄຳ ຊຶ່ງວັດຈະນານຸກົມໄດ້ໃຫ້ນິຍາມໄວ້ແລ້ວ. ສ່ວນຄຳທີ່ມີຄວາມໝາຍອ້ອມ ແມ່ນຄຳທີ່ມີຄວາມໝາຍບໍ່ຄືກັບຄວາມໝາຍປະຈຳຄຳ ຊຶ່ງຕ້ອງອາໄສການຕີຄວາມ ອາດມີຄວາມໝາຍດ້ານການປຽບທຽບ.

ສະນັ້ນ, ເມື່ອເວົ້າເຖິງຄຳ ຈະແມ່ນຄຳຊະນິດໃດ ຫຼື ປະເພດໃດກໍຕາມ ລ້ວນແຕ່ມີອົງປະກອບຢູ່ສອງດ້ານ ຄື: ສຽງ ແລະ ຄວາມໝາຍ.



## III. ລັກສະນະຂອງການສ້າງຄຳໃນພາສາລາວ

ຄຳໃນພາສາລາວແຕ່ດັ້ງເດີມປະກອບດ້ວຍຄຳພະຍາງດຽວ ຕໍ່ມາໄດ້ມີການສ້າງຄຳຈາກຄຳເຄົ້າລາວເດີມປະສົມເຂົ້າກັນເປັນ ຄຳປະສົມ, ຄຳຊ້ອນ ແລະ ຄຳຊ້ຳ. ເມື່ອໄດ້ຮັບເອົາຄຳປາລີ-ສັນສະກິດ ແລະ ພາສາອື່ນມາໃຊ້ ກໍມີການສ້າງຄຳແບບຄຳສະໝາດ, ຄຳສົນທິ ແລະ ຄຳແຜງ.

### 1. ຄຳເຄົ້າ

ຄຳເຄົ້າ ແມ່ນຄຳເວົ້າຄຳໜຶ່ງ ທີ່ມີຄວາມໝາຍຢ່າງໜຶ່ງມາຕັ້ງແຕ່ເດີມ, ເປັນຄຳທີ່ບໍ່ໄດ້ປະສົມກັບຄຳອື່ນ, ມີທັງຄຳເຄົ້າລາວເດີມ ແລະ ຄຳເຄົ້າທີ່ມາຈາກພາສາອື່ນ ເຊັ່ນ: ດິນ, ນ້ຳ, ລົມ, ໄຟ, ວິຊາ, ວິທະຍາ, ໂຊເຟີ, ຄອມພິວເຕີ ເປັນຕົ້ນ.

#### 1.1 ຄຳເຄົ້າລາວເດີມ

ຄຳເຄົ້າລາວເດີມ ແມ່ນຄຳທີ່ເປັນມໍລະດົກຕົກທອດມາຈາກບັນພະບຸລຸດລາວເຮົາ. ສ່ວນຫຼາຍເປັນຄຳປ່ຽວ ຫຼື ຄຳໂດດ ມີພຽງພະຍາງດຽວ ເຊັ່ນ: ພໍ່, ແມ່, ບ້ານ, ເຮືອນ, ດິນ, ນ້ຳ, ລົມ, ໄຟ, ງົວ, ຄວາຍ, ເປັດ, ໄກ່, ກິນ, ນອນ, ສູງ, ຕ່ຳ, ດຳ, ຂາວ ເປັນຕົ້ນ.

#### 1.2 ຄຳເຄົ້າທີ່ມາຈາກພາສາປາລີ-ສັນສະກິດ

ພາສາປາລີ ແລະ ພາສາສັນສະກິດ ແມ່ນພາສາອິນເດຍສະໄໝບູຮານທີ່ໃຊ້ບັນທຶກພະທຳຄຳສອນຂອງສາສະໜາພຸດ ແລະ ພາມ ຊຶ່ງເປັນສາສະໜາທີ່ຊາວລາວເຮົາໄດ້ນັບຖື. ພາຍຫຼັງມີການແປຄຳພີດີກາຈາກສອງພາສາດັ່ງກ່າວ ຄຳປາລີ-ສັນສະກິດ ກໍໄດ້ຖືກນຳໃຊ້ໄປຄຽງຄູ່ກັບຄຳລາວເດີມ ໂດຍໄດ້ແປງສຽງໃຫ້ເຂົ້າກັບສຳນຽງຂອງຄົນລາວ ເຊັ່ນ: ປັນຍາ, ວິຊາ, ວັດຖຸ, ອັກສອນ, ສຶກສາ, ປັດຊະຍາ ເປັນຕົ້ນ.

#### 1.3 ຄຳເຄົ້າທີ່ຢືມມາຈາກພາສາອື່ນໆ

ນອກຈາກຄຳເຄົ້າລາວເດີມ ແລະ ຄຳເຄົ້າລາວຈາກພາສາປາລີ-ສັນສະກິດແລ້ວ, ໃນພາສາລາວກໍຍັງມີຄຳເຄົ້າທີ່ຢືມມາຈາກພາສາອື່ນໆ ເຊັ່ນ: ພາສາຂະແມ, ພາສາຈີນ, ພາສາຫວຽດ, ພາສາໄທ, ພາສາຝຣັ່ງ, ພາສາອັງກິດ ແລະ ອື່ນໆ. ຄຳເຄົ້າລາວຈາກພາສາອື່ນໆ ເອີ້ນວ່າ “ຄຳຢືມ” ດັ່ງຕົວຢ່າງຕໍ່ໄປນີ້:

**1) ຄຳຢືມຈາກພາສາຂະແມ**: ກຳຈັດ, ຈະເລີນ, ສັງກັດ, ສຳຫຼວດ, ຖະໜົນ, ເພີງ, ທຳລາຍ, ບັງເອີນ, ລະບຽບ, ອຳນາດ...

**2) ຄຳຢືມຈາກພາສາຈີນ**: ເສັ້ງ, ຍີ່ຫໍ້, ເຮັງ, ຊວຍ, ຫຸ້ນ, ເຕົ້າຮູ້, ຫວຍ, ເກົ້າອີ້, ຊີອິ້ວ, ກຸຍເຮັງ...

**3) ຄຳຢືມຈາກພາສາຫວຽດ**: ດັກກົງ, ບັນແສ່ວ, ບັນກວນ, ແໜມເນືອງ, ເຝີ...

**4) ຄຳຢືມຈາກພາສາໄທ**: ຊັດເຈນ, (ໃກ້) ຊິດ, ຊູລົດ, ປະເດັນ, ວິ້ງ (ເຕັ້ນ), ທະຍອຍ...

**5) ຄຳຢືມຈາກພາສາຝຣັ່ງ**: ກາເຟ, ແອັດຊັງ, ບານ, ກາລະວັດ, ຊັງດານ, ປະຕັງ, ແກັດ, ສະຫຼູດ, ຕັກຊີ, ບາໂລ, ບີດົງ...

**6) ຄຳຢືມພາສາອັງກິດ**: ເກມ, ເຄັກ, ຄອນເສີດ, ຄອມພິວເຕີ, ແຟັກ, ອີເມວ, ສຳມະນາ, ໄວຣັດ, ເວັບໄຊ, ອິນເຕີເນັດ...

## 2. ການສ້າງຄຳໃນພາສາລາວ

ການສ້າງຄຳໃນພາສາລາວ ມີນຳກັນ 6 ແບບຕົ້ນຕໍ ຄື: ຄຳປະສົມ, ຄຳຊ້ອນ, ຄຳຊ້ຳ, ຄຳສະໜາດ, ຄຳສົນທິ ແລະ ຄຳແຜງ.

### 2.1 ຄຳປະສົມ

ຄຳປະສົມ ແມ່ນການນຳເອົາຄຳເຄົ້າທີ່ມີຄວາມໝາຍຕ່າງກັນຕັ້ງແຕ່ 2 ຄຳຂຶ້ນໄປມາລວມເປັນຄຳດຽວ ແລ້ວເກີດຄຳໃໝ່ ແລະ ມີຄວາມໝາຍໃໝ່, ແຕ່ຍັງຄົງມີເຄົ້າຄວາມໝາຍເດີມຢູ່. ຄຳທີ່ນຳມາປະສົມກັນນັ້ນ ອາດເປັນຄຳລາວກັບຄຳລາວ ຫຼື ຄຳລາວກັບຄຳຕ່າງປະເທດ ຫຼື ຄຳຕ່າງປະເທດກັບຄຳຕ່າງປະເທດກໍໄດ້ ດັ່ງຕົວຢ່າງຕໍ່ໄປນີ້:

- ຄຳລາວ + ຄຳລາວ ເຊັ່ນ: ໄຟຟ້າ, ແມ່ນ້ຳ, ຢາສູບ, ແພອັດປາກ...
- ຄຳລາວ + ຄຳປາລີ-ສັນສະກິດ ເຊັ່ນ: ຫ້ອງການ, ດວງຈັນ, ລາຊະວັງ...
- ຄຳລາວ + ຂະແມ ເຊັ່ນ: ທາງເດີນ, ຮ້ານບັນເທີງ...
- ຄຳລາວ + ຈີນ ເຊັ່ນ: ຂົ້ວໝີ່, ນ້ຳເຕົ້າຮູ້, ຫຸ້ນສ່ວນ...
- ຄຳລາວ + ຝຣັ່ງ ເຊັ່ນ: ໝາກບານ, ເກີບຊັງດານ, ຍຳສະຫຼັດ...
- ຄຳລາວ + ອັງກິດ ເຊັ່ນ: ເສື້ອເຊີດ, ເຊື້ອໄວຣັດ, ສາຍອິນເຕີເນັດ...

ເມື່ອປະສົມເປັນຄຳໃໝ່ແລ້ວ ບໍ່ອາດແຍກສ່ວນ ຫຼື ສັບປ່ຽນຕຳແໜ່ງຄຳທີ່ປະສົມແລ້ວນັ້ນ ໂດຍໃຫ້ມີຄວາມໝາຍເໝືອນເດີມໄດ້; ຄຳປະສົມຈະຕ້ອງປະກອບດ້ວຍ 2 ສ່ວນ ຄື: ສ່ວນໜຶ່ງເປັນຄຳຫຼັກ ແລະ ອີກສ່ວນໜຶ່ງເປັນຄຳປະກອບເພື່ອຂະຫຍາຍ ເຊັ່ນ: ຕັ່ງປລາສະຕິກ ເປັນຕົ້ນ.

## 2.2 ຄຳຊ້ອນ

ຄຳຊ້ອນ ແມ່ນຄຳທີ່ເກີດຈາກການນຳເອົາຄຳຕັ້ງແຕ່ 2 ຄຳຂຶ້ນໄປມາຮຽງຕໍ່ກັນ ໂດຍແຕ່ລະຄຳນັ້ນມີຄວາມສຳພັນກັນໃນດ້ານຄວາມໝາຍ ຫຼື ດ້ານສຽງ ເພື່ອໃຫ້ມີຄວາມໝາຍຈະແຈ້ງຍິ່ງຂຶ້ນ, ມີສຽງຄ່ອງກັນ ແລະ ມ່ວນ. ເວລາຂຽນຄຳຊ້ອນບໍ່ຕ້ອງໃສ່ເຄື່ອງໝາຍຂີດຕໍ່ (-) ລະຫວ່າງຄຳ. ຄຳຊ້ອນມີ 2 ຢ່າງ ຄື: ຄຳຊ້ອນເພື່ອຄວາມໝາຍ ແລະ ຄຳຊ້ອນເພື່ອສຽງ.

**1) ຄຳຊ້ອນເພື່ອຄວາມໝາຍ** ແມ່ນການນຳເອົາຄຳທີ່ມີຄວາມໝາຍຄືກັນ, ຄ້າຍຄືກັນ ຫຼື ກົງກັນຂ້າມກັນ ຊຶ່ງເປັນຄຳປະເພດດຽວກັນມາຊ້ອນເຂົ້າກັນ ເພື່ອໃຫ້ຄວາມໝາຍຊັດເຈນຍິ່ງຂຶ້ນ.

- ຄຳຊ້ອນທີ່ເກີດຈາກການນຳຄຳທີ່ມີຄວາມໝາຍຄືກັນມາຊ້ອນເຂົ້າກັນ ເຊັ່ນ: ຖ້ວຍຈານ, ຂ້າທາດ, ຈິດໃຈ, ຊັບສິນ, ເບິ່ງແຍງ, ຄອງຖ້ຳ, ຄັດເລືອກ, ສູນຫາຍ, ແທ້ຈິງ, ວ່ອງໄວ, ໂງ່ຈ້າ, ໃຫຍ່ໂຕ, ເຊື່ອງຊ້ອນ, ຕຸ້ຍພີ, ຢຸດຢັ້ງ...
- ຄຳຊ້ອນທີ່ເກີດຈາກການນຳຄຳທີ່ມີຄວາມໝາຍຄ້າຍຄືກັນມາຊ້ອນເຂົ້າກັນ ເຊັ່ນ: ໃຈຄໍ, ຮູບຮ່າງ, ໜ້າຕາ, ແຄ່ງຂາ, ຝົນຟ້າ, ຊາກສົບ, ຂວາກໜາມ, ໄຮ່ນາ, ເຫຼືອລົ້ນ, ກົດຂີ່, ຂູດຮີດ, ເຈັບປ່ວຍ, ເຮືອນຊານບ້ານຊ່ອງ, ຈັບໄດ້ໄລ່ທັນ...
- ຄຳຊ້ອນທີ່ເກີດຈາກການນຳຄຳທີ່ມີຄວາມໝາຍກົງກັນຂ້າມກັນ ມາຊ້ອນເຂົ້າກັນ ເຊັ່ນ: ພໍ່ແມ່, ອ້າຍນ້ອງ, ຍິງຊາຍ, ໃກ້ໄກ, ໄປມາ, ທຸກສຸກ, ດີຊົ່ວ, ເທດຜົນ, ສູງຕ່ຳ, ດຳຂາວ, ຕື້ນເລິກ, ໜາບາງ...

**2) ຄຳຊ້ອນເພື່ອສຽງ** ແມ່ນເກີດຈາກການນຳເອົາຄຳທີ່ມີສຽງຄ້າຍຄືກັນມາຊ້ອນກັນ ເພື່ອໃຫ້ອອກສຽງງ່າຍຂຶ້ນ ແລະ ມີສຽງສຳຜັດກັນທາງພະຍັນຊະນະ ຫຼື ສະຫຼະ ເຮັດໃຫ້ເກີດຄວາມມ່ວນອອນຊອນຂຶ້ນ. ຄຳຊ້ອນເພື່ອສຽງມີການສ້າງຄຳດັ່ງນີ້:

- ນຳຄຳທີ່ມີພະຍັນຊະນະແກນດຽວກັນ ແຕ່ແຕກຕ່າງກັນຢູ່ບ່ອນສຽງສະຫຼະ ນຳມາຊ້ອນກັນ ເຊັ່ນ: ໂກກເກກ, ງົດງາມ, ຈໍແຈ, ຈົງຈັງ, ເຊີ້ຊ້າ, ຕຶງຕັງ, ອໍ້ແອ້, ເຮຮາ...
- ນຳຄຳທຳອິດທີ່ມີຄວາມໝາຍມາຊ້ອນກັບຄຳຫຼັງ ຊຶ່ງບໍ່ມີຄວາມໝາຍ ເພື່ອໃຫ້ສຳຜັດ ແລະ ອອກສຽງໄດ້ສະດວກ ໂດຍເສີມຄຳທາງໜ້າ ຫຼື ທາງຫຼັງກໍໄດ້ ເຮັດໃຫ້ເນັ້ນຄວາມເນັ້ນສຽງໃຫ້ໜັກແໜ້ນ ສ່ວນຫຼາຍໃຊ້ໃນຄຳເວົ້າ ເຊັ່ນ: ກິນເກີນ, ຍ່າງເຍິງ, ນອນແນນ, ຕູ້ເຕີ້, ຈອກເຈີກ, ປຽບເປີຍ...
- ນຳຄຳທີ່ມີພະຍັນຊະນະຕົ້ນຕ່າງກັນ ແຕ່ສຽງສະຫຼະດຽວກັນມາຊ້ອນກັນ ເຊັ່ນ: ສອຍລອຍ, ຮາບຄາບ, ອ້າງວ້າງ, ຈ່າງປ່າງ, ຂີ້ຫຼີ້, ເອີ້ເຮີ້, ຈ່າຍວ່າຍ, ໂຈກໂພກ...

- ນຳຄຳທີ່ມີພະຍັນຊະນະຕົ້ນຄືກັນ ສະຫຼະສຽງດຽວກັນ ແຕ່ຕົວສະກົດຕ່າງກັນມາຊ້ອນໃສ່ກັນ ເຊັ່ນ: ຄອງຄອຍ, ສອດສ່ອງ, ຫຼອກຫຼອນ, ລັກລັ່ນ, ອັດອັ້ນ...
- ຄຳຊ້ອນທີ່ເປັນຄຳຄູ່ ຊຶ່ງມີ 4 ພະຍາງ (ຫຼືເອີ້ນວ່າ ຄຳໂຕງໂຕຍ) ແລະ ສຳຜັດຄູ່ກາງພະຍາງທີ 2 ແລະ 3 ເຊັ່ນ: ກິນແໜງແຄງໃຈ, ສະຫວັນຊັ້ນຟ້າ, ພູຜາປ່າດົງ, ຖະໜົນຫົນທາງ, ເຮືອນຊານບ້ານຊ່ອງ...
- ຄຳຊ້ອນທີ່ເປັນຄຳຄູ່ ຊຶ່ງມີ 4 ພະຍາງ ແລະ ພະຍາງທີ 1 ແລະ ພະຍາງທີ 3 ຊ້ຳກັນ ເຊັ່ນ: ກະຕຸກກະຕັກ, ກິນລົມກິນແລ້ງ, ງໍມືງໍຕີນ, ຕິດອົກຕິດໃຈ, ມະຍ້ອມມະແຍ້ມ...

### 2.3 ຄຳຊ້ຳ

ຄຳຊ້ຳ ແມ່ນຄຳທີ່ເກີດຈາກການຊ້ຳສຽງຄຳດຽວກັນຕັ້ງແຕ່ 2 ເທື່ອຂຶ້ນໄປ ເພື່ອເຮັດໃຫ້ເກີດຄຳໃໝ່ໄດ້ຄວາມໝາຍໃໝ່ ແລະ ຄຳທີ່ມີສຽງຊ້ຳກັນນັ້ນຕ້ອງເຮັດໜ້າທີ່ຢ່າງດຽວກັນ. ເວລາຂຽນຈະໃຊ້ເຄື່ອງໝາຍຊ້ຳ (ໆ) ແທນຄຳທີ່ຊ້ຳ ເຊັ່ນ: ຊ້າໆ, ຂາວໆ, ໃຫຍ່ໆ ເປັນຕົ້ນ.

ຄຳຊ້ຳມີຄວາມໝາຍຕ່າງກັນເປັນຫຼາຍແບບດັ່ງນີ້:

**1) ບອກຄວາມໝາຍເປັນຈຳນວນຫຼາຍ** ມັກເປັນຄຳນາມ ຫຼື ຄຳສັບພະນາມ ເຊັ່ນ: **ລູກໆ**ໄປໂຮງຮຽນໝົດແລ້ວ, **ອ້າຍໆເອື້ອຍໆ**ບໍ່ມີໃຜຢູ່ເຮືອນຈັກຄົນ, ພໍ່ເຖົ້າແມ່ເຖົ້າພາກັນເຝົ້າ**ຫຼານໆ**ຢູ່ເຮືອນ, **ໃຜໆ**ກໍຮູ້ຈັກລາວດີ.

**2) ຫຼຸດຄວາມໝາຍຂອງຄຳເດີມ** ມັກເປັນຄຳລັກສະນະວິເສດບອກສີ ເຊັ່ນ: ລາວນຸ່ງເສື້ອສີ**ແດງໆ** (ສີອ່າວແດງ), ຝາເຮືອນລຸງທາສີ**ຂາວໆ** (ສີອ່າວຂາວ), ໂຕະເປື້ອນຈົນເປັນສີ**ດຳໆ** (ອ່າວດຳ)...

**3) ເນັ້ນຄວາມໝາຍຂອງຄຳເດີມ** ມັກເປັນຄຳວິເສດ ເຊັ່ນ: ເວົ້າ**ຄ່ອຍໆ**ແດ່, ຮ້ານຄ້ານີ້ມີແຕ່ເຄື່ອງ**ແພງໆ**, ພວກເຮົາພາກັນຍ່າງ**ໄວໆ** ເພາະຢ້ານບໍ່ທັນ...

**4) ບອກຄວາມໝາຍໂດຍປະມານບໍ່ເຈາະຈົງ** ທີ່ກ່ຽວກັບເວລາ ຫຼື ສະຖານທີ່ ເຊັ່ນ: ລາວມາແຕ່**ເຊົ້າໆ**, ພວກເຂົາເຂົ້ານອນຕອນ**ເດິກໆ**, ເພິ່ນເລີກການຕອນ**ແລງໆ**, ມີຮ້ານກາ ເຟ**ແຖວໆ**ຕະຫຼາດ, ເຮືອນຂ້ອຍຢູ່**ໃກ້ໆ**ໂຮງຮຽນ...

**5) ບອກຄວາມໝາຍແຍກເປັນສ່ວນໆ** ມັກເປັນຄຳລັກສະນະນາມ ເຊັ່ນ: ລາວປາດຊີ້ນເປັນ**ຕ່ອນໆ**, ເພິ່ນສານກະຕ່າເປັນ**ໜ່ວຍໆ**, ລຸງປັ້ນດິນຈີ່ເປັນ**ກ້ອນໆ**...

**6) ບອກຄວາມໝາຍວ່າເຮັດຕໍ່ເນື່ອງກັນຫຼາຍເທື່ອ** ມັກເປັນຄຳກິລິຍາ ເຊັ່ນ: **ຄິດໆ**ເບິ່ງແລ້ວ ຕ້ອງໄດ້ຈ່າຍເງິນຫຼາຍສົມຄວນ, ລາວ**ໄປໆມາໆ**ລະຫວ່າງປາກເຊ-ນະຄອນຫຼວງ, **ເຮັດໆ**ໄປໂລດ ຈັກໜ້ອຍກໍແລ້ວ.

**ໝາຍເຫດ**:

- ນອກຈາກຄຳຊ້ຳແບບມີໝາຍຊ້ຳ (ໆ) ທັງ 6 ຂໍ້ຂ້າງເທິງ ຍັງມີຄຳຊ້ຳທີ່ບໍ່ໃຊ້ໝາຍຊ້ຳຢູ່ນຳ ໄດ້ແກ່ ຄຳຊ້ຳປະເພດປ່ຽນສຽງ ແລະ ຄຳທີ່ເປັນຄຳຊ້ຳຢູ່ແລ້ວ ໂດຍບໍ່ຕ້ອງໃຊ້ໝາຍຊ້ຳ ເຊັ່ນ:

**ຄຳຊ້ຳປະເພດປ່ຽນສຽງ** ເປັນການເນັ້ນ ຫຼື ເພີ່ມຄວາມໝາຍໂດຍການປ່ຽນສຽງວັນນະຍຸດຂອງພະຍາງໜ້າໃຫ້ສູງຂຶ້ນ ແຕ່ຄຳຊ້ຳປະເພດນີ້ຈະບໍ່ໃຊ້ໝາຍຊ້ຳ ເຊັ່ນ: ດີ໊ດີ, ດ໊ຳດຳ, ງ້າມງາມ, ໄວ້ໄວ, ໃສ້ໃສ, ເຫຼື້ອງເຫຼືອງ ເປັນຕົ້ນ.

**ຄຳບາງຄຳທີ່ມາຈາກເຄົ້າປາລີ** ດັ່ງ ນານາ ທີ່ຕ້ອງຂຽນ ນາ 2 ເທື່ອ ບໍ່ສາມາດຂຽນໝາຍຊ້ຳໃສ່ ເຊັ່ນ: ນານາຊາດ, ນານາພັນ, ນານາຊະນິດ, ນານາປະການ ເປັນຕົ້ນ.

- ຕົວຄຳທີ່ມີສຽງຊ້ຳກັນນັ້ນເຮັດໜ້າທີ່ຄົນລະຢ່າງ ບໍ່ຖືເປັນຄຳຊ້ຳ, ໃຊ້ໝາຍຊ້ຳແທນບໍ່ໄດ້ ເຊັ່ນ: ສິ່ງຂອງຂອງເຮົາຕ້ອງຮັກສາໃຫ້ດີ. ຄຳວ່າ "ສິ່ງຂອງ" ເຮັດໜ້າທີ່ເປັນຄຳນາມ, ສ່ວນ "ຂອງ" ທີ່ຢູ່ໜ້າຄຳວ່າ ເຮົາ ເຮັດໜ້າທີ່ເປັນຄຳບຸບພະບົດສະແດງຄວາມເປັນເຈົ້າຂອງ. "ຂອງ" ທັງສອງຄຳຈຶ່ງບໍ່ແມ່ນຄຳຊ້ຳ.

### 2.4 ຄຳສະໝາດ

ຄຳສະໝາດ ແມ່ນການເອົາຄຳຕັ້ງແຕ່ 2 ຄຳຂຶ້ນໄປມາຕໍ່ກັນເປັນຄຳດຽວ ຕາມຫຼັກທີ່ໄດ້ມາຈາກໄວຍາກອນພາສາປາລີ-ສັນສະກິດ ໂດຍບໍ່ມີການປ່ຽນແປງຮູບຄຳ ເວລາອ່ານຕ້ອງອ່ານໃຫ້ສຽງຕໍ່ເນື່ອງກັນ. ເມື່ອຄຳທີ່ມາສະໝາດກັນແລ້ວ ບາງຄຳເກີດຄວາມໝາຍໃໝ່ ຫຼື ມີຄວາມໝາຍຄືເດີມກໍໄດ້.

ຫຼັກການສັງເກດຄຳສະໝາດມີດັ່ງນີ້:

**1) ຕ້ອງເປັນຄຳທີ່ມາຈາກພາສາປາລີ-ສັນສະກິດເທົ່ານັ້ນ** ເຊັ່ນ: ຄຳປາລີກັບຄຳປາລີ, ຄຳສັນສະກິດກັບຄຳສັນສະກິດ ຫຼື ຄຳປາລີກັບຄຳສັນສະກິດກໍໄດ້. ສ່ວນຄຳທີ່ມາຈາກພາສາອື່ນໆ ເຊັ່ນ: ລາວ, ຂະແມ, ຈີນ, ຝຣັ່ງ, ອັງກິດ ໆລໆ ນຳມາປະສົມກັນບໍ່ນັບເປັນຄຳສະໝາດ ຫຼື ນຳເອົາຄຳປາລີ-ສັນສະກິດ ໄປປະສົມຄຳໃນພາສາອື່ນໆ ກໍບໍ່ນັບເປັນຄຳສະໝາດ ເຊັ່ນດຽວກັນ ເຊັ່ນ:

ປາລີ + ປາລີ : ອັກຄີ + ພະຍະ = ອັກຄີໄພ

ອະຣິຍະ + ສັຈຈະ = ອະລິຍະສັດ

ສັນສະກິດ + ສັນສະກິດ : ໄວທະຍະ + ສາສຕຣ = ແພດສາດ

ວິທະຍາ + ສາສຕຣ = ວິທະຍາສາດ

ປາລີ + ສັນສະກິດ ຫຼື ສັນສະກິດ + ປາລີ : ພະລະ + ສຶກສາ = ພະລະສຶກສາ

ສິລະປະ + ກັມມະ = ສິລະປະກຳ

**ຕົວຢ່າງຄຳທີ່ບໍ່ແມ່ນຄຳສະໝາດ**

ພົນລະເຮືອນ (ປາລີ + ລາວ) ລາຊະວັງ (ປາລີ + ລາວ)

ຫຼັກຖານ (ລາວ + ປາລີ) ງົບປະມານ (ລາວ + ປາລີ)

**2) ຄຳທີ່ໂຮມກັນເປັນຄຳສະໝາດ** ເມື່ອປະສົມກັນແລ້ວບໍ່ປ່ຽນແປງຮູບຄຳແຕ່ຢ່າງໃດ.

ເສຣີ + ພາວະ = ເສລີພາບ ພິພິທະ + ພັນທະ = ພິພິທະພັນ

ສາຣະ + ຄະດີ = ສາລະຄະດີ ໂລກະ + ປາລະ =ໂລກະບານ

ວັດທະນະ + ທັມ = ວັດທະນະທຳ ສັງຄະ + ຣາຊະ = ສັງຄະລາດ

ວັດທະນາ + ຖາວອນ = ວັດທະນາຖາວອນ

**3) ຄຳທີ່ນຳມາສະໝາດກັນແລ້ວ** ບາງເທື່ອກໍເກີດຄວາມໝາຍໃໝ່ ແລະ ບາງເທື່ອກໍຮັກສາຄວາມໝາຍເດີມໄວ້.

ສະຫັດສະ (ພັນ) + ຣັງສີ (ແສງ) = ສະຫັດສະລັງສີ (ເກີດຄວາມໝາຍໃໝ່ແປວ່າດວງຕາເວັນ)

ອາຊີວະ (ອາຊີບ ການລ້ຽງຊີວິດ) + ສຶກສາ (ຮ່ຳຮຽນ) = ອາຊີວະສຶກສາ (ຄວາມໝາຍເໝືອນຄຳເດີມ ແປວ່າ ການສຶກສາກ່ຽວກັບອາຊີບ)

**4) ຄຳທີ່ນຳມາສະໝາດກັນແລ້ວ** ຄວາມໝາຍຫຼັກມັກຢູ່ຄຳຫຼັງ ສ່ວນຄວາມໝາຍຮອງຈະຢູ່ທາງໜ້າ ແຕ່ບາງເທື່ອຄວາມໝາຍຂອງຄຳທັງສອງມີນ້ຳໜັກເທົ່າກັນ ບໍ່ມີຄຳໃດຂະຫຍາຍຄຳໃດ ຫຼື ບາງເທື່ອຄວາມໝາຍຈະຢູ່ຄຳໃດຄຳໜຶ່ງ:

ກ. ຄວາມໝາຍຫຼັກຢູ່ຄຳຫຼັງ ຄຳຂະຫຍາຍຢູ່ຄຳໜ້າ (ເວລາແປຕ້ອງແປຈາກຄຳຫຼັງຂຶ້ນກ່ອນ) ເຊັ່ນ:

ຫັຕຖະ (ມື) + ກັມ (ການເຮັດວຽກ) = ຫັດຖະກຳ (ວຽກສີມື)

ວີຣະ (ກ້າຫານ) + ຊະນະ (ຄົນ) = ວິລະຊົນ (ຄົນກ້າຫານ)

ຂ. ຄວາມໝາຍຂອງຄຳທັງສອງໜັກເທົ່າກັນ ບໍ່ມີຄຳໃດຂະຫຍາຍຄຳໃດ (ເວລາແປຮຽງຈາກຄຳທາງໜ້າໄປທາງຫຼັງ ເຊັ່ນ:

ສາມີ (ຜົວ) + ພັນຣະຍາ (ເມຍ) = ສາມີພັນລະຍາ (ຜົວເມຍ)

ປີຕາ (ພໍ່) + ມາຕາ (ແມ່) = ບິດາມານດາ (ພໍ່ແມ່)

ຄ. ມີຄວາມໝາຍຢູ່ຄຳໃດຄຳໜຶ່ງພຽງຄຳດຽວ ສ່ວນຫຼາຍຢູ່ຄຳໜ້າ ເຊັ່ນ:

ມະນຸສສະ + ຊາຕິ = ມະນຸດຊາດ (ແປວ່າ ມະນຸດ)

ຣຸກຂະ + ຊາຕິ = ລຸກຂະຊາດ (ແປວ່າ ພືດ ຫຼື ຕົ້ນໄມ້)

**ຕົວຢ່າງ ຄຳສະໝາດ**

| | | | | |
|---|---|---|---|---|
| ກາລະເທສະ | ກຽດຕິຍົດ | ຄະນິດສາດ | ຄຸນນະພາບ | ຄຸນນະທຳ |
| ຈະຕຸປັດໄຈ | ຈັກກະພັດ | ຈິດຕະກອນ | ສັນທະກະວີ | ຊົນລະປະທານ |
| ໄຕປິດົກ | ເຖລະວາດ | ເທບທິດາ | ໂທລະພາບ | ໄທຍະທານ |
| ທະນະບັດ | ລັດຕະນະໄຕ | ລັດຖະມົນຕີ | ລັດຖະບານ | ລາສະດອນ |
| ສັນຕິພາບ | ເອກະລາດ | ສັງຄົມວິທະຍາ | ລາຊະວົງ | ຮູບປະພັນ |
| ເວດມົນ | ເສດຖະກິດ | ສະຖານະການ | ພັດທະນາການ | ປະເທດຊາດ |
| ຍຸດທະສາດ | ອຸດສາຫະກຳ | ອິດສະຫຼະພາບ | | |

## 2.5 ຄຳສົນທິ

ຄຳສົນທິ ແມ່ນການນຳເອົາຄຳເຄົ້າພາສາປາລີ-ສັນສະກິດຕັ້ງແຕ່ 2 ຄຳຂຶ້ນໄປມາເຊື່ອມຕໍ່ເຂົ້າກັນໃຫ້ເປັນຄຳດຽວ ໂດຍມີການປ່ຽນແປງສະຫຼະ ຫຼື ພະຍັນຊະນະ ເຮັດໃຫ້ສຽງພະຍາງຫຼັງຂອງຄຳໜ້າກົມກືນກັບສຽງພະຍາງໜ້າຂອງຄຳຫຼັງ. ຄຳສົນທິມີຫຼາຍລັກສະນະດັ່ງນີ້:

**1) ສະຫຼະສົນທິ** ແມ່ນການກົມກືນສຽງຂອງຄຳສອງຄຳດ້ວຍສຽງສະຫຼະ ຊຶ່ງພະຍາງຫຼັງຂອງຄຳໜ້າລົງທ້າຍດ້ວຍສຽງສະຫຼະ ແລະ ພະຍາງໜ້າຂອງຄຳຫຼັງຂຶ້ນຕົ້ນດ້ວຍສຽງສະຫຼະ. ສະຫຼະທັງສອງພະຍາງຈະກົມກືນສຽງກັນ ເຊັ່ນ: ກັມມະ + ອາຊີບ = ກຳມາຊີບ ເປັນຕົ້ນ. ຫຼັກຂອງການສົນທິດ້ວຍສະຫຼະມີຂໍ້ສັງເກດ ດັ່ງນີ້:

❖ **ໝວດຄຳທີ່ມີສະຫຼະໜ້າເປັນ xະ ຫຼື xາ**

**ກ. ຖ້າສະຫຼະຫຼັງແມ່ນ xະ ຫຼື xາ ໃຫ້ໂຮມເຂົ້າກັນເປັນ xາ ຕົວດຽວ** ເຊັ່ນ:

ສຸຂະ + ອະພິປາລະ = ສຸຂາພິບານ (ການຮັກສາສຸຂະພາບ)

ກຳມະ + ອະທິການ = ກຳມາທິການ (ກຳມະການສູງສຸດ)

ປັນນະ + ອະທິການ = ບັນນາທິການ (ຜູ້ກວດແກ້)

ອະນະ + ອາມະຍະ = ອະນາໄມ (ຄວາມບໍ່ມີພະຍາດ)

ພັດຕະ + ອາຄານ = ພັດຕາຄານ (ຮ້ານອາຫານ)

ມັງສະ + ອາຫານ = ມັງສາຫານ (ອາຫານປະເພດຊີ້ນ)

ປະຊາ + ອະທິປະໄຕ = ປະຊາທິປະໄຕ (ປະຊາຊົນເປັນໃຫຍ່)

ມະຫາ + ອານິສົງ = ມະຫານິສົງ (ຜົນບຸນອັນໃຫຍ່ຫຼວງ)

**ຂ. ຖ້າສະຫຼະຫຼັງແມ່ນໄມ້ກັນ (x̆) ແລະ ມີຕົວສະກົດໃຫ້ໂຮມເຂົ້າກັນເປັນໄມ້ກັນຕົວດຽວ** ເຊັ່ນ:

ນິຣະ + ອັນຕະຣະ = ນິລັນດອນ (ບໍ່ມີສິ້ນສຸດ)

ມະຫາ + ອັນຕະຣາຍ = ມະຫັນຕະລາຍ (ອັນຕະລາຍໃຫຍ່)

ມະຫາ + ອັດສະຈັນ = ມະຫັດສະຈັນ (ຄວາມງຶດງໍ້ຢ່າງໃຫຍ່)

ປະຣະມາ + ອັດຖະ = ປະລະມັດຖະ (ຂໍ້ຄວາມລະອຽດ)

**ຄ. ຖ້າສະຫຼະຫຼັງແມ່ນ xິ ຫຼື xີ ມີຕົວສະກົດ ໃຫ້ໂຮມເຂົ້າກັນເປັນ xິ ຫຼື xີ, ຖ້າບໍ່ມີຕົວສະກົດໃຫ້ແປງເປັນ** ເx ເຊັ່ນ:

ຊະນະ + ອິນທະ = ຊະນິນທະ (ເຈົ້າຊີວິດ)

ນະຣະ + ອິນທະ = ນະລິນທະ, ນະລິນ (ເຈົ້າແຜ່ນດິນ)

ມະຫາ + ອິສີ = ມະເຫສີ (ເມຍເຈົ້າຊີວິດ)

ນະຣະ + ອິສວນ = ນະເລສວນ (ພະລາຊາ)

**ງ. ຖ້າສະຫຼະຫຼັງແມ່ນ xຸ ຫຼື xູ ໃຫ້ໂຮມເຂົ້າກັນເປັນ xຸ ຫຼື xູ ຫຼື ແປງເປັນ ໂx ກໍໄດ້** ເຊັ່ນ:

ມັກຄະ + ອຸເທສະ = ມັກຄຸເທດ (ຜູ້ນໍາທ່ຽວ)

ນະຣະ + ອຸດຕະມະ = ນະໂລດົມ (ຄົນຜູ້ສູງສຸດ)

ອະຣຸນະ + ອຸທະຍະ = ອະລຸນໂນໄທ (ຍາມຕາເວັນເລີ່ມຂຶ້ນ)

ຍຸດທະ + ອຸປາຍະ = ຍຸດໂທບາຍ (ວິທີສູ້ຮົບ)

ນະຍະ + ອຸປາຍະ = ນະໂຍບາຍ (ວິທີດໍາເນີນການ)

**ຈ. ຖ້າສະຫຼະຫຼັງແມ່ນ ເx ໄx ໂx ເxົາ ໃຫ້ໂຮມເຂົ້າກັນເປັນ ເx ໄx ໂx ເxົາ** ເຊັ່ນ:

ມະຫາ + ເອລາວັນ = ມະເຫລາວັນ (ຊ້າງ 33 ຫົວ)

ໂພຄະ + ໄອສະຫວັນ = ໂພໄຄສະຫວັນ (ຊັບສົມບັດ)

ມະຫາ + ໄອລານ = ມະໄຫລານ (ຍິ່ງໃຫຍ່, ກວ້າງໃຫຍ່)

ມະຫາ + ໂອສົດ = ມະໂຫສົດ (ຢາສັກສິດ)

ມະຫາ + ເອົາລານ = ມະເຫົາລານ (ຄວາມມ່ວນຊື່ນຫຼາຍ)

❖ **ໝວດຄໍາທີ່ມີສະຫຼະໜ້າເປັນ xິ ຫຼື xີ**

**ກ. ຖ້າສະຫຼະຫຼັງແມ່ນ xິ ຫຼື xີ ໃຫ້ໂຮມເຂົ້າກັນເປັນ xິ ຫຼື xີ ຕົວໃດຕົວໜຶ່ງກໍໄດ້** ເຊັ່ນ:

ທໍລະນີ + ອິນທະ = ທໍລະນິນທະ (ເຈົ້າແຜ່ນດິນ)

ມຸນີ + ອິນທະ = ມຸນິນທະ (ຈອມນັກປາດ ໝາຍເຖິງພະພຸດທະເຈົ້າ)

ໂກສີ + ອິນທະ = ໂກສິນທະ (ເທບພະເຈົ້າແຫ່ງສາສະໜາພາມ)

**ຂ. ຖ້າສະຫຼະຫຼັງແມ່ນສະຫຼະອື່ນນອກຈາກ xິ ຫຼື xີ ໃຫ້ແປງ xິ ຫຼື xີ ເປັນຕົວ ຍ ກ່ອນ ແລ້ວຈຶ່ງໂຮມກັນ** ເຊັ່ນ:

ອັກຄີ ແປງເປັນ ອັກຄະຍະ + ອາຄາຣະ = ອັກຄະຍາຄານ (ເຮືອນໄຟ)

ສາມັກຄີ ແປງເປັນ ສາມັກຄະຍະ + ອາຈາຣະ = ສາມັກຄະຍາຈານ (ຄວາມພ້ອມພຽງຂອງອາຈານ)

ຣັຕຕິ ແປງເປັນ ຣັດຕະຍະ + ໂອພາສະ = ລັດຕະໂຍພາດ (ແສງສະຫວ່າງໃນຍາມກາງຄືນ)

ກິດຕິ ແປງເປັນ ກິດຕະຍະ + ອາກະຣະ = ກິດຕະຍາກອນ (ບໍ່ເກີດແຫ່ງຊື່ສຽງ)

ມາລີ ແປງເປັນ ມາລະຍະ + ອາພະຣະນະ = ມາລະຍາພອນ (ເຄື່ອງປະດັບດ້ວຍດອກໄມ້)

❖ **ໝວດຄຳທີ່ມີສະຫຼະໜ້າເປັນ xຸ ຫຼື xູ**

**ກ. ຖ້າສະຫຼະຫຼັງແມ່ນ xຸ ຫຼື xູ ສົນທິກັບ xຸ ຫຼື xູ ໃຫ້ໂຮມເຂົ້າກັນເປັນ xຸ ຫຼື xູ** ເຊັ່ນ:

ຄະຣຸ + ອຸປະກອນ = ຄະລູປະກອນ (ສື່ການສອນຂອງຄູ)

ຄະຣຸ + ອຸປະເທສະ = ຄະລູປະເທດ (ຄຳແນະນຳຂອງຄູ)

ຄະຣຸ + ອຸປະຖຳ = ຄະລູປະຖຳ (ການເບິ່ງແຍງຂອງຄູ)

**ຂ. ຖ້າສະຫຼະຫຼັງເປັນສະຫຼະອື່ນນອກຈາກ xຸ ຫຼື xູ ໃຫ້ແປງ xຸ ຫຼື xູ ເປັນ ວ ກ່ອນ ແລ້ວຈຶ່ງໂຮມເຂົ້າກັນ** ເຊັ່ນ:

ສິນທຸ ແປງເປັນ ສິນທະວະ + ອາຈາຣະຍະ = ສິນທະວາຈານ (ຜູ້ຝຶກມ້າ)

ຈັກຂຸ ແປງເປັນ ຈັກຂະວະ + ອາພາສະ = ຈັກຂະວາພາດ (ເຈັບຕາ)

ເຫຕຸ ແປງເປັນ ເຫຕະວະ + ອະເນກະ = ເຫຕະວາເນກ (ຫຼາຍເຫດການ)

ທະນຸ ແປງເປັນ ທະນະວະ + ອາຄົມ = ທັນວາຄົມ (ເດືອນທັນວາ)

**2) ພະຍັນຊະນະສົນທິ**

ພະຍັນຊະນະສົນທິ ແມ່ນການເຊື່ອມຕໍ່ຄຳສອງຄຳເຂົ້າກັນດ້ວຍພະຍັນຊະນະໃນພາສາປາລີ-ສັນສະກິດ ແຕ່ມີໃຊ້ໜ້ອຍໃນພາສາລາວ.

ຕົວຢ່າງ:

ນິຣະ + ພະຍະ = ນິລະໄພ (ບໍ່ມີໄພ)

ອຸ + ອາຫຣ = ອຸທາຫອນ (ສິ່ງທີ່ຍົກຂຶ້ນເປັນຕົວຢ່າງ)

ປະຕິ + ອຸປປັນນະ = ປັດຈຸບັນ (ດຽວນີ້)

ທຸສະ + ຊະນະ = ທຸລະຊົນ (ຄົນຊົ່ວ)

ນິສະ + ພະຍະ = ນິລະໄພ (ບໍ່ມີໄພ)

**3) ນິກຄະຫິດສົນທິ**

ນິກຄະຫິດສົນທິ ແມ່ນການເຊື່ອມຕໍ່ຄຳສອງຄຳໃຫ້ເຂົ້າເປັນຄຳດຽວ ດ້ວຍການປ່ຽນແປງນິກຄະຫິດ. ໝາຍຄວາມວ່າ ພະຍາງຫຼັງຂອງຄຳໜ້າເປັນນິກຄະຫິດ. ກ່ອນຈະຕໍ່ເຂົ້າກັນຕ້ອງປ່ຽນນິກຄະຫິດເປັນພະຍັນຊະນະ. ນິກຄະຫິດເປັນຮູບ: "xໍ" ໃຫ້ອ່ານວ່າ ອັງ.

ສໍ + ຄະມະ = ສັງຄົມ (ການຄົບຄ້າສະມາຄົມກັນ)

ສໍ + ທະຣະ = ສັງຫອນ (ຄວາມບັນດົນໃຈ)

ສໍ + ວະຣະ = ສັງວອນ (ຄວາມລະວັງຕົວ)

ສໍ + ຫາຣະ = ສັງຫານ (ຂ້າໃຫ້ຕາຍ)

ສໍ + ສັຣຄະ = ສັງສັນ (ພົບປະສົນທະນາ)

## 2.6 ຄຳແຜງ

ຄຳແຜງ ແມ່ນຄຳທີ່ປ່ຽນແປງຕົວອັກສອນໃຫ້ມີຮູບຕ່າງໄປຈາກຄຳເດີມ ແຕ່ຍັງຄົງຮັກສາຄວາມໝາຍເດີມ ຫຼື ເຄົ້າຄຳເດີມເອົາໄວ້ໃຫ້ເປັນທີ່ສັງເກດໄດ້. ການແຜງຄຳນີ້ ໄດ້ຮັບແບບຢ່າງຈາກພາສາຂະແມ ແລະ ພາສາປາລີ-ສັນສະກິດ ເພື່ອໃຫ້ເກີດຄວາມມ່ວນອອນຊອນທາງພາສາທີ່ມັກໃຊ້ໃນການແຕ່ງຄຳປະພັນ, ໃຫ້ມີຄຳໃຊ້ໃນພາສາຫຼາຍຂຶ້ນ ແລະ ຮຽບຮຽງຄຳເວົ້າໃຫ້ຖືກຕ້ອງສອດຄ່ອງກັບຫຼັກການຂຽນ ແລະ ຫຼັກການປາກເວົ້າຂອງພາສາລາວ.

ການແຜງຄຳໃນພາສາລາວ ແບ່ງອອກເປັນສອງຢ່າງ ຄື: ການແຜງຕົວອັກສອນ ແລະ ການແຜງຄຳເວົ້າ.

**1) ການແຜງຕົວອັກສອນ** ແມ່ນການປ່ຽນສະຫຼະ ຫຼື ພະຍັນຊະນະໃນຄຳປາລີ ແລະ ສັນສະກິດ ມາເປັນຕົວໃໝ່ໃນຄຳລາວ ເພື່ອສະດວກ ແລະ ຖືກຕ້ອງຕາມສຳນຽງລາວເຮົາ.

| ສະຫຼະ | ຄຳເຄົ້າ | ຄຳລາວ |
|---|---|---|
| xິ ແຜງເປັນ xີ | ກິລາ | ກີລາ |
| xີ ແຜງເປັນ xີ ເx | ສີລາ | ສີລາ ເສລາ |
| xິ ແຜງເປັນ xີ ໄx | ຕິ | ຕີ ໄຕ |
| ເx ແຜງເປັນ ໄx | ເວຍຍາກະຣະນະ | ໄວຍາກອນ |
| xຸ ແຜງເປັນ xົວ | ບູຣະພາ | ບົວລະພາ |

| **ພະຍັນຊະນະ** | **ຄຳເຄົ້າ** | **ຄຳລາວ** |
|---|---|---|
| ຕ ແຜງເປັນ ດ | ມາຕາ | ມາດາ |
| ວ ແຜງເປັນ ພ | ວິທີ | ພິທີ |
| ປ ແຜງເປັນ ບ | ປັນດິຕະ | ບັນດິດ |
| ຣ ແຜງເປັນ ຣ | ປຸຣານະ | ບູຮານ |

**2) ການແຜງຄຳເວົ້າ** ແມ່ນການປຸ່ງນຈາກຄຳເຄົ້າໃຫ້ຜິດຈາກຮູບເດີມຂອງຄຳ ເພື່ອໃຊ້ໃນການແຕ່ງບົດປະພັນ ຫຼື ຮຽບຮຽງຄຳເວົ້າໃຫ້ມ່ວນ ແລະ ເໝາະສົມ.

| **ຄຳເດີມ** | **ຄຳແຜງ** | **ຄວາມໝາຍ** |
|---|---|---|
| ກົດ | ກຳນົດ | ຂໍ້ບັງຄັບ |
| ເກີດ | ກຳເນີດ | ມີຂຶ້ນ |
| ຈິງ | ຈຳນົງ | ໝາຍ, ຕັ້ງໃຈ |
| ຈອງ | ຈຳນອງ | ຜູກ |
| ແຈກ | ຈຳແນກ | ຢາຍ, ແບ່ງ |
| ເສັດ | ສຳເລັດ | ແລ້ວ |
| ສຽງ | ສຳນຽງ | ສິ່ງທີ່ຍິນດ້ວຍຫູ |
| ເດີນ | ດຳເນີນ | ຍ່າງ, ເຮັດໃຫ້ເປັນໄປ |
| ແຕ່ງ | ຕຳແໜ່ງ | ຕັ້ງ ຈັດໃຫ້ງາມ ໜ້າທີ່ |
| ອວຍ | ອຳນວຍ | ໃຫ້ |

## IV. ປະເພດຄຳໃນພາສາລາວ

ຄຳໃນພາສາລາວແບ່ງອອກເປັນ 7 ປະເພດ ຄື: ຄຳນາມ, ຄຳສັບພະນາມ, ຄຳກິລິຍາ, ຄຳວິເສດ, ຄຳບຸບພະບົດ, ຄຳສັນທານ ແລະ ຄຳອຸທານ.

### 1. ຄຳນາມ

ຄຳນາມ ແມ່ນຄຳທີ່ໃຊ້ຮຽກຊື່ ຄົນ, ສັດ, ພືດ, ສິ່ງຂອງ, ສະຖານທີ່, ສະພາບ, ອາການ, ລັກສະນະ ທັງທີ່ເປັນສິ່ງມີຊີວິດ ແລະ ບໍ່ມີຊີວິດ, ທັງທີ່ເປັນຮູບປະທຳ ແລະ ນາມມະທຳ ເຊັ່ນ: ຄູ, ນັກຮຽນ, ແມວ, ຄອມພິວເຕີ, ຄວາມດີ, ອຳນາດ, ສັນຕິພາບ ເປັນຕົ້ນ.

ຄຳນາມແບ່ງອອກເປັນ 2 ຊະນິດ ຄື: ສາມັນນາມ ແລະ ວິສາມັນນາມ.

#### 1.1 ສາມັນນາມ

ສາມັນນາມ ແມ່ນຄຳທີ່ເປັນຊື່ຂອງນາມທົ່ວໄປບໍ່ຈຳກັດ ເຊັ່ນ: ປະເທດ, ບ້ານ, ເມືອງ, ຄົນ, ສັດ, ເຂົ້າ, ນ້ຳ ເປັນຕົ້ນ. ຄຳສາມັນນາມນີ້ ແບ່ງອອກເປັນ 4 ຈຳພວກ ຄື: ປົກກະຕິນາມ, ສະມຸຫະນາມ, ລັກສະນະນາມ ແລະ ອາການນາມ.

**1) ປົກກະຕິນາມ**

ປົກກະຕິນາມ ແມ່ນຄຳຈຳພວກທີ່ເປັນຊື່ທຳມະດາ ເຊັ່ນ: ເຮືອນ, ລົດ, ຊ້າງ, ມ້າ, ຄູ, ນັກຮຽນ ເປັນຕົ້ນ.

**2) ສະມຸຫະນາມ**

ສະມຸຫະນາມ ແມ່ນຈຳພວກທີ່ເປັນຊື່ໂຮມ ເຊັ່ນ: ກອງ, ໝວດ, ໝູ່, ຄະນະ, ພັກ, ພວກ, ບໍລິສັດ, ຝູງ, ຈຸ້ມ, ຊຸມ, ເຫຼົ່າ, ກໍ, ໂຄດ, ວົງ, ລັດຖະບານ, ສະໂມສອນ, ສັງຄົມ, ກົມ, ກະຊວງ ເປັນຕົ້ນ.

**3) ລັກສະນະນາມ**

ລັກສະນະນາມ ແມ່ນຄຳຈຳພວກປົກກະຕິນາມ ແລະ ສະມຸຫະນາມນັ້ນເອງ ແຕ່ເອົາມາໃຊ້ບອກລັກສະນະຂອງຄຳນາມທີ່ຢູ່ຂ້າງໜ້າ ເຊັ່ນ: ມ້າສາມໂຕ, ໝາກໂມຫ້າໜ່ວຍ, ເຮືອນສອງຫຼັງ. ຄຳວ່າ ໂຕ, ໜ່ວຍ, ຫຼັງ ແມ່ນລັກສະນະນາມ.

ລັກສະນະນາມ ຕ້ອງຢູ່ທ້າຍຈຳນວນນັບສະເໝີ ຖ້າຫາກວ່າຈຳນວນນັບແມ່ນໜຶ່ງ, ຄຳທີ່ເປັນລັກສະນະນາມນັ້ນ ຕ້ອງຢູ່ຂ້າງໜ້າ ຫຼື ຢູ່ຫຼັງຈຳນວນນັບກໍໄດ້ ເຊັ່ນ: ຄວາຍໂຕໜຶ່ງ ຫຼື ຄວາຍໜຶ່ງໂຕ, ເຮືອນຫຼັງໜຶ່ງ ຫຼື ເຮືອນໜຶ່ງຫຼັງ. ໃນກໍລະນີທີ່ໃຊ້ຄຳວ່າ “ດຽວ” ແທນ “ໜຶ່ງ”, ລັກສະນະນາມນັ້ນຕ້ອງຢູ່ໜ້າ ເຊັ່ນ: ສໍແທ່ງດຽວ, ລົດຄັນດຽວ ເປັນຕົ້ນ. ນອກຈາກ

ນີ້ ຍັງໃຊ້ຄຳສາມັນນາມຊື່ດຽວກັນເປັນລັກສະນະນາມ ເຊັ່ນ: ຫ້ອງຮຽນສາມຫ້ອງ, ບ້ານສອງບ້ານ, ເມືອງສາມເມືອງ. ຄຳວ່າ ຫ້ອງ, ບ້ານ, ເມືອງ ທີ່ຢູ່ທ້າຍນີ້ ເປັນລັກສະນະນາມ.

ລັກສະນະນາມແບ່ງອອກເປັນ 3 ຢ່າງ ຄື: ລັກສະນະນາມບອກຊະນິດ, ລັກສະນະນາມບອກໝວດໝູ່ ແລະ ລັກສະນະນາມບອກສັນຖານ.

**ກ. ລັກສະນະນາມບອກຊະນິດ**

**ອົງ**: ໃຊ້ສຳລັບພະສົງ ຫຼື ພະພຸດທະຮູບໃນພຸດທະສາສະໜາ. ຕົວຢ່າງ: ພະສົງສາມອົງ, ພະພຸດທະຮູບສີ່ອົງ.

**ຮູບ, ຕົນ**: ໃຊ້ສຳລັບພະສົງ ຫຼື ສາມະເນນ. ຕົວຢ່າງ: ພະສົງຫ້າຮູບ, ສາມະເນນໜຶ່ງຕົນ.

**ຄົນ**: ໃຊ້ສຳລັບຄົນທັງຫຼາຍ. ຕົວຢ່າງ: ກຳມະກອນສອງຄົນ, ຊາວນາສາມຄົນ, ຊາວສວນສີ່ຄົນ, ນັກຮຽນຫ້າຄົນ, ຜູ້ຊາຍຄົນໜຶ່ງ, ຜູ້ຍິງສອງຄົນ.

**ໂຕ**: ໃຊ້ສຳລັບສັດທັງຫຼາຍ. ຕົວຢ່າງ: ຊ້າງສິບໂຕ, ມ້າເກົ້າໂຕ, ຄວາຍແປດໂຕ, ງົວເຈັດໂຕ, ແບ້ຫົກໂຕ, ຫ່ານສີ່ໂຕ, ນົກຈອກສາມໂຕ, ປາໂຕໜຶ່ງ.

**ໃບ**: ໃຊ້ສຳລັບຖ້ວຍ, ຊາມ, ກະດົ້ງ, ເຂິງ, ເຈ້ຍ, ໃບໄມ້ ຫຼື ສິ່ງເປັນໃບອື່ນໆ. ຕົວຢ່າງ: ຖ້ວຍສາມໃບ, ຊາມສີ່ໃບ, ເຂິງສອງໃບ, ເຈ້ຍຊາວໃບ, ໃບໄມ້ສິບໃບ, ໃບພູເກົ້າໃບ.

**ເຍື່ອງ, ຢ່າງ, ສິ່ງ, ອັນ, ແນວ**: ໃຊ້ສຳລັບອາຫານ ແລະ ສິ່ງຂອງ. ຕົວຢ່າງ: ອາຫານສອງເຍື່ອງ, ຂອງສາມຢ່າງ, ຂອງສິ່ງໜຶ່ງ, ໄມ້ບັນທັດສາມອັນ, ເຂົ້າປູກສາມແນວ.

**ໜ່ວຍ**: ໃຊ້ສຳລັບພູຜາ, ໝາກໄມ້, ໄຂ່, ຕູ້, ໂຕະ, ຕັ່ງ, ຖົງ, ຫີບໃສ່ເຄື່ອງ, ໝອນໝູນຫົວ, ໂມງ... ຕົວຢ່າງ: ພູສອງໜ່ວຍ, ໝາກພ້າວສາມໜ່ວຍ, ໄຂ່ເປັດສີ່ໜ່ວຍ, ຕູ້ຫ້າໜ່ວຍ, ໂຕະຫົກສິບໜ່ວຍ, ຕັ່ງສີ່ໜ່ວຍ, ຖົງໜ່ວຍໜຶ່ງ, ຫີບສອງໜ່ວຍ, ໝອນສີ່ໜ່ວຍ, ໂມງໜ່ວຍດຽວ.

**ເລື່ອງ**: ໃຊ້ສຳລັບໜັງສື ແລະ ວັນນະຄະດີຕ່າງໆ. ຕົວຢ່າງ: ນິທານສິບເລື່ອງ, ໜັງສືວັນນະຄະດີຫ້າເລື່ອງ, ນະວະນິຍາຍສອງເລື່ອງ.

**ບັ້ງ**: ໃຊ້ສຳລັບບັ້ງໃສ່ສິ່ງຂອງຕ່າງໆ. ຕົວຢ່າງ: ບັ້ງນ້ຳສອງບັ້ງ, ບັ້ງໄຟສາມບັ້ງ, ບັ້ງແຈ່ວສີ່ບັ້ງ, ບັ້ງປາແດກຫ້າບັ້ງ, ເຂົ້າຫຼາມຫົກບັ້ງ.

**ກະບອກ ຫຼື ບອກ**: ໃຊ້ສຳລັບປືນ. ຕົວຢ່າງ: ປືນຫ້າກະບອກ, ປືນສາມບອກ.

**ລຳ**: ໃຊ້ສຳລັບໄມ້, ອ້ອຍ, ເຮືອ, ກຳປັ່ນ, ເຮືອບິນ. ຕົວຢ່າງ: ໄມ້ໄຜ່ລຳໜຶ່ງ, ໄມ້ພາງສອງລຳ, ໄມ້ເຮ້ຍສາມລຳ, ອ້ອຍສິບລຳ, ເຮືອຫ້າລຳ, ກຳປັ່ນສີ່ລຳ, ເຮືອບິນຫົກລຳ.

**ເຫຼັ້ມ**: ໃຊ້ສຳລັບກວຽນ, ແຂ້ວ, ທຽນ... ຕົວຢ່າງ: ກວຽນຊາວເຫຼັ້ມ, ແຂ້ວສາມສິບສອງເຫຼັ້ມ, ທຽນໄຂໜຶ່ງເຫຼັ້ມ.

**ຫົວ**: ໃຊ້ສຳລັບປຶ້ມ ແລະ ສິ່ງທີ່ເປັນຫົວ. ຕົວຢ່າງ: ປຶ້ມຊາວຫົວ, ເຜືອກສາມສິບຫົວ, ມັນເຜົາສິບຫົວ, ມັນດ້າງຫ້າສິບຫົວ.

**ຕົ້ນ**: ໃຊ້ສຳລັບສິ່ງທີ່ເປັນຕົ້ນ, ເປັນກໍ, ເປັນລຳຕ່າງໆ. ຕົວຢ່າງ: ຕົ້ນໄມ້ສາມຕົ້ນ, ກົກກ້ວຍຫ້າຕົ້ນ, ກົກໝາກຫຸ່ງຫົກຕົ້ນ, ເຂົ້າສິບຕົ້ນ, ຕົ້ນເຜີ້ງສອງຕົ້ນ, ຕົ້ນທຽນສາມຕົ້ນ.

**ຄູ່**: ໃຊ້ສຳລັບສິ່ງທີ່ເປັນຄູ່ກັນ. ຕົວຢ່າງ: ງົວສອງຄູ່, ເກີບສາມຄູ່, ຕຸ້ມຫູຄູ່ໜຶ່ງ.

**ກີບ**: ໃຊ້ສຳລັບເງິນ ແລະ ສິ່ງຂອງບາງຢ່າງ. ຕົວຢ່າງ: ເງິນຮ້ອຍກີບ, ສີສຽດສິບກີບ, ກີບດອກໄມ້ຫ້າກີບ.

**ດາງ**: ໃຊ້ສຳລັບນ່າງ, ແຫ, ມອງ, ຊ້ອນ, ສະຫວິງ, ມຸ້ງ. ຕົວຢ່າງ: ນ່າງສອງດາງ, ແຫສາມດາງ, ມອງດາງໜຶ່ງ, ສະຫວິງດາງດຽວ, ມຸ້ງຫ້າດາງ.

**ຂ. ລັກສະນະນາມບອກພວດໝູ່**

**ກອງ**: ໃຊ້ສຳລັບວັດຖຸ ສິ່ງໃດສິ່ງໜຶ່ງທີ່ກອງກັນຢູ່ ຫຼື ຂອງຫຼາຍສິ່ງໂຮມກັນຢູ່. ຕົວຢ່າງ: ເຂົ້າເປືອກຫ້າກອງ, ຫີນສິບກອງ, ຊາຍສອງກອງ, ກະຖິນສາມກອງ.

**ພວກ**: ໃຊ້ສຳລັບຄົນທີ່ໂຮມກັນຢູ່ເປັນພວກ. ຕົວຢ່າງ: ຄົນພວກໜຶ່ງ, ຄົນສອງພວກ.

**ໝູ່, ໝວດ**: ໃຊ້ສຳລັບຄົນທົ່ວໄປ ຫຼື ທະຫານ, ຕຳຫຼວດ ແລະ ສັດອື່ນໆ ທີ່ໂຮມກັນເປັນໝູ່ເປັນໝວດ. ຕົວຢ່າງ : ຄົນໝູ່ໜຶ່ງ, ທະຫານສາມໝວດ, ຕຳຫຼວດສອງໝູ່, ຄວາຍສາມໝູ່, ງົວສີ່ໝູ່, ນົກຫ້າໝູ່.

**ຝູງ**: ໃຊ້ສຳລັບສັດທີ່ຢູ່ໂຮມກັນ. ຕົວຢ່າງ: ນົກຝູງໜຶ່ງ, ຄວາຍສອງຝູງ, ງົວສາມຝູງ, ຊ້າງສີ່ຝູງ, ມ້າຫ້າຝູງ.

**ຄະນະ**: ໃຊ້ສຳລັບກຸ່ມຄົນທີ່ເຮັດວຽກອັນໃດອັນໜຶ່ງເປັນຄະນະ. ຕົວຢ່າງ: ກຳມະການສອງຄະນະ, ລຳເລື່ອງສອງຄະນະ, ຄະນະວິທະຍາສາດຄະນະໜຶ່ງ, ຜູ້ແທນສາມຄະນະ.

**ຊຸດ, ຊຸມ**: ໃຊ້ສຳລັບສິ່ງຂອງຫຼາຍຢ່າງທີ່ໃຊ້ໂຮມກັນເປັນຊຸດເປັນຊຸມ. ຕົວຢ່າງ: ເຄື່ອງນຸ່ງຫ້າຊຸດ, ຜ້າໄກສາມຊຸມ, ໂຕະຕັ່ງຫ້າຊຸດ.

**ຕັບ**: ໃຊ້ສຳລັບສິ່ງທີ່ຊ້ອນຕິດກັນຢູ່. ຕົວຢ່າງ: ເຈ້ຍສາມຕັບ, ລູກປືນສີ່ຕັບ, ເງິນໃບແສນສາມຕັບ.

**ແບກ**: ໃຊ້ສຳລັບສິ່ງຂອງຕ່າງໆ ທີ່ມັດໂຮມໃສ່ກັນ. ຕົວຢ່າງ: ຟືນສາມແບກ, ໄມ້ໄຜ່ສີ່ແບກ, ໄມ້ເຮັຍຫ້າແບກ, ອ້ອຍຫົກແບກ, ປໍສິບແບກ.

**ຫາບ**: ໃຊ້ສຳລັບສິ່ງຕ່າງໆ ທີ່ມີຄູ່. ຕົວຢ່າງ: ກະຕ່າສອງຫາບ, ກະບຸງສາມຫາບ, ຄຸສີ່ຫາບ, ເຂົ້າຫ້າຫາບ, ນ້ຳຫົກຫາບ.

**ຄ. ລັກສະນະນາມບອກສັນຖານ**

**ວົງ**: ໃຊ້ສຳລັບແຫວນ ຫຼື ສິ່ງທີ່ເຮັດ, ທີ່ຕັ້ງເປັນວົງອື່ນໆ. ຕົວຢ່າງ: ແຫວນສອງວົງ, ວົງປະຕູສາມວົງ, ວົງປ່ອງຢ້ຽມສີ່ວົງ.

**ຫຼັງ**: ໃຊ້ສຳລັບເຮືອນ, ເລົ້າເຂົ້າ, ຕູບ, ແຮ້ວ, ກະຕ່ຳ, ຈັ່ນ, ໄຊ, ລອບ, ກະທິບ, ໂຮງຮຽນ, ກຸຕິ ຫຼື ສິ່ງເປັນຫຼັງອື່ນໆ. ຕົວຢ່າງ: ເຮືອນສາມຫຼັງ, ເລົ້າເຂົ້າສອງຫຼັງ, ຕູບຫຼັງໜຶ່ງ, ແຮ້ວສິບຫຼັງ, ກະຕ່ຳສິບເອັດຫຼັງ, ຈັ່ນເກົ້າຫຼັງ, ໄຊແປດຫຼັງ, ລອບເຈັດຫຼັງ, ກະທິບຫົກຫຼັງ, ໂຮງຮຽນສອງຫຼັງ, ກຸຕິສາມຫຼັງ, ຜາສາດຫ້າຫຼັງ, ໂຮງແຮມສາມຫຼັງ.

**ກາບ**: ໃຊ້ສຳລັບສິ່ງທີ່ເປັນກາບຕ່າງໆ. ຕົວຢ່າງ: ກາບໄມ້ສິບກາບ, ກາບໝາກຊາວກາບ, ກາບລາງສາມກາບ, ກາບກ້ວຍຫ້າກາບ.

**ແຜ່ນ**: ໃຊ້ສຳລັບເຈັ້ຍ, ໜັງ, ແປ້ນ, ສັງກະສີ ຫຼື ສິ່ງເປັນແຜ່ນອື່ນໆ. ຕົວຢ່າງ: ເຈ້ຍຊາວແຜ່ນ, ໜັງຄວາຍສິບແຜ່ນ, ແປ້ນຫ້າແຜ່ນ, ສັງກະສີຫົກສິບແຜ່ນ, ໄມ້ອັດເຈັດສິບແຜ່ນ, ແຜ່ນສຽງຫ້າແຜ່ນ.

**ຜືນ**: ໃຊ້ສຳລັບໂສ້ງ, ເສື້ອ, ຜ້າຫົ່ມ, ຜ້າເຊັດໂຕ, ຜ້າຂາວມ້າ, ຜ້າເຊັດໜ້າ, ສາດ, ສິ້ນ, ໄຮ່ ຫຼື ສິ່ງເປັນຜືນອື່ນໆ. ຕົວຢ່າງ: ໂສ້ງສາມຜືນ, ເສື້ອສີ່ຜືນ, ຜ້າຫົ່ມສອງຜືນ, ຜ້າເຊັດໂຕໜຶ່ງຜືນ, ຜ້າຂາວມ້າຜືນດຽວ, ຜ້າເຊັດໜ້າສອງຜືນ, ສາດສາມຜືນ, ສິ້ນສີ່ຜືນ, ໄຮ່ເຂົ້າສອງຜືນ, ຜ້າອ້ອມສິບຜືນ.

**ແທ່ງ**: ໃຊ້ສຳລັບສໍຂາວ ຫຼື ສິ່ງເປັນແທ່ງ. ຕົວຢ່າງ: ສໍຂາວຊາວແທ່ງ, ຄຳສອງແທ່ງ.

**ກ້ານ**: ໃຊ້ສຳລັບຈອງ, ບ່ວງ, ສ້ອມ ຫຼື ສິ່ງເປັນກ້ານອື່ນໆ. ຕົວຢ່າງ: ຈອງສອງກ້ານ, ບ່ວງສີ່ກ້ານ, ສ້ອມຫ້າກ້ານ, ກ້ານກ້ວຍຫົກກ້ານ, ກ້ານພ້າວເຈັດກ້ານ, ກ້ານໝາກແປດກ້ານ, ບົກສອງກ້ານ.

**ກ້ອນ**: ໃຊ້ສຳລັບຫີນ, ດິນຈີ່, ເຝືອ ຫຼື ສິ່ງເປັນກ້ອນອື່ນໆ. ຕົວຢ່າງ: ຫີນຊາວກ້ອນ, ດິນຈີ່ຫ້າສິບກ້ອນ, ເຝືອສາມກ້ອນ, ເຂົ້າຈີ່ສີ່ກ້ອນ, ເຂົ້າໜົມສິບກ້ອນ.

**ຄັນ**: ໃຊ້ສຳລັບ ຄັນຮົ່ມ, ຄັນຈ້ອງ, ຄັນເບັດ, ຄັນແຮ້ວ ຫຼື ສິ່ງເປັນຄັນອື່ນໆ. ຕົວຢ່າງ: ລົດສິບຄັນ, ລົດດຸດຫ້າຄັນ, ລົດໄຖນາສິບຄັນ, ລົດຖີບຊາວຄັນ, ຄັນຮົ່ມສາມສິບຄັນ, ຄັນຈ້ອງສີ່ຄັນ, ຄັນເບັດຫ້າຄັນ, ຄັນແຮ້ວສາມຄັນ.

**ເສັ້ນ**: ໃຊ້ສຳລັບ ເຊືອກ, ເຄືອ, ຕອກ, ຫຍ້າ, ຜົມ, ຂົນ ຫຼື ສິ່ງເປັນເສັ້ນອື່ນໆ. ຕົວຢ່າງ: ທາງສອງເສັ້ນ, ເຊືອກສາມເສັ້ນ, ເຄືອຫວາຍສີ່ເສັ້ນ, ຜົມສາມເສັ້ນ, ຂົນສອງເສັ້ນ, ຝ້າຍຫ້າເສັ້ນ, ໄໝຫົກເສັ້ນ, ລວດຊາວເສັ້ນ.

**ພົ້ວ, ພວງ**: ໃຊ້ສຳລັບໝາກໄມ້, ດອກໄມ້ ຫຼື ສິ່ງເປັນພົ້ວອື່ນໆ. ຕົວຢ່າງ: ໝາກລຳໄຍສາມພົ້ວ, ໝາກມ່ວງສີພົ້ວ, ດອກໄມ້ຫ້າພົ້ວ, ພວງມາລາພວງໜຶ່ງ, ພວງມາໄລສອງພວງ.

**ພັ່ນ, ແທວ**: ໃຊ້ສຳລັບນາ. ຕົວຢ່າງ: ນາສອງພັ່ນ, ນາສາມແທວ.

**ພູດ**: ໃຊ້ສຳລັບສ່ວນໜຶ່ງໆ ທີ່ແບ່ງອອກຈາກສ່ວນໃຫຍ່. ຕົວຢ່າງ: ຊີ້ນຫ້າພູດ, ປາສາມພູດ

**ມານ**: ໃຊ້ສຳລັບມານສາລີ, ມານຂ່າ, ມານໝາກແໜ່ງ, ມານເຂົ້າ ຊຶ່ງຕິດຢູ່ຂ້າງຕົ້ນ ຫຼື ປາຍຕົ້ນທີ່ມີເມັດ ຫຼື ດອກຈັບໂອບຢູ່ເຕັມ. ຕົວຢ່າງ: ສາລີຊາວມານ, ໝາກແໜ່ງສິບຫ້າມານ, ມານເຂົ້າສາມສິບມານ.

**ເມັດ**: ໃຊ້ສຳລັບເມັດເຂົ້າ, ເມັດສາລີ, ຊາຍ, ເກືອ, ຢາປົວພະຍາດ ຫຼື ສິ່ງເປັນເມັດອື່ນໆ. ຕົວຢ່າງ: ເຂົ້າສາມເມັດ, ສາລີສອງເມັດ, ຢາປົວພະຍາດພັນເມັດ.

**ຝັກ**: ໃຊ້ສຳລັບຝັກຫຼອກ, ຝັກດາບ, ຝັກພ້າ, ສາລີ, ໝາກຖົ່ວ. ຕົວຢ່າງ: ຝັກຫຼອກຮ້ອຍຝັກ, ຝັກດາບຫ້າສິບຝັກ, ຝັກມີດຊາວຝັກ, ຝັກພ້າສິບຝັກ, ສາລີຫ້າຝັກ, ໝາກຖົ່ວສາມຝັກ.

**ຮວງ**: ໃຊ້ສຳລັບຮວງເຂົ້າ, ຮວງດອກໄມ້ບາງຊະນິດ ຫຼື ສິ່ງເປັນຮວງອື່ນໆ. ຕົວຢ່າງ: ເຂົ້າຫ້າຮວງ, ດອກງວງຊ້າງສິບຮວງ.

**ຮອດ**: ໃຊ້ສຳລັບສິ່ງຕ່າງໆ ທີ່ສຽບ ຫຼື ຮ້ອຍໃສ່ກັນເປັນຮອດ. ຕົວຢ່າງ: ດອກໄມ້ຮອດໜຶ່ງ, ໝາກປັດສາມຮອດ, ປາສີ່ຮອດ, ກົບຫ້າຮອດ.

**4) ອາການນາມ**

ແມ່ນຄຳນາມທີ່ໄດ້ມາຈາກການປະກອບສ້າງຂອງຄຳວິເສດ (ຄຸນນາມ) ຫຼື ຄຳກິລິຍາໂດຍການຕື່ມຄຳວ່າ "ການ, ຄວາມ ຫຼື ຄຳ" ໃສ່ຂ້າງໜ້າຄຳນັ້ນໆ.

- ໜ້າຄຳວິເສດ (ຄຸນນາມ) ໃຊ້ຄຳວ່າ: "ຄວາມ" ເຊັ່ນວ່າ: ຄວາມທຸກ, ຄວາມເຈັບປວດ, ຄວາມຮັ່ງມີ, ຄວາມງາມ, ຄວາມອວດອົ່ງ, ຄວາມສະຫຼາດ, ຄວາມດີ...
- ໜ້າຄຳກິລິຍາ ໃຊ້ຄຳວ່າ: "ການ, ຄວາມ ຫຼື ຄຳ" ເຊັ່ນວ່າ: ການໄປ, ການມາ, ການກິນ, ການອ່ານ, ການບຸກເບີກ, ການຜາບແພ້, ການປູກຝັງ, ການທ່ອງທ່ຽວ...; ຄວາມຮັກ, ຄວາມຫວັງ, ຄວາມປາຖະໜາ, ຄວາມພະຍາຍາມ...; ຄຳນິຍາມ, ຄຳສັ່ງ, ຄຳສະ ເໜີ, ຄຳເຫັນ, ຄຳຕັກເຕືອນ, ຄຳພິພາກສາ, ຄຳສຳພາດ, ຄຳຊົມເຊີຍ...

### 1.2 ວິສາມັນນາມ

ວິສາມັນນາມ ແມ່ນຄຳຈຳພວກທີ່ເປັນຊື່ສະເພາະຂອງຄົນ, ສັດ, ສິ່ງຂອງ ຫຼື ສະຖານທີ່ ດັ່ງຄຳວ່າ ທ້າວຄຳດີ, ນາງດວງໃຈ, ຄວາຍອີ່ຕູ້, ໝາບັກດ່າງ, ລົດຮອນດ້າ, ບ້ານຄຳຮຸ່ງ, ເມືອງໄຊທານີ, ປະເທດລາວ ເປັນຕົ້ນ.

**ໝາຍເຫດ**: ຄຳນາມໃນພາສາລາວ ບໍ່ມີເຄື່ອງໝາຍບອກໃຫ້ຮູ້ເພດ ຫຼື ພົດ (ຈຳນວນ) ຂອງຄຳນັ້ນໆ, ຕ້ອງອາໄສຄຳອື່ນມາປະກອບ ຫຼື ຂຶ້ນກັບບໍລິບົດຂອງຄຳນັ້ນບອກໃຫ້ຮູ້ດັ່ງນີ້:

**1) ເພດ**

**ຄຳທີ່ໃຊ້ປະກອບບອກໃຫ້ຮູ້ເພດ** ເຊັ່ນ:

- ເພດຊາຍ ສຳລັບຄົນ: ທ້າວ, ຊຽງ, ທິດ, ຈານ, ບັກ, ນາຍ, ຂຸນ, ຫຼວງ, ແສນ, ໝື່ນ, ເພຍ, ພະຍາ, ບ່າວ...
- ເພດຊາຍ ສຳລັບສັດ: ຜູ້, ເຖິກ, ພາຍ (ຊ້າງພາຍ), ທອກ (ໝູທອກ)...
- ເພດຍິງ ສຳລັບຄົນ: ອີ່, ນາງ, ສາວ...
- ເພດຍິງ ສຳລັບສັດ: ແມ່, ພັງ...

**ຄຳທີ່ຕ້ອງອາໄສຄວາມໝາຍບອກໃຫ້ຮູ້ເພດ** ເຊັ່ນ:

- ເພດຊາຍ ສຳລັບຄົນ: ພໍ່, ອ້າຍ, ເຂີຍ, ປູ່, ລຸງ, ອາວ, ບ່າວ, ນ້າບ່າວ, ຜົວ, ພິກຂຸ, ພະ, ຈົວ, ສາມະເນນ, ລາຊາ, ກະສັດ...
- ເພດຍິງ ສຳລັບຄົນ: ແມ່, ເອື້ອຍ, ໃພ້, ຍ່າ, ປ້າ, ອາ, ນ້າສາວ, ເມຍ, ແມ່ຊີ, ລາຊິນີ, ກຸມາລີ, ກະສັດຕີ...

**2) ພົດ** (ບອກຈຳນວນ) ມີ ເອກະພົດ (ຈຳນວນໜ້ອຍ) ແລະ ພະຫຸພົດ (ຈຳນວນຫຼາຍ).

**ຄຳທີ່ໃຊ້ປະກອບບອກໃຫ້ຮູ້ ເອກະພົດ** ເຊັ່ນ: ດຽວ, ໜຶ່ງ, ໜ້ອຍ.

**ຄຳທີ່ໃຊ້ປະກອບບອກໃຫ້ຮູ້ ພະຫຸພົດ** ເຊັ່ນ: ຫຼາຍ, ມາກ, ບັນດາ, ພວກ, ໝູ່, ກອງ, ຝູງ, ທັງຫຼາຍ, ທັງມວນ, ທັງປວງ, ທັງໝົດ, ທັງສິ້ນ, ເຫຼົ່ານີ້, ເຫຼົ່ານັ້ນ ແລະ ການນັບຕັ້ງແຕ່ 2 ຂຶ້ນໄປ ເຊັ່ນ: ສອງ, ສາມ, ສີ່...

## 2. ຄຳສັບພະນາມ

ຄຳສັບພະນາມ ແມ່ນຄຳທີ່ໃຊ້ແທນຄຳນາມທີ່ກ່າວມາແລ້ວ ເພື່ອບໍ່ຕ້ອງກ່າວນາມນັ້ນຊ້ຳຄືນອີກ ເຊັ່ນ: ຂ້ອຍ, ເຈົ້າ, ລາວ, ເຂົາ, ມັນ, ນີ້, ນັ້ນ, ພຸ້ນ, ພີ້, ໃຜ, ຜູ້ໃດ ເປັນຕົ້ນ.

ຄຳເວົ້າໃນທຸກພາສາຕ້ອງມີຄຳສັບພະນາມ ສຳລັບໃຊ້ແທນຄຳນາມທີ່ໄດ້ເວົ້າມາແລ້ວ ເພື່ອບໍ່ໃຫ້ລື້ມຄວາມເກົ່າ ຕົວຢ່າງໃນປະໂຫຍກ: "ຄູຄຳເຫັນທ້າວສອນ ຄູຄຳຈຶ່ງຖາມທ້າວສອນ

ວ່າ ທ້າວສອນໄປໃສບໍ່ເຫັນມາຢາມຄູຄໍາແດ່" ດັ່ງນີ້ ຍ່ອມມີຄໍາຊໍ້າກັນຢູ່ຫຼາຍຄໍາ ຟັງແລ້ວບໍ່ມ່ວນເລີຍ. ແຕ່ຖ້າໃຊ້ຄໍາສັບພະນາມແທນກໍຈະໄດ້ຄວາມດັ່ງນີ້:

"ຄູຄໍາເຫັນທ້າວສອນ ເພິ່ນຈຶ່ງຖາມລາວວ່າ: ເຈົ້າໄປໃສບໍ່ເຫັນມາຢາມຂ້ອຍແດ່" ຄໍາວ່າ ເພິ່ນ, ຂ້ອຍ, ລາວ, ເຈົ້າ ເປັນສັບພະນາມແທນຄໍາວ່າ ຄູຄໍາ ແລະ ທ້າວສອນ.

ຄໍາສັບພະນາມ ແບ່ງອອກເປັນ 6 ຊະນິດ ດັ່ງລຸ່ມນີ້:

### 2.1 ບຸລຸດສັບພະນາມ

ບຸລຸດສັບພະນາມ ແມ່ນຄໍາສໍາລັບໃຊ້ແທນບຸກຄົນ, ສັດ ຫຼື ສິ່ງຂອງ ໃນເວລາເວົ້າ ຫຼື ຂຽນ ມີ 3 ບຸລຸດ ຄື:

1) **ບຸລຸດທີ 1** ໃຊ້ແທນຊື່ຂອງຜູ້ເວົ້າເອງ ດັ່ງຄໍາວ່າ: ຂ້ອຍ, ຂ້າພະເຈົ້າ, ຂ້ານ້ອຍ, ຂ້າບາດ, ເຮົາ, ກູ, ຕູ, ຕູຂ້າ, ເຜືອ, ເຜືອຂ້າ, ຜູ້ຂ້າ ເປັນຕົ້ນ.

2) **ບຸລຸດທີ 2** ໃຊ້ແທນຊື່ຜູ້ເວົ້ານໍາ ດັ່ງຄໍາວ່າ: ເຈົ້າ, ມຶງ, ທ່ານ, ພະອົງ, ສູ, ເຂືອ ເປັນຕົ້ນ.

3) **ບຸລຸດທີ 3** ໃຊ້ແທນຊື່ຂອງຜູ້ເວົ້າຮອດ ດັ່ງຄໍາວ່າ: ມັນ, ລາວ, ເພິ່ນ, ເຂົາເຈົ້າ ເປັນຕົ້ນ.

### 2.2 ປະພັນທະສັບພະນາມ

ປະພັນທະສັບພະນາມ ແມ່ນຄໍາສັບພະນາມທີ່ໃຊ້ແທນຄໍານາມ ຫຼື ສັບພະນາມ ທີ່ຢູ່ຖັດກັນໄປ. ຄໍາສັບພະນາມຊະນິດນີ້ ປະກອບດ້ວຍ: ຜູ້, ທີ່, ໂຕ, ຊຶ່ງ, ອັນ...

ຕົວຢ່າງ:

| | |
|---|---|
| ເພິ່ນຍ້ອງຍໍຄົນ**ຜູ້**ດຸໝັ່ນ | (ເພິ່ນຍ້ອງຍໍຄົນ ຄົນດຸໝັ່ນ) |
| ເຂົາກ່ຽວເຂົ້າ**ທີ່**ແກ່ແລ້ວ | (ເຂົາກ່ຽວເຂົ້າ ເຂົ້າແກ່ແລ້ວ) |
| ພໍ່ມັກຄວາຍ**ໂຕ**ໄຖນາດີ | (ພໍ່ມັກຄວາຍ ຄວາຍໄຖນາດີ) |
| ເພິ່ນເຮັດນາ**ຊຶ່ງ**ເຈົ້າຂອງບໍ່ເຮັດ | (ເພິ່ນເຮັດນາ ນາເຈົ້າຂອງບໍ່ເຮັດ) |
| ເຮົາຢາກກິນຂອງ**ອັນ**ແຊບ | (ເຮົາຢາກກິນຂອງ ຂອງແຊບ) |

### 2.3 ປຸດສາສັບພະນາມ

ປຸດສາສັບພະນາມ ແມ່ນຄໍາສັບພະນາມໃຊ້ເປັນຄໍາຖາມ ເຊັ່ນ: ໃຜ, ຜູ້ໃດ, ແນວໃດ, ຫຍັງ, ໃສ...

ຕົວຢ່າງ: ໃຜມາ? ໃຜຢູ່ຫັ້ນ? ອັນນີ້ຂອງໃຜ?

ຜູ້ໃດເວົ້າ? ຜູ້ໃດມາຫັ້ນ?

ເພິ່ນຢູ່ໃສ? ແມ່ນຫຍັງ?

### 2.4 ວິພາກສັບພະນາມ

ວິພາກສັບພະນາມ ແມ່ນຄຳສັບພະນາມໃຊ້ບອກການແບ່ງພວກ ຫຼື ໂຮມພວກ ເຊັ່ນ: ລາງ, ລາງພ່ອງ, ບາງ, ບາງພ່ອງ, ຕ່າງ, ກັນ...

ຕົວຢ່າງ: ນາງກິນນະລີ **ລາງພ່ອງ**ຟ້ອນ, **ລາງພ່ອງ**ລຳ.
ນັກຮຽນບາງຄົນອ່ານ, **ບາງຄົນ**ຂຽນ.
ຊາວນາ**ຕ່າງກໍ**ກ່ຽວເຂົ້າ
ຄວາຍຊົນ**ກັນ**.

### 2.5 ນິຍົມສັບພະນາມ

ນິຍົມສັບພະນາມ ແມ່ນຄຳສັບພະນາມໃຊ້ຊີ້ບອກໄລຍະ ເຊັ່ນ: ນີ້, ນັ້ນ, ພຸ້ນ, ພີ້, ຫັ້ນ, ໜີ້.

ຕົວຢ່າງ: **ນີ້**ແມ່ນປຶ້ມອ່ານ.
**ນັ້ນ**ແມ່ນສວນສັດ.
**ພຸ້ນ**ແມ່ນສວນສາລີ.
ມາທາງ**ພີ້**.
**ຫັ້ນ**ຂອງເຈົ້າ.
ນັ່ງຢູ່**ໜີ້**.

### 2.6 ອະນິຍົມສັບພະນາມ

ອະນິຍົມສັບພະນາມ ແມ່ນຄຳສັບພະນາມບອກຄວາມບໍ່ມີກຳນົດແນ່ນອນ. ຄຳສັບພະນາມຊະນິດນີ້ ບາງຄຳມີຮູບຄືກັບຄຳສັບພະນາມໃຊ້ເປັນຄຳຖາມ ແຕ່ຈະໃຊ້ໃນປະໂຫຍກ ທີ່ມີຄວາມໝາຍສະແດງຄວາມບໍ່ແນ່ນອນ ເຊັ່ນ: ໃຜ, ໃສ, ຜູ້ໃດ, ອັນໃດ, ທີ່ໃດ, ຜູ້ໃດຜູ້ໜຶ່ງ, ສິ່ງໃດສິ່ງໜຶ່ງ, ທັງປວງ, ທັງມວນ, ທັງໝົດ...

ຕົວຢ່າງ: **ໃຜ**ເຮັດກໍໄດ້, **ໃຜ**ເວົ້າກໍຕາມ
**ຜູ້ໃດ**ເຮັດກໍໄດ້ ຈະໄປ**ທີ່ໃດ**ກໍຕາມ
ຈະໄປ**ໃສ**ກໍຕາມ, ເອົາ**ອັນໃດ**ກໍໄດ້
**ຜູ້ໃດຜູ້ໜຶ່ງ**ເອົາໄປ
ເອົາ**ສິ່ງໃດ ສິ່ງໜຶ່ງ**ກໍໄດ້
**ທັງປວງ**ພ້ຽງພະລັນສານຊ້າງໃຫຍ່
**ທັງມວນ**ມາສູ່ໂຮງພະຍາເຈົ້າ
**ທັງໝົດ** ໃຫ້ມາໂຮມພ້ອມພໍ່າ

**ໝາຍເຫດ**: ຕາມທຳມະດາ ຄຳສັບພະນາມໃນພາສາລາວ ບໍ່ມີເຄື່ອງໝາຍຢ່າງໃດຢ່າງໜຶ່ງພາຍໃນຄຳ ເພື່ອບອກໃຫ້ຮູ້ພົດຂອງຄຳນັ້ນໆ, ມັນຕ້ອງອາໄສຄວາມໝາຍຂອງຄຳນັ້ນ ໃຫ້ ຫຼື ອາໄສ ຄຳອື່ນມາປະກອບ ດັ່ງນີ້:

1) **ເອກະພົດ** ຕ້ອງອາໄສຄວາມໝາຍບອກໃຫ້ຮູ້ ເຊັ່ນ: ຂ້ອຍ, ເຈົ້າ, ຂ້າພະເຈົ້າ, ກູ, ມຶງ, ມັນ, ລາວ...

2) **ພະຫູພົດ**

- ຄຳທີ່ຕ້ອງອາໄສຄວາມໝາຍບອກໃຫ້ຮູ້ພົດ ເຊັ່ນ: ເພິ່ນ, ຕູ, ສູ, ເຂືອ, ເຂົາເຈົ້າ...
- ຄຳທີ່ອາໄສຄຳອື່ນມາປະກອບ ເພື່ອບອກໃຫ້ຮູ້ພົດ ເຊັ່ນ: ພວກຂ້ອຍ, ຊຸມເຈົ້າ, ຈຸ້ມເຂົາເຈົ້າ, ພວກທ່ານ, ທ່ານທັງຫຼາຍ...

## 3. ຄຳກິລິຍາ

ຄຳກິລິຍາ ແມ່ນຄຳທີ່ສະແດງອາການ, ການກະທຳ ຫຼື ສະພາບຂອງຄຳນາມ ຫຼື ສັບພະນາມ ເພື່ອໃຫ້ຮູ້ວ່າເຮັດຫຍັງ ຫຼື ເປັນແນວໃດ ເຊັ່ນ: ກິນ, ຢູ່, ໄປ, ມາ, ຮຽນ, ສອນ ເປັນຕົ້ນ.

ຄຳກິລິຍາ ແມ່ນຄຳທີ່ສະແດງເຖິງການເຄື່ອນໄຫວຂອງຄຳນາມ ແລະ ຄຳສັບພະນາມຢູ່ໃນປະໂຫຍກໃດໜຶ່ງ ຫຼື ແມ່ນຈຳພວກຄຳທີ່ມີຄວາມໝາຍສະແດງເຖິງການເຄື່ອນໄຫວ ແລະ ການກະທຳ. ຕົວຢ່າງ: ຄົນນັ່ງ, ນົກບິນ, ຄວາຍນອນ, ມ້າແລ່ນ ຄຳວ່າ ນັ່ງ, ບິນ, ນອນ, ແລ່ນ ເປັນກິລິຍາ ເພາະສະແດງການເຄື່ອນໄຫວຂອງຄຳນາມ ດັ່ງ: ຄົນ, ນົກ, ຄວາຍ, ມ້າ.

ຄຳກິລິຍາແບ່ງອອກເປັນ 4 ຊະນິດ ຄື:

**3.1 ອະກຳມະກິລິຍາ** (ຄຳກິລິຍາຄົບ) ແມ່ນຄຳກິລິຍາຈຳພວກທີ່ມີໃຈຄວາມເຕັມແລ້ວ ບໍ່ມີຄຳທີ່ເປັນຕົວປະກອບຂ້າມາຮັບຮອງກໍໄດ້ຄວາມໝາຍ. ຕົວຢ່າງ: ໝາ**ແລ່ນ**, ງົວ**ນອນ**, ແມງໄມ້**ບິນ**. ຄຳກິລິຍາ ແລ່ນ, ນອນ, ບິນ ໃນທີ່ນີ້ມີໃຈຄວາມບໍລິບູນ ບໍ່ຕ້ອງຖາມວ່າ ແລ່ນຫຍັງ, ນອນຫຍັງ ແລະ ບິນຫຍັງ ກໍໄດ້ຄວາມໝາຍ.

**3.2 ສະກຳມະກິລິຍາ** (ຄຳກິລິຍາຂາດ) ແມ່ນຄຳກິລິຍາຈຳພວກທີ່ມີໃຈຄວາມຍັງບໍ່ທັນຄົບຖ້ວນ ຕ້ອງມີຄຳທີ່ເປັນຕົວປະກອບຢູ່ຂ້າງຫຼັງຕື່ມອີກ ຈຶ່ງໄດ້ຄວາມເຕັມ. ຕົວຢ່າງ: ເຮົາ**ກິນ**, ເຮົາ**ເຫັນ**, ຄວາຍ**ຊົນ**, ເຈົ້າ**ຊຽນ**, ຊາວນາ**ກ່ຽວ**, ມ້າ**ຢາກ**. ຄຳວ່າ ກິນ, ເຫັນ, ຊົນ, ຊຽນ, ກ່ຽວ, ຢາກ ໃນທີ່ນີ້ຍັງບໍ່ມີຄວາມໝາຍເຕັມ ຕ້ອງມີຄຳນາມທີ່ເປັນຕົວປະກອບເຂົ້າມາຕື່ມ ຈຶ່ງໄດ້ຄວາມໝາຍຄົບຖ້ວນ ເຊັ່ນວ່າ: ເຮົາກິນເຂົ້າ, ເຮົາເຫັນຊ້າງ, ຄວາຍຊົນກັນ, ເຈົ້າຊຽນໜັງສື, ຊາວນາກ່ຽວເຂົ້າ, ມ້າຢາກນ້ຳ. ສະນັ້ນ, ຄຳວ່າ ກິນ, ເຫັນ, ຊົນ, ຊຽນ, ກ່ຽວ, ຢາກ ໃນທີ່ນີ້ ຈຶ່ງເປັນຄຳກິລິຍາຂາດ ຫຼື ສະກຳມະກິລິຍາ.

**ສິ່ງທີ່ຄວນເອົາໃຈໃສ່**: ຄຳກິລິຍາ ບາງຄຳເປັນໄດ້ທັງຄຳກິລິຍາຄືບ ແລະ ຄຳກິລິຍາຂາດ ຕົວຢ່າງ: "ອັດ" ຖ້າເວົ້າວ່າ ປະຕູອັດ ກໍເປັນຄຳກິລິຍາຄືບ, ຖ້າເວົ້າວ່າຄົນອັດປະຕູ ກໍເປັນຄຳກິລິຍາຂາດ. ຄຳກິລິຍາ "ໄຂ" ກໍເປັນໄດ້ທັງຄຳກິລິຍາຄືບ ແລະ ຄຳກິລິຍາຂາດ. ຕົວຢ່າງ: "ປ່ອງຢ້ຽມໄຂ" ຄຳວ່າ "ໄຂ" ໃນທີ່ນີ້ມີຄວາມໝາຍເຕັມ ໝາຍຄວາມວ່າເປີດອອກ, ເຜີຍອອກ ຈັດເປັນຄຳກິລິຍາຄືບ, ແຕ່ຖ້າເວົ້າ "ຄົນໄຂປ່ອງຢ້ຽມ" ຄຳວ່າ "ໄຂ" ໃນປະໂຫຍກນີ້ບໍ່ມີຄວາມໝາຍເຕັມ ຄືບໍ່ຮູ້ວ່າໄຂຫຍັງ ຕ້ອງມີຄຳນາມ "ປ່ອງຢ້ຽມ" ເຂົ້າມາໃສ່ຈຶ່ງຈະໄດ້ຄວາມໝາຍເຕັມ ຈັດເປັນຄຳກິລິຍາຂາດ ດັ່ງນີ້ເປັນຕົ້ນ.

**3.3 ວິກະຕັດຖະກິລິຍາ** (ຄຳກິລິຍາອາໄສຄຳອື່ນມາປະກອບ) ແມ່ນຄຳກິລິຍາທີ່ບໍ່ມີຄວາມສົມບູນໃນຕົວເອງ ຕ້ອງອາໄສຄຳນາມ ຫຼື ຄຳສັບພະນາມມາຕໍ່ທ້າຍ ຈຶ່ງໄດ້ຄວາມໝາຍ ດັ່ງຄຳວ່າ "ມີ ແມ່ນ ເປັນ ຄື" ເປັນຕົ້ນ.

ຕົວຢ່າງ: ຂ້ອຍ**ມີ**ສໍດຳ.
ອ້າຍຂ້ອຍ**ເປັນ**ຄູ.
ຫົວໜ້າຫ້ອງ**ແມ່ນ**ຂ້ອຍ.
ນາງ**ຄື**ຕົວເດັ່ນຂອງໂຮງຮຽນ.

ເນື້ອຄວາມສຳຄັນຢູ່ທີ່ຄຳຕອນທ້າຍ ຄື: ສໍດຳ, ໄມ້ບັນທັດ, ຄູ, ໝໍ, ຂ້ອຍ.

**3.4 ຄຳກິລິຍານຸເຄາະ** (ຄຳກິລິຍາຊ່ວຍ) ແມ່ນຄຳກິລິຍາທີ່ໃຊ້ສຳລັບປະກອບເຂົ້າກັບຄຳກິລິຍາພວກອື່ນ ເພື່ອຊ່ວຍຄຳກິລິຍາພວກອື່ນໆ ໃຫ້ໄດ້ຄວາມໝາຍເຕັມ.

ຕົວຢ່າງ:

| | |
|---|---|
| **ກຳລັງ, ພວມ** | ທ້າວຄຳກຳລັງມາ. ນາງແກ້ວພວມມາ. |
| **ຄວນ, ເພິ່ງ** | ເຈົ້າບໍ່ຄວນທຳ. ຢ່າເພິ່ງທຳ. |
| **ຈຶ່ງ** | ຈຶ່ງຮຽນ. |
| **ຄົງ** | ຄົງໄດ້. |
| **ຍ່ອມ** | ສິນທຳຍ່ອມຊະນະອະທຳ. |
| **ຢ່າ** | ຢ່າຟ້າວເມືອເຮືອນ. |
| **ຈະ, ຈັກ, ຊິ** | ຂ້ອຍຈະຊຽນຈົດໝາຍ. |
| | ສິນໄຊຈັກເດີນປ່າ. |
| | ພວກເຮົາຊິຊື້ໄກ່. |
| **ຕ້ອງ** | ຂ້ອຍຕ້ອງຮັກສາອະນາໄມສາມສະອາດ |
| **ໄດ້** | ລາວໄດ້ເຫັນນົກບິນ. |

| | |
|---|---|
| **ໃຫ້** | ເພິ່ນໃຫ້ຂ້ອຍມາຄອບເຈົ້າ. |
| **ຖືກ** | ປ່າຖືກໄຟໄໝ້. |
| **ຍັງ** | ພໍ່ເຖົ້າສາຍັງບໍ່ໄຖນາ. |
| **ຢູ່** | ເຂົາກິນຢູ່. |
| **ເຄີຍ** | ຂ້ອຍເຄີຍເຫັນເຈົ້າຢູ່ຕະຫຼາດ. |
| **ແລ້ວ** | ລູກກິນເຂົ້າແລ້ວ. |

**ໝາຍເຫດ**:

**ການ (ກາລະ)**

ການ (ກາລະ) ແປວ່າ ເວລາ. ຄຳກິລິຍາທັງຫຼາຍໃນພາສາລາວ ບໍ່ມີເຄື່ອງໝາຍບອກ "ການ" ພາຍໃນເອງ ຕ້ອງອາໄສຄຳອື່ນບອກໃຫ້ຮູ້ ແລະ ການນັ້ນມີ 4 ຢ່າງ:

**1) ປັດຈຸບັນນະການ** ແມ່ນເວລາປັດຈຸບັນ, ເວລາດຽວນີ້. ປັດຈຸບັນນະການມີ 3 ຢ່າງຄື:

**ກ. ປັດຈຸບັນແທ້**: ຄຳທີ່ໝາຍບອກປັດຈຸບັນນະການແທ້ ແມ່ນຕໍ່ໄປນີ້: ກຳລັງ, ພວມ, ຢູ່, ຍັງ.

ຕົວຢ່າງ: ເຂົາເຈົ້າ**ກຳລັງ**ມາໂຮງຮຽນ.

ພວກເຮົາ**ພວມ**ກິນເຂົ້າ.

ພໍ່ເຮັດວຽກ**ຢູ່**.

ເຈົ້າ**ຍັງ**ບໍ່ນອນ.

**ຂ. ປັດຈຸບັນໃກ້ອະດີດ**: ປັດຈຸບັນໃກ້ອະດີດໃຊ້ຄຳວ່າ **ແລ້ວ** ຕໍ່ຄຳບອກປັດຈຸບັນ ແທ້.

ຕົວຢ່າງ: ເຂົາ**ພວມ**ນອນ**ແລ້ວ**.

ຂ້ອຍເຮັດວຽກຢູ່**ແລ້ວ**.

**ຄ. ປັດຈຸບັນໃກ້ອະນາຄົດ**: ປັດຈຸບັນໃກ້ອະນາຄົດ ໃຊ້ຄຳວ່າ: ຈະ, ຈັກ, ຊິ ປະກອບຂ້າງໜ້າຄຳກິລິຍາ ແລະ ໃຊ້ບອກປັດຈຸບັນແທ້ປະກອບຂ້າງທ້າຍ.

ຕົວຢ່າງ: ຂ້ອຍ**ພວມຈະ**ໄປ.

ທ້າວຄຳ**ກຳລັງຊິ**ເຮັດວຽກບ້ານ.

**2) ອະດີດຕະການ** ແມ່ນຄຳບອກເວລາທີ່ລ່ວງໄປແລ້ວ ທີ່ໃຊ້ເປັນເຄື່ອງໝາຍອະດີດຕະການນັ້ນ ແມ່ນຄຳດັ່ງຕໍ່ໄປນີ້: ໄດ້, ເຄີຍ, ແລ້ວ.

ຕົວຢ່າງ: ທ້າວສີ**ໄດ້**ກິນເຝີແຊບ.

ຂ້ອຍ**ເຄີຍ**ໄປທ່ຽວຕ່າງປະເທດ.

ອາຈານພິມມີສ້າງຄອບຄົວ**ແລ້ວ**.

**3) ອະນາຄົດຕະການ** ແມ່ນຄຳບອກເວລາທີ່ບໍ່ທັນມາເຖິງ, ອະນາຄົດຕະການແບ່ງອອກເປັນ 2 ຢ່າງ:

**ກ. ອະນາຄົດຕະການແທ້**: ຄຳທີ່ໃຊ້ໝາຍບອກອະນາຄົດຕະການແທ້ນັ້ນ ແມ່ນຄຳຕໍ່ໄປນີ້: ຈະ, ຈັກ, ຊິ.

ຕົວຢ່າງ: ຂ້ອຍ**ຈະ**ຮຽນໜັງສື.

ເຂົາ**ຈັກ**ເດີນດ່ານດ້າວ ດົງດ່ານຫີມະພານ.

ລຸງແກ້ວ**ຊິ**ສານແຫໃຫ້ພວກຂ້ອຍ.

**ຂ. ອະນາຄົດຕະການໃກ້ອະດີດ**: ອະນາຄົດຕະການໃກ້ອະດີດໃຊ້ຄຳ "ແລ້ວ" ຕໍ່ທ້າຍຄຳກິລິຍາ.

ຕົວຢ່າງ: ເພິ່ນ**ຈະ**ໄປການ**ແລ້ວ**.

ລາວຊິເຮັດວຽກ**ແລ້ວ**.

**4) ອະນຸດຕະການ**: ແມ່ນຄຳບອກເວລາທີ່ບໍ່ມີກຳນົດ ຈະເປັນເວລາໃດກໍໄດ້.

ຕົວຢ່າງ: ລາວມາຫາຂ້ອຍສະເໝີ.

ຂ້ອຍອ່ານປຶ້ມ.

ລຸງແດງໄປການ.

ນອກຈາກນີ້ ຍັງໃຊ້ຄຳວ່າ "ຍ່ອມ" ເປັນເຄື່ອງໝາຍບອກອະນຸດຕະການໄດ້ອີກ.

ຕົວຢ່າງ: ຄົບຄົນດີ**ຍ່ອມ**ມີສີແກ່ຕົວ.

ຟັງດ້ວຍດີ**ຍ່ອມ**ມີປັນຍາ.

ຜູ້ທີ່ມັກອ່ານ**ຍ່ອມ**ມີຄວາມຮູ້ຫຼາຍ.

## 4. ຄຳວິເສດ

ຄຳວິເສດ (ຄຳຄຸນນາມ) ແມ່ນຄຳບອກລັກສະນະ ທີ່ໃຊ້ປະກອບ ຫຼື ຂະຫຍາຍຄຳນາມ, ຄຳສັບພະນາມ, ຄຳກິລິຍາ ແລະ ຄຳວິເສດດ້ວຍກັນເພື່ອໃຫ້ຄວາມໝາຍຂອງຄຳນັ້ນຊັດເຈນ ແລະ ຈະແຈ້ງຍິ່ງຂຶ້ນ ເຊັ່ນ: ດີ, ຊົ່ວ, ໃຫຍ່, ນ້ອຍ, ຂາວ, ດຳ, ສົ້ມ, ຫວານ, ຊ້າ, ໄວ ເປັນຕົ້ນ.

ຄຳວິເສດແບ່ງອອກເປັນ 10 ຊະນິດ ຄື: ລັກສະນະວິເສດ, ກາລະວິເສດ, ສະຖານວິເສດ, ປະມານວິເສດ, ນິຍົມວິເສດ, ອະນິຍົມວິເສດ, ປຸດສາວິເສດ, ປະຕິເສດວິເສດ, ປະຕິດຍາວິເສດ ແລະ ປະພັນທະວິເສດ.

### 4.1 ລັກສະນະວິເສດ

1) ບອກຂະໜາດ: ກວ້າງ, ແຄບ, ໃຫຍ່, ນ້ອຍ, ສັ້ນ, ຍາວ ຯລຯ.

ຕົວຢ່າງ: ທົ່ງກວ້າງ, ທາງແຄບ, ເຮືອນໃຫຍ່, ງົວນ້ອຍ, ໄມ້ສັ້ນ, ເຊືອກຍາວ.

**2) ບອກຊະນິດ**: ດີ, ຊົ່ວ, ອ່ອນ, ແກ່, ໜຸ່ມ, ເຖົ້າ, ເຮີ, ງາມ, ສາວ, ບ່າວ ໆລໆ.

ຕົວຢ່າງ: ເພິ່ນດີ, ມັນຊົ່ວ, ອາຍຸອ່ອນ, ຜັກແກ່, ຄົນໜຸ່ມ, ຄົນເຖົ້າ, ຂອງເຮີ, ໄມ້ງາມ, ນ້າສາວ, ນ້າບ່າວ...

**3) ບອກຮູບຮ່າງ**: ກົມ, ແບນ, ແປ, ແພບ, ມົນ ໆລໆ.

ຕົວຢ່າງ: ໄມ້ກົມ, ຖ້ວຍແບນ, ໄມ້ແປ, ຖົງແພບ, ຫີນມົນ.

**4) ບອກສີ**: ແດງ, ຂາວ, ດຳ, ເຫຼືອງ, ແຫຼ້, ອ່ອນ, ມ່ວຍ, ຂຽວ ໆລໆ.

ຕົວຢ່າງ: ຜ້າແດງ, ເສື້ອຂາວ, ຄວາຍດຳ, ດອກເຫຼືອງ, ໜ້າແຫຼ້, ຫຍ້າຂຽວ.

**5) ບອກສຽງ**: ຄ່ອຍ, ແຮງ, ມ່ວນ, ດັງ, ແຫ້ງ, ແຫບ, ແຫຼມ, ທອງ, ອຸ່ມ, ເຄືອ ໆລໆ.

ຕົວຢ່າງ: ສຽງຄ່ອຍ, ສຽງແຮງ, ສຽງມ່ວນ, ສຽງດັງ, ຄໍແຫບ, ສຽງແຫຼມ, ສຽງທອງ.

**6) ບອກກິ່ນ**: ຫອມ, ຂີວ, ເໝັນ, ສາບ, ກຸຍ ໆລໆ.

ຕົວຢ່າງ: ດອກໄມ້ຫອມ, ກິນຂີວ, ກິ່ນເໝັນ, ກິ່ນສາບ, ນ້ຳຄາວ, ປາກຸຍ.

**7) ບອກລົດ**: ເຄັມ, ເຜັດ, ສົ້ມ, ຈາງ, ເຝື່ອນ, ຮິນ, ຂົມ, ຝາດ, ແຊບ, ນົວ ໆລໆ.

ຕົວຢ່າງ: ແຈ່ວເຜັດ, ເອາະເຄັມ, ໝາກກ້ຽງຫວານ, ໝາກເຟືອງສົ້ມ, ແກງຈາງ, ຜັກກາດຮິນ, ໝາກເຂືອຂົມ, ຜັກໄສ່ຂົມ, ເປືອກແຄຝາດ, ລາບແຊບ, ປາແດກນົວ.

**8) ບອກສຳຜັດ**: ອຸ່ນ, ຮ້ອນ, ໜາວ, ເຢັນ, ມື່ນ, ກ້ຽງ, ຄາຍ, ຊາ ໆລໆ.

ຕົວຢ່າງ: ນ້ຳອຸ່ນ, ແດດຮ້ອນ, ອາກາດໜາວ, ລົມເຢັນ, ທາງມື່ນ, ແປ້ນກ້ຽງ, ໜັງຊາ.

**9) ບອກອາການ**: ໄວ, ຊ້າ, ສະຫຼາດ, ໂງ່, ຫຼັກ, ໝັ່ນ, ຄ້ານ, ຮ້າຍ, ຄ່ອງ ໆລໆ.

ຕົວຢ່າງ: ຍ່າງໄວ, ໄປຊ້າ, ຄົນສະຫຼາດ, ມັນໂງ່, ຄົນຫຼັກ, ເພິ່ນໝັ່ນ, ມັນຄ້ານ.

### 4.2 ກາລະວິເສດ

ກາລະວິເສດແມ່ນຄຳບອກເວລາ ເຊັ່ນ: ສວາຍ, ເຊົ້າ, ບ່າຍ, ຄ່ຳ, ນານ, ເທິງ, ກ່ອນ, ລຸນ, ເກົ່າ, ໃໝ່, ເດີກ, ປັດຈຸບັນ, ອະດີດ, ອະນາຄົດ, ມື້ກ່ອນ, ມື້ຊືນ, ມື້ວານນີ້, ມື້ນີ້, ມື້ ໜຶ່ງ, ອາທິດກ່ອນ, ອາທິດແລ້ວ, ອາທິດນີ້, ອາທິດໜ້າ, ເດືອນກ່ອນ, ເດືອນແລ້ວ, ເດືອນນີ້, ເດືອນໜ້າ, ປີກ່ອນ, ປີກາຍ, ປີຮີ, ດຽວນີ້, ບັດນີ້, ເມື່ອນັ້ນ, ຄັນເມື່ອ, ເມື່ອ, ແຕ່ນັ້ນ, ຍາມນັ້ນ, ຍາມໜຶ່ງ, ໃນກາລະໜຶ່ງ, ໃນກາລະນັ້ນ, ພາຍລຸນ ໆລໆ.

ກ. ໃຊ້ຂະຫຍາຍນາມ: ຂອງເກົ່າ, ປີກາຍ, ເດືອນໜ້າ, ຕອນເຊົ້າ ໆລໆ.

ຂ. ໃຊ້ຂະຫຍາຍກິລິຍາ: ໄປກ່ອນ, ນອນລຸນ, ຕື່ນເດິກ, ລຸກເຊົ້າ, ໄປວານນີ້ ເຫັນເມື່ອເດືອນກ່ອນ, ໄດ້ເມື່ອອາທິດແລ້ວ, ດຽວນີ້ແຕກແລ້ວ, ຕາຍແຕ່ປີຊືນ, ຍາມນີ້ເຂົາໄປ ໆລໆ.

### 4.3 ສະຖານວິເສດ

ສະຖານວິເສດແມ່ນຄຳບອກສະຖານທີ່ ເຊັ່ນ: ໄກ, ໃກ້, ໃຕ້, ເໜືອ, ບົນ, ລຸ່ມ, ເທິງ, ສູງ, ຕ່ຳ, ຂວາ, ຊ້າຍ, ນອກ, ໃນ, ແຄມ, ແປະ, ຈື່ມ, ມໍ່, ຂອກ, ກາງ, ຫ່າງ ຯລຯ.

ຕົວຢ່າງ: ຈອດຢູ່ແຄມ, ນອນທາງຂອກ, ທິດໃຕ້, ຢູ່ເທິງ, ຄົນພາຍນອກ, ທາງປ່ຽວ, ບ້ານຫ່າງ, ນັ່ງມໍ່, ຢືນແປະ, ອອກໄປໄກ.

### 4.4 ປະມານວິເສດ

ປະມານວິເສດແມ່ນຄຳບອກຈຳນວນ ຊຶ່ງບອກປະລິມານ ແລະ ຈຳນວນຂອງຄຳນາມຄຳກິລິຍາ ແລະ ຄຳວິເສດດ້ວຍກັນ.

- ບອກຈຳນວນຂະຫຍາຍຄຳນາມ: ອາຫານຫຼາຍ, ໝາກໄມ້ດົກ...
- ບອກຈຳນວນຂະຫຍາຍຄຳກິລິຍາ: ອອກແຮງຫຼາຍ, ຮຽນຍາກ, ຄິດຖືກຕ້ອງ...
- ບອກຈຳນວນຂະຫຍາຍຄຳວິເສດ: ທັນໂພດ, ດີເດັ່ນ, ຍາກອີຫຼີ...

ເພື່ອໃຫ້ກຳນົດໄດ້ງ່າຍ ຈຶ່ງແບ່ງຄຳວິເສດບອກຈຳນວນນີ້ ອອກເປັນ 4 ປະເພດ ຄື: ຈຳນວນບໍ່ຈຳກັດ, ຈຳນວນຈຳກັດ, ຈຳນວນແບ່ງ ແລະ ຈຳນວນນັບ.

**ກ. ບອກຈຳນວນບໍ່ຈຳກັດ** ໄດ້ແກ່ຄຳເຫຼົ່ານີ້: ມາກ, ໜ້ອຍ, ຫຼາຍ, ເຫຼືອ, ໂພດ, ເກີນ, ກາຍ, ຫຼວງຫຼາຍ, ໜັກໜາ ຯລຯ.

ຕົວຢ່າງ: ນ້ຳມາກ, ຂອງໜ້ອຍ, ຄົນຫຼາຍກາຍ, ຜັກຫຼວງຫຼາຍ.

**ຂ. ບອກຈຳນວນຈຳກັດ** ໄດ້ແກ່ຄຳເຫຼົ່ານີ້: ຄົບ, ຖ້ວນ, ທັງໝົດ, ໝົດ, ທັງປວງ, ທຸກໆ, ທັງມວນ, ບັນດາ ຯລຯ.

ຕົວຢ່າງ: ໄດ້ຄົບ, ຄົນທັງໝົດ, ນັກຮຽນທຸກໆຄົນ, ບັນດາສັດ.

**ຄ. ບອກຈຳນວນແບ່ງ** ໄດ້ແກ່ຄຳເຫຼົ່ານີ້: ບາງ, ແດ່, ລາງ, ພ່ອງ, ບາງພ່ອງ, ຕ່າງໆ, ນານາ.

ຕົວຢ່າງ: ນັ່ງແດ່, ນອນແດ່, ບາງຄົນຢືນ, ບາງຄົນນັ່ງ, ລາງຄົນອ່ານ, ລາງຄົນຂຽນ, ລາງພ່ອງຟ້ອນ, ລາງພ່ອງລຳ.

**ງ. ບອກຈຳນວນນັບ** ໄດ້ແກ່ຄຳທີ່ບອກຈຳນວນນັບທຳມະດາ ຄື: 1 2 3 4 5 ... ແລະ ຈຳນວນນັບເປັນຂັ້ນໆ ຄື: ທີ 1, ທີ 2, ທີ 3, ທີ 4, ທີ 5... ຖ້ວນ 1 ຖ້ວນ 2, ຖ້ວນ 3, ຖ້ວນ 4... ຫຼື ອັນດັບ 1, ອັນດັບ 2, ອັນດັບ 3... ເປັນຕົ້ນ.

ຕົວຢ່າງ: ໄມ້ບັນທັດ 1 ອັນ, ປຶ້ມຂຽນ 2 ຫົວ, ສໍດຳ 3 ເສັ້ນ, ສໍຂາວ 4 ແທ່ງ, ສໍສີ 5 ເສັ້ນ, ສອບເສັງໄດ້ທີ 2.

### 4.5 ນິຍົມວິເສດ

ນິຍົມວິເສດແມ່ນຄຳບອກຄວາມຢືນຢັນ ຫຼື ແນ່ນອນ ໄດ້ແກ່ຄຳເຫຼົ່ານີ້ ຄື: ນ່າ, ນີ້, ນັ້ນ,

ພຸ້ນ, ຫັ້ນ, ໜີ້, ແທ້, ຈິງ, ແນ່, ຄັກ, ແນ່ນອນ, ອີຫຼີ, ເດັດດ່ຽວ, ເດັດຂາດ, ໂລດ, ດອກ, ເອງ.
ຕົວຢ່າງ: ບໍ່ແມ່ນ**ດອກ**, ໄດ້**ຄັກ**, ເຮືອນຫຼັງ**ນີ້**, ແມ່ນ**ແທ້**, **ຈິງ**ຕາມເຂົາບອກ, ຟາກ**ພຸ້ນ**.

### 4.6 ອະນິຍົມວິເສດ

ອະນິຍົມວິເສດແມ່ນຄຳບອກຄວາມບໍ່ແນ່ນອນ ຫຼື ບໍ່ຢືນຢັນ ໄດ້ແກ່ຄຳດັ່ງນີ້: ຢ່າງໃດ, ຈັ່ງໃດ, ແນວໃດ, ເຫດໃດ, ອັນໃດ, ທີ່ໃດ, ໃສ, ໃຜ, ຜູ້ໃດ, ຄົນໃດ, ຢ່າງໃດຢ່າງໜຶ່ງ, ອັນໃດອັນໜຶ່ງ, ຈັ່ງວ່າ, ຮອຍວ່າ, ດຽວວ່າ ຯລຯ.

ຕົວຢ່າງ: ເຮັດ**ຢ່າງໃດ**ກໍໄດ້, ເຮັດ**ຈັ່ງໃດ**ກໍຕາມ, ດີ**ທີ່ໃດ**ກໍຕາມ, ເຮັດ**ແນວໃດ**ກໍບໍ່ຢ້ານ, ເຮັດ**ຢ່າງໃດຢ່າງໜຶ່ງ**ກໍໄດ້, **ຮອຍວ່າ**ເຂົາໄປແລ້ວ.

### 4.7 ປຸດສາວິເສດ

ປຸດສາວິເສດແມ່ນຄຳສຳລັບໃຊ້ບອກຄວາມສົງໄສ ຫຼື ຄຳຖາມ ໄດ້ແກ່ຄຳເຫຼົ່ານີ້: ໃຜ, ໃສ, ໃດ, ຫຍັງ, ອັນໃດ, ຄົນໃດ, ແນວໃດ, ຢ່າງໃດ, ຈັ່ງໃດ, ເປັນຫຍັງ... ຄຳວິເສດບອກຄວາມສົງໄສນີ້ ແມ່ນຄຳຈຳພວກດຽວກັບຄຳວິເສດບອກຄວາມບໍ່ແນ່ນອນ ແລະ ຄຳສັບພະນາມໃຊ້ເປັນຄຳຖາມ, ແຕ່ວິທີໃຊ້ຕ່າງກັນ ຄື:

ກ. ສັບພະນາມທີ່ເປັນຄຳຖາມໃຊ້ແທນນາມທີ່ຍັງບໍ່ຮູ້.

ຕົວຢ່າງ: **ໃຜ**ມາ? **ໃຜ**ຢູ່ຫັ້ນ? ລາວໄປ**ໃສ**? ເພິ່ນເຮັດ**ຫຍັງ? ອັນໃດ**ຂອງເຈົ້າ?

ຂ. ຄຳວິເສດບອກຄວາມບໍ່ແນ່ນອນ (ບໍ່ຢືນຢັນ) ໃຊ້ບອກຄວາມບໍ່ແນ່ນອນຂອງຄຳນາມ, ຄຳສັບພະນາມ ແລະ ຄຳກິລິຍາ.

ຕົວຢ່າງ: **ຄົນໃດ**ກໍຕາມ, **ໃຜ**ກໍຊ່າງ, ເຮັດ**ແນວໃດ**ກໍໄດ້, ເຮັດ**ຢ່າງໃດ**ກໍບໍ່ຢ້ານ.

ຄ. ຄຳວິເສດບອກຄວາມສົງໄສ ແມ່ນໃຊ້ບອກຄວາມສົງໄສ ຄ້າຍຄືກັບ ເປັນຄຳຖາມ ເພາະຍັງຄິດສົງໄສຢູ່ .

ຕົວຢ່າງ: ເພິ່ນເຮັດ**ຈັ່ງໃດ**ຈຶ່ງໄດ້, ເຂົາຄິດ**ຈັ່ງໃດ** ຈຶ່ງເຮັດແນວນັ້ນ.

### 4.8 ປະຕິເສດວິເສດ

ປະຕິເສດວິເສດແມ່ນຄຳບອກປະຕິເສດ, ບໍ່ຍອມຮັບ ຫຼື ຫ້າມ ໄດ້ແກ່ຄຳເຫຼົ່ານີ້ ຄື: ບໍ່, ເບິ່ງ, ມິ, ບໍ່ໃຊ່, ໄປ່, ຢ່າ, ຟ້າວ ຯລຯ.

ຕົວຢ່າງ: ເຂົາ**ບໍ່**ມັກດີຈຶ່ງ**ບໍ່**ຍ່ອມເຮັດດີ, ເຂົາ**ບໍ່ໃຊ່**ແມ່ນໝູ່ເຮົາ, **ຢ່າ**ປະພຶດຊົ່ວ.

### 4.9 ປະຕິດຍາວິເສດ

ປະຕິດຍາວິເສດແມ່ນຄຳບອກຄວາມຮັບ ຫຼື ຄວາມຂານ ໄດ້ແກ່ຄຳເຫຼົ່ານີ້: ເອີ, ອື, ເຈົ້າ, ໂດຍ, ແມ່ນ, ມີ, ຢູ່, ໄດ້, ເທີ, ຫືື, ຫຼກ, ເຮີຍ ຯລຯ.

ຕົວຢ່າງ: - **ເອີ,** ແມ່ນແລ້ວ.

- **ເຈົ້າ**, ແມ່ນແລ້ວ.

- **ໂດຍ**, ຂໍນິມົນພະອາຈານໄປສັນເພນ.

### 4.10 ປະພັນທະວິເສດ

ປະພັນທະວິເສດແມ່ນຄຳບອກຄວາມສຳພັນ ຫຼື ຄວາມກ່ຽວຂ້ອງກັນໃນປະໂຫຍກ ໄດ້ແກ່ຄຳເຫຼົ່ານີ້ ຄື: ທີ່, ຜູ້, ຕົວ, ເຊິ່ງ/ຊຶ່ງ, ອັນ.

ຕົວຢ່າງ: - ຂອງອັນນີ້ດີ**ທີ່**ຫາແນວປຽບບໍ່ໄດ້.

- ເປັນເວລາເຫິງນານ**ຊຶ່ງ**ປະມານບໍ່ໄດ້.

- ຈິດໃຈຄົນເຮົານີ້ເລິກ**ອັນ**ບໍ່ສາມາດແທກໄດ້.

**ໝາຍເຫດ**:

ປະພັນທະວິເສດ ແມ່ນຄຳດຽວກັນກັບຄຳປະພັນທະສັບພະນາມທີ່ໃຊ້ແທນຄຳນາມ ແລະ ຄຳສັບພະນາມ ທີ່ຢູ່ລຽນກັນແຕ່ເອີ້ນຊື່ຄຳເຫຼົ່ານັ້ນຕາມໜ້າທີ່ ຄື:

ກ. ຖ້າໃຊ້ແທນຄຳນາມ ຫຼື ສັບພະນາມທີ່ຢູ່ລຽນກັນ ຕ້ອງວາງໄວ້ຂ້າງຫຼັງຂອງຄຳນາມ ຫຼື ຄຳສັບພະນາມນັ້ນສະເໝີ.

ຕົວຢ່າງ: ຂ້ອຍມັກມ້າ**ທີ່**ແລ່ນໄວ.

ຂ. ຖ້າໃຊ້ເປັນຄຳປະພັນທະວິເສດ ເພື່ອບອກຄວາມສຳພັນຕ້ອງວາງໄວ້ຂ້າງຫຼັງຄຳກິລິຍາ ຫຼື ຄຳວິເສດສະເໝີ.

ຕົວຢ່າງ: ມ້າດຳ**ທີ່**ຂ້ອຍມັກແລ່ນໄວຫຼາຍ.

## ໜ້າທີ່ຂອງຄຳວິເສດ

ໃນປະໂຫຍກ, ຄຳວິເສດມັກຈະໃຊ້ເພື່ອເພີ່ມຄວາມໝາຍຂອງຄຳອື່ນ ຊຶ່ງເອີ້ນວ່າ ເຮັດໜ້າທີ່ເປັນສ່ວນຂະຫຍາຍ. ຄຳວິເສດເຮັດໜ້າທີ່ຂະຫຍາຍຄຳໄດ້ຫຼາຍປະເພດ ດັ່ງຕໍ່ໄປນີ້.

1. **ຄຳວິເສດຂະຫຍາຍຄຳນາມ ແລະ ຄຳສັບພະນາມ** ເອີ້ນວ່າ**ຄຳຄຸນນາມ** ຫຼື ຄຳຄຸນສັບ (ນາມວິເສດ).
   - ຄຳວິເສດຂະຫຍາຍຄຳນາມ ເຊັ່ນ: ຄົນ**ສະຫຼາດ**, ຕົ້ນໄມ້**ໃຫຍ່**…
   - ຄຳວິເສດຂະຫຍາຍຄຳສັບພະນາມ ເຊັ່ນ: ຂ້າພະເຈົ້າ**ເອງ**, ພວກທ່ານ**ທັງຫຼາຍ**…
2. **ຄຳວິເສດຂະຫຍາຍຄຳກິລິຍາ** ເອີ້ນວ່າ**ຄຳກິລິຍາວິເສດ** ເຊັ່ນ: ແລ່ນ**ທັນ**, ບິນ**ສູງ**…
3. **ຄຳວິເສດຂະຫຍາຍຄຳວິເສດດ້ວຍກັນ ຫຼື ຄຳກິລິຍາວິເສດ.**
   - ຄຳວິເສດຂະຫຍາຍຄຳວິເສດ ເຊັ່ນ: ຫຼາຍ**ໂພດ**, ດີ**ທີ່ສຸດ**...
   - ຄຳວິເສດຂະຫຍາຍກິລິຍາວິເສດ ເຊັ່ນ: ແລ່ນທັນ**ດີ**, ບິນສູງ**ຫຼາຍ**...

## 5. ຄຳບຸບພະບົດ

ຄຳບຸບພະບົດ ແມ່ນຄຳທີ່ໃຊ້ຢູ່ໜ້າຄຳນາມ, ຄຳສັບພະນາມ, ຄຳກິລິຍາ ເພື່ອສະແດງຄວາມສຳພັນຂອງຄຳ ແລະ ປະໂຫຍກທີ່ຢູ່ຫຼັງຄຳບຸບພະບົດວ່າມີຄວາມກ່ຽວຂ້ອງກັບຄຳ ຫຼື ປະໂຫຍກທີ່ຢູ່ທາງໜ້າແນວໃດ ເຊັ່ນ: ຂອງ, ທີ່, ແຫ່ງ, ເພື່ອ, ໃນ, ສຳລັບ, ກັບ, ແກ່, ແດ່, ຕໍ່ ຯລຯ.

ຄຳບຸບພະບົດແບ່ງອອກໄດ້ຫຼາຍຊະນິດ ດັ່ງນີ້:

**5.1 ບຸບພະບົດບອກສະຖານທີ່** ເຊັ່ນ: ໃນ, ນອກ, ພາຍໃນ, ພາຍນອກ, ໃຕ້, ເທິງ, ເໜືອ, ບົນ, ຮິມ, ແຄມ, ແປະ, ຈີ່ມ, ໃກ້, ນໍ່, ແຈ, ທີ່, ຈາກ, ເຖິງ, ຍັງ ຯລຯ.

ຕົວຢ່າງ: ປຶ້ມອ່ານຂ້ອຍຢູ່**ໃນ**ຖົງ. ຍິງສາວນັ່ງ**ໃຕ້**ຮົ່ມແປກ.
ພໍ່ເຖົ້ານອນ**ເທິງ**ຕຽງ. ລົດຈອດຢູ່**ຫຼັງ**ວັດ.
ເພິ່ນມາ**ຈາກ**ຕ່າງປະເທດ. ອ້າຍເດີນທາງໄປ**ຍັງ**ຕ່າງປະເທດ.

**5.2 ບຸບພະບົດບອກຄວາມປະສົງ** ເຊັ່ນ: ແກ່, ເພື່ອ, ໂດຍ, ດ້ວຍ, ຕາມ.

ຕົວຢ່າງ: ເພິ່ນເຫັນ**ແກ່**ຜູ້ດ້ອຍໂອກາດ. ລາວເຮັດ**ເພື່ອ**ອະນາຄົດ.
ຫົວໜ້າຕ້ອງແກ້ບັນຫາ**ໂດຍ**ໄວ. ກອງປະຊຸມສິ້ນສຸດລົງ**ດ້ວຍ**ດີ.
ຄູໃຫ້ນັກຮຽນແຕ້ມຮູບ**ຕາມ**ຄວາມມັກ.

**5.3 ບຸບພະບົດບອກເວລາ** ເຊັ່ນ: ເມື່ອ, ກ່ອນ, ຈົນ, ຈົນກະທັ້ງ, ຕັ້ງ, ຕັ້ງແຕ່, ຈົນເຖິງ, ຈົນຕະຫຼອດ, ເກືອບ, ຕາບເທົ້າ, ເທົ້າເຖິງ ຯລຯ.

ຕົວຢ່າງ: ລາວອອກເດີນທາງ **ເມື່ອ**ໄດ້ຮັບຄຳສັ່ງ. ຂ້ອຍເກີດ**ກ່ອນ**ເຈົ້າ.
ອາວເຮັດວຽກ**ຈົນ**ເຖົ້າ. ທອງດີມາ**ຕັ້ງແຕ່**ເຊົ້າ.
ເພິ່ນຮັບໃຊ້ຊາດ**ຕາບເທົ້າ**ບໍານານ.

**5.4 ບຸບພະບົດບອກຄວາມເປັນເຈົ້າຂອງ** ເຊັ່ນ: ຂອງ ແຫ່ງ.

ຕົວຢ່າງ: ບົດເລື່ອງສັ້ນ**ຂອງ**ຂ້ອຍໄດ້ລົງພິມໃນວາລະສານ.
ດວງດີຮຽນຢູ່ມະຫາວິທະຍາໄລ**ແຫ່ງ**ຊາດ.

**5.5 ບຸບພະບົດບອກເຄື່ອງມືເຄື່ອງໃຊ້ ຫຼື ອະໄວຍະວະ** ເຊັ່ນ: ດ້ວຍ, ໂດຍ, ກັບ ຯລຯ.

ຕົວຢ່າງ: ທ້າວຄຳຂຽນໜັງສື**ດ້ວຍ**ປາກກາ.
ເພິ່ນເດີນທາງໄປຫຼວງພະບາງ**ໂດຍ**ສາຍການບິນລາວ.
ນາງສີດາເຫັນເຫດການທີ່ເກີດຂຶ້ນ**ກັບ**ຕາ.

**5.6 ບຸບພະບົດບອກເຫດຜົນ** ເຊັ່ນ: ເພາະ, ຍ້ອນ, ຄອບ ໆລໆ.

ຕົວຢ່າງ: ກົບຕາຍ**ຍ້ອນ**ປາກ ຄົນຄາກຕາຍ**ຍ້ອນ**ສຽງ.

ຜົວມີໜ້າ**ຄອບ**ພັນລະຍາສະຫຼາດ.

**5.7 ບຸບພະບົດບອກການເປັນຜູ້ຮັບ** ເຊັ່ນ: ແກ່, ແດ່, ເພື່ອ, ຕໍ່, ສໍາລັບ ໆລໆ.

ຕົວຢ່າງ: ຂ້ອຍຂໍມອບປຶ້ມຫົວນີ້ໃຫ້**ແກ່**ເຈົ້າ. ເຂົາໄດ້ຟ້ອງຮ້ອງ**ຕໍ່**ສານ.

ແມ່ອອກຖວາຍພັດຕາຫານ**ແດ່**ພະສົງ. ລາວເຮັດ**ເພື່ອ**ເຈົ້າ.

ປຶ້ມແບບຮຽນພາສາລາວ**ສໍາລັບ**ຄົນຕ່າງປະເທດ.

**5.8 ບຸບພະບົດບອກການຄາດຄະເນ** ເຊັ່ນ: ເກືອບ, ປະມານ.

ຕົວຢ່າງ: ມີຄົນເຂົ້າຮ່ວມກອງປະຊຸມເທື່ອນີ້**ເກືອບ**ຮ້ອຍຄົນ.

ກໍາໄລທີ່ຈະໄດ້**ປະມານ**ສອງຕື້.

ນອກຈາກຄໍາບຸບພະບົດທີ່ກ່າວມາຂ້າງເທິງນີ້ແລ້ວ, ຍັງມີຄໍາບຸບພະບົດອີກປະເພດໜຶ່ງ ເປັນຄໍາບຸບພະບົດທີ່ຢູ່ຕົ້ນປະໂຫຍກບໍ່ເຊື່ອມກັບຄໍາອື່ນ ມັກໃຊ້ໃນວັນນະຄະດີ ໂດຍເຮັດໜ້າທີ່ເປັນຄໍາຮ້ອງຮຽກ ເຊັ່ນ: ດູລາ, ດູກ່ອນ, ຂ້າແຕ່ ໆລໆ.

ຕົວຢ່າງ: **ດູລາ**ທ່ານພາມຜູ້ປະເສີດ.

**ດູກ່ອນ**ພະພິກຂຸສົງທັງຫຼາຍ.

**ຂ້າແຕ່**ທ່ານຜູ້ຈະເລີນ.

**ໝາຍເຫດ:**

ຄໍາໃນພາສາລາວຄໍາດຽວກັນ ອາດເຮັດໜ້າທີ່ໄດ້ຫຼາຍຢ່າງ ອາດເປັນຄໍາບຸບພະບົດ ຫຼື ຄໍາວິເສດກໍໄດ້. ໃຫ້ສັງເກດວ່າ ຖ້ານໍາໜ້າຄໍາຈະເຮັດໜ້າທີ່ເປັນຄໍາບຸບພະບົດ, ຖ້າຢູ່ຫຼັງຄໍາ ຈະເຮັດໜ້າທີ່ເປັນຄໍາວິເສດ.

ຕົວຢ່າງ: ເຮືອນຂ້ອຍຢູ່ໄກຕະຫຼາດ. ('ໄກ' ເປັນຄໍາບຸບພະບົດນໍາໜ້ານາມ 'ຕະຫຼາດ')

ເຮືອນຂ້ອຍຢູ່ໄກ. ('ໄກ' ເປັນຄໍາວິເສດ ຂະຫຍາຍໃຫ້ຄໍາກິລິຍາ 'ຢູ່')

## 6. ຄໍາສັນທານ

ຄໍາສັນທານ ແມ່ນຄໍາທີ່ໃຊ້ເຊື່ອມຕໍ່ລະຫວ່າງຄໍາ, ປະໂຫຍກ ຫຼື ຂໍ້ຄວາມ ໃຫ້ຕິດຕໍ່ກັນເປັນເລື່ອງດຽວ ເຊັ່ນ: ກໍ, ແລະ, ຫຼື, ແຕ່, ແຕ່ວ່າ, ສ່ວນ, ເພາະ, ຈຶ່ງ, ດັ່ງນັ້ນ ໆລໆ.

ຄໍາສັນທານແບ່ງອອກເປັນຊະນິດຕ່າງໆ ຕາມໜ້າທີ່ຂອງມັນ ດັ່ງຕໍ່ລົງໄປນີ້:

**6.1 ຕໍ່ຄວາມທີ່ຄ້ອຍຕາມກັນ:** ແມ່ນຄໍາສໍາລັບໃຊ້ຕໍ່ຄວາມ ຫຼື ຂໍ້ຄວາມທີ່ອະນຸໂລມໄປນໍາກັນ ເຊັ່ນ: ກັບ, ທັງ, ແລະ, ກໍ, ຈຶ່ງ, ກໍຈຶ່ງ, ຄັນ, ຄັນວ່າ, ຄັນ...ແລ້ວ, ກໍຄື ໆລໆ.

ຕົວຢ່າງ: ເພິ່ນເຮັດຫຍັງ**ກໍ**ມີຄົນຍ້ອງ.

ຂ້ອຍມາຮອດແລ້ວ ເຈົ້າ**ຈຶ່ງ**ໄປເດີ.

ຢານີ້ກິນ**ກໍ**ໄດ້ ທາ**ກໍ**ໄດ້.

ພໍ່**ກັບ**ແມ່ໄປນາ.

ເຂົາເວົ້າ**ຄືດັ່ງ**ເຂົາເຄີຍໄປ.

**6.2 ຕໍ່ຂໍ້ຄວາມທີ່ຂັດກັນ** ແມ່ນຄຳສຳລັບໃຊ້ຕໍ່ຂໍ້ຄວາມຂັດກັນ ເຊັ່ນ: ແຕ່, ແຕ່ວ່າ, ແຕ່ວ່າ, ກໍ, ກວ່າ, ເຖິງວ່າ, ແມ່ນວ່າ, ເຖິງ...ກໍ.

ຕົວຢ່າງ: **ເຖິງ**ເຂົາເກັ່ງ ເຂົາ**ກໍ**ບໍ່ແພ້.

ຝົນຕົກບໍ່ຂາດ **ແຕ່**ຊາວນາຍັງດຳນາ.

ຂ້ອຍເຕືອນແລ້ວ **ແຕ່ວ່າ**ລາວບໍ່ຟັງ.

**ແມ່ນວ່າ**ຈະຫຍຸ້ງຍາກ ລາວ**ກໍ**ຜ່ານຜ່າໄປໄດ້.

**ກວ່າ**ຈະຮຽນຈົບມະຫາວິທະຍາໄລ **ກໍ**ໃຊ້ເວລາໄປຫຼາຍປີ.

**6.3 ຕໍ່ຄຳຕ່າງຝ່າຍກັນ** ແມ່ນຄຳສຳລັບໃຊ້ຕໍ່ຄຳຝ່າຍໜຶ່ງ ກັບອີກຝ່າຍໜຶ່ງໃຫ້ເນື່ອງກັນ ເຊັ່ນ: ຝ່າຍ, ຝ່າຍວ່າ, ສ່ວນ, ສ່ວນວ່າ, ອັນໜຶ່ງ, ອີກຢ່າງໜຶ່ງ ຯລຯ.

ຕົວຢ່າງ: ທ້າວດີເຮັດໄຮ່ **ຝ່າຍ**ນາງມີເຮັດນາ.

ນາງລັດສະໝີໄປຮຽນ **ສ່ວນ**ທ້າວພົມມະຈັນເຮັດວຽກຢູ່ບໍລິສັດ.

ເລີກເຫຼົ້າມີຜົນດີຕໍ່ສຸຂະພາບ **ອີກຢ່າງໜຶ່ງ**ກໍເປັນການປະຢັດລາຍຈ່າຍ.

**6.4 ຕໍ່ຄວາມທີ່ເປັນເຫດຜົນກັນ** ແມ່ນສຳລັບໃຊ້ຄວາມທີ່ເປັນເຫດຜົນຂອງກັນແລະກັນ ເຊັ່ນ: ເພາະ, ເພາະວ່າ, ຍ້ອນ, ຍ້ອນວ່າ, ດ້ວຍວ່າ, ເຫດວ່າ, ຈຶ່ງ, ສະນັ້ນ, ດັ່ງນັ້ນ, ເຫດສະນັ້ນ, ເພາະເຫດນັ້ນ, ເພາະສະນັ້ນ ຯລຯ.

ຕົວຢ່າງ: ເຂົາບໍ່ຮຽນ **ຈຶ່ງ**ບໍ່ຮູ້ໜັງສື.

ລູກດີ**ຍ້ອນ**ພໍ່ແມ່ບອກສອນ.

ເຮັດດີ**ເພາະ**ຢາກໄດ້ດີ.

ເຂົາເຄີຍມີຄວາມຜິດ **ເພາະສະນັ້ນ**ເຂົາຈຶ່ງມີສະຕິລະວັງຕົວ.

**ຍ້ອນ**ຝົນຕົກຫຼາຍ ນ້ຳ**ຈຶ່ງ**ຖ້ວມທາງ.

ລາວມາຮ່ວມປະຊຸມບໍ່ໄດ້ **ເພາະວ່າ**ລາວເປັນໄຂ້ຫວັດໃຫຍ່.

**6.5 ຕໍ່ຄວາມໃຫ້ເລືອກເອົາ** ແມ່ນສຳລັບໃຊ້ຄວາມທີ່ໃຫ້ເລືອກເອົາຢ່າງໜຶ່ງ ອາດຈະແມ່ນຄຳຖາມ ຫຼື ຂໍ້ຄວາມທີ່ຕ້ອງເລືອກເອົາຢ່າງໃດຢ່າງໜຶ່ງ ເຊັ່ນ: ຫຼື, ຫຼືບໍ່ດັ່ງນັ້ນ, ບໍ່ດັ່ງນັ້ນ, ບໍ່ຊັ້ນ ຯລຯ.

ຕົວຢ່າງ: ເຈົ້າຈະໄປ **ຫຼື** ຈະຢູ່?

ເຈົ້າມັກຮຽນ **ຫຼື** ມັກຫຼິ້ນ.

ເຈົ້າຕ້ອງຕັ້ງໃຈຮຽນ **ບໍ່ດັ່ງນັ້ນ**ຈະຄ້າງຫ້ອງ.

ເຈົ້າຕ້ອງອ່ານບົດຮຽນ **ບໍ່ຊັ້ນ**ຊິເສັງຕົກ.

**6.6 ຕໍ່ຄວາມແບ່ງຮັບແບ່ງສູ້** ແມ່ນຄຳສຳລັບໃຊ້ຕໍ່ຂໍ້ຄວາມທີ່ບໍ່ແນ່ນອນ ຫຼື ເປັນຄວາມຄາດຄະເນເອົາ ຄືຈະຮັບຮອງແທ້ກໍຍັງບໍ່ແນ່ໃຈ ເຊັ່ນ: ຖ້າ, ຖ້າວ່າ, ຫາກ, ຫາກວ່າ, ຖ້າຫາກວ່າ, ຜິວ່າ, ແມ່ນ, ແມ່ນວ່າ, ເວັ້ນແຕ່, ເວັ້ນຈາກ, ນອກຈາກ ຯລຯ.

ຕົວຢ່າງ: **ຖ້າ**ຝົນຕົກ ຂ້ອຍຈະບໍ່ໄປ.

ຂ້ອຍຕ້ອງໄປ **ເວັ້ນແຕ່**ມີເຫດຂັດຂ້ອງ.

**ຜິວ່າ**ຕາບໍ່ຄືວ ຊິເບົາເບື້ອງຝ່າຍສະໄນ. (ຜະຫຍາ)

**ຖ້າວ່າ**ເຈົ້າຍອມປະຕິບັດຕາມສັນຍານີ້ ຂ້ອຍກໍຈະອະນຸຍາດໃຫ້.

**6.7 ຕໍ່ຄວາມປຽບທຽບ** ແມ່ນຄຳສຳລັບໃຊ້ຕໍ່ຂໍ້ຄວາມປຽບທຽບກັນ ເຊັ່ນ: ດຸດ, ດຸດຈະດັ່ງ, ປະດຸດຈະດັ່ງ, ປານວ່າ, ສໍ່າ, ຮາວ, ຮາວກັບ, ຮາວກັບວ່າ, ພຽງ, ພຽງດັ່ງ, ພຽງດັ່ງວ່າ, ຄືດັ່ງ, ເໝືອນດັ່ງ, ສະເໝືອນ ຯລຯ.

ຕົວຢ່າງ: ຈອມພູເບັ້ຍ**ສູງພຽງ**ເມກ.

ລາວແຂງແຮງ**ຄືດັ່ງ**ຊ້າງສານ.

ຄື້ນທະເລຍອກຂຶ້ນ**ຮາວກັບ**ໜ່ວຍພູ.

ຂາວງາມ**ປະດຸດດັ່ງ**ຍອງຝ້າຍ.

ເຂົາເຮັດກັບເຮົາ**ເໝືອນດັ່ງ**ອ້າຍນ້ອງດຽວກັນ.

**6.8 ຕໍ່ຄວາມເພື່ອໃຫ້ມ່ອນ ແລະ ອອມຊອມກັນ** ແມ່ນຄຳສຳລັບຕື່ມເຂົ້າ ເພື່ອໃຫ້ມ່ວນຂຶ້ນກວ່າເກົ່າ ເຊັ່ນ: ອັນວ່າ, ກໍ, ເຖິງຢ່າງໃດກໍຕາມ, ແມ່ນຈັ່ງໃດກໍຊ່າງ ຯລຯ.

ຕົວຢ່າງ: **ອັນວ່າ**ຄວາມສຸພາບອ່ອນນ້ອມໃຜໆ**ກໍ**ມັກ.

ເຈົ້າໄປ ຂ້ອຍ**ກໍ**ໄປເຊັ່ນກັນ.

**ຢ່າງໃດກໍດີ** ທຸກຄົນຕ້ອງອົດທົນໃນສະພາບເສດຖະກິດຫຍຸ້ງຍາກ.

**ເປັນຈັ່ງໃດກໍຕາມ** ພວກເຮົາຕ້ອງຊ່ວຍເຫຼືອກັນ.

## 7. ຄໍາອຸທານ

ຄໍາອຸທານ ແມ່ນຄໍາ ຫຼື ສຽງທີ່ເປັ່ງອອກມາ ເພື່ອບອກອາການ ຫຼື ຄວາມຮູ້ສຶກຂອງຜູ້ສິ່ງສານ. ສຽງທີ່ອຸທານອອກມາບາງເທື່ອກໍມີຄວາມໝາຍ, ແຕ່ບາງເທື່ອກໍບໍ່ມີຄວາມໝາຍ. ເວົ້າຢ່າງໜຶ່ງຄໍາອຸທານແມ່ນຄໍາທ້ວງ ທີ່ສະແດງອາການດີໃຈ, ຕົກໃຈ, ເສຍໃຈ, ປະຫຼາດໃຈ, ສົງສານ, ເຈັບປວດ, ຢ້ານຮ້າຍ... ເວລາຂຽນໃຫ້ໃສ່ເຄື່ອງໝາຍທ້ວງ (!) ໃສ່ຫຼັງຄໍາອຸທານ ສະເໝີ ເຊັ່ນ: ໄຊໂຍ! ບະນໍ! ໂອນໍ! ອ້າວ! ໂຢ້ວ! ຊົມເຊີຍ! ເປັນຕົ້ນ.

ຄໍາອຸທານ ມີ 2 ຊະນິດ ຄື: ຄໍາອຸທານທໍາມະດາ ແລະ ຄໍາອຸທານເພີ່ມທ້າຍ (ຄໍາໂຕ່ງໂຕຍ ຫຼື ຄໍາສ້ອຍທ້າຍ) ດັ່ງລາຍລະອຽດຂ້າງລຸ່ມນີ້:

### 7.1 ຄໍາອຸທານທໍາມະດາ

ຄໍາອຸທານທໍາມະດາ ຫຼື ຄໍາອຸທານບອກອາການ ແມ່ນຄໍາທີ່ຜູ້ເວົ້າເປັ່ງສຽງອອກມາ ເພື່ອສະແດງຄວາມຮູ້ສຶກຢ່າງໃດຢ່າງໜຶ່ງຂອງຕົນໃຫ້ຜູ້ອື່ນຮູ້ ໄດ້ແກ່: ເຮີຍ, ເອີຍ, ເວີຍ, ແນ່, ແນ້, ແນ້ໆ, ໂບ໋, ບະ, ບ໊ະ, ໂຢ້ວ, ເຢື້ວ, ຫວະ, ເອ, ໂອ, ໂທ, ປະໂທ, ປາດໂທ້, ອະນິດຈາ, ພຸດໂທເອີຍ, ເຈົ້າເອີຍ, ເອີ, ເອີ້, ອື, ອື່, ອື້, ໂອຍ, ໂອ້ຍ, ຫາ, ຫື, ຫືີ, ເຫີ, ອ້າວ, ອິ, ຮວ້າຍ, ນີ້ນາ, ຊົມເຊີຍ, ໄຊໂຍ, ໂຮຮິວ, ຮາຮິວ ຯລຯ.

ຄໍາອຸທານຂ້າງເທິງນີ້ ເປັນສຽງ ຫຼື ເປັນຄໍາທີ່ຜູ້ເວົ້າເປັ່ງສຽງຮ້ອງອອກມາປະກອບໃສ່ກັບອາການຢ່າງໃດຢ່າງໜຶ່ງຈຶ່ງເຂົ້າໃຈ. ເວລາຂຽນ ໃຫ້ໃສ່ໝາຍທ້ວງ (!) ຕື່ມໃສ່ທາງທ້າຍຖັດຄໍາອຸທານນັ້ນໆສະເໝີ.

ຄໍາອຸທານຊະນິດນີ້ ແບ່ງຕາມການສະແດງອາການຕ່າງໆ ດັ່ງລຸ່ມນີ້:

**1) ສະແດງອາການດີໃຈ** ເຊັ່ນ: ຊົມເຊີຍ, ໄຊໂຍ, ໂຮຮິວ...

ຕົວຢ່າງ: ຄະນະຂອງພວກເຮົາສ້າງຜົນງານໄດ້ຕົວເດັ່ນປະເພດໜຶ່ງ ຊົມເຊີຍ!

ໄຊໂຍ! ພວກເຮົາຊະນະແລ້ວ.

ໂຮຮິວ! ເຮືອຊ່ວງເຮົາແຊງຂຶ້ນໜ້າແລ້ວ.

**2) ສະແດງອາການຮ້ອງຮຽກ** ເຊັ່ນ: ເຮີຍ, ແນ້, ເອີຍ...

ຕົວຢ່າງ: **ເຮີຍ**! ເຊົາກ່ອນ.

**ແນ້**! ຢ່າເຮັດຈັ່ງຊັ້ນແມ.

**ເອີຍ!** ຢ່າຟ້າວໄປ ເອົາເງິນທອນກ່ອນ.

**3) ສະແດງອາການປະຫຼາດໃຈ** ແມ່ນຄໍາຈໍາພວກ: ເອ, ໂອ, ໂອ່, ໂອ້, ໂທ, ໂທ້, ປາດໂທ້, ບ໊ະ, ບ໊ະເໜາະ, ບ໋າ ...

ຕົວຢ່າງ: **ເອ!** ສັງມາເປັນແນວນີ້.

**ໂອ!** ມາຊ່າງເປັນແທ້.

**ໂທ້!** ສັງມາເກັ່ງແທ້.

**ປາດໂທ້!** ພູໜ່ວຍນີ້ຈັ່ງແມ່ນສູງພິລຶກ.

**ບ໊ະ!** ກະດຽວວ່າເຮັດແລ້ວໆ.

**ບ່າ!** ຂອງເຮົາແທ້ໆ ຍັງຊິວ່າແມ່ນຂອງໂຕຈັ່ງໃດ.

**4) ສະແດງອາການບໍ່ພໍໃຈ** ແມ່ນຄຳຈຳພວກ: ບ໊ະ, ໂຍ້ວ, ປາດໂທ້...

ຕົວຢ່າງ: **ບ໊ະ!** ເຮັດໂພດໄປແລ້ວ.

**ໂຍ້ວ!** ເປັນຫຍັງຄືບອກບໍ່ຟັງແທ້.

**ປາດໂທ້!** ຈັ່ງແມ່ນເຮັດຄັກແທ້ນໍ.

**5) ສະແດງອາການສົງສານ** ແມ່ນຄຳຈຳພວກ: ອະນິດຈາເອີຍ, ພຸດໂທເອີຍ, ເຈົ້າເອີຍ, ຟ້າເອີຍ.

ຕົວຢ່າງ: **ອະນິດຈາເອີຍ!** ມາເປັນຕາອີຕົນແທ້.

**ພຸດໂທເອີຍ!** ບໍ່ເປັນຕາຊິເປັນຈັ່ງຊີ້.

**ເຈົ້າເອີຍ!** ເຫັນແລ້ວອົດສົງສານບໍ່ໄດ້.

**6) ສະແດງອາການເຂົ້າໃຈ** ແມ່ນຄຳຈຳພວກ: ເອີ, ເອີ້, ອື໊...

ຕົວຢ່າງ: **ເອີ!** ໄດ້ແລ້ວ.

**ເອີ້!** ເຂົ້າໃຈແລ້ວ.

**ອື໊!** ແມ່ນແລ້ວ.

**7) ສະແດງອາການເຈັບປວດ** ເຊັ່ນ: ອຸ່ຍ, ໂອ້ຍ, ໂອ້ຍໆ...

ຕົວຢ່າງ: **ອຸ່ຍ!** ຢ່າເຮັດແຮງຫຼາຍມັນເຈັບ,

**ໂອ້ຍ!** ສັງມາເຈັບແທ້ເດ.

**ໂອ້ຍໆ!** ເຈັບແທ້ເດ.

**8) ສະແດງອາການສົງໄສ** ເຊັ່ນ: ຫື, ຫື໊, ເຫີ, ຫາ...

ຕົວຢ່າງ: ອື! ບໍ່ແມ່ນຂາຫັກແລ້ວບໍ້?

ຫື! ແມ່ນແທ້ບໍ່.

ເຫີ! ແມ່ນຫຍັງນີ.

**ຫາ!** ລາວໄດ້ໄປຮຽນຕ່າງປະເທດຫວາ?

**9) ສະແດງອາການທ້ວງ** ເຊັ່ນ: ເຍີ້, ເອ່ວໆ, ເອີ້ຍ, ເຮີຍ...

ຕົວຢ່າງ: **ເຢີ້**! ເປັນຫຍັງພາກັນເຮັດແນວນັ້ນ.

**ເອ່ວໆ**! ຄົນບໍ່ອາບນ້ຳ.

**ເອີ໊ຍ**! ບໍ່ແວ່ຢາມແດ່ບໍ?

**ເຮີ໊ຍ**! ຊິໄປໃສ?

**10) ສະແດງອາການຕື່ນຕົກໃຈ ຫຼື ຢ້ານ** ເຊັ່ນ: ໂຢ້ວ, ໂຢ້ວໆ, ອຸຍ, ໂອ້, ໂອ້ຍ.

ຕົວຢ່າງ: **ໂຢ້ວ**! ຄືເປັນຕາຢ້ານແທ້.

**ໂຢ້ວໆ**! ຊິງຊິກັດແທ້.

**ອຸຍ**! ເກືອບພະລາດລົ້ມ.

**ໂອ້ຍ**! ເກືອບຕາຍ.

**ໂອ້**! ເກືອບຢຽບເນາະ.

**11) ສະແດງຄວາມເຫັນດີນຳ** ເຊັ່ນ: ອື, ອື້, ເອີ, ເອີ້

ຕົວຢ່າງ: **ອື** ! ແມ່ນແລ້ວ.

**ອື້** ! ໄດ້ແລ້ວ.

**ເອີ** ! ເຮັດແນວນັ້ນແຫຼະ.

**ເອີ້** ! ແມ່ນຄວາມເຈົ້າແລ້ວ.

**12) ສະແດງອາການໜຸ່ມຮໍ (ຖືຕໍ່າ)** ແມ່ນຈຳພວກ: ອິວະ, ເອັຍ...

ຕົວຢ່າງ: **ອິວະ**! ເຫັນແລ້ວປວດຮາກ.

**ອິວະ**! ເບິ່ງແລ້ວຮາກຊິອອກ.

**ເອັຍ**! ໃຫ້ພຽງສໍ່ານີ້ຫວະ.

**ເອັຍ**! ຂອງບໍ່ເປັນຕາເອົາ

**13) ສະແດງອາການວ່າໄດ້ເວົ້າຜິດ ຫຼື ເຮັດຜິດໄປ ເຊັ່ນ**: ຫື, ອຸ່ຍ, ໂອຍ, ໂອ້ຍ.

ຕົວຢ່າງ: **ອຸ່ຍ**! ບໍ່ແມ່ນ.

**ໂອຍ**! ລືມໄປ.

**ໂອຍ**! ຜິດແລ້ວ.

**14) ສະແດງອາການວ່າຄິດພໍ້ອັນໃດອັນໜຶ່ງຂຶ້ນມາໄດ້** ເຊັ່ນ: ອື, ໂອ, ໂອ່...

ຕົວຢ່າງ: **ອື** ! ຄິດພໍ້ແລ້ວ.

**ໂອ** ! ຄິດອອກແລ້ວ.

**ໂອ່** ! ເກືອບລືມໄປເນາະ.

15) **ສະແດງຄວາມຊົມເຊີຍ, ຄວາມສະໜັບສະໜູນ, ຄວາມອວຍໄຊໃຫ້ພອນ ແລະ ຄວາມອ້ອນວອນ** ເຊັ່ນ: ຊົມເຊີຍ, ສະໜັບສະໜູນ, ໝັ້ນຢືນ, ດີທ້ອນ, ນຳທ້ອນ, ສາທຸ, ສາທຸທ້ອນ, ເທີ້ນ...

ຕົວຢ່າງ: ຊົມເຊີຍຜົນງານຂອງຄະນະຊາວໜຸ່ມລາວ **ຊົມເຊີຍ**!

ສະໜັບສະໜູນຂະບວນການປົດປ່ອຍຊາດ **ສະໜັບສະໜູນ**!

ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວ **ໝັ້ນຢືນ**!

ຈົ່ງໄປ**ດີທ້ອນ**!

**ສາທຸ**! ຂໍໃຫ້ຕະຫຼອດປອດໄພ.

**ສາທຸທ້ອນ!** ຂໍໃຫ້ຢູ່ດີມີແຮງ.

**ໝາຍເຫດ**:

ຄຳອຸທານທຳມະດາ ຫຼື ຄຳອຸທານບອກອາການ ສ່ວນຫຼາຍມັກສະແດງອອກ ຫຼື ປະກອບຢູ່ຕົ້ນປະໂຫຍກ; ແຕ່ບາງທີກໍສະແດງອອກ ຫຼື ປະກອບຢູ່ທ້າຍຄຳ, ທ້າຍປະໂຫຍກ ຊຶ່ງສຸດແລ້ວແຕ່ວາດເວົ້າ ຫຼື ແຕ່ລະອາການຂອງຜູ້ສະແດງອອກ.

## 7.2 ຄຳອຸທານເພີ່ມທ້າຍ

ຄຳອຸທານເພີ່ມທ້າຍ ແມ່ນຄຳທີ່ຕື່ມໃສ່ທ້າຍຄຳ ຫຼື ເປັນຄຳສ້ອຍ ເພື່ອເນັ້ນຄຳໃຫ້ເໝາະມ່ວນຍິ່ງຂຶ້ນ. ເວລາຂຽນບໍ່ຕ້ອງໃສ່ເຄື່ອງໝາຍທ້ວງຢູ່ທ້າຍຄຳດັ່ງຄຳອຸທານ ທຳມະດາ.

### 1) ຄຳອຸທານທີ່ຕື່ມໃສ່ທ້າຍຄຳ

ຄຳອຸທານທີ່ຕື່ມໃສ່ທ້າຍຄຳນີ້ ເປັນຄຳເວົ້າແບບໂຕງໂຕຍເພື່ອໃຫ້ມ່ວນ ບາງຄຳອາດຈະບໍ່ມີຄວາມໝາຍ ເຊັ່ນ: ເຕົ້າ, ເຕົ້າເຫຼົ່າກໍ, ຜາ, ຜານາທີ, ແພ, ໄນ, ຜາປ່າດົງ, ຊານ, ບ້ານຊ່ອງ, ຕາກ້າ, ທົ່ນທາງ, ປ່າຍລ່າຍ, ພາມໆ, ພ່າຍລ່າຍ, ສົກສື້ວ, ເອ້ເຮ້, ຄິກມິກ, ຈີ່ລີ່, ຈັດປັດ, ຈິດປິດ, ປີກ, ຈ່າງປ່າງ, ຄົ້ງໂນ້ງ, ເທນເທັກ, ເທີນເທີ້, ເທີ້ເລີ້, ໂຖກເຖກ ຯລຯ.

ຕົວຢ່າງ: ບໍ່ມີລູກ**ເຕົ້າ**, ລູກ**ເຕົ້າເຫຼົ່າກໍ**, ເລກ**ຜາ**, ເລກ**ຜານາທີ**, ນ້ຳ**ໄນໄຟຟືນ**, ພູຜາ**ປ່າດົງ**, ເຮືອນ**ຊານບ້ານຊ່ອງ**, ໄຮ່ນາ**ຕາກ້າ**, ຖະໜົນ**ຫົນທາງ**, ເລືອດແດງ**ປ່າຍລ່າຍ**, ນ້ຳຕົກຕາດ**ທາດໆ**, ຟ້າແຈ້ງ**ຈ່າງປ່າງ**, ສາຍພູຍາວ**ຄົ້ງໂນ້ງ**, ນົກກະຊຸມຫົວລ້ານ**ເທີນເທີ້**, ນົກກະສາຂາຍາວ**ໂຖກເຖກ**.

**2) ຄຳອຸທານທີ່ເປັນຄຳສ້ອຍ**

ຄຳອຸທານທີ່ເປັນຄຳສ້ອຍ ແມ່ນຄຳທີ່ໃຊ້ເປັນຄຳເສີມຢູ່ທ້າຍວັກຂອງບົດກາບກອນ ເພື່ອໃຫ້ມ່ວນ ແລະ ຄົບຖ້ວນຕາມຫຼັກສັນທະລັກສະນະ ເຊັ່ນ: ແທ້ນາ, ແທ້ດາຍ, ພຸ້ນເຢີ, ນັ້ນແລ້ວ, ກໍດີທ້ອນ, ແລເດ, ເຈົ້າເອີຍ ຯລຯ.

ຕົວຢ່າງ: ພີ່ກໍເຫັນຮູບນ້ອງ ຕັ້ງແຕ່ໃນມະໂນ **ແລເດ**
ເໝືອນໝ່ອມແນວນຳຮັກ ຮູບຂວັນແຂວນໄວ້
ໂອຍໂອຍໂອ້ ຮຸນແຮງຮ້ອນສະຫວາດ
ເທື່ອນີ້ອ້າຍຈາກເຈົ້າ ເຈຍລະຮ້າງຮູບໄລ **ແລນາ**



## V. ຫຼັກການໃຊ້ຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ແລະ ພາສາຕ່າງປະເທດ

### 1. ການໃຊ້ຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ

ຄຳພາສາລາວທີ່ມີເຄົ້າມາຈາກພາສາປາລີ ແລະ ສັນສະກິດນັ້ນ, ເຖິງວ່າຮູບການຂຽນພັ້ຽນຈາກຮູບເດີມແລ້ວກໍຕາມ, ແຕ່ກໍຕ້ອງຮັກສາຫຼັກການຂຽນຂອງມັນ ທັງນີ້ກໍເພື່ອຮັກສາຄວາມໝາຍຂອງມັນໄວ້.

#### 1.1 ການຂຽນສະກົດຄຳ

ການຂຽນສະກົດຄຳທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດມີດັ່ງນີ້:

**1) ຂຽນສະກົດຄຳໃຫ້ຖືກຕາມສຽງພາສາລາວ**

ຄຳລາວທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ສ່ວນຫຼາຍໄດ້ແຜງມາເປັນຄຳລາວຕາມສຽງພາສາລາວ ແລະ ຮູບການຂຽນກໍພັ້ຽນຈາກຮູບເດີມໄປແລ້ວ. ດັ່ງນັ້ນ, ການຂຽນກໍ ຕ້ອງໃຫ້ຖືຕາມສຽງພາສາລາວເປັນຫຼັກ.

- ໃຊ້ຕົວ ລ ແທນຕົວ ຣ ເຊັ່ນ: ລັດຖະບານ, ລະດູ, ລະຫັດ, ລາສະດອນ, ລາຕີ, ລາສີ, ລົດ, ໂລຄາ, ອະນຸລັກ...
- ໃຊ້ຕົວ ຣ ແທນຕົວ ຣ ເຊັ່ນ: ຮັກສາ, ເສນາຮັກ, ນະຮົກ, ບູຮານ...

**2) ຂຽນສະກົດຄຳໃຫ້ຖືກຕາມການແຜງຕົວອັກສອນ**

ການຂຽນສະກົດຄຳຕ້ອງໃຫ້ຖືກຕາມການແຜງອັກສອນ ເຊັ່ນ:

| | | | |
|---|---|---|---|
| - ການແຜງສະຫຼະ: | ກີລາ | ແຜງເປັນ | ກິລາ |
| | ຕີ | ແຜງເປັນ | ຕີ ຫຼື ໄຕ |
| - ການແປງພະຍັນຊະນະ: | ປິຕາ | ແຜງເປັນ | ບິດາ |
| | ວິທີ | ແຜງເປັນ | ພິທີ |

**3) ຂຽນໃຫ້ຖືກຕາມຫຼັກການພິເສດໃນການແປງຄຳຈາກພາສາປາລີ-ສັນສະກິດມາເປັນຄຳພາສາລາວ**

ກ. ຖ້າຄຳໃດໃນພາສາປາລີ-ສັນສະກິດມີ 2 ພະຍາງຂຶ້ນໄປ ແປງມາເປັນພະຍາງດຽວ ຫຼື ເປັນພະຍາງສຸດທ້າຍບໍ່ມີພະຍາງອື່ນຕໍ່ ໃຫ້ໃຊ້ຕົວສະກົດທັງ 8, ແຕ່ຖ້າຍັງມີພະຍາງອື່ນຕໍ່ໄປ ອີກໃຫ້ຮັກສາສຽງພະຍາງເດີມໄວ້.

ຕົວຢ່າງ:

| **ຄຳເຄົ້າ** | **ຄຳພະຍາງດຽວ** | **ຄຳຫຼາຍພະຍາງ** |
|---|---|---|
| ສຸຂະ | ສຸກ | ສຸຂະພາບ, ສຸຂາພິບານ |
| ສິລະປະ | ສິນ | ສິລະປະກຳ, ສິລະປະກອນ |

| | | |
|---|---|---|
| ເອກະ | ເອກ | ເອກະພາບ, ເອກະຊົນ |

ຂ. ຖ້າຄຳໃດໃນພາສາປາລີ-ສັນສະກິດມີ 2 ພະຍາງຂຶ້ນໄປ ແລະ ເປັນສະຫຼະ xະ, ເມື່ອປ່ຽນມາເປັນຄຳລາວມີພະຍາງດຽວ ແລະ ເປັນສະຫຼະ ໂxະ ຕ້ອງໄດ້ຕື່ມສຽງພະຍາງທີ 2 ອີກ ເພື່ອຮັກສາຄວາມໝາຍເດີມໄວ້.

ຕົວຢ່າງ:

| **ຄຳເຄົ້າ** | **ຄຳພະຍາງດຽວ** | **ຄຳຫຼາຍພະຍາງ** |
|---|---|---|
| ພະລະ | ພົນ | ພົນລະເມືອງ |
| ວະຈະນະ | ພົດ | ພົດຈະນານຸກົມ |
| ຊະນະ | ຊົນ | ຊົນນະບົດ |
| ທະສະ | ທົດ | ທົດສະວັດ |

ຄ. ຖ້າຄຳໃດໃນພາສາປາລີ-ສັນສະກິດມີຕົວສະກົດຮຽງກັນຢູ່ 2 ຕົວ (ພະຍັນຊະນະສັງໂຍກ), ໃນເວລາປ່ຽນເປັນຄຳລາວ ມີພະຍາງດຽວໃຫ້ໃຊ້ຕົວສະກົດທັງ 8 ຕາມສຽງຂອງ ລາວ; ຖ້າເປັນຄຳຫຼາຍພະຍາງໃຫ້ຮັກສາສຽງພະຍາງເດີມໄວ້. ໃນກໍລະນີມີຕົວ ຣ ຄວບຢູ່ນຳ ໃຫ້ຕັດຕົວ ຣ ອອກ.

ຕົວຢ່າງ:

| **ຄຳເຄົ້າ** | **ຄຳພະຍາງດຽວ** | **ຄຳຫຼາຍພະຍາງ** |
|---|---|---|
| ສັຈຈະ | ສັດ | ສັດຈະທຳ, ສັດຈະທັດ |
| ພຸທທະ | ພຸດ | ພຸດທະສາສະໜາ |
| ສາສຕຣະ | ສາດ | ສາດຕະສົນ |
| ຈິຕຕະ | ຈິດ | ຈິດຕະວິທະຍາ |

**4) ຂຽນໃຫ້ຖືກຕາມວິທີປະກອບຄຳສະໝາດ ແລະ ຄຳສົນທິ**

ການຂຽນຄຳປະສົມ ຄວນຄຳນຶງເຖິງຫຼັກການຕໍ່ຄຳແບບສະໝາດ ຕາມໄວຍາກອນປາລີ-ສັນສະກິດ ເຊັ່ນ: ລັດຖະບານ (ລັດຖະ+ປາລະ), ສັນຕິສຸກ (ສັນຕິ+ສຸຂະ), ທໍລະນີວິທະ ຍາ (ທໍລະນີ+ວິທະຍາ), ຄະນະບໍດີ (ຄະນະ+ປະຕີ).

ນອກຈາກນັ້ນ, ກໍຄຳນຶງເຖິງຫຼັກການສົນທິ ເຊັ່ນ: ວິທະຍາຄານ (ວິທະຍະ+ອາຄະຣະ), ມະຫັດສະຈັນ (ມະຫາ+ອັດສະຈັນ), ປະຊາທິປະໄຕ (ປະຊາ+ອະທິປະໄຕ).

5) ໃຊ້ສະຫຼະ ໄx ພຽງຕົວດຽວ

ການຂຽນຄຳລາວທີ່ມີເຄົ້າມາຈາກພາສາປາລີ-ສັນສະກິດ ອອກສຽງສະຫຼະ ໄx ໃຫ້ໃຊ້ ສະຫຼະ ໄx ໄມ້ມາຍຕົວດຽວເທົ່ານັ້ນ, ບໍ່ໃຊ້ສະຫຼະ ໃx ແລະ ໄັຍ ເຊັ່ນ: ວິໄນ, ວິໄຈ, ວິໄສທັດ, ອາໄສ, ນິດໄສ.

### 1.2 ການອ່ານ

ການອ່ານຄຳພາສາລາວທີ່ມີເຄົ້າມາຈາກພາສາປາລີ ແລະ ສັນສະກິດ ມີຫຼັກການດັ່ງນີ້:

1) ຄຳທີ່ເປັນຄຳເຄົ້າເດີມມີສອງ ຫຼື ສາມພະຍາງ, ໃນພະຍາງທຳອິດໃຫ້ອ່ານອອກສຽງເນື່ອງກັບພະຍາງທີສອງ ໂດຍມີສຽງຕົວສະກົດຂອງແມ່ທັງແປດ.

| | | | |
|---|---|---|---|
| ຕົວຢ່າງ: | ສຸຂະ | ອ່ານເປັນ | ສຸກ-ຂະ |
| | ເອກະ | ອ່ານເປັນ | ເອກ-ກະ |
| | ສິລະປະ | ອ່ານເປັນ | ສິນ-ລະ-ປະ |

2) ຄຳທີ່ເປັນຄຳສະໝາດ ຫຼື ຄຳສົນທິ, ໃນກໍລະນີທີ່ພະຍາງທຳອິດບໍ່ມີຕົວສະກົດໃຫ້ອ່ານອອກສຽງເນື່ອງກັບພະຍັນຊະນະແກນຂອງພະຍາງທີສອງ ໂດຍມີສຽງຕົວສະກົດຂອງແມ່ທັງແປດ.

| | | | |
|---|---|---|---|
| ຕົວຢ່າງ: | ສຸຂະພາບ | ອ່ານເປັນ | ສຸກ-ຂະ-ພາບ |
| | ເອກະພາບ | ອ່ານເປັນ | ເອກ-ກະ-ພາບ |
| | ສິລະປະກຳ | ອ່ານເປັນ | ສິນ-ລະ-ປະ-ກຳ |
| | ວິທະຍາຄານ | ອ່ານເປັນ | ວິດ-ທະ-ຍາ-ຄານ |

3) ຄຳທີ່ເປັນຄຳສະໝາດ ຫຼື ຄຳສົນທິ, ໃນກໍລະນີທີ່ພະຍາງທຳອິດມີຕົວສະກົດໃຫ້ອ່ານອອກສຽງຕົວສະກົດນັ້ນເລີຍ.

| | | | |
|---|---|---|---|
| ຕົວຢ່າງ: | ພົນລະເມືອງ | ອ່ານເປັນ | ພົນ-ລະ-ເມືອງ |
| | ຊົນນະບົດ | ອ່ານເປັນ | ຊົນ-ນະ-ບົດ |
| | ທິດສະວັດ | ອ່ານເປັນ | ທິດ-ສະ-ວັດ |
| | ສັນຕິສຸກ | ອ່ານເປັນ | ສັນ-ຕິ-ສຸກ |

## 2. ການໃຊ້ຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດ

ຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດ ໃນພາສາລາວປະກອບດ້ວຍຄຳທີ່ມາຈາກພາສາຂະແມ, ຝຣັ່ງ, ອັງກິດ, ໄທ, ຈີນ, ຫວຽດ ແລະ ອື່ນໆ. ການຢືມຈາກພາສາໃດ ກໍແມ່ນການລອກເອົາສຽງຂອງພາສານັ້ນ ໃຫ້ຄືສຽງເດີມທີ່ສຸດ ເທົ່າທີ່ສຽງ ແລະ ອັກສອນຂອງພາສາລາວມີໃຊ້

ໂດຍສະເພາະແມ່ນສັບທາງວິທະຍາສາດ, ເຕັກໂນໂລຊີ, ສັບສະເພາະ ແລະ ອື່ນໆ.

ການຂຽນຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດໃຫ້ປະຕິບັດດັ່ງນີ້:

1) ຄຳທີ່ໄດ້ແປງມາເປັນພາສາລາວແລ້ວ ຊຶ່ງພົ້ນຈາກພາສາເດີມ ແລະ ນິຍົມໃຊ້ກັນຢ່າງແຜ່ຫຼາຍແລ້ວ ກໍໃຫ້ນຳໃຊ້ ຫຼື ຂຽນແບບນັ້ນຕໍ່ໄປ ເຊັ່ນ: ກຳຈັດ, ກັງວົນ, ຈະເລີນ, ຕຳຫຼວດ... (ຂ.); ເຕົ້າຮູ້, ຍີ່ຫໍ້, ຫຸ້ນ... (ຈ.), ເຝີ, ຢໍ່, ບັນກອນ...(ຫວ.).

2) ຄຳໃດຢືມມາຈາກ 2 ພາສາ ແລະ ໃຊ້ຄຽງຄູ່ກັນໄປ (ຝຣັ່ງ, ອັງກິດ) ໃຫ້ພິຈາລະນາວ່າເຮົາຢືມຄຳນັ້ນມາຈາກພາສາໃດກ່ອນ ແລະ ໃຫ້ສະກົດຄຳຕາມພາສາທີ່ຢືມມາກ່ອນ, ຄຳໃດທີ່ໃຊ້ມາຢ່າງກວ້າງຂວາງ ແລະ ຊິນເຄີຍແລ້ວ ກໍຄວນຮັກສາໄວ້. ສ່ວນຄຳທີ່ຢືມມາໃໝ່ກໍກຳນົດວ່າ ຈະສະກົດຕາມພາສາໃດ ແລ້ວນຳໃຊ້ໃຫ້ເປັນເອກະພາບກັນ. ໃນເອກະສານທາງການນັ້ນ, ຄຳດຽວບໍ່ຄວນສະກົດເປັນ 2 ພາສາ.

ຕົວຢ່າງ:

ຄຳທີ່ໃຊ້ມາກ່ອນແລ້ວ: ເອເລັກໂຕຣນິກ, ອິນເດຍ, ຣັດເຊຍ, ວິຕາມິນ, ນ້ຳມິນ, ປາແລັດສະຕິນ, ແອັດສະປາຍ, ອາກຊັງຕິນ, ລຸກຊຳບວກ, ເຕັກໂນໂລຊີ...

ບາງຄຳທີ່ໃຊ້ມາແລ້ວ ແຕ່ເຫັນວ່າ ບໍ່ເໝາະສົມກັບຍຸກສະໄໝປັດຈຸບັນ ກໍປັບປຸງປ່ຽນແປງໃຊ້ຄຳທີ່ເໝາະສົມກວ່າ ເປັນຕົ້ນແມ່ນຊື່ບາງປະເທດ, ຊື່ສະຖານທີ່ ແລະ ອື່ນໆ ທີ່ສັງຄົມຍອມຮັບ ແລະ ເປັນທີ່ເຂົ້າໃຈດີກວ່າຄຳທີ່ໃຊ້ມາກ່ອນ ເຊັ່ນ: ນິວຊີແລນ, ສະວີເດນ, ຈໍແດນ, ມຽນມາ, ເຈນີວາ...

ຄຳທີ່ຢືມມາໃໝ່ ກໍໃຫ້ຂຽນຕາມສຽງພາສາອັງກິດ ເຊັ່ນ: ເອດ, ຄອມພິວເຕີ, ໄວຣັດ, ດາວໂຫຼດ...

3) ການຂຽນທັບສັບພາສາຕ່າງປະເທດ

- ຄວນໃຊ້ພະຍັນຊະນະ, ສະຫຼະ ແລະ ຕົວສະກົດທີ່ກົງ ຫຼື ໃກ້ຄຽງກັບພາສາເດີມ, ແຕ່ບໍ່ຄວນໃຫ້ຕົວໜັງສືເຫຼືອຢູ່ໃນຄຳ ແລະ ບໍ່ນຳໃຊ້ເຄື່ອງໝາຍກາລັນ.
- ການຂຽນທັບສັບສາມາດໃຊ້ຕົວ ຣ, ຕົວສະກົດພິເສດ (ຖ້າຈຳເປັນ) ແລະ ອັກສອນຄວບຕົວ ຣ ແລະ ລ ລວມທັງຕົວ ວ ໄດ້.
- ການຂຽນຄຳທີ່ອອກສຽງສະຫຼະ ໄx ໃຫ້ໃຊ້ສະຫຼະ ໄx ໄມ້ມາຍຕົວດຽວເທົ່ານັ້ນ.

## 3. ຄຳບັນຍັດ

ຄຳບັນຍັດ ແມ່ນຄຳທີ່ບັນຍັດຂຶ້ນໃໝ່ໃນພາສາລາວ ໂດຍສະພາລາຊະບັນດິດໃນເມື່ອກ່ອນ, ຄະນະກຳມະການຄົ້ນຄວ້າພາສາລາວໃນປັດຈຸບັນເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງອະນຸມັດນຳໃຊ້ ເພື່ອຮອງຮັບຄຳສັບໃໝ່ໆ ທີ່ເກີດຂຶ້ນຕາມເຕັກໂນໂລຊີ ແລະ ຄວາມກ້າວໜ້າ

ດ້ານຕ່າງໆຂອງໂລກ ຊຶ່ງມັກຈະເປັນຄຳທີ່ມາຈາກພາສາຕ່າງປະເທດ.

ການບັນຍັດຄຳສັບຂຶ້ນໃໝ່ມີຫຼັກການຢູ່ 2 ຢ່າງ ຄື:

1) ສ້າງຄຳຂຶ້ນມາໃໝ່ ອາດຈະໃຊ້ການແປຄວາມໝາຍຈາກສັບເດີມ ຫຼື ຫາຄຳໃໝ່ມາແທນ ເຊັ່ນ:

| **ພາສາອັງກິດ** | **ຄຳສັບທີ່ບັນຍັດຂຶ້ນໃໝ່** |
|---|---|
| Birth control | ຄຸມກຳເນີດ |
| Movie star | ດາລາຮູບເງົາ |
| Standpoint | ຈຸດຢືນ |
| Short wave | ຄື້ນສັ້ນ |

2) ຖ້າຫາຄຳລາວທີ່ເໝາະສົມບໍ່ໄດ້ ກໍສ້າງຄຳໃໝ່ໂດຍໃຊ້ຄຳຈາກພາສາປາລີ-ສັນສະກິດ. ບາງຄຳອາດໃຊ້ວິທີສ້າງຄຳແບບຄຳສະໝາດກໍໄດ້ ຊຶ່ງຕ້ອງເປັນຄຳທີ່ມີໃຊ້ມາກ່ອນ ແລະ ສາມາດອອກສຽງໄດ້ງ່າຍ ເຊັ່ນ:

| **ພາສາອັງກິດ** | **ຄຳສັບທີ່ບັນຍັດຂຶ້ນໃໝ່** |
|---|---|
| Activity | ກິດຈະກຳ |
| Reform | ປະຕິຮູບ |
| Science | ວິທະຍາສາດ |
| Behavior | ພຶດຕິກຳ |



## VI. ຫຼັກບາງປະການໃນການໃຊ້ຄຳເພື່ອການສື່ສານໃນພາສາລາວ

ການໃຊ້ຄຳເພື່ອການສື່ສານ ແມ່ນການໃຊ້ສັບພາສາເພື່ອສ້າງຄວາມເຂົ້າໃຈກັນລະຫວ່າງຜູ້ສົ່ງສານ ແລະ ຜູ້ຮັບສານ. ການທີ່ຈະເຮັດໃຫ້ຄວາມເຂົ້າໃຈສັບພາສາລະຫວ່າງກັນຢ່າງຖືກຕ້ອງເໝາະສົມໃນເວລາສື່ສານ ພວກເຮົາຕ້ອງເອົາໃຈໃສ່ຫຼັກບາງປະການໃນການໃຊ້ຄຳເພື່ອການສື່ສານໃນພາສາລາວ ດັ່ງນີ້:

### 1. ການໃຊ້ຄຳໃຫ້ຖືກຕ້ອງຕາມລະບຽບຂອງພາສາ

ການໃຊ້ຄຳໃຫ້ຖືກຕ້ອງຕາມລະບຽບຂອງພາສາ ແມ່ນການໃຊ້ຄຳ ໃຫ້ຖືກຕາມຫຼັກໄວຍາກອນ ຊຶ່ງເປັນສິ່ງທີ່ຜູ້ໃຊ້ພາສາຕ້ອງໄດ້ເອົາໃຈໃສ່ ເພື່ອບໍ່ໃຫ້ເກີດຄວາມຜິດພາດໃນການໃຊ້ຄຳ. ດັ່ງນັ້ນ, ເຮົາຄວນຮູ້ລະບຽບການໃຊ້ຄຳດັ່ງນີ້:

#### 1.1 ການໃຊ້ຄຳທີ່ມີອັກສອນສູງ ແລະ ອັກສອນຕ່ຳໃຫ້ຖືກຕ້ອງ

ຄຳພ້ອມສຽງ ເຊັ່ນ: ຂ່າ (ຫົວຂ່າ) ແລະ ຄ່າ (ຄຸນຄ່າ)
ສື່ (ສື່ສານ) ແລະ ຊື່ (ຊື່ສຽງ)
ຜ່ອງ (ຜ່ອງໃສ) ແລະ ພ່ອງ (ບົກພ່ອງ)
ສັດ (ສັດຊື່) ແລະ ຊັດ (ຊັດເຈນ)

#### 1.2 ການໃຊ້ຄຳໃຫ້ຖືກຕາມເຄື່ອງໝາຍວັນນະຍຸດ

- ການໃຊ້ເຄື່ອງໝາຍວັນນະຍຸດຕ່າງກັນ ກໍຈະໄດ້ຄວາມໝາຍຕ່າງກັນ
  ແຍ່ງ (ຍາດແຍ່ງ) - ແຍ້ງ (ໂຕ້ແຍ້ງ)
  ລ່ຽງ (ຫຼີກລ່ຽງ) - ລ້ຽງ (ກິນລ້ຽງ)
  ພ່ອງ (ບາງພ່ອງ) - ພ້ອງ (ພວກພ້ອງ)
- ການໃຊ້ເຄື່ອງໝາຍວັນນະຍຸດຜິດ
  ເພີ່ມ ມັກໃຊ້ຜິດເປັນ ເພີ້ມ
  ເລື່ອງ ມັກໃຊ້ຜິດເປັນ ເລື້ອງ
  ເລີ່ມ ມັກໃຊ້ຜິດເປັນ ເລີ້ມ
  ມຸ່ງຫວັງ ມັກໃຊ້ຜິດເປັນ ມຸ້ງຫວັງ
  ຫຼີກລ່ຽງ ມັກໃຊ້ຜິດເປັນ ຫຼີກລ້ຽງ

#### 1.3 ການໃຊ້ຄຳທີ່ມີສຽງຄວບ

- ຄຳທີ່ມີສຽງຄວບ ວ
  ກວ້າງ ມັກໃຊ້ຜິດເປັນ ກ້ວງ

ຂວານ  ມັກໃຊ້ຜິດເປັນ ຂວນ

ຄວາຍ  ມັກໃຊ້ຜິດເປັນ ຄວຍ

- ຄໍາທີ່ມີສຽງຄວບ ຣ

ກຣາມ  ມັກໃຊ້ຜິດເປັນ  ກລາມ

ຝຣັ່ງ  ມັກໃຊ້ຜິດເປັນ  ຝລັ່ງ

ເອເລັກໂຕຣນິກ ມັກໃຊ້ຜິດເປັນ  ເອເລັກໂຕລນິກ

- ຄໍາທີ່ມີສຽງຄວບ ລ

ຄລີນິກ  ມັກໃຊ້ຜິດເປັນ  ຄຣີນິກ

ປລາສະຕິກ  ມັກໃຊ້ຜິດເປັນ  ປຣາສະຕິກ

ພລາຊາ  ມັກໃຊ້ຜິດເປັນ  ພຣາຊາ

### 1.4 ການໃຊ້ຄໍາທີ່ມີໜ່ວຍຄໍາເກີນ

ສໍາມະນາກອນ ມັກໃຊ້ຜິດເປັນ ນັກສໍາມະນາກອນ

ວິທະຍາກອນ   ມັກໃຊ້ຜິດເປັນ ນັກວິທະຍາກອນ

ວິສະວະກອນ  ມັກໃຊ້ຜິດເປັນ ນັກວິສະວະກອນ

### 1.5 ການໃຊ້ຄໍາໃຫ້ຖືກຕາມປະເພດຂອງຄໍາ

#### 1) ການໃຊ້ລັກສະນະນາມ

ການໃຊ້ລັກສະນະນາມຕ້ອງໃຊ້ໃຫ້ຖືກຫຼັກ ໂດຍຕ້ອງຮູ້ວ່າຄໍານາມໃດໃຊ້ຄໍາລັກສະນະນາມອັນໃດ ແລະ ຈະວາງໄວ້ໃນຕໍາແໜ່ງໃດ ໂດຍທົ່ວໄປຄໍາລັກສະນະນາມມັກຈະປາກົດໃນຕໍາແໜ່ງດັ່ງຕໍ່ໄປນີ້:

- ປາກົດຫຼັງຈໍານວນນັບ ເຊັ່ນ: ງົວ 2 ໂຕ, ເຮືອ 3 ລໍາ, ເຮືອນ 4 ຫຼັງ.
- ປາກົດຢູ່ໜ້າຄໍາລໍາດັບທີ ເຊັ່ນ: ເຮືອນຫຼັງທໍາອິດ, ລົດຈັກຄັນທີສອງ.
- ປາກົດຢູ່ໜ້າຄໍາສໍາລັບເນັ້ນຄວາມ ເຊັ່ນ: ໂລກໜ່ວຍນີ້, ເຮືອນຫຼັງນັ້ນ, ລົດກະບະຄັນພຸ້ນ.
- ປາກົດໜ້າຄໍາວິເສດ ເຊັ່ນ: ໝາໂຕໃຫຍ່, ໄຂ່ໜ່ວຍນ້ອຍ, ຍົນລໍາເກົ່າ.

**ຕົວຢ່າງການໃຊ້ລັກສະນະນາມຜິດ**

| | |
|---|---|
| ມີເສື້ອຫຼາຍ **ໂຕ** ຢູ່ໃນຕູ້ | (ຄວນໃຊ້ ຜືນ) |
| ຢູ່ໃນໂລກ **ໃບ** ນີ້ | (ຄວນໃຊ້ ໜ່ວຍ) |
| ຢາສູບ 2 **ອັນ** | (ຄວນໃຊ້ ກອກ) |

ພະສົງຢູ່ວັດມີຫຼາຍ**ຮູບ** (ຄວນໃຊ້ ອົງ)
ແມ່ນ້ຳໄຫຼຜ່ານຫຼາຍ**ເສັ້ນ** (ຄວນໃຊ້ ສາຍ)
ລາວອ່ານບົດຄວາມຫຼາຍ**ເລື່ອງ** (ຄວນໃຊ້ ບົດ)

**2) ການໃຊ້ຄຳບຸບພະບົດ (ຄຳເຊື່ອມ)**

ການໃຊ້ຄຳບຸບພະບົດຈະຕ້ອງລະວັງ ເພາະຖ້າໃຊ້ຄຳບຸບພະບົດຕ່າງກັນອອກໄປຈະເຮັດໃຫ້ຄວາມໝາຍຂອງຂໍ້ຄວາມແຕກຕ່າງກັນໄປນຳ ເຊັ່ນ:

ລົດຈອດຢູ່ ໜ້າ ຕະຫຼາດ
ລົດຈອດຢູ່ ຂ້າງ ຕະຫຼາດ
ລົດຈອດຢູ່ ໃນ ຕະຫຼາດ
ລົດຈອດຢູ່ ຫຼັງ ຕະຫຼາດ

ທັງສີ່ປະໂຫຍກນີ້ໃຊ້ຄຳບຸບພະບົດຕ່າງກັນ ຈຶ່ງເຮັດໃຫ້ຄວາມໝາຍແຕກຕ່າງກັນໂດຍສະເພາະສະຖານທີ່.

ຂໍ້ສັງເກດໃນການໃຊ້ຄຳບຸບພະບົດບາງຄຳ

- ຄຳບຸບພະບົດ ແກ່ ກັບ ຕໍ່ ແດ່ ເພື່ອ ສຳລັບ

**ແກ່** ໃຊ້ເມື່ອຕົວຕັ້ງກະທຳຝ່າຍດຽວ ແລະ ນາມທີ່ຕາມມາເປັນຜູ້ຮັບການກະທຳ ເຊັ່ນ: ຄູມອບລາງວັນແກ່ນັກຮຽນ. ພໍ່ໃຫ້ລາງວັນແກ່ລູກ.

**ກັບ** ໃຊ້ເມື່ອຕົວຕັ້ງ ແລະ ຕົວປະກອບກະທຳຮ່ວມກັນ ເຊັ່ນ: ລາວລົມກັບໝູ່. ຄຳດີໄປຕະຫຼາດ**ກັບ**ແມ່.

**ຕໍ່** ໃຊ້ເພື່ອສະແດງຄວາມ**ກ່ຽວຂ້ອງ**ກັນ ຫຼື ຕິດຕໍ່ກັນ ເຊັ່ນ: ເພິ່ນຍື່ນຄຳຮ້ອງຕໍ່ຂັ້ນເທິງ. ປ້າດີຮ້ອງທຸກຕໍ່ນາຍບ້ານ.

**ແດ່** ໃຊ້ຄືກັນກັບແກ່ ແຕ່ຖ້າຜູ້ຮັບການກະທຳເປັນຜູ້ທີ່ເຄົາລົບນັບຖື ຫຼື ເປັນການໃຫ້ກຽດໃຫ້ໃຊ້ ແດ່ ແທນ ແກ່ ເຊັ່ນ: ປະຊາຊົນຖວາຍເຄື່ອງແດ່ພະສົງ. ຂໍມອບສິ່ງນີ້ແດ່ທ່ານຄຳແດງ.

**ເພື່ອ/ສຳລັບ** ໃຊ້ນຳໜ້າຕົວປະກອບ ເຊັ່ນ: ຂ້ອຍເຮັດເພື່ອເຈົ້າ. ປຶ້ມແບບຮຽນນີ້ຮຽບຮຽງຂຶ້ນສຳລັບນັກຮຽນ.

**ຂອງ/ແຫ່ງ** ໃຊ້ເປັນຄຳສະແດງຄວາມເປັນເຈົ້າຂອງ ເຊັ່ນ: ນ້ອງຂອງຂ້ອຍຮຽນຢູ່ມະຫາວິທະຍາໄລແຫ່ງຊາດ.

**ແປະ ແຄມ ຣິມ ກ້ອງ ເທິງ ລຸ່ມ** ໃຊ້ນຳໜ້າເພື່ອບອກສະຖານທີ່ ເຊັ່ນ: ເຮືອນຂ້ອຍຢູ່ແປະຕະຫຼາດ. ຮ້ານອາຫານຢູ່ແຄມຂອງ. ປຶ້ມຢູ່ກ້ອງໂຕະ. ນົກາງອຍຢູ່ເທິງງ່າໄມ້.

**ດ້ວຍ ໂດຍ** ໃຊ້ນຳໜ້າຄຳທີ່ເປັນເຄື່ອງມືເຄື່ອງໃຊ້ ແລະ ບອກຄວາມສຳພັນ ເຊັ່ນ: ເພິ່ນເດີນທາງໂດຍເຮືອບິນ. ລາວຂຽນດ້ວຍບິກ. ລາວຊິດແກງດ້ວຍບ່ວງ.

**3) ການໃຊ້ຄຳສັນທານ** (ຄຳຕໍ່)

ການໃຊ້ຄຳສັນທານຕ້ອງເອົາໃຈໃສ່ ເພາະຖ້າໃຊ້ຜິດກໍຈະເຮັດໃຫ້ເກີດຂໍ້ບົກພ່ອງຂຶ້ນໃນປະໂຫຍກ ຫຼື ຂໍ້ຄວາມໄດ້. ຄຳສັນທານມີທັງເປັນຄຳໂດດ ເຊັ່ນ: ກັບ ແລະ ຫຼື ແຕ່ ຯລຯ ແລະ ຄຳສັນທານທີ່ເປັນກຸ່ມ ເຊັ່ນ: ເພາະສະນັ້ນ, ເຖິງແມ່ນວ່າ, ເຖິງວ່າ...ກໍຕາມ, ຖ້າ...ຈຶ່ງ ຯລຯ.

ລັກສະນະການຕໍ່ຄຳຂອງຄຳສັນທານມີດັ່ງນີ້:

- ສັນທານທີ່ຕໍ່ຄວາມໃຫ້ຄ້ອຍຕາມກັນ ເຊັ່ນ:

  ພໍ່**ແລະ**ແມ່ໄປນາທຸກມື້.

  ເຈົ້າ**ກັບ**ຂ້ອຍຮຽນໜັງສື.

  **ຖ້າ**ເຈົ້າໄປ ຂ້ອຍ**ຈຶ່ງ**ຈະໄປ.

- ສັນທານທີ່ຕໍ່ຄວາມທີ່ຂັດກັນ ເຊັ່ນ:

  **ເຖິງ**ລາວຂີ້ຮ້າຍ ຂ້ອຍ**ກໍ**ຮັກລາວ.

  ອ້າຍເບິ່ງໂທລະພາບ **ແຕ່**ນ້ອງຟັງວິທະຍຸ.

  ສິບປາກເວົ້າ **ກໍ**ບໍ່ທໍ່ຕາເຫັນ.

- ສັນທານຕໍ່ຄວາມທີ່ເປັນເຫດຜົນ ເຊັ່ນ:

  ຄຳດີໄປໂຮງໝໍ **ເພາະ**ບໍ່ສະບາຍ.

  ລາວບໍ່ມັກກິນເຂົ້າ **ຈຶ່ງ**ເຮັດໃຫ້ຈ່ອຍ.

  ດວງດີຕັ້ງໃຈຮຽນ **ດັ່ງນັ້ນ**ລາວ**ຈຶ່ງ**ເສັງໄດ້.

- ສັນທານຕໍ່ຄວາມໃຫ້ເລືອກເອົາຢ່າງໃດຢ່າງໜຶ່ງ ເຊັ່ນ:

  ເຈົ້າຊິກິນເຝີ **ຫຼື** ກິນໝີ່.

  ຂ້ອຍຈະເຮັດວຽກຢູ່ບໍລິສັດ **ຫຼືບໍ່**ກໍເຮັດວຽກນຳລັດ.

  ລາວຕ້ອງຕັ້ງໃຈຮຽນ **ບໍ່ດັ່ງນັ້ນ**ຈະຄ້າງຫ້ອງ.

- ສັນທານຕໍ່ຄວາມຕ່າງຝ່າຍກັນ ເຊັ່ນ:

  ພວກເຮົາຢູ່ຄຸ້ມເໜືອ **ສ່ວນ**ພວກເຂົາຢູ່ຄຸ້ມໃຕ້.

  ຄຳແດງໜຶ້ງເຂົ້າ **ຝ່າຍ**ດວງສີແຕ່ງກິນ.

- ສັນທານຕໍ່ຄວາມແບ່ງຮັບແບ່ງສູ້ ເຊັ່ນ:

  **ຖ້າ**ຝົນຕົກ ຂ້ອຍຈະບໍ່ໄປທ່ຽວ.

**ຄັນຫາກວ່າ**ເຈົ້າບໍ່ໄປ ເພິ່ນຈະຕັດເງິນເດືອນ.

- ສັນທານຕໍ່ຄວາມໃຫ້ມ່ວນ ຫຼື ໃຫ້ມີເນື້ອຄວາມສົມບູນ ເຊັ່ນ:

**ຢ່າງໃດກໍຕາມ** ຂ້ອຍກັບເຈົ້າກໍຍັງເປັນໝູ່ທີ່ດີຕໍ່ກັນ.

**ອັນວ່າ**ຄວາມສຸພາບອ່ອນນ້ອມ ໃຜໆກໍມັກ.

- ສັນທານຕໍ່ຄວາມປຽບທຽບ ເຊັ່ນ:

ຝົນຕົກແຮງ**ປານວ່າ**ຟ້າຊິຖະຫຼົ່ມ.

ລາວໜ້າແດງ**ຄືດັ່ງ**ໝາກຕຳນິນສຸກ.

ຈະເຫັນໄດ້ວ່າຄຳສັນທານມີຄວາມສຳຄັນຕໍ່ການໃຊ້ພາສາລາວ ເພື່ອການສື່ສານເປັນຫຼວງຫຼາຍ ເພາະຄຳສັນທານຊ່ວຍເຮັດໃຫ້ຂໍ້ຄວາມເຊື່ອມຕໍ່ກັນຢ່າງເປັນເອກະພາບ ແລະ ມີໃຈຄວາມສົມບູນ ທັງຍັງຊ່ວຍເນັ້ນຂໍ້ຄວາມ ແລະ ຊ່ວຍໃຫ້ຂໍ້ຄວາມມີຄວາມມ່ວນຊວນຟັງຊວນອ່ານຍິ່ງຂຶ້ນອີກດ້ວຍ.

## 2. ການໃຊ້ຄຳໃຫ້ຖືກຕ້ອງຕາມຄວາມໝາຍ

ການໃຊ້ຄຳໃຫ້ຖືກຕ້ອງຕາມຄວາມໝາຍ ເປັນສິ່ງສຳຄັນຫຼາຍ. ຜູ້ໃຊ້ພາສາຕ້ອງຮູ້ຄວາມໝາຍຂອງຄຳທີ່ເລືອກມາໃຊ້ ບໍ່ດັ່ງນັ້ນອາດເຮັດໃຫ້ໃຊ້ຄຳຜິດຄວາມໝາຍໄດ້. ການ ໃຊ້ຄຳຜິດຄວາມໝາຍອາດເກີດຈາກຫຼາຍສາເຫດ ເປັນຕົ້ນວ່າບໍ່ຮູ້ຄວາມໝາຍຂອງຄຳທີ່ນຳມາໃຊ້, ຄຳທັງສອງມີສຽງໃກ້ຄຽງກັນ ຫຼື ຄຳທັງສອງມີຄວາມໝາຍຄ້າຍຄືກັນ. ດັ່ງນັ້ນ, ເຮົາຄວນຮູ້ກ່ຽວກັບຄວາມໝາຍຂອງຄຳດັ່ງນີ້:

### 2.1 ຄວາມໝາຍຂອງຄຳ

ຄຳແຕ່ລະຄຳມີຄວາມໝາຍແຕກຕ່າງກັນ. ຄວາມໝາຍຂອງຄຳນີ້ ຄົນເຮົາເປັນຜູ້ກຳນົດ ແລະ ຕົກລົງຮ່ວມກັນໃນໝູ່ຜູ້ໃຊ້ພາສາດຽວກັນ. ຄວາມໝາຍຂອງຄຳຈຶ່ງປ່ຽນແປງໄດ້ຫາກຜູ້ໃຊ້ພາສາກຳນົດ, ຕົກລົງໃຫ້ຄຳມີຄວາມໝາຍໃໝ່ ຫຼື ມີຄວາມໝາຍອື່ນເພີ່ມຂຶ້ນນອກຈາກຄວາມໝາຍເດີມ. ຄຳໜຶ່ງຄຳອາດມີຫຼາຍຄວາມໝາຍທັງຄວາມໝາຍກົງ ແລະ ຄວາມໝາຍອ້ອມ.

**1) ຄວາມໝາຍກົງ** ແມ່ນຄວາມໝາຍປະຈຳຄຳ. ວັດຈະນານຸກົມໄດ້ໃຫ້ຄຳຈຳກັດຄວາມໄວ້ແລ້ວ ເປັນຄວາມໝາຍທີ່ຜູ້ໃຊ້ພາສາດຽວກັນເຂົ້າໃຈກົງກັນເມື່ອໄດ້ຍິນ ຫຼື ໄດ້ອ່ານຄຳໜຶ່ງໆ ຫຼື ເມື່ອກ່າວຄຳໃດຄຳໜຶ່ງ ຄຳນັ້ນກໍໝາຍເຖິງສິ່ງນັ້ນບໍ່ແມ່ນສິ່ງອື່ນ ເຊັ່ນ:

ຕັ່ງອີ້ ໝາຍເຖິງ ບ່ອນສຳລັບນັ່ງ ມີຂາ ຍົກຍ້າຍໄປໄດ້

ກິນ ໝາຍເຖິງ ທຍ້ຳ ທຍ້ຳແລ້ວກືນ

ການໃຊ້ຄຳໃນຄວາມໝາຍໂດຍກົງຈະເຮັດໃຫ້ການສື່ສານປະສົບຜົນສຳເລັດຫຼາຍ ເນື່ອງຈາກຜູ້ສົ່ງ ແລະ ຜູ້ຮັບສານຕ່າງເຂົ້າໃຈຄວາມໝາຍກົງກັນ. ຢ່າງໃດກໍຕາມຄຳລາວຈຳນວນຫຼາຍມີຄວາມໝາຍໂດຍກົງຫຼາຍກວ່າໜຶ່ງຄວາມໝາຍ ເຊັ່ນ:

| | | |
|---|---|---|
| ເຂົ້າ | ໝາຍເຖິງ | ເມັດຂອງພືດຈຳພວກຫຍ້າ ໃຊ້ເປັນອາຫານປະເພດແປ້ງ |
| | | ເຄື່ອນໄປສູ່ພາຍໃນ |
| | | ບໍ່ປູ້ ເຊັ່ນ ພ້າດວງນີ້ເຂົ້າດີ |
| ຕາ | ໝາຍເຖິງ | ອະໄວຍະວະສ່ວນໜຶ່ງຂອງຄົນ ແລະ ສັດທີ່ໃຊ້ເບິ່ງ |
| | | ສ່ວນໜຶ່ງຂອງຕົ້ນໄມ້ສຳລັບໃຫ້ແຕກໜໍ່ |
| | | ປ່ອງທີ່ເກີດຈາກການຖັກການສານ |

ຄຳເຫຼົ່ານີ້ຕ້ອງອາໄສບໍລິບົດ ແລະ ຕຳແໜ່ງໜ້າທີ່ຂອງຄຳໃນປະໂຫຍກ ສະແດງໃຫ້ຮູ້ວ່າຄຳນັ້ນໃຊ້ໃນຄວາມໝາຍໃດ.

**2) ຄວາມໝາຍໂດຍອ້ອມ** ຄຳບາງຄຳນອກຈາກຈະມີຄວາມໝາຍໂດຍກົງແລ້ວ ຍັງມີຄວາມໝາຍອື່ນເພີ່ມຂຶ້ນນຳ ຊຶ່ງເຂົ້າໃຈກັນສະເພາະກຸ່ມຄົນທີ່ມີພື້ນຖານ ແລະ ປະສົບການຮ່ວມກັນ. ເມື່ອໃຊ້ຄຳໃນຄວາມໝາຍອ້ອມ ຄຳນັ້ນໆຈະໝາຍເຖິງສິ່ງອື່ນທີ່ບໍ່ແມ່ນຄວາມໝາຍປະຈຳຄຳ ເຊັ່ນ:

| | | |
|---|---|---|
| ຕັ່ງອີ້ | ອາດໝາຍເຖິງ | ຕຳແໜ່ງ |
| ກິນ | ອາດໝາຍເຖິງ | ສໍ້ໂກງ |

ເນື່ອງຈາກຄຳທີ່ມີຄວາມໝາຍອ້ອມບໍ່ເປັນທີ່ເຂົ້າໃຈກັນໂດຍທົ່ວໄປ ດັ່ງນັ້ນຈຶ່ງຕ້ອງໃຊ້ດ້ວຍຄວາມລະມັດລະວັງ.

ຄວາມໝາຍຂອງຄຳເປັນສິ່ງສຳຄັນຫຼາຍໃນພາສາ ຜູ້ໃຊ້ພາສາຈຶ່ງຈຳເປັນຕ້ອງຮູ້ຈັກ ແລະ ເຂົ້າໃຈຄວາມໝາຍຕ່າງໆຂອງຄຳແຕ່ລະຄຳເປັນຢ່າງດີ ເພື່ອຈະສາມາດສື່ຄວາມຮູ້, ຄວາມຄິດ, ອາລົມ, ຄວາມຮູ້ສຶກໄດ້ກົງຕາມທີ່ຕ້ອງການ.

### 2.2 ການໃຊ້ຄຳໃຫ້ຖືກຄວາມໝາຍ

ສິ່ງສຳຄັນຄືຕ້ອງຮູ້ຄວາມໝາຍຂອງຄຳທີ່ເລືອກມາໃຊ້ ບໍ່ດັ່ງນັ້ນອາດເຮັດໃຫ້ໃຊ້ຄຳຜິດຄວາມໝາຍໄດ້. ການໃຊ້ຄຳຜິດຄວາມໝາຍອາດເກີດຈາກຫຼາຍສາເຫດ ເຊັ່ນ ບໍ່ຮູ້ຄວາມໝາຍຂອງຄຳທີ່ນຳມາໃຊ້ ຄຳທັງສອງມີສຽງໃກ້ຄຽງກັນ ຫຼື ຄຳທັງສອງມີຄວາມໝາຍຄ້າຍຄືກັນ ດັ່ງຄຳທີ່ໃຊ້ໃນປະໂຫຍກຕໍ່ໄປນີ້:

ເຊີນເຂົ້າຮ່ວມງານລ້ຽງ**ສ້າງສັນ**.

ຄຳວ່າ "ສ້າງສັນ" ມີຄວາມໝາຍວ່າ ຈັດສ້າງໃຫ້ດີ ແລະ ສວຍງາມ ຫຼື ເຮັດໃຫ້ດີຂຶ້ນ. ຄຳທີ່ມີຄວາມໝາຍເຂົ້າກັບປະໂຫຍກນີ້ຫຼາຍກວ່າ "ສ້າງສັນ" ແມ່ນ "ສັງສັນ" ຊຶ່ງໝາຍເຖິງ ພົບພໍ້ສົນທະນາທຳຄວາມລຶ້ງແກວ່ນຄຸ້ນເຄີຍກັນ. ອະລິ "ງານລ້ຽງສັງສັນ" ໝາຍຄວາມວ່າ ງານລ້ຽງທີ່ແຂກຄົນມາພົບພໍ້ກັນເພື່ອສົນທະນາທຳລຶ້ງແກວ່ນກັນ.

ຫາກເຮົາບໍ່ຮູ້ຄວາມໝາຍຂອງຄຳທີ່ຕ້ອງການໃຊ້ ຫຼື ເກີດຄວາມບໍ່ແນ່ໃຈ ກໍຄວນກວດ ສອບ ຫຼື ຄົ້ນຄວາມໝາຍຂອງຄຳຈາກປຶ້ມວັດຈະນານຸກົມ.

## 2.3 ການໃຊ້ຄຳທີ່ມີຫຼາຍຄວາມໝາຍ

ພາສາລາວເປັນພາສາຄຳໂດດ ຄຳດຽວກັນແຕ່ມີຄວາມໝາຍໄດ້ຫຼາຍຄວາມໝາຍຖ້າຄຳຢູ່ ຕ່າງບ່ອນ ຫຼື ປ່ຽນບ່ອນໄປ ກໍຈະມີຄວາມໝາຍປ່ຽນໄປ ຄວາມໝາຍຈະຂຶ້ນກັບບໍລິບົດທີ່ແວດ ລ້ອມຢູ່.

ຕົວຢ່າງ: ລາວເຂົ້າເຮືອນຄົວ ເພື່ອເອົາເຂົ້າ ແລະ ມີດດວງທີ່ເຂົ້າທີ່ສຸດ.

ຄຳວ່າ "ເຂົ້າ" ທັງ 3 ຄຳ ມີຄວາມໝາຍແຕກຕ່າງກັນ ດັ່ງນີ້:

ເຂົ້າ ຄຳທີ 1 ເປັນຄຳກິລິຍາ ທີ່ໝາຍເຖິງ ຈາກນອກສູ່ໃນ.

ເຂົ້າ ຄຳທີ 2 ເປັນຄຳນາມ ທີ່ໝາຍເຖິງ ເມັດພືດທັນຍາຫານທີ່ໃຊ້ເປັນອາຫານ ຕົ້ນຕໍຂອງຄົນ.

ເຂົ້າ ຄຳທີ 3 ເປັນຄຳວິເສດ ທີ່ໝາຍເຖິງ ຄົມ.

ຈາກຕົວຢ່າງຂ້າງເທິງ ເຮົາຈະຮູ້ຄຳວ່າ "ເຂົ້າ" ມີຄວາມໝາຍວ່າແນວໃດນັ້ນ ຕ້ອງ ພິຈາລະນາຈາກບໍລິບົດຂອງຄຳນັ້ນຢູ່ ແລະ ຕຳແໜ່ງທີ່ປາກົດຂອງຄຳນັ້ນໆ.

## 2.4 ການໃຊ້ຄຳຮ່ວມຄວາມໝາຍ

ຄຳຮ່ວມຄວາມໝາຍ ແມ່ນຄຳທີ່ມີຮູບຂຽນຕ່າງກັນ ແຕ່ມີຄວາມໝາຍຄືກັນ ຫຼື ຄ້າຍ ຄືກັນ. ຄຳຮ່ວມຄວາມໝາຍນີ້ເກີດມາຈາກການທີ່ພາສາລາວມີລະດັບພາສາຫຼາຍ ລັກສະນະ ເຊັ່ນ: ພາສາເວົ້າ, ພາສາຂຽນ, ພາສາທ້ອງຖິ່ນ, ພາສາທາງການ, ພາສາເຄິ່ງ ທາງການ, ພາສາບໍ່ເປັນທາງການ ເປັນຕົ້ນ ຊຶ່ງເຮັດໃຫ້ສາມາດເລືອກໃຊ້ຄຳໄດ້ຢ່າງ ເໝາະສົມຕາມລະດັບ ແລະ ບໍລິບົດໃນການຂຽນ ຫຼື ເວົ້າໃນແຕ່ລະສະຖານະການ ດັ່ງ ຕົວຢ່າງຄູ່ຄຳຕໍ່ໄປນີ້:

ຄົນ-ມະນຸດ, ພໍ່-ບິດາ, ແມ່-ມານດາ, ຜູ້ຊາຍ-ບຸລຸດ, ແມ່ຍິງ-ສະຕີ, ພະສົງ-ຄູບາ, ຫ້ອງ-ສ້ວມ, ຂ້ອຍ-ຂ້າພະເຈົ້າ, ເຈົ້າ-ທ່ານ, ລາວ-ເພິ່ນ, ກິນ-ຮັບປະທານ, ແອບ-ຫັດ, ຢຸດ-ເຊົາ, ເບິ່ງແຍງ-ດູແລ, ອະທິບາຍ-ຊີ້ແຈງ, ລະເມີດ-ຝ່າຝືນ, ແຈ້ງ-ສະຫວ່າງ, ເບີກ ບານ - ມ່ວນຊື່ນ...

ນອກຈາກນັ້ນ ຍັງມີຄຳຮ່ວມຄວາມໝາຍທີ່ໃຊ້ເປັນຄຳເຊື່ອມຕໍ່ເພື່ອເຮັດໃຫ້ເປັນຕາອ່ານ ແລະ ເຂົ້າໃຈໄດ້ຢ່າງບໍ່ສັບສົນ ດັ່ງຕົວຢ່າງການໃຊ້ຄຳຮ່ວມຄວາມໝາຍ ທີ່ - ຊຶ່ງ - ອັນ:

ຖ້າເຮົາຈະຂຽນປະໂຫຍກວ່າ: "ຄົນ**ທີ່**ດຸໝັ່ນຂະຫຍັນພຽນ **ທີ່**ມັກເຮັດໃນສິ່ງ**ທີ່**ເປັນປະໂຫຍດແກ່ປະເທດຊາດ ຄວນໄດ້ຮັບການຍ້ອງຍໍສັນລະເສີນ". ໃນປະໂຫຍກດັ່ງກ່າວເຮົາຈະເຫັນວ່າ ການໃຊ້ຄຳວ່າ "ທີ່" ຊໍ້າກັນເຖິງ 3 ເທື່ອ ຈະເຮັດໃຫ້ບໍ່ເປັນຕາອ່ານ. ເພື່ອເຮັດໃຫ້ປະໂຫຍກນີ້ເປັນຕາອ່ານ ເຮົາສາມາດນຳໃຊ້ຄຳອື່ນທີ່ມີຄວາມໝາຍດຽວກັນແທນໄດ້ ດັ່ງນີ້: "ຄົນ**ທີ່**ດຸໝັ່ນຂະຫຍັນພຽນ **ຊຶ່ງ**ມັກເຮັດໃນສິ່ງ**ອັນ**ເປັນປະໂຫຍດແກ່ປະເທດຊາດ ຄວນໄດ້ຮັບການຍ້ອງຍໍສັນລະເສີນ".

ເນື່ອງຈາກພາສາລາວເປັນພາສາແຫ່ງສຽງດົນຕີ ພາສາແຫ່ງກາບກອນ ຈຶ່ງມີລັກສະນະຂອງການບັງຄັບໃຊ້ຄຳ. ດັ່ງນັ້ນໃນເວລາແຕ່ງກາບກອນຈຶ່ງຮັບເອົາຄຳໃນພາສາປາລີ-ສັນສະກິດມາໃຊ້ໃຫ້ຄຳສັບໃນພາສາລາວແຕກອອກໄປໄດ້ຫຼາຍຄຳ ແຕ່ຍັງໄດ້ຄວາມໝາຍອັນດຽວກັນ ດັ່ງຕົວຢ່າງ:

ຄຳທີ່ມີຄວາມໝາຍວ່າ "ນົກ" ອາດໃຊ້ຄຳຕ່າງໆ ເຊັ່ນຄຳວ່າ: ສະກຸນາ, ສະກຸນີ, ປັກສາ, ປັກສີ, ວິຫົກ...

ຄຳທີ່ມີຄວາມໝາຍວ່າ "ຕາເວັນ" ອາດໃຊ້ຄຳຕ່າງໆ ເຊັ່ນຄຳວ່າ: ສຸລິ, ສຸລິຍາ, ສຸລິໂຍ, ດວງອາທິດ...

ຄຳທີ່ມີຄວາມໝາຍວ່າ "ດວງເດືອນ" ອາດໃຊ້ຄຳຕ່າງໆ ເຊັ່ນຄຳວ່າ: ດວງຈັນ, ດວງແຂ, ຈັນທາ, ຈັນທະລາ...

ຄຳທີ່ມີຄວາມໝາຍວ່າ "ດອກໄມ້" ອາດໃຊ້ຄຳຕ່າງໆ ເຊັ່ນຄຳວ່າ: ບຸບຜາ, ຜະກາ, ມາລາ, ມາລີ, ມາໄລ...

ຄຳທີ່ມີຄວາມໝາຍວ່າ "ປ່າ" ອາດໃຊ້ຄຳຕ່າງໆ ເຊັ່ນຄຳວ່າ: ພະນາ, ພະນາວັນ, ໄພວັນ, ໄພສົນ...

ຄຳຮ່ວມຄວາມໝາຍ ຖືເປັນຄວາມງົດງາມທາງພາສາ ສີ່ເຖິງມໍລະດົກທາງວັດທະນະທຳພາສາທີ່ສືບທອດຕໍ່ໆກັນມາ ຊຶ່ງສາມາດເລືອກນຳໄປໃຊ້ໃຫ້ເໝາະສົມກັບພາສາລະດັບຕ່າງໆ ຫຼື ໃນບົດກາບກອນ.

## 2.5 ການໃຊ້ຄຳກົງກັນຂ້າມ

ຄຳກົງກັນຂ້າມ ແມ່ນຄຳທີ່ມີຄວາມໝາຍສຳພັນກັນໃນລັກສະນະຂັດກັນ ຫຼື ກົງກັນຂ້າມກັນ ດັ່ງຄູ່ຄຳກົງກັນຂ້າມຕໍ່ໄປນີ້:

ຕ່ຳ-ສູງ, ເລິກ-ຕື້ນ, ໜາ-ບາງ,

| | | |
|---|---|---|
| ໃຫຍ່-ນ້ອຍ, | ຫຼາຍ-ໜ້ອຍ, | ດີ-ຊົ່ວ, |
| ຍາວ-ສັ້ນ, | ໄວ-ຊ້າ, | ກວ້າງ-ແຄບ, |
| ຫຼົມ-ຄັບ, | ຕຸ້ຍ-ຈ່ອຍ, | ໄດ້-ເສຍ, |
| ຊະນະ-ປະລາໄຊ, | ແຈ້ງ-ມືດ, | ຂຸ້ນ-ໃສ, |
| ຊາຍ-ຍິງ, | ຊື້-ຂາຍ, | ໄປ-ມາ, |
| ຖືກ-ຜິດ, | ກ້າ-ຢ້ານ, | ດຸໝັ່ນ-ຂີ້ຄ້ານ, |
| ສະອາດ-ເປື້ອນ, | ສະຫຼາດ-ໂງ່, | ປິດ-ເປີດ, |
| ໄຂ-ອັດ, | ຮ້ອນ-ເຢັນ, | ເປັນ-ຕາຍ ຯລຯ |

ການໃຊ້ຄຳກົງກັນຂ້າມ ຕ້ອງໃຊ້ໃຫ້ຖືກຕາມຄວາມໝາຍດັ່ງທີ່ຍົກມາຂ້າງເທິງ ແຕ່ໃນການໃຊ້ຕົວຈິງບາງຄັ້ງຍັງປາກົດມີການໃຊ້ຜິດດັ່ງນີ້:

| | | |
|---|---|---|
| ຫຼາຍ-ໜ້ອຍ | ໃຊ້ຜິດເປັນ | ຫຼາຍ-ນ້ອຍ |
| ໃຫຍ່-ນ້ອຍ | ໃຊ້ຜິດເປັນ | ໃຫຍ່-ໜ້ອຍ |
| ຫຼວງຫຼາຍ-ເລັກນ້ອຍ | ໃຊ້ຜິດເປັນ | ຫຼວງຫຼາຍ-ເລັກໜ້ອຍ |
| ຫຼົມ-ຄັບ | ໃຊ້ຜິດເປັນ | ຫຼົມ-ແຄບ |
| ກວ້າງ-ແຄບ | ໃຊ້ຜິດເປັນ | ກວ້າງ-ຄັບ |
| ສ່ວນຫຼາຍ-ສ່ວນໜ້ອຍ | ໃຊ້ຜິດເປັນ | ສ່ວນໃຫຍ່-ສ່ວນນ້ອຍ |
| ໄດ້-ເສຍ | ໃຊ້ຜິດເປັນ | ຊະນະ-ແພ້ |
| ເປີດ-ປິດ | ໃຊ້ຜິດເປັນ | ເປີດ-ອັດ |
| ໄຂ-ອັດ | ໃຊ້ຜິດເປັນ | ໄຂ-ປິດ |

## 2.6 ການໃຊ້ຄຳໃຫ້ຖືກໜ້າທີ່

ການວາງຄຳໃຫ້ຖືກຕຳແໜ່ງໜ້າທີ່ຕາມຊະນິດຂອງຄຳ ເປັນສິ່ງສຳຄັນຫຼາຍໃນພາສາລາວ. ເນື່ອງຈາກຄຳລາວບໍ່ຕ້ອງປ່ຽນແປງຮູບສັບ ເພື່ອເຮັດໜ້າທີ່ຕ່າງໆໃນປະໂຫຍກຄືດັ່ງປະໂຫຍກພາສາອັງກິດ. ດັ່ງນັ້ນ, ການຮຽງຄຳຜິດບ່ອນອາດເຮັດໃຫ້ຄວາມໝາຍປ່ຽນໄປ ຫຼື ບໍ່ອາດສື່ຄວາມໝາຍໄດ້ ເຊັ່ນ ໃນປະໂຫຍກ "ນ້ຳຝົດ" ຫາກຮຽງຄຳເປັນ "ຝົດນ້ຳ" ກໍບໍ່ອາດສື່ຄວາມໄດ້ ຫຼື ປະໂຫຍກ "ເສືອກິນກວາງ" ກັບ "ກວາງກິນເສືອ". ຜູ້ກະທຳກິລິຍາໃນປະໂຫຍກທຳອິດແມ່ນ ເສືອ ໃນປະໂຫຍກທີ 2 ແມ່ນ ກວາງ ແລະ ຜູ້ຖືກກິນໃນປະໂຫຍກທຳອິດ ແມ່ນ ກວາງ, ສ່ວນປະໂຫຍກທີ 2 ແມ່ນ ເສືອ. ຄວາມໝາຍທີ່ປ່ຽນໄປນີ້ກໍເນື່ອງຈາກຕຳແໜ່ງຂອງຄຳໃນປະໂຫຍກເຮັດໃຫ້ໜ້າທີ່ຂອງຄຳປ່ຽນໄປນຳ.

ຂໍ້ຄວນລະວັງອີກປະການໜຶ່ງແມ່ນການໃຊ້ຄຳຜິດປະເພດ ເຊັ່ນ: ການໃຊ້ຄຳນາມໃນຕຳແໜ່ງທີ່ຄວນເປັນຄຳກິລິຍາ ຫຼື ການໃຊ້ຄຳກິລິຍາໃນຕຳແໜ່ງທີ່ຄວນເປັນຄຳນາມ ເປັນຕົ້ນ ດັ່ງປະໂຫຍກຕໍ່ໄປນີ້:

- ຄົນວິວັດທະນາການມາຈາກລີງ.

ປະໂຫຍກນີ້ມີຂໍ້ບົກພ່ອງ ຄືບໍ່ມີຄຳກິລິຍາ ເນື່ອງຈາກໃນຕຳແໜ່ງທີ່ຄວນເປັນຄຳກິລິຍາໄດ້ນຳຄຳວ່າ "ວິວັດທະນາການ" ຊຶ່ງເປັນຄຳນາມມາໃຊ້ແທນເຮັດໃຫ້ປະໂຫຍກບໍ່ສົມບູນ. ການແກ້ໄຂຄືຫາຄຳກິລິຍາມາໃສ່ ຫຼື ປ່ຽນຄຳ "ວິວັດທະນາການ" ເປັນຄຳກິລິຍາ ເຊັ່ນ: ຄົນມີວິວັດທະນາການມາຈາກລີງ ຫຼື ຄົນວິວັດມາຈາກລີງ.

- ຕົ້ນໄມ້ຂາດທົດນ້ຳຫຼາຍມື້.

ຄຳວ່າ "ຂາດ" ເປັນຄຳກິລິຍາທີ່ຕ້ອງມີຕົວປະກອບມາຮັບເພື່ອໃຫ້ສົມບູນ ແຕ່ຄຳວ່າ "ທົດນ້ຳ" ເປັນຄຳກິລິຍາທີ່ບໍ່ສາມາດເຮັດໜ້າທີ່ເປັນຕົວປະກອບໄດ້. ການແກ້ໄຂຄືນຳຄຳນາມມາວາງຕາມຫຼັງຄຳ "ຂາດ" ເຊັ່ນ: ຕົ້ນໄມ້ຂາດນ້ຳຫຼາຍມື້ ຫຼື ຕົ້ນໄມ້ຂາດການທົດນ້ຳຫຼາຍມື້.

**2.7 ການໃຊ້ຄຳໃຫ້ມີຄວາມໝາຍຊັດເຈນ**

ການໃຊ້ພາສາເພື່ອການສື່ສານຄວນຄຳນຶງເຖິງຄວາມໝາຍທີ່ຈະແຈ້ງຊັດເຈນໃນເນື້ອຄວາມ ເພື່ອບໍ່ໃຫ້ຜູ້ຟັງຜູ້ອ່ານເກີດຄວາມສັບສົນ ຫຼື ເຂົ້າໃຈຜິດ ຫຼື ບໍ່ເຂົ້າໃຈເລີຍ. ຄວາມບໍ່ຊັດເຈນອາດເກີດຈາກສາເຫດຫຼາຍປະການດັ່ງນີ້:

**1) ການໃຊ້ຄຳທີ່ມີຄວາມໝາຍອ້ອມ**

ເນື່ອງຈາກຄວາມໝາຍອ້ອມເປັນຄວາມໝາຍທີ່ເຂົ້າໃຈກັນ ສະເພາະກຸ່ມຄົນທີ່ມີປະສົບການ ຄວາມຮັບຮູ້ໃນເລື່ອງໃດເລື່ອງໜຶ່ງຮ່ວມກັນ. ຜູ້ທີ່ຂາດປະສົບການ ຫຼື ການຮັບຮູ້ໃນເລື່ອງນັ້ນອາດບໍ່ເຂົ້າໃຈຄວາມໝາຍອ້ອມນັ້ນ ເຮັດໃຫ້ແປຄວາມໝາຍຂອງຄຳຕາມຄວາມໝາຍໂດຍກົງທີ່ເຄີຍເຂົ້າໃຈຫຼືຮັບຮູ້ມາ ເຊັ່ນ: ເດັກນ້ອຍອາດເຂົ້າໃຈປະໂຫຍກ "ຫົວໜ້າບໍລິສັດກິນເງິນຫຼາຍຮ້ອຍລ້ານກີບ" ໃນຄວາມໝາຍດຽວກັບປະໂຫຍກ "ລູກກິນໝາກສີດາ". "ກິນ" ໃນປະໂຫຍກທຳອິດເປັນການໃຊ້ຄຳໃນຄວາມໝາຍໂດຍອ້ອມ ຊຶ່ງໝາຍເຖິງການສໍ້ໂກງ, ສ່ວນ "ກິນ" ໃນປະໂຫຍກທີສອງເປັນການໃຊ້ຄຳໃນຄວາມໝາຍໂດຍກົງໝາຍເຖິງ ອາການທີ່ເອົາອາຫານປ້ອນເຂົ້າປາກຫຍໍ້າແລ້ວກືນ. ການໃຊ້ຄຳທີ່ມີຄວາມໝາຍໂດຍອ້ອມຈຶ່ງຕ້ອງຄຳນຶງເຖິງກຸ່ມຜູ້ຮັບສານນຳ ຫຼື ບໍ່ດັ່ງນັ້ນກໍຄວນຫຼີກເວັ້ນ ເພື່ອໃຫ້ເກີດຄວາມຊັດເຈນເປັນທີ່ເຂົ້າໃຈຂອງຄົນທົ່ວໄປ.

**2) ການໃຊ້ຄໍາບໍ່ຈະແຈ້ງ** ຄໍາບໍ່ຈະແຈ້ງແມ່ນຄໍາທີ່ມີຄວາມໝາຍບໍ່ຊັດເຈນ, ຄຸມເຄືອ ຫຼື ມີຫຼາຍຄວາມໝາຍ. ການໃຊ້ຄໍາບໍ່ຈະແຈ້ງອາດເຮັດໃຫ້ເກີດຄວາມເຂົ້າໃຈຜິດໄດ້ ເນື່ອງຈາກສາມາດຕີຄວາມໝາຍໄດ້ຫຼາຍແງ່ ເຊັ່ນ:

ປະໂຫຍກ "ທ້າວຄໍາຈອດຢາງລົດບໍ່ດີ" ອາດໝາຍເຖິງ "ທ້າວຄໍາຈອດຢາງລົດໄດ້ບໍ່ດີ" ຫຼື "ທ້າວຄໍາຈອດຢາງລົດທີ່ບໍ່ດີ". ຄວາມບໍ່ຈະແຈ້ງເຊັ່ນນີ້ ອາດແກ້ໄຂດ້ວຍການຕື່ມຄໍາ ຫຼື ປ່ຽນຄໍາເພື່ອໃຫ້ປະໂຫຍກຊັດເຈນຂຶ້ນ ຈະແຈ້ງຫຼາຍຂຶ້ນ ໂດຍແປງເປັນ:

- ທ້າວຄໍາບໍ່ສາມາດຈອດຢາງລົດໃຫ້ດີໄດ້.
- ທ້າວຄໍາຈອດຢາງລົດທີ່ເປັນຢາງບໍ່ດີ.

ປະໂຫຍກ "ລາວໜ້າແຕກເພາະຢ່າງຕໍາປະຕູ" ອາດໝາຍເຖິງ ລາວໜ້າແຕກເປັນບາດແຜ ຫຼື ລາວອັບອາຍຂາຍໜ້າກໍໄດ້. ຄວາມບໍ່ຈະບໍ່ແຈ້ງເຊັ່ນນີ້ ອາດແກ້ໄຂດ້ວຍການຕື່ມຄໍາ ຫຼື ປ່ຽນຄໍາເພື່ອໃຫ້ປະໂຫຍກຊັດເຈນຂຶ້ນ ຈະແຈ້ງຫຼາຍຂຶ້ນ ເຊັ່ນ:

- ລາວອາຍທີ່ຍ່າງຕໍາປະຕູ.
- ໜ້າຂອງລາວແຕກເປັນບາດ ຍ້ອນຍ່າງຕໍາປະຕູ.

**3) ການໃຊ້ຄໍາຕ່າງປະເທດ** ເຖິງແມ່ນວ່າໃນປັດຈຸບັນຄົນລາວຈະໄດ້ຮຽນ ແລະ ໃຊ້ພາສາຕ່າງປະເທດຫຼາຍຂຶ້ນໃນຊີວິດປະຈໍາວັນ ແຕ່ບໍ່ແມ່ນວ່າຈະສາມາດເຂົ້າໃຈຄວາມໝາຍຂອງຄໍາພາສາຕ່າງປະເທດໄດ້ທຸກຄໍາ ແລະ ທຸກຄົນ. ໃນຕົວຈິງແລ້ວຄໍາຕ່າງປະເທດທີ່ຄົນລາວໃຊ້ເປັນປະຈໍານັ້ນ ເປັນຄໍາທີ່ໃຊ້ເອີ້ນສິ່ງຕ່າງໆທີ່ເກີດຂຶ້ນໃໝ່ ແຕ່ຍັງບໍ່ມີຄໍາລາວບັນຍັດຂຶ້ນມາໃຊ້ແທນ ຫຼື ມີຄໍາລາວແທນແລ້ວ ແຕ່ຄໍາພາສາເດີມເປັນທີ່ເຂົ້າໃຈຫຼາຍກວ່າ ເຊັ່ນ: ຄອມພິວເຕີ, ລິບ, ເຕັກນິກ, ເຕັກໂນໂລຊີເປັນຕົ້ນ. ສ່ວນຄໍາປະເພດອື່ນ ເຊັ່ນ: ຄໍາກິລິຍາ, ຄໍາວິເສດ ລວມທັງຄໍານາມອື່ນໆໃນພາສາຕ່າງປະເທດນັ້ນ ສ່ວນຫຼາຍມີຄໍາລາວທີ່ໃຊ້ແທນໄດ້ໃນຄວາມໝາຍດຽວກັນ ເຊັ່ນ:

- ເຈົ້າເຄຍບັນຫາຂອງເຈົ້າແລ້ວຫຼືຍັງ? ແປງເປັນ ເຈົ້າແກ້ບັນຫາຂອງເຈົ້າແລ້ວຫຼືຍັງ?
- ໂທ້ຍໆ, ບໍ່ຕ້ອງເວົ້າອີກ. ແປງເປັນ ເຊົາໆ, ບໍ່ຕ້ອງເວົ້າອີກ.
- ແນວໂນ້ມຂອງເສດຖະກິດລາວ ແປງເປັນ ທ່າອ່ຽງຂອງເສດຖະກິດລາວ

ການໃຊ້ຄໍາລາວນອກຈາກເຮັດໃຫ້ເຂົ້າໃຈຄວາມເວົ້ານັ້ນໄດ້ຢ່າງຊັດເຈນແລ້ວ ຍັງເປັນການຮັກສາຄວາມບໍລິສຸດຂອງພາສາລາວອີກດ້ວຍ. ດັ່ງນັ້ນໃນການເລືອກໃຊ້ຄໍາ ຈຶ່ງຄວນເລືອກໃຊ້ຄໍາລາວກ່ອນ ໂດຍສະເພາະຢ່າງຍິ່ງໃນການຂຽນຢ່າງເປັນທາງການ ຍົກເວັ້ນແຕ່ວ່າຄໍາເຫຼົ່ານັ້ນບໍ່ມີຄໍາພາສາລາວທີ່ເໝາະສົມ ກໍອາດໃຊ້ການຂຽນພາສາລາວທັບສັບຄໍາຕ່າງປະເທດນັ້ນໄດ້ໃນກໍລະນີຈໍາເປັນ.

### 2.8 ຄວາມອ່ອນນວນ

ການໃຊ້ພາສາ ນອກຈາກຄວາມຖືກຕ້ອງຊັດເຈນແລ້ວ ສິ່ງໜຶ່ງທີ່ຕ້ອງຄຳນຶງນັ້ນແມ່ນຄວາມອ່ອນນວນ. ພາສາທີ່ໃຊ້ທັງການເວົ້າ ແລະ ການຂຽນຄວນຈະມ່ວນ, ມີຄວາມງົດງາມ, ເປັນຕາອ່ານຕາຟັງ. ການໃຊ້ຄຳເພື່ອໃຫ້ເກີດຄວາມອ່ອນນວນມີຂໍ້ຄວນພິຈາລະນາດັ່ງນີ້:

**1) ຄວາມຮັດກຸມ** ການເລືອກໃຊ້ຄຳສັ້ນໆ ແຕ່ໃຫ້ຄວາມໝາຍກົງ ຫຼື ໃກ້ຄຽງກັບທີ່ຕ້ອງການຈະຊ່ວຍໃຫ້ປະໂຫຍກ ຫຼື ຂໍ້ຄວາມນັ້ນຮັດກຸມ ແລະ ກະທັດຮັດ ບໍ່ຍືດຍາວ ເຊັ່ນ: "ເຈົ້າຄວນມ້ຽນຜັກ, ຊີ້ນ, ນົມໄວ້ໃນຕູ້ເຢັນ", ຄຳ "ຜັກ, ຊີ້ນ, ນົມ" ອາດແທນດ້ວຍຄຳ "ແນວກິນ" ໄດ້ໂດຍມີເນື້ອຄວາມຄືກັນ.

ຄວາມຍືດຍາວບາງເທື່ອເກີດຈາກຄຳຟຸ່ມເຟືອຍ ຄືມີຄຳທີ່ບໍ່ຈຳເປັນປາກົດຢູ່ໃນປະໂຫຍກນຳເພາະຜູ້ໃຊ້ເຂົ້າໃຈວ່າເຮັດໃຫ້ປະໂຫຍກເປັນແບບທາງການຫຼາຍຂຶ້ນ ເຊັ່ນ:

- ໂຄສົກຂອງກະຊວງການຕ່າງປະເທດ **ທຳການ**ຖະແຫຼງຂ່າວຕໍ່ນັກຂ່າວພາຍໃນ ແລະ ຕ່າງປະເທດ.
- ນັກສຶກສາຫຼາຍຄົນ**ມີຄວາມ**ຕັ້ງໃຈຮຽນ.
- ລາວເປັນຄົນທີ່**ມີຄວາມ**ພະຍາຍາມສູງ.

ຫາກຕັດຄຳທີ່ພິມຕົວເຂັ້ມອອກ ປະໂຫຍກທັງສາມຈະຮັດກຸມຫຼາຍຂຶ້ນ.

ນອກຈາກນີ້ການອະທິບາຍລາຍລະອຽດ ບາງເທື່ອເຮັດໃຫ້ປະໂຫຍກຍືດຍາວ ເນື່ອງຈາກລາຍລະອຽດທີ່ກ່າວນັ້ນຊ້ຳຄວາມກັນ ເຊັ່ນ:

- ລົດຈັກຄັນນີ້ເພແລ້ວ ຂີ່ບໍ່ໄດ້. ("ຂີ່ບໍ່ໄດ້" ເປັນຄຳເຫຼືອ).

**2) ລະດັບຂອງຄຳ** ເຮົາຕ້ອງໃຊ້ຄຳລະດັບດຽວກັນໃນປະໂຫຍກ ຫຼື ໃນຂໍ້ຄວາມດຽວກັນ. ການໃຊ້ລະດັບຄຳທີ່ແຕກຕ່າງກັນເຮັດໃຫ້ປະໂຫຍກ ຫຼື ຂໍ້ຄວາມບໍ່ອ່ອນນວນ ບໍ່ສອດຄ່ອງກັນ ເຖິງແມ່ນວ່າຄຳທີ່ນຳມາໃຊ້ຈະມີຄວາມໝາຍກົງຕາມຄວາມຕ້ອງການກໍຕາມ ເຊັ່ນ:

- ລູກຕ້ອງຮັກ**ບິດາມານດາ**. ແກ້ເປັນ ລູກຕ້ອງຮັກ**ພໍ່ແມ່**.
- ທ້າວຄຳດີ**ປະສູດ**ຢູ່ໂຮງໝໍ ແກ້ເປັນ ທ້າວຄຳດີ**ເກີດ**ຢູ່ໂຮງໝໍ.

**3) ການຄັດຄຳ** ແມ່ນການຫຼີກທີ່ຈະໃຊ້ຄຳເດີມຊ້ຳໆກັນ ເພື່ອບໍ່ໃຫ້ເກີດການໃຊ້ແຕ່ຄຳເກົ່າ ໂດຍການເລືອກໃຊ້ຄຳທີ່ມີຄວາມໝາຍດຽວກັນ ຫຼື ໃກ້ຄຽງກັນມາແທນທີ່ ເຊັ່ນ:

- ຂ້ອຍ**ມັກ**ປູກຝັງ, **ມັກ**ລ້ຽງສັດ, **ມັກ**ແຕ່ງກິນເອງ ແລະ **ມັກ**ໄປທ່ອງທ່ຽວ.

ຂໍ້ຄວາມທີ່ພິມຕົວເຂັ້ມແມ່ນຄຳຊ້ຳທີ່ສາມາດຫຼີກໄດ້ດ້ວຍການຄັດເລືອກຄຳດັ່ງນີ້:

- ຂ້ອຍ**ມັກ**ປູກຝັງ ແລະ ລ້ຽງສັດ, **ພໍໃຈ**ແຕ່ງກິນເອງ ແລະ **ມີຄວາມສຸກ**ໃນການໄປທ່ອງທ່ຽວ.

## 3. ການໃຊ້ຄຳໃຫ້ຖືກຕ້ອງຕາມລະດັບພາສາ

ການໃຊ້ພາສາໃນຊີວິດປະຈຳວັນບໍ່ວ່າຈະເປັນການເວົ້າ ຫຼື ການຂຽນ ຜູ້ໃຊ້ພາສາຕ້ອງໄດ້ຄັດເລືອກຄຳມາໃຊ້ໃຫ້ເໝາະສົມກັບກົດເກນ, ລະບຽບພາສາ, ໂອກາດກາລະເທສະ ແລະ ຄວາມສຳພັນລະຫວ່າງຜູ້ໃຊ້ພາສານຳກັນ ຈຶ່ງຈະເຮັດໃຫ້ການສື່ສານສຳເລັດຕາມຈຸດປະສົງ. ດັ່ງນັ້ນ ໃນການສື່ສານນີ້ "ລະດັບຂອງພາສາ" ຊຶ່ງໝາຍເຖິງຄຳ ແລະ ການຮຽບຮຽງຄຳໃຫ້ເໝາະສົມຈຶ່ງເຂົ້າມາມີບົດບາດເປັນຢ່າງດີ.

ລະດັບຂອງພາສາອາດແບ່ງອອກໄດ້ເປັນ 4 ລະດັບ ຄື:

**3.1 ພາສາທາງການ** ເປັນພາສາທີ່ໃຊ້ເປັນທາງການ ເປັນພິທີການ. ສ່ວນຫຼາຍໃຊ້ໃນການຂຽນຫຼາຍກວ່າການເວົ້າ ເຊັ່ນ: ບົດປາຖະກະຖາ, ຄຳໂອວາດ, ສຸນທອນພົດ, ຄຳປາໄສ, ການກ່າວເປີດ-ປິດກອງປະຊຸມ, ການກ່າວຕ້ອນຮັບ, ການກ່າວອວຍພອນທີ່ເປັນທາງການ, ການຂຽນຕຳລາ ຫຼື ແບບຮຽນ, ບົດຄວາມທາງວິຊາການ, ແຈ້ງການ, ຈົດໝາຍທາງລັດຖະການ ແລະ ການຂຽນບົດໃນສະຖານສຶກສາ ເປັນຕົ້ນ.

**3.2 ພາສາເຄິ່ງທາງການ** ມີໃຊ້ທັງໃນການເວົ້າ ແລະ ການຂຽນທີ່ບໍ່ເປັນພິທີການປານໃດ ເຊັ່ນ: ພາສາສົນທະນາລະຫວ່າງຜູ້ມີການສຶກສາ, ຜູ້ທີ່ບໍ່ລຶ້ງເຄີຍກັນ ຫຼື ຜູ້ຕ່າງຖານະ, ຕ່າງຕຳແໜ່ງ, ຕ່າງຄຸນວຸດທິກັນ. ການເວົ້າໃນທີ່ປະຊຸມກັບຜູ້ຟັງທົ່ວໄປ, ການແນະນຳຕົວບຸກຄົນ, ການຂຽນຈົດໝາຍທຸລະກິດ, ບົດຂຽນໃນວາລະສານ, ບົດຄວາມໃນສື່ມວນຊົນ, ປະກາດແຈ້ງການຂອງສ່ວນບຸກຄົນ, ນະວະນິຍາຍ, ເລື່ອງສັ້ນ, ຂ່າວລົງໃນໜັງສືພິມລາຍວັນ, ຕອບຂໍ້ສອບເສັງແບບອັດຕະໄນ ເປັນຕົ້ນ.

**3.3 ພາສາບໍ່ເປັນທາງການ** ສ່ວນຫຼາຍຈະເປັນພາສາເວົ້າ ໃຊ້ໃນການເວົ້າຫຼາຍກວ່າການຂຽນ ມັກໃຊ້ເວົ້າໃນຊີວິດປະຈຳວັນເປັນສ່ວນຫຼາຍ ບໍ່ເຄັ່ງຄັດເລື່ອງກົດເກນຂອງພາສາຫຼາຍປານໃດ ເຊັ່ນ: ພາສາທີ່ໃຊ້ໃນການໂຄສະນາ, ພາສາທີ່ໃຊ້ໃນການສົນທະນາລະຫວ່າງບຸກຄົນທີ່ລຶ້ງເຄີຍ, ພາສາທີ່ແຊກໃນບາງສ່ວນຂອງບົດຂຽນນະວະນິຍາຍ, ເລື່ອງສັ້ນ, ລະຄອນ ເພື່ອຄວາມສົມຈິງ, ການຂຽນຈົດໝາຍສ່ວນຕົວ. ລັກສະນະຂອງພາສາເວົ້າມັກມີຄຳຕະຫຼາດ (ສະແລງ), ຄຳຕັດສັ້ນ, ຄຳຕ່າງປະເທດປະປົນໄປນຳ.

**3.4 ພາສາບໍ່ສຸພາບ** ເປັນພາສາທີ່ໃຊ້ຄຳບໍ່ສຸພາບ, ຄຳຫຍາບ ຫຼື ຄຳດ່າ. ສ່ວນຫຼາຍຈະໃຊ້ເວົ້າກັນລະຫວ່າງໝູ່ໄວດຽວກັນ, ບໍ່ນິຍົມຂຽນເປັນລາຍລັກອັກສອນ ເວັ້ນແຕ່ຈະມີແຊກໄວ້ໃນບົດຂຽນປະເພດນະວະນິຍາຍ ຫຼື ເລື່ອງສັ້ນ. ທັງນີ້ກໍເພື່ອໃຫ້ເໝາະສົມກັບສະຖານະການ ຕົວລະຄອນ ຫຼື ສະພາບສັງຄົມໃນເລື່ອງເທົ່ານັ້ນ.

ຕົວຢ່າງ: ການໃຊ້ພາສາຕ່າງລະດັບໃນຂໍ້ຄວາມທີ່ມີເນື້ອໃນໃຈຄວາມທຳນອງດຽວກັນ

| | |
|---|---|
| **ພາສາທາງການ** | ຂໍຮຽນເຊີນບັນດາທ່ານເຂົ້າຮ່ວມຮັບປະທານອາຫານໃນງານລ້ຽງຄັ້ງນີ້. |
| **ພາສາເຄິ່ງທາງການ** | ຂໍເຊີນບັນດາເພື່ອນທຸກຄົນເຂົ້າຮ່ວມພາເຂົ້ານຳກັນ. |
| **ພາສາບໍ່ເປັນທາງການ** | ມາກິນເຂົ້ານຳກັນ. |
| **ພາສາບໍ່ສຸພາບ** | ມາສະແຕກເດີ! |

## 4. ການໃຊ້ຄຳໃຫ້ເໝາະສົມກັບຖານະຂອງບຸກຄົນ

ພາສາເປັນເຄື່ອງໝາຍສະແດງວັດທະນະທຳຢ່າງໜຶ່ງ ທີ່ຜູ້ໃຊ້ພາສາຄວນຮູ້ຈັກເລືອກໃຊ້ຄຳໃຫ້ເໝາະສົມກັບຖານະຂອງບຸກຄົນ ຊຶ່ງມີຄວາມສຳຄັນຫຼາຍ ທັງນີ້ກໍເພື່ອໃຫ້ກຽດກັນຕາມຖານະຂອງແຕ່ລະບຸກຄົນໃນສັງຄົມ.

ຕົວຢ່າງ: ການໃຊ້ຄຳໃຫ້ເໝາະສົມກັບຖານະຂອງບຸກຄົນ

- ນິມົນຄູບາສັນເພນ
  (ນິມົນ ແລະ ສັນເພນ ໃຊ້ກັບພະສົງ)
- ເຊີນທ່ານຮັບປະທານອາຫານ
  (ເຊີນ ແລະ ຮັບປະທານ ໃຊ້ກັບແຂກຜູ້ມີກຽດ)
- ເຊີນໝູ່ທຸກຄົນມາກິນເຂົ້ານຳກັນ
  (ເຊີນ ແລະ ກິນເຂົ້າ ໃຊ້ກັບໝູ່ຄູ່)

ການໃຊ້ຄຳໃຫ້ເໝາະສົມກັບຖານະຂອງບຸກຄົນ ໝາຍເຖິງການໃຊ້ຄຳຕ່າງໆໃນພາສາລາວເຮົາໃຫ້ເໝາະສົມຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງຂອງຖານະລະຫວ່າງຄົນກັບຄົນ ແລະ ຖືກກັບຄວາມໝາຍຂອງສັບ ຊຶ່ງປະກອບມີຄຳສັບພະນາມ, ຄຳນຳໜ້ານາມ, ຄຳສະແດງອາການ, ຄຳຂານຕອບ, ຄຳອາລະປະນະ.

**4.1 ຄຳສັບພະນາມ** ແມ່ນຄຳທີ່ໃຊ້ແທນຄຳສັບທີ່ເປັນນາມ ຊຶ່ງມີຄວາມໝາຍທາງສັງຄົມຊ້ອນແຝງໄວ້ໃນແຕ່ລະຄຳສັບພະນາມ:

| **ບຸລຸດທີ 1** | **ບຸລຸດທີ 2** | |
|---|---|---|
| ຂ້ອຍ | ເຈົ້າ | ໃຊ້ແບບສຸພາບທົ່ວໄປ<br>1. ອາຍຸ ຫຼື ໜ້າທີ່ສະເໝີກັນ<br>2. ຜູ້ເວົ້າມີອາຍຸ ຫຼື ໜ້າທີ່ສູງກວ່າ<br>3. ທັງສອງຢູ່ໃນຖານະດຽວກັນ |

| | | |
|---|---|---|
| ຂ້າພະເຈົ້າ | ທ່ານ | ແບບສຸພາບ 1. ໃຊ້ແບບທາງການ<br>2. ຜູ້ເວົ້າ ເວົ້າຕໍ່ສາທາລະນະ |
| ເຮົາ | ໂຕ | 1. ເປັນກັນເອງ (ບໍ່ຈຳກັດອາຍຸ ຫຼື ຖານະ)<br>2. ຜູ້ເວົ້າມີອາຍຸ ຫຼື ຖານະສູງກວ່າ |
| ເຮົາ | ອາວ, ບ່າວ | ຜູ້ເວົ້າມີອາຍຸໜ້ອຍກວ່າ (ໃຊ້ໃນບາງທ້ອງຖິ່ນ) |
| ນ້ອງ | ຫົວໜ້າ | ຜູ້ເວົ້າມີອາຍຸ ຫຼື ຖານະຕ່ຳກວ່າ |
| ນ້ອງ | ອ້າຍ/ເອື້ອຍ | ຜູ້ເວົ້າມີອາຍຸ ຫຼື ຖານະຕ່ຳກວ່າ, ນັບຖືຫຼາຍກວ່າ |
| ໝູ່ | ເພິ່ນ | ໃຊ້ໃນກຸ່ມຄົນທີ່ສະໜິດສະໜົມ (ໄວໜຸ່ມ) |
| ເຂົາ | ເພິ່ນ | ໃຊ້ໃນກຸ່ມຄົນທີ່ສະໜິດສະໜົມ (ໄວໜຸ່ມ) |
| ຂ້ານ້ອຍ | ຍາທ່ານ, ພະອາຈານ | ຜູ້ເວົ້າມີຖານະຕ່ຳກວ່າ, ຄະລາວາດ ເວົ້າກັບພະສົງ |

**ໝາຍເຫດ**: ນອກຈາກຄຳສັບພະນາມ ແລະ ຄຳນາມທີ່ໃຊ້ເປັນບຸລຸດທີ 1 ແລະ ທີ 2 ຂ້າງເທິງນີ້ແລ້ວ ກໍຍັງມີຄຳເຄືອຍາດ ເປັນຕົ້ນຄຳວ່າ ພໍ່ ແມ່ ປູ່ ຍ່າ ພໍ່ເຖົ້າ ແມ່ເຖົ້າ ພໍ່ຕາ ແມ່ນາຍ ພໍ່ຕູ້ ແມ່ຕູ້ ອ້າຍ ເອື້ອຍ ນ້ອງ ລຸງ ປ້າ ອາວ ອາ ນ້າບ່າວ ນ້າສາວ ລູກ ຫຼານ ກໍສາມາດໃຊ້ເປັນຄຳສັບພະນາມ ບຸລຸດທີ 1 ແລະ ບຸລຸດທີ 2 ໄດ້ ຊຶ່ງມັກໃຊ້ຢ່າງບໍ່ເປັນທາງການ.

**ບຸລຸດທີ 3**

| | |
|---|---|
| ທ່ານ | ໃຊ້ແບບທາງການ (ໃຊ້ເປັນບຸລຸດທີສອງກໍໄດ້) |
| ເພິ່ນ | ໃຊ້ແບບເຄົາລົບນັບຖື |
| ລາວ | ໃຊ້ແບບທົ່ວໄປ |
| ເຂົາ | ໃຊ້ກັບຄົນນອກວົງ, ໃນບົດວັນນະກຳ, ອາຍຸ ຫຼື ຖານະຕ່ຳກວ່າ |
| ມັນ | ໃຊ້ກັບຄົນນອກວົງ, ອາຍຸສະເໝີ ຫຼື ຕ່ຳກວ່າ, ສັດ ຫຼື ວັດຖຸ |

**4.2 ຄຳນຳໜ້ານາມ** ແມ່ນຄຳທີ່ໃຊ້ເວົ້າ ຫຼື ຂຽນຂຶ້ນຕົ້ນຊື່ຂອງຄົນ ຊຶ່ງມີລັກສະນະຄ້າຍຄືຄຳແທນນາມ ເພາະຂຶ້ນກັບຄວາມນິຍົມຂອງສັງຄົມເປັນຫຼັກ ແລະ ສັງຄົມເປັນຜູ້ກຳນົດ. ຄຳນຳໜ້າ ນາມບາງຄຳທີ່ຄວນຮູ້:

| | |
|---|---|
| ພະນະທ່ານ | ໃຊ້ນຳໜ້າຊື່ຄົນທີ່ມີຕຳແໜ່ງສູງ ເຊັ່ນ: ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ທູຕານຸທູດ ເປັນຕົ້ນ |
| ທ່ານ | ໃຊ້ນຳໜ້າຊື່ຄົນທີ່ມີຕຳແໜ່ງໃດໜຶ່ງໃນສັງຄົມ |
| ທ່ານນາງ | ໃຊ້ຄືກັບ "ທ່ານ" ແຕ່ໃຊ້ນຳໜ້າຊື່ແມ່ຍິງ |

ທ້າວ ໃຊ້ນຳໜ້າຊື່ຜູ້ຊາຍແບບທາງການ ຫຼື ສຸພາບ

ນາງ ໃຊ້ນຳໜ້າຊື່ແມ່ຍິງແບບທາງການ ຫຼື ສຸພາບ

**4.3 ຄຳສະແດງອາການ** ແມ່ນຄຳຊີ້ບອກການເຄື່ອນໄຫວ ຫຼື ຄວາມເປັນໄປຂອງຄຳຕົວຕັ້ງໃນປະໂຫຍກ. ຄຳສະແດງອາການນີ້ຕ້ອງໃຊ້ໃຫ້ເໝາະສົມກັບຖານະຂອງບຸກຄົນ ເຊັ່ນວ່າ:

- ມະໂນພາບກ່ຽວກັບ "ການບໍ່ມີຊີວິດ ຫຼື ການຫຼັບຕາອຳລາໂລກ" ກໍມີຫຼາຍຄຳສັບຊີ້ບອກ ແລະ ໃຊ້ຕ່າງກັນໄປຕາມຄວາມເໝາະສົມກັບຖານະຂອງບຸກຄົນ:

"ປະລິນິບພານ" ໃຊ້ສະເພາະພະພຸດທະເຈົ້າເທົ່ານັ້ນ

"ນິບພານ" ໃຊ້ສະເພາະພະອໍລະຫັນ ຫຼື ພະເຖລະຊັ້ນສູງ

"ມໍລະນະພາບ" ໃຊ້ສະເພາະພະສົງເທົ່ານັ້ນ

"ເຖິງແກ່ອະສັນຍະກຳ" ໃຊ້ສະເພາະບຸກຄົນມີຖານະຕຳແໜ່ງສູງ

"ເຖິງແກ່ກຳ" ໃຊ້ສະເພາະບຸກຄົນມີຖານະຕຳແໜ່ງສູງຮອງລົງມາ

"ມໍລະນະກຳ" ໃຊ້ສະເພາະບຸກຄົນທົ່ວໄປ

"ລ່ວງລັບ" ໃຊ້ສະເພາະບຸກຄົນໃນເຊືອຍາດ, ໃຊ້ໃນບົດວັນນະກຳ

"ເສຍ, ເສຍຊີວິດ" ໃຊ້ສະເພາະບຸກຄົນທີ່ເຮົາເຄົາລົບນັບຖື

"ເສຍສະຫຼະ, ເສຍສະຫຼະຊີວິດ" ໃຊ້ສະເພາະບຸກຄົນທີ່ມີຜົນງານດີເດັ່ນ

"ຕາຍ" ໃຊ້ສະເພາະບຸກຄົນນອກວົງ

- ມະໂນພາບກ່ຽວກັບ "ການເອົາອາຫານປ້ອນເຂົ້າປາກ ຫຍ້ຳ ແລ້ວກືນລົງທ້ອງ" ກໍມີຫຼາຍຄຳສັບຊີ້ບອກ ແລະ ໃຊ້ຕ່າງກັນໄປຕາມຄວາມເໝາະສົມກັບຖານະຂອງບຸກຄົນ:

"ຮັບປະທານ" ໃຊ້ສະເພາະແຂກຜູ້ມີກຽດໃນງານລ້ຽງທາງການ

"ກິນ" ໃຊ້ສະເພາະບຸກຄົນທົ່ວໄປ

"ສັນ" ໃຊ້ສະເພາະພະສົງເທົ່ານັ້ນ

"ຮ່ວມພາເຂົ້າ" ໃຊ້ສະເພາະບຸກຄົນທີ່ເປັນແຂກທີ່ໃຫ້ກຽດແກ່ເຮົາ

"ຊຸມເຂົ້າ" ໃຊ້ສະເພາະບຸກຄົນທີ່ເປັນໝູ່ຄູ່ສະໜິດແໜ້ນ

**4.4 ຄຳຂານຕອບ** ແມ່ນຄຳສະແດງການຕ້ອນຮັບຜູ້ອື່ນ ໃນເມື່ອພວກເຮົາຖືກຮຽກເອີ້ນ ຫຼື ຫວງຖາມ ຈະໃຊ້ຄຳໃດຂານຕອບ ແມ່ນຂຶ້ນກັບບຸກຄົນທີ່ຮຽກເອີ້ນ ຫຼື ຫວງຖາມເຮົາ:

"ໂດຍ" - ຄະລາວາດໃຊ້ຂານຕອບພະສົງ

- ຜູ້ນ້ອຍໃຊ້ຂານຕອບຜູ້ໃຫຍ່, ໃຊ້ເພື່ອຄວາມສຸພາບທົ່ວໄປ

"ເຈົ້າ" - ໃຊ້ຂານຕອບທົ່ວໄປເພື່ອຄວາມສຸພາບ

- ໃຊ້ແບບທາງການ

"ເອີ, ອື"　- ໃຊ້ຂານຕອບກັບບຸກຄົນທີ່ສະໜິດສະໜົມກັນ

- ໃຊ້ແບບບໍ່ເປັນທາງການ

**4.5 ຄໍາອາລະປະນະ** ແມ່ນຄໍາທີ່ພວກເຮົາເວົ້າຂຶ້ນກ່ອນ ຫຼື ຂຽນຂຶ້ນກ່ອນເນື້ອຄວາມທີ່ຈະເວົ້າ ຫຼື ຂຽນ. ຈະໃຊ້ຄໍາໃດກໍຂຶ້ນກັບຖານະຕໍາແໜ່ງຂອງຜູ້ທີ່ເຮົາຈະຂໍໂອກາດນໍານັ້ນ:

"ນ້ອມນະມັດສະການ"　ໃຊ້ກັບການຂໍໂອກາດຕໍ່ພະເຖລະຊັ້ນຜູ້ໃຫຍ່

"ນະມັດສະການ"　ໃຊ້ກັບການຂໍໂອກາດຕໍ່ພະສົງທົ່ວໄປ

"ຮຽນ"　1) ໃຊ້ກັບການຂໍໂອກາດຕໍ່ຜູ້ໃຫຍ່ ຫຼື ຂັ້ນເທິງ

2) ໃຊ້ກັບການຂໍໂອກາດຕໍ່ສາທາລະນະ

## 5. ການໃຊ້ຄໍາໃຫ້ເໝາະກັບກາລະເທສະ

ການໃຊ້ຄໍາໃນສະຖານທີ່ ແລະ ໃນໂອກາດຕ່າງໆ ເຮົາຕ້ອງຮູ້ຈັກເລືອກຄໍາມາໃຊ້ໃຫ້ເໝາະສົມ. ຫາກຜູ້ໃຊ້ພາສາມີຄວາມຮູ້ເລື່ອງການໃຊ້ພາສາບໍ່ດີເທົ່າທີ່ຄວນອາດເຮັດໃຫ້ການຕິດ ຕໍ່ສື່ສານເກີດຄວາມຜິດພາດ ຫຼື ຄວາມບໍ່ເໝາະສົມຕາມກາລະເທສະ.

ສະຖານທີ່ ແລະ ໂອກາດທີ່ຈະໃຊ້ຄໍາໃຫ້ເໝາະສົມມີ 3 ປະການ ຄື: ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ເປັນທາງການ, ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ເປັນເຄິ່ງທາງການ ແລະ ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ບໍ່ເປັນທາງການ.

**5.1 ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ເປັນທາງການ** ເຊັ່ນ: ການຕິດຕໍ່ສື່ສານກັບໜ່ວຍງານລັດຖະການ ຫຼື ການຕິດຕໍ່ສື່ສານໃນໂອກາດທີ່ເປັນພິທີການຕ່າງໆ ໃຫ້ໃຊ້ຄໍາທີ່ເປັນພາສາລະດັບທາງການ ຊຶ່ງໄດ້ແກ່ພາສາລັດຖະການ ແລະ ຄວນຫຼີກລ່ຽງບໍ່ໃຊ້ຄໍາຕໍ່ໄປນີ້ ຄື: ຄໍາພາສາທ້ອງຖິ່ນ, ຄໍາຕະຫຼາດ, ຄໍາຕ່າງປະເທດ...

**5.2 ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ເປັນເຄິ່ງທາງການ** ເຊັ່ນ: ການຕິດຕໍ່ສື່ສານທາງທຸລະກິດກັບບຸກຄົນຕ່າງໆ ທັງໃນ ແລະ ນອກການຈັດຕັ້ງ ຄວນໃຊ້ຄໍາທີ່ເປັນພາສາລະດັບເຄິ່ງທາງການ ຊຶ່ງໄດ້ແກ່ພາສາສຸພາບທີ່ໃຊ້ສື່ສານກັນໃນສັງຄົມ.

**5.3 ໃຊ້ຄໍາໃນສະຖານທີ່ ແລະ ໂອກາດທີ່ບໍ່ເປັນທາງການ** ເຊັ່ນ: ການຕິດຕໍ່ສື່ສານກ່ຽວກັບເລື່ອງທົ່ວໆໄປ ຫຼື ການຕິດຕໍ່ກ່ຽວກັບເລື່ອງໜ້າວຽກຕ່າງໆ ຊຶ່ງເປັນເລື່ອງເລັກໆນ້ອຍໆ ລະຫວ່າງພະນັກງານໃນການຈັດຕັ້ງດຽວກັນ ອາດຈະໃຊ້ຄໍາທີ່ເປັນພາສາລະດັບສົນທະນາ ຫຼື ພາສາເວົ້າ ຊຶ່ງເປັນພາສາທີ່ໃຊ້ສື່ສານກັນທົ່ວໄປໃນຊີວິດປະຈໍາວັນ.

**ຂໍ້ຄວນເອົາໃຈໃສ່**:

- ໃນວົງເພື່ອນຝູງຍາມເວລາສັງສັນກັນສາມາດໃຊ້ຄຳແບບເປັນກັນເອງ ເພື່ອສະແດງເຖິງຄວາມສະໜິດສະໜົມ.
- ໃນວົງສົນທະນາວິຊາການ ຫຼື ຮ່ວມຊີວິດການເມືອງ ຄວນໃຊ້ຄຳແບບທາງການ ຫຼື ແບບເຄິ່ງທາງການ.
- ໃນໂອກາດກອງປະຊຸມຕ່າງໆ ຄວນໃຊ້ຄຳແບບທາງການເທົ່ານັ້ນ.

## 6. ການໃຊ້ຄຳໃຫ້ເໝາະສົມກັບຮູບແບບການຂຽນ

ຮູບແບບການຂຽນພາສາລາວມີ 2 ຮູບແບບ ຄື ການຂຽນປະເພດຄຳຮ້ອຍກອງ ແລະ ປະເພດຄຳຮ້ອຍແກ້ວ. ການຂຽນປະເພດຄຳຮ້ອຍກອງໄດ້ແກ່ ກາບ, ກອນ, ໂຄງ ແລະ ສານປະເພດຕ່າງໆ. ສ່ວນການຂຽນປະເພດຄຳຮ້ອຍແກ້ວໄດ້ແກ່ ບົດຄວາມ, ໜັງສືທາງການ, ບົດບັນເທີງຄະດີ.

### 6.1 ການໃຊ້ຄຳໃຫ້ເໝາະກັບຮູບແບບການຂຽນຄຳຮ້ອຍກອງ

ໃນການຂຽນຄຳຮ້ອຍກອງ ໂດຍສະເພາະກາບ, ກອນ, ໂຄງ ແລະ ສານແມ່ນເປັນການຂຽນທີ່ເນັ້ນການສະແດງອອກທາງອາລົມ ຄວາມຮູ້ສຶກ ຄວາມຄິດເປັນຕົ້ນຕໍ ແລະ ໃຫ້ຄວາມຮູ້ ແລະ ຂໍ້ເທັດຈິງເປັນສຳຮອງ.

ກາບກອນເປັນຜົນຜະລິດຂອງວຽກງານທາງດ້ານສິລະປະ ແລະ ມີການສະແດງອອກໃນວິຖີທາງດຽວກັບການສະແດງອອກທາງສະຖາປັດຕະຍະກຳ. ສັບພາສາໃນການຂຽນກາບກອນຈຶ່ງຮຽກວ່າເປັນພາສາຂອງການສະແດງອອກ ຊຶ່ງເປັນພາສາສະແດງໃຫ້ເຫັນເຖິງການສະແດງອອກເຖິງຕົວຕົນ ຫຼື ການສະແດງອອກທາງອາລົມ. ສັບພາສາໃນກາບກອນຈຶ່ງບໍ່ເຮັດໜ້າທີ່ເພື່ອສື່ສານຢ່າງດຽວ ຄືກັບສັບພາສາທີ່ເຮົາໃຊ້ໃນຊີວິດປະຈຳວັນ.

ສັບພາສາ ຫຼື ຄຳທີ່ໃຊ້ໃນການແຕ່ງບົດປະພັນປະເພດຮ້ອຍກອງ ຫຼື ກາບກອນ ເປັນສັບພາສາທີ່ມີລັກສະນະແຕກຕ່າງຈາກການຂຽນປະເພດຮ້ອຍແກ້ວ ເພາະກາບກອນຈັດເປັນວຽກງານທາງສິລະປະຂະແໜງທີ່ເອີ້ນວ່າ "ວັນນະສິນ". ການສະແດງອອກທາງພາສາໃນກາບກອນຈຶ່ງມີລັກສະນະສະເພາະບາງປະການດັ່ງນີ້:

1) ເປັນສັບພາສາທີ່ສະແດງອາລົມ ແລະ ຄວາມຮູ້ສຶກ. ບໍ່ເກີດສຳຄັນຂອງກາບກອນແມ່ນອາລົມຈິດຂອງຜູ້ແຕ່ງທີ່ເກີດຈາກແຮງບັນດານໃຈ ຫຼື ສິ່ງທີ່ມາກະທົບຈິດໃຈ ຄື: ຮູບ, ລົດ, ກິ່ນ, ສຽງ ຫຼື ສຳຜັດ ເຮັດໃຫ້ເກີດຄວາມຮູ້ສຶກສຸກ ຫຼື ທຸກຢ່າງໃດຢ່າງໜຶ່ງ. ເມື່ອນັກກະວີເກີດອາລົມສະເທືອນໃຈກໍຖ່າຍທອດອາລົມນັ້ນໆ ຜ່ານການຂຽນ ໂດຍມີກົນລະວິທີ

ໃນການຖ່າຍທອດຕາມຮູບແບບໃນການແຕ່ງກາບກອນ ເພື່ອສື່ສານໃຫ້ກັບຜູ້ອ່ານໄດ້ຮັບຮູ້ ແລະ ເຂົ້າເຖິງພາວະອາລົມດັ່ງກ່າວໄປນຳ. ສັບພາສາທີ່ເກີດຈາກອາລົມສະເທືອນໃຈນີ້ອາດບໍ່ແມ່ນສັບພາສາທີ່ສະແດງເຫດຜົນ ຫຼື ຂໍ້ເທັດຈິງ ແຕ່ເປັນສັບພາສາຂອງຄວາມຮູ້ສຶກເປັນສຳຄັນ.

ສັບພາສາ ຫຼື ຄຳທີ່ໃຊ້ໃນກາບກອນເປັນສັບພາສາທີ່ຕ້ອງການສະແດງພາບ ຫຼື ເປັນສັບພາສາທີ່ກໍ່ໃຫ້ເກີດຈິນຕະພາບ. ລັກສະນະສັບພາສາເຊັ່ນນີ້ຖືວ່າເປັນລັກສະນະເດັ່ນຂອງການໃຊ້ສັບພາສາໃນການຂຽນບົດກາບກອນ. ຄຳວ່າ ຈິນຕະພາບ ຫຼື ພາບໃນຈິດໝາຍເຖິງ ພາບທີ່ປາກົດໃນຈິນຕະນາການຕາມປະສົບການທີ່ຜ່ານມາ. ພາບໃນຈິດເປັນພາບທີ່ເຫັນດ້ວຍໃຈຄິດ ດ້ວຍຄວາມຮູ້ສຶກ. ຈິນຕະພາບໃນການຂຽນກາບກອນຈຶ່ງເກີດຈາກການໃຊ້ສັບພາສາການສະແດງອອກເປັນສຳຄັນ.

ການສະແດງອອກທາງສັບພາສາໃນກາບກອນ ຈຶ່ງມີລັກສະນະສະເພາະຂອງຕົນ. ການໃຊ້ພາສາໃນລັກສະນະນີ້ ຈັດວ່າເປັນສິລະປະໃນດ້ານການໃຊ້ຄຳ ແລະ ເປັນລັກສະນະພິເສດທີ່ເຮັດໃຫ້ສັບພາສາກາບກອນ ມີບົດບາດໜ້າທີ່ບໍ່ພຽງແຕ່ສື່ຄວາມໝາຍແຕ່ຢ່າງດຽວ.

2) ສັບພາສາ ຫຼື ຄຳທີ່ໃຊ້ຂຽນກາບກອນເປັນສັບພາສາທີ່ເນັ້ນການ ສະແດງອອກທາງສຽງ ເພື່ອໃຫ້ເກີດລີລາ ຈັງຫວະ. ອາດກ່າວໄດ້ວ່າ ສັບພາສາຂອງກາບກອນເປັນສັບພາສາແຫ່ງທຳນອງ ແລະ ດົນຕີ ເພາະຄວາມງາມໃນກາບກອນທາງໜຶ່ງ ເກີດຈາກສຽງຂອງຄຳທີ່ຖືກຈັດວາງໃຫ້ເກີດຈັງຫວະລີລາທັງສອດຄ່ອງກັນ ແລະ ຂັດກັນດັ່ງທ່ວງທຳນອງຂອງດົນຕີ. ການໃຊ້ສັບພາສາໃນລັກສະນະນີ້ ຜູ້ແຕ່ງຈຳເປັນຕ້ອງຄັດເລືອກຄຳມາໃຊ້.

3) ກາບກອນມີຂໍ້ບັງຄັບທາງສັນທະລັກ ຈຶ່ງເນັ້ນໃນເລື່ອງຂອງການສຳຜັດສຽງອັນເຮັດໃຫ້ເກີດຈັງຫວະ ທ່ວງທຳນອງສູງຕ່ຳຂອງລະດັບສຽງວັນນະຍຸດ, ຄຳເປັນຄຳຕາຍ ຄຸນລັກສະນະເຫຼົ່ານີ້ເອື້ອອຳນວຍໃຫ້ນັກກະວີເລືອກໃຊ້ຄຳໃຫ້ມີສຽງມ່ວນໄດ້.

## 6.2 ການໃຊ້ຄຳໃຫ້ເໝາະກັບຮູບແບບການຂຽນຄຳຮ້ອຍແກ້ວ

ຮູບແບບການຂຽນປະເພດຄຳຮ້ອຍແກ້ວສາມາດແບ່ງອອກເປັນຫຼາຍປະເພດ ແຕ່ໃນທີ່ນີ້ຈະແບ່ງຮູບແບບການຂຽນອອກເປັນ 4 ປະເພດ ຄື: ການຂຽນດ້ານວິຊາການ, ການຂຽນເອກະສານທາງການ, ການຂຽນເພື່ອການສື່ສານມວນຊົນ ແລະ ການຂຽນແບບສ້າງສັນ. ແຕ່ລະປະເພດມີການໃຊ້ຄຳ ດັ່ງນີ້:

### 1) ການຂຽນດ້ານວິຊາການ

ການຂຽນດ້ານວິຊາການເປັນການຖ່າຍທອດຄວາມຮູ້, ຄວາມຄິດເຫັນ, ທັດສະນະຄະຕິ ໆລໆ ຂອງຜູ້ຂຽນໃນເລື່ອງໃດເລື່ອງໜຶ່ງຢ່າງມີລະບົບ ແລ້ວນຳມາຮຽບຮຽງເປັນຂໍ້

ຄວາມທີ່ມີການອ້າງອີງຢ່າງໜ້າເຊື່ອຖື. ອາດມີການວິເຄາະຂໍ້ມູນ ແລະ ສະເໜີແນະຢ່າງໜ້າສົນໃຈ ແລະ ເປັນປະໂຫຍດ. ໃນການຂຽນດ້ານວິຊາການນີ້ ຜູ້ຂຽນຕ້ອງໃຊ້ຄຳໃນລະດັບພາສາທາງການ.

### 2) ການຂຽນເອກະສານທາງລັດຖະການ

ເອກະສານທາງລັດຖະການ ແມ່ນນິຕິກຳ, ຂໍ້ມູນ, ຂ່າວສານ ທີ່ເປັນລາຍລັກອັກສອນເພື່ອໃຊ້ໃນການພົວພັນລະຫວ່າງອົງການຈັດຕັ້ງຂອງລັດດ້ວຍກັນ, ອົງການຈັດຕັ້ງຂອງລັດກັບເອກະຊົນ, ລວມໝູ່ ແລະ ຕະຫຼອດເຖິງພົນລະເມືອງ ເພື່ອເຮັດໃຫ້ຄວາມຮັບຮູ້ ແລະ ການຈັດຕັ້ງປະຕິບັດມີຄວາມເປັນເອກະພາບ ແລະ ທັງຮັບປະກັນໃຫ້ແກ່ການນຳພາຂອງ ພັກ, ການຄຸ້ມຄອງຂອງລັດໃນການບໍລິຫານປະເທດ.

ເອກະສານທາງລັດຖະການ ໂດຍທົ່ວໄປແລ້ວປະກອບມີ: ແນວທາງລວມຂອງພັກແຕ່ລະໄລຍະ, ລັດຖະທຳມະນູນ, ກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ, ມະຕິ, ມະຕິຕົກລົງ, ຂໍ້ກຳນົດ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ກົດລະບຽບ, ແຈ້ງການ, ໜັງສືສະ ເໜີ, ບົດລາຍງານ, ໂທລະເລກ, ໃບສະເໜີພົວພັນ, ໃບເດີນທາງ, ໃບນຳສົ່ງ, ຄຳຮ້ອງ, ສະໂໜດນຳສົ່ງ, ບົດສະຫຼຸບ, ບົດບັນທຶກ, ສົນທິສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ອື່ນໆ.

ການໃຊ້ຄຳ ຫຼື ສັບພາສາໃນບັນດາເອກະສານທາງລັດຖະການ ຕ້ອງໃຊ້ຄຳໃນລະດັບພາສາທາງການ ແລະ ຄຳມາດຕະຖານເທົ່ານັ້ນ.

### 3) ການຂຽນເພື່ອການສື່ສານມວນຊົນ

ການຂຽນເພື່ອການສື່ສານມວນຊົນ ມີຄວາມສຳຄັນຍິ່ງໃນຍຸກໂລກາພິວັດ ການຕິດຕໍ່ສື່ສານດ້ວຍການຂຽນຍັງມີຄວາມຈຳເປັນ ບໍ່ວ່າຄວາມກ້າວໜ້າຂອງເຕັກໂນໂລຊີຈະງອກງາມໄປຫຼາຍໜ້ອຍພຽງໃດ ການຂຽນກໍຍັງຕ້ອງໃຊ້ຄຽງຄູ່ກັບເຕັກໂນໂລຊີທຸກຊະນິດ. ນອກຈາກນີ້ ການຂຽນຍັງໃຊ້ປະກອບໃນສື່ປະເພດຕ່າງໆນຳອີກ ບໍ່ວ່າຈະເປັນສື່ສິ່ງພິມ, ວິທະຍຸ, ໂທລະພາບ, ໂຄສະນາ ຫຼື ຮູບເງົາເປັນຕົ້ນ.

ການສື່ສານໂດຍການຂຽນຜ່ານສື່ມວນຊົນຕ່າງໆ ຈະປະສົບຄວາມສຳເລັດໄດ້ ກໍຕໍ່ເມື່ອຜູ້ຂຽນມີຄວາມຮູ້ຄວາມເຂົ້າໃຈເບື້ອງຕົ້ນ ໃນເລື່ອງຂອງພາສາກັບການສື່ສານລວມທັງພື້ນຖານໃນເລື່ອງສື່ປະເພດຕ່າງໆ ເພື່ອຈະໄດ້ເຂົ້າໃຈທຳມະຊາດຂອງສື່ແຕ່ລະປະເພດ ແລ້ວນຳເອົາການຂຽນໄປນຳໃຊ້ໃນສື່ນັ້ນໆໄດ້ຢ່າງຖືກຕ້ອງຕໍ່ໄປ.

ການຂຽນຂ່າວໃນສື່ ບໍ່ວ່າຈະເປັນການຂຽນຂ່າວປະເພດໃດ ກໍຕ້ອງໃຫ້ເຂົ້າໃຈງ່າຍ ໂດຍພິຈາລະນາຂຽນຂ່າວໃນຮູບແບບທີ່ອ່ານງ່າຍ ເປັນຕາອ່ານ ຜູ້ອ່ານຈຶ່ງ

ສາມາດຈັບປະເດັນສຳຄັນໄດ້ຢ່າງຄົບຖ້ວນ. ການໃຊ້ສັບພາສາທີ່ເຂົ້າໃຈງ່າຍ ອາດຈະເປັນຄຳສັບພາສາທາງການ, ເຄິ່ງທາງການ ຫຼື ບາງເທື່ອອາດມີຄຳສັບບໍ່ເປັນທາງການປະກອບເຂົ້ານຳ ເພື່ອໃຫ້ບົດຂ່າວເປັນຕາອ່ານ.

### 4) ການຂຽນແບບສ້າງສັນ

ການຂຽນແບບສ້າງສັນ ນອກຈາກການຂຽນເປັນບົດກະວີແລ້ວ ໃນການຂຽນເປັນຄຳຮ້ອຍແກ້ວ ຈະປະກອບມີການຂຽນປະເພດບັນເທີງຄະດີ ແລະ ການຂຽນປະເພດສາລະຄະດີ.

(1) ການຂຽນປະເພດບັນເທີງຄະດີ ໝາຍເຖິງບົດຂຽນທີ່ເປັນເລື່ອງສົມມຸດ ຫຼື ເວົ້າໄດ້ວ່າ ເປັນເລື່ອງທີ່ຜູ້ຂຽນປະດິດຄິດແຕ່ງຂຶ້ນມາຈາກຈິນຕະນາການຂອງຕົນເອງ. ການຂຽນປະເພດບັນ ເທີງຄະດີທີ່ຮູ້ຈັກກັນດີໄດ້ແກ່ ເລື່ອງສັ້ນ ແລະ ນະວະນິຍາຍ. ການຂຽນປະເພດນີ້ ມີຈຸດປະສົງສະເໜີຄວາມຄິດໃນເລື່ອງໃດເລື່ອງໜຶ່ງກ່ຽວກັບຊີວິດຂອງຄົນ ຄວາມເປັນໄປແຫ່ງໂລກ ແລະ ສັງຄົມ ແຕ່ນຳສະເໜີຢ່າງມີສິລະປະ ຈຶ່ງເຮັດໃຫ້ຜູ້ອ່ານເກີດຄວາມເພີດເພີນ ຫຼື ໄດ້ຮັບຄວາມບັນເທີງ.

ການຂຽນປະເພດບັນເທີງຄະດີ ບໍ່ວ່າຈະເປັນເລື່ອງສັ້ນ ຫຼື ນະວະນິຍາຍ ລ້ວນແຕ່ໃຊ້ສັບພາສາ ຫຼື ຄຳໃນການຂຽນໂດຍໃຊ້ຄຳສັບທີ່ເຂົ້າໃຈງ່າຍ ບໍ່ວ່າຈະເປັນຄຳສັບພາສາທາງການ, ຄຳສັບພາສາເຄິ່ງທາງການ ຫຼື ຄຳສັບພາສາບໍ່ເປັນທາງການຕະຫຼອດຮອດພາສາເວົ້າ, ພາສາທ້ອງຖິ່ນ, ພາສາຕະຫຼາດ ແລະ ພາສາບໍ່ສຸພາບ.

(2) ການຂຽນປະເພດສາລະຄະດີ ເປັນການຂຽນມີຈຸດປະສົງນຳສະເໜີສາລະຄວາມຮູ້ ແລະ ຄວາມເປັນຈິງຂອງເລື່ອງໃດເລື່ອງໜຶ່ງແກ່ຜູ້ອ່ານ ເປັນການຂຽນທີ່ເກີດຂຶ້ນຈາກຄວາມເປັນຈິງ ແລະ ມີຄວາມປະສົງສະເໜີຄວາມຈິງເປັນຕົ້ນຕໍ. ໃນການຂຽນສາລະຄະດີນັ້ນ ຜູ້ຂຽນຈະຕ້ອງມີຂະບວນການ ແລະ ຂັ້ນຕອນໃນການຂຽນ ເຊັ່ນ: ການລົງໄປເກັບຂໍ້ມູນຈາກສະຖານທີ່ຈິງ, ການສຳພາດບຸກຄົນທີ່ກ່ຽວຂ້ອງ ຫຼື ຄົ້ນຄວ້າຈາກເອກະສານທີ່ສາມາດອ້າງອີງໄດ້.

ການຂຽນປະເພດສາລະຄະດີຈະໃຊ້ສັບພາສາ ຫຼື ຄຳສັບທີ່ເຂົ້າໃຈງ່າຍຄືກັນກັບການຂຽນປະເພດບັນເທີງຄະດີ ແຕ່ຈະເນັ້ນການໃຊ້ຄຳສັບທາງການ ແລະ ເຄິ່ງທາງການຫຼາຍກວ່າ.

# ພາກທີ III

# ຫຼັກການພື້ນຖານການນຳໃຊ້ວະລີ ແລະ ປະໂຫຍກ ໃນພາສາລາວ

## I. ວະລີ ຫຼື ກຸ່ມຄຳ

### 1. ຄວາມໝາຍຂອງວະລີ

ວະລີແມ່ນກຸ່ມຄຳທີ່ນຳມາຮຽງຕິດຕໍ່ກັນເປັນລະບຽບ, ມີໃຈຄວາມໃນຕົວຂອງມັນ, ແຕ່ຍັງບໍ່ທັນຄົບຖ້ວນພໍເປັນປະໂຫຍກສົມບູນໄດ້.

ເວົ້າຢ່າງໜຶ່ງ, ວະລີແມ່ນການນຳເອົາຄຳທີ່ເວົ້າຕິດຕໍ່ກັນຕັ້ງແຕ່ 2 ຄຳຂຶ້ນໄປມາຮຽງຕໍ່ກັນ, ມີຄວາມໝາຍກ່ຽວເນື່ອງຜູກພັນກັນ, ແຕ່ບໍ່ເກີດເປັນຄຳໃໝ່ ແລະ ຍັງບໍ່ທັນເປັນປະໂຫຍກທີ່ຄົບຖ້ວນ ເພາະຂາດພາກສ່ວນໃດໜຶ່ງໃນພາກຕົວຕັ້ງ ຫຼື ພາກສະແດງ ເຊັ່ນ: ໂຮງຮຽນຂອງພວກເຮົາ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ສາຂາແມ່ນ້ຳຂອງ, ໄປທ່ຽວແລ່ນຫຼິ້ນ, ໂຕະໜ່ວຍນັ້ນ, ເຮືອນຫຼັງທີສອງ, ສອງຝັ່ງແມ່ນ້ຳກະດິງ, ນະຄອນຫຼວງທີ່ເກົ່າແກ່ເປັນຕົ້ນ.

ຕົວຢ່າງ: **ໂຮງຮຽນຂອງພວກເຮົາ**ເປັນໂຮງຮຽນແບບຢ່າງ.

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**ສ້າງຕັ້ງຂຶ້ນໃນວັນທີ 2 ທັນວາ 1975.

ນ້ຳອູແມ່ນ**ສາຂາແມ່ນ້ຳຂອງ**.

ເດັກນ້ອຍພາກັນ**ໄປທ່ຽວແລ່ນຫຼິ້ນ**ຢູ່ກາງເດີ່ນ.

**ໝາຍເຫດ**: ຕົວໜັງສືທີ່ພິມເປັນຕົວເຂັ້ມໃນປະໂຫຍກ ໝາຍເຖິງວະລີ.

### 2. ປະເພດວະລີ

ວະລີແບ່ງອອກເປັນ 7 ປະເພດຕາມປະເພດຄຳທີ່ນຳໜ້າຂອງແຕ່ລະກຸ່ມຄຳເຊັ່ນ: ນາມວະລີ, ສັບພະນາມວະລີ (ແທນນາມວະລີ), ກິລິຍາວະລີ (ກຳມະວະລີ), ວິເສດວະລີ (ຄຸນນາມວະລີ), ບຸບພະບົດວະລີ (ຄຳເຊື່ອມວະລີ), ສັນທານວະລີ (ຄຳຕໍ່ວະລີ) ແລະ ອຸທານວະລີ.

#### 2.1 ນາມວະລີ

ນາມວະລີແມ່ນກຸ່ມຄຳທີ່ມີຄຳນາມຢູ່ໜ້າ ຫຼື ຕັ້ງຕົ້ນດ້ວຍຄຳນາມ ສ່ວນຄຳຢູ່ຂ້າງຫຼັງຈະເປັນຄຳປະເພດໃດກໍໄດ້ ເຊັ່ນ: ນັກຮຽນໂຮງຮຽນມັດທະຍົມສົມບູນວຽງຈັນ, ໃຈກາງ

ນະຄອນຫຼວງວຽງຈັນ, ເຮືອນສາມຫຼັງ, ລົດຄັນທີຫ້າ, ຄວາມສະຫຼາດສ່ອງໃສ, ຄວາມໂງ່ຈ້າຫຼ້າຫຼັງ, ເຄື່ອງຄອມພິວເຕີຕັ້ງໂຕະຂອງຫ້ອງການ, ໄຫລະສັບມືຖືຫຼາຍຍີ່ຫໍ້, ສະໂມສອນນັກກິລາເປຕັງ ເປັນຕົ້ນ.

ຕົວຢ່າງ: **ນັກຮຽນໂຮງຮຽນມັດທະຍົມສົມບູນວຽງຈັນ**ເຂົ້າຮ່ວມການແຂ່ງຂັນກິລາ.

ວັດອິງຕື້ມະຫາວິຫານຕັ້ງຢູ່**ໃຈກາງນະຄອນຫຼວງວຽງຈັນ**.

**ເຄື່ອງຄອມພິວເຕີຕັ້ງໂຕະຂອງຫ້ອງການ**ເປັນສີດຳທັງໝົດ.

## 2.2 ສັບພະນາມວະລີ

ສັບພະນາມວະລີ (ແທນນາມວະລີ) ແມ່ນກຸ່ມຄຳທີ່ມີຄຳສັບພະນາມຢູ່ໜ້າ ຫຼື ຕັ້ງຕົ້ນດ້ວຍຄຳສັບພະນາມ ເຊັ່ນ: ຂ້ອຍນີ້ລະ, ເຮົາເອງ, ເຈົ້າຫັ້ນລະ, ພວກຂ້າພະເຈົ້າເອງ, ພວກເພິ່ນເອງ, ທ່ານທັງຫຼາຍ, ທ່ານຜູ້ມີກຽດ ເປັນຕົ້ນ.

ຕົວຢ່າງ: ຖ້າລາວບໍ່ໄປ **ຂ້ອຍນີ້ລະ**ຊິໄປ.

ເພິ່ນບອກ**ເຈົ້າຫັ້ນລະ**ຂຽນ.

**ຂ້ອຍເອງ**ເປັນຜູ້ເວົ້າ.

## 2.3 ກິລິຍາວະລີ

ກິລິຍາວະລີ (ກຳມະວະລີ) ແມ່ນກຸ່ມຄຳທີ່ມີຄຳກິລິຍາຢູ່ໜ້າ ຫຼື ຕັ້ງຕົ້ນດ້ວຍຄຳກິລິຍາ ເຊັ່ນ: ນັ່ງຮຽນ, ກິນຫຼາຍ, ໄປແລ້ວ, ໄປເອົາມາ, ເອົາໄປສົ່ງ, ກັບຄືນມາ, ຢ່າເຮັດ, ພວມແລ່ນ, ເດີນຈາກໄປຢ່າງບໍ່ຫ່ວງໃຍ, ກຳລັງພະຍາຍາມເຮັດ, ລົງໄປເອົາມາເບິ່ງ, ຂຶ້ນມາຮັບເອົາໄປ ເປັນຕົ້ນ.

ຕົວຢ່າງ: ຖ້າກຽມແລ້ວກໍ**ເອົາໄປສົ່ງ**.

ຜູ້ອື່ນຄາວຽກໝົດ ໃຫ້ເຈົ້າ**ເອົາໄປສົ່ງ**.

ໃຜບໍ່ທັນຮັບ ກໍ**ຂຶ້ນມາຮັບເອົາໄປ**ສາ.

**ກິນຫຼາຍ**ທ້ອງແຕກ.

## 2.4 ວິເສດວະລີ

ວິເສດວະລີ (ຄຸນນາມວະລີ) ແມ່ນກຸ່ມຄຳທີ່ມີຄຳວິເສດຢູ່ໜ້າ ຫຼື ຕັ້ງຕົ້ນດ້ວຍຄຳວິເສດ ເຊັ່ນ: ໃຫຍ່ໂຕມະໂຫຖານ, ດີເລີດ, ດີເດັ່ນຮອບດ້ານ, ງາມເຫຼືອລົ້ນພົ້ນປະມານ, ມືດແທ້ມືດວ່າ, ຫຼາຍອີຫຼີ, ຫຼາຍໂພດ, ໜ້ອຍດຽວ, ຍາວຄາດລາດ ເປັນຕົ້ນ.

ຕົວຢ່າງ: ຖ້າບໍ່ໄດ້ໄຕ້ໄຟ ຫ້ອງນີ້**ມືດແທ້ມືດວ່າ**.

ປີນີ້ ນໍ້າຂອງຂຶ້ນ**ຫຼາຍອີຫຼີ**.

ຂ້ອຍບໍ່ຮູ້ວ່າລາວເປັນຫຍັງ ມາ**ໜ້ອຍດຽວ**ກໍເມືອ.

### 2.5 ບຸບພະບົດວະລີ

ບຸບພະບົດວະລີ (ຄຳເຊື່ອມວະລີ) ແມ່ນກຸ່ມຄຳທີ່ມີຄຳບຸບພະບົດຢູ່ໜ້າ ຫຼື ຕັ້ງຕົ້ນດ້ວຍຄຳບຸບພະບົດ ເຊັ່ນ: ຂອງເຮົາ, ຂອງພວກຂ້ອຍ, ສຳລັບເບິ່ງ, ສຳລັບອ່ານຫຼິ້ນ, ດູລາທ່ານທັງຫຼາຍ, ຂ້າແຕ່ສະມາຊິກທັງຫຼາຍ, ໃນທ່າມກາງບັນຍາກາດ, ດ້ວຍນໍ້າໃຈ, ດ້ວຍຄວາມນັບຖື, ແກ່ຄູ, ນອກຈາກເຈົ້າ ເປັນຕົ້ນ.

ຕົວຢ່າງ: ນີ້ແມ່ນນາ**ຂອງພວກຂ້ອຍ**.

ເພິ່ນໃຫ້ໄປໝົດທຸກຄົນ **ນອກຈາກເຈົ້າ**.

ລາວມອບຂອງຂວັນ**ແກ່ຄູ**.

### 2.6 ສັນທານວະລີ

ສັນທານວະລີ (ຄຳຕໍ່ວະລີ) ແມ່ນກຸ່ມຄຳທີ່ໃຊ້ເປັນຄຳເຊື່ອມຕໍ່ ໂດຍມີຄຳສັນທານນຳໜ້າ ເຊັ່ນ:

- **ເຊື່ອມຕໍ່ຄວາມຄ້ອຍຕາມກັນ**: ກໍ...ຈຶ່ງ..., ຄັນ...ຈຶ່ງ..., ຄັນ...ກໍ..., ພໍ...ກໍ...; ...ກໍດີ...ກໍດີ, ...ກໍໄດ້...ກໍໄດ້, ທັງ...ກໍ, ທັງ...ແລະ... ເປັນຕົ້ນ.
- **ເຊື່ອມຕໍ່ຄວາມທີ່ຂັດກັນ**: ແຕ່ວ່າ; ແຕ່ຫາກວ່າ, ເຖິງ...ກໍ, ກວ່າ...ກໍ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມຕ່າງຝ່າຍກັນ**: ສ່ວນວ່າ, ຝ່າຍວ່າ, ອີກອັນໜຶ່ງ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມທີ່ເປັນເຫດຜົນ**: ດັ່ງນັ້ນ, ຈຶ່ງ...; ສະນັ້ນ, ຈຶ່ງ...; ເພາະສະນັ້ນ ແລ້ວ, ສຸດແຕ່ວ່າ...ປານກັບວ່າ, ຈົນວ່າ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມທີ່ເລືອກເອົາ**: ຫຼືວ່າ, ບໍ່...ກໍ, ບໍ່ດັ່ງນັ້ນ ກໍ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມແບ່ງຮັບແບ່ງສູ້**: ຖ້າ...ກໍ, ກ່ຽວກັບເລື່ອງນີ້ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມປຽບທຽບ**: ດຸດຈະດັ່ງ, ປານກັບວ່າ, ຣາວກັບວ່າ, ພຽງດັ່ງວ່າ, ຄືດັ່ງວ່າ, ເໝືອນດັ່ງວ່າ, ປຽບສະເໝືອນ ເປັນຕົ້ນ.
- **ເຊື່ອມຕໍ່ຄວາມເພື່ອໃຫ້ມ່ວນ ແລະ ອອມຊອມ**: ຢ່າງໃດກໍດີ, ຢ່າງໃດກໍຕາມ, ເຖິງຢ່າງໃດກໍຕາມ, ເຖິງຢ່າງໃດກໍແລ້ວແຕ່ ເປັນຕົ້ນ.

ຕົວຢ່າງ: ລາວມີໝວກ **ແຕ່ວ່າ**ຂ້ອຍບໍ່ມີ.

ວານນີ້ ຂ້ອຍຮຽນໜັງສື**ຈົນວ່າ**ລືມກິນເຂົ້າກິນນໍ້າ.

**ສຸດແຕ່ວ່າ** ຂ້ອຍເຮັດດີກັບລາວ**ປານກັບວ່າ**ລາວເປັນນ້ອງຄີງຂອງຂ້ອຍ.

### 2.7 ອຸທານວະລີ

ອຸທານວະລີແມ່ນກຸ່ມຄຳທີ່ມີຄຳອຸທານຢູ່ໜ້າ ເຊັ່ນ: ໂອນໍ ນ້ອງເອີຍ!, ປາດໂທປາດທາຍ!, ອານິດຈາເອີຍ!, ພຸດໂທເອີຍ! ເປັນຕົ້ນ.

ຕົວຢ່າງ: **ໂອນໍ ນ້ອງເອີຍ!** ເປັນຫຍັງບໍ່ຟັງຄວາມພໍ່ແມ່ແດ່.

**ອານິດຈາເອີຍ!** ເຫັນແລ້ວເປັນໜ້າອີດູຕົນແທ້.

## 3. ໜ້າທີ່ຂອງວະລີໃນປະໂຫຍກ

ໃນປະໂຫຍກ, ວະລີມີໜ້າທີ່ປະກອບເປັນພາກສ່ວນຕ່າງໆຂອງປະໂຫຍກຄືກັນກັບຄຳປະເພດຕ່າງໆ ເຊັ່ນ: ໃຊ້ເປັນຕົວຕັ້ງ, ເປັນຕົວກິລິຍາ ແລະ ເປັນຕົວປະກອບໃນປະໂຫຍກ; ໃຊ້ຂະຫຍາຍຄວາມໃນປະໂຫຍກໃຫ້ຄົບຖ້ວນແຈ່ມແຈ້ງ; ໃຊ້ເຊື່ອມຕໍ່ລະຫວ່າງປະໂຫຍກໃຫ້ເປັນຂໍ້ຄວາມທີ່ຕໍ່ເນື່ອງ ແລະ ເປັນລະບົບດີ.

### 3.1 ວະລີເຮັດໜ້າທີ່ເປັນຕົວຕັ້ງປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ເປັນຕົວຕັ້ງໄດ້ມີ ນາມວະລີ, ສັບພະນາມວະລີ ແລະ ກິລິຍາວະລີ.

ຕົວຢ່າງ: **ຄອມພິວເຕີຕັ້ງໂຕະຂອງຫ້ອງການ** ມີ 5 ຊຸດ.

**ໂທລະສັບໜ່ວຍນີ້**ໃຊ້ບໍ່ໄດ້.

**ເຮົາເອງ**ກຳລັງພະຍາຍາມເຮັດວຽກໃຫ້ສຳເລັດ.

**ພວກເຮົາທຸກຄົນ**ຍິນດີຕ້ອນຮັບທ່ານ.

**ຍອມຕາຍດີກວ່າ**ເປັນຂ້ອຍຂ້າ.

### 3.2 ວະລີເຮັດໜ້າທີ່ເປັນຕົວກິລິຍາໃນປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ເປັນຕົວກິລິຍາໄດ້ ມີກິລິຍາວະລີ.

ຕົວຢ່າງ: ນັກຮຽນໂຮງຮຽນມັດທະຍົມສົມບູນເທດສະບານ**ກຳລັງພະຍາຍາມເຮັດ**ບົດຝຶກຫັດວິຊາຄະນິດສາດ.

ລົດຄັນທີຫ້າ**ພວມແລ່ນ**ສູ່ໃຈກາງນະຄອນຫຼວງວຽງຈັນ.

ລາວ**ນັ່ງເບິ່ງ**ໂທລະພາບ.

ເມື່ອຜູ້ບັນຊາການ**ສັ່ງເດີນໜ້າ** ພວກຂ້ອຍກໍຄ່ອຍໆທະຍອຍໄປຕາມໆກັນ.

ຊາວບ້ານທີ່**ທຳມາຫາກິນ**ຕາມພູດອຍສ່ວນຫຼາຍເປັນຊາວໄຮ່.

### 3.3 ວະລີເຮັດໜ້າທີ່ເປັນຕົວປະກອບປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ເປັນຕົວປະກອບປະໂຫຍກໄດ້ມີ ນາມວະລີ ແລະ ສັບພະນາມວະລີ.

ຕົວຢ່າງ: ລຸງຄໍາດີສັກ**ໄມ້ຄ້ອນເທົ້າຫວາຍ.**

ເອື້ອຍຂ້ອຍສອນຢູ່**ໂຮງຮຽນມັດທະຍົມຕອນປາຍ.**

ການສຶກສາເປັນບໍ່ເກີດແຫ່ງ**ຄວາມສະຫຼາດສ່ອງໃສ.**

ຂ້າພະເຈົ້າຂໍຂອບໃຈ**ທ່ານທັງຫຼາຍ.**

ພວກເຮົາຄວນເຮັດຄື**ພວກເຂົາເຫຼົ່ານັ້ນ.**

### 3.4 ວະລີເຮັດໜ້າທີ່ເປັນຄໍາຂະຫຍາຍຄວາມໃນປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ເປັນຄໍາຂະຫຍາຍໄດ້ ມີວິເສດວະລີ ແລະ ບຸບພະບົດວະລີ.

ຕົວຢ່າງ: ນັກຮຽນ**ດີເດັ່ນຮອບດ້ານ**ຂອງໂຮງຮຽນເຮັດວຽກດ້ວຍນໍ້າໃຈທີ່ແທ້ຈິງ.

ເພິ່ນໄດ້ປູກດອກໄມ້**ຫຼາຍຊະນິດ**ຢູ່ໃຈກາງເມືອງ.

ສຽງຟ້າຜ່າດັງ**ສະໜັ່ນຫວັ່ນໄຫວ.**

ຂ້ອຍເຫັນງູໂຕ**ຍາວຄາດລາດ.**

ພວກເຮົາທັງໝົດ**ລ້ວນແຕ່**ເປັນຄົນລາວ.

ເຂົານັ່ງ**ຢູ່ໃນຫ້ອງຮັບແຂກ.**

### 3.5 ວະລີເຮັດໜ້າທີ່ເຊື່ອມຕໍ່ປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ເຊື່ອມຕໍ່ປະໂຫຍກໄດ້ ມີສັນທານວະລີ ແລະ ບຸບພະບົດວະລີ.

ຕົວຢ່າງ: **ເຖິງຢ່າງໃດກໍແລ້ວແຕ່**, ເພິ່ນກໍຍັງສືບຕໍ່ສ້າງສະໜາມກິລາທີ່ໃຫຍ່ໂຕມະໂຫຖານ.

**ເຖິງວ່າ**ເຈົ້າຈະນຸ່ງເສື້ອໜາ ເຈົ້າ**ກໍ**ຍັງບໍ່ອຸ່ນ.

ຂ້ອຍຈະໄປຢາມເພື່ອນ **ຖ້າຫາກວ່າ**ຝົນບໍ່ຕົກ.

ຂ້ອຍບອກແລ້ວ **ສຸດແຕ່**ລາວບໍ່ຟັງ.

**ຍ້ອນວ່າ**ມີຄົນໄປຕັດໄມ້ທໍາລາຍປ່າ **ເພາະສະນັ້ນ** ນໍ້າຈຶ່ງຖ້ວມ.

ຄູອະທິບາຍບົດຮຽນ **ຈົນກວ່າ**ນັກຮຽນຈະເຂົ້າໃຈໝົດທຸກຄົນ.

ລາວຫຼິ້ນກິລາ**ຈົນກະທັ້ງ**ລືມກິນເຂົ້າ.

### 3.6 ເຮັດໜ້າທີ່ນຳໜ້າ ຫຼື ມ້ວນທ້າຍປະໂຫຍກ

ວະລີທີ່ສາມາດເຮັດໜ້າທີ່ນຳໜ້າ ຫຼື ມ້ວນທ້າຍປະໂຫຍກໄດ້ ມີອຸທານວະລີ.

ຕົວຢ່າງ: **ຕາຍແລ້ວ!** ຂ້ອຍລືມໃສ່ກະແຈລົດ.

**ພຸດໂທເອີຍ!** ຊີວິດເຂົາບໍ່ໜ້າຈະປະສົບຄວາມຫຍຸ້ງຍາກປານນີ້.

**ຟ້າເອີຍ!** ເປັນຫຍັງເຮັດແນວນັ້ນ.

ເປັນໄປບໍ່ໄດ້ດອກ **ເຈົ້າເອີຍ!**



# II. ປະໂຫຍກ

## 1. ຄວາມໝາຍຂອງປະໂຫຍກ

ປະໂຫຍກແມ່ນຄຳ ຫຼື ວະລີທີ່ນຳມາຮຽງກັນ ແລ້ວມີເນື້ອໃນໃຈຄວາມຄົບຖ້ວນສົມບູນ ເຮັດໃຫ້ຮູ້ວ່າ ໃຜເຮັດຫຍັງ, ໃຜມີອາການແນວໃດ, ສິ່ງໃດເປັນແນວໃດ ເປັນຕົ້ນ. ໃນປະໂຫຍກໜຶ່ງໆ ຕ້ອງມີຕົວຕັ້ງ ແລະ ຕົວກິລິຍາ ຫຼື ຕົວຕັ້ງ, ຕົວກິລິຍາ ແລະ ຕົວປະກອບເປັນສຳຄັນ.

ຕົວຢ່າງ: ນົກບິນ.

ນົກບິນໄປເທິງຕົ້ນໄມ້.

ງົວກິນຫຍ້າ.

ງົວກິນຫຍ້າ ແລະ ກິນນ້ຳ.

ງົວນ້ອຍທີ່ເກີດປີກາຍນີ້ກຳລັງກິນຫຍ້າ, ແຕ່ແມ່ຂອງມັນກຳລັງກິນນ້ຳ.

ງົວນ້ອຍທີ່ກຳລັງກິນຫຍ້າຢູ່ທົ່ງນາແລ່ນໄປຫາແມ່ຂອງມັນຢ່າງໄວວາ.

## 2. ພາກສ່ວນຕ່າງໆຂອງປະໂຫຍກ

ພາກສ່ວນປະກອບຂອງປະໂຫຍກ ສາມາດຈັດເປັນ 2 ແບບ ຄື: ແບບລວມ ແລະ ແບບຍ່ອຍ. ແບບລວມຈະແບ່ງສ່ວນປະກອບຂອງປະໂຫຍກອອກເປັນ 2 ພາກ ຄື: ພາກຕົວຕັ້ງ (ປະທານ) ແລະ ພາກຕົວສະແດງ. ສ່ວນແບບຍ່ອຍຈະແບ່ງສ່ວນປະກອບຂອງປະໂຫຍກເປັນຫຼາຍພາກສ່ວນຍ່ອຍ ຄື: ຕົວຕັ້ງ, ຕົວກິລິຍາ ແລະ ຕົວປະກອບ. ນອກຈາກນັ້ນຍັງມີຄຳຂະຫຍາຍ ແລະ ຄຳເຊື່ອມຕໍ່ຕື່ມອີກ.

### 2.1 ພາກຕົວຕັ້ງ ແລະ ພາກສະແດງ

ປະໂຫຍກທຸກຊະນິດປະກອບມີ 2 ພາກ ຄື: ພາກຕົວຕັ້ງ (ພາກປະທານ) ແລະ ພາກສະແດງ.

**ພາກຕົວຕັ້ງ**ແມ່ນສ່ວນທີ່ເປັນຕົວຕັ້ງ (ຜູ້ກະທຳ) ຂອງປະໂຫຍກ ຊຶ່ງປະກອບດ້ວຍຕົວຕັ້ງ ແລະ ຄຳຂະຫຍາຍຕົວຕັ້ງ.

**ພາກສະແດງ**ແມ່ນສ່ວນທີ່ສະແດງອາການ ຫຼື ຄວາມເປັນໄປ (ການກະທຳ) ຂອງພາກຕົວຕັ້ງ ຊຶ່ງປະກອບດ້ວຍສ່ວນທີ່ເປັນຕົວກິລິຍາ, ຄຳຂະຫຍາຍກິລິຍາ, ຕົວປະກອບ ແລະ ຄຳຂະຫຍາຍຕົວປະກອບ.

**ຕົວຢ່າງໂຄງສ້າງປະໂຫຍກ**

| ພາກຕົວຕັ້ງ (ປະທານ) | | ພາກສະແດງ | | | |
|---|---|---|---|---|---|
| ຕົວຕັ້ງ | ຄຳຂະຫຍາຍ | ຕົວກິລິຍາ | ຄຳຂະຫຍາຍ | ຕົວປະກອບ | ຄຳຂະຫຍາຍ |
| ກົບ | ນ້ອຍ | ຕົກ | ລົງ | ນ້ຳສ້າງ | ເລິກ |
| ຈອກແກ້ວ | ຂອງນ້າຄຳ | ແຕກ | - | - | - |
| ຂ້ອຍ | - | ຈະໄປ | - | ຫຼວງນ້ຳທາ | - |
| ລາວ | - | ຮຽນ | - | ໜັງສື | ເກັ່ງຫຼາຍ |

## 2.2 ພາກສ່ວນຫຼັກ ແລະ ພາກສ່ວນຂະຫຍາຍ

ໃນໂຄງສ້າງຂອງປະໂຫຍກຈະມີຕົວຕັ້ງ ແລະ ຕົວກິລິຍາປະກອບກັນ ຫຼື ຕົວຕັ້ງ, ຕົວກິລິຍາ ແລະ ຕົວປະກອບ ເປັນສ່ວນສຳຄັນພື້ນຖານ. ນອກຈາກນັ້ນ, ໃນປະໂຫຍກ ຍັງມີຄຳຂະຫຍາຍຕົວຕັ້ງ, ຂະຫຍາຍຕົວກິລິຍາ ແລະ ຂະຫຍາຍຕົວປະກອບ. ໃນປະໂຫຍກປະສົມ ຍັງມີຄຳເຊື່ອມຕໍ່ ທີ່ເປັນຄຳສັນທານ ຫຼື ຄຳບຸບພະບົດຕື່ມອີກ.

### 1) ພາກສ່ວນຫຼັກຂອງປະໂຫຍກ

ພາກສ່ວນຫຼັກຂອງປະໂຫຍກປະກອບດ້ວຍຕົວຕັ້ງ (ປະທານ), ຕົວກິລິຍາ ແລະ ຕົວປະກອບ (ກຳ)ໃນປະໂຫຍກ.

**ຕົວຕັ້ງ** ແມ່ນພາກສ່ວນໜຶ່ງຂອງປະໂຫຍກ ຊຶ່ງຖືກນຳເອົາມາເວົ້າຂຶ້ນກ່ອນ. ຄຳທີ່ສາມາດເປັນຕົວຕັ້ງຂອງປະໂຫຍກໄດ້ ມີຄຳນາມ, ຄຳສັບພະນາມ, ຄຳກິລິຍາ ຫຼື ຄຳວິເສດທີ່ແທນຄຳນາມ. ຕົວຕັ້ງຂອງປະໂຫຍກບາງເທື່ອເປັນຄຳ, ບາງເທື່ອເປັນວະລີ ແລະ ບາງເທື່ອກໍເປັນປະໂຫຍກ.

ຕົວຢ່າງ: **ຝົນ**ຕົກ. *(ຕົວຕັ້ງເປັນຄຳ)*

**ເຈົ້າ**ເວົ້າໄວ. *(ຕົວຕັ້ງເປັນຄຳ)*

**ລົດຈັກສີແດງ**ແມ່ນຂອງຂ້ອຍ. *(ຕົວຕັ້ງເປັນວະລີ)*

**ພວກທ່ານທັງຫຼາຍ**ຢ່າໄດ້ປະໝາດ. *(ຕົວຕັ້ງເປັນວະລີ)*

**ຮຽນເວົ້າ**ໄດ້ໄວກວ່າຮຽນຂຽນ. *(ຕົວຕັ້ງເປັນວະລີ)*

**ໄວປາກ**ເສຍສິນ, **ໄວຕີນ**ຕົກກົກໄມ້. *(ຕົວຕັ້ງເປັນວະລີ)*

**ຂ້ອຍຂັບລົດ**ໄປຕະຫຼາດ. *(ຕົວຕັ້ງເປັນປະໂຫຍກ)*

**ຕົວກິລິຍາ** ແມ່ນພາກສ່ວນໜຶ່ງຂອງປະໂຫຍກ ຊຶ່ງມີໜ້າທີ່ສະແດງ ຫຼື ຊີ້ບອກອາການຂອງຕົວຕັ້ງ. ຕົວກິລິຍາສ່ວນຫຼາຍເປັນຄໍາ. ນອກນັ້ນ ກໍມີວະລີຕື່ມອີກ.

ຕົວຢ່າງ: ລາວ**ຫຼິ້ນ**ກິລາ.

ຂ້ອຍ**ແກ້**ບົດຝຶກຫັດ.

ເຈົ້າ**ຕ້ອງມາ**ໃຫ້ທັນເວລາ

ມື້ອື່ນ ຂ້ອຍ**ຈະໄປ**ໂຮງຮຽນແຕ່ເຊົ້າ.

**ຕົວປະກອບ** ແມ່ນພາກສ່ວນໜຶ່ງຂອງປະໂຫຍກ ຊຶ່ງມີໜ້າທີ່ປະກອບເຂົ້າທາງຫຼັງຂອງຕົວກິລິຍາທີ່ເປັນຄໍາສະກໍາກິລິຍາ ເພື່ອຊ່ວຍເຮັດໃຫ້ເນື້ອໃນຂອງປະໂຫຍກມີຄວາມສົມບູນ, ຈະແຈ້ງ ແລະ ຄົບຖ້ວນ. ຄໍາທີ່ເປັນຕົວປະກອບໄດ້ມີຄໍານາມ, ຄໍາສັບພະນາມ, ຄໍາກິລິຍາ ຫຼື ຄໍາວິເສດທີ່ເຮັດໜ້າທີ່ແທນຄໍານາມ ຫຼື ຄໍາສັບພະນາມ. ຕົວປະກອບຂອງປະໂຫຍກບາງເທື່ອເປັນຄໍາ, ບາງເທື່ອເປັນວະລີ ແລະ ບາງເທື່ອກໍເປັນປະໂຫຍກ.

ຕົວຢ່າງ: ນັກຮຽນຂຽນ**ໜັງສື**.

ເພິ່ນມາຫາ**ເຈົ້າ**.

ລາວມັກ**ຟ້ອນ**.

ຂ້ອຍຢາກ**ໄປຫຼິ້ນ**.

ເຈົ້າມາ**ຊ້າ**.

ເຂົາເຮັດ**ງາມອີຫຼີ**.

ລາວເຫັນ**ນົກຍາງກິນປາ**.

## 2) ພາກສ່ວນຄໍາຂະຫຍາຍ

ຄໍາຂະຫຍາຍແມ່ນຄໍາຈໍາພວກໜຶ່ງ ທີ່ໃຊ້ເພື່ອຂະຫຍາຍໃຫ້ຕົວໃດໜຶ່ງທີ່ເປັນພາກສ່ວນຫຼັກຂອງປະໂຫຍກໃຫ້ແຈ້ງອອກຕື່ມ ຕາມຄວາມເໝາະສົມຂອງແຕ່ລະປະໂຫຍກ ເຊັ່ນ: ຂະຫຍາຍຕົວຕັ້ງ, ຂະຫຍາຍຕົວກິລິຍາ ຫຼື ຂະຫຍາຍຕົວປະກອບ.

ຕົວຢ່າງ: ກົບ**ນ້ອຍ**ຕົກນໍ້າສ້າງ. *(ຂະຫຍາຍຕົວຕັ້ງ)*

ກົບນ້ອຍຕົກ**ລົງ**ນໍ້າສ້າງ. *(ຂະຫຍາຍຕົວກິລິຍາ)*

ກົບນ້ອຍຕົກລົງນໍ້າສ້າງ**ເລິກ**. *(ຂະຫຍາຍຕົວປະກອບ)*

## 3. ລັກສະນະຂອງປະໂຫຍກ

ຖ້າພິຈາລະນາຕາມລັກສະນະຂອງປະໂຫຍກ ຈາກສ່ວນປະກອບທີ່ເປັນພາກສ່ວນຫຼັກຂອງປະໂຫຍກ ກໍຈະແບ່ງໄດ້ເປັນ 3 ປະເພດ ຄື: ປະໂຫຍກ 2 ພາກສ່ວນ, ປະໂຫຍກ 3 ພາກສ່ວນ ແລະ ປະໂຫຍກພິເສດ.

### 3.1 ປະໂຫຍກ 2 ພາກສ່ວນ

ປະໂຫຍກ 2 ພາກສ່ວນ ແມ່ນປະໂຫຍກທີ່ປະກອບດ້ວຍຕົວຕັ້ງ ແລະ ຕົວກິລິຍາທີ່ເປັນຄຳອະກຳກິລິຍາຢູ່ນຳກັນ. ປະໂຫຍກປະເພດນີ້ຍັງເອີ້ນວ່າ "ປະໂຫຍກກຸ້ມຕົວ" ເພາະບໍ່ຈຳເປັນຕ້ອງມີຕົວປະກອບຕື່ມມັນກໍໄດ້ຄວາມໝາຍຄົບຖ້ວນແລ້ວ.

ຕົວຢ່າງ: ຝົນ**ຕົກ.**

ນົກເຂົາ**ຂັນ.**

ເດັກນ້ອຍ**ໄຫ້.**

ງ່າໄມ້**ຫັກ.**

ແຕ່ບາງເທື່ອ ປະໂຫຍກປະເພດນີ້ ກໍຍັງມີຄຳຂະຫຍາຍ ຊຶ່ງເປັນຄຳວິເສດມາຊ່ວຍຂະຫຍາຍຄວາມໝາຍໃຫ້ແຈ້ງຂຶ້ນອີກກໍໄດ້.

ຕົວຢ່າງ: ຝົນຕົກ**ແຮງ.**

ນົກເຂົາຂັນ**ມ່ວນ.**

ເດັກນ້ອຍໄຫ້**ດັງ.**

ຄວາຍ**ນ້ອຍ**ແລ່ນ**ໄວ.**

ງ່າໄມ້**ໂດກ**ຫັກ**ລົງ.**

### 3.2 ປະໂຫຍກ 3 ພາກສ່ວນ

ປະໂຫຍກ 3 ພາກສ່ວນ ແມ່ນປະໂຫຍກທີ່ປະກອບດ້ວຍຕົວຕັ້ງ, ຕົວກິລິຍາທີ່ເປັນຄຳສະກຳກິລິຍາ ແລະ ຕົວປະກອບ. ປະໂຫຍກປະເພດນີ້ ຍັງເອີ້ນວ່າ "ປະໂຫຍກບໍ່ກຸ້ມຕົວ" ເພາະຖ້າມີແຕ່ຕົວຕັ້ງ ແລະ ຕົວກິລິຍາທີ່ເປັນຄຳສະກຳກິລິຍາເທົ່ານັ້ນຍັງບໍ່ທັນມີໃຈຄວາມຄົບຖ້ວນ ຈຶ່ງຕ້ອງມີຕົວປະກອບຕື່ມ. ເມື່ອຄົບທັງ 3 ພາກສ່ວນຈຶ່ງມີຄວາມໝາຍຄົບຖ້ວນສົມບູນໄດ້.

ຕົວຢ່າງ: ຂ້ອຍ**ໄປ**ຕະຫຼາດ.

ລາວ**ກິນ**ເຂົ້າ.

ເຂົາເຈົ້າ**ອ່ານ**ໜັງສືພິມ.

ແຕ່ບາງເທື່ອ ປະໂຫຍກປະເພດນີ້ ກໍຍັງມີຄໍາຂະຫຍາຍ ຊຶ່ງເປັນຄໍາ ຫຼື ວະລີ ມາຊ່ວຍຂະຫຍາຍຄວາມໝາຍຂອງຕົວຕັ້ງ, ຕົວກິລິຍາ ແລະ ຕົວປະກອບໃຫ້ແຈ້ງຂຶ້ນຕື່ມອີກ.

ຕົວຢ່າງ: ຂ້ອຍ**ຈະ**ໄປຕະຫຼາດ.

ລາວຢາກກິນເຂົ້າປຽກ**ອຸ່ນໆ**.

ໄກ່ແມ່**ລາຍ**ລ້ຽງລູກ**ນ້ອຍ**.

## 3.3 ປະໂຫຍກພິເສດ

ໃນການໃຊ້ພາສາລາວ, ຍັງມີປະໂຫຍກປະເພດໜຶ່ງຊຶ່ງນໍາໃຊ້ໃນພາສາເວົ້າ ຫຼື "ປະໂຫຍກຄໍາເວົ້າ" ແລະ ໃຊ້ໃນບົດສົນທະນາໃນບໍລິບົດ ຫຼື ສະຖານະການໃດໜຶ່ງ ນັ້ນແມ່ນ **ປະໂຫຍກພິເສດ.** ປະໂຫຍກພິເສດສາມາດຈໍາແນກອອກເປັນ 2 ລັກສະນະ ປະໂຫຍກພິເສດແບບຄໍາສັ່ງ, ອຸທານ ແລະ ປະໂຫຍກຄໍາຕອບສັ້ນ.

**ປະໂຫຍກພິເສດແບບຄໍາສັ່ງ, ອຸທານ** ແມ່ນປະໂຫຍກທີ່ມີໂຄງສ້າງປະໂຫຍກສະເພາະ ຊຶ່ງມີແຕ່ຕົວກິລິຍາ, ບໍ່ມີຕົວຕັ້ງ ແລະ ບໍ່ມີຕົວປະກອບ; ມີທໍານອງສຽງພິເສດ ແລະ ມີສາຍສໍາພັນກັບປະໂຫຍກອ້ອມແອ້ມ ຫຼື ບໍລິບົດຂອງການເວົ້າ.

ຕົວຢ່າງ: ຄືນນັ້ນ, **ຝົນແສນຝົນ.**

**ແດດພິລຶກ.** ພວກເຮົາພັກຜ່ອນກ່ອນ.

ລາວຈັບນັ້ນ, ເຄາະນີ້ຢູ່ບໍ່ຢ່າບໍ່ເຊົາ. **ປ້ອກໆແປັກໆ.**

**ໂອຍ!** ສະຫາຍທັງຫຼາຍຊ່ວຍເຮົາແດ່.

ບາງເທື່ອ ປະໂຫຍກພິເສດກໍມີລັກສະນະເອກະລາດ, ບໍ່ສໍາພັນກັບປະໂຫຍກໜ້າປະໂຫຍກຫຼັງ.

ຕົວຢ່າງ: ຍົກ!

ໄປ!

ກິນເທີ!

ຫຼາຍແທ້!

ສະອອນ!

**ປະໂຫຍກຄໍາຕອບສັ້ນ** ແມ່ນການກ່າວເປັນຄໍາ ຫຼື ວະລີໃນເວລາຕອບຄໍາຖາມສົນທະນາກັນໂດຍ**ປະ**ພາກສ່ວນໃດໜຶ່ງຂອງປະໂຫຍກ. ເຖິງວ່າພາກສ່ວນປະກອບຂອງປະໂຫຍກບໍ່ຄົບຖ້ວນ ແຕ່ກໍເປັນທີ່ເຂົ້າໃຈໄດ້ ເພາະຢູ່ໃນສະຖານະການທີ່ຄູ່ສົນທະນາກໍາລັງກ່າວເຖິງ.

ຕົວຢ່າງ:

- ເຈົ້າຊິໄປໃສ?
- (...) ໄປຕະຫຼາດ. *(ບໍ່ມີພາກຕົວຕັ້ງ)*
- ໃຜເຮັດວຽກນີ້?
- ຂ້ອຍ (...). *(ບໍ່ມີພາກສະແດງ)*

## 4. ຊະນິດຂອງປະໂຫຍກ

ປະໂຫຍກສາມາດແບ່ງອອກເປັນຫຼາຍຊະນິດຕາມຈຸດປະສົງ, ໂຄງສ້າງ ແລະ ເນື້ອໃນຂອງປະໂຫຍກ ເຊັ່ນ: ແບ່ງຊະນິດປະໂຫຍກ ຕາມຈຸດປະສົງຂອງການສື່ສານ, ຕາມໜ້າທີ່ຂອງຕົວຕັ້ງໃນປະໂຫຍກ ແລະ ແບ່ງຊະນິດອີງຕາມເນື້ອໃນໃຈຄວາມຂອງປະໂຫຍກດັ່ງມີລາຍລະອຽດຕໍ່ໄປນີ້:

### 4.1 ການແບ່ງຊະນິດປະໂຫຍກອີງຕາມຈຸດປະສົງຂອງການສື່ສານ

ຖ້າອີງຕາມຈຸດປະສົງການຂອງຜູ້ສື່ສານ, ປະໂຫຍກສາມາດແບ່ງອອກເປັນຫຼາຍຊະນິດ ເຊັ່ນ: ປະໂຫຍກບອກເລົ່າ, ປະໂຫຍກປະຕິເສດ, ປະໂຫຍກຄຳຖາມ, ປະໂຫຍກຄຳສັ່ງ ແລະ ປະໂຫຍກອຸທານ ເປັນຕົ້ນ.

#### 1) ປະໂຫຍກບອກເລົ່າ

ປະໂຫຍກບອກເລົ່າ ແມ່ນປະໂຫຍກທີ່ມີໃຈຄວາມ ເພື່ອບອກໃຫ້ຊາບວ່າໃຜ, ເຮັດຫຍັງ, ຢູ່ໃສ, ເຮັດແນວໃດ; ເປັນການບອກໃຫ້ຮູ້ເລື່ອງຕ່າງໆ.

ຕົວຢ່າງ: ຂ້ອຍເປັນນັກສຶກສາມະຫາວິທະຍາໄລ.

ຄອບຄົວຂອງຂ້ອຍມີລົດ 2 ຄັນ.

#### 2) ປະໂຫຍກປະຕິເສດ

ປະໂຫຍກປະຕິເສດແມ່ນປະໂຫຍກທີ່ມີໃຈຄວາມບໍ່ຕອບຮັບ, ມີເນື້ອຄວາມກົງກັນຂ້າມກັບ ປະໂຫຍກບອກເລົ່າ, ມັກໃຊ້ຄຳວ່າ: ບໍ່, ບໍ່ໄດ້, ບໍ່ແມ່ນປະກອບ.

ຕົວຢ່າງ: ຂ້ອຍບໍ່ໄດ້ເຈັບແຂ້ວ.

ລົດຄັນນັ້ນບໍ່ແມ່ນຂອງຂ້ອຍ.

#### 3) ປະໂຫຍກຄຳຖາມ

ປະໂຫຍກຄຳຖາມແມ່ນປະໂຫຍກທີ່ມີໃຈຄວາມເປັນຄຳຖາມ ເພື່ອຕ້ອງການ ຄຳຕອບ. ຄຳທີ່ເປັນຄຳຖາມຈະຢູ່ຕົ້ນປະໂຫຍກ ຫຼື ຢູ່ທ້າຍປະໂຫຍກກໍໄດ້, ມັກມີຄຳ

ສະແດງຄຳຖາມ: ໃຜ, ແມ່ນຫຍັງ, ຢູ່ໃສ, ເມື່ອໃດ, ເປັນຫຍັງ, ຍ້ອນຫຍັງ, ໃດ, ບໍ, ບໍ່, ນໍ, ຫວະ... ແລະ ມີໝາຍຖາມ (?) ປະກອບ.

ຕົວຢ່າງ: ເຈົ້າຊິໄປໂຮງຮຽນບໍ່?

ເຈົ້າບໍ່ໄປນຳຂ້ອຍບໍ?

### 4) ປະໂຫຍກຄຳສັ່ງ

ປະໂຫຍກຄຳສັ່ງແມ່ນປະໂຫຍກທີ່ບອກໃຫ້ບຸກຄົນອື່ນເຮັດ ຫຼື ບໍ່ໃຫ້ເຮັດສິ່ງໃດສິ່ງໜຶ່ງ, ເປັນຄຳແນະນຳວິທີເຮັດອັນໃດອັນໜຶ່ງ. ໃນຂໍ້ຄວາມແນະນຳວິທີການເຮັດອັນໃດອັນໜຶ່ງ ປົກກະຕິຈະຂຶ້ນຕົ້ນປະໂຫຍກດ້ວຍຄຳກິລິຍາ; ສ່ວນຂໍ້ຄວາມທີ່ເປັນຄຳສັ່ງສ່ວນຫຼາຍຈະມີຄຳ ຈົ່ງ, ໃຫ້, ຫ້າມ, ຢ່າ... ຢູ່ໜ້າປະໂຫຍກ.

ຕົວຢ່າງ: ລ້າງມືດ້ວຍສະບູ່ເດີ.

ຫ້າມຢຽບເດີ່ນຫຍ້າ.

ຈົ່ງອ່ານ ແລະ ຂຽນຂໍ້ຄວາມລຸ່ມນີ້.

### 5) ປະໂຫຍກອຸທານ

ປະໂຫຍກອຸທານແມ່ນປະໂຫຍກສະແດງຄວາມແປກໃຈ, ປະທັບໃຈ, ສະອອນໃຈ, ຊື່ນຊົມ, ສັນລະເສີນ, ຕໍ່າຄ້ອຍນ້ອຍໃຈ, ຕຳນິຕິຕຽນ ເປັນຕົ້ນ ຊຶ່ງເວລາເວົ້າແມ່ນເປັ່ງສຽງອຸທານອອກມາ, ສ່ວນເວລາຂຽນໃຫ້ໃສ່ເຄື່ອງໝາຍທ້ວງ (!) ໃສ່ທ້າຍປະໂຫຍກອຸທານ.

ຕົວຢ່າງ: ໂອຍ, ຈັ່ງແມ່ນມ່ວນ!

ລະວັງ!

ຊົມເຊີຍຢ່າງສຸດອົກສຸດໃຈ!

ອຸ໋ຍ, ຈັ່ງແມ່ນເປັນຕາໜ່າຍ!

## 4.2 ການແບ່ງຊະນິດປະໂຫຍກອີງຕາມໜ້າທີ່ຂອງຕົວຕັ້ງ

ຖ້າອີງຕາມໜ້າທີ່ຂອງຕົວຕັ້ງ ຫຼື ຄຳຂຶ້ນຕົ້ນໃນປະໂຫຍກ ຈະແບ່ງປະໂຫຍກອອກເປັນ 4 ຊະນິດ ຄື: ປະໂຫຍກກິງ, ປະໂຫຍກອ້ອມ, ປະໂຫຍກຮັບ ແລະ ປະໂຫຍກກິລິຍາ.

### 1) ປະໂຫຍກກິງ

ປະໂຫຍກກິງແມ່ນປະໂຫຍກທີ່ຕົວຕັ້ງຢູ່ຕົ້ນປະໂຫຍກເຮັດໜ້າທີ່ເປັນຜູ້ເຮັດເອງ. ປະໂຫຍກຊະນິດນີ້ເປັນປະໂຫຍກທີ່ໃຊ້ກັນທົ່ວໄປໃນພາສາລາວ.

ຕົວຢ່າງ: ຂ້ອຍໄປໂຮງຮຽນ.

ຄວາຍຊົນກັນ.

ນົກກິນໝາກໄມ້.

### 2) ປະໂຫຍກອ້ອມ

ປະໂຫຍກອ້ອມແມ່ນປະໂຫຍກ ຊຶ່ງຕົວຕັ້ງບໍ່ເຮັດເອງ, ແຕ່ໃຫ້ຜູ້ອື່ນທີ່ເປັນຕົວປະກອບເຮັດ. ສ່ວນຫຼາຍຈະມີຄຳ **ໃຫ້** ປະກອບນຳດ້ວຍ.

ຕົວຢ່າງ: ອ້າຍ**ໃຫ້**ນ້ອງໄຖນາ.

ຄູ**ໃຫ້**ນັກຮຽນຂຽນໜັງສື.

ແມ່**ໃຫ້**ລູກເຝົ້າເຮືອນ.

### 3) ປະໂຫຍກຮັບ

ປະໂຫຍກຮັບແມ່ນປະໂຫຍກຊຶ່ງຕົວຕັ້ງເປັນຜູ້ເຮັດຕາມຄຳສັ່ງຂອງຜູ້ອື່ນທີ່ເປັນຕົວປະກອບ. ສ່ວນຫຼາຍຈະມີຄຳ **ຖືກ** ປະກອບນຳດ້ວຍ.

ຕົວຢ່າງ: ນ້ອງ**ຖືກ**ອ້າຍໃຫ້ໄຖນາ.

ນັກຮຽນ**ຖືກ**ຄູໃຫ້ຂຽນໜັງສື.

ລູກ**ຖືກ**ແມ່ໃຫ້ເຝົ້າເຮືອນ.

### 4) ປະໂຫຍກກິລິຍາ

ປະໂຫຍກກິລິຍາແມ່ນປະໂຫຍກທີ່ໃຊ້ຄຳກິລິຍາເວົ້າຂຶ້ນກ່ອນແທນຕົວຕັ້ງ ເພື່ອເນັ້ນຄຳກິລິຍານັ້ນໃຫ້ເດັ່ນ. ສ່ວນຫຼາຍຈະຂຶ້ນຕົ້ນປະໂຫຍກດ້ວຍຄຳ **ເກີດ, ມີ, ເປັນ, ປາກົດ.**

ຕົວຢ່າງ: **ເກີດ**ໄພນ້ຳຖ້ວມຂຶ້ນຢູ່ພາກໃຕ້.

**ມີ**ເງິນປາກໄດ້ ມີໄມ້ເຮັດເຮືອນງາມ.

**ເປັນ**ນາຍໃຫ້ຮັກໝູ່.

**ປາກົດ**ເຫັນນ້ຳອອກບໍ່ຢູ່ຕີນພູ.

## 4.3 ການແບ່ງຊະນິດປະໂຫຍກອີງຕາມເນື້ອໃນໃຈຄວາມ

ຖ້າອີງຕາມເນື້ອໃນໃຈຄວາມຂອງປະໂຫຍກ, ສາມາດແບ່ງປະໂຫຍກອອກເປັນ 3 ຊະນິດ ໄດ້ແກ່ປະໂຫຍກດ່ຽວ, ປະໂຫຍກປະສົມ ແລະ ປະໂຫຍກຊ້ອນ.

### 1) ປະໂຫຍກດ່ຽວ

ປະໂຫຍກດ່ຽວແມ່ນປະໂຫຍກທີ່ກ່າວເຖິງສິ່ງໃດສິ່ງໜຶ່ງພຽງສິ່ງດຽວ ແລະ ສິ່ງນັ້ນສະແດງກິລິຍາອາການ ຫຼື ຢູ່ໃນສະພາບຢ່າງໃດຢ່າງໜຶ່ງພຽງຢ່າງດຽວ. ໝາຍຄວາມວ່າ ປະໂຫຍກດ່ຽວແມ່ນປະໂຫຍກທີ່ມີໃຈຄວາມສຳຄັນພຽງໃຈຄວາມດຽວ, ຈຸດປະສົງ

ດຽວ, ມີຕົວຕັ້ງຕົວດຽວ ແລະ ມີຕົວກິລິຍາຕົວດຽວ, ຈະມີຕົວປະກອບ ມາຂະຫຍາຍ ຫຼື ບໍ່ກໍໄດ້ ຕາມຄວາມເໝາະສົມຂອງປະໂຫຍກແຕ່ລະປະເພດ.

ຕົວຢ່າງ: ຝົນຕົກ.

ນໍ້າໄຫຼ.

ຂ້ອຍໄປໂຮງຮຽນ.

ນົກກິນໝາກໄມ້.

## 2) ປະໂຫຍກປະສົມ

ປະໂຫຍກປະສົມແມ່ນປະໂຫຍກທີ່ມີປະໂຫຍກດ່ຽວ 2 ປະໂຫຍກມາລວມກັນ ໂດຍໃຊ້ຄຳສັນທານ ເພື່ອເຊື່ອມຕໍ່ ຫຼື ໃຊ້ເຄື່ອງໝາຍວັກຕອນ (ຈຸດ, ຈໍ້າຈຸດ, ຂີດຕໍ່ ຫຼື ສອງຈໍ້າ) ຂັ້ນໃຫ້ໄດ້ໃຈຄວາມຕິດຕໍ່ກັນເປັນປະໂຫຍກດຽວ, ແຕ່ມີຫຼາຍໃຈຄວາມ, ແຕ່ລະປະໂຫຍກລ້ວນແຕ່ມີຄວາມສຳຄັນເທົ່າກັນ. ປະໂຫຍກປະສົມມີ 4 ຊະນິດຍ່ອຍ ຄື: ປະໂຫຍກທີ່ມີເນື້ອຄວາມຄ້ອຍຕາມກັນ, ປະໂຫຍກທີ່ມີເນື້ອຄວາມຂັດກັນ, ປະໂຫຍກທີ່ມີເນື້ອຄວາມໃຫ້ເລືອກ ແລະ ປະໂຫຍກທີ່ມີເນື້ອຄວາມເປັນເຫດເປັນຜົນຕໍ່ກັນ.

### ❶ ປະໂຫຍກທີ່ມີເນື້ອຄວາມຄ້ອຍຕາມກັນ

ປະໂຫຍກທີ່ມີເນື້ອຄວາມຄ້ອຍຕາມກັນມັກໃຊ້ຄຳສັນທານ **ແລະ, ກັບ, ແລ້ວ** ເປັນຄຳເຊື່ອມຕໍ່. ນອກຈາກນັ້ນກໍໃຊ້ຄຳທີ່ສະແດງລຳດັບການກະທຳກ່ອນຫຼັງດ້ວຍ ເຊັ່ນ: **ພໍ...ກໍ, ແລ້ວ...ກໍ** ເປັນຕົ້ນ ເປັນຄຳເຊື່ອມຕໍ່.

ຕົວຢ່າງ: ອ້າຍມັກຫຼິ້ນກິລາເປຕັງ, ນ້ອງກໍມັກຫຼິ້ນກິລາເປຕັງຄືກັນ.

ຄູໃຫ້ນັກຮຽນອ່ານບົດຮຽນ ແລ້ວຕອບຄຳຖາມ.

### ❷ ປະໂຫຍກທີ່ມີເນື້ອຄວາມຂັດກັນ

ປະໂຫຍກທີ່ມີເນື້ອຄວາມຂັດກັນມັກໃຊ້ຄຳ **ແຕ່, ແຕ່ວ່າ** ເປັນຄຳເຊື່ອມຕໍ່.

ຕົວຢ່າງ: ລາວເຮັດວຽກຫຼາຍ, ແຕ່ໝູ່ລາວບໍ່ເຮັດຫຍັງ.

ມື້ນີ້ ຂ້ອຍຢາກໄປຕະຫຼາດ, ແຕ່ວ່າໝູ່ຂ້ອຍຢາກໄປທ່ຽວ.

### ❸ ປະໂຫຍກທີ່ມີເນື້ອຄວາມໃຫ້ເລືອກ

ປະໂຫຍກທີ່ມີເນື້ອຄວາມໃຫ້ເລືອກມັກໃຊ້ຄຳ **ຫຼື, ຫຼືບໍ່ກໍ, ບໍ່ດັ່ງນັ້ນ** ເປັນຕົ້ນ ເປັນຄຳເຊື່ອມຕໍ່.

ຕົວຢ່າງ: ເຈົ້າຈະກິນນໍ້າຊາ ຫຼື ກາເຟ.

ພວກເຮົາຄວນຂີ່ຍົນໄປ ບໍ່ດັ່ງນັ້ນ ກໍຂີ່ລົດໄຟໄປ.

### ❹ ປະໂຫຍກທີ່ມີເນື້ອຄວາມເປັນເຫດເປັນຜົນຕໍ່ກັນ

ປະໂຫຍກທີ່ມີເນື້ອຄວາມເປັນເຫດເປັນຜົນຕໍ່ກັນມັກໃຊ້ຄຳ **ຈຶ່ງ, ເພາະ, ເພາະ... ຈຶ່ງ, ເພາະສະນັ້ນ...ຈຶ່ງ, ສະນັ້ນ...ຈຶ່ງ** ເປັນຄຳເຊື່ອມຕໍ່.

ຕົວຢ່າງ: ນັກຮຽນບໍ່ຕັ້ງໃຈຮຽນ ຈຶ່ງເສັງຕົກ

ນັກຮຽນມີສຸຂະພາບແຂງແຮງ ເພາະພາກັນຫັດກາຍຍຸກາງເຊົ້າ.

### 3) ປະໂຫຍກຊ້ອນ

ປະໂຫຍກຊ້ອນແມ່ນປະໂຫຍກປະສົມຊະນິດໜຶ່ງ ທີ່ເກີດຈາກປະໂຫຍກດ່ຽວ 2 ປະໂຫຍກຊ້ອນກັນ ໂດຍທີ່ປະໂຫຍກໜຶ່ງເປັນໃຈຄວາມສຳຄັນເອີ້ນວ່າ ປະໂຫຍກຫຼັກ (ມຸກຂະຍະປະໂຫຍກ) ແລະ ອີກປະໂຫຍກໜຶ່ງເປັນປະໂຫຍກນ້ອຍ (ອະນຸປະໂຫຍກ) ທີ່ແຊກຊ້ອນຢູ່ໃນປະໂຫຍກຫຼັກ. ປະໂຫຍກນ້ອຍອາດຈະເຮັດໜ້າທີ່ເປັນຕົວຕັ້ງ, ເປັນຕົວປະກອບ ຫຼື ເປັນຄຳຂະຫຍາຍຄວາມສ່ວນໃດສ່ວນໜຶ່ງຂອງປະໂຫຍກຫຼັກກໍໄດ້.

**ຕົວຢ່າງ ໂຄງສ້າງປະໂຫຍກຊ້ອນ**

| **ປະໂຫຍກຊ້ອນ** | **ປະໂຫຍກຫຼັກ** | **ປະໂຫຍກນ້ອຍ** | **ໝາຍເຫດ** |
|---|---|---|---|
| **ລາວຂັບລົດ**ໄປຕະຫຼາດ | ລາວໄປຕະຫຼາດ | ລາວຂັບລົດ | *ເປັນຕົວຕັ້ງ* |
| ຂ້ອຍບໍ່ມັກຄົນ**ເອົາປຽບຜູ້ອື່ນ** | ຂ້ອຍບໍ່ມັກຄົນ | ຄົນເອົາປຽບຜູ້ອື່ນ | *ເປັນຄຳຂະຫຍາຍ* |
| ມື້ນີ້ ພະນັກງານບໍ່ມາເນື່ອງຈາກ**ລາວເປັນໄຂ້** | ພະນັກງານບໍ່ມາ | ລາວເປັນໄຂ້ | *ເປັນຄຳຂະຫຍາຍ* |

**ປະໂຫຍກຫຼັກ** ແມ່ນປະໂຫຍກທີ່ສຳຄັນ ຊຶ່ງຂາດບໍ່ໄດ້ ແລະ ກໍມີແຕ່ປະໂຫຍກດຽວຢູ່ໃນປະໂຫຍກຊ້ອນນີ້.

**ປະໂຫຍກນ້ອຍ** ຫຼື ປະໂຫຍກຍ່ອຍແມ່ນປະໂຫຍກທີ່ເຮັດໜ້າທີ່ປະກອບເປັນພາກສ່ວນໃດໜຶ່ງຂອງປະໂຫຍກຊ້ອນ ຫຼື ຂະຫຍາຍສ່ວນໃດສ່ວນໜຶ່ງຂອງປະໂຫຍກຫຼັກໃຫ້ໄດ້ຄວາມໝາຍຍິ່ງຂຶ້ນ.

- **ປະໂຫຍກນ້ອຍເຮັດໜ້າທີ່ເປັນຕົວຕັ້ງໃນປະໂຫຍກ** ແມ່ນປະໂຫຍກທີ່ເຮັດໜ້າທີ່ເໝືອນຄຳນາມ ຫຼື ຄຳສັບພະນາມ (ນາມານຸປະໂຫຍກ) ຊຶ່ງເຮັດໜ້າທີ່ເປັນຕົວຕັ້ງຂອງປະໂຫຍກຊ້ອນ.

ຕົວຢ່າງ: **ຄົນບໍ່ຕື່ນຕົວຊ່ວຍໝູ່ເຮັດວຽກ**ເປັນຄົນເອົາປຽບຜູ້ອື່ນ.

**ບົວເງິນຮ້ອງເພງມ່ວນ**ຖືກໃຈຜູ້ຟັງຫຼາຍ.

**ຄົນຍ່າງແຄມທາງ**ແນມເບິ່ງພວກຂ້ອຍ.

**ໝາຍເຫດ**: *ຕົວໜັງສືເປັນສີດຳເຂັ້ມໃນຕົວຢ່າງໝາຍເຖິງປະໂຫຍກນ້ອຍ.*

- **ປະໂຫຍກນ້ອຍເຮັດໜ້າທີ່ເປັນຕົວປະກອບໃນປະໂຫຍກ**

ຕົວຢ່າງ: ຂ້ອຍເຫັນ**ຕຳຫຼວດຂີ່ລົດໄລ່ຈັບໂຈນ.**

ພວກເຮົາເຫັນ**ນັກຮຽນຂຽນໜັງສື.**

ຄູມອບໝາຍບົດຝຶກຫັດ**ໃຫ້ນັກຮຽນແກ້.**

- **ປະໂຫຍກນ້ອຍເຮັດໜ້າທີ່ເປັນຄຳຂະຫຍາຍຄຳນາມ ແລະ ຄຳສັບພະນາມ** ແມ່ນປະໂຫຍກທີ່ເຮັດໜ້າທີ່ເໝືອນຄຳຄຸນນາມ ຫຼື ຄຳວິເສດ (ຄຸນານຸປະໂຫຍກ) ເພື່ອຂະຫຍາຍຄຳນາມ ຫຼື ຄຳສັບພະນາມໃນປະໂຫຍກຫຼັກ ໂດຍມີຄຳປະພັນທະສັບພະນາມ **ທີ່, ຊຶ່ງ/ເຊິ່ງ, ອັນ, ຜູ້** ເປັນຕົວເຊື່ອມ.

ຕົວຢ່າງ: ນັກຮຽນ**ທີ່ຄູມັກ**ມີການປະພຶດດີ.

ເສື້ອ**ທີ່ນາງຄຳແດງນຸ່ງຢູ່**ງາມຫຼາຍ.

ພູຜາ**ຊຶ່ງຂ້ອຍເຫັນ**ມີຕົ້ນໄມ້ຢູ່ອ້ອມຮອບ.

ນາງຄຳພອນ**ຊຶ່ງເປັນຫົວໜ້າຫ້ອງ ມ.4** ໄດ້ຮັບໃບຍ້ອງຍໍນັກຮຽນເກັ່ງ.

- **ປະໂຫຍກນ້ອຍເຮັດໜ້າທີ່ເປັນຄຳຂະຫຍາຍຄຳກິລິຍາ ແລະ ຄຳວິເສດ** ແມ່ນອະນຸປະໂຫຍກທີ່ເຮັດໜ້າທີ່ເໝືອນຄຳວິເສດ (ວິເສດສະນານຸປະໂຫຍກ) ເພື່ອຂະຫຍາຍຄຳກິລິຍາ ຫຼື ຄຳວິເສດຂອງປະໂຫຍກຫຼັກ ໂດຍມີຄຳເຊື່ອມຕໍ່ເປັນຕົວເຊື່ອມລະຫວ່າງປະໂຫຍກຫຼັກກັບປະໂຫຍກນ້ອຍ.

ຕົວຢ່າງ: ມື້ນີ້ພະນັກງານບໍ່ມາ**ເນື່ອງຈາກລາວເປັນໄຂ້.**

ລາວເຈັບຂາ**ຈົນຍ່າງບໍ່ໄດ້.**

ພໍ່ແມ່ເຮັດວຽກໜັກ**ເພື່ອຫາເງິນມາລ້ຽງລູກ.**

ນອກຈາກປະໂຫຍກ 3 ຊະນິດທີ່ກ່າວມາແລ້ວ, ຍັງມີ**ປະໂຫຍກຊັບຊ້ອນ** ຊຶ່ງແມ່ນປະໂຫຍກປະສົມທີ່ລວມເອົາຫຼາຍປະໂຫຍກເຂົ້າມາເປັນປະໂຫຍກດຽວ ແລະ ເຊື່ອມຕໍ່ດ້ວຍຄຳສັນທານ ຫຼື ຄຳບຸບພະບົດ; ເປັນປະໂຫຍກທີ່ຍາວ, ມີຫຼາຍຊະນິດປະໂຫຍກຢູ່ນຳກັນ ແລະ ມີຫຼາຍໃຈຄວາມ ພ້ອມທັງມີຄຳຂະຫຍາຍຫຼາຍ ທັງຂະຫຍາຍຕົວຕັ້ງ, ກິລິຍາ ຫຼື ຂະຫຍາຍຕົວປະກອບ ຈຶ່ງເຮັດໃຫ້ປະໂຫຍກມີຄວາມສະຫຼັບຊັບຊ້ອນ ແລະ ເຂົ້າໃຈຍາກກວ່າປະໂຫຍກທົ່ວໄປ. ປະໂຫຍກຊະນິດນີ້ມັກມີຢູ່ໃນບົດເລື່ອງ, ບົດຄວາມ, ສາລະຄະດີ, ເອກະສານທາງວິຊາການ ແລະ ເອກະສານທິດສະດີການເມືອງ ເປັນຕົ້ນ.

## III. ຫຼັກບາງປະການກ່ຽວກັບການນໍາໃຊ້ປະໂຫຍກເຂົ້າໃນການຂຽນ

### 1. ຂຽນປະໂຫຍກໃຫ້ຖືກຕ້ອງຕາມຫຼັກໄວຍາກອນພາສາລາວ

ນີ້ແມ່ນຄາດໝາຍທໍາອິດກ່ຽວກັບການແຕ່ງປະໂຫຍກ. ການຈັດລຽງຄໍາສັບເປັນປະໂຫຍກຕ້ອງໃຫ້ຖືກບ່ອນ, ແຕ່ລະປະໂຫຍກໃຫ້ມີສ່ວນປະກອບທີ່ຄົບຖ້ວນ ທັງພາກຕົວຕັ້ງ ແລະ ພາກຕົວສະແດງ ຫຼື ຕົວຕັ້ງ, ກິລິຍາ ແລະ ຕົວປະກອບ.

### 2. ຂຽນປະໂຫຍກໃຫ້ຖືກຕ້ອງກ່ຽວກັບເນື້ອໃນຄວາມໝາຍຂອງຄໍາສັບ

ໃນເວລາສ້າງປະໂຫຍກໃຫ້ເລືອກໃຊ້ຄໍາໃຫ້ເໝາະສົມກັບກາລະ, ເທສະ ແລະ ບຸກຄົນ ຫຼື ບໍລິບົດຂອງເນື້ອຄວາມທີ່ຈະສື່ສານອອກໄປ. ນອກຈາກນັ້ນ ຄວນໃຊ້ຄໍາຖືກຕາມປະເພດ ໂດຍສະເພາະແມ່ນຄໍາລັກສະນະນາມ, ຄໍາສັບພະນາມ, ຄໍາວິເສດ ເປັນຕົ້ນ ແລະ ເລືອກຄໍາທີ່ມີຄວາມໝາຍຊັດເຈນກວ່າມາໃຊ້ ລວມທັງເຊື່ອມຕໍ່ປະໂຫຍກຢ່າງມີສິລະປະ ຈຶ່ງຈະສື່ຄວາມໝາຍໄດ້ຖືກຕ້ອງ ແລະ ສອດຄ່ອງກັບໂຄງສ້າງປະໂຫຍກພາສາລາວ.

### 3. ໃສ່ເຄື່ອງໝາຍວັກຕອນໃນປະໂຫຍກໃຫ້ເໝາະສົມ

ການຍະຫວ່າງໃນປະໂຫຍກ ນັບວ່າມີຄວາມສໍາຄັນຫຼາຍ, ຖ້າຍະຫວ່າງຜິດບ່ອນກໍຈະເຮັດໃຫ້ຄວາມໝາຍຜິດພ້ຽນໄປດ້ວຍ. ການນໍາໃຊ້ເຄື່ອງໝາຍວັກຕອນ ເຊັ່ນ: ໝາຍຈຸດ, ຈໍ້າ, ຈໍ້າຈຸດ, ໝາຍຖາມ, ໝາຍທ້ວງ ເປັນຕົ້ນ ຄວນໃຫ້ມີຄວາມຖືກຕ້ອງຕາມວິທີໃຊ້ເຄື່ອງໝາຍວັກຕອນ.

ເຄື່ອງໝາຍບາງຢ່າງ ຖ້າໃຊ້ພໍປະມານ ກໍຈະເຮັດໃຫ້ບົດຂຽນມີເນື້ອໃນທີ່ຈະແຈ້ງ ແລະ ຊັດເຈນ, ແຕ່ຖ້າໃຊ້ຫຼາຍເກີນໄປ ຈະພາໃຫ້ບົດເພີ່ມຄວາມສັບສົນ ແລະ ບໍ່ສວຍງາມ. ເຄື່ອງ ໝາຍທີ່ບໍ່ຄວນໃຊ້ຢ່າງຟຸມເຟືອຍ ໄດ້ແກ່ ຂີດຕໍ່ (-), ວົງເລັບ ເປັນຕົ້ນ.

### 4. ປະໂຫຍກຕ້ອງມີຄວາມສໍາພັນກັບປະໂຫຍກອື່ນໃນບົດ

ໃນບົດຂຽນ, ປະໂຫຍກເປັນຫົວໜ່ວຍທີ່ສໍາຄັນ, ແຕ່ລະປະໂຫຍກບໍ່ອາດຈະຢູ່ຢ່າງເປັນເອກະລາດ, ແຕ່ມັນມີຄວາມສໍາພັນຢ່າງເປັນລະບົບກັບປະໂຫຍກອື່ນໆໃນບົດ ຈຶ່ງຈະເຮັດໃຫ້ບົດມີເນື້ອໃນຄວາມໝາຍທີ່ສົມບູນ.

- ຄວາມສໍາພັນດ້ານເນື້ອໃນ: ເນື້ອໃນຂອງປະໂຫຍກຕ່າງໆຕ້ອງລວມເຂົ້າຮັບໃຊ້ຫົວຂໍ້ຂອງບົດ. ແຕ່ລະປະໂຫຍກທັງຮັກສາຄວາມໝາຍ ທັງຂະຫຍາຍເນື້ອໃນຄວາມໝາຍຂອງຫົວຂໍ້ນັ້ນ. ດັ່ງນັ້ນ, ເນື້ອໃນຂອງແຕ່ລະປະໂຫຍກຕ້ອງສໍາພັນກັນຢ່າງເປັນລະບົບ ແລະ ມີຄວາມເໝາະສົມກັບປະເພດຂອງບົດ.
- ຄວາມສໍາພັນດ້ານຮູບການ: ເພື່ອສະແດງຄວາມສໍາພັນດ້ານເນື້ອໃນ, ປະໂຫຍກຕ່າງໆຈໍາເປັນຕ້ອງນໍາໃຊ້ວິທີຂຽນ, ລັກສະນະຂອງພາສາທີ່ສອດຄ່ອງກັນ.

ຕົວຢ່າງ:

*ຂ້ອຍຖາມ:*

*"ນາງມີແຕ່ຊື່ດຽວວ່າປາລີບໍ່ ຫຼື ຍັງມີຊື່ອື່ນອີກ?"*

*"ເລື່ອງນີ້ ຂ້ອຍກໍບໍ່ແຈ້ງ ທີ່ຜ່ານມາໄດ້ຍິນແຕ່ຊື່ດຽວເທົ່ານັ້ນ" ສະຫາຍໄຊຕອບ.*

*"ຊັ້ນນາງຍັງມີພໍ່ແມ່ພີ່ນ້ອງ ແລະ ບ້ານເກີດເມືອງນອນຢູ່ໃສ?"*

*ສະຫາຍໄຊຍິ້ມ ແລະ ຕອບ:*

*"ໃນຊີວະປະຫວັດນາງບອກພຽງວ່າ ມີພໍ່ລ້ຽງເປັນທະຫານລາວອິດສະຫຼະ"*

*"ແທ້ຫວາ?" ຂ້ອຍຖາມຄືນ "ຄັນຊັ້ນກໍແມ່ນນາງກາຍິງແນ່ແທ້ແລ້ວ".*

(ຄັດຈາກເລື່ອງ "ນາງກາຍິງ" ຂອງ ຈັນທີ ເດືອນສະຫວັນ)

### 5. ຄວນໃຊ້ປະໂຫຍກທີ່ສັ້ນ, ຈະແຈ້ງ ແລະ ເຂົ້າໃຈງ່າຍ

ໃນການຂຽນ, ຖ້າເຫັນວ່າປະໂຫຍກຍາວ ກໍແບ່ງອອກເປັນຫຼາຍປະໂຫຍກ ແລະ ຮຽບຮຽງໃຫ້ດີ ໂດຍຕັດຄຳທີ່ຊ້ຳຊ້ອນກັນອອກ.

ຕົວຢ່າງ ປະໂຫຍກສັ້ນ ແລະ ເຂົ້າໃຈງ່າຍ:

*ພົ້ນຈາກທົ່ງນາແລ້ວ ພວກເຮົາຕ້ອງຍ່າງຜ່ານປ່າດົງໜາ. ຜູ້ພາທາງໄດ້ສັ່ງຕໍ່ກັນມາວ່າໃຫ້ພວກເຮົາຍ່າງເປັນແຖວດຽວ, ຜູ້ຢູ່ທາງຫຼັງຕ້ອງຈັບສາຍແອວຜູ້ຢູ່ທາງໜ້າ, ຫ້າມບໍ່ໃຫ້ຜູ້ໃດບິບໄຟສາຍ ຫຼື ຕ່ອຍກັບຂີດ. ຫຼຽວເບິ່ງເທິງທ້ອງຟ້າບໍ່ມີດາວຈັກແສງ. ທາງກວ່ງນອັນພວກເຮົາຍ່າງໄປນີ້ທັງພົງທັງຮີກ. ຝົນຕົກລົງເປັນລິນດຽວປານຖອກບັ້ງນ້ຳ. ເຄື່ອງນຸ່ງປຽກອີນຊ້ຳຕື່ມໜັກ. ທາງພົງຢູ່ແລ້ວຊ້ຳຕື່ມຫຼົ່ມ ແລະ ມື່ນ. ບາງທີຜູ້ພາທາງສັ່ງມາວ່າ ໃຫ້ຍ້າຍຂ້າມໄປຍ່າງທາງຂວາ, ບຶດໜຶ່ງຊ້ຳພັດບອກມາວ່າ ໃຫ້ຍ້າຍໄປຍ່າງທາງຊ້າຍ. ຢູ່ລະຫວ່າງສອງຄອງທາງຫຍ້າຊ້ຳພັດປົ່ງພຽງແອວ.*

(ຄັດຈາກປຶ້ມ "ຄວາມຊົງຈຳ" ຂອງທ່ານພູມີ ວົງວິຈິດ)



# ພາກທີ IV

# ຫຼັກການ ແລະ ວິທີແຕ່ງກາບກອນ

ກາບກອນແມ່ນພາກສ່ວນໜຶ່ງໃນໄວຍາກອນລາວ ອັນປະກອບດ້ວຍ 4 ພາກ ໄດ້ແກ່ ອັກຂະຫຼະວິທີ, ວະຈີວິພາກ, ວາກະຍະສຳພັນ ແລະ ສັນທະກະວີ.

ກາບກອນ ແມ່ນຄຳປະພັນທີ່ຂຽນຂຶ້ນເປັນຄຳກອນໂດຍມີຫຼັກການສຳຜັດ, ມີການເກາະກ່າຍກັນ, ມີການເນື່ອງສຽງກັນ ແລະ ທີ່ສຳຄັນແມ່ນມີຫຼັກການບັງຄັບໃນການໃຊ້ຄຳເອກ, ຄຳໂທ.

ປະເພດຂອງກາບກອນປະກອບມີ: ກາບ, ກອນ, ໂຄງ, ຮ່າຍ ແລະ ສານ.

## I. ວ່າດ້ວຍກາບ

### 1. ຄວາມໝາຍຂອງກາບ

ກາບແມ່ນກະວີປະເພດໜຶ່ງທີ່ມີຄຳສຳຜັດສະຫຼະຊ້ອນຕໍ່ກັນໄປຈົນສຸດບົດ. ຄຳວ່າ “ກາບ” ໄດ້ເຄົ້າມາຈາກຄຳສັນສະກິດຊຶ່ງໝາຍເຖິງ ຄຳຂອງກະວີ. ກາບໃຊ້ສຳລັບອ່ານ ຫຼື ເຊີ້ງໃນບຸນປະເພນີຕ່າງໆ ເຊັ່ນ: ບຸນຊ່ວງເຮືອ, ບຸນບັ້ງໄຟ, ບຸນໂຮງຮຽນ, ບຸນຂຶ້ນເຮືອນໃໝ່ ຫຼື ເຊີ້ງໃນງານອື່ນໆ.

ກາບທີ່ມີຊື່ສຽງຂອງລາວ ໄດ້ແກ່ ກາບເມືອງພວນ, ກາບປູ່ສອນຫຼານ, ກາບຫຼານສອນປູ່, ກາບເຊີ້ງ ຯລຯ.

### 2. ສ່ວນປະກອບຂອງກາບ

ສ່ວນປະກອບຂອງກາບມີ ຄື: ຄຳ, ຕອນ, ວັກ ແລະ ບົດ.

#### 2.1 ຄຳ

ຄຳແມ່ນພະຍາງໜຶ່ງໆຂອງຄຳເວົ້າທີ່ປະກອບເຂົ້າເປັນຄຳໜຶ່ງຂອງກາບ. ຄຳໃນວັກໜຶ່ງອາດມີ 7 ຄຳ, 8 ຄຳ ຫຼື ຫຼາຍກວ່ານີ້.

• **ກາບ 7**: ຕອນໜ້າມີ 3 ຄຳ ແລະ ຕອນຫຼັງມີ 4 ຄຳ

ຕົວຢ່າງ:

| | |
|---|---|
| ເມືອງວຽງຈັນ | ສວຍງາມສະອາດ |
| ມີຕະຫຼາດ | ຂາຍເຂົ້າຂາຍປາ |
| ທັງວັດວາ | ທໍໂຮງກໍໃຫຍ່ |
| ຖະໜົນໄຕ່ | ຕິດຕໍ່ເປັນສາຍ |
| ເກີນສະບາຍ | ໄປມາບໍ່ຍາກ |

| | |
|---|---|
| ມີລິດລາກ | ລິດແກ່ລິດຍົນ |
| ຢູ່ເທິງບົນ | ເຮືອເຫາະບິນເວີ່ນ |
| ລົງຈອດເດີ່ນ | ສະໜາມບິນວັດໄຕ |
| ໃຈຄົນລາວ | ເອື້ອເຟື້ອເພື່ອແຜ່ |
| ແຂກມາແວ່ | ເຊີນຮ່ວມພາງາຍ |
| ເກີນສະບາຍ | ຄົນລາວຮັກຮໍ່ |
| ທັງຕັ້ງຕໍ່ | ຄວາມສາມັກຄີ |
| ມິດໄມຕີ | ຈິງໃຈສະອາດ |
| ທົ່ວທັງຊາດ | ເໜືອໃຕ້ດັ່ງດຽວ. |

(ປຶ້ມແບບຮຽນ ວັນນະຄະດີ ຊັ້ນມັດທະຍົມ ປີທີ 7, ປີ 2011)

• **ກາບ 8**: ຕອນໜ້າມີ 4 ຄຳ ແລະ ຕອນຫຼັງມີ 4 ຄຳ

ຕົວຢ່າງ:

| | |
|---|---|
| ເອີຍສາວເອີຍສາວ | ສາວຢູ່ບ້ານໃດ |
| ເຈົ້າຢູ່ບ້ານໃຕ້ | ຫຼືຢູ່ບ້ານເໜືອ |
| ຈັ່ງແມ່ນງາມເຫຼືອ | ແທ້ນໍນ້ອງຫຼ້າ |
| ເຈົ້າຍ່າງອອກໜ້າ | ຄັນຮົ່ມສີແດງ |
| ຜູ້ໃດກໍແຍງ | ຈົນຕາກະດ້າງ |
| ເຈົ້າເປັນແມ່ຮ້າງ | ຫຼືເປັນຜູ້ສາວ |
| ຈັ່ງແມ່ນເຈົ້າຂາວ | ພໍປານໄຂ່ປອກ |
| ອ້າຍນີ້ຂໍບອກ | ຮັກເຈົ້າຫຼາຍຫຼາຍ |
| ຂວັນໃຈສີພາຍ | ຍິ້ມມາພີ້ແດ່... ໂຮຮິ້ວ |

## 2.2 ຕອນ

ຕອນແມ່ນກຸ່ມຄຳຈຳນວນໜຶ່ງທີ່ເປັນເຄິ່ງໜຶ່ງຂອງວັກ ໝາຍຄວາມວ່າ ກາບວັກໜຶ່ງມີສອງຕອນ ຄື: ຕອນໜ້າ ແລະ ຕອນຫຼັງ. ກາບ 7 ຕອນໜ້າມີ 3 ຄຳ ແລະ ຕອນຫຼັງມີ 4 ຄຳ; ກາບ 8 ຕອນໜ້າມີ 4 ຄຳ ແລະ ຕອນຫຼັງມີ 4 ຄຳ. ນອກຈາກນີ້ ກາບບາງຊະນິດໃນວັກໜຶ່ງຍັງມີຫຼາຍກວ່າ 8 ຄຳຂຶ້ນໄປ.

ຕົວຢ່າງ: ກາບ 7

| (ຕອນໜ້າ 3) | (ຕອນຫຼັງ 4) |
|---|---|
| ອິມພຸດໂທ | ນະໂມເປັນເຂດ |
| ບຸນພະເຫວດ | ປີນີ້ມ່ວນຫຼາຍ |
| ຍິງແລະຊາຍ | ມາກັນທົ່ວໜ້າ |
| ຊ່ອຍຖືຜ້າ | ຮູບເຫວດສັນດອນ |

## 2.3 ວັກ

ວັກແມ່ນແຖວໜຶ່ງຂອງກາບທີ່ມີຄຳເວົ້າຄົບຈຳນວນຄຳ ແລະ ຄົບຕາມຄວາມໝາຍຂອງມັນ. ວັກໜຶ່ງມີສອງຕອນ ຄື: ຕອນໜ້າ ແລະ ຕອນຫຼັງ ຊຶ່ງປະກອບເປັນວັກຢູ່ໃນກາບ. ກາບບົດໜຶ່ງໆມີຈັກວັກກໍໄດ້ ຂຶ້ນກັບບົດສັ້ນບົດຍາວ ເຊັ່ນ: ກາບປູ່ສອນຫຼານ, ກາບເມືອງພວນ ຊຶ່ງມີຂະໜາດຍາວຫຼາຍຮ້ອຍຫຼາຍພັນວັກ.

ຕົວຢ່າງ:

| | | |
|---|---|---|
| ສາທຸສາ | ຍໍມືໃສ່ເກົ້າ | (ວັກທີ 1) |
| ຂ້າພະເຈົ້າ | ຂໍກ່າວຕຳນານ | (ວັກທີ 2) |
| ເປັນນິທານ | ສືບມາແຕ່ກ່ອນ | (ວັກທີ 3) |
| ເວົ້າແຕ່ບ່ອນ | ປາງຊຸມບູລົມ | (ວັກທີ 4) |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 260)

## 2.4 ບົດ

ບົດແມ່ນເນື້ອໃນທັງໝົດຂອງກາບທີ່ແຕ່ງກ່ຽວກັບເລື່ອງໃດເລື່ອງໜຶ່ງຕັ້ງແຕ່ຕົ້ນຈົນຈົບເລື່ອງ. ບົດຈະສັ້ນ ຫຼື ຍາວບໍ່ໄດ້ກຳນົດຕາຍຕົວ, ແຕ່ງສັ້ນກໍເອີ້ນວ່າບົດສັ້ນ, ແຕ່ງຍາວກໍເອີ້ນວ່າບົດຍາວ. ກາບບົດໜຶ່ງຕ້ອງມີເນື້ອໃນຄົບຖ້ວນຕາມຄວາມໝາຍຂອງຫົວບົດທີ່ຕັ້ງໄວ້.

ຕົວຢ່າງ: **ນົກເຕັນຊົວ**

| | |
|---|---|
| ມື້ໜຶ່ງຂ້ອຍ | ເຫັນນົກເຕັນຊົວ |
| ບິນວົວວົວ | ມາຈັບຮຽວໄຜ່ |
| ແຄມໜອງໃຫຍ່ | ຈອບໝູ່ປາຊິວ |
| ນົກເຕັນຫິວ | ທຳກິນລໍ້ຫຼອກ |
| ຫົວຄິດອອກ | ຂື້ອ່ອຍລົງມາ |
| ພວກໝູ່ປາ | ຫຼຽວເຫັນແລ່ນຍາດ |

ນົກສະຫຼາດ ບິນແສ່ວລົງກິນ

ແລ້ວເລີຍບິນ ໜີໄປໄວ່ໄວ.

(ຄັດຈາກ ແບບສອນອ່ານ ພາສາລາວ ຊັ້ນກໍກາ ຕອນທີ 1)

## 3. ຫຼັກການສຳຜັດຂອງກາບ

### 3.1 ກາບ 7

**ກາບ 7 ມີຫຼັກການສຳຜັດ ຄື:**

ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 3 ຂອງວັກທີສອງ, ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳທີ 3 ຂອງວັກທີສາມ ແລະ ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 3 ຂອງວັກທີສີ່. ສຳຜັດກັນໄປແບບນີ້ເລື້ອຍໆຈົນສຸດເລື່ອງ ແຕ່ເມື່ອບໍ່ສາມາດສຳຜັດກັບຄຳທີ 3 ໄດ້ອາດສຳຜັດກັບຄຳທີ 1 ແລະ ທີ 2 ກໍໄດ້ ແຕ່ຈະບໍ່ມ່ວນປານໃດ.

**ໂຄງຮ່າງການສຳຜັດຂອງກາບ 7:**



ຕົວຢ່າງ: ກາບປູ່ສອນຫຼານ

<...>

ເປັນຄົນຊາຍ ຢ່າຊູ່ຄິດໃກ້

ເປັນບ່ອນໄດ້ ຢ່າໃຫ້ເສຍຄຸນ

ເພິ່ນທຳບຸນ ໂຕຢ່າທຳບາບ

ໄປອາບນ້ຳ ວັງໃຫຍ່ສີຂາ

ສະທົວເສຍ ທາຍຄຳໂສກເສົ້າ

ແລ້ວຈຶ່ງເວົ້າ ຄຳບຸນຄຳທານ

ໃຫ້ລູກຫຼານ ຈື່ຈຳເອົາໄວ້

<...>

(ຄັດຈາກ ກາບປູ່ສອນຫຼານ)

## 3.2 ກາບ 8

### ກາບ 8 ມີຫຼັກການສຳຜັດ ຄື:

ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 4 ຂອງວັກທີສອງ, ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳທີ 4 ຂອງວັກທີສາມ ແລະ ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 4 ຂອງວັກທີສີ່. ສຳຜັດກັນໄປແບບນີ້ເລື້ອຍໆຈົນສຸດບົດ ແຕ່ເມື່ອບໍ່ສາມາດສຳຜັດກັບຄຳທີ 4 ໄດ້ອາດ ສຳຜັດກັບຄຳທີ 2 ຫຼື ທີ 3 ກໍໄດ້ ແຕ່ຈະບໍ່ມ່ວນປານໃດ.

**ໂຄງຮ່າງການສຳຜັດຂອງກາບ 8:**



ຕົວຢ່າງ: ກາບເຊີ້ງບັ້ງໄຟ

| | |
|---|---|
| ສາວເອີຍສາວເອີ່ຍ | ເຈົ້າຢູ່ບ້ານໃດ |
| ເຈົ້າມາກັບໃຜ | ສັງງາມແທ້ນ້ອງ |
| ໃສ່ເກີບສົ້ນຍ່ອງ | ແອວກິ່ວພໍດີ |
| ເຈົ້າງາມອີ່ຫຼີ | ໜ້າຕາຮູບໄຂ່ |
| ເອິກເຈົ້າກະໃຫຍ່ | ທ້າຍລ່າມພໍດີ |
| ມີແຟນແລ້ວຕີ | ຫຼືວ່າຍັງໂສດ |
| ຈັ່ງແມ່ນງາມໂພດ | ຄືເທວະດາ |
| ມານ້ອງຮີບມາ | ເຊີ້ງບັ້ງໄຟຮ່ວມ |
| ທ້າຍເຈົ້ານ່ວມໆ | ເປັນຕາສະອອນ |
| ຂໍເປັນແຟນຊ້ອນ | ກັບນ້ອງໄດ້ບໍ່ |
| | ໂຮຮິວ........ |

(ຊາຍດອນໃຕ້, 2016)

## 4. ຊະນິດຂອງກາບ

ກາບມີຫຼາຍຊະນິດ ຄື: ກາບ 7, ກາບ 8 ແລະ ກາບປະສົມ ຊຶ່ງໃນແຕ່ລະວັກມີຈຳນວນຄຳບໍ່ເທົ່າກັນ, ໃນວັກໜຶ່ງມີຕັ້ງແຕ່ 7 ຄຳ, 8 ຄຳ ຫຼື ຫຼາຍກວ່ານັ້ນ.

ຕົວຢ່າງ: ກາບ 7 ກາບປູ່ສອນຫຼານ

<…>

ເງິນເຕັມຖົງ ຢ່າໄດ້ອວດອ້າງ
ຜູ້ເພິ່ນກວ້າງ ມີມາກກວ່າໂຕ
ໃຈໂມໂຫ ພາໂຕມັກມາກ
ປາກໄປກ່ອນ ມັນຮູ້ເປັນກຳ
ບໍ່ເຮັດນຳ ມັນຮູ້ເປັນບາບ
ບໍ່ໂສພາບ ເມືອໜ້າເມືອຫຼັງ
ເພິ່ນຊັງໂຕ ໃຫ້ທຽວໄປເວົ້າ

<…>

(ຄັດຈາກ ກາບປູ່ສອນຫຼານ)

ຕົວຢ່າງ: ກາບ 8

ເອີ່ຍສາວເອີ່ຍສາວ ສາວຢູ່ບ້ານໃດ
ເຈົ້າຢູ່ບ້ານໃຕ້ ເຈົ້າຢູ່ບ້ານເໜືອ
ຈັ່ງແມ່ນງາມເຫຼືອ ເກົ້າຜົມບ່ຽງຜ້າ
ເຈົ້າຢ່າງອອກໜ້າ ຖືຂັນໝາກເບັງ
ຜູ້ໃດກໍເລັງ ແສງຕາໄປໃສ່
ອ້າຍຜູ້ໃຫຍ່ໃຫຍ່ ຮູບຫຼໍ່ຄຳກິມ
ນຸ່ງໂສ້ງຫວິຜົມ ຖືຂັນບ່ຽງຜ້າ
ເຈົ້າຢ່າງອອກໜ້າ ທຽມພວກຜູ້ສາວ
ອ້າຍຕີກອງຍາວ ແຮ່ງເປັນຕາເບິ່ງ
ສຽງຕຸ້ມເປີດເບິ່ງ ແອວອ່ອນພໍດີ
ແຫ່ນາງມະທີ ກັບພໍ່ພະເຫວດ <…>

ຕົວຢ່າງ: ກາບປະສົມ

<...>

| | |
|---|---|
| ເພິ່ນບໍ່ຂໍ | ໂຕເລີ່ມມາໃຫ້ |
| ບາດໃຫ້ແລ້ວ | ຄ້າງຢູ່ເອີມເຣີມ  ນັ້ນກໍບໍ່ດີໜຶ່ງ |
| ຄອງຖ່ອຍຮ້າຍ | ມີຫ້າສີ່ສາມ |
| ເພິ່ນບໍ່ເອີ້ນ | ໂຕຫາກຂານ ນັ້ນກໍຖ່ອຍໜຶ່ງ |
| ເພິ່ນບໍ່ວານ | ໂຕຫາກມາຊ່ວຍ ນັ້ນກໍຖ່ອຍໜຶ່ງ |
| ເພິ່ນບໍ່ໃຫ້ | ໂຕຊໍ້າພັດລັກເອົາ ນັ້ນກໍຖ່ອຍໜຶ່ງ |
| ບ່ອນໂຕເຊົາ | ໂຕພາໂລຂີ້ໃສ່ ນັ້ນກໍຖ່ອຍໜຶ່ງ |
| ຕື່ນມື້ເຊົ້າ | ຂີ້ໃສ່ທາງຫຼວງ ນັ້ນກໍຖ່ອຍໜຶ່ງ |
| ເວົ້າຕຶກຕວງ | ວ່າເພິ່ນເປັນຮ້າຍ ນັ້ນກໍຖ່ອຍໜຶ່ງ |
| ຍ້າຍຄຳເວົ້າ | ຍໍຍ້ອງແຕ່ໂຕ ນັ້ນກໍຖ່ອຍໜຶ່ງ |
| ເວົ້າໂມໂຫ | ຍົກໂຕແງ້ນຂຶ້ນ ນັ້ນກໍຖ່ອຍໜຶ່ງ |
| ເວົ້າຊຶ້ນລົ້ນ | ເຮັດໜ້າບໍ່ອາຍ ນັ້ນກໍຖ່ອຍໜຶ່ງ |
| ໂຕຜູ້ຕ່ຳ | ເວົ້າຈູງຜູ້ສູງ ນັ້ນກໍຖ່ອຍໜຶ່ງ |
| ບາດໂຕຈູງ | ມັນຊໍ້າພັດບໍ່ແລ່ນ ນັ້ນກໍຖ່ອຍໜຶ່ງ |
| ໂຮມກັນເຂົ້າ | ມີສາມສີ່ຫ້າ |
| ທ້າວກຳພ້າ | ຫຼານຫຼ້າສີ່ຊາຍ |
| ອະທິບາຍ | ຄຳສອນຂອງປູ່ |

<...>

(ກາບ ປູ່ສອນຫຼານ)

## 5. ວິທີແຕ່ງກາບ

ການແຕ່ງກາບຈະຕ້ອງໃຊ້ຫຼັກການໃນການສໍາຜັດເກາະກ່າຍກັນເປັນແຖວໄປຕາມລັກສະນະຂອງມັນບໍ່ກຳນົດເປັນບາດຄືກອນປະເພດອື່ນໆ ແລະ ບໍ່ໄດ້ຈຳກັດຄວາມສັ້ນຍາວຂອງບົດນຳອີກ, ຂໍພຽງໄດ້ເນື້ອໃນຕາມຈຸດປະສົງກໍພໍ.

## 6. ວິທີອ່ານ ຫຼື ນຳໃຊ້ກາບ

ການອ່ານກາບຈະອ່ານຕາມລັກສະນະການປະກອບຄຳໃນແຕ່ລະວັກ ຊຶ່ງວັກໜຶ່ງມີສອງຕອນ. ດັ່ງນັ້ນ, ການອ່ານຕ້ອງໃຫ້ຖືກລັກສະນະຂອງຕອນໜ້າ ແລະ ຕອນຫຼັງ, ໝາຍຄວາມວ່າໃຫ້ອ່ານຄຳໃນຕອນໜ້າກ່ອນ ຈາກນັ້ນຢຸດໜ້ອຍໜຶ່ງແລ້ວຈຶ່ງອ່ານຄຳໃນຕອນຫຼັງ ແລະ ເນັ້ນສຽງຢູ່ຄຳສຸດທ້າຍຂອງແຕ່ລະວັກ. ການອ່ານກາບຈະມ່ວນໄດ້ຕ້ອງອ່ານໃຫ້ຖືກຈັງຫວະ, ວັກ, ຕອນ ແລະ ອ່ານໃຫ້ລຽນໄຫຼແຕ່ຕົ້ນຈົນຈົບ.

ການນຳໃຊ້ກາບ: ກາບໃຊ້ສຳລັບອ່ານ ຫຼື ເຊີ້ງເປັນໝູ່ ຊຶ່ງມີຜູ້ເປັນຫົວໜ້າພາກ່າວແລ້ວໃຫ້ໝູ່ເວົ້ານຳ ນອກຈາກນີ້ ຍັງນຳໃຊ້ເຂົ້າໃນການລຳຕັດ.



## II. ວ່າດ້ວຍກອນ

### 1. ຄວາມໝາຍຂອງກອນ

ກອນແມ່ນບົດກະວີທີ່ມີການສຳຜັດເກາະກ່າຍກັນ ແລະ ມີການວາງຄຳໃຫ້ຖືກຕາມສຽງກາງ, ສຽງເອກ ແລະ ສຽງໂທ ເປັນຕອນ, ເປັນວັກ, ເປັນເຟື້ອງ, ເປັນບາດ ແລະ ເປັນບົດ. ເວລາໄດ້ອ່ານ, ໄດ້ຟັງຈະເກີດຄວາມອອນຊອນໃຈ.

ກອນໃນວັກໜຶ່ງມີ 7 ຄຳ, 9 ຄຳ, 11 ຄຳ ຫຼື 15 ຄຳ. ນອກຈາກນັ້ນ ກອນຍັງມີຄຳບຸບພະບົດຕື່ມເຂົ້າຂ້າງໜ້າ ແລະ ຄຳສ້ອຍຕື່ມເຂົ້າຂ້າງຫຼັງຕື່ມອີກ.

### 2. ສ່ວນປະກອບຂອງກອນ

ສ່ວນປະກອບຂອງກອນລວມມີ: ຄຳ, ຕອນ, ວັກ, ເຟື້ອງ, ບາດ ແລະ ບົດ. ນອກຈາກນີ້, ຍັງມີຄຳບຸບພະບົດ ແລະ ຄຳສ້ອຍ.

#### 2.1 ຄຳ

ຄຳແມ່ນພະຍາງໜຶ່ງຂອງຄຳເວົ້າທີ່ປະກອບເຂົ້າເປັນຄຳໜຶ່ງຂອງກອນ ດັ່ງຄຳວ່າ ມ້າ, ໄກ່, ຄົນ ເປັນຕົ້ນ. ຄຳຈຳພວກທີ່ມີສອງພະຍາງ ແຕ່ພະຍາງໜ້າເປັນສຽງອະ ດັ່ງ ກະປູ, ກະປອມ, ສະເໜີ, ຖະໜົນ, ຜະຫຍາ... ຄຳຈຳພວກດັ່ງກ່າວນີ້, ເຖິງແມ່ນອອກສຽງເປັນສອງພະຍາງກໍນັບເປັນຄຳດຽວ, ຖ້າອອກສຽງ 3 ພະຍາງ ກໍນັບເປັນ 2 ຄຳ ດັ່ງ ວິທະຍາ, ສາສະໜາ, ວາດສະໜາ ເປັນຕົ້ນ.

**ລັກສະນະຂອງຄຳໃນກອນລາວແບ່ງອອກເປັນ 5 ປະເພດ ຄື:**

##### 1) ຄຳເປັນ

ຄຳເປັນແມ່ນຄຳທີ່ຜັນສຽງໄປຕາມວັນນະຍຸດໄດ້. ຄຳເປັນທີ່ບໍ່ມີວັນນະຍຸດຮຽກວ່າ ຄຳກາງ, ຄຳທີ່ມີວັນນະຍຸດເອກ ຮຽກວ່າຄຳເອກ ແລະ ຄຳທີ່ມີວັນນະຍຸດໂທ ຮຽກວ່າ ຄຳໂທ.

ຄຳເປັນແບ່ງອອກເປັນ 2 ຈຳພວກ ຄື:

ກ. ຄຳທີ່ປະກອບດ້ວຍສະຫຼະສຽງຍາວ ຄື: xາ xີ xື xູ ເx ແx ໂx xໍ ເxີ ເxຍ xົວ ເxືອ ແລະ ສະຫຼະພິເສດ ໄx ໃx ເxົາ xຳ ດັ່ງຄຳວ່າ: ກາ ໝູ ເສືອ ໄປ ດຳ ເປັນຕົ້ນ.

ຂ. ຄຳທີ່ສະກົດດ້ວຍຕົວ ງ ຍ ນ ມ ວ ດັ່ງຄຳວ່າ: ກາຍ ສຸມ ປານ ບາງ ຖາມ ແນວ ເປັນຕົ້ນ.

ຕົວຢ່າງ: ຫອມກິ່ນຈຳປາ

**ຫອມໃດໃນ**ໂລກ**ນີ້** **ບໍ່ປູນ**ປຽບ**ຈຳປາ** ດອກ**ນາ**
**ຫອມທົ່ວເຖິງເວຫາ** ເມກຂະ**ລາແດນດ້າວ**
**ຫອມ**ມິ**ເບົາບາງໄດ້** **ພໍພຽງຍາມ**ຍິບ
**ຫອມ**ກີບ**ດວງລື່ນອິ້ມ** **ຍາມລືມຕ້ອງກິ່ນມາ** <…>

(ຄັດຈາກ "ຫອມກິ່ນຈຳປາ" ຂອງ ພ. ພວງສະບາ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳເປັນ.

## 2) ຄຳກາງ

ຄຳກາງແມ່ນຄຳເປັນທີ່ບໍ່ມີວັນນະຍຸດ ດັ່ງຄຳວ່າ:

ປາ ຄູ ເງົາ ໄໝ ດວງ ງາມ ເປັນຕົ້ນ.

ຕົວຢ່າງ: ຄືນກະວີ

<…>
**ແນວ**ແກ່ນ**ຈັນ**ແມ່ນຊິແຫ້ງ ບໍ່ຖິ້ມກິ່ນ**ດວງຫອມ**
**ກຸນ**ຊະ**ໂລໃນແນວ**ຮີບ ບໍ່ຖິ້ມ**ລີລາ**ຊ້ອຍ
ຊື່ວ່າ**ແນວນາມ**ອ້ອຍ **ລຳຫວານ**ບໍ່ຫ່ອນຂື່ນ
**ບັນ**ດິດທຸກໝື່ນຊັ້ນ **ຄຸນທຳ**ນັ້ນແມ່ນບໍ່**ວາງ**
<…>

(ຄັດຈາກ "ຄືນກະວີ" ຂອງ ພ. ພວງສະບາ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳກາງ.

## 3) ຄຳເອກ

ຄຳເອກແມ່ນຄຳທີ່ປະກອບດ້ວຍວັນນະຍຸດເອກ ແລະ ຄຳທີ່ສະກົດດ້ວຍຕົວສະກົດ ຕາຍ ກ ດ ບ ຄື: ປ່າ ເຊົ່າ ຜ່ານ ຄົກ ເດດ, ແກບ ເປັນຕົ້ນ.

ຕົວຢ່າງ :

<…>
ສັບພະພັນ**ຫຼາກ**ລ້ຳ ຫຼາຍ**ສ່ຳ**ປັກສີ
ສັກກຸນີມີຫຼາຍ **ໝື່ນ**ແນວງາມລົ້ນ
ມີແນວຂົນເຫຼືອງສົ້ວ ຊຽວເທົາແດງ**ອ່ອນ**
ກະໂດດຄອນ**ໄຕ່**ເຕັ້ນ ແຈຈົ້ວ**ສົ່ງ**ສຽງ
<…>

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 224 )

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳເອກ.

### 4) ຄຳໂທ

ຄຳໂທແມ່ນຄຳທີ່ປະກອບດ້ວຍວັນນະຍຸດໂທ ດັ່ງຄຳວ່າ: ພ້າ ເສື້ອ ຕົ້ວ ໄມ້ ນ້ອງ ປ້າຍ ມຸ້ງນ ເປັນຕົ້ນ.

ຕົວຢ່າງ ຮັກຊີວິດຄິດກ່ອນຂັບ

| | |
|---|---|
| ເຫັນວ່າ ເມືອງໃຫຍ່**ກວ້າງ** | ຖະໜົນລ່ວງເບຕົງໝາ |
| ສະຫງ່າຕາຕອງຫຼິງ | ລ່ຳແຍງແລງ**ເຊົ້າ** |
| ເບິ່ງໃຈເບິ່ງຕາ**ແທ້** | ແລເລັ່ງຄັນເລັ່ງ |
| ລົດຊ່ວງເສັ່ງແລ່ນ**ລ້າຍ** | ຫຼາຍ**ລົ້ນ**ລັ່ງລຽນ |

(ຄັດຈາກ "ຮັກຊີວິດຄິດກ່ອນຂັບ" ຂອງ ທອງຄຳ ອ່ອນມະນີສອນ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳໂທ.

### 5) ຄຳຕາຍ

ຄຳຕາຍແມ່ນຄຳທີ່ຜັນສຽງໄປຕາມຮູບວັນນະຍຸດບໍ່ໄດ້.

ຄຳຕາຍແບ່ງເປັນ 2 ຈຳພວກ ຄື:

ກ. ຄຳທີ່ປະກອບດ້ວຍສະຫຼະສຽງສັ້ນ ຄື: xະ xິ xຸ xຶ ເxະ ແxະ ໂxະ ເxາະ ເxິ ເxັຍ xົວະ ເxືອ ດັ່ງຄຳວ່າ: ປະ ດຸ ແຕະ ເກາະ ຕົວະ ເປັນຕົ້ນ.

ຂ. ຄຳທີ່ສະກົດດ້ວຍ ກ ດ ບ ດັ່ງຄຳວ່າ: ເປີດ, ເກີດ, ເສີບ ເປັນຕົ້ນ. ຄຳຈຳພວກນີ້ນັບເປັນຄຳເອກໄດ້.

ຕົວຢ່າງ: **ຄົນກະວີ**

<...>

| | |
|---|---|
| ດວງ**ມະນີໂຊດ**ແກ້ວ | ບໍ່ຫ່ອນ**ເກີດທຸກ**ຈອມຜາ |
| ດວງ**ມຸກ**ດາບໍ່ຫ່ອນມີໃນຕົວ | **ທຸກ**ກຸນ**ສະ**ໂລຊ້າງ |
| ອັນວ່າຈັນຫອມນັ້ນ | ໃສ**ຈະ**ມີ**ທຸກ**ປ່າ |
| **ນັກປາດ**ບັນ**ດິດ**ຊິນຜູ້ຮູ້ | ໃສ**ຈະ**ພົ້**ທຸກສະ**ຖານ |

<...>

(ຄັດຈາກ "ຄົນກະວີ" ຂອງ ພ. ພວງສະບາ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳຕາຍ.

## 2.2 ຕອນ

ຕອນແມ່ນກຸ່ມຄຳຈຳນວນໜຶ່ງທີ່ເປັນເຄິ່ງໜຶ່ງຂອງວັກ. ກອນວັກໜຶ່ງມີ 2 ຕອນ ຄື: ຕອນໜ້າ ແລະ ຕອນຫຼັງ. ຕອນໜ້າປະກອບດ້ວຍ 3 ຄຳ, 4 ຄຳ ຫຼື 5 ຄຳ ບໍ່ນັບຄຳບຸບພະບົດ. ສ່ວນຕອນຫຼັງປະກອບດ້ວຍ 4 ຄຳ, 5 ຄຳ ຫຼື 6 ຄຳ ບໍ່ນັບຄຳສ້ອຍ.

ຕົວຢ່າງ:

| **ຕອນໜ້າ** | **ຕອນຫຼັງ** |
|---|---|
| <...> | |
| ຟັງຍິນທາດທາດພ້ຽງ | ກ້ອງປ່າໄພໜາ ພຸ້ນເຍີ |
| ນັ້ນແມ່ນອາໂປໂຕນ | ຕາດສູງແສນທ້າງ |
| ຕົກໃສ່ກາງວັງນ້ຳ | ເທວຊົນເປັນຫຼົ່ນ |
| ເຫັນແຕ່ຄວັນມືດກຸ້ມ | ຟອງຟົ້ງສິ່ງສຽງ |
| <...> | |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 224)

## 2.3 ວັກ

ວັກແມ່ນແຖວໜຶ່ງຂອງກອນທີ່ມີຄຳເວົ້າຄົບຈຳນວນຄຳຂອງຫຼັກການແຕ່ງກອນ. ກອນວັກໜຶ່ງປະກອບດ້ວຍ 7 ຄຳ, 9 ຄຳ, 11 ຄຳ ຫຼື 15 ຄຳ ບໍ່ນັບຄຳບຸບພະບົດ ແລະ ຄຳສ້ອຍ.

ວັກໃນກອນມີຊື່ເອີ້ນ ດັ່ງນີ້:

ວັກທີ 1 ຮຽກວ່າ ວັກສະດັບ

ວັກທີ 2 ຮຽກວ່າ ວັກຮັບ

ວັກທີ 3 ຮຽກວ່າ ວັກຮອງ

ວັກທີ 4 ຮຽກວ່າ ວັກສົ່ງ

ດັ່ງຕົວຢ່າງກອນອ່ານບາດໜຶ່ງ ຕໍ່ໄປນີ້:

| | | |
|---|---|---|
| 1 ວັກສະດັບ | ຮັກຊາດທັງປາກເວົ້າ | ກໍຕ້ອງອອກແຮງເຮັດ |
| 2 ວັກຮັບ | ຕ້ອງຮ່ວມລົງມືຊຸດ | ກົ່ນດິນແປງສ້າງ |
| 3 ວັກຮອງ | ຕ້ອງອອກແຮງໂຮມປ້ອງ | ກັນເອົາປະເທດຊາດ |
| 4 ວັກສົ່ງ | ຮັກຊາດຕາມແບບນັ້ນ | ເຂົາຈຶ່ງຍ້ອງວ່າດີ |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 200)

## 2.4 ເຟື້ອງ

ເຟື້ອງແມ່ນເຄິ່ງໜຶ່ງຂອງບາດ ຊຶ່ງກອນເຟື້ອງໜຶ່ງເທົ່າກັບສອງວັກ ຫຼື ສອງແຖວ, ສອງວັກຕົ້ນເອີ້ນວ່າ ເຟື້ອງກົກ ແລະ ສອງວັກຕໍ່ໄປເອີ້ນວ່າ ເຟື້ອງປາຍ.

ຕົວຢ່າງ:

| | | | |
|---|---|---|---|
| ວັກທີ 1 | ຮ່າງກາຍກັບປຸ່ນປັ້ນ | ເປັນທາດດິນຕົມ | ເຟື້ອງກົກ |
| ວັກທີ 2 | ເປັນລົມໄຟອຸທະກັງ | ຫຼັ່ງຂະບວນບັງໄວ້ | |
| ວັກທີ 3 | ໃຜກໍເປັນແນວນີ້ | ບໍ່ມີຝັນຝືນລອດ | ເຟື້ອງປາຍ |
| ວັກທີ 4 | ຮອດພະພຸດທະເຈົ້າ | ກໍຍັງເຂົ້າສູ່ນິບພານ | |

(ຄັດຈາກໜັງສືພິມວຽງຈັນໃໝ່ ສະບັບວັນທີ 3/1/2014. ກອນຂອງ ທອງຄໍາ ອ່ອນມະນີສອນ)

## 2.5 ບາດ

ບາດແມ່ນກຸ່ມວັກທີ່ມີຄວາມສໍາພັນເກາະກ່າຍກັນ ແລະ ເນື່ອງສຽງກັນ. ກອນບາດໜຶ່ງມີ 2 ເຟື້ອງ ຫຼື 4 ວັກ (4 ແຖວ).

ຕົວຢ່າງ:

| | | |
|---|---|---|
| 1 ວັກສະດັບ | ຫຼີງເຫັນໄມ້ລ່າວລົ້ມ | ລຽບຮ່ອມເຂົາຮອມ |
| 2 ວັກຮັບ | ພູທອນເລາະ | ລຽບພະນອມນໍານ້ອງ |
| 3 ວັກຮອງ | ເຫັນຜາຊ້ອງ | ເຂົາຄໍາຍາມຄ່ໍາ |
| 4 ວັກສົ່ງ | ຕັ້ງຢູ່ກາງປ່າກວ້າງ | ດູເຮື້ອງຮຸ່ງເຮືອງ |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 201)

## 2.6 ບົດ

ບົດແມ່ນເນື້ອໃນທັງໝົດຂອງກອນທີ່ແຕ່ງກ່ຽວກັບເລື່ອງໃດເລື່ອງໜຶ່ງຕັ້ງແຕ່ຕົ້ນຈົນຈົບເລື່ອງ. ບົດຈະສັ້ນ ຫຼື ຍາວບໍ່ໄດ້ກໍານົດຕາຍຕົວ.

ບົດສັ້ນຕ້ອງມີເນື້ອໃນເຕັມ 1 ບາດ ສ່ວນບົດຍາວ ອາດຈະຮອດ 100 ບາດ ຫຼື ຫຼາຍກວ່ານັ້ນ ຂຶ້ນຢູ່ກັບເນື້ອຄວາມຂອງບົດກະວີນັ້ນ ໂດຍສະເພາະແມ່ນບັນດາບົດກະວີນິພົນເຊັ່ນ: ສັງສິນໄຊ, ທ້າວສີທົນ, ນາງແຕງອ່ອນ ຯລຯ.

ກອນບົດໜຶ່ງຕ້ອງມີເນື້ອໃນຄົບຖ້ວນຕາມຄວາມໝາຍຂອງຫົວບົດທີ່ຕັ້ງໄວ້.

ຕົວຢ່າງ 1:  ບົດສັ້ນ

**ສາຍທານ**

| | |
|---|---|
| ສາຍຂອງຄອງທົ່ງທ້າງ | ໄຫຼຫຼັ່ງເປັນສາຍ |
| ນ້ຳງາມງາມໃສໃສ | ລ່ອງລົມລອຍນ້ຳ |
| ສ່ອງໃສໃສງາມລ້ຳ | ກະແສສິນຊຶນສ່ອງ |
| ຂອງງາມງາມຫຼັ່ງທ້າງ | ໂຕນແກ້ງແກວ່ງຂອງ   ແທ້ນາ |

(ຄັດຈາກປຶ້ມ “ສິລະປະແຫ່ງການປະພັນ” ຂອງ ລູກດອນກະເດັນ, ໜ້າ 143)

ຕົວຢ່າງ 2: ບົດຍາວ

**ຄົມກະວີ**

| | |
|---|---|
| ໂອນໍ! ຄົມກະວີເຊື່ອງຊ້ອນ | ຊອນສອດອັກສອນສິນ  ງາມເດ |
| ປານເພັດນິນຈິນດາ | ຄ່າແພງພໍຕື້ |
| ເປັນສີ່ສາຍສຳພັນສ້າງ | ວາງໝາຍແນປະໂຫຍດ |
| ບົດກະວີວາດໄວ້ | ໄຂຂໍ້ຂອດໃຈ |
| ປຽບດັ່ງ ຫຼາວຫອກງ້າວ | ຄົມທົ່ງແທງປັກ |
| ວາດທ່າທາງຄົມສິນ | ຕື່ມເຖິງຖະແຫຼງຖ້ອຍ |
| ຮ້ອຍເປັນຖັນແຖວຖ້ານ | ກະວີຂານໄຂຂ່າວ |
| ແຍ້ມຍ່າວຄົມສາດຊ້ອນ | ສະອອນແກ້ວກາບກອນ |
| ມີບ່ອນໄຂບ່ອນອ້ຳ | ອຳເງື່ອນເຟືອນຂົມ |
| ເປັນຄຳຄົມເຄັ່ມປັກ | ສຽບຊອນລາຍໄວ້ |
| ໃຜຜູ້ປັນຍາສ້ຽມ | ຈຶ່ງຫຽມທັນແທງຊອດ |
| ສອດສ່ອງຊີຊອກດັ້ນ | ເຫັນສິ້ນສ່ວນຄົມ |
| ສົມຊື່ຄົມບໍ່ຫຼຸ້ຍ | ລ້ຳລື່ນດວງດາວ |
| ເບິ່ງເຂົ້າໄປໃນໃນ | ແກ່ນໃຈຈຳຈີ້ |
| ມີຫຼາຍຄົມຄຳເຂັ້ມ | ລີງລາຍວາດທ່າ |
| ຄົມປັນຍາຮອບຮູ້ | ທັງຄົມຊັ້ນສາດຕະສິນ  ເຈົ້າເອີຍ |

(ຄັດຈາກ “ຄົມກະວີ” ຂອງ ພ. ພວງສະບາ)

### 2.7 ຄຳບຸບພະບົດ

ຄຳບຸບພະບົດແມ່ນຄຳສຳລັບຕື່ມເຂົ້າທາງໜ້າຂອງຄຳກອນວັກໃດວັກໜຶ່ງ ເພື່ອໃຫ້ໄດ້ຄວາມໝາຍຍິ່ງຂຶ້ນ. ຄຳບຸບພະບົດນີ້ຢ່າງໜ້ອຍມີ 2 ຄຳ ແລະ ຢ່າງຫຼາຍມີ 4 ຄຳ ເຊັ່ນ: ເມື່ອນັ້ນ, ບັດນີ້, ຈັກກ່າວເຖິງ, ເມື່ອນັ້ນບາກໍ...

ຕົວຢ່າງ:

| | |
|---|---|
| **ຜໍ່ເຫັນ** ເມກຍັ່ງຍ້າຍ | ໂດຍເພດທິງເທີນ ພຸ້ນເຍີ |
| ພະພາຍພານສູນ | ລ່ວງມິນເມືອຊ້າຍ |
| **ນັບແຕ່** ພູທອນໄດ້ | ເທວີທັງແປດ |
| **ພະກໍ** ຮັກຍິ່ງພຸ້ງ | ສະເໜີແທ້ຊູ່ນາງ |

(ສັງສິນໄຊ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳບຸບພະບົດ.

### 2.8 ຄຳສ້ອຍ

ຄຳສ້ອຍແມ່ນຄຳສຳລັບຕໍ່ທ້າຍຄຳກອນວັກໜຶ່ງເພື່ອເນັ້ນຄວາມໝາຍ. ຄຳສ້ອຍມັກຈະຕື່ມໃສ່ທ້າຍວັກທີ 1 ແລະ ທ້າຍວັກທີ 4.

ຄຳສ້ອຍສ່ວນຫຼາຍຈະມີ 2 ຫຼື 3 ຄຳ ເຊັ່ນ: ແລເຍີ, ນ້ອງເອີຍ, ແທ້ແລ້ວ, ແລນາ, ຊອບແລ້ວ, ພຸ້ນເຍີ, ກໍຊ່າງທ້ອນ, ກໍຕາມທ້ອນ...

ຕົວຢ່າງ:

| | |
|---|---|
| ບັດນີ້ ມາຮອດນ້ອງ | ເຫັນຫ່າງຈາງຈິດ **ແລນໍ** |
| ເໝືອນພີ່ ປຸນປານຜາງ | ເຜົ່າສະອາງອັນຮ້າຍ |
| ຊື່ວ່າ ພັນປີອ້າຍ | ບໍ່ຍອມຍັງແອ່ວ **ອວນເອີຍ** |
| ຂໍອຸ່ນ ອີກພີ່ພ້ອມ | ຄຳຂ້ອຍຂອດຈິງ **ແດ່ທ້ອນ** |

(ຄັດຈາກ "ວັນນະຄະດີເພື່ອການສຶກສາ" ຂອງ ມະຫາສິລາ ວີຣະວົງ, ພສ 2503. ໜ້າ 183)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳສ້ອຍ.

## 3. ຄຳປະຈຳບ່ອນ

ຄຳປະຈຳບ່ອນ ແມ່ນຄຳກອນໜຶ່ງບາດທີ່ມີ 4 ວັກ, ວັກໃດກໍມີ 7 ຄຳ (ບໍ່ນັບຄຳບຸບພະບົດ ແລະ ຄຳສ້ອຍ) ໂຮມຄຳກອນໜຶ່ງບາດ ມີ 28 ຄຳ. ໃນຈຳນວນຄຳທັງໝົດ 28 ຄຳນີ້ ຕ້ອງມີ ຄຳເອກ 6 ຄຳ ແລະ ຄຳໂທ 5 ຄຳ ຢູ່ປະຈຳບ່ອນຂອງມັນ, ຈະຍ້າຍໄປບ່ອນອື່ນບໍ່ໄດ້. ກອນທີ່ມີ 28 ຄຳນີ້ ເພິ່ນເອີ້ນວ່າ ກອນກະທັດຮັດ ດັ່ງໂຄງຮ່າງລຸ່ມນີ້:

ວັກທີ 1 ○●⊙ ○●○○

ວັກທີ 2 ○○○ ●○○⊙

ວັກທີ 3 ○○⊙ ○○○●

ວັກທີ 4 ○●⊙ ○⊙●○

ຕົວຢ່າງ:

ຝູງ**ບ່າວ**ຢ້ອງ ພວງ**ເພດ**ມາລາ
ຕາໄຊຊອນ **ສຽດ**ສາວປະສິງເຊື້ອ
ຈອມເມືອງເຈົ້າ ໃຈຮີມຮັກ**ໄພ່**
ສະໜຸກ**ຢູ່**ຫຼີ້ນ ສອນກວ້າງ**ມ່ວນ**ລະງຶມ

(ສັງສິນໄຊ)

## 4. ຫຼັກການສຳຜັດຂອງກອນ

ຄຳວ່າ "ສຳຜັດ" ແປວ່າ ຖືກຕ້ອງກັນ, ຊຸນຕຳກັນ, ຄ່ອງກັນ, ເກາະກ່າຍກັນລະຫວ່າງຄຳກັບຄຳຢູ່ໃນກອນ. ການສຳຜັດຢູ່ໃນກອນມີ 2 ລັກສະນະ ຄື: ສຳຜັດນອກ ແລະ ສຳຜັດໃນ.

### 4.1 ສຳຜັດນອກ

ສຳຜັດນອກແມ່ນຄຳສຳຜັດຕາມສຽງສະຫຼະທີ່ມີຢູ່ລະຫວ່າງຄຳສຸດທ້າຍຂອງວັກເທິງກັບຄຳໃດຄຳໜຶ່ງຂອງວັກລຸ່ມ.

ຕົວຢ່າງ 1:

ພະທາດຫຼວງຜ່ານຟ້າ ຕັ້ງຢູ່ວຽງຈັນ
ທັງວັດຈັນອິນແປງ ອູບມຸງອົງຕື້
ມີຊີ່ລືຊາລ້ຳ ຊຽງຍືນສີສະເກດ
ເປັນປະເພດໃຫຍ່ກວ້າງ ງາມລົ້ນລວດລາຍ

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 226)

ຕົວຢ່າງ 2:

ພວກເຈົ້າຍັງໜຸ່ມນ້ອຍ ອະນາຄົດຍັງ**ຫຼາຍ**
ພວກເຈົ້າເປັນຄວາມຫວັງ ໃຫ້ແກ່ດິນທັງ**ຄ້າຍ**
ໃຜກ່ຳເພີງແພງລ້ຳ ບໍ່ຊີງຊັງແໜງ**ໜ່າຍ**
ຢາກໃຫ້ສຸກຍິ່ງລ້ຳ ແສນຊື້ນຄ່ອຍສະ**ບາຍ**

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 252)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

### 4.2 ສຳຜັດໃນ

ສຳຜັດໃນແມ່ນການສຳຜັດລະຫວ່າງຄຳກັບຄຳທີ່ມີສຽງສະຫຼະ ຫຼື ພະຍັນຊະນະທີ່ຄືກັນ ຫຼື ຄ້າຍຄືກັນໃນແຕ່ລະວັກນັ້ນສຳຜັດເກາະກ່າຍກັນເອງ.

ການສຳຜັດໃນມີ 2 ຢ່າງ ຄື: ສຳຜັດສະຫຼະ ແລະ ສຳຜັດພະຍັນຊະນະ.

#### 4.2.1 ສຳຜັດສະຫຼະ

ສຳຜັດສະຫຼະແມ່ນການສຳຜັດລະຫວ່າງຄຳກັບຄຳທີ່ມີສະຫຼະດຽວກັນ ຢູ່ໃນວັກດຽວກັນນັ້ນເອງ.

ສຳຜັດສະຫຼະມີ 4 ຢ່າງ ຄື: ສຳຜັດຄຽງ, ສຳຜັດທຽບຄຽງ, ສຳຜັດທົບຄຽງ ແລະ ສຳຜັດທຽມແອກ.

##### 1) ສຳຜັດຄຽງ

ສຳຜັດຄຽງແມ່ນການສຳຜັດທີ່ມີສະຫຼະດຽວກັນຮຽງກັນຢູ່ 2 ຄຳ ໃນວັກດຽວກັນ.

ຕົວຢ່າງ:

| | |
|---|---|
| ພີ່ໂສກກັ້ນ | ດີ້ນ**ດັ່ນຝັນ**ຫາ |
| ອາໄລຄຶດ | ຮ່ຳ**ຮອນກອນ**ກຽງ |
| ວັນອຽງຄ້ອຍ | ສັນ**ດອຍວອຍ**ວີ່ງ |
| ພີ່ຄະນຶງຮອດ**ນ້ອງ** | **ໝອງ**ໄໝ້ເມື່ອຍມະໂນ |

(ຄັດຈາກ "ໄວຍາກອນລາວ ພາກສັນທະລັກສະນະ" ຂອງ ລາຊະບັນດິດສະພາລາວ, 1970. ໜ້າ 13)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

##### 2) ສຳຜັດທຽບຄຽງ

ສຳຜັດທຽບຄຽງແມ່ນການສຳຜັດທີ່ມີສະຫຼະດຽວກັນຮຽງກັນຢູ່ 3 ຄຳ ໃນວັກດຽວກັນ.

ຕົວຢ່າງ:

| | |
|---|---|
| ຄຶດຮອດ**ຊູ້** | **ຜູ້ຢູ່**ທາງໄກ |
| ຫົວໃຈຫັກ | **ຫວ່າງວາງທາງ**ອ້າຍ |
| ເຫັນຄົນເດີນມາຜ້າຍ | ກາຍທາງກໍວ່າແມ່ນ |
| ໃຈພີ່ແຂວນອ້ອນຕ້ອນ | ນຳນ້ອງບໍ່ລືມ |

(ຄັດຈາກ "ໄວຍາກອນລາວ ພາກສັນທະລັກສະນະ" ຂອງ ລາຊະບັນດິດສະພາລາວ, 1970. ໜ້າ 13)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

### 3) ສຳຜັດທົບຄຽງ

ສຳຜັດທົບຄຽງແມ່ນການສຳຜັດທີ່ມີສອງສະຫຼະຮຽງກັນສະຫຼະລະ 2 ຄຳໃນວັກດຽວກັນ.

ຕົວຢ່າງ:

ນັບແຕ່ມາໄກ**ນ້ອງ** **ທອງ**ປອນນອນປ່ຽວ

ຈິດພີ່ຍັງກ່ຽວ**ຝັ້ນ** **ພັນ**ກຽວໜ່ຽວນຳ

(ຄັດຈາກ "ແບບແຕ່ງກອນໄທວຽງຈັນ" ຂອງ ມະຫາສິລາ ວີຣະວົງ, 1994. ໜ້າ 7)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

### 4) ສຳຜັດທຽມແອກ

ສຳຜັດທຽມແອກແມ່ນການສຳຜັດທີ່ມີສະຫຼະດຽວກັນໃນວັກດຽວ ແຕ່ມີຄຳທີ່ປະກອບດ້ວຍສະຫຼະອື່ນມາຂັ້ນກາງ 1 ຄຳ.

ຕົວຢ່າງ:

ເຫັນດອກໄມ້ ກ້ານ**ກ່າຍ**ນາງ**ກາຍ**

ກອງກັນສັບ ດອກ**ຊອນ**ແຊມ**ຊ້ອນ**

ພູທອນທ້າວ ເດີນ**ດຽວ**ດັ່ນ**ດ່ຽວ**

ຂ້າມຂອບຂັ້ນ ເມື່ອ**ຊັ້ນ**ຊ່ອງ**ຊັນ**

(ຄັດຈາກ "ໄວຍາກອນລາວ ພາກສັນທະລັກສະນະ" ຂອງ ລາຊະບັນດິດສະພາລາວ, 1973. ໜ້າ 14)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

## 4.2.2 ສຳຜັດພະຍັນຊະນະ

ສຳຜັດພະຍັນຊະນະແມ່ນການສຳຜັດພະຍັນຊະນະດຽວກັນ ຫຼື ຄ້າຍຄືກັນ ຊຶ່ງຮຽກວ່າອັກສອນຄູ່ສຽງ ຄື: ຂ-ຄ, ສ-ຊ, ຖ-ທ, ຜ-ພ, ຝ-ຟ, ຫ-ຮ, ຫງ-ງ, ຫຍ-ຍ, ໜ-ນ, ໝ-ມ, ຫຼ-ລ ແລະ ຫວ-ວ ມາວາງລົງໃນຄຳທີ່ສຳຜັດກັນໃນວັກດຽວກັນ ແມ່ນວ່າຄຳນັ້ນຈະໃຊ້ສະຫຼະຕ່າງກັນກໍຕາມ.

ສຳຜັດພະຍັນຊະນະມີ 8 ຢ່າງ ຄື: ສຳຜັດຄູ່, ສຳຜັດທຽມຄູ່, ສຳຜັດທຽມລິດ, ສຳຜັດທຽບລິດ, ສຳຜັດທົບຄູ່, ສຳຜັດທຽບຄູ່, ສຳຜັດແຊກຄູ່ ແລະ ສຳຜັດແຊກລິດ.

### 1) ສຳຜັດຄູ່

ສຳຜັດຄູ່ແມ່ນການສຳຜັດທີ່ມີພະຍັນຊະນະດຽວກັນຮຽງກັນຢູ່ 2 ຄຳ.

ຕົວຢ່າງ:

ຟັງຍິນ ຟ້າສະ**ໜັ່ນນ້າວ** ເບີຍເບີກບົວລະພາ ພຸ້ນເຢີ
ນັບແຕ່ ພູທອນລຸນ ນະລາດລິງລາໄຫ້
ພະກໍາ ທອມ**ພົນຜ້າຍ** ເວຫາ**ຫຼາຍຫຼັ່ນ**
ມະ**ໂນນາດ**ໄຫ້ ທວງ**ຝັ້ນຝ່າຍ**ຫຼັງ

(ສັງສິນໄຊ)

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມໝາຍເຖິງຄໍາທີ່ສໍາຜັດກັນ.

## 2) ສໍາຜັດຫຼຸມຄູ່

ສໍາຜັດຫຼຸມຄູ່ແມ່ນການສໍາຜັດທີ່ມີພະຍັນຊະນະດຽວກັນຮຽງກັນຢູ່ 3 ຄໍາ.

ຕົວຢ່າງ:

ສຽງເສບ**ແກ້ວ** **ກົມກ່ອມ**ເວຫາ
ພົນຕາວຕາມ **ຫຼັ່ງໄຫຼຫຼັ່ງ**ໜ້າ
ຍິງຊາຍກົ້ວ ແກມສາວສົມບ່າວ
ຊອບສໍ່າຮ້າງ ຮາມໝ້າຍໝູ່ໂຖງ

(ສັງສິນໄຊ)

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມໝາຍເຖິງຄໍາທີ່ສໍາຜັດກັນ.

## 3) ສໍາຜັດຫຼຸມລິດ

ສໍາຜັດຫຼຸມລິດແມ່ນການສໍາຜັດທີ່ມີພະຍັນຊະນະດຽວກັນຮຽງກັນຢູ່ 4 ຄໍາ.

ຕົວຢ່າງ:

ພີ່ຈາກເຈົ້າ ເຈົ້າພີ່ພອຍຮຽມ
ຂວັນຢ່າ**ອອນ** **ອ່ອນອວນອີງ**ແກ້ວ
ຈຽມແຕ່ເຮົາ**ໝາຍໝັ້ນ** **ໝາຍມາ**ສົມສູ່
ຊົມຊື່ນແລ້ວ ລາແລ້ວພີ່ຈັກເມືອ.

(ທ້າວຮຸ່ງ-ທ້າວເຈືອງ)

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມໝາຍເຖິງຄໍາທີ່ສໍາຜັດກັນ.

## 4) ສໍາຜັດຫຼຸບລິດ

ສໍາຜັດຫຼຸບລິດແມ່ນການສໍາຜັດທີ່ມີພະຍັນຊະນະດຽວກັນຮຽງກັນຢູ່ 5 ຄໍາ ຂຶ້ນໄປ.

ຕົວຢ່າງ: ຄ້ານຮຽນ

ຄ້ານຮຽນ **ບິດບ່ຽງບ້ຽວ** **ບີ້ນບ່ອນເບົາ**ສະໝອງ
ຮ້ອງໄຮ່ນັ່ນເນືອງແຊວ ຊອບຊຸມຊອນເຕັ້ນ
ເປັນໝູ່ພໍ່ພຶງຫຼິ້ນ ສຸລາລິນລິງດື່ມ
**ຄື້ມເຄົ່ງຄືນຄຶກຄື້ນ** **ຄາຄ້ານເຄີກ**ບໍ່ຮຽນ

(ຄັດຈາກ "ຄ້ານຮຽນ" ຂອງ ທອງຄຳ ອ່ອນມະນີສອນ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

## 5) ສຳຜັດທົບຄູ່

ສຳຜັດທົບຄູ່ແມ່ນການສຳຜັດທີ່ມີສອງພະຍັນຊະນະຮຽງກັນເທື່ອລະ 2 ຄຳເປັນຄູ່ກັນ.

ຕົວຢ່າງ:

<u>ພ່າງພ່າງ</u>**ຟ້າ** **ຟື້ນ**ຊໍ່ວາຕາ
<u>ເມືອງເມືອງ</u>**ສູນ** **ສ່ອງ**ຄອຍຄວາງຟ້າ
ຮີມມະນາຄ້ອຍ ຄະນິງຮຽມຮັກພີ່
ໄກອຸ່ນຜູ້ ນິງໜ້າໝື່ນກະສັນ

(ທ້າວຮຸ່ງ-ທ້າວເຈືອງ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

## 6) ສຳຜັດທຽບຄູ່

ສຳຜັດທຽບຄູ່ແມ່ນການສຳຜັດທີ່ມີສາມພະຍັນຊະນະຮຽງກັນເທື່ອລະ 2 ຄຳເປັນ 3 ຄູ່.

ຕົວຢ່າງ:

ວັນໜຶ່ງຂ້າຕ່າວຕັ້ງ ຄືນຄອບເຄຫັງ
ມັງ**ໝູ່ເມືອ**<u>ໂດຍດອມ</u> **ຮ່ວມເຮືອນ**ຮຽງຮັ້ງ
**ລຳເລີກ**<u>ການໄກ</u>**ເວັ້ນ** **ວັນ**ສວາຍສູງຫ່ຽງ
ດູແດດ**ແດດາດ**<u>ພື້ນ</u> <u>ພວມ</u>**ຮ້ອນຮິ່ມ**ຫານ

(ໜູທັກ ສິດທິມໍລະດາ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງ ໝາຍເຖິງຄຳທີ່ສຳຜັດກັນ.

### 7) ສຳຜັດແຊກຄູ່

ສຳຜັດແຊກຄູ່ແມ່ນການສຳຜັດທີ່ມີສອງ ຫຼື ສາມພະຍັນຊະນະຮຽງກັນແລ້ວມີພະຍັນຊະນະອື່ນຂັ້ນກາງອີກ 1 ຄຳ.

ຕົວຢ່າງ:

| | |
|---|---|
| ພູວະນາດນ້ອຍ | ຮັກພີ່ຊຽງເຄືອ |
| **ຄອນຄອນຄຶດ** | ຊູ່**ລວງເລີຍ**ຂ້ອງ |
| ປານນີ້ ລະອໍ**ເນື້ອ** | **ນົງ**ປາງ**ພະພີ່** ກູພຸ້ນ |
| ດີແກ່ ເດືອນເຮືອ**ແຈ້ງ** | **ຈູນ**ຟ້າ**ສ່ອງໃສ** |

(ທ້າວຮຸ່ງ-ທ້າວເຈືອງ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

### 8) ສຳຜັດແຊກລິດ

ສຳຜັດແຊກລິດ ແມ່ນການສຳຜັດທີ່ມີສອງພະຍັນຊະນະຮຽງກັນແລ້ວມີພະຍັນຊະນະອື່ນຂັ້ນກາງ 2 ຄຳ.

ຕົວຢ່າງ:

| | |
|---|---|
| ຄິດເມື່ອ**ເນົາແນບ**ຂ້າງ | ຕີນ**ພີ່ພາ**ຕາ |
| ເປັນເວ**ລາເລີຍ**ເທີງ | ຂອບ**ປີປາຍ**ເຂົ້າ |
| **ຄວາມເຄືອງ**ເສົ້າ | ຫາຍ**ເບົາບາງ**ໂສກ |
| ໂຊກຫາກ**ລຸລາບ**ໄດ້ | ສົມ**ດ້າມດັ່ງ**ປະສົງ ວ່ານາ |

(ທ້າວຮຸ່ງ-ທ້າວເຈືອງ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ

## 5. ຊະນິດຂອງກອນ

ກອນມີສອງຊະນິດ ຄື: ກອນອ່ານ ແລະ ກອນຂັບ-ລຳ.

### 5.1 ກອນອ່ານ

ກອນອ່ານແມ່ນກອນສຳລັບອ່ານໃຫ້ສຳຜັດ ຫຼື ຄ່ອງເນື່ອງກັນຕາມຫຼັກຄຳປະຈຳບ່ອນໄມ້ເອກໄມ້ໂທຂອງຄຳກອນ.

ການແຕ່ງກອນອ່ານຕ້ອງເອົາໃຈໃສ່ສຽງເອກສຽງໂທ ສ່ວນຈຳນວນຄຳໃນວັກໜຶ່ງ ບໍ່ຕາຍຕົວ ເລີ່ມ ແຕ່ 7 ຄຳ ເຖິງ 15 ຄຳ, ອາດຈະເອົາຄຳບຸບພະບົດ ຫຼື ຄຳສ້ອຍ ຕື່ມໃສ່ຕາມຄວາມເໝາະສົມ.

ກອນອ່ານມີ 7 ຊະນິດ ຄື:

1) ກອນອ່ານທຳມະດາ ຫຼື ກອນໜັງສືຜູກ
2) ກອນອ່ານວິດຊຸມາລີ
3) ກອນສຳຜັດທ້າຍ
4) ກອນທຽມແອກ
5) ກອນຊ່ອນເລັບ
6) ກອນຜະຫຍາ
7) ກອນແປດ

### 1) ກອນອ່ານທຳມະດາ ຫຼື ກອນໜັງສືຜູກ

ກອນອ່ານທຳມະດາ ແມ່ນກອນໜັງສືຜູກ ຫຼື ເລື່ອງທີ່ແຕ່ງໄວ້ສຳລັບອ່ານ. ກອນອ່ານທຳມະດາໃຊ້ທັງກອນ 7 ຄຳ ແລະ ກອນ 9 ຄຳ ຫຼື ຫຼາຍກວ່ານັ້ນ. ທັງເອົາຄຳບຸບພະບົດ ແລະ ຄຳສ້ອຍມາຕື່ມໃສ່ອີກ.

ການແຕ່ງກອນອ່ານທຳມະດານີ້ເພິ່ນເອົາໃຈໃສ່ແຕ່ການວາງຄຳເອກຄຳໂທໃຫ້ແມ່ນບ່ອນຕາມຫຼັກການເນື່ອງສຽງ.

❖ ໂຄງຮ່າງຫຼັກຄຳປະຈຳບ່ອນຂອງກອນ




ຕົວຢ່າງ 1:

| | |
|---|---|
| ຝູງ**ພີ່**ນ້ອງ | ອາ**ຄາດ**ຍິນເຫງົາ |
| ໄປວອນຫາ | **ຊ່າງ**ພຽນພິມໄມ້ |
| ມາວາງໃຫ້ | ມາດາດົມ**ກິ່ນ** |
| ນາງ**ບໍ່**ຮູ້ | ຄຳລ້ຽວ**ລ່າຍ**ພາງ |

(ສັງສິນໄຊ)

ຕົວຢ່າງ 2: ກອນຊຶ່ງແຕ່ລະວັກມີຫຼາຍກວ່າ 7 ຄຳຂຶ້ນໄປ

ບັດນີ້ ຈັກກ່າວພູໄຊທ້າວ ກຸດສະລາດພະຍາເມືອງ ກ່ອນແລ້ວ
ພະຄະນິງຕົນແດ ຄັ່ງທອງເຫມ້າງ
ໂສກີແຄ້ນ ເຄືອງພະໄທໝອງໝົ່ນ
ກໍບໍ່ມີເຫືອດແຫ້ງ ນ້ຳຕາຍ້ອຍຍ່າວໄຫຼ
(ສັງສິນໄຊ)

## 2) ກອນອ່ານວິດຊຸມາລີ

ກອນອ່ານວິດຊຸມາລີ ແມ່ນກອນທີ່ຄືກັນກັບກອນອ່ານທຳມະດາ ຕ່າງແຕ່ໃຊ້ການສຳຜັດນອກ (ສຳຜັດສະຫຼະ) ແບບຂ້າມວັກ ໃຫ້ເກາະກ່າຍກັນໄປຕະຫຼອດ ດັ່ງລັກສະນະລຸ່ມນີ້:

- ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 3, 4 ຫຼື 5 ຕອນໜ້າຂອງວັກທີ 3.
- ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳທີ 3, 4 ຫຼື 5 ຕອນໜ້າຂອງວັກທີ 4. ສັບວັກກັນໄປດັ່ງນີ້ຈົນຈົບບົດ. ຖ້າສຳຜັດກັບຄຳທີ 3, 4, 5 ໃນຕອນໜ້າບໍ່ໄດ້ກໍຂ້າມໄປສຳຜັດກັບຄຳທີ 6 ຫຼື 7 ໃນຕອນຫຼັງ.
- ການວາງຄຳເອກຄຳໂທນັ້ນຄືກັນກັບກອນອ່ານທຳມະດາ. ວັກໜຶ່ງໆມີ 7 ເຖິງ 11 ຄຳ.

ຕົວຢ່າງ: ທ້າວເນມິຣາດ

ຂ້ານີ້ ຂໍນອບນ້ອມ ຄຸນທ່ານທັງ**ຫຼາຍ**
ຜູ້ເພິ່ນ ມີປັນຍາ ສິ່ງສູງແສນຊັ້ນ
ພຸດທະທຳຍໍຍູ້ **ກາຍ**ສຽນສູງສິ່ງ
ຂໍໃຫ້ ຫຼີງລ່ຳບັ້ນ ຄຳຂ້າຂາບ**ຂໍ**
ຂໍຈົ່ງ ໃສ່ສ່ອງຮູ້ ຍານຍິ່ງຊູສູງ
**ພໍ**ຈັກ ເອີ້ນມາຊຽນ ຂີດຄຳກອນແກ້ວ
ຮຽມຫາກ ຈູງໃຈຈັ້ງ ຕາມຮອຍຮຽນຮ່ຳ
ຂໍຢ່າແຄ້ວ ຄາຂ້ອງຂາດເຂີນ

<…>

(ຄັດຈາກ "ນິທານຊາດົກຄຳກອນ ທ້າວເນມິຣາດ" ຂອງ ໂອທອງ ຄຳອິນຊູ)

**ໝາຍເຫດ**: ວິດຊຸມາລີ ມາຈາກພາສາປາລີ ຄື: ວິດຊຸ ແປວ່າ ສາຍຟ້າແມບເຫຼື້ອມ. ມາລີ ແປວ່າ ລະບຽບ, ຖ້ອງແຖວ. ສະນັ້ນ, ວິດຊຸມາລີແປວ່າ: ຄຳກອນທີ່ມີຖ້ອງແຖວ ຄືດັ່ງສາຍຟ້າແມບເຫຼື້ອມ.

### 3) ກອນສຳຜັດທ້າຍ

ກອນສຳຜັດທ້າຍແມ່ນກອນທີ່ມີລັກສະນະຄືກອນອ່ານທຳມະດາ ແລະ ກອນອ່ານວິດຊຸມາລີ, ແຕ່ວ່າຄຳສຸດທ້າຍຂອງທຸກວັກສຳຜັດກັນ.

ການສຳຜັດທ້າຍມີ 3 ແບບ ຄື: ສຳຜັດຄີບ, ສຳຜັດເຟື້ອງ ແລະ ສຳຜັດສັບຫວ່າງ.

- **ສຳຜັດຄີບ** ໝາຍຄວາມວ່າ ຄຳສຸດທ້າຍທຸກວັກຂອງບາດສຳຜັດກັນ.

ຕົວຢ່າງ: ໜ້າທີ່ອະນຸຊົນ

| | |
|---|---|
| ພໍ່ຊິສອນສັ່ງເຈົ້າ | ນ້ອຍໜຸ່ມກຸມ**ມານ** ກ່ອນເນີ |
| ໃຫ້ຄ່ອຍຫົນທານອິດ | ໝັ່ນພຽນຢ່າ**ຄ້ານ** |
| ໝັ່ນໃນການບ້ານ | ທັງຮຽນແຕ້ມ**ອ່ານ** |
| ວຽກຊິໜັກໜ່ວງລ້ຳ | ກໍໃສແຈ້ງເບີກ**ບານ** |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 252)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມໝາຍເຖິງຄຳທີ່ສຳຜັດກັນ.

- **ສຳຜັດເຟື້ອງ** ແມ່ນການສຳຜັດຊຶ່ງຄຳສຸດທ້າຍຂອງວັກໃນແຕ່ລະເຟື້ອງສຳຜັດກັນ.

ຕົວຢ່າງ: ໜ້າທີ່ກອງຫຼອນ

| | |
|---|---|
| ເປັນແບບຢ່າງຢູ່ເລື້ອຍ | ເສຍສະຫຼະກາຍ**ໃຈ** |
| ແມ່ນວ່າໜັກເບົາຫຍັງ | ກໍກະທຳຈົນ**ໄດ້** |
| ເຮັດໃຫ້ໄທເມືອງບ້ານ | ສະໜິດພັນຮັກ<u>ຮໍ່</u> |
| ຊົມເຊື່ອຖືຍົກຍ້ອງ | ວ່າເປັນເຫງົ້າເຫຼົ່າ<u>ກໍ</u> |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 254)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

- **ສຳຜັດສັບຫວ່າງ** ແມ່ນຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳສຸດທ້າຍຂອງວັກທີ 3 ແລະ ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳສຸດທ້າຍຂອງວັກທີ 4.

ຕົວຢ່າງ: ໜ້າທີ່ຊາວໜຸ່ມ

| | |
|---|---|
| ຊາວໜຸ່ມເປັນສ່ຳເຊື້ອ | ກຳລັງໃຫຍ່ສຳ**ຄັນ** |
| ມັນແມ່ນອະນາຄົດ | ແກ່ນກຳລັງເມືອງ<u>ບ້ານ</u> |
| ທັງແມ່ນຊຸມຊົນຊັ້ນ | ພະລັນແຮງກ້າ**ກັ່ນ** |
| ເປັນຫົວຈັກຊຸກຍູ້ | ໃຫ້ຄົນຕັ້ງແຕ່ງ<u>ການ</u> |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 255)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

### 4) ກອນທຽມແອກ

ກອນທຽມແອກແມ່ນກອນທີ່ຄືກັນກັບກອນອ່ານທຳມະດາ ສ່ວນການສຳຜັດຂອງກອນທຽມແອກແມ່ນການສຳຜັດທີ່ມີສະຫຼະດຽວກັນປະກອບກັບພະຍັນຊະນະດຽວກັນ ຫຼື ພະຍັນຊະນະຄູ່ສຽງກັນໃນວັກດຽວກັນ ແຕ່ມີຄຳທີ່ປະກອບດ້ວຍສະຫຼະອື່ນມາຂັ້ນກາງ 1 ຄຳ. ການວາງຄຳເອກຄຳໂທນັ້ນຄືກັນກັບກອນອ່ານທຳມະດາ.

ຕົວຢ່າງ: ທ້າວ ເນມີຣາດ

<…>

ຍາມນີ້ ອາກາດກ້າມ ລົມ**ລ່ອງ**ຕາມ**ລອງ**

ນຳເອົາໜາວ ກ່າຍ**ແກມ**ເຢັນ**ແກ້ມ**

ລາຕີຂ້ອນ ເໝືອຍ**ຮ່ຳ**ຮວາຍ**ຮ່ຳ**

ເຊົ້າຊື່ນ ດວງດອກດົ້ວ ບານ**ເຮື້ອງ**ເຮື່ອ**ເຮືອງ**

ແນມເຫັນ ແສງສ່ອງເຊົ້າ ພວມ**ໂຜ່**ປາຍ**ໂພ**

ນົກອອກຮັງລາຄອນ ຊວ່າ**ແຊວ**ບິນ**ແສ້ວ**

ອາຍໝອກ ບາງບາງກົ້ວ ເຈືອ**ຈານ**ລົມ**ຈ່ານ**

ເຝື້ອກ່າຍກ້ອນ ລົມ**ໄລ່**ເລື່ອນ**ໄຫຼ**

<…>

(ຄັດຈາກ “ນິທານຊາດົກຄຳກອນ ທ້າວເນມີຣາດ” ຂອງ ໂອທອງ ຄຳອິນຊູ)

### 5) ກອນຊ່ອນເລັບ

ກອນຊ່ອນເລັບ ແມ່ນກອນຂຽນພັງສີໄປຫາກັນໂດຍໃຊ້ຄຳທຳອິດ, ຄຳທີ 2 ຫຼື ທີ 3 ຂອງແຕ່ລະວັກ (ສຸດແລ້ວແຕ່ຈະຕົກລົງກັນ) ມາຕໍ່ໃສ່ກັນລົງໄປເພື່ອເປັນຄວາມເວົ້າທີ່ຢາກເວົ້ານຳກັນ. ຖ້າຜູ້ທີ່ບໍ່ຮູ້ວ່າຜູ້ແຕ່ງໃຊ້ກອນຊ່ອນເລັບນີ້ກໍຈະບໍ່ຮູ້ຄວາມທີ່ຊ່ອນຢູ່ໃນກອນນັ້ນ. ສ່ວນການແຕ່ງແມ່ນແຕ່ງຕາມຫຼັກກອນອ່ານທຸກປະການ.

ຕົວຢ່າງ: ດາວປະດັບດິນ

**ດາວ**ເດືອນງາມເດັ່ນພົ້ນ ນະພາຜ່ອງເພັງແສງ

**ມີ**ດາວແຍງເຍືອງປະດັບ ວັບວາວແວວແຈ້ງ

**ແສງ**ເດືອນໃນຄືນຂ້ອນ ຊອນສີໃສສະຫວ່າງ

**ປະ**ດັບດາວເອກອ້າງ ທາງຟ້າສະຫງ່າງາມ

**ດັບ**ຄວາມມືດເທິງແຜ່ນຟ້າ　　　ພາຄໍ່າຄືນຫວານ
**ຟ້າ**ແຈ່ມຈັບບານໃສ　　　ສ່ອງໂດຍດາວແຈ້ງ
**ຫຍ້າ**ຢູ່ດິນແປງເປື້ອງ　　　ໃບຕາມລົມອ່ອນ
**ມີ**ບ່ອນແສງສ່ອງຕ້ອງ　　　ຕາມຫຍ້າຍອດຍາວ
**ສີ**ຂາວເມັດໝອກຄ້າງ　　　ດູດັ່ງດວງດາວ
**ປະ**ດັບດິນວາວວັບ　　　ຢາດຢາຍຢັ້ງໄວ້
**ດັບ**ມືດດໍາໃນພື້ນ　　　ແດນດິນໃສສ່ອງ
**ດິນ**ຮັບຮອງຮາກຫຍ້າ　　　ໝາຍລົ້ງງລໍ່າແລ
**ຄົນ**ດີໂດຍດັ່ງແທ້　　　ດາວເດັ່ນເວຫາ
**ດີ**ເດັ່ນພາຄົນຄຽງ　　　ຊື່ນຊົມໃຈແຈ້ງ
**ມີ**ແສງຄວາມດີໃຫ້　　　ສັງຄົມຊົມຊື່ນ
**ໃຈ**ຫ່ວງຫວງແຜ່ນພື້ນ　　　ຄືຫຍ້າຫ່ວງດິນ
**ປະ**ກອບສິນໃສ່ແກ້ວ　　　ໃຈແຈ່ມເຮືອງຮອງ
**ດັບ**ມືດມົນມົວໝອງ　　　ຫ່າງໃຈໄລລ້າງ
**ສັງ**ສັນທັງສັນສ້າງ　　　ສັງຄົມເຮືອງຮຸ່ງ
**ຄົມ**ຄົນຄົມພຸ່ງພົ້ນ　　　ຄົມສ້າງແຜ່ນດິນ.

(ຄັດຈາກ ບົດກອນ "ດາວປະດັບດິນ" ຂອງ ຮຸ່ງອະລຸນ ແດນວິໄລ)

**ໝາຍເຫດ**: ກອນນີ້ໝາຍເອົາຄໍາທໍາອິດທີ່ເປັນຕົວເຂັ້ມ ໃນແຕ່ລະວັກຕໍ່ໃສ່ກັນລົງມາກໍໄດ້ຂໍ້ຄວາມວ່າ: ດາວມີແສງປະດັບຟ້າ, ຫຍ້າມີສີປະດັບດິນ, ຄົນດີມີໃຈປະດັບສັງຄົມ.

### 6) ກອນຜະຫຍາ

ກອນຜະຫຍາແມ່ນກອນຊະນິດໜຶ່ງທີ່ພວກບ່າວສາວສະໄໝບູຮານຄິດຜູກຂຶ້ນເວົ້າໃນທັນທີທັນໃດ ແລະ ເປັນຄໍາເວົ້າປຽບທຽບມີລ່ຽມ ມີຄົມອັນພາໃຫ້ເກີດຄວາມນຶກຄິດ ຫຼື ສະຫຼາດຫຼັກແຫຼມໃນການທີ່ຈະເວົ້າຕອບກັນ. ດັ່ງນັ້ນ ຜະຫຍາຈຶ່ງນັບວ່າເປັນບໍ່ເກີດແຫ່ງປະຕິພານອັນປະກອບດ້ວຍພິບໄຫວ ແລະ ປັນຍາ.

ເນື່ອງຈາກກອນຜະຫຍາເປັນຄໍາທີ່ກ່າວຂຶ້ນທັນທີທັນໃດຕາມປັນຍາທີ່ຄິດໄດ້ໃນເວລານັ້ນ ຍ້ອນແນວນັ້ນ ກອນຜະຫຍາຈຶ່ງບໍ່ມີລະບຽບແນ່ນອນ. ສ່ວນຫຼາຍມັກເປັນກອນປະສົມ ຄືເອົານີ້ແດ່ເອົາພັ້ນແດ່ປະສົມເຂົ້າເປັນກອນຜະຫຍາ. ບາງເທື່ອກໍມີ 2 ວັກ, 3

ວັກ, ບາງເທື່ອກໍມີຄົບ 4 ວັກ ຄືກອນອື່ນໆ ແຕ່ສ່ວນສຳຄັນແມ່ນຕ້ອງມີການສຳຜັດ. ຕົວຢ່າງ:

| | |
|---|---|
| - ເຈົ້າຜູ້ທີ່ງຄຳຜ້າຍ | ບໍ່ໝາຍງອຍຕົ້ນໄມ້ຕ່ຳ |
| ເບັດໃສ່ໄມ້ແກ່ນສູງ | ເບັດໃສ່ຍູງແກ່ນຫຼ້ອນ |
| ເບັດໃສ່ຂອນແກ່ນແຕ້ | ປາຍຄົ້ວຈຶ່ງຄ່ອຍງອຍ. |
| - ນ້ຳຕ້ອງຕາດ | ຄືນ້ອງແກວ່ງຫຼາ |
| ນ້ຳຕ້ອງຜາ | ຄືນ້ອງແກວ່ງອື້ວ |
| ຟ້າຍິກຄົ້ວ | ຄືນ້ອງແກວ່ງແຂນ. |
| - ອ້າຍນີ້ມາເຫັນສິ້ມ | ຢາກກຳເກືອແລ່ນໃສ່ |
| ບາດວ່າມາຮອດໃກ້ | ແນວສິ້ມຜັດຢູ່ສູງ. |

## 7) ກອນແປດ

### (1) ຄວາມໝາຍຂອງກອນແປດ

ກອນແປດ ແມ່ນກອນສຳຜັດນອກແບບໜຶ່ງ ຊຶ່ງແຕ່ລະວັກສ່ວນຫຼາຍມີ 8 ຄຳ ບາງເທື່ອອາດມີ 7 ຫຼື 9 ຄຳ.

ກອນແປດມັກໃຊ້ເຂົ້າໃນການແຕ່ງເພງ.

### (2) ຫຼັກການສຳຜັດຂອງກອນແປດ

ກອນແປດແຕ່ລະວັກມີ 8 ຄຳ ແລະ ມີລັກສະນະການສຳຜັດດັ່ງນີ້:

- ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 3 ຂອງວັກທີ 2.
- ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳສຸດທ້າຍຂອງວັກທີ 3.
- ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 3 ຂອງວັກທີ 4.
- ຄຳສຸດທ້າຍຂອງວັກທີ 4 ສຳຜັດກັບຄຳສຸດທ້າຍຂອງວັກທີ 2 ໃນບາດຕໍ່ໄປ.

ໂຄງຮ່າງກອນແປດ

| | | |
|---|---|---|
| ວັກທີ 1 | ○○○ | ○○○○● |
| ວັກທີ 2 | ○○● | ○○○○⦿ |
| ວັກທີ 3 | ○○○ | ○○○○⦿ |
| ວັກທີ 4 | ○○⦿ | ○○○○● |
| ວັກທີ 1 | ○○○ | ○○○○◎ |
| ວັກທີ 2 | ○○◎ | ○○○○● |

ວັກທີ 3 ○○○ ○○○○●

ວັກທີ 4 ○○● ○○○○

**ໝາຍເຫດ**: ຮູບເຄື່ອງໝາຍທີ່ຄືກັນໝາຍເຖິງສຳຜັດກັນ.

ຕົວຢ່າງ:

| | | |
|---|---|---|
| ວັກທີ 1 | ປາຂາດນ້ຳ | ດິນແຫ້ງແລ້ງເປັນ**ຜົງ** |
| 2 | ຊີວິດ**ຄົງ** | ວອດວາຍທະລາຍດີ້ນ |
| 3 | ຄືນຂາດນ້ຳ | ມ້ວຍມອດຂອດແຜ່ນດິນ |
| 4 | ໂລກຈະສິ້ນ | ຄວາມໂສພາໜ້ານ້ອຍ**ໃຈ** |
| 1 | ມາເຖີດເພື່ອນ | ພ້ອມມາພາກັນສ້າງ |
| 2 | ສອງມືຕ່າງ | ຊ່ວຍຄືນຄວາມສົດ**ໃສ** |
| 3 | ເຈົ້າໜຶ່ງຕົ້ນ | ຂ້ອຍສອງພ້ອມພຽງ**ໃຈ** |
| 4 | ປູກປ່າ**ໃຫ້** | ເປັນດົງຄົງຍືນຍາວ |

ການສຳຜັດຂອງກອນແປດມີ 2 ລັກສະນະ: ສຳຜັດນອກ ແລະ ສຳຜັດໃນ.

**1) ສຳຜັດນອກ** ເປັນການສຳຜັດບັງຄັບທີ່ສິ່ງ ແລະ ທີ່ຮັບສຳຜັດຈາກວັກໜຶ່ງໄປຫາອີກວັກໜຶ່ງໃນບາດດຽວກັນລວມທັງສຳຜັດລະຫວ່າງບາດດ້ວຍກັນ ຖືເປັນການສຳຜັດບັງຄັບສຳລັບກອນແປດ ແຕ່ຕ້ອງເຂົ້າໃຈວ່າສຳຜັດນອກຈະໃຊ້ແຕ່ສຳຜັດສະຫຼະເທົ່ານັ້ນ.

ຕົວຢ່າງ:

| | |
|---|---|
| ພາບຄວາມຫຼັງ | ຍັງຝັງໃນດວງ**ຈິດ** |
| ໂອ! ຊີ**ວິດ** | ຂອງເຮົາຍາກໜັກ**ໜາ** |
| ມາດຽວນີ້ | ສຸກສົມໃນອຸ**ລາ** |
| ການສຶກ**ສາ** | ພາພົ້ນທຸກສຸກໃຈເອີຍ |

**2) ສຳຜັດໃນ** ເປັນການສຳຜັດພາຍໃນວັກ ໃຊ້ທັງສຳຜັດສະຫຼະ ແລະ ສຳຜັດພະຍັນຊະນະ ເພາະສຳຜັດໃນບໍ່ແມ່ນສຳຜັດແບບບັງຄັບ ແຕ່ເປັນການສຳຜັດທີ່ຊ່ວຍໃຫ້ກອນມີຄວາມອອນຊອນຍິ່ງຂຶ້ນ ແລະ ເປັນການສະແດງເຖິງຄວາມສາມາດຂອງຜູ້ແຕ່ງກອນອີກດ້ວຍ.

ຕົວຢ່າງ:

ເປັນນັກ**ຮຽນ** **ພຽນ**ສຶກສາຫາຄວາມຮູ້

| | |
|---|---|
| ຟັງຄວາມ**ຄູ** | **ຜູ້**ເພິ່ນສອນບອກຄວາມດີ |
| ທຸກເວລາ | **ທຸກ**ທີ**ວາ**ທຸກ**ລາ**ຕີ |
| ບໍ່ໃຫ້**ມີ** | ອະ**ວິ**ຊາ**ມາ**ຄອບງຳ |

(ຄັດຈາກ ປຶ້ມແບບຮຽນ ພາສາລາວ ມ.4 ປີ 1998)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງສຳຜັດກັນ.

### (3) ການນຳໃຊ້ກອນແປດເຂົ້າໃນການແຕ່ງເພງ

ການນຳໃຊ້ກອນແປດເຂົ້າໃນການແຕ່ງເພງຄວນເອົາໃຈໃສ່ດັ່ງນີ້:

- ຕ້ອງໃຫ້ມີການສຳຜັດສະຫຼະ (ສຳຜັດນອກ ແລະ ສຳຜັດໃນ).
- ບໍ່ມີກົດບັງຄັບເອກໂທ (x́, x̂) ຄືຄຳປະຈຳບ່ອນຂອງກອນທົ່ວໄປ.
- ຈຳນວນຄຳໃນແຕ່ລະວັກສາມາດເພີ່ມຂຶ້ນ ຫຼື ຫຼຸດລົງໄດ້ຕາມເນື້ອໃນທຳນອງຂອງເພງທີ່ເຮົາຕ້ອງການແຕ່ງ.
- ຄຳທີ່ໃຊ້ເຂົ້າໃນການແຕ່ງເພງຕ້ອງໃຫ້ເຂົ້າໃຈງ່າຍ.
- ສາມາດໃຊ້ສັບພາສາທ້ອງຖິ່ນເຂົ້າໃນບົດເພງໄດ້.

ຕົວຢ່າງ:

**ເພງ "ເຊບັ້ງຫຽງ"**

*ເນື້ອຮ້ອງ ແລະ ທຳນອງໂດຍ ສຸລິວັດ ລັດຕະນະສະຫວັນ*

| | | |
|---|---|---|
| | ຝັ່ງເຊທີ່ເຫັນ | ເປັນຖິ່ນສວຍງາມ |
| | ທົ່ວແດນ ແລະ ແຄວ້ນເຂດຄາມ | ໃສຈະງາມເທົ່າເຊບັ້ງຫຽງ |
| | ນ້ຳໃສຍິ່ງເຫຼືອ | ໝູ່ເຮືອລ່ອງລອຍໄຫຼລ່ຽງ |
| | ຫຼືກຫີນແກ້ງເຊບັ້ງຫຽງ | ພຽງໄດ້ຊົມກໍຍັງສົມໃຈ |
| | ນ້ຳເຊທີ່ໃສ | ໄຫຼເຢັນເຫັນປາ |
| | ລ່ອງລອຍເປັນໝູ່ກັນມາ | ຕາມພາສາແສນສຸກສົດໃສ |
| | ຂ້າມເຊບັ້ງຫຽງ | ກໍມີຂົວງາມກວ້າງໃຫຍ່ |
| | ໄດ້ຊົມແລ້ວແສນສຸດໃຈ | ຫາສິ່ງໃດໃສຈະປຽບປານ |
| R | ໂອນໍ ເຊບັ້ງຫຽງນີ້ເອີຍ | ແສນງາມເກີນຈະປຽບເປີຍ |
| | ສຸດຈະເອີຍ | ຄວາມໝາຍປອງໝັ້ນ |
| | ທຳມະຊາດແຫ່ງນີ້ | ເໝືອນມີມົນຟ້າເສກສັນ |
| | ເໝືອນນ້ຳໄຫຼຈາກສະຫວັນ | ຊວນໃຫ້ຝັນຍາມຊົມສຸກໃຈ |

| | |
|---|---|
| ນ້ຳເຊທີ່ໄຫຼ | ເມື່ອຍາມຝົນນອງ |
| ນ້ຳເຕັມລົ້ນສອງຝັ່ງຄອງ | ຍາມຫຼຽວມອງນ້ຳນອງຫຼັ່ງໄຫຼ |
| ເມື່ອຍາມນ້ຳລົງ | ກໍຄົງເຫຼືອແກ້ງຫີນໄວ້ |
| ທິວທັດປ່າດົງແຫ່ງໃດ | ໃສຈະງາມເທົ່າເຊບັ້ງຫຼຽງ |

## 5.2 ກອນຂັບ ແລະ ກອນລຳ

ຂັບ ແລະ ລຳ ມີຄວາມໝາຍຕ່າງກັນຢູ່ບ່ອນວ່າ:

- ລຳ ຜູ້ຊາຍລຳ ແລະ ຜູ້ຍິງລຳຕອບເປັນທຳນອງສຽງດຽວກັນ. ສຳລັບດົນຕີທີ່ປະກອບເຂົ້າກັບຈັງຫວະສຽງລຳນັ້ນເພິ່ນມັກໃຊ້ແຄນເປັນຫຼັກ.
- ຂັບ ຜູ້ຊາຍຂັບ, ຜູ້ຍິງຂັບຕອບເປັນທຳນອງສຽງຕ່າງກັນ, ສຳລັບດົນຕີທີ່ປະກອບເຂົ້າກັບຈັງຫວະສຽງຂັບນັ້ນເພິ່ນມັກໃຊ້ແຄນ, ປີ່, ຊໍ ຫຼື ກະຈັບປີ່.

### 5.2.1 ກອນຂັບ

ກອນຂັບ ໃຊ້ທັງກອນລຳເຍີ້ນ, ລຳລ່ອງ, ລຳເຕີ້ຍ, ກອນອ່ານທຳມະດາ, ກອນອ່ານວິດຊຸມາລີ, ຄຳຜະຫຍາ ແລະ ຄຳສຸພາສິດ ເຊັ່ນ: ຂັບຊຽງຂວາງ, ຂັບຊຳເໜືອ, ຂັບງື່ມ, ຂັບທຸ້ມຫຼວງພະບາງ ແລະ ອື່ນໆ.

ຕົວຢ່າງ: **ຂັບທຸ້ມ**

| | |
|---|---|
| ແກ້ມເປີ່ນເອີ່ນ | ຊູ້ເພິ່ນໃຫ້ເວີນໄປໄກ |
| ຄັນບໍ່ແມ່ນຊູ້ໃຜ | ໃຫ້ອ້າຍເວີນເຂົ້າມາໃກ້ |
| ນ້ອງນີ້ນາ | ຕາດຳເອີຍບໍ່ມີຄູ່ຊ້ອນ |
| ບໍ່ມີຄູ່ຊ້ອນ | ນອນແລ້ງຢູ່ຜູ້ດຽວ |
| ເກົ້າກ້ຽງ | ອິດສາລ້ຽງນ້ອງໄວ້ໄດ້ບໍ່ |
| ນໍອ້າຍນໍ | ຫຼືອ້າຍຫາກພໍກັນແລ້ວ |
| ເຈົ້າດອກເອີຍ | ເຈົ້າດອກໆເອີຍເຫີ... ເຣີຍ |
| ໄອວ່າເຈົ້າດອກ ລຳໄຍ | ຮັກອ້າຍແມ່ນສຸດໃຈ |
| ເຈົ້າດອກລຳໄຍ | ພວມບານແຍ້ມ |
| ເອີ... ເຣີຍ ເຈົ້າແກ້ມໆ | ມາແກ້ມອ່ອນໆ |
| ຄັນວ່າອ່ອນສີໄພ | ຢ່າໄດ້ໄລລືມນ້ອງ. |

### ຂັບງື່ມ

<...> ໂອນໍນ້ອງເຮີຍ

ພໍແຕ່ເດີກຂ້ອນແຈ້ງ ແສງອາລຸນແຈ້ງສະຫວ່າງ ມາແລ້ວ
ຕ່າງຄົນຕ່າງກໍຈະໄດ້ໄກຂ້າງ ຮາມຮ້າງຫ່າງກັນ ນໍນ້ອງເອີຍ
ນ້ອງນັ້ນເມືອບ້ານນັ້ນ ອ້າຍກໍເມືອບ້ານນີ້ຄົນລະທີ່ທາງທິດ
ຄິດອຸກໃຈນໍານ້ອງ ຊິຫ່າງໄກໄລຮ້າງ
ຫົນທາງຫຼູອເມືອບ້ານ ແສນກັນດານຫຍຸ້ງຍາກ
ລໍາບາກແຕ່ຄິດຮອດນ້ອງ ໄປແລ້ວຊິບໍ່ເຫັນລະນໍ
ນ້ອງຫຼ້າ ແພງຕາອ້າຍເຮີຍ

<...>

(ຄັດຈາກ "ປຶ້ມວັນນະຄະດີລາວ", 1987. ໜ້າ 151)

### ກອນຂັບຊໍາເໜືອ

<...>

ລາກັນເດີນ້ອງ ລາກັນຈ້ອຍໆ ແລ້ວນໍ
ປັ້ນເຂົ້າບ່າຍນໍ້າອ້ອຍ ອອຍໄດ້ກໍບໍ່ຄືນ
ລາກັນແລ້ວ ປານສິ້ນໄກເກືອ ແລ້ວນໍ
ລາກັນແລ້ວ ປານເຮືອໄກຈາກຝັ່ງ
ເໝືອນດັ່ງນໍ້າອ່າງແກ້ວ ລາອ່າງບິນຄໍາ
ໃຫ້ອ້າຍລາເສຍນ້ອງ ບໍ່ມີລາລືມງ່າຍ
ຖ້າໃຫ້ນໍ້າສະໝຸດແຫ້ງ ປານຖ້ວຍແຈ່ວບອງ ຈຶ່ງຄ່ອຍລາ
ຖ້າໃຫ້ນໍ້າຂອງແຫ້ງ ເຫັນຄີປາບູ່ ຈຶ່ງຄ່ອຍລາລືມ ນາງເຮີຍ!...

(ຄັດຈາກ ປຶ້ມພາສາລາວ ຊັ້ນມັດທະຍົມສຶກສາສາ ປີທີ 7, 2016.)

## 5.2.2 ກອນລໍາ

### 1) ຄວາມໝາຍຂອງກອນລໍາ

ກອນລໍາ ແມ່ນກອນທີ່ໝໍລໍາມັກລໍາຕາມປົກກະຕິ ໂດຍໃຊ້ ກາບ, ກອນ ຫຼື ໂຄງ ປະເພດຕ່າງໆ ມາລໍາ.

### 2) ປະເພດຂອງກອນລໍາ

ກອນລໍາແບ່ງອອກເປັນຫຼາຍປະເພດ ຄື: ລໍາຕັດ, ລໍາເຍີ້ນ, ລໍາລ່ອງ ແລະ ລໍາ

ເຕີ້ຍ. ນອກຈາກນີ້, ຍັງມີລຳທ້ອງຖິ່ນອີກ ເຊັ່ນ: ລຳມະຫາໄຊ, ລຳຜູ້ໄທ, ລຳຕັ່ງຫວາຍ, ລຳຄອນສະຫວັນ, ລຳບ້ານຊອກ, ລຳສາລະວັນ, ລຳສີພັນດອນ, ລຳໂສມ ແລະ ອື່ນໆ.

### (1) ລຳຕັດ

ລຳຕັດ ແມ່ນກອນລຳທີ່ເປັນຄືກາບ ບໍ່ຖືກຕາມຫຼັກການເນື່ອງສຽງຂອງ ເອກໂທ, ບໍ່ຈັດເປັນຕອນ 4 ວັກຄືກັບກອນອ່ານທຳມະດາ ແຕ່ຕ່າງຈາກກາບຢູ່ບ່ອນວ່າ ມີຄຳບຸບພະບົດ ແລະ ຄຳສ້ອຍ. ຕາມປົກກະຕິກອນລຳຕັດມີ 7 ຄຳ ເຖິງ 13 ຄຳ, ມີການສຳຜັດໃນ ແລະ ນອກ ຕິດຕໍ່ກັນໄປຈົນສຸດເລື່ອງ.

ຕົວຢ່າງ: **ກອນລຳຕັດ**

| | | |
|---|---|---|
| | ຟັງເນີເຈົ້າ | ເບົ້າລ່ຽນອິນຊຽນ |
| | ພີ່ມາວຽນ | ຈົນທາງເປັນໂສກ |
| | ຫຼຽວຂ້າມໂຄກ | ຈົນຫົວເຂົ່າຄອນ |
| ເພາະຢາກ | ໄດ້ບັງອອນ | ມານອນຊ້ອນຄູ່ |
| ໃຈພີ່ | ໄກວຄືອູ່ | ໂຕ້ນເຕັ້ນໄປມາ |
| ນ້ອງຊິ | ບໍ່ໂສດາ | ສາລີສໍ່າອ້າຍ |
| ເຫັນວ່າ | ພີ່ຜູ້ຮ້າຍ | ກາຍກໍ່າດຳຜອມ |
| ຊິບໍ່ | ຢາກຖະໜອມ | ຄຽງກາຍໝາຍຮ່ອມ |
| | ບໍ່ຢາກຮ່ອມ | ອາບນ້ຳວັງດຽວ |
| | ບໍ່ໝາຍຫຼຽວ | ທາງດຽວຮ່ອມເສັ້ນ |
| ຫຼືວ່າ | ນາງຊິເວັ້ນ | ການຮ່ອມສິງສານ |
| ຊິໄປ | ນິລະພານ | ໂສດາຟ້າລ່ວງ |
| | ຕັດຂາດຫ່ວງ | ກິເລດຕັນຫາ |
| ຊິບໍ່ | ປາຖະໜາ | ນຳຊາຍແດ່ບໍ້ |
| ພີ່ນີ້ | ມາຄິດຕໍ່ | ນຳນ້ອງຄືນງາມ. |

(ຄັດຈາກ "ໄວຍາກອນລາວ ພາກສັນທະລັກສະນະ" ຂອງ ລາຊະບັນດິດສະພາລາວ, 1973. ໜ້າ 22-23)

### (2) ລຳເຍີ້ນ

ລຳເຍີ້ນ ແມ່ນກອນລຳທີ່ມີລັກສະນະຄືກັນກັບກອນອ່ານ ຊຶ່ງຕ້ອງແຕ່ງໃຫ້ຄົບ 4 ວັກ, ໃຊ້ຄຳເອກໂທໃຫ້ຄົບຕາມຫຼັກການ, ຕື່ມຄຳບຸບພະບົດ ແລະ ຄຳສ້ອຍເພື່ອໃຫ້ຄວາມໝາຍແຈ້ງຂຶ້ນຕື່ມອີກ, ໃຊ້ສຳຜັດນອກ ແລະ ສຳຜັດໃນຕິດຕໍ່ກັນເລື້ອຍໆໄປຈົນສຸດກອນ.

ກອນລຳເຍີ້ນສ່ວນຫຼາຍບາດທຳອິດຈະຂຶ້ນຕົ້ນດ້ວຍວັກທີ 3, ບາດຕໍ່ໄປຈຶ່ງເຕັມ 4 ວັກ.

ກອນເຍີ້ນມີຕັ້ງແຕ່ 7 ຄຳຂຶ້ນໄປເຖິງ 13 ຄຳ.

ຕົວຢ່າງ: ກອນລຳເຍີ້ນ

| | |
|---|---|
| ມາເຫັນໜ້າ | ສາຍຕາຟ້າລ່ວງ |
| ເຈົ້າຜູ້ງາມຍອດດ້ວງ | ຄີງສ້ອຍເກິ່ງສວຍ |
| ຫຼຽວເບິ່ງນິ້ວແລບສ້ອຍ | ງາມສິ່ງຫຍູນສິງ |
| ນີ້ລະນໍແນວຍິງ | ໜໍ່ພະອິນອິງຍ້ອງ |
| ຄໍກົມປ້ອງ | ສອງຕາໄຫຼເລື່ອນ |
| ພໍປານຊຽນຂີດໄວ້ | ໃນແປ້ນແຜ່ນທອງ <...> |

### (3) ລຳລ່ອງ

ລຳລ່ອງ ແມ່ນນິຍົມໃຊ້ກອນເຍີ້ນໃນການລຳ. ສ່ວນຫຼັກການແຕ່ງກອນລຳລ່ອງກໍໃຫ້ປະຕິບັດຕາມຫຼັກການແຕ່ງກອນເຍີ້ນ.

ຕົວຢ່າງ: **ກອນກ້ຽວສາວແບບໃໝ່**

| | |
|---|---|
| ມື້ນີ້ ອ້າຍໄດ້ມາເຫັນນ້ອງ | ທອງສະຫວັນຮູບຫຼໍ່ |
| ຄິດຢາກຂໍປາກເວົ້າ | ນຳນ້ອງໃຫ້ສ່ວາງວອນ |
| ທຸກມື້ນີ້ ອີກພີ່ຄັດເຄັ່ງຮ້ອນ | ເອົ້າອັ່ງມະໂນໃນ |
| ໃຈພີ່ເພພັງຫັກ | ວຸ່ນວາຍທະລາຍມ້າງ |
| ເພາະວ່າເນົານອນສ້າງ | ປາງທອງບໍ່ມີຄູ່ |
| ຫຼາຍລະດູໂສກເສົ້າ | ເຫງົາເລື້ອຍຢູ່ບໍ່ວາຍ |
| ອ້າຍຈັ່ງເລາະລຽບຕ້າຍ | ຂ້າມປ່າພະນອມໝາ |
| ມາຊອກຫານາງຄານ | ນາດທະແພງພິມແກ້ວ |
| ກໍຫາກຫຼາຍວັນແລ້ວ | ລະດູເດືອນລ້ຳລ່ວງ |

ປ່ວງສະເລຢູ່ເລື້ອຍ ບໍ່ເຫັນນ້ອງຢູ່ທີ່ໃດ <...>

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ, 1967. ໜ້າ 234)

ກອນຕັດ, ກອນເຍີ້ນ ແລະ ກອນລ່ອງ ກ່ອນຈະລຳແມ່ນມີຄວາມຂຶ້ນຕົ້ນສະເໝີ ແລະ ເມື່ອລຳຈົບແລ້ວກໍມີຄວາມລົງທ້າຍທຸກໆເທື່ອ.

ຕົວຢ່າງ: **ຄວາມຂຶ້ນຕົ້ນ ລຳຕັດ ແລະ ລຳເຍີ້ນ**

1) ຄົນເອີຍຄົນ ຄົນຊົ່ວເຂົາຕິ ຄົນດີເຂົາແພງ
ຄົນແຂງແຮງໃຈເດັດ ເຮັດອັນໃດບໍ່ວາງປະ
ມີມານະອົດທົນ ເຝິກຝົນໃຫ້ພຽງພໍ
ຈຶ່ງຊິພໍ້ບ່ອນ ຈະເລີນໄດ້...

2) ທຳເອີຍທຳມະ ຍ່ອມຊະນະອະທຳ
ໝົດທຸກຄຳທຳສອນ ລ້ວນແຕ່ຂອງດີໆ
ແຕ່ວ່າມັນບໍ່ມີ ຜູ້ຈິງໃຈເຮັດນຳ
ພວກພີ່ນ້ອງຄວນຮ່ຳ ຄະນຶງໄວ້!

3) ແມ່ອ່ອນຕ່ອນ ສວນກ້ວຍທະນີຫວານ
ແມ່ນນ້ອງກິນທານຫຍັງ ນ້ອງຈັ່ງຜູ້ງາມປານນີ້.

ຕົວຢ່າງ: **ຄວາມລົງທ້າຍ**

1) ສົມຄະເນເຄຄວນ ອ້າຍຊິສ່ວນລົງທໍ່ນີ້ແລ້ວ
2) ອີ່ແມ່ສີຈຳປາ ອ້າຍແມ່ນຊິລາພະນາງໄວ້
3) ສົມຄວນພໍເອົາ ຊິຮ້າງນ້ອງເປົ່າໆທໍ່ນີ້ແລ້ວ.

ຕົວຢ່າງ: **ຄວາມຂຶ້ນຕົ້ນ ສຳລັບລຳລ່ອງ**

1) ຟ້າເອີຍ ຟ້າຮ້ອງຄ່ອຍ ຄຶດເຫັນບ່ອນເຮັດນາແຊງ
ຟ້າເອີຍ ຟ້າຮ້ອງແຮງ ຄຶດເຫັນຄາວເຮັດນາຕ່າວ
ບາດຟ້າ ຮ້ອງຢ່າວໆ ນາປີມາຮອດໃກ້
ໃຫ້ກຽມໄວ້ ຄູ່ຊູຄົນ...ເດີ

2) ຟ້າເອີຍ! ຟ້າຮ້ອງຂາດຈ່າງປາງ ຟ້າຮ້ອງຂາດຈ່າງປ່າງ
ຟ້າຮ້ອງບາດທ່າງໆ ສຽງນວນໆເອີ້ນສັ່ງອ້າຍ
ໃຈກ້າ ແກ່ນແຂງ ເພິງແພງເຮີຍ.

ຕົວຢ່າງ: **ຄຳລົງທ້າຍສຳລັບລຳລ່ອງ**

ສຳລັບຄຳລົງທ້າຍຂອງກອນລຳລ່ອງນີ້ ແມ່ນເພິ່ນມັກໃຊ້ແຕ່ຄຳດຽວຄື "ໂອ" ທີ່ນັ້ນກໍພໍ.

### (4) ລຳເຕີ້ຍ

ລຳເຕີ້ຍ ມີລັກສະນະຄືກັນກັບລຳເຍີ້ນ, ມີຄຳເອກ, ຄຳໂທ, ມີຄຳບຸບພະບົດ ແລະ ຄຳສ້ອຍ. ຫຼັກການສຳຜັດ ແລະ ຈຳນວນຄຳກໍຄືກັບກອນເຍີ້ນ ແຕ່ກອນເຕີ້ຍມັກໃຊ້ເປັນຄູ່ຊາຍ-ຍິງ. ເມື່ອຝ່າຍຊາຍລຳແລ້ວກໍສົ່ງໃຫ້ຝ່າຍຍິງທີ່ເປັນຄູ່ລຳຕອບ.

ຕົວຢ່າງ: **ລຳເຕີ້ຍທຳມະດາ**

ຊາຍ: ໂອ້ລະແມ່ນນໍນາງ

| | |
|---|---|
| ໝົດທີ່ລຳທາງສັ້ນ | ຫັນລົງມາທາງລ່ອງ |
| ສອງຄົນເຮົາພີ່ນ້ອງ | ລອງລຳເຕີ້ຍເອີ່ຍໃສ່ກັນ |
| ເຊີນລະແມ່ນ້ອງນັ້ນ | ສັງຊິນັ່ງເມີນເສີຍ |
| ອິດມາເລີຍນຳກັນ | ອ່ອນແອນແພນຟ້ອນ |
| ດີໃຈມາເຫັນກ້ອນ | ກຳລັງລາວກ້າແກ່ນ |
| ສາມັກຄີແໜ້ນແຟ້ນ | ຟັນຂ້າໝູ່ມານ |
| ນັ້ນລະນານາງນ່າ | ທາງຕາຊອນແລເອີຍ. |

ຍິງ: ໂອ້ລະແມ່ນນໍຊາຍ

| | |
|---|---|
| ຄັນອ້າຍເວົ້າຈັ່ງຊັ້ນ | ນ້ອງກໍແມ່ນຍິນດີ |
| ນ້ອງບໍ່ມີຄຳເຄີຍ | ອ່ອນແຂນແພນຟ້ອນ |
| ແຕ່ວ່າອອນຊອນດ້ວຍ | ດອມຊາຍຜູ້ສະຫຼາດ |
| ນ້ອງຂໍຕາມບາດອ້າຍ | ຮຽນໃຫ້ຄ່ອງເຄີຍ |
| ນັ້ນລະນາຊາຍນ່າ | ທອມມາລາລົມຕ້ອງ |

(ຄັດຈາກ "ໄວຍາກອນລາວ" ຂອງ ທ່ານພູມີ ວົງວິຈິດ,1967. ໜ້າ 244-245)

## 6. ວິທີແຕ່ງກອນ

ການແຕ່ງກອນແຕ່ລະປະເພດບໍ່ຄືກັນ, ບາງປະເພດກໍຈະປະຕິບັດຕາມຫຼັກການເນື່ອງສຽງຂອງຫຼັກຄຳປະຈຳບ່ອນເອກໂທຢ່າງເຄັ່ງຄັດ ແຕ່ບາງປະເພດກໍບໍ່ເປັນໄປຕາມຫຼັກການເນື່ອງສຽງ ແຕ່ອີງໃສ່ຫຼັກການສຳຜັດເປັນຫຼັກ.

ໃນການແຕ່ງກອນເພິ່ນຫຼີກເວັ້ນການໃຊ້ຄຳຕາຍລົງໃນບ່ອນທີ່ເປັນຄຳສຳຜັດທີ່ສຳຄັນເປັນ

ຕົ້ນແມ່ນໃນຄຳທ້າຍຂອງວັກ ເພາະວ່າການສຳຜັດຄຳຕາຍຈະບໍ່ມ່ວນທໍ່ສຳຜັດຄຳເປັນ ເມື່ອບໍ່ສາມາດໃຊ້ຄຳເປັນແທ້ໆເພິ່ນຈຶ່ງໃຊ້ຄຳຕາຍໃສ່ໃນບ່ອນສຳຜັດສຳຄັນດັ່ງກ່າວນັ້ນ ແລະ ກໍເອົາໃຈໃສ່ສຽງເອກໂທ ປະຈຳບ່ອນໃຫ້ຖືກຕ້ອງຕາມຫຼັກການ.

## 7. ວິທີອ່ານ ຫຼື ນຳໃຊ້ກອນ

ການອ່ານບົດກອນຕ້ອງອ່ານເປັນຈັງຫວະ ແລະ ທຳນອງ ໂດຍມີການເນື່ອງສຽງຕາມລັກສະນະການສຳຜັດຂອງກອນແຕ່ລະປະເພດ. ການອ່ານກອນສິ່ງສຳຄັນ ແມ່ນເພື່ອໃຫ້ເກີດມີຄວາມເພີດເພີນ ແລະ ອອນຊອນກັບຈັງຫວະທຳນອງຂອງບົດ, ເກີດຄວາມປະທັບໃຈໃນຄວາມງາມຂອງພາສາ. ການອ່ານກອນຍັງໃຫ້ຄຳນຶງເຖິງອາລົມຈິດ, ຄວາມຮູ້ສຶກຂອງຜູ້ແຕ່ງທີ່ສະແດງອອກຜ່ານບົດກອນນັ້ນໆ.

ການອ່ານຈະມ່ວນໄດ້ນັ້ນ ຕ້ອງຮູ້ຈັກລັກສະນະຂອງບົດກອນແຕ່ລະປະເພດວ່າມີການຈັດວັກຕອນ ການສຳຜັດແນວໃດ. ພ້ອມກັນນັ້ນ ກໍຕ້ອງຮູ້ຈັກໃຊ້ສຽງໃຫ້ເໝາະສົມກັບເນື້ອໃນຂອງບົດ.

ກອນນອກຈາກໃຊ້ອ່ານແລ້ວ ຍັງສາມາດນຳໄປໃຊ້ເຂົ້າໃນການຂັບ-ລຳເປັນຕົ້ນວ່າ ລຳຕັດ, ລຳເຍີ້ນ, ລຳລ່ອງ ແລະ ລຳເຕີ້ຍ. ພ້ອມກັນນັ້ນ ກອນແປດກໍສາມາດນຳ ໃຊ້ເຂົ້າໃນການແຕ່ງເພງ.

❖ **ກອນແບບໃໝ່**

ການແຕ່ງກອນແບບມູນເຊື້ອ ແມ່ນການແຕ່ງທີ່ປະຕິບັດຕາມ ຫຼັກການເນື່ອງສຽງໃນກອນຢ່າງເຄັ່ງຄັດ, ບົດກອນປະກອບມີ ຕອນ, ວັກ, ເຟື້ອງ ແລະ ບາດ, ມີຄຳບຸບພະບົດ ແລະ ຄຳສ້ອຍ; ມີການສຳຜັດຕາມຫຼັກການແຕ່ງກາບກອນ ເຊັ່ນ: ສຳຜັດນອກ ແລະ ສຳຜັດໃນ ທີ່ຈະເອົາມາວາງສຳຜັດກັນຕ້ອງໃຫ້ຖືກຕາມສຽງກາງ, ສຽງເອກ ແລະ ສຽງໂທ. ການສຳຜັດມີສຳຜັດສະຫຼະ ແລະ ພະຍັນຊະນະ.

ນອກຈາກການແຕ່ງກອນແບບມູນເຊື້ອແລ້ວ ປັດຈຸບັນຍັງມີການແຕ່ງກອນແບບໃໝ່ ທີ່ບໍ່ໄປຕາມຫຼັກການເນື່ອງສຽງຂອງຮູບແບບກອນມູນເຊື້ອ ແຕ່ຈັດວາງຄຳ ແລະ ມີສຳຜັດກັນຕາມຈິນຕະນາການ ແລະ ອາລົມຈິດຂອງນັກກະວີ.

ຕົວຢ່າງ:

1. ໂອນັກປະຕິວັດ
   ວິລະຊົນຜູ້ເກັ່ງກ້າ

ເສຍສະຫຼະເພື່ອຊາດ-ສັງຄົມນິຍົມເອີຍ!
ແມ່ນວ່າເຈົ້າຈະສິ້ນຊີບສະຫຼາຍໄປ
ໃນແປວໄຟສົງຄາມຮຸກຮານອັນປ່າເຖື່ອນໂຫດຫ້ຽມ
ຄຸນງາມຄວາມດີ
ແລະ ວິລະກຳອັນປະເສີດເລີດລ້ຳຂອງເຈົ້າ
ຍັງດັງກ້ອງ ຫອມຫວນຢູ່ນຳເຍົາວະຊົນຜູ້ເກີດໃໝ່
ຈະສືບທອດມູນເຊື້ອອັນພິລະອາດຫານເກັ່ງກ້າ
ຈະແບກຫາບພາລະປົກປັກຮັກສາ
ແລະ ສ້າງສາປະເທດຊາດສັງຄົມນິຍົມຢ່າງເຂັ້ມແຂງ
( ທອງຄຳ ອ່ອນມະນີສອນ)

## 2. ຍ້ອນຮັກ

ຍ້ອນຄວາມຮັກ ຟັກຟູມໃຈແຕ່ນີ້ເກີດ
ແສນປະເສີດ ຖືກຳເນີດໃນຜືງຮັກຂອງພໍ່ແມ່
ໃນອ້ອມກອດ ແຫ່ງຄວາມເອື້ອເຟື້ອເພື່ອແຜ່
ການດູແລ ຂອງຍາດຕິພີ່ນ້ອງເຜົ່າພົງພັນ
ເຮົາຂວ້າມ-ຄານ-ຍືນຕັ້ງໄຂ່
ຖືກຈູງແຂນ ຍ່າງກ້າວໄປ
ເຮົາເຕີບໃຫຍ່ໃນຄວາມຮັກ - ຮັກໂດຍທຳມະຊາດ
ຮັກໂດຍມວນມະນຸດຊາດ ຮັກດັ່ງຟ້າຮັກແຜ່ນດິນ

**ໜາວຮັກ**

ໜາວກາຍໃຫ້ຄິດຮອດ ເດັກນ້ອຍ-ໃຫຍ່ຊາວພູດອຍ
ໜາວໃຈໃຫ້ຄິດເຖິງ ເພິ່ງຫຍ້າຄາ ຝາໄມ້ເຮ້ຍ
ໜາວກາຍຝັນເຖິງຜ້າ ເສື້ອກັນໜາວ ຟາຜືນໃຫຍ່
ໜາວກາຍໃຈ ໄຮ້ຮັກຕຸ້ມ
ເປັນຊຸມຊົນດ້ອຍໂອກາດ
ບໍ່ອາດເປັນອຳນາດ “ໜວກ-ບອດ-ໃບ້”
ພວກ “ແຖນໄທ້” ໄຮ້ມະນຸດສະທຳ!

**ໄຟຮັກ**

ຈຸດໝັດໄຟ ແຕກປະກາຍໃນຄວາມມືດ
ເປັນທີ່ງຫ້ອຍ ປ່ອຍແສງສີຄວາມຮັກໄຄ່
ຈຸດທຽນໄຂ ໃຫ້ແສງຮຸ່ງພຸ່ງກະຈາຍ
ຈຸດກອງໄຟ ຟືນກອງໃຫຍ່ໃຫ້ເປັນແປວ
ເປັນແປວໄຟ ຮ້ອນແຮງແຫ່ງຄວາມຮັກ
ຮັກຊີວະນານາພັນ!
ຮັກມະນຸດທຸກເຜົ່າພັນ!
ຮັກໂລກແລະຈັກກະວານ!
ດຸດດັ່ງແສງຕາວັນ
ກໍານັນຮັກຮ້ອນຮຸ່ມ ຕຸ້ມໂລກາ.

(ຄັດຈາກປຶ້ມ "ເປືອຍຫົວໃຈໃຫ້ໜຸ່ມສາວ" ຂອງ ສະຫາຍໄຟ)



# III. ວ່າດ້ວຍໂຄງ

## 1. ຄວາມໝາຍຂອງໂຄງ

ໂຄງ ແມ່ນກະວີປະເພດໜຶ່ງທີ່ມີການສຳຜັດໃຫ້ເປັນຄຳເວົ້າຕໍ່ເນື່ອງກັນ, ແຕ່ບໍ່ມີຄຳບຸບພະບົດ, ຄຳສ້ອຍ ແລະ ບໍ່ມີການກຳນົດຕາມຫຼັກການເນື່ອງສຽງຂອງເອກໂທ. ສະເພາະໂຄງ 5 ແລະ ໂຄງ 7 ແມ່ນມີຫຼັກການເນື່ອງສຽງຂອງເອກໂທ.

## 2. ສ່ວນປະກອບຂອງໂຄງ

ສ່ວນປະກອບຂອງໂຄງມີ: ຄຳ, ວັກ ແລະ ບົດ. ຄຳໃນແຕ່ລະວັກຂຶ້ນກັບຊະນິດຂອງໂຄງ ເຊັ່ນ: ໂຄງ 2 ວັກໜຶ່ງມີ 2 ຄຳ, ໂຄງ 3 ວັກໜຶ່ງມີ 3 ຄຳ, ໂຄງ 4 ວັກໜຶ່ງມີ 4 ຄຳ, ໂຄງ 5 ວັກໜຶ່ງມີ 5 ຄຳ, ໂຄງ 6 ວັກໜຶ່ງມີ 6 ຄຳ, ສ່ວນໂຄງ 7 ວັກໜຶ່ງມີ 7 ຄຳ ສຳລັບວັກທີ 4 ມີ 9 ຄຳ.

ພິເສດ ໂຄງ 5 ແລະ ໂຄງ 7 ປະກອບມີ: ຄຳ, ຕອນ, ວັກ, ບາດ ແລະ ບົດ.

## 3. ຫຼັກການສຳຜັດຂອງໂຄງ

ການສຳຜັດໃນໂຄງມີທັງສຳຜັດໃນ ແລະ ສຳຜັດນອກ ໂດຍທົ່ວໄປແລ້ວ ແມ່ນສຳຜັດນອກເປັນຫຼັກ ຂຶ້ນຢູ່ກັບແຕ່ລະຊະນິດຂອງໂຄງ ດັ່ງລຸ່ມນີ້:

### 1) ໂຄງ 2

ໂຄງ 2 ແຕ່ລະວັກມີ 2 ຄຳ ຄຳສຸດທ້າຍຂອງວັກເທິງສຳຜັດກັບຄຳທີໜຶ່ງຂອງວັກຕໍ່ໄປ, ສຳຜັດກັນແບບນີ້ໄປເລື້ອຍໆຈົນສຸດບົດ ດັ່ງໂຄງຮ່າງລຸ່ມນີ້:



ຕົວຢ່າງ: ໂສກໂຕສັດ

ຊິກົ້ງກ

ຖົ້ກ**ກອງນ**

**ໜຽນ**ແອ່ນ

ແບ່ນ**ໂຕ**

**ໂສ**ພາບ

ນາບ**ຟານ**

**ທານ**ນ້ຳ

ຊ້ຳໂກນ

(ມີຄວາມໝາຍວ່າ: ຊ້າງ, ງົວ, ຄຸດ, ແມວ, ລາຊະສີ, ເສືອ, ນາກ ໝູ)

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

## 2) ໂຄງ 3

ໂຄງ 3 ແຕ່ລະວັກມີ 3 ຄຳ ຄຳສຸດທ້າຍຂອງວັກເທິງສຳຜັດກັບຄຳທີໜຶ່ງຂອງວັກຕໍ່ໄປ, ສຳຜັດກັນແບບນີ້ໄປເລື້ອຍໆຈົນສຸດບົດ ດັ່ງໂຄງຮ່າງລຸ່ມນີ້:

○ ○ ●

● ○ ⦿

⦿ ○ ◎

◎ ○ ⭘

⭘ ○ ○

ຕົວຢ່າງ: **ໂສກໜ້າກອງ**

ສີຊົມຊື່ນ

ຮື່ນເມືອງ**ພົມ**

**ສົມ**ຢູ່ສ້າງ

ມ້າງສັງ**ໂຄ**

**ໂພ**ທີສັດ

ວັດພະ**ເຈົ້າ**

**ເຕົ້າ**ໂຮມພົນ

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

## 3) ໂຄງ 4

ໂຄງ 4 ແຕ່ລະວັກມີ 4 ຄຳ ຄຳສຸດທ້າຍຂອງວັກເທິງສຳຜັດກັບຄຳທີໜຶ່ງ ຫຼື ທີສອງ ຂອງວັກຕໍ່ໄປ, ສຳຜັດກັນແບບນີ້ໄປເລື້ອຍໆຈົນສຸດບົດ ດັ່ງໂຄງຮ່າງລຸ່ມນີ້:

○ ○ ○ ●

● ● ○ ⦿

⦿ ⦿ ○ ◎

◎ ◎ ○ ⭘

⭘ ⭘ ○ ○

ຕົວຢ່າງ: **ໂສກໝໍ້ໜຶ້ງ**

ໝໍ້ໜຶ້ງໝໍ້<u>ແກງ</u>

ໝໍ້<u>ແລງ</u>ໝໍ້**ງາຍ**

ເຈົ້າ**ຕາຍ**ລ້າງ<u>ທ່າ</u>

ຖືກ<u>ບ້າ</u>ເສຍ**ຂອງ**

**ຂອງ**ເສຍຜັດ<u>ໄດ້</u>

ຜູ້<u>ຮ້າຍ</u>ເປັນດີ

**ໝາຍເຫດ**: ຄຳທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄຳທີ່ສຳຜັດກັນ.

### 4) ໂຄງ 5

ໂຄງ 5 ແຕ່ລະວັກມີ 5 ຄຳ, ໂຮມສີ່ວັກເປັນໜຶ່ງບາດ ສ່ວນຄຳເອກ ໂທນັ້ນບໍ່ແນ່ນອນ ສ່ວນຫຼາຍໃນໂຄງບົດໜຶ່ງໃຫ້ໃສ່ໄມ້ເອກ 4 ຄຳ, ໂທ 2 ຄຳ ແລະ ບາງເທື່ອກໍປ່ຽນບ່ອນກັນໄດ້.

**ການສຳຜັດໃນໂຄງ 5**

- ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 1, 2, 3 ຂອງວັກທີ 3.
- ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳທີ 1, 2, 3 ຂອງວັກທີ 4.
- ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 1, 2, 3 ຂອງວັກທີ 1 ໃນບາດຕໍ່ໄປ.

ຄຳສຸດທ້າຍຂອງວັກທີ 4 ສຳຜັດກັບຄຳທີ 1, 2, 3 ຂອງວັກທີ 2 ໃນບາດຕໍ່ໄປ ສຳຜັດກັນແບບນີ້ໄປເລື້ອຍໆຈົນສຸດບົດ ດັ່ງໂຄງຮ່າງລຸ່ມນີ້:

1 ○້ ○ ○່    ○ ●

○ ○ ○    ○ ⊙້

○ ● ●    ○ ◎້

○ ⊙້ ⊙່    ○ ⭘

2 ○້ ◎ ◎່    ○ ⊙

○ ⭘ ⭘    ○ ⊘້

○ ⊙ ⊙ ○ ○້

○້ ⦸ ⦸ ○ ○

ຕົວຢ່າງ:

<…>

ເປັນດັ່ງ ທ້າງແຮ້ວຖືກ ຕີນສານ ແລນໍ

ພາຍສານຊັກ ເຊືອກ**ແຮ້ວ**

ເບົ່ານານຂາດ ເປັນບັ້ນ

ແຄ້ວ**ແຄ້ວ**ກ່າວ ຄໍາເມືອ

ຟ້າຂັ້ນທ່ອນ ເປັນດິນ

ເປັນດິນເດຍ ດາດ**ຫຍ້າ**

ນົກຍູງບິນ ສູ່ໄມ້

ໄມ້ກໍ ໄມ້ລໍາ**ໜ້າ** ຍອດສູງ

<…>

(ທ້າວຮຸ່ງ-ທ້າວເຈືອງ)

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄໍາທີ່ສໍາຜັດກັນ.

ເວລາແຕ່ງໂຄງຕົວຈິງຖ້າວາງຄໍາຖືກຕາມຫຼັກຄໍາປະຈໍາບ່ອນກໍຈະເຮັດໃຫ້ມ່ວນດີ, ຖ້າຊອກຫາຄໍາຕາມຫຼັກຄໍາປະຈໍາບ່ອນບໍ່ໄດ້ແທ້ໆອາດຈະເອົາຄໍາເອກປ່ຽນຄໍາໂທ ຫຼື ເອົາຄໍາໂທປ່ຽນຄໍາເອກ ສ່ວນຄໍາກາງໃຊ້ຄໍາເອກ ຫຼື ຄໍາໂທແທນກໍໄດ້.

### 5) ໂຄງ 6

ໂຄງ 6 ແຕ່ລະວັກມີ 6 ຄໍາ ຄໍາສຸດທ້າຍຂອງວັກເທິງສໍາຜັດກັບຄໍາທີ 3 ຫຼື ຄໍາທີ 4 ຂອງວັກຕໍ່ໄປ ສໍາຜັດກັນແບບນີ້ໄປເລື້ອຍໆຈົນສຸດບົດ ດັ່ງໂຄງຮ່າງລຸ່ມນີ້:

○ ○ ○ ○ ○ ●

○ ○ ● ● ○ ◉

○ ○ ◉ ◉ ○ ⭘

○ ○ ⭘ ⭘ ○ ◎

○ ○ ◎ ◎ ○ ○

ຕົວຢ່າງ: **ໂສກເຄື່ອງປູກຕາມວັນ**

| | |
|---|---|
| ຫົດເປັນຮາກເຫງົ້າ | ຫົວດີ |
| ຈັນເຄືອຍາວຮີ | ບໍ່**ມົ້ວ** |
| ຄານເປັນ**ພົ້ວ**ໝາກ | ດົກໜາ |
| ພຸດມີມາລາ | ບໍ່ເສົ້າ |
| ພະຫັດໝາກແຕ່ເຄົ້າ | ເຖິງ**ປາຍ** |
| ສຸກເປືອກໝາ**ຫຼາຍ** | ສຸດຍິ່ງ |
| ເສົາມີກ້ານກິ່ງ | ລໍາງາມ |

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄໍາທີ່ສໍາຜັດກັນ.

### 6) ໂຄງ 7 (ໂຄງສຸພາບ) ຫຼື ມະຫາສິນທຸມາລີ ມີລັກສະນະດັ່ງນີ້:

(1) ບົດໂຄງໜຶ່ງ ກໍານົດໃຫ້ແຕ່ງເປັນ 4 ວັກ, ວັກທີ 1, 2, 3 ມີວັກລະ 7 ຄໍາ, ສ່ວນວັກທີ 4 ມີ 9 ຄໍາ. ວັກທີ 1 ແລະ ທີ 3 ອາດຈະຕື່ມຄໍາສ້ອຍໃສ່ 2 ຄໍາກໍໄດ້.

(2) ໂຄງຊະນິດນີ້ມີຫຼັກການເນື່ອງສຽງເອກໂທປະຈໍາຕາມແຕ່ລະບ່ອນ.

(3) ໂຄງຊະນິດນີ້ມີຫຼັກການສໍາຜັດນອກ ຄື:

- ຄໍາສຸດທ້າຍຂອງວັກທີ 1 ສໍາຜັດກັບຄໍາທີ 5 ຂອງວັກທີ 2 ແລະ ຄໍາທີ 5 ຂອງວັກທີ 3.
- ຄໍາສຸດທ້າຍຂອງວັກທີ 2 ສໍາຜັດກັບຄໍາທີ 5 ຂອງວັກທີ 4, ດັ່ງໂຄງຮ່າງລຸ່ມນີ້:

| | | |
|---|---|---|
| ○ ○ ○ ○່ ○້ | ○ ● | (○ ○) |
| ○ ○່ ○ ○ ● | ○່ ◎້ | |
| ○ ○ ○່ ○ ● | ○ ○່ | (○ ○) |
| ○ ○່ ○ ○ ◎້ | ○່ ○້ ○ ○ | |

ຕົວຢ່າງ:

| | |
|---|---|
| ເພື່ອນກິນສິ້ນຊຸບແລ້ວ | ແໜງໜີ |
| ຫາງ່າຍຫຼາຍໝື່ນມີ | ມາກ**ໄດ້** |
| ເພື່ອນຕາຍຖ່າຍແທນຊີ | ວາວາດ (ເຮົານັ້ນ) |
| ຫາຍາກຍາກຊິ**ໄດ້** | ຍາກແທ້ຈັກມີ |

**ໝາຍເຫດ**: ຄໍາທີ່ເປັນຕົວເຂັ້ມ ຫຼື ຂີດກ້ອງໝາຍເຖິງຄໍາທີ່ສໍາຜັດກັນ, ຄໍາໃນວົງເລັບໝາຍເຖິງຄໍາສ້ອຍ.

## 4. ຊະນິດຂອງໂຄງ

ຄຳໂຄງຂອງລາວມີຫຼາຍຊະນິດ ຊຶ່ງກຳນົດຊື່ເອີ້ນຕາມຈຳນວນຄຳທີ່ປະກອບໃນວັກໜຶ່ງໆ ໄດ້ແກ່ ໂຄງສອງ, ໂຄງສາມ, ໂຄງສີ່, ໂຄງຫ້າ, ໂຄງຫົກ ແລະ ໂຄງເຈັດ.

ຕົວຢ່າງ:

1) **ໂຄງສອງ**: ໂສກຄັນເບັດ

ປ້ອງປາ

ມາເປົ່າ

ເນົ່າຊານ

ຄານຫັກ

ຜັກເໝືອດ

ເລືອດແດງ

ແກງສົ້ມ

ຕົ້ມຫົວ

ແມ່ຄົວກົ້ນຫຍໍ້

2) **ໂຄງສາມ**:

ຕຸມກາງດົງ

ຊົງກາງຫ້ວຍ

ສ້ວຍກາງລຳ

ຊຳກາງຂ່ວງ

ລ່ວງກາງເຮືອນ

(ໝາຍເຖິງ ປືນ, ກວາງ, ສາກ, ໝາ, ແມວ.)

3) **ໂຄງສີ່**:

ນະໂມນະມາ

ວັນທາຂາບໄຫວ້

ຍອດໄທ້ນາໂຖ

ພົນໂຍປາງກ່ອນ

ເທັນບ່ອນນິພານ <...>

4) **ໂຄງຫ້າ**:

| | |
|---|---|
| ລູກພຽງພໍ່ | ແຂງເມືອງ |
| ຢ່າຈິງໃຈ | ຈາກເໜົ້າ |
| ມີຄໍາເຫຼືອງ | ລ້ານຊົ່ງ |
| ເປັນເຈົ້າຜ່ານ | ນະຄອນຂວາງ |
| ຍັ່ງຍັ່ງຟ້າ | ຫິວປີ |
| ຝົນຮໍາດວງ | ດອກຫຍ້າ |
| ຈັກໜີໜີ | ບໍ່ໄດ້ |
| ເຈົ້າຟ້າວັງ | ເວໃຈ |

5) **ໂຄງຫົກ**: ຄໍາທໍານາຍເມືອງລາວ

| | |
|---|---|
| ມີຊ້າງເຜືອກເກີດ | ມາຫາ |
| ມີພະຍາທໍາ | ເປັນໃຫຍ່ |
| ອາຊະໄນເກີດ | ມີເຂົາ |
| ເສືາໃນເມືອງເກີດ | ມີດອກ |
| ດອນຈັນປົ່ງອອກ | ຈອດແຄມຂອງ |
| ຫີນຫຼາຍກອງຟູ | ພົ້ນນໍ້າ |
| ງູໃຫຍ່ດໍ້າດ່ວນ | ເຖິງວຽງ |

6) **ໂຄງເຈັດ**: ໂຄງທວາຍຊື່ດອກໄມ້

| | |
|---|---|
| ດອກໜຶ່ງເປັນສໍ່າດ້າວ | ດາລາ |
| ດອກບໍ່ທັນຫອມມາ | ຮ່ວງເຮົ້າ |
| ດອກໜຶ່ງເປັນຈອມຜາ | ທັນງ່ອນ |
| ດອກສິ່ງໃດນັ້ນເຈົ້າ | ຮ່ອມຜ້າຍເວຫາ |
| ດອກໜຶ່ງຫອມອ່ອນພົ້ງ | ໃນທວງ |
| ແດເດືອນແດແດດວງ | ເດືອດດັ້ງ |
| ດອກໜຶ່ງຍ່ອມເປັນດ້ວງ | ສະມາດ |
| ໃຜອາດລິງລອຍຮັ້ງ | ຈຶ່ງໄດ້ຊົມເຊີຍ |
| ດອກໜຶ່ງເປັນຊາດເຊື້ອ | ໃນໜອງ |

ທັດບໍ່ເປັນລວນກອງ ກຸ່ງອກ້ານ
ດອກໜຶ່ງຄືວັນທອງ ທັງແຫ່ງ
ດອກງວງມີໃນບ້ານ ສິ່ງນັ້ນລືໃດ.

(ໜັງສືຜູກ ເລື່ອງ ທ້າວຮຸ່ງ-ທ້າວເຈືອງ)

## 5. ວິທີແຕ່ງໂຄງ

ການແຕ່ງໂຄງແຕ່ລະຊະນິດຈະບໍ່ຄືກັນ, ໂດຍສະເພາະໂຄງ 5 ແລະ ໂຄງ 7 ຈະມີຫຼັກການສຳຜັດ ແລະ ເນື່ອງສຽງຂອງຫຼັກຄຳປະຈຳບ່ອນຄັກແນ່. ສ່ວນໂຄງ 2, 3, 4 ແລະ ໂຄງ 6 ແມ່ນເນັ້ນໃສ່ແຕ່ຫຼັກການສຳຜັດເກາະກ່າຍກັນໄປຈົນຈົບບົດ.

ສະເພາະການແຕ່ງ ໂຄງ 5 ແລະ ໂຄງ 7 ຄຳເອກຄຳໂທເປັນລັກສະນະບັງຄັບ. ສຳລັບຄຳເອກ ອາດໃຊ້ຄຳຕາຍແທນກໍໄດ້.

## 6. ວິທີອ່ານ ຫຼື ນຳໃຊ້ໂຄງ

ການອ່ານໂຄງຈະອ່ານຕາມລັກສະນະຂອງໂຄງແຕ່ລະຊະນິດ ແລະ ການເວັ້ນສຽງ ຫຼື ຢຸດແຕ່ລະວັກນັ້ນແມ່ນຂຶ້ນຢູ່ກັບຊະນິດຂອງໂຄງ ເຊັ່ນ: ການອ່ານໂຄງສອງຈະເວັ້ນສຽງເທື່ອລະສອງຄຳ, ໂຄງສາມເວັ້ນເທື່ອລະສາມຄຳ, ໂຄງສີ່ເວັ້ນເທື່ອລະສີ່ຄຳ, ໂຄງຫົກເວັ້ນເທື່ອລະຫົກຄຳ ຈຶ່ງເວັ້ນສຽງ ຫຼື ຢຸດສຽງໜ້ອຍໜຶ່ງກ່ອນຈະອ່ານວັກຕໍ່ໄປ.

ສະເພາະການອ່ານໂຄງຫ້າ ແລະ ໂຄງເຈັດ ອ່ານຕອນໜ້າ ແລ້ວຢຸດໜ້ອຍໜຶ່ງ ຈຶ່ງອ່ານຕອນຫຼັງ ຈາກນັ້ນ ຢຸດອີກໜ້ອຍໜຶ່ງ ແລ້ວຈຶ່ງອ່ານວັກຕໍ່ໄປ.

ຊາວບູຮານເພິ່ນນິຍົມໃຊ້ໂຄງແຕ່ງເປັນໂສກຕ່າງໆ ເຊັ່ນ: ໂສກຄ້ອງ, ໂສກກອງ, ໂສກປືນ, ໂສກເຮືອນ ເປັນຕົ້ນ. ບາງທີເພິ່ນກໍໃຊ້ໂຄງເພື່ອສະແດງຄວາມສະເໜຫາຮັກ ຫຼື ທວາຍກັນລະຫວ່າງບ່າວສາວອີກດ້ວຍ.



## IV. ວ່າດ້ວຍຮ່າຍ

### 1. ຄວາມໝາຍຂອງຮ່າຍ

ຮ່າຍ ແມ່ນກອນຊະນິດໜຶ່ງຊຶ່ງມີລະບຽບການສຳຜັດ ແລະ ກຳນົດຄຳຄ້າຍຄືກັບກາບກອນ. ໃນເອກະສານໄວຍາກອນລາວບາງສະບັບຍັງເອີ້ນວ່າ "ກອນຮ່າຍ".

ຄຳວ່າ "ຮ່າຍ" ມີສຳນຽງສຽງອ່ານຄ້າຍຄືສຽງນົກເຄົ້າອັ່ນຄອນ ແລະ ສຽງຊະນີຮ້ອງ. ຊາວບູຮານຈຶ່ງເອີ້ນກັນວ່າ: ຊະນີຮ່າຍໄມ້, ນົກເຄົ້າອັ່ນຄອນ. ຮ່າຍມີລັກສະນະແຕກຕ່າງຈາກກອນຊະນິດອື່ນໆ ຄືແຕ່ງເປັນວັກລຽນຕໍ່ກັນຈົນສຸດບົດໂດຍບໍ່ແບ່ງເປັນບາດ ແລະ ການອ່ານບາງທີກໍອ່ານໄວ, ບາງທີກໍອ່ານຊ້າ ແລະ ບາງທີກໍຫຼິ້ນສຽງເປັນຕົ້ນ.

### 2. ສ່ວນປະກອບຂອງຮ່າຍ

ສ່ວນປະກອບຂອງຮ່າຍມີ: ຄຳ, ຕອນ, ວັກ ແລະ ບົດ.

#### 2.1 ຄຳ

ຄຳ ແມ່ນຄຳເວົ້າໜຶ່ງໆ ທີ່ປະກອບເຂົ້າເປັນຄຳໜຶ່ງຂອງຮ່າຍ. ຄຳໃນວັກໜຶ່ງອາດມີ 5 ຄຳ ເຖິງ 15 ຄຳ.

#### 2.2 ຕອນ

ຕອນແມ່ນກຸ່ມຄຳຈຳນວນໜຶ່ງທີ່ເປັນເຄິ່ງໜຶ່ງຂອງວັກ ໝາຍຄວາມວ່າ ຮ່າຍວັກໜຶ່ງມີສອງຕອນ ແຕ່ລະຕອນບໍ່ສາມາດຈຳກັດຈຳນວນຄຳໄດ້ ຂຶ້ນກັບຄວາມເໝາະສົມຂອງເນື້ອໃນ.

#### 2.3 ວັກ

ວັກ ແມ່ນແຖວໜຶ່ງຂອງຮ່າຍທີ່ມີຄຳເວົ້າຄົບຈຳນວນຄຳ ແລະ ຄົບຕາມຄວາມໝາຍຂອງມັນ. ວັກໜຶ່ງມີສອງຕອນ ຄື: ຕອນໜ້າ ແລະ ຕອນຫຼັງ ຊຶ່ງປະກອບເປັນວັກໃນຮ່າຍ. ຮ່າຍບົດໜຶ່ງຈະມີຈັກວັກກໍໄດ້ ຂຶ້ນກັບບົດສັ້ນບົດຍາວ ສຸດແລ້ວແຕ່ເນື້ອໃນຂອງມັນ.

#### 2.4 ບົດ

ບົດ ແມ່ນເນື້ອໃນທັງໝົດຂອງຮ່າຍທີ່ແຕ່ງກ່ຽວກັບເລື່ອງໃດເລື່ອງໜຶ່ງຕັ້ງແຕ່ຕົ້ນຈົນຈົບເລື່ອງ. ບົດຈະສັ້ນ ຫຼື ຍາວບໍ່ໄດ້ກຳນົດຕາຍຕົວ, ແຕ່ງສັ້ນກໍເອີ້ນວ່າບົດສັ້ນ, ແຕ່ງຍາວກໍເອີ້ນວ່າບົດຍາວ. ແຕ່ຕ້ອງມີເນື້ອໃນຄົບຖ້ວນຕາມຄວາມໝາຍຂອງຫົວບົດທີ່ຕັ້ງໄວ້.

### 3. ຫຼັກການສຳຜັດຂອງຮ່າຍ

ຫຼັກການສຳຜັດຂອງຮ່າຍ ມີດັ່ງນີ້:

ວັກທີ 1 ຄຳທີ 5 ສຳຜັດກັບຄຳທີ 8, ຄຳທີ 10 ຂອງວັກທີ 1 ສຳຜັດກັບຄຳທີ 3 ຂອງວັກ

ທີ 2 (ບໍ່ນັບຄຳບຸບພະບົດ).

ວັກທີ 2 ຄຳທີ 5 ສຳຜັດກັບຄຳທີ 8, ຄຳທີ 10 ຂອງວັກທີ 2 ສຳຜັດກັບຄຳທີ 3 ຂອງວັກທີ 3.

ວັກທີ 3 ຄຳທີ 5 ສຳຜັດກັບຄຳທີ 8, ຄຳທີ 10 ຂອງວັກທີ 3 ສຳຜັດກັບຄຳທີ 3 ຂອງວັກທີ 4.

ວັກທີ 4 ຄຳທີ 5 ສຳຜັດກັບຄຳທີ 8, ຄຳທີ 10 ຂອງວັກທີ 4 ສຳຜັດກັບຄຳທີ 3 ຂອງວັກຖັດໄປ ສຳຜັດໄປແບບນີ້ຈົນສຸດບົດ. ແຕ່ໃນບົດໜຶ່ງໆ, ສາມາດຍ້າຍຄຳສຳຜັດອອກໄປອີກໄດ້ຕາມລັກສະນະດັ່ງນີ້: ຄຳທີ 5 ສຳຜັດກັບຄຳທີ 8, 9, 10 ກໍໄດ້, ຄຳທີ 11 ສຳຜັດກັບຄຳທີ 3 ຫຼື ທີ 4 ກໍໄດ້.

ໃນກໍລະນີແຍກເປັນວັກ ວັກລະ 5 ຄຳແລ້ວສຳຜັດກັນກໍໄດ້ ດັ່ງນີ້: ຄຳທີ 5 ໃນວັກທີ 1 ສຳຜັດກັບຄຳທີ 3 ໃນວັກທີ 2, ຄຳທີ 5 ໃນວັກທີ 2 ສຳຜັດກັບຄຳທີ 3 ໃນວັກທີ 3, ຄຳທີ 5 ໃນວັກທີ 3 ສຳຜັດກັບຄຳທີ 3 ໃນ ວັກທີ 4 ຕໍ່ເນື່ອງກັນໄປສະເໝີຈົນຄົບ 40 ຄຳແລ້ວລົງເທື່ອໜຶ່ງ ດັ່ງຕົວຢ່າງລຸ່ມນີ້:

**ໂຄງຮ່າງການສຳຜັດ ແບບທີ 1** (ວັກລະ 10 ຄຳ)

○○○○●   ○○●○◉

○○ ○○◉○◎   ○○◎○◙

○○◙○◉   ○○◉○●

○○●○◎   ○○◎○○

**ໝາຍເຫດ**: ຮູບເຄື່ອງໝາຍທີ່ຄືກັນໝາຍເຖິງສຳຜັດກັນ

ຕົວຢ່າງ:

ຢັດສະ ບຸບເພ ທະຊັກຄານີ<br>
ທົ່ງໄຊຕັ້ງຊະພູ່ ຫຼາຍໝູ່ເຈົ້າຕົນໃດ<br>
ຄືດັ່ງ ກັນນິກາໄກວກິ່ງຄ້ອມ ບານແບ່ງພ້ອມດວງໃສ<br>
ເຄີຍຕາມໄປທຸກແງ່ ເຫຼັ້ນແລ້ວແຫ່ແຫນມາ<br>
ຕົນພະກະສັດຕາລຸ່ມຟ້າ ຈັກກົ້ມໜ້າຄຶງຄຽວ

(ພະເຫວດສັນດອນ)

**ໂຄງຮ່າງການສຳຜັດ ແບບທີ 2 (ວັກລະ 5)**

○○○   ○●

○○●   ○◉



**ໝາຍເຫດ**: ຮູບເຄື່ອງໝາຍທີ່ຄືກັນໝາຍເຖິງສຳຜັດກັນ

ຕົວຢ່າງ:

ຍັດສະປຸບເພ ຊຸມລຸມໃບ    ຊໍ່ນ້ອຍ
ເປັນສ້ອຍຍ່ອມ    ເພີງຕາ
ເປັນປະດຸດດັ່ງ ກັນນິກາ    ດອກແກ້ວ
ບານແລ້ວດອກ    ແກມໃບ
ເຄີຍຕາມໄປ    ທຸກແງ່
ເຫຼັ້ນແລ້ວແຫ່    ແຫນມາ
ຊຸນຈັກ    ໜີເສຍນາ    ໄພ່ມ້າງ
ໄປຢູ່ສ້າງ    ຕົນດຽວ ແລເດ

(ຈາກ ທານກັນ)

## 4. ຊະນິດຂອງຮ່າຍ

ຮ່າຍປະກອບມີ 3 ຊະນິດ ຄື: ຮ່າຍວະຊິລະປັນຕິ, ຮ່າຍມະຫາວະຊິລະປັນຕິ ແລະ ຮ່າຍຍາວ.

### 4.1 ຮ່າຍວະຊິລະປັນຕິ

ຮ່າຍວະຊິລະປັນຕິນີ້ແຕ່ງເປັນ 4 ວັກ ວັກລະ 10 ຄຳ ແລ້ວ ລິງເທື່ອໜຶ່ງ ຫຼື ຈະແຍກອອກເປັນ 8 ວັກ ວັກ 5 ຄຳກໍໄດ້.

ຕົວຢ່າງ:

"ໂກເສຍຍັງ ຜ້າຜືນໜຶ່ງຊື່ວ່າ
ໂກໄຊຍະແສນ    ຄຳຄາດ
ກິວໄວວາດ    ແວວຕະການ
ຊ່າງພິຈານ    ໃຈຖີ່
ເກີດແຕ່ ປະເທດທ້າວທີ່    ໂກໄສ
ກະທຳ ດ້ວຍໄໝເຫຼືອງ    ເຫຼືອມຫຼອດ
ສາວເສັ້ນອອກ    ເອົາໃຍ

ຍ້ອມແດງໃສ ສະພາດ
ກະທຳກ້ຽວກາດ ເປັນຜືນ
ຜີຈັກຍືນ ຢັງຄ່າ
ລ້ຳລື່ນກວ່າ ຄຳແສນ
ມີວັນ ແດງດຳເຫຼືອ ຫຼາຍແຫ່ງ
ຂາວຂຽວແຜດ ແສງໄກ
ລັດສະໝີ ຍິຍິ່ງ
ໄຫຼຫຼັ່ງເຫຼື້ອມ ເຮືອງຮວາຍ
ທີກພັນປາຍ ພິລາດ
ຄຳກ້ຽວຄາດ ແສງສີ
ທັນທີ ຂາວກໍຂາວ ສຸດຍິ່ງ
ວັນນະພ້ຽງສິ່ງ ສັງຂານ
ຄືດັ່ງ ມຸກແກ້ວສ່ອງ ໃສສີ
ທັນທີ ແດງກໍແດງດີ ຍິຍິ່ງ
ຄືດັ່ງ ນ້ຳຄັ່ງໃສ່ ໄຕຄຳ
ທັນທີ ດຳກໍດຳງາມ ຍິຍາບໆ
ເປັນດັ່ງ ທຳມະຊາດຮ້ອຍສອດ ສິນໄໝ
ຄືດັ່ງ ສຸລິຍາຜັນ ຜ່ານຂຶ້ນ
ແສງສ່ອງພື້ນ ທໍລະນີ
ທັນທີ ອອນກໍອອນດີ ສຸດຂະໜາດ
ຄືດັ່ງ ທີງສະມາດ ຜ້ຽງບົວໄຂ
ທັນທີ ເຫຼືອງກໍເຫຼືອງ ຫຼາຍຫຼາກ
ຄືດັ່ງ ບຸນນາກນ້ອຍສ້ອຍ ສຸລະພີ
ດັ່ງຈຳປາຈຳປີ ກະນິກາກ້ານເກດ
ບານພວງເພດ ອະໂນຊາ...”

(ກັນນະຄອນ)

### 4.2 ຮ່າຍມະຫາວະຊິລະປັນຕິ

ຮ່າຍນີ້ເພິ່ນໃຫ້ແຕ່ງເປັນບົດ ບົດລະ 11 ຄຳ, ໃນບົດໜຶ່ງແບ່ງເປັນສອງຕອນ, ຕອນຕົ້ນມີ 5 ຄຳ ຕອນປາຍມີ 6 ຄຳ ດັ່ງຕົວຢ່າງລຸ່ມນີ້:

ຕົວຢ່າງ:

ຍະທາ ທະລິດໂທ ຍິງຝູງໃດນານາ | ເຫັນຜົວມາເປັນຂ້ອຍຂ້າ
ຕົກຖ່ອຍຊ້າຂືນໃຈ | ບໍ່ມີອັນໃດສັກສິ່ງ
ທອດໄຮ້ຍິ່ງຂືນໃຈ | ຂົນຂວາຍລ້ຽງຊີວິດໄຈ້ໆ
ຂີ້ໄຮ້ວ່າຈັກໜີ | ຍາມເມື່ອຜົວເປັນດີມູນມັ່ງ
ເປັນເຈົ້ານັ່ງປຸນປອງ | ຍິງຈອງວອງວ່າຈັກຢູ່
ຜູ້ຂ້ານີ້ຈັກໄປ ເປັນຄູ່ແກ້ວຜົວຂວັນ | ພະຈອມທຳເອີຍເຈົ້າຟ້າ
ຂ້ານ້ອຍບໍ່ໃຫ້ຜົວ ຕົກຖ່ອຍຊ້າສັກອັນ | ເທວະດາໃນສະຫວັນຟາກຟ້າ
ຍອມອວ່າຍໜ້າຍໍຄຸນ | ນາງໃຈບຸນຍ່ອມທາຍຍາກ
ລຳບາກດ້ວຍຜົວຕົນ | ໃນເມືອງຄົນຫາບໍ່ໄດ້
ຍາມເມື່ອຜົວຂີ້ໄຮ້ | ກົ້ມໜ້າຕໍ່ອິດເອີາດາຍ

(ຈາກ ທານກັນ)

## 4.3 ຮ່າຍຍາວ

ຮ່າຍຍາວນີ້ມີກຳນົດໄວ້ວ່າ ໃນວັກໜຶ່ງໃຫ້ມີແຕ່ 5 ຄຳຂຶ້ນໄປເຖິງ 14 ຄຳເປັນຢ່າງຫຼາຍ ແຕ່ບໍ່ໄດ້ກຳນົດວ່າ ວັກນັ້ນເທົ່ານັ້ນ, ວັກນີ້ເທົ່ານີ້ ສ່ວນຄຳສຳຜັດນັ້ນ ຈະລົງໃນກາງວັກ ຫຼື ທ້າຍວັກກໍໄດ້.

**ຕົວຢ່າງ:**

ມັດທີ ດູລາມະທີສີ | ຊື່ນຊ້ອຍ
ນາງນາດນ້ອຍ | ເພິງແພງ
ໂສມສີແສງ | ເຮືອງຮອດ
ດູຍອດຍິ່ງ | ເມືອງແມນ
ລາຊະປຸດຕີ ເປັນລູກຊາວສີ | ພະຍາມັດທະລາດ
ຍິດຍິ່ງອາດ | ລືຊາ
ປາໂຕວະ ແຕ່ເຊົ້ານາງເຂົ້າໄປ | ສະແຫວງຫາ
ດວງຜາລາ | ແລະລູກໄມ້
ເອົາມາໄວ້ເປັນ | ຈັງຫັນ
ກົມີທັງ ວັນນີ້ນາງຊຽວຄືນເຂົ້າ | ມາເຮືອນ
ດ້ວຍລັດສະໝີເດືອນດາວ | ດູຍາກ
ດ້ວຍວ່ານາງເຫຼັ້ນຫຼາກ | ຫຼາຍປະການ

| | |
|---|---|
| ໃນປ່າຫິມະພານ | ແຫຼ່ງຫຼ້າ |
| ຍ່ອມມີຄົນກ້າ | ທົບພະຍາທອນ |
| ພະເນຈອນໃນ | ປ່າໄມ້ |
| ເຂົ້າໃກ້ແລ້ວ | ກ່າວມາຍາ |
| ຫຼິງສອງຕາມື | ກວັກວາດ |
| ຍິກຄິ້ວຟາດ | ເນືອງນັນ |
| ນາງກະທຳການອັນໃດ | ໃຜກໍບໍ່ມີຮູ້ |
| ແມ່ນວ່ານາງເຫຼັ້ນຊູ້ | ໃຜກໍບໍ່ມີເຫັນ... |

(ຈາກ ມັດທີກັນ)

## 5. ວິທີແຕ່ງຮ່າຍ

ຮ່າຍ ແມ່ນກອນທີ່ແຕ່ງເປັນວັກລຽນຕິດຕໍ່ກັນລົງຈົນສຸດບົດໂດຍແບ່ງເປັນບາດໆ ຄືກອນລຳ ຫຼື ກອນອ່ານ. ແຕ່ລະວັກມີ 5 ຄຳຂຶ້ນໄປເຖິງ 15 ຄຳ. ຄຳສຸດທ້າຍຂອງວັກເທິງໃຫ້ສຳຜັດກັບຄຳທີ 1, 2, 3 ຫຼື 4 ຂອງວັກຕໍ່ໄປ. ສ່ວນຄຳເອກໂທນັ້ນບໍ່ຈຳກັດ, ຈະເອົາໄວ້ບ່ອນໃດກໍໄດ້, ຂໍແຕ່ໃຫ້ມີການສຳຜັດນອກກໍເປັນພໍ.

ຕົວຢ່າງ: **ກອນຮ່າຍສຳລັບສູ່ຂວັນ**

ສີສີ ສິດທິພະພອນ
ບໍວອນອະດີເລກ
ອະເນກະເຕຊາ
ໄຊຍະມັງຄະລາ
ມະຫາສີລິມັງຄະເລດ
ສາດຕະເພດພ້ອມອາຄົມ
ຊຸມບູລົມປຸນແຕ່ງແລ້ວ
ໃຫ້ລູກແກ້ວອອກກິນເມືອງ
ລິດທີເຮືອງທະລົງແທ່ນ
ມື້ນີ້ແມ່ນມະຫາຄຸນ
ປຸນດາດີແຕ່ງແລ້ວ
ໃຫ້ລູກແກ້ວກິ່ງລົງມາ
ເປັນລາຊາສືບສ້າງ

ເມືອງມິ່ງກວ້າງນາຄອງ

ຊຸນເຈືອງປອງເປັນໂຊກ

ໃຕ້ໂລກຍ່ອມລືຊາ

ທະລິງອານຸພາວາຍວດຍິ່ງ

ເປັນເຈົ້າຈອມມິ່ງເມືອງເມນ

ແສນເມືອງມາຊ່ວຍຄ້ຳ

ມື້ນີ້ຊ້ຳຄຸນຄຶງ

ພະຍາຈັກທະລິງທິດສະລາດ

ພາມມະນາດເລີ່າແຖມພອນ ໗ລ໗

ຕົວຢ່າງ: **ຮ່າຍສຳລັບເທດ**

| | |
|---|---|
| ບັດນີ້ | ຈັກກ່າວກ້ຳເຖິງປະເທດເມືອງກະລິງ ກ່ອນແລ້ວ |
| ເຂົານັ້ນ | ເປັນພາສາຊາດພາມພົງເຊື້ອ |
| ຝູງໝູ່ | ຊາວເມືອງຮ້ອນໂພຊະນັງເຂີນຂາດ |
| ເພາະເພື່ອ | ອຸປະໂລກແລ້ງຝົນຟ້າບໍ່ມີ |
| ຕັ້ງຫາກ | ຫຼາຍປີຮ້າງຮາມນາໄວ້ເປົ່າ |
| | ເຂົ້າບໍ່ມີຢູ່ເລົ້າຫອຍເບ້ຍກໍເລົ່າຕາຍ |
| | ຜົນຜະລາໄມ້ໃນດົງກໍຊຸລ່ວງ |
| ຝູງໝູ່ | ເຂົ້າໂຄດຂ້ວງແຕງເຕົ້າໝູ່ມັນ |
| | ພິກແລະແຄ້ງຂີງຂ່າກະທຽມຫອມ |
| | ເຄືອຜັກຊຽວຫ່ຽວລີງຈຳເຫງົ້າ |
| | ຝູງໝູ່ປູປາຂ້ອນເຂີນວັງຕາຍຕາມຫາດ |
| | ສັດສິ່ງເນື້ອເສືອຊ້າງລະມັ່ງເມີຍ |
| | ມະຫິງສາຮ້ອນຫິວຕົນຕາຍແດດ |
| | ກິບຊຽດໄຫ້ຫານ້ຳກໍບໍ່ມີ ເຈົ້າເອີຍ <...> |

(ຄັດຈາກ ໜັງສືເລື່ອງ ພະເຫວດສັນດອນ ກັນທີ 2 “ຫິມະພານ”)

# 6. ວິທີອ່ານ ແລະ ການນຳໃຊ້ຮ່າຍ

## 6.1 ວິທີອ່ານ

ສຽງອ່ານຮ່າຍນີ້ ຕ່າງກອນລຳ ຫຼື ກອນອ່ານອື່ນໆ, ບາງທີກໍອ່ານໄວ, ບາງທີກໍອ່ານຊ້າ ແລະ ບາງທີກໍຫຼີ້ນສຽງດ້ວຍການແກ່ສຽງໃຫ້ຍາວຄືສຽງລຳລ່ອງ ແຕ່ຫາກບໍ່ຄືກັນກັບສຽງລຳລ່ອງແທ້ ເຮັດຄືສຽງທະນີຮ້ອງເວລາມັນຮ່າຍໄມ້ຢູ່ຕາມປ່າດົງຄືບຶດໜຶ່ງຊ້າ, ບຶດໜຶ່ງໄວ, ບຶດໜຶ່ງເຮັດສຽງສັ້ນ, ບຶດໜຶ່ງເຮັດສຽງຍາວສະຫຼັບກັນໄປ.

## 6.2 ການນຳໃຊ້

ຮ່າຍໃຊ້ເພື່ອເທດສະໜາ ແລະ ສູດ

- ຮ່າຍໃຊ້ສຳລັບເທດເພື່ອຄວາມມ່ວນອອນຊອນ ເຈືອປົນໄປດ້ວຍຄຳສັ່ງສອນໃນຫຼັກສິນທຳຂອງພຸດທະສາສະໜາ.
- ຮ່າຍນອກຈາກໃຊ້ສຳລັບເທດສາສະໜາແລ້ວ ຍັງໃຊ້ເຂົ້າໃນການສູດຂວັນໃນເວລາມີພິທີສູ່ຂວັນຕ່າງໆ.

:



## V. ວ່າດ້ວຍສານ

### 1. ຄວາມໝາຍຂອງສານ

ສານແມ່ນກະວີປະເພດໜຶ່ງ ທີ່ມີລັກສະນະການສຳຜັດເນື່ອງສຽງກັນເໝືອນກອນອ່ານ ທຳມະດາ ແຕ່ຊຽນລຽນກັນເປັນແຖວຕີກັບຈິດໝາຍ ຫຼື ບົດຊຽນຄຳຮ້ອຍແກ້ວທຳມະດາ.

ການຕັ້ງຊື່ຂອງສານທີ່ແຕ່ງຂຶ້ນນັ້ນ ເພິ່ນເຄີຍໃຊ້ຊື່ຕາມຄວາມຄິດປຽບທຽບຕ່າງໆ ເຊັ່ນ: ສານຫົງ, ສານນົກແກ້ວ, ສານສາລິກາ, ສານລຶບພະສູນ ແລະ ອື່ນໆ.

ຕົວຢ່າງ:

**ສານຫົງທີ່ຝ່າຍຊາຍຊຽນ**

ສານນີ້ຊື່ວ່າຫົງຄຳຜ້າຍ ເວຫາເຫີນເມກ ຈິດປະສົງຈອດຢັ້ງ ຫວັງນ້ອງຝ່າຍໄກ ບັດນີ້ ຕົນອ້າຍປຸນປຽບໄດ້ ດັ່ງຊາຍຊາດພະເນຈອນ ບິນວ່ອນຕາມເວຫາ ສ່ອງລົງບໍ່ເຫັນກ້ຳ ຈັກແມ່ນກຳຫຍັງອ້າຍ ຈຶ່ງກາຍເປັນຫົງປ່ຽວ ຫຼຽວວາກຫາກິ່ງໄມ້ ໄຊຕົ້ນກໍບໍ່ມີ ຄັນນ້ອງມີແນວຕົ້ນ ໂພໄຊ ໃຫ້ນ້ອງສົ່ງຂ່າວ ແດ່ເນີ ພໍໃຫ້ຫົງປີກຫ້ຽນ ໄດ້ເກາະກ້ານກິ່ງໄຊ ແດ່ແມ.

**ສານຫົງທີ່ຝ່າຍຍິງຊຽນຕອບ**

ສານນີ້ຊື່ວ່າໂພໄຊກວ້າງ ສານງາມຕົ້ນໄມ້ໃຫຍ່ ໃຈປະສົງຕໍ່ເຈົ້າ ຫົງແກ້ວຜູ້ເວີ່ນຫາ ຢ້ານແຕ່ຫົງຄຳຜ້າຍ ກາຍໜີບໍ່ຫຼຽວເບິ່ງ ນັ້ນແລ້ວ ຕົວວ່າໄຊຕ່ຳເຕ້ຍ ຊິເສຍເຊື້ອຊາດຕະກຸນ ຊາດທີ່ແນວນາມຕົ້ນ ໄຊສິມແຕ່ນົກຈາບ ຕົບໍ ແນວຫົງເຫີນຢູ່ຟ້າ ບໍ່ຫວັງຊ້ຳວ່າຊິງອຍ ລະຕີ.

**ສານລຶບພະສູນ**

(ຄັດຕອນ)

ບັ້ນບັງລະທັດ

ດວງນີ້ ຊື່ວ່າບຸແຜ່ນທໍລະນີດັ້ນ ກຸມພະກອນກຳໂຮບ ເກາະກ່າຍເກີຍໂລບລ້ຽວ ສະເໝນຄ້ານໂຄ່ນຄອນ ຄະເຄື່ອນຄຸງແກ່ນເທົ້າ ກາກາບໄກວກະຈັດ ເສລາເນົາພູຜາ ເກື່ອນທະລັງທະລາຍຢ້ອງ ອານົນເນົາແນບພື້ນ ເຟືອນຟາດຟອງສະໝຸດ ນາໂຄຄະ ຄາດໂຮງຮາມຢ້ອງຈັກກະວານເຫຼື້ອມ ຄີລີຫງວຍຫງ່ວນ ນາຄະເຟືອນຟັ່ງຟ້າວ ຟູມເຟື້ອແຄ່ເຟືອຍ ຄຸດທະອ້າປີກຂຶ້ນ ຂຳເມກເຮືອງລິດ ຈັນໂທເນົາມົວມຸດ ມືດແສງສູນອ້ຳ ໃສສ່ອງເຮືອງຮາວຖ້ານ ລັງສີສຸລິເຍດ ຍານທ່ອງຫຽວລ່ວງຟ້າ ພິມານເອື້ອມອາດສະໜີ ມີຄະສິງສະຫວັນຢ້ອງ ບໍລະເມປະນົມແມ່ ເມືອງມາບເຫຼື້ອມ ແສງແກ້ວແກວ່ງທະລັງ ໄຟກຳລຸກວິບໄໝ້ ເສນາດທະເມົາມຸດ

ແປວເປົ່ງເຮືອງອະລຸນ ຫອບແສງສູນຟ້າ ບາລັງຊ້ອນ ໄສຍາອິນທະລາດ ສະໜຸກຍິ່ງລ້ຳ ລິນເປື້ອງປີ່ນໄກວ ດາວະດຶງຊັ້ນ ເທວະດາເມືອງມອດ ຕະຫຼີບຕ່າວຟີ້ງ ພິມານເຕົ້າຕຸ່ມຕອງ ລະແຫ່ງຫ້ອງ ຜາສາດເຮືອງຮິດ ລິງທ່ອງຫຼຽວນິຄິມຄີນ ຄວ່າສູນສະແຫວງເຫຼັ້ນ ເລີຍລິນຊ້ຳ ປະສັດ ເມົາມົວເດືອດ ກະສັນປີ່ວຟີ້ງ ຈັນທະກຸ້ມເມກກຸມ <...>

ຄຶດເມື່ອ ບາລັງຊ້ອນ ໄສຍາອິນທະລາດ ປາງນັ້ນ ສະໜຸກຍິ່ງລ້ຳ ລິນເປື້ອງປີ່ນໄກວ ທຸຍຮຸ່ງໜ້ອມ ຄະນິງປ່ອງແປວສະໝຸດ ຄະນິງນິງສີ ພາກພະໄທມິໄດ້ ຄິດໄຄ່ທວຍທະລັງປີ້ນ ຍໍຕາວເປື້ອງແກວ່ງ ເອົານັ້ນ ພູຟາດມ້າງ ດູຕ້ອງຕອກກະແຈ ລຶບລ່ຽມດ້າວ ໄຂປ່ອງແປວລະຫັດ ຫຼືວ່າ ໂທມທວງຂັດ ມືດຂະໜອງເໝືອນໄໝ້ ຫຼື ຈັກທວຍທິງອຸ້ມ ຈັກກະວານຮຽງຮ່ວມ ເອົານັ້ນ ກິວທີ່ຟ້າແປ່ຂວ້ຳ ຂະໜານເຄົ້າຄວີ່ຄວາມ ມົວມືດໄໝ້ ມ້າງແຜ່ນພັນທະກຶດ ກັບເລົ່າເລີຍລິນຂະຫຼັງ ຕອບແຖມເຖິງເຕົ້າ ນັບທີ່ລວງດູລ້ຳ ຕາມຕາອະນັນເນກ ມານັ້ນ ກັບເລົ່າຄວັນເທົ່າຟ້າ ເຮືອງກຸ້ມເມກກຸມ ໃຈມ່ອມອ້າຍ ໝາຍມຸ່ງພະໄມມິດ ຊິຄ່ອຍປຸນປອງຮັກ ຮ່ວມຮຽງຮາວຖ້ານ ສີມພານເບື້ອງປາລະມີຮຽງຮອດ ກັນແລ້ວ ສຸດຟາກລວງເລີກລ້ຳ ພິລາກ້ຽວກ່ອມລຳ ໄດ້ເດແນນເກົ່າເກື້ອ ເກີດຮ່ວມຮຽງຮັກ ແລ້ວນັ້ນ ໃຜຫ່ອນຂີນຂັດເຊີງ ສວາດດູດາຍໄດ້ ສີມຄວນໄດ້ຊິໄລວາງປະປ່ອຍ ເປັນລີ ແມ່ນວ່າສຸດຟາກຟ້າ ທະຍານຢື້ຢ່ອງເຖິງ <...>

## 2. ສ່ວນປະກອບຂອງສານ

ສ່ວນປະກອບຂອງສານ ມີລັກສະນະຄືກັນກັບບົດກອນທົ່ວໄປ ແຕ່ຂຽນລຽນກັນເປັນແຖວຄືກັນກັບບົດຂຽນຄຳຮ້ອຍແກ້ວທຳມະດາ.

## 3. ຫຼັກການສຳຜັດຂອງສານ

ຫຼັກການສຳຜັດຂອງສານ ກໍມີລັກສະນະຄືກັນກັບບົດກອນທົ່ວໄປ ມີການສຳຜັດເກາະກ່າຍຕໍ່ເນື່ອງກັນໄປ ບາງເທື່ອກໍມີຄຳບຸບພະບົດ ແລະ ຄຳສ້ອຍມາຕື່ມໃສ່.

## 4. ຊະນິດຂອງສານ

ສານມີຫຼາຍຊະນິດ ການຕັ້ງຊື່ຂອງສານໃຊ້ຊື່ຕາມຄວາມຄິດປຽບທຽບຕ່າງໆ ເຊັ່ນ: ສານທີງ, ສານນົກແກ້ວ, ສານສາລິກາ, ສານລືບພະສູນ ແລະ ອື່ນໆ.

## 5. ວິທີແຕ່ງສານ

ວິທີແຕ່ງສານຄືກັບການແຕ່ງກອນອ່ານຊຶ່ງມີການສຳຜັດເນື່ອງສຽງກັນ ແຕ່ເອົາມາຂຽນຮຽງກັນຄືກັບຄຳຮ້ອຍແກ້ວ.

## 6. ວິທີອ່ານ ຫຼື ນຳໃຊ້ສານ

ວິທີອ່ານສານຈະອ່ານຕາມລັກສະນະຂອງສານ ທີ່ແຕ່ງເປັນແຖວຍາວ ແລະ ມີການສຳຜັດເນື່ອງສຽງກັນໄປເລື້ອຍໆຈົນຈົບບົດ. ສະນັ້ນ, ເວລາອ່ານສານຈະຕ້ອງເວັ້ນສຽງ ຫຼື ຢຸດແຕ່ລະບ່ອນໃຫ້ຖືກຕ້ອງ, ຂຶ້ນສຽງລົງສຽງໃຫ້ເໝາະສົມ. ເວົ້າລວມແລ້ວ ການອ່ານສານກໍຄ້າຍຄືກັບການອ່ານກອນອື່ນໆ ຕ່າງແຕ່ວ່າຈະຕ້ອງອ່ານໄປເລື້ອຍໆຈົນຈົບສານ.

ບູຮານເຄີຍໃຊ້ສານເພື່ອຂຽນສິ່ງຂ່າວຄາວຫາກັນ ຫຼື ຕໍ່ແຍກັນລະຫວ່າງບ່າວສາວ.



# ເອກະສານອ້າງອີງ

**ພາສາລາວ**


ກະຊວງສຶກສາ. ໄວຍາກອນສຳລັບຊັ້ນມັດທະຍົມປີທີ 1. ໂຮງພິມກະຊວງສຶກສາ, 1983.

ກະຊວງສຶກສາ. ໄວຍາກອນສຳລັບຊັ້ນມັດທະຍົມປີທີ 2. ໂຮງພິມກະຊວງສຶກສາ, 1983.

ກະຊວງສຶກສາ. ໄວຍາກອນສຳລັບຊັ້ນມັດທະຍົມປີທີ 3. ໂຮງພິມກະຊວງສຶກສາ, 1983.

ກະຊວງສຶກສາທິການ. ໄວຍາກອນລາວ ພາກ 1, ອັກຂະຫຼະວິທີ. ຄະນະກຳມະການວັນນະຄະດີ, 1954.

ກະຊວງສຶກສາທິການ. ໄວຍາກອນລາວ ພາກ 1, ອັກຂະຫຼະວິທີ. ຄະນະກຳມະການວັນນະຄະດີ. ພິມເທື່ອທີ 4, 1964.

ກະຊວງສຶກສາທິການ. ໄວຍາກອນລາວ ພາກ 1, ອັກຂະຫຼະວິທີ. ຄະນະກຳມະການວັນນະຄະດີ. ພິມເທື່ອທີ 6, 1968.

ກະຊວງສຶກສາທິການ. ໄວຍາກອນລາວ ພາກທີ 2 ວະຈີວິພາກ. ສະບັບລາຊະບັນດິດສະພາລາວ. ພິມເທື່ອທີ 4, 1973.

ກະຊວງສຶກສາທິການ. ໄວຍາກອນລາວ ພາກທີ 3, ວາກະຍະສຳພັນ. ສະບັບລາຊະບັນດິດສະພາລາວ. ພິມເທື່ອທີ 4, 1974.

ກະຊວງສຶກສາທິການ, ສິລະປະກອນ ແລະ ກິລາຍຸວະຊົນ. ໄວຍາກອນລາວ, ພາກທີ 1 ອັກຂະຫຼະ ວິທີ. ສະບັບລາຊະບັນດິດສະພາລາວ. ພິມເທື່ອທີ 1, 1972.

ກະຊວງສຶກສາທິການ, ກິລາ ແລະ ທຳມະການ. ໄວຍາກອນລາວ ອຸດົມ 1. ກົມຄົ້ນຄວ້າ ແລະ ຮຽບຮຽງຈັດພິມ, 1980.

ກະຊວງສຶກສາທິການ, ກິລາ ແລະ ທຳມະການ. ໄວຍາກອນລາວ ອຸດົມ 2. ກົມຄົ້ນຄວ້າ ແລະ ຮຽບຮຽງຈັດພິມ, 1980.

ກະຊວງສຶກສາທິການ, ກິລາ ແລະ ທຳມະການ. ໄວຍາກອນລາວ ອຸດົມ 3. ກົມຄົ້ນຄວ້າ ແລະ ຮຽບຮຽງຈັດພິມ, 1980.

ກະຊວງສຶກສາແຫ່ງພະລາຊະອານາຈັກລາວ. ແບບສອນອ່ານຊັ້ນກຳກາ ຕອນທີ 1.

ກະຊວງທຳມະການ. ໜັງສື ສັງສິນໄຊ ພັບທີໜຶ່ງ. 1949

ກະຊວງມະຫາດໄທ ແລະ ທຳມະການ. ອັກຂະຫຼະສະມະຍະ ວ່າດ້ວຍຕົວໜັງສືລາວ (ສະບັບອັດສຳເນົາ), 1950.

ກົມມັດທະຍົມສຶກສາ. ພາສາລາວຊັ້ນມັດທະຍົມ ປີທີ 3. ກະຊວງສຶກສາທິການ, 1970.

ກົມມັດທະຍົມສຶກສາ. ພາສາລາວຊັ້ນມັດທະຍົມ ປີທີ 4. ກະຊວງສຶກສາທິການ, 1972.

ກົມວັນນະຄະດີ. ໜັງສື ສັງສິນໄຊ ເຫຼັ້ມທີສອງ, ພິມເທື່ອທີໜຶ່ງ. ໂຮງພິມລາວພານິດວຽງຈັນ, 2497.
ກົມວັນນະຄະດີ. ໜັງສື ສັງສິນໄຊ ເຫຼັ້ມທີສາມ, ພິມເທື່ອທີໜຶ່ງ. ໂຮງພິມລາວພານິດວຽງຈັນ, 2497.
ຄະນະກຳມະການວັນນະຄະດີ. ສານລຶບພະສູນ, ຈັດພິມຂຶ້ນເທື່ອທີສອງ, 1967.
ຄະນະກຳມະການອັກສອນສາດ ແລະ ວັນນະຄະດີ. ອັກຂະຫຼະວິທີ, 1960.
ສະຖາບັນຄົ້ນວິທະຍາສາດການສຶກສາ. ແບບຮຽນວັນນະຄະດີຊັ້ນມັດທະຍົມ ປີທີ 4. ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ, 1998.
ສະຖາບັນຄົ້ນວິທະຍາສາດການສຶກສາ. ແບບຮຽນ ພາສາລາວຊັ້ນມັດທະຍົມ ປີທີ 6. ພິມທີ່ວິສາຫະກິດໂຮງພິມສຶກສາ, 2008.
ສະຖາບັນຄົ້ນວິທະຍາສາດການສຶກສາ. ແບບຮຽນ ພາສາລາວຊັ້ນມັດທະຍົມ ປີທີ 6. ບໍລິສັດລັດວິສາຫະກິດໂຮງພິມສຶກສາ, 2016.
ສະຖາບັນຄົ້ນວິທະຍາສາດການສຶກສາ. ແບບຮຽນ ວັນນະຄະດີຊັ້ນມັດທະຍົມ ປີທີ 3. ບໍລິສັດລັດວິສາຫະກິດໂຮງພິມສຶກສາ, 2012.
ສະຫາຍໄຟ. ເປືອຍຫົວໃຈໃຫ້ໜຸ່ມສາວ, ຫວານໃຈການພິມ ສຳນັກພິມລາວດວງເດືອນ, 2023.
ສິລາ ວີຣະວົງ, ມະຫາ. ແບບແຕ່ງກອນໄທວຽງຈັນ ແລະ ແຕ່ງກາບສານວິລາສິນີ, ພິມເທື່ອທີໜຶ່ງ. ໂຮງພິມໄຜ່ໜາມ, 1994.
ສິລາ ວີຣະວົງ, ມະຫາ. ປະຫວັດໜັງສືລາວ. ພິມເທື່ອທີ 2, 1995.
ສິລາ ວີຣະວົງ, ມະຫາ. ປະໂຫຍດຂອງວັນນະຄະດີ. ຈັດພິມຄືນໂດຍຫໍສະໝຸດແຫ່ງຊາດ, 1996.
ສີສະເຫວີຍ ສຸວັນນີ. ວັດຈະນານຸກົມພາສາປາລີ-ລາວ. ໂຮງພິມນະຄອນຫຼວງວຽງຈັນ, 2004.
ແສງຟ້າ ໂຫລານຸພາບ. ພາສາສາດນຳໃຊ້. ພາກວິຊາພາສາ-ວັນນະຄະດີລາວ ມະຫາວິທະຍາໄລແຫ່ງຊາດ, 2005.
ແສງຟ້າ ໂຫລານຸພາບ. ປະພັນສິນ. ພາກວິຊາພາສາ-ວັດທະນະທຳລາວ ມະຫາວິທະຍາໄລແຫ່ງຊາດ, 2020.
ບໍ່ແສງຄຳ ວົງດາລາ ແລະ ຄະນະ. ວັນນະຄະດີລາວ. ວິສາຫະກິດການພິມຈຳໜ່າຍສຶກສາ, ພິມຄັ້ງທີ 1, 1987.
ບົວລີ ປະພາພັນ ແລະ ຄະນະ. ພາສາລາວ ສຳລັບວິທະຍາໄລວິທະຍາສາດພື້ນຖານ. ມະຫາວິທະຍາໄລແຫ່ງຊາດ, 2002.

ບົວລີ ປະພາພັນ ແລະ ຄະນະ. ໄວຍາກອນລາວປັດຈຸບັນ, ພາກທີ III, ວາກະຍະສຳພັນ. ສີສະຫວາດການພິມ, 2000.
ບຸນທຸ້ມ ສີນະວົງ. ຄຳສັບເຄົ້າລາວທີ່ມາຈາກປາລີ-ສັນສະກິດ. Paris: Mayenne Imprime sur presse, 2011.
ປົງຄຳ ສີສຸວັນ ແລະ ຄະນະ. ໄວຍາກອນລາວ ປັດຈຸບັນ (ສຳລັບໂຮງຮຽນສາມັນສຶກສາ) ພາກທີ II ວະຈີວິພາກ. ສີສະຫວາດການພິມ, 2000.
ພະລາຊະໂອງການ ເລກທີ 10. ກ່ຽວກັບຫຼັກການຂຽນທາງລາຊະການຕາມແມ່ອັກຂະຫຼະລາວ. ສະບັບລົງວັນທີ 27/1/1949.
ພາສາລາວ (LANGUE LAOTIENNE). ວຽງຈັນ, 1924.
ພູມີ ວົງວິຈິດ. ໄວຍາກອນລາວ. ພະແນກສຶກສາສູນກາງ, ພິມເທື່ອທີ 1, 1967.
ພູມີ ວົງວິຈິດ. ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ. ວິສາຫະກິດການພິມຈຳໜ່າຍສຶກສາ, 1987.
ພູມີ ວົງວິຈິດ. ຄຸນສົມບັດໃໝ່ ແລະ ສິນທຳປະຕິວັດ. ພິມຄັ້ງທີ 2, ສຳນັກພິມນັກປະພັນລາວ, 2013.
ໄພວັນ ມາລາວົງ. ສິລະປະແຫ່ງການປະພັນ. ສູນຄົ້ນຄວ້າພາສາລາວ, 2019.
ພອນສີຣິ ອຸໄທວັນ ແລະ ຄະນະ. ແບບຮຽນພາສາລາວ ຊັ້ນມັດທະຍົມປີທີ 2. ບໍລິສັດລັດວິສາຫະກິດໂຮງພິມສຶກສາ, 2011.
ໄວຍາກອນລາວ 1 ອັກຂະຫຼະວິທີ. ຫໍສະໝຸດປະເທດລາວ ພິມເທື່ອທີ 1, 1935.
ໄວຍາກອນພາສາລາວ (GRAMMAIRE LAOTIENNE). ປາຣີ, 1937.
ອັກຂະຫຼະ ແລະ ສະກົດຄຳໃນພາສາລາວ, 1944.
ອ່ອນແກ້ວ ນວນນະວົງ ແລະ ຄະນະ. ໄວຍາກອນລາວປັດຈຸບັນ, ພາກທີ 1, ອັກຂະຫຼະວິທີ. ວິສາຫະກິດການພິມຈຳໜ່າຍສຶກສາ, 2000.
ອ່ອນແກ້ວ ນວນນະວົງ ແລະ ຄະນະ. ໄວຍາກອນລາວປັດຈຸບັນ, ພາກທີ 1, ອັກຂະຫຼະວິທີ. ໂຮງພິມປານຄຳຈຳປາ, ພິມຄັ້ງທີ 4, 2022.

**ພາສາໄທ**

กำชัย ทองหล่อ. หลักภาษาไทย. กรุงเทพฯ: รวมสาส์น, 2550.

ชาคริต อนันทราวัน. หลักภาษาไทย. สำนักพิมพ์โอเดียนสโตร์, 2536.

ดวงใจ ไทยอุบุญ. ทักษะการเขียนภาษาไทย. สำนักพิมพ์จุฬาลงกรณ์มหาวิทยาลัย, 2543.

วิเชียร เกษประทุม. หลักภาษาไทย. กรุงเทพฯ: เพิ่มทรัพย์การพิมพ์, 2558.

สุนันท์ อัญชลีนุกุล. ระบบคำภาษาไทย. สำนักพิมพ์จุฬาลงกรณ์มหาวิทยาลัย, 2566.

สำราญ คำยิ่ง. Advanced English Grammar. กรุงเทพฯ: วีเจ พริ้นติ้ง.

อุปกิต ศิลปสาร, พระยา. หลักภาษาไทย. กรุงเทพฯ: ไทยวัฒนาพานิช, 2539.

**ພາສາຣັດເຊຍ**

Молев Л.Н, Москлев А.А, Плам Ю.Я. Лаосский язык. - М: Наука, 1972.

Молев Л.Н, Васильева В.Х, Плам Ю.Я. Лаосско-русский словарь. - М: Русский язык, 1982.

**ພາສາຫວຽດ**

Lã Thị Bắc Lý, Phan Thi Hồng Xuân, Nguyễn Thị Thu Nga. Giáo Trình Tiếng Việt và Tiếng Việt thực hành. NXB Đại học Sư phạm, Hà Nội, 2016.

ສະໜັບສະໜູນການສ້າງຕົ້ນສະບັບໂດຍ ລັດຖະບານອົດສະຕຣາລີ
ແລະ ງົບປະມານແຫ່ງລັດ
ສະໜັບສະໜູນການການຈັດພິມໂດຍ ລັດຖະບານອົດສະຕຣາລີ
ພິມທີ່ ບໍລິສັດລັດວິສາຫະກິດໂຮງພິມສຶກສາ (ພິມຄັ້ງທີ 1), ຈຳນວນ 1000 ຫົວ,
ຂະໜາດ 18x25 cm
ຕາມທະບຽນພິມ 260/ອພຈ24062024
ISBN 978-9932-16-131-7

ແຈກຢາຍລ້າ